ປະຫວັດຫຍໍ້
ແຫ່ງ
ສະຫະພາບໂຊວຽດ

ບຸນສິ້ງ ແສ້ວປົວສາຍ

25 OCT 2010

ສ.ປ. ອາເລັກເຊເຢັບ, ວ.ກ. ກາຣະຊິບ,
ອາ. ຢາ. ຕະໂຣອິດສະກີ

ປະຫວັດຫຍໍ້ ແຫ່ງ ສະຫະພາບໂຊວຽດ

ເລື່ອງທີ່ນິຍົມກັນ

ບຸນສິ່ງ ແກ້ວບົວສາຍ

ສຳນັກພິມ "ກ້າວໜ້າ"
ມົດສະກູ
1982

ແປແລະຮຽບຮຽງໂດຍ:
ສິນພອນ ແພງລັດຕະນະວົງ
ກິແກ້ວ ສຸວັນນະພູມ
ດະນິດຖ ກະລິນໂກ

© ແປເປັນພາສາລາວ, ສຳນັກພິມ "ກ້າວໜ້າ", 1982
ພິມໃນສະຫະພາບໂຊວຽດ

ຄຳນຳ

ເມື່ອພະອາທິດໂພ້ຍນຈາກນ້ຳ ມະຫາສະໝຸດປາຊີຟິກ, ມັນໂຄຈອນໄປຈາກຊາຍແດນປະເທດ ທາງດ້ານ ທິດຕາເວັນຕົກໄປເຖິງດ້ານທິດຕາເວັນອອກ ກິນເວລາເກືອບຸຮອດ ຈຸຈ ຊົ່ວໂມງ, ມັນສ່ອງແສງລົງມາຍັງພູອັນສູງຈັນ, ທົ່ງພຽງທີ່ກວ້າງສຸດສາຍຕາ, ທົ່ງຫຍ້າອັນອຸດົມສົມບູນ ແລະ ແມ່ນ້ຳທີ່ມີພະລັງແຮງ. ມັນຜ່ານນ້ຳກ້ອນທີ່ບໍ່ມີຍາມເປື່ອຍ ໃນພາກເໜືອ, ທະເລອັນເຍືອກເຢັນ ແລະອານາຈັກແຫ່ງຄວາມອົບອຸ່ນ ໃນພາກໃຕ້.

ດິນແດນແຫ່ງນີ້ແຫລະ ແມ່ນດິນແດນແຫ່ງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ–ລັດອັນກວ້າງໃຫ່ຍທີ່ສຸດໃນໂລກ.

ໃນດິນແດນຂອງປະເທດນີ້ ມີຜູ້ຄົນອາໄສຢູ່ຫລາຍກວ່າ໒໖໕ ລ້ານຄົນ–ແລະພົນລະເມືອງຂອງປະເທດນີ້ ກໍ່ມີພາສາ ປາກເວົ້າກັນຮອດຮ້ອຍພາສາ ທີ່ແຕກຕ່າງກັນ.

ມັນບໍ່ມີແຕ່ເຂດແດນອັນກວ້າງໃຫ່ຍໄພສານ ແລະ ທີ່ດິນອັນ

ຮັ່ງມີເທົ່ານັ້ນ ທີ່ເຮັດໃຫ້ສະຫະພາບໂຊວຽດ ມີຊື່ສຽງດົງດັງ.

ສຸ.ສ.ສ.ຊ. ແມ່ນປິຕຸພູມແຫ່ງໂລກໃໝ່, ໂລກທີ່ບໍ່ມີການກົດຂີ່ຄົນດ້ວຍຄົນ ເຊິງເປັນບ່ອນທີ່ຄວາມສະເໝີພາບກັນທາງດ້ານຊົນຊາດ ແລະການເມືອງຂອງພົນລະເມືອງທຸກຄົນ ເປັນກົດໝາຍອັນສູງສຸດຂອງຊີວິດ.

ສ.ສ.ສຸ.ຊ. ເປັນລັດທຳອິດໃນປະຫວັດສາດໂລກ ເຊິ່ງເປັນບ່ອນທີ່ອຳນາດທຸກຢ່າງ ແລະ ຄວາມອຸດົມສົມບູນທຸກຢ່າງເປັນຂອງບຸກຄົນຜູ້ທີ່ສ້າງມັນຂຶ້ນມາ–ຄືຊາວຜູ້ອອກ ແຮງງານ, ແລະເປັນບ່ອນທີ່ສັງຄົມແບບສັງຄົມນິຍົມ ໄດ້ຖືກ ສ້າງ ຂຶ້ນມາ ແລະໂຄງການສ້າງສາ ຂອງລະບອບກອມມູນິດ ພວມກຳເນີດເກີດຂຶ້ນ.

ປຶ້ມຫົວນີ້ ແມ່ນຈະໄດ້ເລົ່າເລື່ອງໃຫ້ທ່ານຮູ້ ກ່ຽວກັບ ປະຫວັດສາດເສັ້ນທາງເກີນຂອງສະຫະພາບໂຊວຽດ, ກ່ຽວກັບອະດີດແລະອະນາຄົດ, ກ່ຽວກັບບົດຮຽນໃນການສ້າງຊີວິດໃໝ່.

ອະດີດຕະການອັນສຸດທີ່ຍາວນານ ຂອງປະຊາຊົນລັດຊຽງ

ພວກນັກວິທະຍາສາດ ໄດ້ຢືນຢັນວ່າ ຢູ່ໃນດິນແດນ ສະຫະພາບໂຊວຽດນີ້ ໄດ້ມີຜູ້ຄົນທຳອິດມາຕັ້ງຖິ່ນຖານຢູ່ ເຄິ່ງລ້ານປີລ່ວງມາແລ້ວ. ພວກເຂົາໄດ້ດຳລົງຊີວິດຢູ່ໃນເຂດໃຕ້-ໄຕ້ແກ່ເຂດກາວະກາດ, ກະລິມແລະອາຊີກາງ.ພວກຜູ້ຄົນປະຖົມໂບຮານນີ້ ໄດ້ເຄື່ອນຍ້າຍໄປມາ ຈາກບ່ອນນີ້ໄປສູ່ບ່ອນນັ້ນ ເປັນກຸ່ມໃຫຍ່ ໂດຍເກັບເອົາຮາກໄມ້ ແລະລ່າເອົາສັດຕ່າງໆ ມາເປັນອາຫານ. ອາວຸດທຳອິດຂອງຜູ້ຄົນເຫລົ່ານີ້ ກໍໄດ້ແກ່ກ້ອນຫີນທີ່ມີຮູບຮ່າງຫຍາບໆນັ້ນເອງ.

ປະມານໜຶ່ງຮ້ອຍພັນປີລ່ວງມາແລ້ວ, ດິນແດນ ພາກສ່ວນໃຫຍ່ໃນທະວີບເອີລົບແລະອາຊີ ໄດ້ເລີ່ມເກີດມີນ້ຳກ້ອນທັບຖົມຂຶ້ນ. ນ້ຳກ້ອນເຫລົ່ານັ້ນ ໄດ້ກະຈາຍຈາກພາກເໜືອ ລົງມາເຖິງລຳນ້ຳຕອນກາງຂອງທະວີບ ເຊັ່ນແມ່ນ້ຳດະເນບ, ໂດນແລະໂວນກາ.

ພວກຜູ້ຄົນໄດ້ເອົາຊະນະໃນການຕໍ່ສູ້ ກັບໄພທຳມະຊາດອັນ

ຮ້າຍແຮງນີ້. ພວກເຂົາໄດ້ຮຽນຮູ້ວິທີ ການເຮັດໃຫ້ເກີດໄຟ. ໄຟນີ້ບໍ່ພຽງແຕ່ເປັນການປ້ອງກັນພວກເຂົາ ໃຫ້ພົ້ນຈາກຄວາມຕາຍເທົ່ານັ້ນ ແຕ່ມັນຍັງໄດ້ປ່ຽນແປງຊີວິດອີກດ້ວຍ. ປະມານ ໔໐ ພັນປີລ່ວງມາແລ້ວ ຖານະທາງຮ່າງກາຍແລະປາກົດການພາຍໃນຂອງຜູ້ຄົນ ໄດ້ເລີ່ມຕົ້ນຫຍັບເຂົ້າສູ່ຊີວິດແບບຜູ້ຄົນປະຈຸບັນນີ້.

ຢູ່ທີ່ແຫລມກະລິມ, ເຂດພາກກາງລັດເຊຍ, ຊີບີລີແລະທ້ອງຖິ່ນອື່ນໆ ພວກນັກວິທະຍາສາດ ໄດ້ພົບພໍ້ຮ່ອງຮອຍບ້ານ ອັນເກົ່າແກ່ຂອງຜູ້ຄົນເຫລົ່ານັ້ນ ເຊິ່ງສະແດງໃຫ້ເຫັນວ່າໃນໄລຍະເວລາອັນຍາວນານນັ້ນພວກເຂົາໄດ້ມີຄວາມສາມາດເຮັດພ້າ, ຫອກ ມີດດ້ວຍຫີນ ແລະເຂັມຈາກກະດູກ. ເຄື່ອງມືທີ່ຖືກປັບປຸງຂຶ້ນມານັ້ນ ແມ່ນອຳນວຍໃຫ້ແກ່ການລ່າສັດໄດ້ດີຫລາຍຂຶ້ນ. ຜູ້ຄົນກໍເລີ່ມຍຶດໝັ້ນຕັ້ງຖິ່ນຖານຢູ່ໃນບ່ອນເກົ່າ, ຂຸດຂຸມຢູ່ແລະສ້າງບ້ານແປງເຮືອນຢູ່ໃນຖ້ຳຫລາຍຂຶ້ນ.

ເມື່ອນ້ຳກ້ອນໄດ້ລະລາຍລົງແລ້ວ ຜູ້ຄົນນັ້ນກໍໄດ້ເຄື່ອນ ຍ້າຍໄປທາງພາກເໜືອ ມຸ່ງໜ້າສູ່ຝັ່ງທະເລບານຕິກ. ຜູ້ຄົນໄດ້ມີບາດກ້າວໃໝ່ໃນການຕໍ່ສູ້ກັບທຳມະຊາດ ແລະ ກໍໄດ້ ຮຽນຮູ້ເຖິງວິທີການເຮັດທະນູແລະລູກທະນູ.

ປະມານ ໗ ພັນປີລ່ວງມາແລ້ວ ການກະສິກຳ ແລະການລ້ຽງສັດແບບປະຖົມໂບຮານ ກໍໄດ້ເກີດຂຶ້ນ, ຜູ້ຄົນໄດ້ຮູ້ ເຮັດເຄື່ອງດິນເຜົາ. ການປ່ຽນແປງຄັ້ງໃໝ່ໃນຊີວິດຂອງຜູ້ຄົນໄດ້ເກີດມີຂຶ້ນ ເມື່ອພວກເຂົາໄດ້ຮູ້ເຮັດອຸປະກອນຕ່າງໆຈາກເຫຼັກ.

ຄອບຄົວແບບມີຜົວເມຍ ແມ່ນມີຄວາມໝາຍສຳຄັນ ອັນຍິ່ງໃຫຍ່ແກ່ຊີວິດຂອງຜູ້ຄົນ ແລະໄດ້ກາຍມາເປັນເຈົ້າຊັບ ສົມບັດຂອງອຸປະກອນການຜະລິດໃນເວລານັ້ນ ການພົວພັນກັນ ແລະການຢູ່ຮ່ວມກັນແບບເຊື້ອສາຍແຕ່ເກົ່າກ່ອນນັ້ນ. ໄດ້ໄຂທາງໄປສູ່ການຢູ່ຮ່ວມກັນແບບບ້ານໃກ້ເຮືອນຄຽງ. ບ້ານທີ່ຢູ່ ຮ່ວມກັນແບບນີ້ຫລາຍໆແຫ່ງ ກໍໄດ້ມາໂຮມກັນເຂົ້າ ກາຍເປັນຊົນເຜົ່າໄປ. ໃນລະຫວ່າງຊົນເຜົ່າຕ່າງໆນັ້ນ ກໍໄດ້ເກີດມີສົງຄາມກັນຂຶ້ນ ເພື່ອຢາກເປັນເຈົ້າຂອງທີ່ດິນ, ທົ່ງລ້ຽງສັດ, ສັດລ້ຽງແລະສິ່ງທີ່ມີຄຸນຄ່າຕ່າງໆ. ຊະເລີຍເສິກ ເຊິ່ງແຕ່ກ່ອນແມ່ນໄດ້ຖືກຂ້າຖິ້ມນັ້ນ ແຕ່ມາບັດນີ້ ໄດ້ເອົາມາເຮັດເປັນຂ້າທາດໄປ. ຂ້າທາດເປັນທັງຂອງບຸກຄົນສ່ວນຕົວ ຫລືເປັນທັງຊັບສົມບັດ ສ່ວນລວມ.

ເພື່ອທີ່ຈະຮັກສາຂ້າທາດ ໃຫ້ຢູ່ໃນຄວາມຊຸມຄອງ ແລະບັງຄັບພວກເຂົາເຮັດວຽກໄດ້ນັ້ນ ມັນຈຳເປັນຕ້ອງສ້າງກົງຈັກບັງຄັບຂຶ້ນມາເປັນພິເສດ. ການພົວພັນກັນແບບນັ້ນ ໄດ້ເກີດມີຂຶ້ນຢູ່ໃນໃຈກາງຂອງຊົນເຜົ່າ ແລະພາຍຫລັງຕໍ່ມາ ກໍໄດ້ນຳໄປສູ່ການສ້າງ ການເຕົ້າໂຮມກັນທີ່ເປັນລັກສະນະລັດທຳອິດຂຶ້ນ.

ໃນດິນແດນສະຫະພາບໂຊວຽດ ລັດສະໄໝໂບຮານທີ່ຄອບຄອງຂ້າທາດ ໄດ້ສ້າງຕັ້ງຂຶ້ນຢູ່ໃນເຂດໃຕ້ ກາວະກາດ ເມື່ອກ່ອນຄິດຕະສັກກະຫລາດ(ຄ.ສ.) ໜຶ່ງພັນປີ ແລະລັດທີ່ວ່ານີ້ກໍໄດ້ແກ່ ອູລາລະຕູ. ລັດນີ້ໄດ້ຂະຫຍາຍຕົວຂຶ້ນສູ່ລະດັບສູງສຸດໃນກາງສະຕະວັດທີ ໘ ກ່ອນ ຄ.ສ. ຈາກການຈາລຶກ ຢູ່ໃນ

ຫີນທີ່ຖືກປົກປັກຮັກສາໄວ້ນັ້ນ ແມ່ນບອກໃຫ້ພວກເຮົາຮູ້ກ່ຽວກັບການຕໍ່ສູ້ຂອງຜູ້ໄດ້ຮັບໄຊຊະນະຢ່າງສຳເລັດຜົນຂອງອານາຈັກອູລາລະຕູ. ພວກຂ້າທາດທີ່ຖືກຈັບເປັນຊະເລີຍ ຫລາຍພັນຄົນນັ້ນໄດ້ສ້າງພະລາຊະວັງ ອັນສວຍສົດງົດງາມ,ວັດ,ປ້ອມຄ້າຍ, ຄອງນ້ຳແລະຊົນລະປະທານຂຶ້ນ. ຄອງນ້ຳທີ່ມີຄວາມຍາວ ໗໐ ກ່ວາກິໂລແມັດທີ່ສ້າງຂຶ້ນ ໂດຍພວກຂ້າທາດນັ້ນ ຍັງຖືກປົກປັກຮັກສາໄວ້ຈົນຮອດທຸກມື້ນີ້.

ໃນທ້າຍສະຕະວັດທີ VIII ກ່ອນ ຄ.ສ., ອູລາລະຕູ ໄດ້ເກີດການປະທະກັນກັບລັດທະຫານ ອັດຊູລທີ່ມີກຳລັງເຂັ້ມແຂງກ່ວາແລ້ວ ກໍໄດ້ຖືກປະລາໄຊໄປ, ແລ້ວໃນສະຕະວັດທີ VI ກ່ອນ ຄ.ສ. ລັດນີ້ກໍໄດ້ຖືກຍຶດໂດຍລັດເມເດສະແລະສູນເສຍເອກະລາດໄປ.

ພາຍຫລັງຕໍ່ມາ ຢູ່ໃນດິນແດນຂອງລັດອູລາລະຕູນີ້ກໍໄດ້ສ້າງຕັ້ງລັດອາລະເມເນຍ ແລະ ກະລູເຈຍຂຶ້ນ.

ຢູ່ໃນອາຊີກາງ ເມື່ອກ່ອນ ຄ.ສ.ຫນຶ່ງພັນປີ ກໍໄດ້ ມີລັດທີ່ຄອບຄອງຂ້າທາດຄືກັນເຊັ່ນ ບັກຕະລີຢາ,ໂຊກະດີອານາແລະໂຄເລສະມະ. ໃນສະຕະວັດທີ VI ກ່ອນຄ.ສ.ບັນດາລັດເຫຼົ່ານີ້ກໍໄດ້ຖືກປາບປາມຈາກພະເຈົ້າຊາ ເປີເຊຍ ຊີ່ ກົດ, ແລະໃນສະຕະວັດທີ IV ກ່ອນ ຄ.ສ. ອາຊີກາງກໍໄດ້ຖືກ ຮຸກຮານຈາກພະເຈົ້າອາເລັກຊານເດີ ມາເກດົນ ຜູ້ເຊິ່ງໄດ້ທຳການສູ້ຮົບຢ່າງຫນັກ ເພື່ອຍາດເອົາໄຊຊະນະຈາກປະຊາຊົນທ້ອງຖິ່ນທີ່ທຳການຕໍ່ຕ້ານ.

ຢູ່ໃນຣິມຝັ່ງທະເລດຳພາກເຫນືອກ່ອນ ຄ.ສ.ຫນຶ່ງພັນປີນັ້ນ ໄດ້ມີຊົນເຜົ່າ ຊະກິເທຍ ຈຳນວນຫລວງຫລາຍອາໄສຢູ່. ຈຳນວນຫນຶ່ງຂອງຊົນເຜົ່າເຫລົ່ານັ້ນ ກໍໄດ້ແກ່ ພວກສັນຈອນໄປຕາມການລ້ຽງສັດ ສ່ວນພວກອື່ນກໍໄດ້ກາຍເປັນ ຊາວໄຮ່ຊາວນາໄປແລ້ວ. ເຫດການໄດ້ວິວັດໄປຄື ເກີດມີຄວາມບໍ່ສະເຫມີພາບພາຍໃນຊົນເຜົ່າ ຊະກິເທຍ ຈົນວ່ານຳໄປສູ່ການສ້າງຕັ້ງອານາຈັກ ຊະກິເທຍ ຂຶ້ນ. ລັດນີ້ໄດ້ດຳເນີນຕິດຕໍ່ຄ້າຂາຍກັບພວກນັກອານານິຄົມກະເລັກທີ່ໄປຕັ້ງຖິ່ນຖານ ຢູ່ຕາມຣິມຝັ່ງທະເລດຳ. ເຂົ້າປະມານ ໕໐ ເປີເຊັນ ເຊິ່ງປະຊາຊົນເອເທນໂບຣານນຳມາເປັນອາຫານນັ້ນ ໄດ້ຖືກສົ່ງມາທາງເຮືອ ຂອງກະເລັກຈາກອານາຈັກ ຊະກິເທຍ. ໄຫນ້ຳຫມີ່ຫູພ້ອມທັງເຫຼົ້າແວງ ແລະນ້ຳມັນຫມາກໂອລິວນັ້ນ ໄດ້ຖືກນຳມາຈາກກະເລັກສູ່ຣິມຝັ່ງທະເລດຳພາກເຫນືອ. ເມື່ອມາຮອດສະໄຫມເຮົາ ນີ້ ພວກນັກໂບຣານຄະດີກໍໄດ້ພົບພໍ້ເສດເຫລືອຂອງໄຫນ້ຳນັ້ນຢູ່ຕາມຣິມຝັ່ງທະເລດຳນັ້ນ.

ປະຊາຊົນພົນເມືອງຂອງເອີລົບຕາເວັນຕົກ ແມ່ນປະກອບໄປດ້ວຍຊົນເຜົ່າຊະລາບ. ຢູ່ໃນດິນແດນສ່ວນໃຫຍ່ຄືຕັ້ງແຕ່ທະເລບານຕິກ ເຖິງທະເລດຳພາກເຫນືອ, ຕາມຝັ່ງແມ່ນ້ຳ ດະເນບ ແລະ ດະເນສະເຕີ, ແມ່ນ້ຳໂວນກາ ຕອນເທິງ ແລະ ຕອນລຸ່ມ ໄດ້ມີຊາວຊະລາບຕາເວັນອອກ-ອັນໄດ້ແກ່ ຊາວລັດເຊຍ, ອູກະລາອີນາ ແລະ ເບໂລລຸດເຊຍ ອາໄສຢູ່.

ການຂຸດຄົ້ນໂບຣານວັດຖຸຫລາຍຢ່າງ ທີ່ດຳເນີນໄປໂດຍນັກ

ໂບຮານວັດຖຸນັ້ນ ໄດ້ສະແດງໃຫ້ພວກເຮົາເຫັນ ກ່ຽວກັບຊີວິດ
ການເປັນຢູ່ຂອງຊາວຊະລາບຕາເວັນອອກ.

ຂໍໃຫ້ພວກເຮົາຈົ່ງມາຄິດເບິ່ງ ອະດີດຕະການທີ່ຜ່ານມາຫຼາຍສະຕະວັດນັ້ນ, ພວກເຮົາກໍຈະຮູ້ຈັກກັບສະພາບການ ດຳລົງຊີວິດຂອງຜູ້ຄົນໃນບ້ານຊາວຊະລາບນັ້ນກ່ອນ.

... ບ້ານນັ້ນຕັ້ງຢູ່ຮິມແມ່ນ້ຳ ແລະກໍໄດ້ຖືກລືມໄປຢູ່ໃນທ່າມກາງປ່າໄມ້ອັນຕຶບໜາ. ພວກເຂົາເມື່ອຂຸດດິນລົງໄປ ເລິກແລ້ວ ກໍເອົາທ່ອນໄມ້ມາຝັງເປັນກຳແພງປ້ອງກັນ ບໍ່ໃຫ້ ສັດຕູແລະສັດຮ້າຍ ມາທຳຮ້າຍຜູ້ຄົນຢູ່ໃນບ້ານນັ້ນ. ຢູ່ໃນບ້ານນັ້ນກໍມີເຮືອນຫລາຍຫລັງ ທີ່ສ້າງຂຶ້ນມາຈາກທ່ອນໄມ້ອີກ. ໃນເວລາໃດທີ່ມີອາກາດໜາວ ປ່ອງຢ້ຽມນ້ອຍໆນັ້ນ ກໍຖືກອັດໄວ້ ດ້ວຍໄລໄມ້ ແຕ່ວ່າບາງເທື່ອ ກໍຖືກອັດດ້ວຍໜັງສັດ.

ການກະສິກຳ ເປັນອາຊີບພື້ນຖານ ຂອງຊາວຊະລາບ ໂບຮານ. ການຂຸດກົ່ນດິນນັ້ນ ບໍ່ແມ່ນເປັນຂອງງ່າຍເລີຍໂດຍສະເພາະຢູ່ໃນເຂດປ່າໄມ້.ກ່ອນອື່ນໝົດ ມັນຈຳເປັນຕ້ອງຕັດຕົ້ນໄມ້ ແຕ່ມັນກໍບໍ່ແມ່ນແຮງຂອງຄົນດຽວ ທີ່ຈະເຮັດແນວນັ້ນໄດ້. ຊາວບ້ານໄດ້ມາພ້ອມພຽງກັນຕັດຕົ້ນໄມ້ນັ້ນລົງ ແຕ່ເມື່ອຕົ້ນໄມ້ນັ້ນແຫ້ງແລ້ວ ພວກເຂົາກໍຈູດມັນ. ເຖົ່າຖ່ານຈາກການຈູດຕົ້ນໄມ້ນັ້ນ ໄດ້ເຮັດໃຫ້ດິນບ່ອນນັ້ນຈົບງາມ. ຫລັງຈາກນັ້ນກໍຕ້ອງຖອນກະຕໍໄມ້ນັ້ນອອກ. ດັ່ງນັ້ນດິນທີ່ຖືກຖາກຖາງໃຫ້ແປນແລ້ວກໍໄດ້ແບ່ງໃຫ້ຄອບຄົວຕ່າງໆພວກເຂົາໄດ້ໄຖດິນດ້ວຍໄຖໄມ້ແລ້ວກໍປູກເຂົ້າໃສ່ແລະກໍໄດ້ເກັບກ່ຽວເຂົ້າທີ່ສຸກເຫຼືອງນັ້ນດ້ວຍກ່ຽວ.

ບ້ານຊາວຊະລາບຕາເວັນອອກບູຮານ.

ຢູ່ທີ່ບ້ານຊາວຊະລາບນັ້ນ ໄດ້ມີສັດລ້ຽງ, ບໍ່ຫລາຍ ແຕ່ວ່າມັນມີຄຸນຄ່າຫລາຍແທ້. ສັດລ້ຽງນີ້ ໄດ້ໃຫ້ອາຫານ ແກ່ຜູ້ຄົນ , ຫນັງສຳລັບເຮັດເກີບ, ຂົນເຊັ່ງໄດ້ເຮັດເປັນຜ້າສັກກະຫລາດ ຫລືກໍໄດ້ເຮັດເປັນແຜ່ນຜ້າ ທີ່ເຮັດດ້ວຍມືຢ່າງປານີດ ເພື່ອຕັດເສື້ອຜ້າ.

ພວກເຂົາໄດ້ອາຫານມາຈາກ ການລ່າສັດແລະກໍມີການຫາປາຄືກັນ.

ຊາວຊະລາບໂບຮານ ໄດ້ມີຄວາມດູຫມັ່ນໃນການອອກແຮງງານ, ມີຈິດໃຈເບີກບານແລະເອື້ອເຟື້ອເພື່ອແຜ່ຕໍ່ເພື່ອນຝູງ. ຖ້າຫາກວ່າສັດຕູໄດ້ມາໂຈມຕີພວກເຂົາຊາວຊະລາບ ກໍໄດ້ຕໍ່ສູ້ດ້ວຍຄວາມກ້າຫານ ແລະຊຳນິຊຳນານ. ໃນເວລາໃດມີການ

ຕໍ່ສູ້ທາງທະຫານເກີດຂຶ້ນ ທຸກໆຊົນເຜົ່າ ກໍໄດ້ເລືອກເອົາຜູ້ນຳຂອງຕົນຂຶ້ນ-ຄືເຈົ້າກົກເຈົ້າເຫລົ່າ (ກະນຽດ).ຜູ້ຄົນທັງຫຼາຍທີ່ຍຶດຫມັ້ນຢູ່ໃນວຽກງານທະຫານ ໂດຍສະເພາະນັ້ນ ໄດ້ເລີ່ມເຕົ້າໂຮມກັນເຂົ້າມາຢູ່ອ້ອມຂ້າງເຈົ້າກົກເຈົ້າເຫລົ່າໆ ຕາມລຳດັບ. ພວກເຂົາເຫລົ່ານີ້ ເອີ້ນວ່າຜູ້ອາລັກຂາ. ເພື່ອທີ່ຈະຕໍ່ສູ້ກັບພວກພະເນຈອນ ປເຊເນກ ຜູ້ທີ່ໄດ້ມາທຳການໂຈມຕີ ຢູ່ເລື້ອຍໆ ແລະຕໍ່ມາກັບພວກໂປລົບຊານັ້ນ ກອງອາລັກຂາຂອງເຈົ້າກົກເຈົ້າເຫລົ່າ ກໍໄດ້ປັບປຸງໃຫ້ເຂັ້ມແຂງຂຶ້ນ.

ນັບເປັນເວລາຫລາຍສະຕະວັດ ທີ່ຊາວນາຊະລາບໄດ້ອອກເຫື່ອເຫແຮງຖາງປ່າ ແລະບຸກເບີກພື້ນທີ່ດິນອັນກວ້າງໃຫ່ຍໃຫ້ເປັນທົ່ງປູກຝັງ, ໄດ້ປັບປຸງອຸປະກອນຂຸດຄົ້ນທີ່ດິນ, ລ້ຽງສັດຈຳນວນຫລວງຫລາຍ ແລະໃຊ້ມ້າແກ່ໄຖແລະຄາດ.

ຊາວຊະລາບໄດ້ຮຽນຮູ້ການຫລໍ່ຫລອມເຫລັກ ແລະ ສ້າງເຫລັກນັ້ນ ໃຫ້ເປັນຄ້ອນຕີ. ດັ່ງນັ້ນເຄື່ອງມືອອກແຮງງານຊະນິດໃຫມ່ແລະທັນສະໄຫມໄດ້ມີຂຶ້ນ ຫລາຍກວ່າເກົ່າເຊັ່ນຂວານເຫລັກ, ມີດເຫລັກ ແລະ ອາວຸດໃຫມ່ໆກໍໄດ້ປາກົດຂຶ້ນ.

ເວລານີ້ ທຸກໆຄອບຄົວ ກໍສາມາດຈັດຫາສິ່ງທີ່ຈຳເປັນ ທັງຫມົດໃຫ້ແກ່ຕົນເອງໄດ້ ແລະຜູ້ຄົນທັງຫລາຍ ກໍບໍ່ຈຳເປັນທີ່ຈະຕ້ອງມາເຕົ້າໂຮມກັນເຂົ້າໃຫ້ເປັນຫມວດຫມູ່ທີ່ໃຫ່ຍໂຕ ເພື່ອສະແຫວງຫາສະບຽງອາຫານຮ່ວມກັນ.

ການຂະຫຍາຍຕົວທາງດ້ານການກະເສດ ແລະການຫັດຖະກຳ ໄດ້ເຮັດໃຫ້ເກີດມີການແລກປ່ຽນສິນຄ້າກັນຂຶ້ນ.ທຸກໆຄອບ

ຄົວໄດ້ພະຍາຍາມ ບໍ່ພຽງແຕ່ຈັດຫາຜະລິດຕະພັນກະສິກຳ ໃຫ້ແກ່ຕົນເອງເທົ່ານັ້ນ, ແຕ່ຍັງໄດ້ພະຍາຍາມ ເພື່ອຈະໃຫ້ເຫຼືອກິນເຫຼືອໃຊ້ອີກ ເຊິ່ງອາດຈະນຳເອົາໄປແລກປ່ຽນສິນຄ້າຂອງຊ່າງຕີເຫລັກ, ຊ່າງປັ້ນໝໍ້ ແລະຊ່າງຟອກໜັງ.

ການເກັບສ່ວຍຂອງກອງອາລັກຂາເຈົ້າໃນລັດເຊຍສະໄໝບູຮານ.

ບັນດາຄອບຄົວເຈົ້າກົກເຈົ້າເຫລົ່າ ໄດ້ເລີ່ມຕົ້ນປາກົດຮັ່ງມີຂຶ້ນ. ເຈົ້າເຫລົ່າໄດ້ຍຶດເອົາກອງອາລັກຂາມາຮັກສາຕົນເອງ ບໍ່ພຽງແຕ່ໃນຍາມເສິກສົງຄາມເທົ່ານັ້ນ ແຕ່ໃນຍາມສະຫງົບອີກດ້ວຍ. ເພື່ອທີ່ຈະສ້າງຄວາມຮັ່ງມີໃຫ້ແກ່ຕົນເອງ ໄດ້ນັ້ນ ເຂົາບໍ່ໄດ້ລໍຖ້າຮອດຍາມເສິກສົງຄາມເລີຍ. ທຸກໆປີພໍລະດູໃບໄມ້ຫລົ່ນມາເຖິງແລ້ວ ເຈົ້າກົກເຈົ້າເຫລົ່າ ພ້ອມດ້ວຍກອງອາ

ລັກຂາຂອງຕົນ ກໍໄດ້ເຄື່ອນອອກໄປ ເກັບສ່ວຍ ກັບປະຊາຊົນ ໃນບ້ານໄກ້ຄຽງ. ປະຊາຊົນເຫລົ່ານັ້ນ ໄດ້ນຳເອົາເຂົ້າ, ນ້ຳມັນເບີແລະຫນັງມາເສຍສ່ວຍແກ່ ເຈົ້າກົກເຈົ້າເຫລົ່າ ດ້ວຍຄວາມບໍ່ພໍໃຈທີ່ສຸດ. ຫລັງຈາກນັ້ນມາ ພວກເຂົາບໍ່ພຽງແຕ່ບໍ່ມີເຂົ້າເຫລືອກິນເຫລືອໃຊ້ ເຫລືອຄ້າງຢູ່ເທົ່ານັ້ນ ແຕ່ພວກເຂົາຍັງບໍ່ມີເຂົ້າພຽງພໍຄ້າງຢູ່ ເຖິງລະດູເກັບກ່ຽວໃຫມ່ອີກດ້ວຍ. ພວກປະຊາຊົນໃນຫລາຍໆບ້ານ ໄດ້ພະຍາຍາມຕ້ານກັບ ການເສຍສ່ວຍອັນນີ້, ແຕ່ວ່າພາຍໃຕ້ການຫນີບຕົງ ທາງດ້ານກຳລັງນັ້ນ ພວກເຂົາຈຶ່ງບໍ່ສາມາດຕໍ່ສູ້ກັບກອງອາລັກຂາທີ່ປະກອບອາວຸດໄດ້.

ດັ່ງນັ້ນພວກເຈົ້າກົກເຈົ້າເຫລົ່າ ແລະທະຫານອາລັກຂາຈຶ່ງໄດ້ຮັ່ງມີຂຶ້ນມາ ດ້ວຍການໃຊ້ກຳລັງໃຫ້ເປັນປະໂຫຍດ ແກ່ຕົນເອງ ຈົນວ່າຊົນເຜົ່າຕ່າງໆ ໄດ້ເກີດມີຄວາມທຸກຍາກລຳບາກຂຶ້ນ.

ໃນສະຕະວັດທີ IX ແຫ່ງສະໄຫມຂອງພວກເຮົາ ຢູ່ໃນ ດິນແດນແຫ່ງຊາວຊະລາບຕາເວັນອອກນັ້ນ ກໍໄດ້ມີເມືອງ ຕ່າງໆເກີດຂຶ້ນ. ເວົ້າຕາມຄວາມຈິງແລ້ວ ເມືອງເຫລົ່ານີ້ ໄດ້ຕັ້ງຢູ່ຕາມສາຍທາງການຄ້າທີ່ສຳຄັນໆ. ບັນດາຜູ້ຄົນ ທີ່ອາໄສຢູ່ ໃນເມືອງເຫລົ່ານີ້ ເປັນຄັ້ງທຳອິດນັ້ນ ກໍໄດ້ແກ່ພວກຊ່າງ ຫັດຖະກຳແລະພໍ່ຄ້ານັ້ນເອງ ແລະໃນບໍ່ດົນຕໍ່ມາ ກໍໄດ້ມີພວກເຈົ້າກົກເຈົ້າເຫລົ່າພ້ອມທັງທະຫານອາລັກຂາ ມາເລີ່ມຕັ້ງຖິ່ນຖານ ຢູ່ໃນເມືອງເຫລົ່ານີ້ຄືກັນ. ດິນແດນທີ່ເຈົ້າກົກເຈົ້າເຫລົ່າ ເກັບ

ສ່ວຍນັ້ນ ກໍໄດ້ເລີ່ມເອີ້ນວ່າ ອານາຈັກນ້ອຍ.

ອານາຈັກກິເຢັບ ເຊິ່ງມີເມືອງກິເຢັບ ເປັນເມືອງສູນກາງນັ້ນ ມີຄວາມສຳຄັນຫລາຍທີ່ສຸດ. ໃນສະຕະວັດທີ IX ເຈົ້າກົກເຈົ້າເຫລົ່າທີ່ກິເຢັບ ໄດ້ຍຶດເອົາດິນແດນສ່ວນໃຫຍ່ ຂອງຊາວຊະລາບຕາເວັນອອກ ເຊິ່ງໃນເວລານັ້ນ ເລີ່ມຕົ້ນເອີ້ນກັນວ່າ ລູດນາຂົ້ນກັບຕົນ. ດັ່ງນັ້ນອານາຈັກກິເຢັບ-ລູດ ຈຶ່ງໄດ້ ກາຍເປັນລັດທີ່ມີຄວາມເຂັ້ມແຂງ ແລະໃຫຍ່ຫລາຍທີ່ສຸດ ໃນເວລານັ້ນ ເຊິ່ງໄດ້ຍຶດຄອງດິນແດນຕັ້ງແຕ່ທະເລບັນຕິກ ພາກເຫນືອໄປຮອດທະເລດຳພາກໃຕ້, ຕັ້ງແຕ່ສາຍແມ່ນ້ຳໂອນກາ ຕອນເທິງແລະແມ່ນ້ຳໂດນໃນທິດຕາເວັນອອກ ເຖິງສາຍແມ່ນ້ຳດະວິນຕາເວັນຕົກ, ແມ່ນ້ຳເນມານາ ແລະ ວິຊະລີ ໃນທິດຕາເວັນຕົກ. ຕໍ່ມາຊົນເຜົ່າຕ່າງໆ ທີ່ອາໄສຢູ່ ທາງທິດ ຕາເວັນອອກສຽງເຫນືອຂອງອານາຈັກກິເຢັບ-ລູດ, ຕາມຣິມ ແມ່ນ້ຳເປໂຊລະ ແລະ ດະວິນເຫນືອ ກໍໄດ້ຍອມຢູ່ພາຍໃຕ້ອາລັກຂາຂອງເຈົ້າກົກເຈົ້າເຫລົ່າກິເຢັບຄືກັນ. ອຳນາດທັງຫມົດທີ່ຢູ່ໃນລັດນີ້ ໄດ້ຕົກຢູ່ໃນກຳມືຂອງເຈົ້າກົກເຈົ້າເຫລົ່າ ແລະ ເຈົ້າທີ່ດິນທີ່ຮັ່ງ-ໄດ້ແກ່ຊຸມນາງ. ຊີວິດຂອງຊາວນາໄດ້ມີຄວາມຍາກລຳບາກຫລາຍຍິ່ງຂຶ້ນ.

ມື້ຫນຶ່ງຫລັງຈາກໄດ້ເກັບສ່ວຍ ແລະ ກັບຄືນສູ່ ບ້ານເຮືອນແລ້ວ ເຈົ້າກົກເຈົ້າເຫລົ່າກິເຢັບຊື່ ອີໂກລະ ກໍໄດ້ຕັດສິນ ໃຈວ່າຈະຕ້ອງເກັບສ່ວຍໃຫ້ໄດ້ຫລາຍຂຶ້ນກ່ວານີ້. ເມື່ອປະຊາຊົນໄດ້ຮູ້ວ່າ ເຈົ້າກົກເຈົ້າເຫລົ່າ ຈະກັບມາຫາພວກເຂົາ ເພື່ອ

ເກັບສ່ວຍໃຫມ່ນັ້ນ ພວກເຂົາໄດ້ເວົ້າວ່າ "ຖ້າຫາກວ່າ ຫມາ ໃນມືນຶດໄສຢາກກິນແກະແລ້ວ ຝູງແກະນີ້ກໍຈະແກ່ລາກ ເຂົາ ໄປ. ເລື່ອງກໍ່ໄດ້ເປັນໄປແບບນັ້ນແທ້. ຖ້າຫາກວ່າບໍ່ຂ້າເຈົ້າ ກົກເຈົ້າເຫລົ່ານີ້ ໃຫ້ຕາຍແລ້ວ, ເວລານັ້ນ ມັນກໍຈະທຳລາຍ ພວກເຮົາ".

ປະຊາຊົນໄດ້ລູກຮືຂຶ້ນ ແລະໄດ້ຂ້າ ອິໂກລະ ໃຫ້ຕາຍໄປ ພ້ອມທັງກອງທະຫານຂອງເຂົາ. ແຕ່ວ່າເນຍຂອງເຂົາ ກໍໄດ້ ສົ່ງກອງທະຫານໃຫມ່ມາແທນ ແລະລົງໂທດພວກທີ່ລຸກຮືຂຶ້ນນັ້ນ ຢ່າງໂຫດຮ້າຍປ່າເຖື່ອນ.

ໃນສະຕະວັດທີ XI ກີເຢັບກໍໄດ້ເປັນເມືອງໃຫຍ່ທີ່ສຸດເມືອງ ຫນຶ່ງໃນເອີລົບ. ເມືອງນີ້ໄດ້ມີການສ້າງກຳແພງດິນໃຫຍ່ອ້ອມ ຮອບໄວ້ ແລະຕາມກຳແພງນີ້ ກໍໄດ້ຕໍ່ຝາໄມ້ສູງຂຶ້ນຕື່ມອີກ. ກຳ ແພງແລະຝານີ້ໄດ້ປ້ອງກັນຕົວເມືອງ ໃຫ້ພົ້ນຈາກການ ໂຈມຕີ ຂອງພວກຊົນເຜົ່າພະເນຈອນ ທີ່ມາ ສູ່ລູດ ຈາກຝັ່ງ ທະເລ ຄັດສະປຽນແລະທະເລດຳເລື້ອຍໆ.

ປະຊາຊົນຜູ້ອອກແຮງງານ-ໄດ້ແກ່ຊ່າງຕີເຫລັກ, ຊ່າງໄມ້, ຊ່າງປັ້ນຫມໍ້ ແລະ ຊ່າງຫັດຖະກຳອື່ນໆ ໄດ້ອາໄສຢູ່ໃນກະຕູບ ນ້ອຍໆທີ່ຝັງຢູ່ໃນດິນເຄິ່ງຫນຶ່ງ.

ພວກນາຍຊ່າງ ກໍໄດ້ພັກພາອາໄສຢູ່ກັບພວກເຂົາໃນເຮືອນ ຫລັງນີ້ໂດຍກົງ ຫລືຖັນແຖວຂອງເຮືອນນີ້. ຊື່ສຽງຂອງ ຊ່າງ ສິລະປະກີເຢັບໄດ້ແຜ່ກະຈາຍໄປທົ່ວລູດ ແລະອ້ອມແອ້ມ ຂອບ ເຂດນີ້. ໂດຍສະເພາະແມ່ນຊ່າງຣັດປືນ, ຊ່າງເຈຍລະໃນ

ເພັດພອຍ, ຊ່າງຕີເງິນ, ຄວັດຮູບແລະຊຸບຄຳ ໄດ້ມີ ຊື່ສຽງເປັນພິເສດ.

ຢູ່ໃນທ່າມກາງເຮືອນອັນຍາກຈົນ ຈຳນວນ ຫລວງຫລາຍຂອງຜູ້ຄົນທີ່ອອກແຮງງານນີ້ ກໍໄດ້ມີຕຶກຫີນຫລັງຄາສູງພ້ອມທັງມີປ່ອງຢ້ຽມຄວັດລວດລາຍ ຕັ້ງຢູ່ຢ່າງສະຫງ່າຜ່າເຜີຍ. ເຮືອນຊານເຫລົ່ານີ້ ເປັນເຮືອນຊານຂອງຄົນຮັ່ງມີກົດເຍັບ- ໄດ້ແກ່ຂຸນນາງ, ພໍ່ຄ້າ. ເຮືອນທຸກໆຫລັງ ແມ່ນມີຮົ້ວໄມ້ອັນແຫນ້ນ ຫນາລ້ອມໄວ້ແລະມີຫໍຄອຍສັງເກດການ. ພວກພໍ່ຄ້າ ແລະຂຸນນາງເຫລົ່ານີ້ ຕ້ອງເບິ່ງແຍງຊັບສົມບັດທີ່ໄດ້ມາຢ່າງບໍ່ຍຸຕິທຳນີ້ ໄວ້ຢ່າງເຂັ້ມແຂງ, ພວກເຂົາຢ້ານຄວາມວຸ້ນວາຍອັນຍຸຕິທຳຂອງປະຊາຊົນ.

ພວກພໍ່ຄ້າແລະຂຸນນາງ ໄດ້ດຳລົງຊີວິດຢູ່ຢ່າງສະນຸກສຸກສະບາຍ. ແຕ່ເຈົ້າກົກຜູ້ຍິ່ງໃຫ່ຍແຫ່ງກົດເຍັບ - ໄດ້ແກ່ ຫົວຫນ້າ, ເຈົ້າກົກລັດເຊຍ ກໍຍິ່ງມີຄວາມຮັ່ງມີກວ່ານັ້ນອີກ. ພະລາຊະວັງຂອງເຂົາ ໄດ້ຮັບການກໍ່ສ້າງຂຶ້ນຢູ່ເທິງເນີນພູສູງ. ຢູ່ໃນພະລາຊະວັງເຈົ້າກົກນັ້ນ ກໍຫນາແຫນ້ນໄປດ້ວຍຜູ້ຄົນສະເຫມີ. ຢູ່ບ່ອນນີ້ໄດ້ມີກອງທະຫານທີ່ຕິດດາບແລະຫອກຕັ້ງຢູ່ເປັນປະຈຳ.

ບັນດາເຈົ້າກົກເປັນຜູ້ປົກຄອງປະເທດ. ພວກເຂົາໄດ້ອອກກົດຫມາຍປ້ອງກັນຜູ້ທີ່ຮັ່ງມີ ແລະບັງຄັບໃຫ້ຊາວນາ ແລະຊ່າງຫັດຖະກຳໃນທຸກທີ່ນທຸກແຫ່ງມາຂຶ້ນກັບເຈົ້າກົກ ແລະຂຸນນາງ. ຖ້າຜູ້ໃດບໍ່ເຊື່ອຟັງຕໍ່ກົດຫມາຍ ອັນບໍ່ຍຸຕິທຳເຫລົ່ານີ້ແລ້ວ ພວກເຈົ້າກົກກໍໄດ້ຕັດສິນ ແລະລົງໂທດຜູ້ນັ້ນຢ່າງໂຫດຮ້າຍທາລຸນ.

ອຳນາດຂອງເຈົ້າກົກນີ້ ໄດ້ຮັບການສະໜັບສະໜູນ ຈາກວົງການສາສະໜາຄະລິສະຕຽນ ທີ່ມີອິດທິພົນ ຢ່າງກວ້າງຂວາງ ພາຍຫລັງທີ່ລັດກິເຢັບ ໄດ້ນັບຖືສາສະໜາຄະລິສະຕຽນຕັ້ງແຕ່ສະຕະວັດທີ IX.ຕາມການຢັ້ງຢືນຂອງຄົນຮຸ່ນນັ້ນວ່າຢູ່ໃນກິເຢັບໃນສະຕະວັດທີ XI ນັ້ນ ໄດ້ມີໂບດຢູ່ຮອດ ໔໐໐ ແຫ່ງ. ໂບດເຫລົ່ານັ້ນຕັ້ງຢູ່ສູງກ່ວາເຮືອນຊານອື່ນໆ ເພື່ອເປັນ ສັນຍາລັກເຖິງຄວາມຍິ່ງໃຫຍ່ຂອງສາສະໜາຄະລິສະຕຽນ. ຕັ້ງແຕ່ນັ້ນມາໂບດໂຊເຟຍທີ່ສ້າງດ້ວຍຫີນອ່ອນ ຢູ່ໃນກິເຢັບ ກໍໄດ້ ສະແດງເຖິງຄວາມຊຳນິຊຳນານຂອງຮູບການທາງດ້ານໂບຮານສະຖານແລະການປະດັບຕົກແຕ່ງພາຍໃນທີ່ມີຄວາມຈົບງາມ -ໄດ້ແກ່ຮູບສີນ້ຳເທິງຝາ ແລະເພດານ.

ຢູ່ໃນກິເຢັບ, ໃນເມືອງໂນວະໂກລົດ ແລະເມືອງອື່ນໆນັ້ນໂຮງຮຽນກໍໄດ້ຮັບການຈັດຕັ້ງຂຶ້ນ ເປັນເທື່ອທຳອິດ ພາຍໃຕ້ການຄວບຄຸມຂອງວົງການສາສະໜາ ແລະຢູ່ໃນລັດເຊຍ, ຜູ້ຄົນທີ່ຮູ້ໜັງສື ກໍໄດ້ເລີ່ມປາກົດມີຫລາຍຂຶ້ນ.ປຶ້ມຕ່າງໆໄດ້ຂຽນຂຶ້ນດ້ວຍມືໂດຍຂົນຫ່ານ. ເວົ້າເຖິງເຈ້ຍໃນເວລານັ້ນ ບໍ່ມີໃຜຮູ້ເລີຍ, ພວກເຂົາໃຊ້ໜັງງົວນ້ອຍທີ່ຟອກແລ້ວ ຢ່າງດີໃຊ້ແທນເຈ້ຍ. ເພື່ອທີ່ຈະຂຽນຈົດໝາຍນັ້ນ ພວກເຂົາ ໄດ້ ໃຊ້ເປືອກຕົ້ນເບີດ. ພວກນັກໂບຮານວັດຖຸ ໄດ້ພົບພໍ້ ຈົດໝາຍທີ່ຂຽນດ້ວຍເປືອກຕົ້ນເບີດແບບນັ້ນ ຫລາຍຮ້ອຍສະບັບໃນເວລາຂຸດຄົ້ນວັດຖຸໂບຮານຢູ່ໃນເມືອງ ໂນວະໂກລົດ. ການບັນທຶກກ່ຽວກັບເຫດການທີ່ສຳຄັນຕ່າງໆຫລາຍທີ່ສຸດຢູ່ໃນປະຫວັດສາດ

ກິເຢັບຈູດນັ້ນ ແມ່ນໄດ້ຮັກສາໄວ້ຈົນຮອດທຸກມື້ນີ້. ການບັນທຶກນີ້ໄດ້ດຳເນີນໄປທຸກໆປີແລະເອີ້ນວ່າ ເຫດການປະຈຳປີ, ສ່ວນຜູ້ຄົນທີ່ທຳການບັນທຶກນັ້ນ ເອີ້ນວ່າຜູ້ບັນທຶກເຫດການ. ການຈາລຶກຂອງພາສາຂຽນໂບຮານນັ້ນໄດ້ຊ່ອຍໃຫ້ເຮົາຮຽນຮູ້ປະຫວັດສາດຂອງກິເຢັບ-ຈູດ.

ວັນເວລາລ່ວງໄປ. ທີ່ດິນທີ່ບໍ່ໄດ້ຂຸດຄົ້ນໃນລັດເຊຍນີ້ ກໍນັບມື້ນັບລົດນ້ອຍລົງໄປ ແຕ່ຊີວິດຂອງຊາວນາກະສິກອນ ກໍບໍ່ໄດ້ດີຂຶ້ນ. ພວກເຈົ້າກົກແລະຂຸນນາງ ໂດຍໄດ້ຮັບການຊ່ອຍເຫລືອຈາກກອງກຳລັງທະຫານ ໄດ້ຍຶດເອົາດິນແດນສ່ວນໃຫຍ່ ມາເປັນຂອງຕົນແລະບັງຄັບໃຫ້ຊາວນາປະລະກຳມະສິດ ຂອງຕົນໄປ. ຊາວນາໄດ້ອອກແຮງງານໜັກ ສ່ວນເຈົ້າກົກ ແລະຂຸນນາງຊໍ້າພັດຮັ່ງມີຂຶ້ນ. ເມືອງຕ່າງໆໄດ້ເຕີບໃຫຍ່ຂຶ້ນມາ ຢ່າງວ່ອງໄວ. ເມືອງໂນວະໂກລົດ, ເຮຍຊານ ແລະວະລາດິມິດກໍກາຍມາເປັນເມືອງຮັ່ງມີດີກັນກັບເມືອງກິເຢັບ. ທຸກໆອານາຈັກໃນສະຕະວັດທີ XII ນັ້ນ ໄດ້ພາກັນເລີ່ມຕົ້ນດຳລົງຊີວິດຢູ່ຢ່າງເປັນເອກະເທດ. ຄັນເມື່ອມີກອງທະຫານ ທີ່ເຂັ້ມແຂງເຊິ່ງພວກຊາວນາເປັນຜູ້ລ້ຽງເກືອ ແລະໃຫ້ຊ່າງຫັດຖະກຳຜະລິດແລະປະກອບອາວຸດໃຫ້ແລ້ວ, ເຈົ້າກົກທຸກຄົນ ກໍສາມາດຄຸມຄອງຊາວນາໃຫ້ຢູ່ໃນລະບຽບໄດ້ ໂດຍບໍ່ຕ້ອງ ຂໍຄວາມ ຊ່ອຍເຫລືອຈາກເຈົ້າກົກໃຫຍ່ແຫ່ງກິເຢັບເລີຍ. ພວກຊາວນາກໍຄືກັນບໍ່ຈຳເປັນຕ້ອງເດີນທາງໄປໄກຈາກເມືອງເຫລົ່ານັ້ນ ເພື່ອໄປຊື້ເຄື່ອງຕ່າງໆທີ່ກິເຢັບ. ເຫລົ້າ, ກ່ຽວ, ເຄື່ອງດິນເຜົາແລະ

ເກືອແມ່ນສາມາດຊື້ໄດ້ຢູ່ໃນເມືອງໃກ້ຄຽງ, ສ່ວນສິ່ງຂອງອື່ນໆພວກເຂົາກໍຜະລິດເອົາເອງ.

ເມື່ອອານາຈັກຕ່າງໆ ໄດ້ເຕີບໃຫຍ່ແລະເຂັ້ມແຂງຂຶ້ນ ມາແນວນັ້ນ ຄວາມສຳຄັນຂອງກົດເຢັບແລະອຳນາດ ຂອງເຈົ້າກົກໃຫຍ່ກົດເຢັບກໍລຶດນ້ອຍລົງໄປ.

ເມື່ອມາຮອດສະຕະວັດທີXIIIນັ້ນ ລັດລັດເຊຍໂບຮານໄດ້ແຕກແຍກກັນອອກເປັນອານາຈັກນ້ອຍໆແລ້ວ ກໍໄດ້ຢຸດທີ່ຈະໄປຂຶ້ນຕໍ່ເຈົ້າກົກໃຫຍ່ແຫ່ງກົດເຢັບຢ່າງສົມເຊີງ. ອານາຈັກ ເຫລົ່ານັ້ນກໍໄດ້ເຮັດສົງຄາມກັນໃນລະຫວ່າງພວກເຂົາເອງຢ່າງບໍ່ຢຸດຢັ້ງ ໂດຍພະຍາຍາມທີ່ຈະຍຶດເອົາດິນແດນຂອງກັນແລະກັນ. ສົງຄາມລ້າງຜານເຊິ່ງກັນແລະກັນ ໄດ້ທຳລາຍປະຊາຊົນ ຜູ້ອອກແຮງງານ ແລະກໍໄດ້ເຮັດໃຫ້ປະເທດຊາດອ່ອນເພຍລົງ.

ໃນປີ ໑໘໓໗ ສັດຕູທີ່ເຂັ້ມແຂງກໍໄດ້ເກີດມີຂຶ້ນ ຢູ່ທາງຊາຍແດນທິດຕາເວັນອອກແຫ່ງດິນແດນລັດເຊຍ. ເມື່ອໄດ້ຍຶດຄອງແລະໄດ້ທຳລາຍເມືອງຕ່າງໆ ທີ່ກຳລັງຮຸ່ງເຮືອງ ຢູ່ອາຊີກາງແລະກາວະກາດແລ້ວ, ພວກຕາດມົງໂກນ ກໍໄດ້ ເລີ່ມຕົ້ນທຳການໂຈມຕີເຂົ້າສູ່ດິນແດນລັດເຊຍ. ພວກຕາດ-ມົງໂກນມີກຳລັງທັບຈຳນວນຫລວງຫລາຍ, ມີການຈັດຕັ້ງ ແລະປະກອບອາວຸດຢ່າງດີ ໂດຍມີຄານ ບາຕື ເປັນຫົວໜ້າ. ພວກຮຸກຮານໄດ້ທຳການບຸກໂຈມຕີອານາຈັກເຣຍຊານ ເປັນຄັ້ງທຳອິດ. ການປ້ອງກັນຕົວເມືອງເຣຍຊານນີ້ ບໍ່ໄດ້ມີແຕ່ກອງທະຫານຂອງເຈົ້າກົກເທົ່ານັ້ນ ແຕ່ຫາກຊາວເມືອງໝົດທຸກຄົນ ກໍໄດ້ ເຂົ້າຮ່ວມ

ຢ່າງບໍ່ໄດ້ເຫັນແກ່ຕົວຄືກັນ. ເຈົ້າກົກເມືອງເຣຍຊານ ໄດ້ພະຍາຍາມຮ້ອງຂໍຄວາມຊ່ວຍເຫລືອ ຈາກເຈົ້າກົກເມືອງວະລາດິມິດ ແຕ່ກໍໄດ້ຮັບຄຳຕອບວ່າ "ເມື່ອເຈົ້າຖືກໂຈມຕີ-ເຈົ້າກໍຈະຕ້ອງປ້ອງກັນ!"

ເມືອງເຣຍຊານ ໄດ້ຕົກໄປໃຫ້ແກ່ພວກຮຸກຮານ ທີ່ໄດ້ທຳການບຸກໂຈມຕີນັ້ນໄປ. ພວກເຂົາໄດ້ເຜົາເມືອງ, ສ່ວນຊາວເມືອງທີ່ຍັງມີຊີວິດຢູ່ກໍໄດ້ຖືກຈັບເປັນຊະເລີຍ.ຄັນໄດ້ຍຶດເມືອງເຣຍຊານແລ້ວ, ພວກຕາດ-ມົງໂກນກໍໄດ້ປິດລ້ອມເມືອງ ວະລາດິມິດ. ໃນເວລານັ້ນເຈົ້າກົກເມືອງວະລາດິມິດກໍຮູ້ສຶກເສຍໃຈທີ່ວ່າບໍ່ສາມາດໃຫ້ການຊ່ອຍເຫລືອແກ່ຊາວເມືອງເຣຍຊານທັນເວລາໄດ້ ແລະມັນກໍຫລ້າສວຍໄປແລ້ວ.ຊາວເມືອງວະລາດິມິດໄດ້ທຳການຕໍ່ສູ້ຢ່າງກ້າຫານ ແຕ່ກໍບໍ່ມີຜູ້ໃດ ທີ່ຈະມາຊ່ອຍພວກເຂົາໄດ້.

ຄັນໄດ້ໄຊຊະນະ ອານາຈັກວະລາດິມິດແລ້ວ,ກອງທະຫານຂອງຕາດ-ມົງໂກນກໍໄດ້ເດີນທັບຕໍ່ໄປທາງທິດຕາເວັນຕົກສຽງເຫນືອ ໂດຍມຸ່ງຫນ້າສູ່ເມືອງໂນວະໂກລົດ ທີ່ອຸດົມສົມບູນ ແຕ່ພວກເຂົາກໍບໍ່ໄດ້ເຂົ້າໄປເມືອງນັ້ນ. ສົງຄາມທີ່ບໍ່ມີການຢຸດຢັ້ງກັບກອງທະຫານລັດເຊຍເກືອບທັງຫມົດນັ້ນ ໄດ້ເຮັດໃຫ້ຜູ້ມີໄຊຊະນະອ່ອນເພຍລົງຢ່າງຮ້າຍແຮງ ແລະກອງທະຫານ ຂອງພວກເຂົາກໍລົດນ້ອຍລົງໄປ. ປ່າໄມ້, ຫນອງນ້ຳ ແລະທະເລສາບທີ່ເມືອງໂນວະໂກລົດໃນລະດູໃບໄມ້ປົ່ງນັ້ນ ໄດ້ເຮັດ ໃຫ້ກອງທະຫານມ້າມົງໂກນຜ່ານໄປບໍ່ໄດ້. ພວກຮຸກຮານ ໄດ້ຫັນ

ປ່ຽນໄປສູ່ທິດໃຕ້ ເພື່ອວ່າຈະໄດ້ປັບປຸງກອງທະຫານຂອງພວກ ເຂົາໃຫ້ສົມບູນ ແລະເຂັ້ມແຂງຂຶ້ນຢູ່ໃນເຂດທີ່ງຫຍ້ານັ້ນ. ແຕ່ ວ່າເສັ້ນທາງໄປສູ່ທິດໃຕ້ນັ້ນ ເບິ່ງຄືວ່າບໍ່ເປັນການງ່າຍສຳລັບ ພວກເຂົາເລີຍ.

ພວກຕາດ-ມົງໂກນໄດ້ປິດລ້ອມເມືອງນ້ອຍໆແຫ່ງໜຶ່ງຊື່ວ່າ ໂກຊຽນຊະກະຢູ່ເປັນເວລາ ໕໐ ກວ່າມື້ ແລະຍິ່ງໄປກວ່ານັ້ນ ໃນເວລາເມື່ອພວກເຂົາ ໄດ້ຍາດຕາທັບເຂົ້າສູ່ຕົວເມືອງ,ປະ ຊາຊົນເມືອງນີ້ກໍໄດ້ດຳເນີນການຕ້ານທານຢ່າງພິລະອາດຫານ ຈະເປັນດ້ວຍເຫດຜົນອັນໃດກໍບໍ່ຮູ້ ພວກຮຸກຮານ ຈຶ່ງເອີ້ນ ຊື່ ເມືອງ ໂກຊຽນຊະກະວ່າ "ເມືອງໂມໂຫ"

ໃນປີ ໑໘໔໐ ເມືອງກີເຢັບກໍໄດ້ຖືກຍຶດຄອງ ແລະຖືກເຜົາ. ດິນແດນລັດເຊຍທັງໝົດ ເກືອບຖືກທຳລາຍໄປ.ເມື່ອໄດ້ຜ່ານ ເມືອງເຫລົ່ານີ້ໄປແລ້ວ,ພວກຕາດມົງໂກນກໍໄດ້ປະຖິ້ມ ເມືອງ ທີ່ຖືກເຜົາແລະເດີນທີ່ຢຽບຢ່ຳມາແລ້ວນັ້ນ ໄວ້ເບື້ອງຫລັງ.ແຕ່ ວ່າພວກເຂົາກໍໄດ້ປະຊາກສົບທະຫານຂອງເຂົາໄວ້ຢູ່ທີ່ນັ້ນຫຼາຍ ພັນສົບ. ອັນນັ້ນແມ່ນສະແດງໃຫ້ເຫັນວ່າພວກຕາດ- ມົງໂກນ ບໍ່ອາດສາມາດທີ່ຈະດຳເນີນການຕໍ່ສູ້ເອົາໄຊຊະນະ ຢູ່ໃນປະ ເທດຕາເວັນຕົກເອີລົບໄດ້. ການຕໍ່ຕ້ານອັນພິລະ ອາດຫານ ຂອງປະຊາຊົນລັດເຊຍນັ້ນ ແມ່ນໄດ້ເຮັດໃຫ້ກອງກຳລັງ ຂອງ ພວກເຂົາອ່ອນເພຍລົງ ແລະໄດ້ຊ່ອຍໃຫ້ປະຊາຊາດ ຕ່າງໆ ໃນເອີລົບຕາເວັນຕົກພົ້ນຈາກການຢຽບຢ່ຳທຳລາຍ ຂອງພວກ ຮຸກຮານໄປ. ເຖິງຢ່າງນັ້ນກໍຕາມ ລັດເຊຍເອງ ກໍໄດ້ຮັບ

ການປະລາໄຊໄປ. ການປະລາໄຊເກີດຂຶ້ນມາໄດ້ນັ້ນ ກໍຍ້ອນວ່າພວກຕາດ-ມົງໂກນບໍ່ໄດ້ຜະເຊີນໜ້າກັບກອງກຳລັງທີ່ຕ້ານໂຮມກັນຂອງລັດລັດເຊຍ ແຕ່ຫາກໄດ້ຕໍ່ສູ້ກັບກອງກຳລັງທີ່ແຍກຍ້າຍປະຕິບັດການກັນຢູ່ໃນໜ່ວຍ ຂອງແຕ່ລະເມືອງຕ່າງຫາກ.

ວັນເວລາອັນໜັກໜ່ວງແລະມືດມົນ ໄດ້ກັບມາສູ່ ລັດເຊຍອີກ. ຄັນໄດ້ຕັ້ງຖານທີ່ໝັ້ນລົງຢູ່ໃນເຂດທົ່ງຫຍ້າ ຕາມຝັ່ງແມ່ນ້ຳໂວນກາແລະໂດນແລ້ວ, ພວກຕາດ-ມົງໂກນກໍໄດ້ສ້າງລັດຂອງຕົນຂຶ້ນຢູ່ບ່ອນນັ້ນ ເອີ້ນວ່າ ອານາຈັກຄຳ.ພວກຄານແຫ່ງອານາຈັກຄຳນີ້ ໄດ້ສົ່ງກອງທະຫານປະກອບອາວຸດ ໃຫ້ຍໄປເກັບສ່ວຍກັບປະຊາຊົນລັດເຊຍເປັນປະຈຳ.ເພື່ອທີ່ຈະບໍ່ໃຫ້ຜູ້ໃດຫລີກເວັ້ນຈາກການເສຍສ່ວຍນັ້ນໄດ້,ພວກຕາດ-ມົງໂກນກໍໄດ້ທຳການສຳຫລວດ ພົນລະເມືອງທັງໝົດ ຂອງເມືອງລັດເຊຍ. ກ່ຽວກັບເລື່ອງຄວາມໂຫດຮ້າຍ ຂອງການເກັບສ່ວຍນີ້ໄດ້ມີການເວົ້າໄວ້ໃນເພງພື້ນເມືອງວ່າ :

ຜູ້ໃດບໍ່ມີເງິນ ຕ້ອງໃຫ້ລູກ
ຜູ້ໃດບໍ່ມີລູກ ຕ້ອງໃຫ້ເມຍ
ຜູ້ໃດບໍ່ມີເມຍ ຕ້ອງໃຫ້ຕົວເອົາເອງ

ແອກຂອງຕາດ-ມົງໂກນທີ່ໄດ້ດຳເນີນມາ ສອງຮ້ອຍກ່ວາປີນັ້ນ ໄດ້ທຳລາຍການຂະຫຍາຍຕົວທາງເສດຖະກິດການເມືອງແລະວັດທະນະທຳຂອງລັດລັດເຊຍ ເຊິ່ງເມື່ອກ່ອນ ການຮຸກຮານນັ້ນ ລັດນີ້ໄດ້ເປັນລັດທີ່ກ້າວໜ້າລັດໜຶ່ງໃນທະວີບເອີລົບ.

ຄວາມລຳບາກທີ່ເກີດຂຶ້ນ ຢູ່ໃນດິນແດນລັດເຊຍ ໃນສະຕະ

ວັດທີ XIII ນັ້ນ ບໍ່ແມ່ນ ມີແຕ່ອັນດຽວ. ໂດຍສວຍໃຊ້ ເອົາການປຽບຍ່ຳ ທຳລາຍ ລັດເຊຍຂອງພວກ ຕາດ - ມົງໂກຸນນັ້ນ ພວກຂຸນເສິກ* ເຢຍລະມັນ ແລະ ສະວີເດນກໍໄດ້ເລີ້ມຕົ້ນ ບຸກໂຈມຕີດິນແດນລັດເຊຍ ຈາກ ທາງດ້ານທິດຕາເວັນຕົກ.

ໃນປີ ໑໒໔໐ ພວກຂຸນເສິກສະວີເດນ ໄດ້ມາຕັ້ງທັບຢູ່ທີ່ຝັ່ງແມ່ນ້ຳເນວາ ໂດຍມີຄວາມຕັ້ງໃຈທີ່ຈະມຸ່ງໜ້າໄປສູ່ໂນວະໂກລົດ ແລະຍຶດເອົາເມືອງນັ້ນ, ແຕ່ວ່າຊາວເມືອງໂນວະໂກລົດທີ່ມີເຈົ້າກົກໜຸ່ມອາເລັກຊານເດີ ຢາໂລສະລາໂວວິດ ເປັນຫົວໜ້ານັ້ນ ກໍໄດ້ທັບມ້າງພວກຮຸກຮານໄປ. ພາຍຫລັງການສູ້ຮົບນີ້ແລ້ວ ເພື່ອເປັນກຽດແກ່ໄຊຊະນະອັນນີ້ ເຈົ້າກົກອາເລັກຊານເດີ ກໍໄດ້ຮັບນາມຍົດເປັນເຈົ້າກົກ ເນວາສະກີຕະຫລອດໄປ.

ເກືອບຈະເປັນເວລາດຽວກັນນັ້ນ ທີ່ຂຸນເສິກເຢຍລະມັນໄດ້ເລີ່ມຕົ້ນບຸກໂຈມຕີລັດເຊຍ. ເມື່ອເມືອງປະຊະກົບ ໄດ້ຕົກໄປໃຫ້ແກ່ສັດຕູແລ້ວ, ເມືອງໂນວະໂກລົດກໍໄດ້ຕົກຢູ່ໃຕ້ການນາບຂູ່ຂອງພວກຮຸກຮານ. ພວກຊາວເມືອງຕ່າງໆ ທັງໝົດ ທີ່ມາຫ້ອມໂຮມກັນຢູ່ໃນເມືອງນັ້ນ ພ້ອມທັງຊາວອິບພະຍົບທີ່ມາຈາກ

---

* ພວກຂຸນເສິກ ໃນຍຸກສັກດີນາ ໄດ້ແກ່ພວກເຈົ້າທີ່ດິນ ແລະທະຫານ. ພວກເຂົາໄດ້ຮຸກຮານ ຕ່າງປະເທດຢູ່ເລື້ອຍໆ ເພື່ອຍຶດຄອງດິນແດນ.

ເມືອງປະຊະກິບທີ່ຖືກທຳລາຍນັ້ນ ກໍໄດ້ພ້ອມກັນລຸກຂຶ້ນປ້ອງກັນ ປິຕຸພູມໄວ້. ກອງທະຫານລັດເຊຍ ແມ່ນມີເຈົ້າກົກ ອາເລັກ ຊານເດີ ເນວະສະກີ ເປັນຫົວໜ້າ. ໃນຕົ້ນເດືອນເມສາ ປີ ໑໒໔໒ ກອງທະຫານລັດເຊຍໄດ້ຜະເຊີນໜ້າກັບພວກຂຸນເສິກ ເຢຍລະມັນຢູ່ເທິງນ້ຳກ້ອນຂອງທະເລສາບຊຸດຊະໂກເຢ.ເມື່ອ ໄດ້ສວນເກາະແລະຂຶ້ນຂີ່ມ້າແລ້ວ ພວກຂຸນເສິກກໍກຽມຕົນຢູ່ໃນ ທ່າເປັນຫລີ່ມຕອກ ແລ້ວທະຫານລາບກໍປິດລ້ອມໄວ້.ພວກສັດຕູ ໄດ້ຄິດວ່າຈະແຊກເຂົ້າໄປໃນຖັນແຖວ ຂອງກອງທະຫານ ລັດ ເຊຍ ເພື່ອແບ່ງແຍກພວກເຂົາໃຫ້ເປັນພາກສ່ວນຕ່າງໆ ແລ້ວ ກໍທຳລາຍມັນໄປ. ພວກເຂົາໄດ້ໃຊ້ວິທີການນີ້ ໃນການຕໍ່ສູ້ກັບ ຊາວແອສະໂຕເນຍແລະລັດວຍ* ມາແລ້ວຫລາຍເທື່ອຢ່າງ ມີຜົນສຳເລັດ. ແຕ່ວ່າເຈົ້າກົກອາເລັກຊານເດີ ເນວະສະກີ ກໍແກ້ໄຂແຜນການຂອງຂຸນເສິກເຢຍລະມັນນັ້ນທັນ ແລະ ສ້າງ ກອງທະຫານລັດເຊຍພິເສດຂຶ້ນ ສຳລັບເວລານັ້ນ. ຢູ່ໃນ ໃຈ ກາງນັ້ນ ເພິ່ນໄດ້ຈັດເອົາທະຫານລາດກອງຫລອນ ປະຊາຊົນ ຂອງໂນວະໂກລົດໄວ້, ສ່ວນດ້ານຂ້າງນັ້ນ ເພິ່ນໄດ້ ຈັດເອົາ ກອງທະຫານທີ່ເຂັ້ມແຂງທີ່ສຸດ ແລະປະກອບອາວຸດຢ່າງດີ ຕັ້ງ ໄວ້. ກອງທະຫານອາລັກຂານັ້ນ ໄດ້ລີ້ຊ່ອນຢູ່ໃນບ່ອນທີ່ກຳບັງ.

---

* ພວກບັນພະບຸລຸດຂອງຊາວເອສະໂຕເນຍແລະລັດວຍປະຈຸ ບັນໄດ້ຕັ້ງຖິ່ນຖານຢູ່ຕາມຝັ່ງທະເລບັນຕິກແລະກໍໄດ້ຖືກພວກຂຸນ ເສິກເຢຍລະມັນຍຶດເອົາດິນແດນໄປ ໃນຕົ້ນສະຕະວັດທີ XIII

ພຽງແຕ່ພວກຂຸນເສິກ ໄດ້ແຊກເຂົ້າມາໃນເຂດທີ່ ກອງກຳລັງທະຫານລັດເຊຍຕັ້ງຢູ່ເທົ່ານັ້ນ ພວກທະຫານລາບກອງຫຼອນກໍໄດ້ເລີ່ມຖອຍໄປ ແລະກໍໄດ້ຕໍ່ສູ້ຢ່າງຮຸນແຮງ. ໃນເວລາດຽວກັນນັ້ນ ກອງທະຫານສ່ວນໃຫ່ຍ ກໍໄດ້ບຸກຕີມາຈາກ ດ້ານຂ້າງ ແລະດ້ານຫລັງ ກໍໄດ້ມີກອງທະຫານອາລັກຂາ ຈາກບ່ອນທີ່ກຳບັງບຸກຕີເຂົ້າໃສ່ພວກຂຸນເສິກ. ການຕໍ່ສູ້ໄດ້ດຳເນີນໄປຢ່າງຮຸນແຮງທີ່ສຸດ. ພວກຂຸນເສິກໄດ້ຫວັ່ນໄຫວ ແລະ ຕົກຢູ່ໃນຄວາມສະທ້ານຢ້ານກົວ. ພາຍໃຕ້ນ້ຳໜັກຂອງເຫລັກ ທີ່ມີຢູ່ ໃນຕົວຂອງກອງທະຫານມ້ານັ້ນ, ນ້ຳກ້ອນເດືອນເມສາອັນເບົາບາງນັ້ນ ກໍໄດ້ເລີ່ມພັງທະລາຍລົງ, ດັ່ງນັ້ນທະຫານມ້າຈຳນວນຫຼວງຫຼາຍຈຶ່ງໄດ້ຈົມລົງໄປໃນທະເລສາບ ຊຸດຊະໂກເຢ ນັ້ນ.

ການສູ້ຮົບທີ່ໄດ້ດຳເນີນໄປໃນປະຫວັດສາດ ພາຍໃຕ້ ຊື່ວ່າການສັງຫານກັນຢູ່ເທິງນ້ຳກ້ອນ ໄດ້ສ້ຽງສຸດລົງໄປແລ້ວ ໂດຍລັດເຊຍໄດ້ມີໄຊຢ່າງສົມບູນ. ການບຸກໂຈມຕີຂອງຂຸນເສິກເຢຍລະມັນທີ່ມາຈາກທິດຕາເວັນຕົກນັ້ນ ກໍໄດ້ຢຸດຕິລົງ. ປະຊາຊົນລັດເຊຍໄດ້ພົ້ນອອກຈາກຄວາມເປັນທາດຂອງເຢຍລະມັນໄປ. ຍ້ອນວ່າປະຊາຊາດຕ່າງໆ ແຫ່ງຣິມທະເລບັນຕິກ ໄດ້ດຳເນີນການຕໍ່ສູ້ຕ້ານພວກຮຸກຮານຢ່າງຮຸນແຮງ.

ການສ້າງຕັ້ງແລະການຂະຫຍາຍລັດລັດເຊຍ

ໂດຍໄດ້ພະຍາຍາມທີ່ຈະຫນີອອກຈາກພວກ ຕາດ-ມົງໂກນ

ນັ້ນ ຊາວນາລັດເຊຍແລະຊ່າງຫັດຖະກຳ ຈຳນວນ ຫຼວງຫຼາຍ ກໍໄດ້ປະລະບ້ານເຮືອນແລະເມືອງທີ່ເພພັງໄປ ແລະເຂົ້າໄປສູ່ເຂດປ່າໄມ້ ທາງດ້ານທິດຕາເວັນອອກ ສຽງເໜືອ ຂອງລັດເຊຍ. ຜູ້ຄົນທັງຫລາຍໄດ້ຂຸດຄົ້ນດິນໃໝ່ ຕາມຝັ່ງແມ່ນ້ຳ ໂອກາແລະແມ່ນ້ຳໂວນຸກາຕອນເທິງ. ຢູ່ໃນໃຈກາງດິນໃໝ່ນີ້ກໍໄດ້ມີເມືອງມົດສະກູ ທີ່ເຕີບໃຫຍ່ແລະຂະຫຍາຍໂຕຂຶ້ນມາ ເຊິ່ງເມື່ອສະຕະວັດທີ XIII ນັ້ນ ໄດ້ເປັນພຽງນະຄອນຫລວງຂອງອານາຈັກນ້ອຍໆແຫ່ງໜຶ່ງ. ອານາຈັກມົດສະກູເປັນເມືອງ ທີ່ຫ້ອມລ້ອມໄປດ້ວຍດິນແດນຂອງອານາຈັກເລຍຊານ, ຊະໂມລຽນ ແລະເມືອງໂນວະໂກລົດນັ້ນ ແມ່ນບໍ່ຄ່ອຍຖືກໂຈມຕີຈາກພວກຮຸກຮານ. ຢູ່ໃນຕົວເມືອງມົດສະກູ ກໍໄດ້ມີພວກຊ່າງຫັດຖະກຳແລະພໍ່ຄ້າມາຕັ້ງບ້ານເຮືອນຢູ່ຫລາຍຂຶ້ນແລະອ້ອມຕົວເມືອງນັ້ນກໍໄດ້ມີບ້ານແລະຊຸມນະບົດເກີດຂຶ້ນ. ໃນບໍ່ດົນຕໍ່ມາບັນດາເຈົ້າກົກມົດສະກູ ກໍກາຍເປັນຄົນຮັ່ງມີຂຶ້ນຫລາຍທີ່ສຸດໃນລັດເຊຽ. ສົງຄາມລ້າງຜານກັນຢູ່ໃນລັດເຊຽໃນລະຫວ່າງພວກເຂົາເຫຼົ່ານີ້ ກໍຍັງດຳເນີນຢູ່ຕໍ່ໄປ. ພວກຄານຕາດ-ມົງໂກນ, ຜູ້ມີ ຄວາມສົນໃຈໃນການແບ່ງແຍກດິນແດນລັດເຊຍຢູ່ແລ້ວ ກໍໄດ້ ຊ່ອຍເຫລືອເຈົ້າເມືອງໜຶ່ງກ່ອນແລ້ວກໍເຈົ້າເມືອງອື່ນຕໍ່ໄປ. ພວກເຂົາໄດ້ຍຶດຫລັກທີ່ວ່າ: "ຈົ່ງແບ່ງແຍກແລະຈົ່ງຄອບງຳ".

ໃນຕົ້ນສະຕະວັດທີ XIV ອີວານ ກາລິຕາ[1] ກໍໄດ້ເປັນ

---

1) ຄຳວ່າ ກາລິຕາ ໝາຍເຖິງ "ຖົງທີ່ເຕັມໄປດ້ວຍເງິນ".

ເຈົ້າອານາຈັກໃຫ່ຍມົດສະກູ. ເຂົາຫຽວໄປ ອານາຈັກ ຄຳ ເລື້ອຍໆພ້ອມດ້ວຍຂອງຂວັນ ອັນມີຄຸນຄ່າໄປມອບໃຫ້ຄານເພື່ອ ວ່າ ຄານຈະໄດ້ແຕ່ງຕັ້ງເຂົາໃຫ້ເປັນ ເຈົ້າກົກ ຜູ້ໃຫ່ຍໃນໝູ່ ເຈົ້າກົກທົ່ວລັດເຊຍ ໃນບໍ່ຊ້າກາລີຕາ ກໍໄດ້ຮັບສິດເປັນຜູ້ເກັບ ສ່ວຍທົ່ວດິນແດນລັດເຊຍແລະສົ່ງສ່ວຍນັ້ນ ໄປໃຫ້ອານາຈັກຄຳ. ເຂົາໄດ້ເກັບສ່ວຍເພີ່ມຂຶ້ນຫລາຍກວ່າ ຜູ້ມີໄຊຊະນະຮຽກຮ້ອງ ຕ້ອງການ, ແລະເອົາສ່ວນທີ່ເກີນນັ້ນ ເຂົ້າໃສ່ ກະເປົາ ໂຕ ເອງ. ຈາກນັ້ນອານາຈັກໃຫ່ຍມົດສະກູ ກໍໄດ້ຊື້ເອົາ ດິນແດນ ຂອງອານາຈັກອ້ອມແອ້ມນັ້ນຫມົດ ແລະບາງພາກສ່ວນກໍໄດ້ໃຊ້ ກຳລັງໄປຍຶດເອົາ.

ດິນແດນລັດເຊຍທີ່ເຕົ້າໂຮມກັນເຂົ້າອ້ອມຂ້າງເມືອງມົດສະ ກູ ເຊິ່ງໄດ້ສ້າງຕັ້ງເປັນລັດເອກະພາບກັນນັ້ນ ກໍໄດ້ ຊ່ອຍໃຫ້ ສົງຄາມລ້າງຜານ ລະຫວ່າງທົ່ວເມືອງຕ່າງໆນັ້ນຍຸຕິລົງ,ເຕົ້າ ໂຮມເອົາກອງກຳລັງຂອງປະຊາຊົນລັດເຊຍ ເຂົ້າມາ ຕໍ່ສູ້ກັບ ແອກຄອບຄອງຂອງຕາດ-ມົງໂກນ.ດ້ວຍເຫດນັ້ນພວກຊາວນາ ຊ່າງຫັດຖະກຳແລະພໍ່ຄ້າ ຈຶ່ງໄດ້ໃຫ້ການສະຫນັບສະຫນູນ ແກ່ ເຈົ້າກົກມົດສະກູ.

ພາຍໃຕ້ການປົກຄອງຂອງດະມິຕະລີຜູ້ເປັນຫລານ ເຈົ້າກົກ ໃຫ່ຍກາລີຕານັ້ນກຳແພງຫີນຈຶ່ງໄດ້ຖືກສ້າງຂຶ້ນອ້ອມຮອບວັງກະ ແລມແລງເມືອງມົດສະກູ ແລະມັນຈຶ່ງກາຍເປັນປ້ອມຄ້າຍທີ່ໃຜ ໃຜບໍ່ສາມາດທຳລາຍໄດ້.ໃນຕອນປາຍສະຕະທີ XIV ບັນດາ

ເຈົ້າກົກເມືອງມົດສະກູ ກໍໄດ້ປະຕິເສດທີ່ຈະເສຍສ່ວຍໃຫ້ ອານາຈັກຄຳ. ຄານມາມາຍຜູ້ໃຈຮ້າຍໄດ້ຕັດສິນໃຈທີ່ຈະດຳເນີນການສູ້ຮົບກັບເມືອງມົດສະກູ ແລະລົງໂທດດະມິຕະລີ ເຈົ້າກົກທິດດ້ານ. ແຕ່ວ່າຊາວລັດເຊຍ ໄດ້ກ້າວເດີນໄປໄວກ່ວາ ມາມາຍ. ກອງທະຫານຂອງດະມິຕະລີໄດ້ເຄື່ອນອອກມາລັດທາງຜູ້ຮຸກຮານ. ພາຍໃຕ້ການນຳພາຂອງເຈົ້າກົກຕ່າງໆ ພວກນັກຮົບຈາກດິນແດນທີ່ຍັງບໍ່ທັນເຂົ້າຮ່ວມຢູ່ໃນອານາຈັກໃຫຍ່ມົດສະກູນັ້ນ ກໍໄດ້ມາເຕົ້າໂຮມກັນ.ຍັງບໍ່ເຄີຍມີກອງທະຫານຈຳນວນຫລວງຫລາຍແບບນີ້ມາກ່ອນ ມາເຕົ້າໂຮມກັນຢູ່ໃນດິນແດນລັດເຊຍເລີຍຄືມີຮອດ ໑໕໐ ພັນຄົນ.ກອງທະຫານໄດ້ເຄື່ອນອອກໄປຕາມສາມເສັ້ນທາງສູ່ທິດໃຕ້.ໃນຕົ້ນເດືອນກັນຍາປີ ໑໓໘໐ ກອງທະຫານຂອງດະມິຕະລີ ກໍໄດ້ເຂົ້າໄປສູ່ສະຖານທີ່ ເຊິ່ງເປັນບ່ອນທີ່ແມ່ນ້ຳນ້ອຍເນປະລຽດວາ ໃຫລມາຕົກໃສ່ ແມ່ນ້ຳໂດນ. ພວກຕາດ-ມົງໂກນ ໄດ້ມາຕັ້ງທັບຢູ່ໃກ້ງນັ້ນກ່ອນແລ້ວ. ໃນຕອນກາງຄືນ, ເພື່ອຈະທຳການສູ້ຮົບ ຢ່າງບໍ່ໃຫ້ສັດຕູຮູ້ສຶກຕົວນັ້ນ ກອງທະຫານລັດເຊຍ ກໍໄດ້ຂ້າມແມ່ນ້ຳໂດນໄປສູ່ຮ່ອງນ້ຳນ້ອຍໆ ແລະຄືນທົ່ງ ເຊິ່ງເອີ້ນວ່າທົ່ງ ກູລີກົບ.ເຈົ້າກົກດະມິຕະລີ ໄດ້ສ້າງທີ່ກຳບັງຂັ້ນຢູ່ທີ່ທົ່ງສຸດດ້ານໜຶ່ງ, ສ່ວນໜ່ວຍທະຫານສູ້ຮົບນັ້ນ ໄດ້ລີ້ຊ່ອນຢູ່ໃນປ່າແລະພຸ່ມໄມ້.

ໃນມື້ຮຸ່ງເຊົ້າໜ່ວຍສອດແນມຂອງສັດຕູ ກໍໄດ້ເຫັນກອງທະຫານລັດເຊຍ.

ທະຫານມ້າຂອງມາມາຍ ໄດ້ເລີ່ມຕົ້ນໂຈມຕີຂະໜາບ ທະ

ທານລັດເຊຍເຂົ້າໄປສູ່ແມ່ນ້ຳ. ນັກບັນທຶກເຫດການໄດ້ບັນທຶກການສູ້ຮົບຄັ້ງນັ້ນໄວ້ວ່າ: ກອງທະຫານທັງສອງຝ່າຍ ໄດ້ໃຊ້ດາບຟັນກັນແລະໄດ້ຕໍ່ສູ້ກັນຢ່າງແຂງແຮງ ບໍ່ພຽງແຕ່ໃຊ້ອາວຸດເທົ່ານັ້ນ ແຕ່ຫາກຍັງປ້ຳກັນຢູ່ກາງເດີ່ນອີກດ້ວຍ.ພວກເຂົາໄດ້ລົ້ມຕາຍລົງຢູ່ພາຍໃຕ້ກອງເລັບມ້າ ທັນໃຈບໍ່ອອກເພາະວ່າສະຖານທີ່ ມີ ກອງທະຫານມາກມາຍ ກ່າຍກອງ ຢູ່ໃນ ທົ່ງກູລິກົບ: ແລະສະຖານທີ່ລະຫວ່າງນ້ຳໂດນ ກັບນ້ຳເນປະລຽດວາກໍ່ຄັບແຄບທີ່ສຸດ.

ແຕ່ວ່າໃນໄລຍະເວລາອັນຕັດສິນຊີ້ຂາດ ຂອງການຕໍ່ສູ້ ນັ້ນກອງທະຫານທີ່ລີ້ຢູ່ພຸ່ມໄມ້ນັ້ນ ກໍໄດ້ປາກົດຕົວຂຶ້ນ.ກອງທະຫານມ້າລັດເຊຍກໍໄດ້ເຂົ້າໂຈມຕີທາງດ້ານຫລັງຂອງພວກຕາດ-ມົງໂກນ. ກອງທະຫານມາມາຍເກີດເສຍຂວັນ ແລະ ກໍແລ່ນປົບໜີໄປ. ທະຫານລັດເຊຍໄດ້ໄລ່ຕິດຕາມພວກທະຫານ ທີ່ແລ່ນໜີໄປນັ້ນ ເກືອບຮອດ ນ້ຳ ກີໂລແມດ. ຢູ່ໃນບັ້ນຮົບຮົ່ມ ແມ່ນ້ຳໂດນນີ້ ເຈົ້າກົກດະມີຕະລີບໍ່ພຽງແຕ່ໄດ້ຊີ້ນຳທະຫານ ຂອງເຂົາຢ່າງດີເທົ່ານັ້ນ ແຕ່ຫາກຍັງໄດ້ຕໍ່ສູ້ກັບສັດຕູ ຢ່າງກ້າຫານອີກດ້ວຍ. ເພື່ອລະນຶກເຖິງ ຜົນງານອັນນີ້ ເຂົາຈຶ່ງ ໄດ້ຮັບນາມະຍົດເປັນດະມີຕະລີ ໂດນ.

ໄຊຊະນະອັນຍິ່ງໃຫຍ່ໃນທົ່ງກູລິກົບນີ້ ແມ່ນໄດ້ສະແດງ ໃຫ້ແກ່ປະຊາຊົນລັດເຊຍທັງໝົດເຫັນວ່າ ຄັນໄດ້ເຕົ້າໂຮມ ເຂົ້າກັນແລ້ວ ມັນກໍອາດທີ່ຈະກຳຈັດແອກຄອບຄອງ ຂອງພວກຕາດ-ມົງໂກນທີ່ເປັນຕາຊັງນີ້ໄດ້. ເປັນຄວາມຈິງແທ້,ໃນພາຍໃນ

ສອງປີ ຜູ້ສືບຕຳແໜ່ງມາມາຍ ໄດ້ຍຶດຄອງ ແລະ ທຳລາຍເມືອງມົດສະກູໄປຢ່າງກະທັນຫັນ ແລະກໍໄດ້ບັງຄັບໃຫ້ຊາວລັດເຊຍເສຍສ່ວຍ, ແຕ່ວ່າຂັ້ນຮົບກູລິກົບ ກໍໄດ້ທຳລາຍ ອຳນາດຂອງອານາຈັກຄຳໄປ ແລະໄດ້ນຳເອົາການໂຈມຕີ ອັນໜັກໜ່ວງມາໃຫ້ແກ່ອານາຈັກນີ້ ແລະເລັ່ງໃຫ້ ອານາຈັກດັ່ງກ່າວເກີດແຕກຄວາມສາມັກຄີກັນຂຶ້ນຢ່າງໄວວາ.



ນະຄອນມົດສະກູໃນສະຕະວັດທີ ໑໔. ດ້ານໜ້າຂອງໂຮງເຮັດປືນເຊິ່ງເປັນບ່ອນທີ່ນາຍຊ່າງປືນໄດ້ຜະລິດປືນອອກ.

ໃນສະຕະວັດທີ XV ການເຕົ້າໂຮມດິນແດນອ້ອມຂ້າງເມືອງມົດສະກູ ຍັງຄົງດຳເນີນຕໍ່ໄປ. ຄວາມພະຍາຍາມທີ່ຈະປົດປ່ອຍອອກຈາກຄວາມເປັນທາດຂອງພວກຕາດ-ມົງໂກນ ແລະການເຕີບໃຫຍ່ຂະຫຍາຍຕົວຂອງສາຍພົວພັນທາງການຄ້າລະຫວ່າງ

ຂອດຕ່າງໆນັ້ນ ໄດ້ສ້າງເງື່ອນໄຂໃຫ້ແກ່ການເຕົ້າໂຮມ ດິນແດນລັດຊຸຍເຂົ້າມາເປັນລັດດຽວກັນ. ວຽກງານເສດຖະກິດຢູ່ໃນເມືອງຕ່າງໆທີ່ຖືກພວກຕາດ-ມົງໂກນທຳລາຍນັ້ນ ກໍໄດ້ຮັບການຟື້ນຕົວຂື້ນມາອີກຄັ້ງໜຶ່ງ. ພວກພໍ່ຄ້າຈາກເມືອງ ໂນວະໂກລົດ ແລະ ຕະເວລະ ກໍໄດ້ນຳເອົາຜະລິດຕະພັນຫັດຖະກຳຕ່າງໆເຂົ້າມາສູ່ພູກຈອກພູກແຈ ຂອງອານາຈັກມົດສະກູອັນຍິ່ງໃຫ່ຍ. ຈາກດິນແດນເລຍຊານ ກໍໄດ້ມີການສົ່ງເຂົ້າຈີ່ເຂົ້າມາຂາຍໃນເມືອງໂນວະໂກລົດ.ດັ່ງນັ້ນມົດສະກູ ກໍໄດ້ເປັນເມືອງໃຫ່ຍແລະຮັ່ງມີທີ່ສຸດ ແລະໄດ້ຟື້ນຂຶ້ນມາຈາກ ການທຳລາຍຂອງພວກຕາດ-ມົງໂກນ. ຊຸ່ສຽງຂອງນາຍຊ່າງທີ່ມີຄວາມຊຳນິຊຳນານ ເມືອງນີ້ກໍໄດ້ດັງດັງໄປທົ່ວປະເທດ. ພວກເຂົາໄດ້ຫລໍ່ປືນແລະລະຄັງ, ໄດ້ຕຳ່ແຜ່ນອັນສວຍສົດງົດງາມ ແລະໄດ້ຟອກໜັງຢ່າງມີຄວາມຊຳນິຊຳນານ.ຢູ່ໃນຍ່ານການຄ້າເມືອງມົດສະກູໄດ້ໜາແໜ້ນໄປດ້ວຍຜູ້ຄົນ. ພວກພໍ່ຄ້າພ້ອມດ້ວຍສິນຄ້າຈາກພູກທີ່ນພູກແຫ່ງ ໄດ້ມາເຕົ້າໂຮມກັນຢູ່ທີ່ນີ້ ແລະ ເສັ້ນທາງການຄ້າທີ່ສຳຄັນກໍໄດ້ມາຜ່ານເມືອງມົດສະກູນີ້ຄືກັນ. ບັນດາເຈົ້າກົກໃຫ່ຍມົດສະກູກໍໄດ້ຄວບຄຸມເອົາ ເຈົ້າກົກ ຄົນອື່ນໆມາໄວ້ໃນຄວາມຄຸ້ມຄອງຂອງຕົນ ແລະຫວັງທີ່ຈະໄດ້ຮັບຄວາມຊ່ອຍເຫລືອຈາກປະຊາຊົນທົ່ວດິນແດນລັດຊຸຍ.ພວກຊາວນາ, ຊ່າງຫັດຖະກຳແລະພໍ່ຄ້າ ກໍໄດ້ເກີດມີຄວາມສົນໃຈໃນການຂະຫຍາຍສາຍພົວພັນການຄ້າກັນຂຶ້ນ.

ດິນແດນລັດຊຸຍເກືອບທັງໝົດ ໄດ້ໄປຂຶ້ນກັບ ອານາຈັກ

ໃຫ້ມົດສະກູໄປເທື່ອລະກ້າວ, ດ້ວຍເຫດນີ້ ລັດລັດເຊຍ ຈຶ່ງໄດ້ເກີດຂຶ້ນ, ສູນກາງຂອງລັດນີ້ ແມ່ນເມືອງມົດສະກູ, ເຈົ້າມົດສະກູໄດ້ເລີ່ມເອີ້ນຕົນເອງວ່າ ເປັນເຈົ້າລັດ ລັດເຊຍ ທັງຫມົດ. ບັນດາປະຊາຊາດພາກເຫນືອ ແລະ ບໍລິເວນແຄມແມ່ນ້ຳໂວນກາເຊັ່ນຊົນຊາດມາລີ, ໂມລະດະວາ, ຢຸກກະລາ, ໂກມິເປໂຊລາ, ກາເລລີ ແລະຊົນຊາດອື່ນໆນັ້ນ ກໍໄດ້ເຂົ້າຮ່ວມກັບຊົນຊາດລັດເຊຍ ໃນການປະກອບເປັນລັດລັດເຊຍຂຶ້ນ. ລັດນີ້ໄດ້ກາຍເປັນລັດທີ່ມີຫລາຍຊົນຊາດ.

ໃນສະຕະວັດທີ XV ພວກພໍ່ຄ້າລັດເຊຍໄດ້ທຳການຄ້າບໍ່ພຽງແຕ່ພາຍໃນປະເທດຂອງຕົນເທົ່ານັ້ນ ແຕ່ຫາກຍັງຮອດປະເທດເພື່ອນບ້ານຂອງຕົນອີກ ເຊັ່ນ ເປີເຊຍ, ຕູລະກີແລະປະເທດອື່ນໆອີກ. ພໍ່ຄ້າຈາກເມືອງຕະເວລະ ຊື່ ອາຟານາຊີ ນິກິຕິນ ຈາກທະວີບເອີລົບຄົນທຳອິດ ກໍໄດ້ເດີນທາງໄປສູ່ປະເທດ ອິນເດຍທີ່ຫ່າງໄກແລະໄດ້ຢູ່ປະເທດນັ້ນ ເປັນເວລາ ຫລາຍປີ . ເຂົາໄດ້ຂຽນບັນທຶກທີ່ຫນ້າສົນໃຈໄວ້ ເຊິ່ງໃນນັ້ນໄດ້ເລົ່າເຖິງຊີວິດການເປັນຢູ່ຂອງປະເທດນີ້ ດ້ວຍຄວາມຍົກຍ້ອງນັບຖືແລະຢ່າງເປັນຈິງໄວ້. ຄັນໄດ້ເວົ້າເຖິງອູດສາຫະກຳ ແລະຄວາມຂະຫຍັນຫມັ່ນພຽນຂອງປະຊາຊົນອິນເດຍຢ່າງສູງສົ່ງແລ້ວ ອາຟານາຊີ ນິກິຕິນ ກໍໄດ້ຕັ້ງຂໍ້ສັງເກດວ່າ ຢູ່ໃນອິນເດຍ ກໍຄືກັນກັບປະເທດລັດເຊຍ ປະຊາຊົນຜູ້ອອກແຮງງານ ໄດ້ຮັບຄວາມທຸກທໍລະມານ ຈາກການກົດຂີ່ຫນີບຕົງ ຂອງເຈົ້າກົກ ເຈົ້າເຫລົ່າຂອງຕົນ.

ຄືກັນກັບແຕ່ກ່ອນ, ລັດລັດເຊຍໄດ້ເສຍສ່ວຍໃຫ້ແກ່ຄານຕາດ-ມົງໂກນຢ່າງຫລວງຫລາຍ. ແຕ່ວ່າໃນມື້ໜຶ່ງເມື່ອຄະນະທູດຂອງຄານເດີນທາງມາຮອດມົດສະກູ ພ້ອມດ້ວຍ ສານຕາຕັ້ງແລ້ວ, ພວກເຂົາກໍໄດ້ເຫັນດ້ວຍຄວາມຕົກໃຈວ່າເຈົ້າກົກໃຫຍ່ອີວານທີ ໓ ໄດ້ຈີກສານຕາຕັ້ງ, ຖິ້ມມັນລົງໄປໃນພື້ນແລ້ວຢຽບໄວ້ ແລະກໍໄດ້ກ່າວວ່າ: "ຈົ່ງບອກແກ່ຄານຂອງທ່ານວ່າ ອັນໃດໄດ້ເກີດຂຶ້ນກັບສານຕາຕັ້ງນີ້. ສິ່ງນີ້ກໍຈະເກີດຂຶ້ນກັບຄານຄືກັນ, ຖ້າຫາກວ່າ ເຂົາບໍ່ປະປ່ອຍໃຫ້ດິນແດນລັດເຊຍນີ້ ມີສັນຕິສຸກ".

ພວກທູດກໍໄດ້ຂຶ້ນຂີ່ມ້າ ຟ້າວກັບບ້ານທັນທີ. ໃນປີ ໑໔໘໐ ຄານ ອາຄະມາດ ກໍໄດ້ນຳເອົາກອງທະຫານ ຈຳນວນຫລວງຫລາຍມຸ່ງໜ້າເຂົ້າສູ່ມົດສະກູ ໂດຍຕັ້ງໃຈທີ່ຈະລົງໂທດ ແລະປາບປາມປະຊາຊົນລັດເຊຍຢ່າງຮຸນແຮງອີກເທື່ອໜຶ່ງ.

ກອງທະຫານລັດເຊຍ ໄດ້ພະເຊີນໜ້າກັບພວກຮຸກຮານ ຢູ່ໃນແມ່ນ້ຳອູກະເລ ແລະບໍ່ໄດ້ຍອມໃຫ້ພວກເຂົາ ຂ້າມຜ່ານແມ່ນ້ຳນີ້ໄດ້. ພວກຕາດ-ມົງໂກນ ໄດ້ຕັ້ງຢູ່ຝັ່ງແມ່ນ້ຳ ອູກະເລນີ້ຫລາຍອາທິດ ໂດຍບໍ່ຕັດສິນໃຈທີ່ຈະເຂົ້າຮ່ວມສູ້ຮົບ, ແລະແລ້ວກໍໄດ້ອອກໄປຈາກດິນແດນລັດເຊຍ. ແອກຄອບຄອງຂອງຄານຕາດ-ມົງໂກນ ຜູ້ຊຶ່ງໄດ້ໂຈມຕີປະຊາຊົນລັດເຊຍ ມາຫລາຍກວ່າ ໒໐໐ ປີ ນັ້ນ ກໍໄດ້ສິ້ນສຸດລົງແນວນັ້ນ.

ການໂຄ່ນລົ້ມແອກຄອບຄອງຂອງຕາດ-ມົງໂກນ ລົງໄດ້ນັ້ນແມ່ນໄດ້ເຮັດໃຫ້ອຳນາດຂອງບັນດາເຈົ້າກົກໃຫຍ່ ມົດສະກູ ມີ

ຄວາມເຂັ້ມແຂງຂຶ້ນ. ໃນລະຫວ່າງສະຕະວັດທີ IV ດິນແດນຂອງລັດລັດເຊຍ ກໍໄດ້ເພີ່ມທະວີຂຶ້ນຫລາຍກວ່າ ໑໔ ເທົ່າ. ດິນແດນທີ່ຢູ່ຕາມຝັ່ງແມ່ນ້ຳໂວນກາຕອນກາງແລະຕອນລຸ່ມກໍໄດ້ເຕົ້າໂຮມເຂົ້າກັບດິນແດນຕອນນີ້ ແລະເຂດຕ່າງໆ ຂອງຊີບີລີຈຳນວນຫລວງຫລາຍກໍຄືກັນ. ປວງປະຊາຊາດ ທີ່ບໍ່ແມ່ນຊາວລັດເຊຍກໍໄດ້ເຂົ້າມາຮ່ວມຢູ່ໃນລັດທີ່ມີຫລາຍຊົນຊາດຫລາຍຂຶ້ນ.

ບັນດາເຈົ້າກົກໃຫຍ່ມົດສະກູ ກໍໄດ້ປົກຄອງລັດ ໂດຍມີ ສະພາຂຸນນາງໃຫ້ຄຳປຶກສາແນະນຳ. ຢູ່ໃນສ່ວນປະກອບຂອງສະພານີ້ ນອກຈາກຂຸນນາງ-ໄດ້ແກ່ພວກເຈົ້າທີ່ດິນໃຫຍ່ທີ່ສືບທອດມໍລະດົກແລ້ວ ກໍໄດ້ມີພາກສ່ວນເຈົ້າກົກ ຜູ້ເຊິ່ງແຕ່ກ່ອນ ເປັນເອກະລາດນັ້ນ ເຂົ້າຮ່ວມຢູ່ນຳດ້ວຍ.ພວກເຂົາບໍ່ອາດສາມາດຈະລືມເວລາເມື່ອຕົນເອງ ໄດ້ຄຸ້ມຄອງທີ່ດິນຕົນເອງແລະພວກເຂົາກໍບໍ່ມັກທີ່ຈະເຊື່ອຟັງບັນດາເຈົ້າກົກໃຫຍ່ແຫ່ງມົດສະກູເລີຍ. ສ່ວນຫລາຍແລ້ວ ໃນເວລາມີກອງປະຊຸມສະພາຂຸນນາງ ພວກເຂົາກໍບໍ່ຕົກລົງກັນກັບເຈົ້າກົກໃຫຍ່ນັ້ນໄດ້. ຫລານຊາຍອີວານທີIII, ເຈົ້າກົກໃຫຍ່ອີວານທີ IV ທີ່ເອີ້ນວ່າກະໂລຊະນີ້ນນ ໄດ້ທຳການແກ້ແຄ້ນບັນດາເຈົ້າກົກແລະຂຸນນາງບາງຄົນ.ເຂົາໄດ້ປະກາດວ່າ ເຂົາເອງຈະເປັນຜູ້ປົກຄອງປະເທດ.

ໃນປີ ໑໕໔໗ ອີວານທີ IV ກໍໄດ້ຮັບການອະພິເສກຂຶ້ນເປັນພະເຈົ້າຊາ ໂດຍໄດ້ທຳພິທີສວມມົງກຸດພະເຈົ້າຊາໃຫ້ຕົນເອງ. ດັ່ງນັ້ນລະບອບອັດຕາທິປະໄຕ (ຖືຕົນເປັນໃຫຍ່)ກໍໄດ້ຮັບການຈັດຕັ້ງຂຶ້ນຢູ່ໃນລັດລັດເຊຍ.

3*

ອີວານທີ IV ສາມາດເປັນພະເຈົ້າຊາແລະປົກຄອງປະເທດໂດຍລຳພັງໄດ້ນັ້ນ ກໍມີແຕ່ອີງໃສ່ກຳລັງກອງທັບເທົ່ານັ້ນ. ຜູ້ຄົນທັງຫລາຍທີ່ຮັບໃຊ້ຢູ່ໃນກອງທັບ ໃນພະລາຊະວັງ ພະເຈົ້າຊານັ້ນ ໄດ້ເລີ່ມຕົ້ນເອີ້ນກັນເປັນຂຸນນາງ. ເພື່ອຕອບແທນແກ່ການຮັບໃຊ້ນີ້ ພະເຈົ້າຊາໄດ້ມອບທີ່ດິນ ເຊິ່ງຊາວນາ ໄດ້ຕັ້ງບ້ານເຮືອນຢູ່ນັ້ນ ໃຫ້ແກ່ພວກຂຸນນາງ ຫລືເວົ້າກັນໃນເວລານັ້ນວ່າຈັດສັນທີ່ດິນໃຫ້ແກ່ພວກເຂົາ. ໃນບໍ່ຊ້າຕຳແຫນ່ງປະເພດອື່ນ-ເຊັ່ນເຈົ້າທີ່ດິນກໍໄດ້ມີຄວາມເຂັ້ມແຂງຂຶ້ນ ແກ່ພວກ ຂຸນນາງ. ພວກເຈົ້າທີ່ດິນຂຸນນາງເຫລົ່ານີ້ ໄດ້ມີຄວາມສົນໃຈ ໃນ ການເສີມສ້າງອຳນາດພະເຈົ້າຊາ ແລະໃນການຢາກໄດ້ທີ່ດິນໃຫມ່ອີກ. ຍິ່ງພະເຈົ້າຊາມີຄວາມຮັ່ງມີ ແລະ ມີອຳນາດເຂັ້ມແຂງຂຶ້ນເທົ່າໃດ ເຂົາກໍຍິ່ງມອບຕຳແຫນ່ງຂຸນນາງ ໃຫ້ແກ່ ນັກຮົບຂອງເຂົາຂຶ້ນສູງເທົ່ານັ້ນ.

ມົດສະກູນະຄອນຫລວງຂອງລັດລັດເຊຍ ໄດ້ເກີດ ມີຄວາມຮັ່ງມີແລະຄວາມສວຍງາມຂຶ້ນຫລາຍ. ຢູ່ໃນແດນຂອງ ວັງກະແລັມແລັງ ກໍໄດ້ເກີດມີໂບດ ທີ່ສ້າງດ້ວຍຫີນອ່ອນ, ແລະມີກຳແພງແລະເພດານ ທີ່ແຕ້ມດ້ວຍນັກແຕ້ມສີມືຊັ້ນດີຂຶ້ນ. ບັນດານາຍຊ່າງລັດເຊຍທີ່ມີຄວາມຊຳນິຊຳນານນັ້ນ ກໍໄດ້ສ້າງ ຜະລິດຕະພັນອັນດີເລີດຂຶ້ນດ້ວຍເຫລັກ, ໄມ້ ແລະ ຫີນອ່ອນ. ຈົນເທົ່າທຸກມື້ນີ້ແຂກຄົນຜູ້ມາຊົມວັງກະແລັມແລັງ ກໍຈະເຫັນປືນພະເຈົ້າຊາຂະຫນາດໃຫຍ່ທີ່ສ້າງຂຶ້ນ ໂດຍນາຍຊ່າງລັດເຊຍຊັ້ນຍອດຊື່ອັງດະເລ ໂຊຄົບ ໃນສະຕະວັດທີ XVI ນັ້ນ ດ້ວຍຄວາມ ປະ

ການພິມປຶ້ມໃນສະຕະວັດທີ XVI.

ຫລາດໃຈ. ປະເທດຕ່າງໆໄດ້ພະຍາຍາມ ສ້າງຕັ້ງ ສາຍພົວພັນກັບລັດເຊຍຫລາຍອັນ ໂດຍໄດ້ສົ່ງຄະນະທູດຂອງຕົນ ເຂົ້າມາສູ່ນະຄອນມົດສະກູ.

ການຂະຫຍາຍວັດທະນະທຳລັດເຊຍ ໂດຍການເລີ່ມຕົ້ນຈັດພິມຫນັງສືອັນນັ້ນ ຖືໄດ້ວ່າເປັນຜົນສຳເລັດອັນໃຫຍ່ຫລວງ. ໃນປີ ໑໕໖໔ ປຶ້ມຫົວທຳອິດຊື່ "ອາໂປສະໂຕນ" ເຊິ່ງມີຊື່ສຽງແກ່ພວກເຮົານັ້ນ ກໍໄດ້ພິມອອກຢູ່ໃນມົດສະກູ. ການພິມປຶ້ມຫົວອັນນັ້ນ ໄດ້ຮັບການຊ່ວຍເຫລືອຈາກ ອີວານ ຟີໂດລົບ, ຜູ້ຈັດຕັ້ງການພິມຫນັງສືພິມໃນລັດເຊຍ. ເຖິງຢ່າງໃດກໍຕາມ ອີວານ ຟີໂດລົບ ບໍ່ພຽງແຕ່ເປັນຜູ້ຈັດພິມຫນັງສືຄົນທຳອິດເທົ່ານັ້ນ ແຕ່ຫາກຍັງເປັນບັນນາທິການອີກດ້ວຍ ຄືເຂົາໄດ້ພະຍາຍາມເຮັດໃຫ້ພາສາທີ່ເຂົ້າໃຈຍາກ ຢູ່ໃນປຶ້ມສາສະຫນານັ້ນ ໃຫ້ມາເປັນຄຳເວົ້າທີ່ເຂົ້າໃຈງ່າຍ. ບັນດາຕົວແທນທີ່ເປັນປະຕິການ ຂອງສາສະຫນາໄດ້ກ່າວຫາເຂົາວ່າເປັນຄົນນອກສາສະຫນາ. ຟີໂດລົບຄັນໄດ້ພົ້ນໄພອອກຈາກການລອບຄາຕະກຳແລ້ວ, ເຂົາກໍໄດ້ເດີນທາງໄປຮອດເມືອງລະວົບແລະຢູ່ບ່ອນນີ້ເຂົາກໍໄດ້ທຳການຄົ້ນຄວ້າກ່ຽວກັບການສຶກສາຂອງປະຊາຊົນອ້າຍນ້ອງ ອູກະລາອີນ. ພວກລູກສິດຂອງເຂົາໄດ້ດຳເນີນສືບຕໍ່ຈັດພິມປຶ້ມຢູ່ໃນມົດສະກູຕໍ່ໄປ.

ໃນສະຕະວັດທີ XVI ບັນດາປຶ້ມທີ່ພິມອອກເປັນພາສາເບໂລລູດເຊຍ ກໍໄດ້ປາກົດອອກເປັນຄັ້ງທຳອິດ. ປຶ້ມເຫລົ່ານີ້ໄດ້ພິມຂຶ້ນມາໂດຍ ກີໂອລະກີ ສະໂກລີນາ-ນັກປຸກລູກ ແລະ ນັກຮັກ

ຊາດເບໂລຣູດເຊຍຜູ້ມີຊື່ສຽງ. ກິດຈະກຳຂອງອີວານ ຟີໂດ-
ລົບ, ກີໂອລະກີ ສະໂກລີນາ ແລະຜູ້ສືບທອດຕາມຫລັງນັ້ນໄດ້
ສ້າງສາຍພົວພັນທາງວັດທະນະທຳ ລະຫວ່າງລັດເຊຍ, ອູກະ
ລາອີນ ແລະ ເບໂລຣູດເຊຍ ໃຫ້ເຂັ້ມແຂງຂຶ້ນ.

ໃນຕົ້ນສະຕະວັດທີXVIIຢູ່ໃນເຂດແດນຂອງລັດລັດເຊຍນັ້ນ
ກໍໄດ້ມີພວກນັກຮຸກຮານຈາກອານາຈັກໂປໂລຍ ມາຢຽບຍ່ຳທຳ
ລາຍ. ພວກເຈົ້າທີ່ດິນໃຫຍ່ໂປໂລຍ ຜູ້ຊຶ່ງໄດ້ມາ ຍຶດຄອງ
ອູກະລາອີນ ໃນສະຕະວັດທີ XIV ແລະຕໍ່ມາ ເບໂລຣູດເຊຍ
ແລະມີຄວາມຮັ່ງມີຂຶ້ນຢູ່ໃນດິນແດນເຫລົ່ານັ້ນ ໄດ້ມີຄວາມປາ
ຖະໜາຢາກຈະຄອບຄອງດິນແດນລັດເຊຍ.ດ້ວຍການ ຫລອກ
ລວງພວກນັກຮຸກຮານຈຶ່ງສາມາດແຊກຊຶມເຂົ້າສູ່ ມົດສະກູໄດ້.
ແຕ່ວ່າພວກເຂົາກໍບໍ່ໄດ້ຄອບຄອງຢູ່ທີ່ນັ້ນດົນນານ.ປະຊາຊົນທົ່ວ
ດິນແດນລັດເຊຍ ໄດ້ລຸກຮືຂຶ້ນເພື່ອປົດປ່ອຍປິຕຸພູມ. ກອງ ທະ
ຫານປະຊາຊົນຫລາຍພັນຄົນໄດ້ປົດປ່ອຍມົດສະກູ ໃນປີ ໑໖໑໘
ແລະກໍໄດ້ຂັບໄລ່ພວກຮຸກຮານໂປໂລຍ ອອກຈາກປະເທດໄປ.

ພໍ່ຄ້າ ໂກສະມາ ມີນິນ ຈາກເມືອງນີຊະນີ ນົບໂກລົດແລະ
ແມ່ທັບດະມີຕະລີ ໂປຊາລະສະກີ ກໍໄດ້ມີບົດບາດສຳຄັນຫລາຍ
ໃນການຈັດຕັ້ງກອງທະຫານປະຊາຊົນຂຶ້ນ.ໃນການຕໍ່ສູ້ກັບພວກ
ຮຸກຮານໂປໂລຍນັ້ນ ບໍ່ໄດ້ມີແຕ່ກອງທະຫານ ທີ່ປະກອບອາວຸດ
ເທົ່ານັ້ນທີ່ໄດ້ເຂົ້າຮ່ວມ. ຊາວນາລັດເຊຍຊື່ ອີວານ ຊູຊານິນ
ທີ່ຖືກຈັບໄປບອກທາງແກ່ກອງທະຫານໂປໂລຍນັ້ນກໍໄດ້ນຳກອງ
ທະຫານໂປໂລຍນັ້ນ ໄປສູ່ໜອງນ້ຳທີ່ຜ່ານໄປບໍ່ໄດ້. ຊູຊານິນ

ໄດ້ສະລະຊີວິດໄປຢ່າງກ້າຫານ ແຕ່ວ່າກອງທະຫານສັດຕູ ທັງໝົດກໍໄດ້ຕາຍໄປຄືກັນ.

ປະຊາຊົນສ່ວນໃຫຍ່ຂອງລັດລັດເຊຍ ແມ່ນຊາວນາ. ພວກເຂົາໄດ້ປູກຝັງ, ລ້ຽງສັດ, ແຕ່ໃນເວລາໃດມີຊາວຕ່າງດ້າວມາຮຸກຮານ ພວກເຂົາກໍໄດ້ລຸກຂຶ້ນປ້ອງກັນປະເທດຊາດ. ແຕ່ຊາວນາກໍບໍ່ໄດ້ດຳລົງຊີວິດຢູ່ຢ່າງງ່າຍດາຍ ເພາະດິນແດນທັງໝົດ ຕົກເປັນກຳມະສິດຂອງພະເຈົ້າຊາ, ຂຸນນາງແລະເຈົ້າທີ່ດິນ. ເພື່ອທີ່ຈະຈ່າຍຄ່າເຊົ່າທີ່ດິນນ້ອຍໆຕອນໜຶ່ງນັ້ນຊາວນາຈຳຕ້ອງຂຸດຄົ້ນທົ່ງນາອັນກວ້າງໃຫຍ່ຂອງເຈົ້າທີ່ດິນ, ສ້າງບ້ານເຮືອນສຳລັບເຈົ້າທີ່ດິນອື່ນ, ກະກຽມຫລົວຟືນ ແລະ ປະຕິບັດວຽກງານອື່ນໃຫ້ແລ້ວ. ວຽກງານທີ່ໄດ້ປະຕິບັດ ໃຫ້ແກ່ເຈົ້າທີ່ດິນ-ຂຸນນາງທັງວ່ານີ້ ເອີ້ນວ່າອັດຕາວຽກທີ່ຈະຕ້ອງເຮັດ. ແຕ່ວ່າເຈົ້າທີ່ດິນກໍບໍ່ພໍໃຈກັບອັດຕາວຽກ ຈະຕ້ອງເຮັດ ອັນດຽວເທົ່ານັ້ນ-ຊາວນາຖືກຄອບຄົວ ຈຳຕ້ອງໄດ້ແບ່ງປັນ ຜະລິດຜົນເຊິ່ງພວກເຂົາໄດ້ມາດ້ວຍການອອກເຫື່ອ ເຫແຮງ ຢ່າງໜັກເຊັ່ນ ເຂົ້າຈີ່, ເນີຍ, ໄຂ່. ຂຸນ ຢູ່ໃນນາຂອງຕົນແກ່ເຈົ້າທີ່ດິນ. ໜ້າທີ່ຂອງຊາວນາອັນນີ້ ເອີ້ນວ່າພາສີ. ພວກເຈົ້າທີ່ດິນ ແລະລູກມືຂອງເຂົາໄດ້ຕິດຕາມເບິ່ງ ຄຳສັ່ງຂອງຕົນ ກ່ຽວກັບເລື່ອງນີ້ຢ່າງເຄັ່ງຄັດວ່າ ຊາວນາທັງໝົດ ໄດ້ປະຕິບັດອັດຕາວຽກທີ່ຈະຕ້ອງເຮັດ ແລະເສຍພາສີໃຫ້. ຍິ່ງພະເຈົ້າຊາມີອຳນາດເຂັ້ມແຂງຂຶ້ນເທົ່າໃດ ກໍຍິ່ງຈະຕ້ອງມີເຈົ້ານາຍທີ່ດິນ ໃນປະເທດຫລາຍຂຶ້ນເທົ່ານັ້ນ. ພວກເຈົ້າທີ່ດິນລົ້ນໄດ້ຮັບທີ່ດິນມາ

ຈາກພະເຈົ້າຊາແລ້ວ ກໍໄດ້ພະຍາຍາມສ້າງຄວາມຮັ່ງມີໃຫ້ແກ່ຕົນໄວຂຶ້ນ ເທົ່າທີ່ຈະໄວໄດ້ ແລະເພື່ອຢາກມີ ຄວາມຮັ່ງມີ ນີ້ ເຈົ້າທີ່ດິນຕ້ອງໄດ້ກຳນົດອັດຕາວຽກ ແລະພາສີໃຫ້ຫລາຍຂຶ້ນ. ໂດຍພະຍາຍາມເພື່ອຈະເຮັດໃຫ້ຫນີ້ສິນຂອງຕົນ ຜ່ອນຄາຍລົງນັ້ນ ຊາວນາບາງຄົນກໍໄດ້ໂຕນຫນີ ໄປສູ່ດິນແດນລັດເຊຍເຂດໃຕ້ເຊິ່ງເປັນບ່ອນທີ່ມີດິນແດນເປົ່າຫວ່າງຢູ່.ຊາວນາບາງພາກສ່ວນກໍໄດ້ຍ້າຍຫນີຈາກເຈົ້າທີ່ດິນຜູ້ຫນຶ່ງ ໄປສູ່ເຈົ້າທີ່ດິນ ຜູ້ອື່ນເພື່ອສະແຫວງຫາເຈົ້ານາຍ "ທີ່ດີ" .ພວກຂຸນນາງແລະເຈົ້າທີ່ດິນ ໄດ້ພະຍາຍາມທີ່ຈະເຮັດໃຫ້ຊາວນາ ຕິດພັນ ຢູ່ກັບນານັ້ນຢ່າງແຫນ້ນຫນາຖາວອນ ເພື່ອວ່າຕົນຈະໄດ້ມີແຮງງານ ເຮັດວຽກໃຫ້ຢູ່ເປັນປະຈຳ. ໃນປີ ໑໕໘໑ ພະເຈົ້າຊາ ອີວານ ທີ IV ໄດ້ເກືອດຫ້າມຊາວນາ ບໍ່ໃຫ້ເຄື່ອນຍ້າຍຈາກເຈົ້າທີ່ດິນຜູ້ຫນຶ່ງໄປສູ່ເຈົ້າທີ່ດິນຜູ້ອື່ນ. ໃນປີຕໍ່ມາ ພະເຈົ້າຊາ ກໍໄດ້ອອກຄຳສັ່ງຫລາຍຄັ້ງ ເພີ່ມເວລາການຊອກຫາຊາວນາຜູ້ທີ່ໄດ້ໂຕນຫນີໄປຈາກເຈົ້າທີ່ດິນ.ໃນປີ ໑໖໔໙ ໄດ້ມີການອອກກົດຫມາຍບັງຄັບຊາວນາທີ່ໄດ້ໂຕນຫນີໄປນັ້ນ ໃຫ້ກັບຄືນມາຫາເຈົ້າທີ່ດິນຂອງຕົນໃນປີໃດກໍໄດ້. ເພາະສະນັ້ນພວກຊາວນາ ຈຶ່ງໄດ້ຖືກຜູກພັນຢູ່ກັບທີ່ດິນຢູ່ກັບຄວາມເປັນທາດຢ່າງແຫນ້ນຫນາຖາວອນຢູ່ໃນລັດລັດເຊຍ.

ຊີວິດຂອງຊາວນາ ຢູ່ໃນລັດລັດເຊຍ ໄດ້ມີຄວາມຍາກ ລຳບາກຫລາຍ. ແຕ່ພວກຊາວນາອູກະລາອີນາ ແລະ ເບໂລຣູດເຊຍ ກໍໄດ້ຮັບແອກຄອບຄອງອັນຫນັກກວ່ານັ້ນ. ເພາະຊັບສິນ

ບັດແລະຊີວິດຂອງພວກເຂົາ ແມ່ນຕົກຢູ່ໃຕ້ອຳນາດຂອງເຈົ້າທີ່ດິນໂປໂລຍ ຜູ້ເຊິ່ງບໍ່ພຽງແຕ່ເຮັດໃຫ້ຊາວນາມີຫລັງຂົດ ຫລັງໂຂໃນການເຮັດວຽກແຕ່ເຊົ້າຮອດຄ່ຳເທົ່ານັ້ນແຕ່ຫາກຍັງຫ້າມພວກເຂົາບໍ່ໃຫ້ເວົ້າພາສາທ້ອງຖິ່ນ ແລະທຳລາຍປຶ້ມຂອງຊາວອູກະລາອີນາ ແລະ ເບໂລລູດເຊຍ ອີກ. ພວກເຈົ້າທີ່ດິນໂປໂລຍຢາກໃຫ້ປະຊາຊົນອູກະລາອີນາ ແລະ ເບໂລລູດເຊຍລືມພາສາ, ສາສະຫນາຂອງຕົນແລະປະຖິ້ມປິຕຸພູມ. ໄປຄຽງຄູ່ກັນນັ້ນ ພວກເຈົ້າທີ່ດິນໃຫ່ຍອູກະລາອີນາ ແລະ ເບໂລລູດເຊຍຜູ້ເຊິ່ງຍອມຮັບເອົາພາສາແລະປະເພນີຕ່າງດ້າວ ຢ່າງງ່າຍ ໆ ແລະບໍ່ຍອມຮັບຮູ້ຄວາມໂຫດຮ້າຍທາລຸນ ຂອງພວກເຈົ້າທີ່ ດິນໂປໂລຍນັ້ນ ກໍໄດ້ຫນີບເຕັງຊາວນາອີກ. ພວກອາດຍາສິດໂປໂລຍໄດ້ກົດຫນ່ວງຊ່າງຫັດຖະກຳແລະພໍ່ຄ້າ, ໄດ້ເກັບພາສີຈາກພວກເຂົາຢ່າງຫນັກ ແລະໄດ້ບັງຄັບດ້ວຍການລົງໂທດ ແລະການເຍາະເຍີຍຫົວຂວັນ.

ຊາວນາແລະຊາວເມືອງທີ່ຖືກກົດຂີ່ຂົ່ມເຫັງໄດ້ດຳເນີນການຕໍ່ສູ້ກັບພວກເຈົ້າທາດ. ຜູ້ຄົນຈຳນວນຫລວງຫລາຍ ໄດ້ພ່າຍຫນີຈາກພວກໃຊ້ຄວາມຮຸນແຮງນັ້ນ ລົງໄປທາງໃຕ້ແມ່ນ້ຳ ດະເນປະລະ ແລະໄດ້ຕັ້ງຖິ່ນຖານຢູ່ບ່ອນນັ້ນຢ່າງເປັນຄົນມີສິດເສລີ-ອັນໄດ້ແກ່ຊາວກາຊັກ.

ພວກຊາວກາຊັກແລະຊາວນາ ໄດ້ລຸກຮືຂຶ້ນຕໍ່ສູ້ອຳນາດພວກເຈົ້າທີ່ດິນໂປໂລຍຢູ່ບໍ່ຂາດເວລາ.

ໃນປີ ໑໖໔໘ ໄດ້ເກີດມີການລຸກຮືຂຶ້ນຄັ້ງໃຫ່ຍ ຢູ່ທີ່ອູກະລາ

ອິນາ. ການລຸກຮືໄດ້ແຜ່ໄປທົ່ວອູກະລາອີນາ ແລະ ຮອດບາງ
ພາກສ່ວນຂອງເບໂລລຸດເຊຍຄືກັນ. ພວກຊາວນາທີ່ຖືອວານ,
ຫລົວ ແລະ ຫລາວ ໄດ້ເຂົ້າໄປສູ່ສະຖານທີ່ ຂອງພວກເຈົ້າທີ່
ດິນໂປໂລຍແລະໄດ້ຂັບໄລ່ພວກເຂົາອອກຈາກດິນແດນຂອງຕົນ
ໄປ. ກອງທະຫານທີ່ລຸກຮືຂຶ້ນ ກໍໄດ້ເຕີບໃຫຍ່ຂຶ້ນຫຼາຍ. ໂບ-
ກະດານ ຄະເມລະນິຊະກີ ຜູ້ນຳທີ່ສະຫລາດໄດ້ເປັນຜູ້ນຳຂອງ
ຂະບວນການນີ້. ການຕໍ່ສູ້ໄດ້ດຳເນີນໄປເປັນເວລາ ໖ປີ.ປະ
ຊາຊົນຊາວອູກະລາອີນາໄດ້ຮັບໄຊຊະນະ ທີ່ມີຊື່ສຽງ ດັງດັງ.
ແຕ່ວ່າພວກເຈົ້າທີ່ດິນໂປໂລຍ ກໍໄດ້ເຕົ້າໂຮມກຳລັງໃຫມ່ແລະ
ໄດ້ດຳເນີນສົງຄາມຢູ່ໃນອູກະລາອີນາອີກ.

ພວກຜູ້ລຸກຮືຂຶ້ນ ໄດ້ຫັນໄປຂໍຄວາມຊ່ອຍເຫລືອ ຕໍ່ປະຊາຊົນ
ລັດເຊຍ ເຊິ່ງຍາມໃດກໍເຫັນອົກເຫັນໃຈ ການຕໍ່ສູ້ຂອງຊາວອູ
ກະລາອີນາແລະເບໂລລຸດເຊຍ ຕ້ານພວກເຈົ້າທາດໂປໂລຍ.
ລັດຖະບານລັດເຊຍໄດ້ໃຫ້ຄວາມຊ່ວຍເຫລືອ ທາງສະບຽງອາ
ຫານແລະອາວຸດແກ່ຊາວອູກະລາອີນາ ທີ່ລຸກຮືຂຶ້ນນັ້ນ.

ໃນປີ ໑໖໕໔ ໂບກະດານ ຄະເມລະນິຊະກີ ໄດ້ຮຽກໂຮມ
ປະຊາຊົນຂຶ້ນ-ຢູ່ທີ່ສະພາລາດາໃນເມືອງ ເປເລຢາຊະລາວເອຍ
(ປະຈຸບັນນີ້ເປັນເມືອງເປເລຢາຊະລັບ)ຄະເມລະນິຊະນີ.ຊາວ
ກາຊັກ, ຊາວນາແລະຊ່າງຫັດຖະກຳຈາກທົ່ວດິນແດນອູກະລາອີ
ນາກໍໄດ້ມາເຕົ້າໂຮມກັນຢູ່ທີ່ສະພາລາດາ.ຄະນະທູດລັດເຊຍ ກໍ
ໄດ້ມາຮອດເມືອງ ເປເລຢາຊະລາບຄືກັນ.

ຢູ່ທີ່ເດີ່ນຊຸມນຸມນັ້ນ ໂບກະດານ ຄະເມລະນິຊະກີກໍໄດ້ມາຮ່ວມ

ມາ. ເຂົາໄດ້ຖາມທີ່ຊຸມນຸມຊົນວ່າ "ຕ້ອງການໄປຂຶ້ນກັບພວກເຈົ້າທີ່ດິນໂປໂລຍບໍ ? ຫລືວ່າຕ້ອງການໄປໂຮມກັນກັບ ປະຊາຊົນລັດເຊຍອ້າຍນ້ອງຢູ່ໃນລັດອັນດຽວກັນ. ສຽງໂຫ່ຮ້ອງຄວາມຍິນດີໄດ້ດັງຂຶ້ນຈາກຫຼກດ້ານວ່າ "ພວກເຮົາຢາກຈະຢູ່ຮ່ວມກັນກັບອ້າຍນ້ອງລັດເຊຍ !".

ສະພາລາດາທີ່ເມືອງ ເປເລຢາຊະລາບ ໄດ້ຕັດສິນໃຈວ່າ: "ປະຊາຊົນຊາວອູກະລາອີນາຈະຢູ່ຮ່ວມກັນກັບຊາວລັດເຊຍຕະຫລອດໄປ".

ດັ່ງນັ້ນປະຊາຊາດອ້າຍນ້ອງ ຈຶ່ງໄດ້ໂຮມກັນອີກ ຄັ້ງໜຶ່ງ. ເຖິງວ່າປະຊາຊົນຊາວອູກະລາອີນາ ໄດ້ເຂົ້າໃຈວ່າ ຈະໄປຢູ່ໃຕ້ອຳນາດພະເຈົ້າຊາລັດເຊຍໃນເວລານັ້ນກໍຕາມ, ແລະຊາວນາກໍໄດ້ສືບຕໍ່ຢູ່ໃຕ້ແອກຄອບຄອງຂອງເຈົ້າທີ່ດິນຂອງຕົນເພາະເຫັນວ່າການເຕົ້າໂຮມກັນຄືນໃໝ່ຂອງຊາວອູກະລາອີນາ ກັບຊາວລັດເຊຍນັ້ນ ມີປະໂຫຍດຫລາຍຢ່າງສຳລັບປະຊາຊາດທັງສອງ. ເປັນການງ່າຍສຳລັບປະຊາຊາດທັງສອງທີ່ຈະຕໍ່ສູ້ຕ້ານສັດຕູທົ່ວໄປຮ່ວມກັນ, ເປັນການງ່າຍທີ່ຈະດຳເນີນ ວຽກງານເສດຖະກິດຮ່ວມກັນ.

ການເຕົ້າໂຮມກັນຂອງຊາວອູກະລາອີນາ ກັບຊາວລັດເຊຍຄືນໃໝ່ນັ້ນ ແມ່ນເປັນການເພີ່ມທະວີດິນແດນຂອງລັດລັດເຊຍຂຶ້ນອີກ. ແຕ່ວ່າຍັງມີການຂະຫຍາຍຊາຍແດນຂອງລັດອອກໄປທາງທິດຕາເວັນອອກຫລາຍຂຶ້ນເທົ່າໃດ ການບຸກເບີກພົນທີ່ດິນອັນກວ້າງໃຫຍ່ໃນເຂດພູອູລານທີ່ຊີບີລີ ກໍຍິ່ງມີຫລາຍຂຶ້ນ ເທົ່າ

ນັ້ນ. ລັນມາຮອດທ້າຍສະຕະວັດທີ XVII ດິນແດນຈຸບັລເກືອບ ທັງໝົດ ກໍໄດ້ມາເຕົ້າໂຮມກັນເຂົ້າຢູ່ໃນລັດລັດຊະຍ. ພົນລະເມືອງພົນເມືອງຂອງຈຸບັລ-ໄດ້ແກ່-ຊາວຄານຕິ, ຊາວ ຢາກູດ ແລະຊາວ ຂອວຽນ ແມ່ນມີຈຳນວນໜ້ອຍ. ຢູ່ໃນດິນແດນ ທີ່ຫວ່າງເປົ່າເຫລົ່ານີ້ ກໍໄດ້ມີຜູ້ຄົນຊາວລັດຊະຍ ມາເລີ່ມຕັ້ງຖິ່ນຖານຢູ່. ພວກເຂົາໄດ້ສິດສອນໃຫ້ປະຊາຊົນທ້ອງຖິ່ນປູກເຂົ້າ, ຮຳຮຽນເຮັດຫັດຖະກຳຕ່າງໆ, ສ້າງເຮືອນຊານ ດ້ວຍໄມ້ໃຫ້ອົບອຸ່ນ, ຂຸດເອົາເຫລັກແລະຄຳ ແລະຮູ້ຈັກໃຊ້ອາວຸດ ທີ່ ຍິງດ້ວຍໄຟ. ເຖິງຢ່າງໃດກໍຕາມພົນລະເມືອງພົນເມືອງເຫລົ່ານີ້ ກໍຍັງດຳເນີນສືບຕໍ່ການລ່າສັດ, ຫາປາແລະລ້ຽງກວາງ ເປັນອາຊີບພົນຖານຢູ່.

ຢູ່ທີ່ຈຸບັລກໍໄດ້ມີປ້ອມຄ້າຍເຂັ້ມແຂງເປັນພິເສດ ປາກົດ ຂຶ້ນເຊິ່ງເປັນບ່ອນທີ່ພວກເຈົ້າແຂວງທີ່ລັດຖະບານ ພະເຈົ້າຊາສົ່ງໄປນັ້ນຢູ່. ບັນດາເຈົ້າແຂວງນີ້ ໄດ້ບັງຄັບໃຫ້ປະຊາຊົນ ທ້ອງຖິ່ນເສຍພາສີໃຫ້ແກ່ພະເຈົ້າຊາລັດຊະຍ ດ້ວຍຂົນຫນັງລາຄາແພງເຊັ່ນ ຂົນ ໂຊໂບລະ, ກູນິຊະ ແລະ ໂກລະນົດສະຕາ. ພວກຫົວໜ້າຊົນເຜົ່າທ້ອງຖິ່ນ ກໍໄດ້ກົດຂີ່ຂົ່ມເຫັງຊົນເຜົ່າຕ່າງໆ ຄືກັນ.

ການເຮັດໃຫ້ຊາວນາເປັນຂ້າທາດຄັ້ງສູດທ້າຍ ໃນ ໕໐ ປີ ຫລັງຂອງສະຕະວັດທີ XVII ນັ້ນໄດ້ອຳນວຍໃຫ້ພວກ ຂຸນນາງ ແລະເຈົ້າທີ່ດິນ ມີໂອກາດເພີ້ມພາສີແກ່ຊາວນາຕື່ມອີກ. ໃນຕົ້ນສະຕະວັດທີ XVII ຊາວນາໄດ້ມີອັດຕາເຮັດວຽກ ທີ່ກຳນົດໄວ້

໓ ມື້ຕໍ່ໜຶ່ງອາທິດນັ້ນ, ຄັນມາຮອດທ້າຍສະຕະວັດ ພວກເຈົ້າທີ່ດິນກໍໄດ້ບັງຄັບໃຫ້ພວກເຂົາເພີ່ມອັດຕາເຮັດວຽກຂຶ້ນ ເຖິງ ໔ ມື້ຕໍ່ໜຶ່ງອາທິດ.

ໃນປີ ໑໖໗໐ ພວກຊາວນາໄດ້ລຸກຮືຂຶ້ນຕ້ານພວກເຈົ້າທີ່ດິນ. ພວກລຸກຮືຂຶ້ນນີ້ ໄດ້ຍຶດເອົາເມືອງ ອາສະຕະລາຄານ ແລະເຄື່ອນໄຫວຂຶ້ນໄປທາງແມ່ນ້ຳໂວນກາ. ຫົວໜ້າການລຸກຮືຂຶ້ນ, ຊາວໂກຊັກ ຊື່ ສະເຕປານ ຕີໂມເຟເຢວິດລາຊິນ ໄດ້ຫັນໄປເວົ້າກັບພວກລຸກຮືຂຶ້ນວ່າ "ຂ້າພະເຈົ້າຈະຕໍ່ສູ້ ຕ້ານພວກຮັ່ງມີແລະຂຸນນາງ. ບັດນີ້ມັນເປັນໂອກາດຂອງພວກເຈົ້າທີ່ທຳການແກ້ແຄ້ນຕໍ່ຜູ້ກົດຂີ່ຂົ່ມເຫັງ ຂອງພວກເຈົ້າແລ້ວ. ຂ້າພະເຈົ້າຈະໃຫ້ເສລີພາບແກ່ພວກເຈົ້າ ! ພວກເຈົ້າເປັນອ້າຍນ້ອງ ແລະເປັນລູກຂອງເຮົາ. ແຕ່ຂ້າພະເຈົ້າຈະບໍ່ຕໍ່ສູ້ກັບພະເຈົ້າຊາ". ລາຊິນແລະຜູ້ຮ່ວມການລຸກຮືຂຶ້ນຄົນອື່ນໆ ໄດ້ເຊື່ອໃນ ພະເຈົ້າຊາ "ຜູ້ເປັນຄົນດີ" ໂດຍບໍ່ເຂົ້າໃຈວ່າພະເຈົ້າຊາ ໄດ້ຮ່ວມມືກັນກັບພວກເຈົ້າທີ່ດິນແລະຂຸນນາງ.



ສະເຕປານລາຊິນ, ຜູ້ນຳການລຸກຮືຂຶ້ນຂອງຊາວນາໃນລັດເຊຍເມື່ອປີ ໑໖໗໐-໑໖໗໑.

ພວກລູກຮ້ອນໄດ້ເຄື່ອນໄປສູ່ໃຈກາງຂອງລັດເຊຍ. ກອງທັບເຊິ່ງມີ ສະເຕປານ ລາຊິນ ເປັນຜູ້ນຳພານັ້ນ ໄດ້ມີ ຈຳນວນພົນສີ່ຫາພັນຄົນ. ເຖິງຢ່າງໃດກໍຕາມ ກອງທັບນັ້ນກໍໄດ້ຮັບການຈັດຕັ້ງຂື້ນມາບໍ່ດີແລະກໍມີອາວຸດບໍ່ດີອີກ. ກອງກຳລັງຂອງພວກລູກຮ້ອນທີ່ປະຕິບັດການຢູ່ໃນທ້ອງຖິ່ນຕ່າງໆນັ້ນ ກໍໄດ້ມີການຕິດຕໍ່ພົວພັນກັນລະຫວ່າງພວກເຂົາເອງ ຢ່າງບໍ່ເອົາຈິງ ເອົາຈັງປານໃດ. ທັງຜູ້ນຳການລູກຮ້ອນແລະທັງຜູ້ເຂົ້າຮ່ວມ ໃນຂະບວນນັ້ນກໍບໍ່ໄດ້ຄິດຢ່າງຈະແຈ້ງວ່າ ພວກເຂົາຈະເຮັດຫຍັງຕໍ່ໄປເມື່ອໄດ້ທຳການແກ້ແຄ້ນກັບພວກເຈົ້າທີ່ດິນແລ້ວ. ໃນເວລານັ້ນພະເຈົ້າຊາແລະພວກເຈົ້າທີ່ດິນ ທີ່ຕົກໃຈຕໍ່ການລູກຮ້ອນນັ້ນ ກໍໄດ້ສົ່ງກອງທະຫານໃຫຍ່ ແລະມີການຝຶກແອບດີ ໄປຕ້ານພວກລູກຮ້ອນ ເຊິ່ງກໍໄດ້ເຮັດໃຫ້ກອງທັບຂອງ ລາຊິນ ໃກ້ເມືອງຊິມບີລະສະກະ ນັ້ນປະລາໄຊໄປ.

ພະເຈົ້າຊາແລະພວກເຈົ້າທີ່ດິນ ໄດ້ທຳການແກ້ແຄ້ນ ກັບພວກຜູ້ເຂົ້າຮ່ວມການລູກຮ້ອນນັ້ນ ຢ່າງໂຫດຮ້າຍ ປ່າເຖື່ອນ . ພວກເຂົາໄດ້ຖືກທູບຕີຈົນຕາຍ, ຕີຫົວຈົນແຕກຍະອອກ ແລ້ວນຳໄປແຂວນຄໍ. ສະເຕປານ ຕີໂມ ເຟເຢວິດ ລາຊິນ, ຜູ້ ນຳຊາວນາໄດ້ຖືກປະຫານຢ່າງທາລຸນໂຫດຮ້າຍ. ແຕ່ຄວາມທາລຸນໂຫດຮ້າຍອັນນັ້ນ ກໍບໍ່ສາມາດຈະມາບັງຄັບ ຊາວນາ ໄວ້ໄດ້. ເຖິງວ່າການລູກຮ້ອນນັ້ນ ຈະໄດ້ຖືກຈົມຢູ່ໃນກອງເລືອດກໍຕາມການຈະລາຈົນຂອງຊາວນາ ກໍບໍ່ໄດ້ຢຸດຢູ່ພຽງນັ້ນ. ເພງແລະເລື່ອງລາວຕ່າງໆ ຫລາຍຢ່າງກ່ຽວກັບ ສະເຕປານ ລາຊິນ

ກໍໄດ້ຖືກແຕ່ງຂຶ້ນໂດຍປະຊາຊົນ.

ລັດເຊຍໃນສະຕະວັດ ທີ XVIII ແລະ 40 ປີຕົ້ນຂອງສະຕະວັດທີ XIX

ດິນແດນອັນກວ້າງໃຫຍ່ຂອງລັດລັດເຊຍ ບໍ່ມີທາງອອກສູ່ທະເລ. ດິນແດນລັດເຊຍແຕ່ເກົ່າກ່ອນທີ່ຢູ່ຕາມຝັ່ງທະເລ ບັນຕິກນັ້ນ ແມ່ນຕົກຢູ່ກ້ອງອຳນາດຂອງກະສັດສະວິເດນ. ສ່ວນຝັ່ງທະເລດຳໄດ້ຖືກຕູລະກີແລະເສດເຫລືອຂອງຄານທ໌ອນກັບ ຕູລະກີປົກຄອງ. ການບໍ່ມີທ່າເຮືອທີ່ສະດວກສະບາຍແມ່ນເປັນການອັດຂວາງການຂະຫຍາຍການຄ້າຂອງລັດເຊຍ ກັບບັນດາປະເທດອື່ນໆ, ປີເຕີ ທີ I, ພະເຈົ້າຊາລັດເຊຍ ຜູ້ຫນຸ່ມນ້ອຍໄດ້ຕັດສິນໃຈທີ່ຈະຍາດເອົາດິນແດນຢູ່ບົນຣິມຝັ່ງທະເລບັນຕິກນີ້ໃຫ້ໄດ້. ຄວາມພະຍາຍາມຄັ້ງທີຫນຶ່ງຂອງເຂົາ ໄດ້ປະສົບກັບຄວາມຫຼົມແຫຼວໄປ, ກອງທະຫານລັດເຊຍ ໄດ້ຖືກກຳຈັດໄປ ໂດຍກອງທະຫານຂອງກະສັດສະວິເດນທີ່ມີອາວຸດແລະການຈັດຕັ້ງດີ.

ພະເຈົ້າປີເຕີທີ I, ບຸກຄົນທີ່ບໍ່ທໍ້ຖອຍ ໄດ້ຖອດຖອນ ບົດຮຽນທີ່ຈຳເປັນຈາກການປະລາໄຊນີ້. ໃນບໍ່ຊ້າ ເຂົາກໍໄດ້ຈັດຕັ້ງກອງທັບຂຶ້ນໃຫມ່ ແລະເລີ່ມສ້າງກອງທັບເຮືອລັດເຊຍຂຶ້ນ. ກອງທະຫານປະຈຳການ ທີ່ເປັນກອງທັບປະກອບອາວຸດ ເປັນຢ່າງດີກໍໄດ້ຖືກຈັດຕັ້ງຂຶ້ນແທນກອງທະຫານຂອງຊຸນນາງ ຢູ່ໃນລັດເຊຍ. ຢູ່ໃນກອງທັບນີ້ໄດ້ມີລະບຽບວິໄນອັນເຂັ້ມງວດຄວບ

ຊຸມ. ເພື່ອຮັກສາແລະປະກອບອາວຸດ ໃຫ້ແກ່ກອງທັບ ແລະ ສ້າງກອງທັບເຮືອຂຶ້ນນັ້ນ ມັນຈຳເປັນຕ້ອງມີກອງທຶນໃຫຍ່ເຊິ່ງ ກອງທຶນດັ່ງກ່າວນີ້ ຈຳຕ້ອງໄດ້ເກັບມາຈາກ ປະຊາຊົນ ແລະ ໂດຍສະເພາະກໍແມ່ນຊາວນາໃນລັກສະນະແບບຂຶ້ນພາສີ.

ພະເຈົ້າປີເຕີທີ ຢູ່ໃນສະຖານທີ່ສ້າງເຮືອ.ຕົ້ນສະຕະວັດທີ XVIII.

ໃນຕົ້ນສະຕະວັດທີ XVIII ກອງທັບລັດເຊຍ ໄດ້ທຳການ ໂຈມຕີກອງທະຫານສະວິເດນ ແລະກໍໄດ້ຮັບ ໄຊຊະນະ ຢ່າງ ຫມັ້ນຄົງຢູ່ເທິງຮີມຝັ່ງທະເລບັນຕິກ.ພະເຈົ້າປີເຕີທີ I ໄດ້ສັ່ງ ໃຫ້ສ້າງເມືອງປ້ອມຄ້າຍ ເປເຕລະບຸກ ຂຶ້ນຢູ່ທີ່ປາກແມ່ນ້ຳເນ ວາ. ການສ້າງເມືອງເປເຕລະບຸກ (ດຽວນີ້ ເປັນເລນິນກະ ລາດ) ໄດ້ດຳເນີນໄປໃນສະພາບການທີ່ຫຍຸ້ງຍາກເປັນພິເສດ.

ທາດກະສິກອນທີ່ໄດ້ລະດົມມາຈາກທົ່ວລັດເຊຍ ມີຈຳນວນສິບໆ ພັນຄົນນັ້ນ ໄດ້ຕາຍໄປຍ້ອນການເຈັບປ່ວຍແລະການເຮັດວຽກໜັກ, ແຕ່ວ່າເມືອງກໍໄດ້ຖືກສ້າງຂຶ້ນ. ເມືອງນີ້ໄດ້ກາຍເປັນນະຄອນຫລວງຂອງລັດລັດເຊຍ.

ການທີ ໑໒, ກະສັດສະວີເດນ ບໍ່ຍອມຮັບການ ປະລາໄຊ ແລະກໍໄດ້ສົ່ງກອງທັບເຂົ້າສູ່ອູກະລາອີນາ ໂດຍຜ່ານໂປໂລຍ. ຢູ່ທີ່ອູກະລາອີນານັ້ນ ເຂົາຫວັງວ່າຈະໄດ້ຮັບ ການສະໜັບສະໜູນຈາກເຈົ້າທີ່ດິນໃຫຍ່ແຫ່ງອູກະລາອີນາ ແລະ ທຳການບຸກໂຈມຕີກອງທະຫານລັດເຊຍ. ແຕ່ວ່າຄວາມຫວັງຂອງພະເຈົ້າການທີ ໑໒ ນັ້ນກໍບໍ່ໄດ້ສົມກັບຄວາມຕັ້ງໃຈ. ເຂົາໄດ້ຮັບການສະໜັບສະໜູນຈາກກຸ່ມຂະບົດຂອງປະຊາຊົນ ອູກະລາອີນາພຽງແຕ່ກຸ່ມນ້ອຍໆເທົ່ານັ້ນ.

ໃນປີ ໑໗໐໙ ໄດ້ເກີດມີການສູ້ຮົບກັນຂຶ້ນ ລະຫວ່າງ ກອງທະຫານສະວີເດນກັບກອງທະຫານລັດເຊຍ ໃນເຂດທີ່ ໃກ້ ໆ ເມືອງໂປນຕາວາ. ພະເຈົ້າປີເຕີທີ I ,ຜູ້ບັນຊາການ ກອງທະຫານໄດ້ສັ່ງໃຫ້ສ້າງຖານທີ່ໝັ້ນສະໜາມຂຶ້ນ ທີ່ບໍ່ໃຫຍ່ປານໃດ ຢູ່ໜ້າປ້ອມຄ້າຍທະຫານລັດເຊຍ.ຂະບວນອັນແໜ້ນໜາກອງທະຫານສະວີເດນທີ່ມາໂຈມຕີນັ້ນໄດ້ຖືກຕີໃຫ້ແຕກໄປ ໃນເວລາມີການປະທະກັນຄັ້ງທຳອິດ ກັບຖານທີ່ໝັ້ນປ້ອງກັນແລະກອງກຳລັງສ່ວນໃຫຍ່ຂອງລັດເຊຍ ກໍເຮັດໃຫ້ກອງທະຫານສະວີເດນແຕກກະຈາຍກັນໄປ.

ໂດຍໄດ້ຮັບການສະໜັບສະໜູນ ຈາກການຍິງ ຂອງກອງ

ປືນໃຫ່ຍ, ທະຫານລັດເຊຍກໍໄດ້ເຂົ້າບຸກໂຈມຕີແລະໃນເວລາດຽວກັນນັ້ນ ກອງທະຫານມ້າກໍເຂົ້າໂຈມຕີ ຈາກທັງສອງປີກ. ກອງພົນທະຫານສະວີເດນບໍ່ສາມາດທົນທານຕໍ່ການ ຕໍ່ສູ້ນັ້ນໄດ້ຈຶ່ງເລີ່ມຖອຍກັບ. ຈາກການໄລ່ຕິດຕາມກອງທະຫານສັດຕູນັ້ນ, ທະຫານລັດເຊຍກໍຍຶດຊະເລີຍເສິກໄດ້ຫລາຍກວ່າ ໑໗ ພັນຄົນ. ການຕໍ່ສູ້ກັນຄັ້ງນັ້ນ ໄດ້ກິນເວລາດົນນານສອງຊົ່ວໂມງ ປາຍ. ຍ້ອນຄວາມກ້າຫານຂອງທະຫານ ແລະ ຄວາມສະຫລາດ ສະຫລຽວຫາງທະຫານຂອງພະເຈົ້າປີເຕີທີ I ນັ້ນພັນຈຶ່ງອຳນວຍໃຫ້ກອງທະຫານລັດເຊຍ ໄດ້ຮັບໄຊຊະນະອັນເດັດຂາດໃນຂັ້ນຮົບ ໂປນຕາວາ.

ສອງສາມປີຕໍ່ມາ ກອງທັບເຮືອລັດເຊຍ ທີ່ຫນຸ່ມນ້ອຍ ກໍໄດ້ເອົາຊະນະກອງເຮືອລົບຂອງສະວີເດນ.ດັ່ງນັ້ນດິນແດນຣິມຝັ່ງທະເລບັນຕິກລະຫວ່າງປາກແມ່ນ້ຳດະວີນາ ຕາເວັນຕົກໄປຫາແມ່ນ້ຳເນວາ ຈຶ່ງໄດ້ເຂົ້າຢູ່ໃນສ່ວນປະກອບຂອງລັດເຊຍຢ່າງສົມເຊີງ.

ໃນໄລຍະ ໒໕ ປີທຳອິດຂອງສະຕະວັດທີ XVIII ການຂຸດຄົ້ນທາດເຫລັກ ກໍໄດ້ເພີ່ມທະວີຂຶ້ນຢູ່ໃນລັດເຊຍ. ຢູ່ໃນອູລານ ແລະສະຖານທີ່ອື່ນໆຂອງປະເທດ ກໍໄດ້ມີວິສາຫະກິດໂລຫະກິດໃຫມ່ປາກົດຕົວຂຶ້ນ. ພວກທາດກະສິກອນ ໄດ້ເຮັດວຽກຢູ່ໃນບໍ່ແຮ່, ບໍ່ຖ່ານຫີນ ແລະໃນເຕົາຫລອມເຫລັກ.ຕາມຄຳສັ່ງຂອງພະເຈົ້າຊານັ້ນ ເຂົາໄດ້ເຕົ້າໂຮມເອົາຊົນນະບົດທັງຫມົດ ໄປຜູກພັນກັບໂຮງງານແລະບໍ່ແຮ່. ຊາວນາທີ່ໄດ້ຜູກພັນຢູ່ກັບໂຮງ

ງານນັ້ນແລ້ວ ໄດ້ມີຊົ່ວໂມງານ. ຊີວິດຂອງພວກເຂົາ ແມ່ນມີຄວາມຫນັກຫນ່ວງຫລາຍກ່ວາພວກທາດກະສິກອນຢູ່ໃນຊົນນະບົດອີກ.

ການຂະຫຍາຍຕົວທາງດ້ານອຸດສາຫະກຳ ແລະ ການຄ້າ ແລະການຈັດຕັ້ງກອງທັບເຮືອແລະກອງທັບບົກນັ້ນ ແມ່ນ ຮຽກຮ້ອງຕ້ອງການຜູ້ຄົນທີ່ຮູ້ຫນັງສື. ດັ່ງນັ້ນ ສະຖາບັນການສຶກສາໃຫມ່ ຈຶ່ງໄດ້ເປີດຂຶ້ນຢູ່ໃນລັດເຊຍ.ໃນປີ ໑໗໒໕ ສະພາ ບັນດິດວິທະຍາສາດ ກໍໄດ້ຮັບການຈັດຕັ້ງຂຶ້ນ ຢູ່ທີ່ເມືອງເປເຕລະບູກ ເຊິ່ງໄດ້ກາຍເປັນສູນກາງຄົ້ນຄວ້າຂອງປະເທດ.ຕາມຄຳສັ່ງຂອງພະເຈົ້າປີເຕີທີ I ນັ້ນ ຄະນະສຳຫລວດວິທະຍາສາດໄດ້ຖືກສົ່ງໄປຍັງຫລາຍພາກສ່ວນຂອງປະເທດ.ຫນັງສືຈຳນວນຫລວງຫລາຍທາງດ້ານຄະນິດສາດ, ດາລາສາດ,ການແພດ, ປະຫວັດສາດ ກໍໄດ້ຮັບການຈັດພິມຂຶ້ນ ຢູ່ໃນລັດເຊຍແລະຫນັງສືພິມລັດເຊຍສະບັບທຳອິດກໍໄດ້ເລີ່ມປາກົດອອກມາ.

ພະເຈົ້າປີເຕີທີ I ໄດ້ປະຕິຮູບການປົກຄອງປະເທດ. ແທນທີ່ຈະມີສະພາຊຸມນາງ ເຂົາກໍໄດ້ຈັດຕັ້ງສະພາສູງຂຶ້ນ(ຊີເນດ) ເຊິ່ງປະກອບດ້ວຍສະມາຊິກ ໙ ຄົນ. ເພື່ອໃຫ້ຄວາມສະດວກແກ່ການປົກຄອງນັ້ນ ປະເທດຕ້ອງແບ່ງອອກເປັນແຂວງ. ສະຖາບັນສູນກາງແຕ່ເກົ່າທີ່ເອີ້ນວ່າ ປະລິກາຊິ (ກະຊວງ)ເຊິ່ງມີຈຳນວນຮອດ ໕໐ ກະຊວງນັ້ນ ໄດ້ຖືກນຳເອົາລະບົບ ເປັນຄະນະມາໃຊ້ແທນ. ຄະນະຫນຶ່ງແມ່ນໄດ້ຮັບຜິດຊອບດ້ານພາສີ, ອີກຄະນະຫນຶ່ງຮັບຜິດຊອບດ້ານວຽກງານຕ່າງປະເທດແລະຄະ

ນະຕໍ່ໄປກໍຮັບຜິດຊອບການຂຸດຄົ້ນແຮ່ທາດ ແລະອື່ນໆ. ບັນດາຫົວໜ້າຄະນະ (ເບື້ອງຕົ້ນມີ ໑໐ ຄະນະ), ກອງທັບບົກແລະກອງທັບເຮືອ ຕ້ອງຖືກນຳພາໂດຍຂຸນນາງ ທີ່ຈົງຮັກພັກດີຕໍ່ພະເຈົ້າຊາ. ພະເຈົ້າປີເຕີທີ I ໄດ້ສະໜັບສະໜູນ ພວກພໍ່ຄ້າແລະເຈົ້າຂອງໂຮງຈັກໂຮງງານ. ເຂົາໄດ້ເຂົ້າໃຈວ່າການຄ້າແລະການອຸດສາຫະກຳໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ປະເທດຊາດ. ອຳນາດຂອງພະເຈົ້າຊາ ແມ່ນສົມບູນທຸກຢ່າງ. ພະເຈົ້າປີເຕີທີ I ໄດ້ຮັບຮອງເອົາຕຳແໜ່ງພະເຈົ້າ ຈັກກະພັດເຊິ່ງໄດ້ເຮັດໃຫ້ລະບອບອັດຕາທິປະໄຕ ຂອງລັດເຊຍມີຄວາມເຂັ້ມແຂງຕໍ່ໄປ. ລັດລັດເຊຍທີ່ມີກຳລັງເຂັ້ມແຂງນັ້ນ ເວລານີ້ໄດ້ເອີ້ນວ່າ ຈັກກະພົດລັດເຊຍໄປແລ້ວ ແລະ ມັນກໍໄດ້ເກີດມີບົດບາດຂັ້ນຢູ່ໃນວົງການຂອງໂລກ.

ເຖິງຢ່າງໃດກໍຕາມ ປະຊາຊົນຜູ້ທີ່ໄດ້ເຮັດໃຫ້ ລັດເຊຍ ມີຄວາມຍິ່ງໃຫຍ່ແລະມີອຳນາດເຂັ້ມແຂງດ້ວຍເຫື່ອແຮງ, ຄວາມສະຫລຽວສະຫລາດແລະເລືອດເນື້ອຂອງຕົນນັ້ນ ກໍບໍ່ໄດ້ ມີສິດຫຍັງ.

ລະບົບທາດກະສິກອນທີ່ເຮັດໃຫ້ຊາວນາແບກຫາບວຽກງານອັນໜັກແລະເສຍພາສີຫລາຍຢ່າງນັ້ນ ຊ້ຳພັດຖືກກີດກັນ ບໍ່ໃຫ້ເຂົ້າໄປຮ່ວມໃນຊີວິດການເມືອງຂອງປະເທດເລີຍ. ຄວາມພະຍາຍາມຂອງພວກທາດກະສິກອນ ແລະ ພວກທາດກຳມະກອນທີ່ລຸກຮືຂຶ້ນນັ້ນ ກໍໄດ້ຖືກປາບປາມລົງຢ່າງຮຸນແຮງ. ລະບອບອັດຕາທິປະໄຕ ກໍໄດ້ພະຍາຍາມທີ່ຈະຮັກສາປະຊາຊົນຜູ້ອອກແຮງ

ງານໄວ້ຢູ່ໃນຄວາມມືດມົນ ແລະຄວາມໂງ່ຈ້າ.ແລະມີແຕ່ດ້ວຍການເຮັດວຽກຢ່າງຂະຫຍັນຂັນແຂງ ແລະຢ່າງບໍ່ຢຸດບໍ່ຢັ້ງເທົ່ານັ້ນ ບຸກຄົນທີ່ມີມັນສະຫມອງດີບາງຄົນ ຈຶ່ງໄດ້ຮັບການ ສຶກສາແລະຍຶດເອົາວຽກງານຄົ້ນຄວ້າວິທະຍາສາດເປັນອາຊີບໄດ້.

ໃນປີ ໑໗໑໑ ມິຄາອິນ ວາຊິນເຢວິດ ໂລໂມໂນຊົບ ໄດ້ເກີດຢູ່ໃນຄອບຄົວຂອງຊາວຫາປາຣິມຝັ່ງທະເລ.ເດັກນ້ອຍຄົນນີ້ໄດ້ໃຫຍ່ຂຶ້ນຢູ່ໃນບ້ານຣິມຝັ່ງທະເລຂາວ ແລະກໍໄດ້ຊ່ອຍພໍ່ໃນວຽກງານຫາປາອັນຫນັກຫນ່ວງ ແລະອັນຕະລາຍ.ມິຄາອິນ ມີຈິດໃຈຢາກຮູ້ຢາກເຫັນແລະກໍອ່ານຫນັງສື ທີ່ເອົາຫາມາໄດ້ທັງຫມົດ. ເອົາເປັນບຸກຄົນທີ່ມີຄວາມສາມາດເປັນພິເສດ, ບໍ່ມີຄວາມພໍໃຈຕໍ່ຄວາມຢາກຮູ້ຢາກເຫັນ ທີ່ມີຢູ່ໃນບ້ານນ້ອຍໆນັ້ນ. ເມື່ອອາຍຸໄດ້ ໑໙ ປີ ເອົາກໍເດີນທາງເຂົ້າໄປສູ່ເມືອງມົດສະກູ ເຊິ່ງກໍໄດ້ເຂົ້າໂຮງຮຽນຢູ່ທີ່ເມືອງນີ້ ແລະ ກໍໄດ້ ອ້າງວ່າລາວເປັນລູກຊາຍຂຸນນາງ. ເດັກຫນຸ່ມຄົນນີ້ໄດ້ຈຳກັດຕົນເອງຕໍ່ທຸກສິ່ງທຸກຢ່າງ ບາງຄັ້ງກໍກິນເຂົ້າຈີ່ກັບນ້ຳເທົ່ານັ້ນ.ໂລໂມ-ໂນຊົບ ໄດ້ສະແດງຄວາມສາມາດທີ່ດີເດ່ນຂອງເອົາອອກມາຄືພາຍໃນຫນຶ່ງປີເທົ່ານັ້ນ ເອົາກໍຮຽນຫລັກສູດ ສີ່ ປີຈົບ, ແລະໄດ້ຖືກສົ່ງໄປຮຽນຕໍ່ທີ່ເມືອງເປເຕລະບຸກແລ້ວກໍໄປ ຕ່າງປະເທດ. ເມື່ອກັບຄືນມາສູ່ບ້ານເກີດເມືອງນອນແລ້ວ ເອົາກໍໄດ້ອຸທິດສະຕິປັນຍາ ຂອງເອົາທັງຫມົດ ຕໍ່ການຄົ້ນຄວ້າ ວິທະຍາສາດລັດເຊຍ.ເປັນການຍາກທີ່ຈະໄປກ່າວເຖິງຄວາມຮູ້ ຂອງຜູ້ຄົນດ້ານໃດ ດ້ານຫນຶ່ງ ໄດ້ ທີ່ວ່າ ໂລໂມໂນຊົບ ກໍສາມາດ

ນັກປາດລັດເຊຍຜູ້ຍິ່ງໃຫຍ່ ມ.ວ.ໂລໂມໂນສົບ
ພວມເຮັດວຽກ.ກາງສະຕະວັດທີ XVIII.

ບໍ່ໄດ້ ສ້າງມັນໃຫ້ຮັ່ງມີຂຶ້ນມາ ດ້ວຍວຽກງານຂອງເຂົາ.

ການຄົ້ນພົບອັນຍິ່ງໃຫຍ່ຂອງເຂົາ ໃນດ້ານເຄມີ, ຟີຊິກ , ແລະດາລາສາດ, ການປະກອບສ່ວນອັນກວ້າງໃຫຍ່ຂອງເຂົາ ຕໍ່ການຄົ້ນຄວ້າວິສະວະກຳ, ການຄົ້ນຄວ້າຢູ່ໃນເຂດ ອັນຫ່າງໄກຂອງລັດເຊຍ ແລະຄວາມພະຍາຍາມຂອງເຂົາ ທີ່ຈະ ຂະຫຍາຍມັນໃຫ້ກວ້າງຂວາງອອກທັງຫມົດເຫລົ່ານີ້ ແມ່ນໄດ້ເຮັດໃຫ້ ໂລໂມໂນຊົບ ເຂົ້າໄປຢູ່ໃນຖັນແຖວຂອງນັກວິທະຍາສາດທີ່ມີຊື່ສຽງທີ່ສຸດໃນໂລກ. ເຂົາໄດ້ກະທຳຫລາຍສິ່ງຫລາຍຢ່າງ ເພື່ອຂະຫຍາຍການສຶກສາຢູ່ໃນປະເທດ.ເຂົາໄດ້ແຕ່ງຫລັກໄວຍາກອນພາສາລັດເຊຍຂຶ້ນຄັ້ງທຳອິດ ແລະໄດ້ຂຽນປຶ້ມ ແບບ

ຮຽນພາສາລັດເຊຍຫລາຍຫົວຂຶ້ນ. ຕາມຄຳລິເລີ່ມ ຂອງລາວ ມະຫາວິທະຍາໄລລັດເຊຍແຫ່ງທຳອິດ ກໍໄດ້ເປີດຂຶ້ນ ທີ່ເມືອງມົດສະກູໃນປີ ໑໗໕໕. ຕາມຄຳຮຽກຮ້ອງ ຂອງນັກ ວິທະຍາສາດຜູ້ຍິ່ງໃຫຍ່ນີ້, ມະຫາວິທະຍາໄລດັ່ງກ່າວ ບໍ່ໄດ້ຈຳກັດໃຫ້ແຕ່ລູກຂອງພວກຂຸນນາງເຂົ້າຮຽນເທົ່ານັ້ນ. ໂລໂມໂນຊົບໄດ້ກ່າວຢືນຢັນໄວ້ວ່າ "ນັກສຶກສາຜູ້ທີ່ວ່າມີກຽດຫລາຍກວ່າຫມູ່ໄດ້ແກ່ນັກສຶກສາຜູ້ຮຽນຫລາຍທີ່ສຸດ ຢູ່ໃນມະຫາວິທະຍາໄລນີ້ສ່ວນທີ່ວ່າເຂົາຈະເປັນລູກຊາຍຂອງໃຜນັ້ນ ແມ່ນບໍ່ມີຄວາມ ສຳຄັນເລີຍ". ໃນບໍ່ຊ້າມະຫາວິທະຍາໄລເມືອງມົດສະກູກໍກາຍເປັນສູນກາງວິທະຍາສາດແລະວັດທະນະທຳແຫ່ງລັດເຊຍ. ມະຫາວິທະຍາໄລມົດສະກູທີ່ມີຊື່ວ່າ ມິຄາອິນ ໂລໂມໂນຊົບ ເຊິ່ງໄດ້ເກີດຂຶ້ນມາ ໒໐໐ ກວ່າ ປີນັ້ນ ແມ່ນໄດ້ ອົບຮົມ ຮຸ່ນຄົນຫລາຍຮຸ່ນໃຫ້ເປັນນັກວິທະຍາສາດທີ່ມີຊື່ສຽງ.

ໃນສະຕະວັດທີ XVIII ບັນດາບຸກຄົນ ທີ່ ມີມັນສະຫມອງດີ ເຊິ່ງເກີດຂຶ້ນມາຈາກຄອບຄົວທີ່ຕ່ຳຕ້ອຍ ກໍໄດ້ມີຊື່ສຽງ. ນັກສະແດງລະຄອນ, ນັກແຕ້ມ ແລະນັກສະຖາປະນິກທີ່ເປັນທາດກະສິກອນກໍໄດ້ເປັນບຸກຄົນທີ່ມີຊື່ສຽງ ໃນທາງສິລະປະຂຶ້ນ. ບັນດານັກທ່ອງທ່ຽວຊາວລັດເຊຍຜູ້ກ້າຫານ ກໍໄດ້ຄົ້ນພົບດິນແດນໃຫມ່ ແລະເສັ້ນທາງໄປສູ່ພາກເຫນືອ ແລະຕາເວັນອອກໄກ. ນັກປະດິດຊື່ ອີວານ ອີວາໂນວິດ ໂປນຊູນົບ ທີ່ດຳລົງຊີວິດແລະເຮັດວຽກຢູ່ທີ່ຊູບີລີກໍເປັນຄົນທີ່ມີຊື່ສຽງຂຶ້ນມາ. ເຂົາເປັນ ລູກຊາຍຂອງທະຫານ ແລະບໍ່ໄດ້ຮັບການສຶກສາ ຮ່ຳຮຽນ ຫຍັງເລີຍ.

ໂດຍພະຍາຍາມ ທີ່ຈະລຶດຜ່ອນແຮງງານ ອັນໜັກໜ່ວງຢູ່ໃນໂຮງງານບໍ່ແຮ່ນັ້ນລົງ, ອີ.ອີ. ໂປນຊູນິບ ກໍໄດ້ປະດິດ ແລະສ້າງກົນຈັກໃຊ້ອາຍນ້ຳຂຶ້ນມາ. (ເຄື່ອງຈັກນີ້ ໄດ້ຜະລິດ ຂຶ້ນມາກ່ອນ ເຈມສະວັດ ໒໐ ປີ ທີ່ຜະລິດເຄື່ອງຈັກປະເພດນີ້ຂຶ້ນຢູ່ທີ່ອັງກິດ). ແຕ່ວ່າເຈົ້າຂອງໂຮງງານ ແລະອາດຍາສິດລັດເຊຍກໍບໍ່ໄດ້ໃຫ້ຄວາມສົນໃຈຕໍ່ການຜະລິດຂອງໂປນຊູນິບເລີຍ. ຈະມີຄວາມຈຳເປັນຫຍັງທີ່ຈະມີເຄື່ອງຈັກອັນ ໃນປະເທດ ໃນເມື່ອມີຂ້າທາດ ຜູ້ເຊິ່ງມີວາສະໜາ ໄດ້ຖືກໃຊ້ໃຫ້ ເຮັດວຽກໜັກນັ້ນມີພຽງພໍຢູ່ !

ນັກປະດິດລັດເຊຍຜູ້ດີເດັ່ນ ກໍໄດ້ຕາຍໄປ ແລະ ເຄື່ອງຈັກຂອງເຂົາອັນເປັນຜົນສຳເລັດທີ່ຍິ່ງໃຫຍ່ ທາງດ້ານເຕັກນິກນັ້ນກໍໄດ້ຖືກລືມໄປ.

ໃນ ໕໐ ປີຫລັງຂອງສະຕະວັດທີ XVIII ນັ້ນຈຳນວນທາດກຳມະກອນກໍໄດ້ເພີ່ມຂຶ້ນຢູ່ໃນຈັກກະພັດລັດເຊຍ.ໃນຕົ້ນສະຕະວັດນັ້ນ ໄດ້ມີໂຮງຈັກໂຮງງານຢູ່ປະມານ ໒໐໐ ແຫ່ງ,ຄັນມາຮອດທ້າຍສະຕະວັດທີXVIIIນັ້ນ ໂຮງຈັກໂຮງງານນັ້ນ ກໍໄດ້ເພີ່ມຂຶ້ນຫລາຍກ່ວາ ໑໐໐໐ ແຫ່ງ. ເມືອງໃໝ່ ໄດ້ເກີດຂຶ້ນ, ເມືອງເກົ່າກໍໄດ້ຂະຫຍາຍອອກໄປ.ຄວາມຮຽກຮ້ອງຕ້ອງການທາງດ້ານສະບຽງອາຫານ ກໍໄດ້ມີເພີ່ມຂຶ້ນສຳລັບພົນລະເມືອງຂອງບ້ານແລະເມືອງ ໃນເຂດທີ່ໂຮງຈັກໂຮງງານ ຂະຫຍາຍຕົວອອກ. ຕ່າງປະເທດໄດ້ມີຄວາມຮຽກຮ້ອງຕ້ອງການ ເຂົ້າແລະປ່ານປໍຈາກລັດເຊຍຫລາຍຂຶ້ນຄືກັນ. ພວກເຈົ້າທີ່ດິນໃຫຍ່

ກໍໄດ້ຮັ່ງມີຫລາຍຂຶ້ນ ດ້ວຍການຂາຍເຂົ້າແລະຜະລິດຕະພັນອື່ນ ອື່ນທາງດ້ານກະເສດທີ່ພວກທາດກະສິກອນ ໄດ້ຜະລິດອອກ . ພວກເຂົາໄດ້ເພີ່ມອັດຕາເຮັດວຽກ ໃຫ້ແກ່ຊາວນາຂຶ້ນເຖິງ ຝ ມື້ໃນໜຶ່ງອາທິດ. ມີແຕ່ກາງຄືນເທົ່ານັ້ນ ທີ່ຊາວນາ ສາມາດ ເຮັດວຽກໃນທີ່ດິນຂອງຕົນໄດ້ ແລະພາສີກໍໄດ້ເພີ່ມຂຶ້ນ ຄືກັນ. ຊາວນາໄດ້ດຳລົງຊີວິດຢູ່ຢ່າງຮ້າຍແຮງທີ່ສຸດ. ພວກເຈົ້າທີ່ດິນ ໃຫຍ່ໄດ້ຂາຍພວກເຂົາໄປ ເອົາມາເປັນຄ່າຫລິ້ນໄພ້ ແລະໄດ້ ທຸບຕີຊາວນາໄປຢ່າງໂຫດຮ້າຍທາລຸນ ແລະ ໄດ້ລົງໂທດພວກ ເຂົາໄປດ້ວຍການໃຫ້ເຮັດວຽກໜັກ ໂດຍບໍ່ມີຄຳຕັດສິນ ຂອງ ສານ.

ພວກຊາວນາຜູ້ທີ່ໄດ້ຖືກຂັບໄລ່ໄປຈົນໝົດຫວັງຢູ່ໃນບ່ອນຫັ້ນ ແລະບ່ອນນັ້ນ ກໍໄດ້ຂ້າພວກເຈົ້າທີ່ດິນແລ້ວ ກໍໜີເຂົ້າສູ່ ປ່າ ຕຶບໄປ. ພວກເຂົາໄດ້ກຽດຊັງເຈົ້າທີ່ດິນ ຜູ້ກົດຂີ່ຂົ່ມເຫັງຢ່າງ ໂຫດຮ້າຍທາລຸນ ແຕ່ກໍໄດ້ເຊື່ອວ່າ ຄົງຈະມີພະເຈົ້າຊາຜູ້ດີ ທີ່ ຈະມາປົດປ່ອຍປະຊາຊົນ ໃນມື້ໃດມື້ໜຶ່ງ.ພວກເຂົາບໍ່ເຂົ້າໃຈ ວ່າພະເຈົ້າຊາເປັນເຈົ້າທີ່ດິນໃຫຍ່ ແລະເປັນຜູ້ກົດຂີ່ຂົ່ມເຫັງ.

ໃນເວລານັ້ນ ໄດ້ມີຊາວໂກຊັກ ຜູ້ທີ່ອາໄສຢູ່ຣິມແມ່ນ້ຳ ອູ-ລານໄດ້ປະກາດຕົວເອງຂຶ້ນມາວ່າເປັນພະເຈົ້າຊາ ປີເຕີທີIII ເຂົາໄດ້ເວົ້າວ່າ ພວກຂຸນນາງ ໄດ້ພະຍາຍາມ ຈະຂ້າເຂົາ ເພາະວ່າເຂົາຕ້ອງການປົດປ່ອຍປະຊາຊົນ.ເຂົາໄດ້ຮຽກຮ້ອງ ຕໍ່ປະຊາຊົນໃຫ້ມາຕໍ່ສູ້ຕ້ານພວກຂຸນນາງ ໂດຍໄດ້ໃຫ້ ຄຳໝັ້ນ ສັນຍາວ່າຈະໃຫ້ອິສະລະພາບແກ່ປະຊາຊົນ ຜູ້ອອກ ແຮງງານ

ແລະຄົນໄດ້ຍຶດທີ່ດິນຈາກເຈົ້າທີ່ດິນໄດ້ແລ້ວ ກໍຈະແບ່ງປັນທີ່ດິນນັ້ນໃຫ້ແກ່ຊາວນາ.

ໃນທາງທີ່ແທ້ຈິງແລ້ວ ເຂົາບໍ່ແມ່ນພະເຈົ້າຊາ ແຕ່ ຫາກເປັນຊາວກາຊັກ ສາມັນຄົນໜຶ່ງ ຊື່ ເຢເມລຽນ ອີວາໂນວິດ ປູກາເຊັບ. ເຂົາເອີ້ນຕົວເອງວ່າ ພະເຈົ້າຊາ ກໍເພື່ອວ່າໃຫ້ຜູ້ຄົນທັງຫລາຍໄດ້ຕິດຕາມໄປນຳເຂົາຫລາຍຂຶ້ນ.

ໃນປີ ໑໗໗໓ ກອງທັບຊາວນາທີ່ມີຈຳນວນພົນຫລວງຫລາຍ ເຊິ່ງມີ ເອ.ອີ. ປູກາເຊັບ ເປັນຜູ້ນຳພານັ້ນກໍໄດ້ເຄື່ອນໄຫວໄປສູ່ໃຈກາງຂອງລັດເຊຍ.ໄປຕາມທາງນັ້ນ ພວກທາດກຳມະກອນທີ່ມາຈາກໂຮງງານອູລານ ກໍໄດ້ເຂົ້າຮ່ວມກັບພວກ ລູກຮີຂຶ້ນ. ພວກຊາວນາທີ່ຖືກກົດຂີ່ຂົ່ມເຫັງ ໃນບໍລິເວນແມ່ນ້ຳໂວນກາເຊັ່ນ-ບາສະກີລະ, ຕາຕາລີ, ມາລີຊູວາຊິ ກໍໄດ້ ຫລັ່ງໄຫລເຂົ້າມາສູ່ກອງທັບຂອງ ປູກາເຊັບ. ພວກເຂົາ ເຂົ້າໃຈວ່າພວກເຂົາແລະຊາວນາລັດເຊຍ ມີສັດຕູໂຕດຽວກັນ ຄື ຊຸນນາງເຈົ້າທີ່ດິນ. ໃນເດືອນທັນວາປີ ໑໗໗໓ ກອງທັບຂອງ ປູກາເຊັບກໍໄດ້ມີຈຳນວນພົນຮອດ ໓໐ ພັນຄົນ.ພວກລູກຮີຂຶ້ນໄດ້ຍຶດເອົາຄ້າຍທະຫານ ແລະເມືອງຕ່າງໆໄດ້ຫລາຍແຫ່ງ.ຢ່າງໃດກໍຕາມກອງທັບຂອງ ປູກາເຊັບ ກໍຄືກັນກັບກອງທັບຂອງລາຊິນ ເຊິ່ງມີການຈັດຕັ້ງບໍ່ແໜ້ນໜາ.ກຳລັງກອງທັບສ່ວນໃຫຍ່ໄດ້ມາເຕົ້າໂຮມກັນຢູ່ໃກ້ເມືອງ ໂອເລນບູກ ເຊິ່ງພວກເຂົາໄດ້ປິດລ້ອມໄວ້ເປັນເວລາຫົກເດືອນ,ສ່ວນກອງທະຫານອື່ນໆທີ່ຕັ້ງຢູ່ໃນບ່ອນອື່ນນັ້ນ ກໍບໍ່ໄດ້ມີການຕິດຕໍ່ກັນຢ່າງດີ ແລະ ກໍທັງ

ເກືອບບໍ່ມີກອງບັນຊາການຮ່ວມກັນ ພວກເຂົາສັ່ງການ ໄປຄົນລະທິດຄົນລະທາງ. ດັ່ງນັ້ນຈຶ່ງໄດ້ມີສູນກາງການລຸກຮື້ຂຶ້ນແຍກຍ້າຍກັນຢູ່ຫລາຍບ່ອນ. ພວກລຸກຮື້ຂຶ້ນກໍບໍ່ມີອາວຸດທີ່ເໝາະສົມ ແລະກໍທັງບໍ່ມີຄວາມຮູ້ທາງດ້ານທະຫານອີກດ້ວຍ. ຄືກັນກັບສະໄຫມຂອງ ລາຊິນ, ພວກຜູ້ນຳຂອງການລຸກຮື້ຂຶ້ນກໍບໍ່ໄດ້ມີໂຄງການທາງການເມືອງຢ່າງຈະແຈ້ງ.



ອາວຸດທີ່ໃຊ້ໃນການລຸກຮື້ຂຶ້ນຂອງຊາວນາ. ສະຕະວັດທີ XVIII.

ພະນາງຈັກກະພັດເອກາເຕລີນທີ II ໄດ້ສົ່ງກອງທັບ ທີ່ປະກອບອາວຸດຢ່າງດີ ແລະຈຳນວນຫລວງຫລາຍ ໄປປາບ ພວກ

ຊາວນາ. ກອງກຳລັງສ່ວນໃຫ່ຍຂອງພວກລຸກຮື້ຂຶ້ນໄດ້ຖືກປາບປາມລົງ, ສ່ວນ ປູກາເຈັບນັ້ນ ໄດ້ຖືກຈັບເປັນຊະເລີຍ. ໃນປີ ໑໗໗໕ ກອງທະຫານຂອງພະເຈົ້າຊາ ກໍໄດ້ໄປປາບປາມ ສູນກາງຂອງການລຸກຮື້ຂຶ້ນອື່ນໆ. ການປາບປາມຢ່າງຮຸນແຮງໄດ້ໄດ້ເລີ່ມເກີດຂຶ້ນ. ເພື່ອຈະເຮັດໃຫ້ຊາວນາ ມີຄວາມຢ້ານກົວນັ້ນ ເຄື່ອງແຂວນຄໍພ້ອມທັງສົບຂອງພວກລຸກຮື້ຂຶ້ນ ທີ່ຖືກແຂວນຄໍນັ້ນ ກໍໄດ້ໄຫລລົງໄປຕາມນ້ຳໂວນກາ. ສ່ວນປູກາເຈັບນັ້ນໄດ້ຖືກນຳມາປະຫານຊີວິດຢ່າງຫນ້າອັບອາຍ ຢູ່ໃນເມືອງມົດສະກູ.

ພະນາງຈັກກະພັດເອກາເຕລິນທີ II ໄດ້ອອກ ຄຳສັ່ງໃຫ່ມເຊິ່ງໄດ້ເພີ່ມອຳນາດໃຫ້ແກ່ພວກເຈົ້າທີ່ດິນ ຕໍ່ຊາວນາ ຫລາຍຍິ່ງຂຶ້ນ.

ໄຊຊະນະຕໍ່ພວກສະວີເດນນັ້ນ ໄດ້ໄຂເສັ້ນທາງ ການ ຄ້າຕາມທະເລບັນຕິກໃຫ້ແກ່ພໍ່ຄ້າລັດເຊຍ. ເຮືອຂອງພວກ ພໍ່ຄ້າຈາກອັງກິດ, ໂຮນລັງແລະປະເທດອື່ນໆ ຂອງເອີລົບຕາເວັນຕົກນັ້ນ ໄດ້ເລີ່ມເດີນທາງ ເຂົ້າມາສູ່ເມືອງ ເປເຕີລະບູກ ຢູ່ເລື້ອຍໆ. ມັນເປັນການຍາກຫລາຍ ທີ່ຈະຈັດຕັ້ງ ສາຍສຳພັນທາງການຄ້າກັບບັນດາປະເທດຕາເວັນອອກ. ໃນປີ໑໔໗໕ພວກຕູລະກີໄດ້ຍຶດຄອງແຫລມກະລີມ ແລະຄັນໄດ້ຕັ້ງຖິ່ນຖານລົງຢູ່ທີ່ຣິມຝັ່ງທະເລດຳພາກເຫນືອແລ້ວ ມັນກໍເປັນການຕັດ ລັດເຊຍໃຫ້ຂາດອອກຈາກສາຍທາງທະເລຕອນໃຕ້. ພວກເຂົາໄດ້ມາບຂູ່ປະຊາຊົນລັດເຊຍ ແລະປະຊາຊົນອູກະລາອີນາດ້ວຍການຮຸກຮານຢູ່ເປັນປະຈຳ.

ໃນໄລຍະ ໕໐ ປີຫລັງ ຂອງສະຕະວັດທີ XVIII ລັດເຊຍ ໄດ້ດຳເນີນສົງຄາມກັບຕູລະກີ ເພື່ອຫາທາງອອກສູ່ທະເລດຳ. ໃນໄລຍະສົງຄາມເຫລົ່ານີ້ ກໍໄດ້ມີນາຍພົນ ທີ່ມີມັນສະຫມອງດີເລີດ ຊື່ ອາເລັກຊານເດີ ວາຊິນເຢວິດ ຊູໂວລົບ ປາກົດອອນ. ຊູໂວລົບ ຜູ້ໄດ້ເຂົ້າຮັບໃຊ້ຢູ່ໃນກອງທັບ ແຕ່ຕົ້ນຈົນຮອດຊັ້ນສູງສຸດນັ້ນ ໄດ້ເປັນບຸກຄົນທີ່ໄດ້ຮັບການສຶກສາສູງ. ເຂົາຖືວ່າຜົນສຳເລັດຂອງການປະຕິບັດການທາງທະຫານຢ່າງໃດຢ່າງຫນຶ່ງ ມັນແມ່ນອອນຢູ່ກັບຄວາມຊຳນິຊຳນານ ທາງດ້ານສົງຄາມ ຂອງທະຫານ. "ສຶກສາຫນັກ-ສູ້ຮົບແບບງ່າຍໆ", "ໂຈມຕີສັດຕູບໍ່ແມ່ນດ້ວຍມີທະຫານຫລາຍ, ແຕ່ຫາກດ້ວຍຄວາມຊຳນິຊຳນານ" -ຄຳເວົ້າເຫລົ່ານີ້ ແມ່ນເປັນຫລັກການບາງຢ່າງທີ່ຊູໂວລົບໄດ້ຂຽນໄວ້ໃນປຶ້ມຂອງເຂົາຊື່ວ່າ "ສິລະປະເອົາໄຊຊະນະ" ເຊິ່ງນັບວ່າເປັນການປະກອບສ່ວນສຳຄັນ ເຂົ້າໃນວິທະຍາການທະຫານ. ເພື່ອໃຫ້ແຕກຕ່າງໄປຈາກນາຍທະຫານຊັ້ນສູງມາຈາກຊຸມນາງເປັນສ່ວນໃຫຍ່ນັ້ນ ຊູໂວລົບ ໄດ້ຖືວ່າ ມັນມີຄວາມຈຳເປັນທີ່ຈະຕ້ອງອະທິບາຍພາລະຫນ້າທີ່ ຂອງພວກເຂົາກ່ອນຈະເຂົ້າສູ່ຮົບແກ່ພວກທະຫານຟັງກ່ອນວ່າ: ທະຫານທຸກໆຄົນ ຈະຕ້ອງເຂົ້າໃຈການຊ້ອມຮົບຂອງຕົນ" ; ເຂົາໄດ້ຕີລາຄາສູງ ຕໍ່ໄຫວພິບອັນແຫລມຄົມຂອງທະຫານລັດເຊຍ.

ຄວາມສະຫລຽວສະຫລາດ ທາງຍຸດທະສາດຂອງ ຊູໂວລົບ ແມ່ນໄດ້ແຈ່ມແຈ້ງຍິ່ງອອນ ໃນລະຫວ່າງການຍຶດປ້ອມຄ້າຍອິສະມາອິນ. ເມື່ອໄດ້ກະກຽມທີ່ຈະບຸກໂຈມຕີຕໍ່ຄ້າຍທະຫານຕູລະກີ

ທີ່ສຳຄັນນັ້ນແລ້ວ ຊູໂວລີບ ໄດ້ອອກຄຳສັ່ງ ໃຫ້ສ້າງສະຫນາມ ຝຶກພິເສດແລະປ້ອມຄ້າຍທີ່ມີລັກສະນະຄ້າຍຄືກັນກັບຄ້າຍ ຂອງ ອິສະມາອິນທີ່ສ້າງໄວ້ກ່ອນນັ້ນຂ໌ອນ.ເຂົາໄດ້ສອນໃຫ້ທະຫານປີນ ຝາແລະກຳແພງ ແລະຂ້າມຕະຄອງນ້ຳທີ່ເລິກນັ້ນ ຢູ່ຫມີຄມ໌ . ຄັນເມື່ອເຊື່ອຫມັ້ນວ່າ ກອງທະຫານກຽມພ້ອມ ທີ່ຈະບຸກໂຈມຕີ ໄດ້ແລ້ວ, ຊູໂວລີບ ກໍໄດ້ສະເຫນີໃຫ້ກອງທະຫານຕູລະກີມອບ ຄ້າຍນັ້ນແກ່ເຂົາ. ນາຍພົນທະຫານຕູລະກີໄດ້ຕອບວ່າ "ເມື່ອ ໃດຟ້າບໍ່ສະຫລາຍ ເມື່ອນັ້ນຄ້າຍອິສະມາອິນຈະບໍ່ຍອມ". ເວ ລານັ້ນພວກທະຫານລັດເຊຍກໍໄດ້ເຂົ້າບຸກໂຈມຕີ.ພວກເຂົາໄດ້ ເອົາຊະນະອຸປະສັກທຸກຢ່າງ ຢ່າງວ່ອງໄວ ແລະ ກໍເລີ່ມສູ້ກັນ ດ້ວຍມື. ການຕໍ່ຕ້ານທີ່ຫນັກຫນ່ວງຂອງກອງທະຫານຕູລະກີນັ້ນ ໄດ້ຖືກທັບມ້າງໄປ ແລະຄ້າຍອິສະມາອິນ ກໍພັງທະລາຍລົງ. ໃນບໍ່ຊ້າຫລັງຈາກນັ້ນ ກອງທະຫານເຮືອລັດເຊຍກໍໄດ້ທັບມ້າງ ກອງທະຫານເຮືອຕູລະກີຢູ່ທະເລດຳນັ້ນໄປ.ດັ່ງນັ້ນລັດເຊຍຈຶ່ງ ໄດ້ເປັນເຈົ້າຝັ່ງທະເລດຳພາກເຫນືອຕໍ່ໄປ.

ຕະຫລອດໄລຍະຊີວິດອັນຍາວນານຂອງຕົນ ຊູໂວລີບ ໄດ້ ບັນຊາການສູ້ຮົບໃຫຍ່ ໖໓ ຄັ້ງ ແລະກໍໄດ້ຮັບໄຊຊະນະ ຫມົດ ທຸກຄັ້ງ.

ພາຍຫລັງທີ່ໄດ້ເຕົ້າໂຮມເອົາຝັ່ງທະເລດຳໄວ້ໄດ້ ໃນທ້າຍ ສະຕະວັດທີXVIIIນັ້ນແລ້ວ, ຊາຍແດນທາງດ້ານທິດຕາເວັນ ຕົກຂອງຈັກກະພັດລັດເຊຍ ກໍໄດ້ຂະຫຍາຍກວ້າງອອກໄປອີກ. ເບໂລລູດເຊຍ ແລະ ລິດວາ ກໍໄດ້ເປັນພາກສ່ວນຂອງລັດລັດ

ເຊຍໄປ. ໃນທາງດ້ານທິດຕາເວັນອອກກາຊັກສະຖານ ກໍໄດ້ໂຮມເຂົ້າສູ່ລັດເຊຍຄືກັນ.

ໃນໄລຍະເວລານັ້ນ ຢູ່ທີ່ພູກາວະກາດ ກໍໄດ້ມີສະພາບການອັນຫຍຸ້ງຍາກເກີດຂຶ້ນ. ພວກຮຸກຮານຕູລະກີແລະອີລັງ ໄດ້ໂຈມຕີເຂົ້າສູ່ດິນແດນອັນຮັ່ງມີທາງດ້ານເຂດໃຕ້ ພູກາວະກາດ ຢູ່ເນື່ອງນິດແລະພວກເຂົາກໍໄດ້ຍຶດເອົາອາເຊລະໃບຊານ ແລະອາລະເມເນຍໄປ.

ໃນປີ ໑໗໙໕ ກອງທະຫານອີລັງ ກໍໄດ້ໂຈມຕີຮຸກຮານກະລູເຊຍຕາເວັນອອກຢ່າງຮ້າຍແຮງ. ຊາວກະລູເຊຍ ຫລາຍພັນຄົນໄດ້ຖືກຈັບໄປເປັນຊະເລີຍ, ຕະບິລິຊິນະຄອນຫລວງ ຂອງກະລູເຊຍກໍໄດ້ຖືກເຜົາແລະທຳລາຍໄປ.

ປະຊາຊົນຊາວກະລູເຊຍໄດ້ເຂົ້າໃຈວ່າ ພວກເຂົາ ບໍ່ ສາມາດຈະຕ້ານທານກັບສັດຕູຈຳນວນຫລວງຫລາຍນັ້ນໄດ້. ດັ່ງນັ້ນກະລູເຊຍ ຈຶ່ງຫັນໄປຂໍຄວາມຊ່ອຍເຫລືອຈາກລັດເຊຍແລະໃນປີ ໑໘໐໑ ກະລູເຊຍ ຈຶ່ງໄດ້ເຂົ້າເປັນພາກສ່ວນຫນຶ່ງຂອງຈັກກະພັບລັດເຊຍໄປ.

ເມື່ອໄດ້ໄຊຊະນະສົງຄາມກັບພວກຕູລະກີ ແລະອີລັງແລ້ວ, ດິນແດນຂອງອາເຊລະໃບຊານ, ອາລະເມເນຍ ແລະປະຊາຊາດອື່ນໆທາງດ້ານພູກາວະກາດ ກໍໄດ້ໂຮມເຂົ້າສູ່ລັດລັດເຊຍ. ດິນແດນເຫລົ່ານີ້ ໄດ້ຖືກປົກຄອງໂດຍຜູ້ສຳເລັດລາຊະການ ທີ່ໄດ້ຮັບການແຕ່ງຕັ້ງຈາກພະເຈົ້າຊາ. ສ່ວນເຈົ້າກົກ ແລະຂຸນນາງທ້ອງຖິ່ນທີ່ເປັນເຈົ້າຂອງທີ່ດິນແລະທາດກະສິກອນນັ້ນ ຍັງ

ຄົງມີອຳນາດຢູ່ຕາມເດີມ. ເຈົ້າກົກເຈົ້າເຫລົ່າ ແລະຂຸນນາງເຂດພູກາວະກາດຈຳນວນຫລວງຫລາຍ ກໍໄດ້ເຂົ້າໄປຮັບໃຊ້ຢູ່ໃນກອງທັບພະເຈົ້າຊາ ແລະໄດ້ເປັນນາຍພົນ ແລະນາຍຮ້ອຍໄປ. ເມື່ອໄດ້ເຂົ້າມາຢູ່ໃນພາກສ່ວນກອງທັບຂອງພະເຈົ້າຊາແລ້ວ, ພວກເຂົາກໍໄດ້ປາບປາມການລຸກຮືຂຶ້ນ ຂອງປະຊາຊົນຜູ້ອອກແຮງງານຢ່າງຮຸນແຮງ ທີ່ພະຍາຍາມໂຄ່ນລົ້ມແອກຄອບຄອງສອງຢ່າງຄືແອກຄອບຄອງຂອງອຳນາດພະເຈົ້າຊາ ແລະແອກຂອງເຈົ້າທີ່ດິນໃຫ່ຍຂອງຕົນ.

ຢ່າງໃດກໍຕາມ ການໂຮມກັນກັບລັດເຊຍນັ້ນ ມັນກໍໄດ້ຊ່ອຍປະຊາຊາດ ທັງເຂດເຫນືອແລະເຂດໃຕ້ ຂອງພູກາວະກາດໄດ້ຫລາຍຢ່າງນັ້ນຄື ການໂຈມຕີອັນຮ້າຍແຮງ ທີ່ມາຈາກພວກຮຸກຮານຕູລະກີແລະອີລັ່ງນັ້ນ ກໍໄດ້ຢຸຕິລົງ. ນອກນັ້ນວຽກງານເສດຖະກິດກໍໄດ້ຮັບການປັບປຸງ ແລະການຄ້າຂາຍກໍໄດ້ ຂະຫຍາຍຕົວອອກ. ຊາວກະລູເຊຍ, ອາລະເມເນຍ, ອາເຊລະໄບຊານ ແລະປະຊາຊາດອື່ນໆເຂດເຫນືອແລະເຂດໃຕ້ ພູກາວະກາດກໍໄດ້ໂຮມເຂົ້າຫາກັນກັບປະຊາຊາດລັດເຊຍ ເພື່ອຕໍ່ສູ້ຮ່ວມກັນຕ້ານພວກຜູ້ກົດຂີ່ຂົ່ມເຫັງ.

ສະຕະວັດທີ XIX ໄດ້ເລີ່ມເກີດມີຄວາມບໍ່ສະຫງົບຂຶ້ນ ຢູ່ໃນໂລກ. ກອງທະຫານຈັກກະພັດນະໂປລີອົງ ຝະລັ່ງໄດ້ຍຶດຄອງປະເທດຫນຶ່ງແລ້ວ ກໍປະເທດອື່ນອີກໃນທະວີບເອີລົບ. ເພື່ອຈະເຮັດໃຫ້ການຄອບຄອງຂອງຕົນໃນທະວີບເອີລົບ ມີຄວາມຫມັ້ນຄົງຖາວອນຂຶ້ນເປັນເທື່ອສຸດທ້າຍນັ້ນ, ນະໂປລີອົງກໍໄດ້ຕັດສິນໃຈທີ່ຈະຍຶດຄອງປະເທດລັດເຊຍ.

ໃນລະດູຮ້ອນປີ ໑໘໑໔ ກອງທັບທີ່ມີຈຳນວນພົນ ເຄິ່ງລ້ານ ຄົນຂອງນະໂປເລອົງກໍໄດ້ຂ້າມຊາຍແດນລັດເຊຍ ເຂົ້າມາ ຮຸກ ຮານດິນແດນປະເທດນີ້. ໃນເວລານັ້ນ ລັດເຊຍ ມີກອງທັບທີ່ ກຽມພ້ອມຈະຕໍ່ສູ້ໄດ້ນັ້ນ ຢູ່ພຽງແຕ່ ໒໐໐ ພັນຄົນເທົ່ານັ້ນເຊິ່ງ ຢາຍກັນຢູ່ຕາມຊາຍແດນທາງດ້ານທິດຕາເວັນຕົກ.ນະໂປເລອົງ ໄດ້ພະຍາຍາມທີ່ຈະສ້າງຄວາມຮຸນແຮງທາງດ້ານການສູ້ຮົບຂັ້ນ ຕົ້ນຕໍແກ່ກອງທະຫານລັດເຊຍ ຢູ່ໃກ້ຊາຍແດນ ທຳລາຍການສູ້ ຮົບນັ້ນແລ້ວ ກໍເຂົ້າໄປຍຶດເອົານະຄອນມົດສະກູຢ່າງບໍ່ມີຄວາມ ຍາກລຳບາກເລີຍ. ຢ່າງໃດກໍຕາມ ນາຍພົນທະຫານລັດເຊຍ ກໍຮູ້ແຜນການຂອງນະໂປເລອົງນັ້ນທັນ,ຈຶ່ງໄດ້ຖອຍກອງທະຫານ ໜີ ແລະມາເຕົ້າໂຮມກັນຢູ່ໃກ້ໆເມືອງຊະໂມລຽນສະກະເຊິ່ງ ເປັນບ່ອນທີ່ໄດ້ມີການສູ້ຮົບກັນຄັ້ງທຳອິດກັບສັດຕູ.



ມ.ອີ.ກູຕູຊົບ,ຜູ້ບັງຄັບບັນຊາກອງທັບລັດເຊຍ
ໃນສົງຄາມປ້ອງກັນປິຕຸພູມ ເມື່ອປີ ໑໘໑໔.

ນີຄາອິນ ອິນລາລີໂອໂນວິດ ກູຕູຊົບ, ນາຍພົນທີ່ສະຫລຽວສະຫລາດທັງເປັນລູກສິດ ແລະເພື່ອນຮ່ວມຮົບ ຂອງຈອມ ພົນໃຫຍ່ຊູໂວລົບ ໄດ້ເປັນຫົວໜ້າກອງທັບຂອງລັດເຊຍ. ທົ່ວປະເທດໄດ້ມີການປຸກລະດົມໃຫ້ເຂົ້າເປັນທະຫານ.ທຸກໆບາດກ້າວໄປຕາມດິນແດນລັດເຊຍນັ້ນ ແມ່ນມີຈູນຄ່າສູງແກ່ພວກຮຸກຮານ. ພຽງແຕ່ໃນຂັ້ນຮົບໃກ້ໆເມືອງຊະໂມລຽນສະກະນັ້ນ ກອງທະຫານຝະລັ່ງກໍໄດ້ຮັບຄວາມສູນເສຍໄປປະມານ ໔໐ ພັນ ຄົນ. ຍິ່ງກອງທັບຂອງນະໂປລີອົງເຄື່ອນເຂົ້າສູ່ປະເທດເລິກໄປເທົ່າໃດ ກອງທະຫານລັດເຊຍກໍຍິ່ງຕໍ່ຕ້ານໜັກຂຶ້ນເທົ່ານັ້ນ.ພົນລະເມືອງຈຳນວນຫລວງຫລາຍໃນເຂດທີ່ສັດຕູຍຶດໄດ້ນັ້ນກໍໄດ້ຖອຍໜີໄປກັບກອງທັບ ຫລືກໍໜີເຂົ້າປ່າໄປ ພ້ອມທັງ ໄດ້ທຳລາຍບ້ານເຮືອນ, ເຄື່ອງປູກຂອງຝັງແລະສັດລ້ຽງຕ່າງໆ ກ່ອນໜີໄປ. ຊາວນາລັດເຊຍ, ເບໂລລູດເຊຍ ແລະ ອູກະລາອີນາກໍໄດ້ເຂົ້າຮ່ວມໃນສົງຄາມປ້ອງກັນປິຕຸພູມ ຕ້ານພວກຮຸກຮານຕ່າງດ້າວຄືກັນ.

ເມື່ອວັນທີ ໒໖ ສິງຫາ ປີ ໑໘໑໒, ກູຕູຊົບ ໄດ້ທຳການສູ້ຮົບກັບກອງທັບຝະລັ່ງ ໃນທົ່ງນາອັນກວ້າງໃຫຍ່ທີ່ບ້ານໂບໂລດີໂນທ່າງໄກຈາກນະຄອນມົດສະກູໄປທາງທິດຕາເວັນຕົກ ປະມານ ໑໑໐ ກິໂລແມດ. ກອງທະຫານລັດເຊຍທີ່ເຂົ້າຮ່ວມໃນຂັ້ນຮົບບ້ານໂບໂລດີໂນນີ້ ມີຈຳນວນພົນ ໑໒໖ ພັນຄົນ,ປືນໃຫຍ່ ໖໔໐ ກະບອກ, ສ່ວນທະຫານຝະລັ່ງມີ ໑໓໕ ພັນຄົນແລະປືນໃຫຍ່ ໕໘໗ ກະບອກ.

ສຽງປືນໃຫຍ່ໄດ້ດັງຂຶ້ນ ຕັ້ງແຕ່ຮຸ່ງເຊົ້າອາລຸນ. ກອງທັບຝະລັ່ງໄດ້ບຸກເຂົ້າສູ່ປ້ອມຄ້າຍທະຫານລັດເຊຍ ຢ່າງເປັນຂະບວນຫນາແຫນ້ນ. ການສູ້ຮົບຢ່າງຮຸນແຮງໄດ້ເລີ່ມຂຶ້ນແລ້ວ. ປ້ອມຄ້າຍນັ້ນໄດ້ປ່ຽນກັບຍຶດຢູ່ຫລາຍຄັ້ງ. ທະຫານລັດເຊຍ ໄດ້ຕໍ່ສູ້ຢ່າງພິລະອາດຫານ. ພວກທະຫານບາດເຈັບຫລາຍຄົນ ເມື່ອໄດ້ພັນບາດແຜແລ້ວ ກໍກັບຄືນໄປສູ່ກົມກອງແລະສືບຕໍ່ການສູ້ຮົບ. ການສູ້ຮົບໄດ້ແກ່ຍາວໄປເຖິງ ໑໔ ຊົ່ວໂມງ ຈົນຮອດຕອນຄ່ຳແລງ.

ເມື່ອໄດ້ຕີລາຄາບັ້ນຮົບ ໂບໂລດິນ ແລ້ວ, ນະໂປເລອົງໄດ້ເວົ້າວ່າ "ການສູ້ຮົບທີ່ວ່າຫນັກຫນ່ວງຫລາຍທີ່ສຸດທີ່ຂ້າພະເຈົ້າໄດ້ເຄີຍພົບພໍ້ມາ ກໍຄືບັ້ນຮົບໃກ້ມົດສະກູເອງ, ກອງທະຫານຝະລັ່ງໄດ້ສະແດງໃຫ້ເຫັນວ່າ ພວກເຂົາສົມຄວນຈະໄດ້ໄຊຊະນະ, ສ່ວນກອງທະຫານລັດເຊຍນັ້ນ ກໍໄດ້ພິສູດ ໃຫ້ເຫັນ ວ່າ ພວກເຂົາສົມຄວນເປັນຜູ້ບໍ່ເສຍໄຊຈັກເທື່ອ.

ເມື່ອເຫັນວ່າບໍ່ມີກອງກຳລັງທີ່ຈຳເປັນ ເພື່ອການບຸກໂຈມຕີແລ້ວ, ມ.ອີ. ກູຕູຊົບ ກໍໄດ້ຕັດສິນໃຈກັບໄປສູ່ແນວຫລັງ ມົດສະກູ ເພື່ອວ່າຈະໄດ້ແຫກວົງລ້ອມອອກຈາກສັດຕູ, ຮັກສາກອງທັບລັດເຊຍໄວ້ ແລະລະດົມພົນໃຫມ່. ເມື່ອໄດ້ມາຮອດທາງທິດໃຕ້ຂອງມົດສະກູແລ້ວ ກອງທັບລັດເຊຍ ທີ່ຢູ່ໃນທ່າ ກຽມພ້ອມ ໂດຍບໍ່ໃຫ້ພວກຝະລັ່ງຮູ້ຕົວນັ້ນ ກໍໄດ້ເຄື່ອນໄຫວໄປສູ່ທິດ ຕາເວັນຕົກແລະໄດ້ຕັ້ງຄ້າຍຢູ່ທີ່ບ້ານ ຕາລູຕິໂນ. ດັ່ງນັ້ນຢູ່ບ່ອນນີ້ ກູຕູຊົບບໍ່ພຽງແຕ່ປິດກັ້ນເສັ້ນທາງໄປສູ່ທາງທິດໃຕ້ຂອງກອງທັບ

ຝະລັ່ງເທົ່ານັ້ນ, ແຕ່ຫາກຍັງອຳນວຍ ໃຫ້ແກ່ການຈັດສົ່ງ ສະບຽງອາຫານແລະການລະດົມກອງທະຫານຂອງຕົນ ມາຈາກເຂດຕ່າງໆ ເຊິ່ງຕັ້ງຢູ່ທາງທິດໃຕ້ຂອງມົດສະກູ ໄດ້ຢ່າງເສລີອີກດ້ວຍ. ການປຸ້ນສະດົມແລະການໃຊ້ຄວາມຮຸກແຮງ ທີ່ພວກຮຸກຮານກໍ່ຂຶ້ນນັ້ນ ໄດ້ເຮັດໃຫ້ປວງປະຊາຊົນເກີດຄວາມເດືອດແຄ້ນຂຶ້ນ. ຫນ່ວຍກອງຫລອນໄດ້ເລີ່ມຕົ້ນເກີດຂຶ້ນແລ້ວຢູ່ໃນພູກາທີ່ນພູກແຫ່ງແລະກໍໄດ້ລົບກວນກອງທະຫານຝະລັ່ງທັງກາງເວັນແລະກາງຄືນ. ກູຕູຊົບໄດ້ໃຫ້ຄວາມຊ່ອຍເຫລືອປືນ ແລະຜູ້ບັງຄັບບັນຊາທີ່ຊຳນິຊຳນານແກ່ຫນ່ວຍກອງຫລອນ. ສົງຄາມ ໄດ້ກາຍເປັນສົງຄາມປະຊາຊົນໄປແລ້ວ. ຢູ່ໃນຄຳລາຍງານ ທະຫານຂອງກອງທັບລັດເຊຍ ໄດ້ກ່າວໄວ້ວ່າ "ຊາວນາທີ່ຮັກບ້ານເກີດເມືອງນອນຂອງຕົນນັ້ນ ... ພວມໄດ້ທຳລາຍສັດຕູຢ່າງຫລວງຫລາຍ", ຄວາມກ້າຫານພິເສດຢູ່ໃນສົງຄາມກອງຫຼອນນັ້ນແມ່ນໄດ້ສະແດງອອກໂດຍຫນ່ວຍທີ່ບັງຄັບບັນຊາ ຂອງຊາວນາ ຊື່ ເກລາຊິມ ກູລິນ, ທະຫານ ຊື່ ເຢັດໂມລາຍ ເຊຕະເວລະຕະກົບ ແລະຊາວນາແມ່ຍິງ ຊື່ ວາຊິລິຊາ ໂກຊິນາ.

ເມື່ອຮູ້ວ່າການຈະຢູ່ຕໍ່ໄປໃນນະຄອນມົດສະກູ ທີ່ມີການ ລົບກວນ ເຊິ່ງຈະນຳກອງທັບຝະລັ່ງໄປສູ່ຄວາມຫາຍະນະແລ້ວນັ້ນ ນະໂປລີອົງ ກໍໄດ້ພະຍາຍາມທີ່ຈະແຫກວົງລ້ອມໄປທາງທິດໃຕ້. ຢູ່ໃກ້ເມືອງ ມາໂລຢາໂລສະລາບ ນັ້ນ ກອງທັບລັດເຊຍໄດ້ບຸກໂຈມຕີສັດຕູຢ່າງຮຸນແຮງ ແລະກໍໄດ້ເຮັດໃຫ້ພວກເຂົາຖອຍກັບໄປຕາມດິນແດນທີ່ພວກເຂົາໄດ້ທຳລາຍມາ ແລ້ວນັ້ນ. ໃນ

ຊາວນາໄດ້ຈັບທະຫານຂອງກອງທັບຝະລັງ
ນາໂປລີຢົງເປັນຊະເລີຍເສິກ.

ທ້າຍເດືອນ ທັນວາ ປີ ໑໘໑໒ ພວກເສດເຫລືອໜ້າສົງສານ ຂອງ "ກອງທັບໃຫຍ່" ຂອງນະໂປລີອົງນັ້ນ ກໍໄດ້ຖືກ ຂັບໄລ່ ອອກຈາກເຂດແດນຂອງລັດເຊຍໄປ. ກູຕູຊົບ ໄດ້ຂຽນໄວ້ວ່າ "ສົງຄາມໄດ້ສ້ຽງສຸດລົງ ດ້ວຍການທຳລາຍສັດຕູຢ່າງສິ້ນເຊີງ".

ຄັນໄດ້ທຳລາຍພວກຮຸກຮານແລ້ວ, ປະຊາຊົນລັດເຊຍກໍໄດ້ ຊ່ອຍເຫລືອປະຊາຊາດເອີລົບອື່ນໆປົດປ່ອຍຕົນເອງ ອອກຈາກ ແອກຄອບຄອງຂອງພວກຮຸກຮານ. ກອງທະຫານລັດເຊຍ ໄດ້ ເຂົ້າໄປເຖິງນະຄອນປາລີ.

ໄຊຊະນະໃນສົງຄາມປ້ອງກັນປິຕຸພູມນີ້ ໄດ້ສະແດງໃຫ້ເຫັນ ເຖິງຄວາມກ້າຫານ ແລະເດັດດ່ຽວ ຂອງປະຊາຊົນ ລັດເຊຍ ເຊຍອີກຄັ້ງໜຶ່ງ. ຄັນໄດ້ປ້ອງກັນປະເທດ ໃຫ້ພົ້ນຈາກ ການ

ຮຸກຮານຕ່າງດ້າວແລ້ວ, ຊາວນາກໍໄດ້ຫວັງວ່າຊີວິດການເປັນຢູ່ຂອງຕົນຈະດີຂຶ້ນກວ່າເກົ່າ. ຢ່າງໃດກໍຕາມ ພະເຈົ້າຊາແລະຊຸນນາງກໍບໍ່ໄດ້ຄິດເຖິງເລີຍວ່າ ຈະມີການປ່ຽນແປງ ລະບອບທາດກະສິກອນ.

ໃນຕົ້ນສະຕະວັດທີ XIX ນັ້ນມັນເປັນທີ່ຈະແຈ້ງແລ້ວວ່າ ລະບົບທາດກະສິກອນນັ້ນ ໄດ້ຖ່ວງດຶງການຂະຫຍາຍຕົວ ຂອງປະເທດຕໍ່ໄປ. ຢູ່ໃນເອີລົບຕາເວັນຕົກນັ້ນ ໄດ້ເກີດມີ ໂຮງ ຈັກໂຮງງານໃຫມ່ໆຂຶ້ນ, ແຕ່ສ່ວນໃນລັດເຊຍຍັງບໍ່ມີແຮງງານກຳມະກອນທີ່ມີອິດສະລະເສລີພຽງພໍ. ພວກເຈົ້າທີ່ດິນ ຍັງບໍ່ຂະນຸຍາດໃຫ້ທາດກະສິກອນຂອງຕົນ ເຂົ້າມາເຄື່ອນໄຫວ ໃນຕົວເມືອງໄດ້. ແຕ່ວ່າໃນຈຳພວກທາດກະສິກອນທີ່ເຮັດວຽກຢູ່ໃນດິນຂອງເຈົ້ານາຍນັ້ນ ພວກເຂົາໄດ້ເຮັດວຽກໄປ ຢ່າງ ບໍ່ໄດ້ເອົາໃຈໃສ່ວ່າ ມັນຈະໄດ້ຫມາກຜົນຫລາຍຫລືບໍ່,ທັງນີ້ກໍເພາະວ່າ ເຂົາບໍ່ໄດ້ຮັບຄ່າຈ້າງຕອບແທນແຮງງານ ຂອງພວກເຂົາເລີຍ. ແລະໃນວຽກງານກະເສດນັ້ນ ລັດເຊຍ ກໍຫຼ້າຫຼັງຫຼາຍກວ່າປະເທດເອີລົບຕາເວັນຕົກ ທີ່ຂະຫຍາຍຕົວແລ້ວ.

ໄດ້ມີຜູ້ຄົນທີ່ກ້າວຫນ້າຈາກພວກຊຸນນາງຄິດຄືກັນວ່າ ມັນຈຳເປັນຕ້ອງປ່ຽນແປງແບບແຜນຊີວິດຢູ່ໃນຈັກກະພົບລັດເຊຍແລະກ່ອນອື່ນຫມົດ ກໍຕ້ອງປ່ຽນແປງລະບົບທາດກະສິກອນ. ສະມາຄົມລັບ ກໍເລີ່ມເກີດຂຶ້ນໃນຫມູ່ພວກນາຍທະຫານຫນຸ່ມ – ໄດ້ແກ່ພວກເຂົ້າຮ່ວມໃນສົງຄາມປ້ອງກັນປິຕຸພູມ. ຢູ່ໃນກອງປະ ຊຸມຂອງສະມາຄົມລັບເຫລົ່ານີ້ ເຊິ່ງມີ ປ.ເປສະເຕລະ ແລະ ກ.

ລິເລເຢບ ເປັນຫົວໜ້ານັ້ນ ໂຄງການຕ່າງໆ ກ່ຽວກັບ ການສ້າງສາປະເທດຊາດໃນອະນາຄົດນັ້ນ ກໍໄດ້ຖືກນໍາມາພິຈາລະນາກັນ. ພວກເຂົາໄດ້ຕັ້ງໃຈທີ່ຈະດໍາເນີນການເຮັດລັດຖະປະຫານດ້ວຍການຊ່ອຍເຫລືອຈາກກໍາລັງບາງພາກສ່ວນ ໃນກອງທັບແລະລົບລ້າງລະບົບທາດກະສິກອນ. ສ່ວນຈັບສົມບັດ ສ່ວນຕົວຈະຕ້ອງໃຫ້ມີຢູ່ໂດຍບໍ່ໃຊ້ຄວາມຮຸນແຮງ ແລະເຈົ້າທີ່ດິນຈະຕ້ອງໄດ້ຮັບຄ່າຕອບແທນທີ່ດິນ ທີ່ຖືກໂອນໄປໃຫ້ແກ່ຊາວນາ.

ໃນທ້າຍປີ ໑໘໒໕ ພະເຈົ້າຊາ ອາເລັກຊານເດີທີ I ໄດ້ເຖິງແກ່ກໍາໄປຢ່າງບໍ່ຄາດຫວັງ. ພວກຂຸນນາງນິຍົມການປະຕິວັດໄດ້ຕັດສິນໃຈທີ່ຈະສວຍໃຊ້ກາລະໂອກາດອັນດີນີ້ ແລະເລີ່ມປະຕິບັດການໃນຂະນະທີ່ນີໂກລາຍນ້ອງຊາຍ ຂອງພະເຈົ້າຊາຜູ້ເຖິງແກ່ກໍາໄປ, ຜູ້ຈະສືບທອດບັນລັງຕໍ່ ຍັງບໍ່ທັນຮູ້ນີ້. ການລຸກຮື້ຂຶ້ນໄດ້ກະໃສ່ວັນທີ ໑໔ ເດືອນທັນວາປີ ໑໘໒໕ ທີ່ເມືອງເປເຕລະບຸກ.

ໃນຕອນກາງຄືນຂອງວັນທີ ໑໔ ເດືອນທັນວານັ້ນກໍໄດ້ມີສະມາຊິກຂອງສະມາຄົມລັບບາງຄົນໄດ້ແຍກຍ້າຍກັນໄປຫາໜ່ວຍທະຫານຕ່າງໆ, ຮຽກຮ້ອງທະຫານໃຫ້ເຂົ້າຮ່ວມການລຸກຮື້ຂຶ້ນ. ພວກທະຫານໄດ້ຕັ້ງອົກຕັ້ງໃຈຟັງຄໍາຮຽກຮ້ອງເຫລົ່ານັ້ນ ແຕ່ວ່າກໍບໍ່ໄດ້ຕັດສິນໃຈທີ່ຈະປະຕິບັດການ. ຄັນມາຮອດມື້ເຊົ້າກໍໄດ້ມີໜ່ວຍທະຫານພຽງແຕ່ກອງພັນດຽວເທົ່ານັ້ນລຸກຮື້ຂຶ້ນ. ພວກທະຫານຂອງກອງພັນລຸກຮື້ຂຶ້ນນັ້ນ ໄດ້ເລີ່ມລໍຖ້າພາກສ່ວນອື່ນທີ່ຈະມາເຂົ້າຮ່ວມ ໂດຍໄດ້ຕັ້ງແຖວກັນຢູ່ທີ່ ຈະຕຸລັດ ເຊນາເຕີ

ເວົ້າຢູ່ບໍ່ຫ່າງໄກຈາກພະລາຊະວັງຂອງພະເຈົ້າຊາ.

ນິໂກລາຍໄດ້ຟ້າວຟັ່ງຮິບໂຮມກອງກຳລັງໃຫ່ຍມາຕ້ານພວກປະຕິວັດ. ໃນເວລາດຽວກັນນັ້ນ ປະຊາຊົນກໍຟ້າວແລ່ນມາ ສູ່ຈະຕູລັດ ເຊນາເຕີ. ພວກຊ່າງຫັດຖະກຳແລະກຳມະກອນ ທີ່ທຸກຍາກຢູ່ໃນເມືອງນັ້ນ ຕ້ອງການຢາກຊ່ອຍເຫລືອ ພວກລຸກຮືຂຶ້ນ. ໃນເວລາທີ່ນິໂກລາຍພ້ອມທັງນາຍພົນຕ່າງໆໄດ້ຜ່ານໄປຈະຕູລັດນັ້ນ ປະຊາຊົນກໍໄດ້ແກວ່ງກ້ອນຫີນ ແລະ ໄມ້ຄ້ອນໃສ່ພວກເຂົາ. ແຕ່ວ່າພວກປະຕິວັດທີ່ເກີດຢູ່ໃນຄອບຄົວ ຂຸນນາງນັ້ນ ບໍ່ໄດ້ຕັດສິນໃຈທີ່ຈະເຮັດໃຫ້ປະຊາຊົນລຸກຮືຂຶ້ນ.ພວກເຂົາຕ້ອງການທີ່ຈະລຸກຮືຂຶ້ນດ້ວຍການຊ່ອຍເຫລືອ ຈາກກຳລັງ ທະຫານເທົ່ານັ້ນ ບໍ່ແມ່ນຈາກປະຊາຊົນ. ແຕ່ວ່າພວກເຂົາກໍມີກຳລັງທະຫານໜ້ອຍຫລາຍ. ພາຍໃນໄລຍະສອງສາມຊົ່ວໂມງຕໍ່ມາກໍໄດ້ມີກອງທະຫານເຮືອ ແລະພາກສ່ວນທະຫານອື່ນ ບາງໜ່ວຍເຂົ້າມາຮ່ວມ. ແຕ່ວ່າກາລະໂອກາດອັນດີ ເພື່ອການໂຈມຕີນັ້ນ ກໍໄດ້ໝົດໄປເສຍແລ້ວ.

ນິໂກລາຍ, ຄັນໄດ້ທ້ອນໂຮມກຳລັງໄດ້ແລ້ວ,ກໍອອກຄຳສັ່ງໃຫ້ປືນໃຫ່ຍຍິງພວກລຸກຮືຂຶ້ນ ແລະຕົວເຂົາເອງ ໃຫ້ຄຳສັ່ງຍິງເທື່ອທີ່ໜຶ່ງ. ພວກທະຫານໄດ້ລັງເລໃຈ, ພວກເຂົາ ບໍ່ຕ້ອງການທີ່ຈະຍິງດ້ວຍຕົນເອງ. ດັ່ງນັ້ນ ນາຍທະຫານ ກໍກະໂດດເຂົ້າຫາປືນໃຫ່ຍ ແລະຍິງ.ແລ້ວໄດ້ມີສຽງປືນຄັ້ງທີສອງ ຄັ້ງທີສາມກໍໄດ້ດັງຂຶ້ນຕິດໆກັນ ຫລັງຈາກຄັ້ງທີ ໑ ແລ້ວ, ຫິມະໄດ້ເປິະເປື້ອນໄປດ້ວຍເລືອດຂອງຜູ້ຕາຍ ແລະຜູ້ບາດເຈັບ. ຄັນ

ມາຮອດນີ້ແລ້ວ ການລຸກຮື້ຂຶ້ນນັ້ນ ກໍໄດ້ຖືກປາບປາມລົງ ຢ່າງຮາບຄາບ. ພວກຊຸນນາງນິຍົມການປະຕິວັດ ທີ່ກ້າຫານແລະຊື່ສັດ ຜູ້ໄດ້ພະຍາຍາມທີ່ຈະປ່ຽນແບບແຜນຊີວິດໃນລັດເຊຍເປັນຄັ້ງທຳອິດໃນເດືອນທັນວາ ປີ ໑໘໒໕ ນັ້ນ ກໍໄດ້ມີຊື່ວ່າ ພວກເດືອນທັນວາໃນປະຫວັດສາດ.

ປະຊາຊົນໄດ້ເຫັນອົກເຫັນໃຈພວກເຂົາ - ແຕ່ພວກເຂົາຊໍ້າພັດໄດ້ຢູ່ຫ່າງໄກຈາກປະຊາຊົນແລະມັນກໍເປັນໄປບໍ່ໄດ້ ທີ່ ຈະເອົາຊະນະພວກກົດຂີ່ຂົ່ມເຫັງໄດ້ ຖ້າຫາກປາສະຈາກ ການຊ່ອຍເຫລືອຈາກປະຊາຊົນ.

ພະເຈົ້າຊານິໂກລາຍທີ I ໄດ້ສອບຖາມບັນດາຜູ້ນຳ ຂອງການລຸກຮື້ຂຶ້ນດ້ວຍຕົນເອງ. ພວກເດືອນທັນວາ ຄື ປ.ເປສະເຕລະ, ກ. ລີເລເຢັບ, ປ. ກາຄົບສະກີ, ສ. ມູລາວະ-ເຢັບ-ອາໂປສະໂຕນ ແລະ ມ. ເບສະຕູເຊບ-ລູມິນ ໄດ້ຖືກປະຫານຊີວິດ. ສ່ວນພວກທີ່ເຂົ້າຮ່ວມການລຸກຮື້ ໑໐໐ກວ່າຄົນນັ້ນ ກໍໄດ້ຖືກລ່າມໂສ້ແລະຕັດສິນໃຫ້ໄປເຮັດວຽກໜັກຕະຫລອດຊີວິດຢູ່ໃນຊີບີລີ, ຫລາຍຄົນອື່ນໆອີກ ໄດ້ຖືກສົ່ງໄປສູ່ທ້ອງຖິ່ນທີ່ຢູ່ຫ່າງໄກຂອງປະເທດພາຍໃຕ້ການຄວບຄຸມຂອງເຈົ້າ ໜ້າທີ່ຕຳຫລວດແລະພວກທະຫານທີ່ໄດ້ເຂົ້າຮ່ວມນັ້ນ ກໍໄດ້ຖືກຫຼຸບຕີແລະສົ່ງໄປເປັນເພື່ອນຂອງພວກທີ່ຖືກລົງໂທດ.

ຫລັງຈາກໄດ້ປາບປາມພວກເດືອນທັນວາແລ້ວ ນິໂກລາຍທີ I , ໂດຍຢ້ານກົວຕໍ່ການລຸກຮື້ເກີດຂຶ້ນໃໝ່ນັ້ນ, ກໍໄດ້ນຳເອົາລະບຽບທີ່ເຂັ້ມງວດທີ່ສຸດມາໃຊ້ໃນປະເທດ. ຕຳຫລວດ ທີ່ໄດ້

ສ້າງຂຶ້ນມາພິເສດ (ສາລະວັດຕຳຫລວດ) ກໍໄດ້ຕິດຕາມສອດແນມເບິ່ງຜູ້ຄົນທັງຫລາຍວ່າ ແມ່ນຜູ້ໃດສະແດງຄວາມເຫັນອົກເຫັນໃຈກັບປະຊາຊົນທີ່ຖືກກົດຂີ່ ແລະກໍໄດ້ປາບປາມຄວາມພະຍາຍາມທີ່ຈະລຸກຮືຂຶ້ນນັ້ນ. ແຕ່ວ່າວຽກງານຂອງພວກ ເດືອນທັນວານັ້ນ ກໍບໍ່ໄດ້ໄຮ້ປະໂຫຍດ. ຜູ້ຄົນທີ່ດີທີ່ສຸດ ຂອງລັດເຊຍກໍໄດ້ດຳເນີນການຕໍ່ສູ້ເພື່ອທຳລາຍລະບົບຂ້າທາດ ແລະລະບອບອັດຕາທິປະໄຕຂອງພະເຈົ້າຊາ.

ໃນສະໄຫມການປົກຄອງຂອງພະເຈົ້ານິໂກລາຍທີ I ນັ້ນທຸກໆປີກໍໄດ້ມີຊາວນາລຸກຮືຂຶ້ນຫລາຍສິບເທື່ອ, ແຕ່ວ່າພວກເຂົາທັງຫມົດກໍໄດ້ຖືກປາບປາມລົງຢ່າງຮ້າຍແຮງ. ຊາວນາໄດ້ຖືກຂ້ຽນຕີ, ໄດ້ຖືກສົ່ງໄປຮັດວຽກຫນັກ, ແລະຖືກຍິງເປົ້າ. ຢ່າງໃດກໍຕາມການຕໍ່ສູ້ຕ້ານພວກເຈົ້າທີ່ດິນ ຜູ້ກົດຂີ່ຂົ່ມເຫັງນັ້ນ ກໍບໍ່ໄດ້ຍຸຕິລົງພຽງທໍ່ນັ້ນ.

ພວກປັນຍາຊົນຜູ້ທີ່ດີທີ່ສຸດໃນປະເທດລັດເຊຍຫລາຍຄົນ ໄດ້ສະແດງຄວາມເຫັນອົກເຫັນໃຈຕໍ່ປະຊາຊົນຢ່າງສຸດຊຶ້ງ, ໄດ້ກຽດຊັງລະບອບຂ້າທາດກະສິກອນ ແລະລະບອບອັດຕາທິປະໄຕ . ອາເລັກຊານເດີ ເຊລະເກເຢວິດ ປູສະກິນ ນັກກະວີ ຜູ້ຍິ່ງໃຫຍ່ຂອງລັດເຊຍ ຜູ້ເປັນເພື່ອນຝູງຂອງພວກເດືອນທັນວາໄດ້ປະນາມລະບອບທາດກະສິກອນ ແລະລະບອບ ອັດຕາທິປະໄຕໄວ້ຢູ່ໃນບົດກອນຂອງເຂົາ. ກາບກອນຮັກເສລີພາບຂອງປູສະກິນທີ່ບໍ່ໄດ້ຮັບອະນຸຍາດໃຫ້ຈັດພິມຂຶ້ນນັ້ນ. ກໍໄດ້ຂຽນກ່າຍດ້ວຍມື ແລ້ວກໍແຈກຢາຍໄປໃຫ້ເພື່ອນຝູງໄດ້ອ່ານຢ່າງລັບໆ. ເມື່ອ



໑໗. ສ.ປູສະກິນ, ນັກກະວີລັດເຊຍຜູ້ຍິ່ງໃຫຍ່. ປີ ໑໘໒໗.

ພະເຈົ້າຊາໄດ້ຊາບຮູ້ກ່ຽວກັບກາບກອນເຫລົ່ານີ້ ເຂົາກໍໄດ້ສັ່ງໃຫ້ເນລະເທດ ຜູ້ແຕ່ງກາບກອນເຫລົ່ານີ້ ໄປຢູ່ໃນຊົນນະບົດ. ຫລັງຈາກປູສະກິນໄດ້ກັບຄືນມາເມືອງເປຕະລະບຸກແລ້ວ ເຂົາໄດ້ຮັບຕຳແໜ່ງເປັນເສນາອຳມາດ ແລະ ຕ້ອງເຂົ້າໄປຢູ່ໃນພະລາຊະວັງແລະຢູ່ບ່ອນນັ້ນ ໄດ້ມີການຈັດວາງ ທີ່ຈະຂ້າເຂົາ

ໄວ້ແລ້ວ. ນັກກະວີຜູ້ກ້າຫານແລະທະນົງໃຈ ກໍໄດ້ຖືກຊັກຊວນຈາກຜູ້ດູຖູກເຂົາຜູ້ໜຶ່ງໃຫ້ມາຕໍ່ສູ້ກັນຕົວຕໍ່ຕົວ.ພະເຈົ້າ ນິ ໂກລາຍທີ ຮູ້ວ່າອັນຕະລາຍຈະເກີດຂຶ້ນແກ່ຊີວິດຂອງປູສະກິນແທ້, ແຕ່ວ່າເຂົາກໍບໍ່ໄດ້ຫ້າມການຕໍ່ສູ້ນັ້ນໄວ້ແລະການຕໍ່ສູ້ນັ້ນ ກໍ ໄດ້ສິ້ນສຸດລົງດ້ວຍການຕາຍຂອງລູກຊາຍທີ່ດີເດັ່ນຂອງລັດເຊຍ.

ຢູ່ໃນກາບກອນຊື່ວ່າ "ເພື່ອຄວາມຕາຍ ຂອງນັກກະວີ" ນັ້ນ ມິຄາອິນ ຢູເລວິດ ເລລະມົນຕອບ, ນັກກະວີຜູ້ຍິ່ງໃຫຍ່ ຂອງລັດເຊຍອີກຜູ້ໜຶ່ງ ກໍໄດ້ກ່າວທ້ວງພະເຈົ້າຊາພ້ອມທັງ ຂ້າລາຊະການຊັ້ນຈຳວ່າເປັນຜູ້ຂ້າປູສະກິນ ແລະ ໄດ້ເອີ້ນພວກເຂົາວ່າ ເພດຊະຄາດຂອງອິດສະລະພາບ.ເລລະມົນຕອບ, ຜູ້ຮັກຫອມປະຊາຊົນລັດເຊຍຢ່າງສຸດອົກສຸດໃຈ ໄດ້ກ່າວໂຈມຕີ ລະບອບທາດກະສິກອນ. ພະເຈົ້າຊາ ໄດ້ສັ່ງໃຫ້ເນລະເທດເຂົາໄປຮັບໃຊ້ຢູ່ໃນກອງທັບ ແລ້ວສົ່ງໄປຢູ່ໃນກອງຮ້ອຍທີ່ ພູກາວະກາດ. ຢູ່ບ່ອນນັ້ນພວກຂ້າລາຊະການຊັ້ນຈຳ ຂອງພະເຈົ້າຊາໄດ້ຍົວະໃຫ້ເລລະມົນຕອບຕໍ່ສູ້ກັນກັບນາຍທະຫານຜູ້ໜຶ່ງ ດ້ວຍຕົວຕໍ່ຕົວແລະທ້າຍສຸດນັກກະວີກໍຖືກຂ້າຕາຍ.ເວລານັ້ນເຂົາຍັງບໍ່ທັນມີອາຍຸຮອດ ໒໗ ປີ ຊ້ຳ .

ນິໂກລາຍ ວາຊິລະເຢວິດ ໂກໂກລະ, ນັກຂຽນຜູ້ມີແວວດີຜູ້ເປັນເພື່ອນຮຸ່ນດຽວກັນກັບປູສະກິນ ແລະ ເລລະມົນຕອບໄດ້ຂຽນເຍາະເຍີ້ຍພວກເຈົ້າທີ່ດິນທາດກະສິກອນ ແລະເຈົ້ານາຍໃນລາຊະສຳນັກພະເຈົ້າຊາ. ເຂົາໄດ້ສະແດງໃຫ້ເຫັນວ່າ ຊີວິດຂອງປະຊາຊົນຢູ່ໃນລະບອບທາດກະສິກອນຂອງລັດເຊຍນັ້ນ

ມີຄວາມທຸກຍາກຫລາຍທີ່ສຸດ,

ຕາລະສະ ກະລີໂກລະເຢວິດ ເຊວະຊຽນໂກນັກກະວີອູກະລາອີນາຜູ້ຍິ່ງໃຫຍ່ ໄດ້ກ່າວໂຈມຕີລະບອບທາດກະສິກອນຢ່າງຂົມຂື່ນ. ເຂົາເອງເປັນທາດກະສິກອນມາຕັ້ງແຕ່ນ້ອຍ. ດ້ວຍການເປັນຜູ້ມີຄວາມສາມາດພິເສດ ໃນການແຕ້ມ, ເຊວະຊຽນໂກຜູ້ໜຸ່ມນ້ອຍກໍດຶງດູດເອົາຄວາມສົນໃຈຈາກພວກນັກແຕ້ມລັດເຊຍຈຳນວນໜຶ່ງໄດ້. ພວກເຂົາໄດ້ຮິບໂຮມເງິນແລະຊື້ເອົາເຂົາອອກຈາກເຈົ້າທີ່ດິນ ໃຫ້ມີອິດສະລະພາບ. ເຊວະຊຽນໂກໄດ້ກາຍເປັນນັກແຕ້ມໄປ, ແຕ່ວ່າເຂົາກໍມີຊື່ສຽງຂຶ້ນມາ ດ້ວຍກາບກອນອັນໜ້າອັດສະຈັນໃຈ ເຊິ່ງຂຽນເປັນພາສາອູກະລາອີນາ. ຢູ່ໃນບົດກາບກອນຂອງເຂົານັ້ນ ເຂົາໄດ້ຮຽກຮ້ອງໃຫ້ປະຊາຊົນທຳລາຍຊົກໂສ້ລະບອບທາດກະສິກອນນັ້ນ, ຍາດເອົາເສລີພາບມາໃຫ້ແກ່ຕົນເອງດ້ວຍເລືອດເນື້ອ ແຫ່ງການຕໍ່ສູ້ກັບພະເຈົ້າຊາແລະພວກເຈົ້າທີ່ດິນ. ພະເຈົ້າຊາ ໄດ້ສັ່ງໃຫ້ຈັບເຊວະຊຽນໂກ ໄປເປັນທະຫານ ແລ້ວສົ່ງໄປໃຫ້ກອງທະຫານນ້ອຍໆທີ່ຢູ່ໃນເຂດຫ່າງໄກ. ເຂົາຖືກຫ້າມຂຽນແລະແຕ້ມຢ່າງເດັດຂາດ. ດ້ວຍຄວາມພະຍາຍາມອັນບໍ່ລົດລະເຊວະຊຽນໂກກໍໄດ້ສືບຕໍ່ຂຽນຢ່າງລັບໆ. ເຂົາເຊື່ອໝັ້ນວ່າປະຊາຊົນ ອູກະລາອີນາແລະລັດເຊຍຈະຮ່ວມມືກັນຕໍ່ສູ້ຕ້ານພວກກົດຂີ່ ຂົ່ມເຫັງແລະຈະໄດ້ຮັບໄຊຊະນະໃນເລື່ອງນີ້.

ບັນດານັກຂຽນຜູ້ດີເດັ່ນຂອງລັດເຊຍ ໄດ້ພິມຜົນງານ ຂອງຕົນໄວ້ໃນວາລະສານຊື່ "ໂຊວະເລເມນນິກ" (ເພື່ອນຮຸ່ນດຽວ

ກັນ) ເຊິ່ງຈັດຕັ້ງຂຶ້ນໃນປີ ໑໘໓໖ ໂດຍອາເລັກຊານເດີ ບູ-
ສະກິນ. ຕໍ່ມາວາລະສານນັ້ນກໍໄດ້ຈັດພິມຂຶ້ນ ໂດຍນັກກະວີ ຊື່
ນິໂກລາຍ ອາເລັກເຊເຢວິດ ເນກະລາຊົບ,ນັກປ້ອງກັນຜູ້ບໍ່ຮູ້
ອິດເມື່ອຍຂອງຊາວນາ. ນິໂກລາຍ ກາວະລີໂລວິດ ເຊລະນິ
ເຊັບສະກີ, ຜູ້ເປັນນັກປະຕິວັດລັດເຊຍທີ່ຍິ່ງໃຫ່ຍ, ນັກ ປາດ
ແລະນັກຂຽນໄດ້ເປັນຜູ້ໜຶ່ງທີ່ເຮັດວຽກຢູ່ໃນກອງບັນນາທິການ
ຂອງວາລະສານນັ້ນ.ຢູ່ໃນປຶ້ມນິຍາຍຊື່ "ຈະເຮັດອັນໃດ ? ນັ້ນ
ເຊລະນິເຊບສະກີ ໄດ້ແຕ້ມຮູບພາບອະນາຄົດ ອັນສະ ຫວ່າງ
ແຈ້ງຂອງປະຊາຊົນໄວ້. ເຂົາຕ້ອງການຢາກຈະໃຫ້ ຜູ້ຄົນທັງ
ໝົດມີສິດເທົ່າທຽມກັນ,ບໍ່ຢາກໃຫ້ມີຜູ້ກົດຂີ່ຂູດຮີດ ແລະຜູ້ທີ່ຖືກ
ກົດຂີ່ຂູດຮີດ ແລະຢາກໃຫ້ທຸກໆຄົນເຮັດວຽກເພື່ອຜົນປະໂຫຍດ
ຂອງຄົນທັງໝົດ. ແຕ່ວ່າ ເຊລະນິເຊັບສະກີ ກໍບໍ່ພຽງແຕ່ໄຝ່
ຝັນກ່ຽວກັບອະນາຄົດເທົ່ານັ້ນ. ເຂົາຍັງໄດ້ຮຽກຮ້ອງໃຫ້ຊາວ
ນາຈັບອາວຸດລຸກຂຶ້ນຕໍ່ສູ້ຕ້ານພະເຈົ້າຊາ ແລະພວກເຈົ້າທີ່ດິນ.
ຍ້ອນອັນນັ້ນເອງ ເຊລະນິເຊັບສະກີ ຈຶ່ງຖືກຈັບໄປຂັງຄຸກ .
ນັກປະຕິວັດຜູ້ມີຊື່ສຽງຄົນນີ້ ໄດ້ໃຊ້ຊີວິດຢູ່ໃນຄຸກ, ໄດ້ໄປເຮັດ
ວຽກໜັກແລະໄດ້ຖືກເນລະເທດໄປຢູ່ບ່ອນຫ່າງໄກເກືອບຮອດ
໓໐ ປີ.

ການປາບປາມອັນໂຫດຮ້າຍທາລຸນ ຂອງພະເຈົ້າຊາ ຕໍ່ບັນ
ດາບຸກຄົນທີ່ກ້າວໜ້ານັ້ນ ມັນບໍ່ອາດສາມາດເຮັດໃຫ້ການ ຂະ
ຫຍາຍຕົວຂອງຂະບວນການປະຕິວັດຢູ່ໃນປະເທດຢຸດຍັ້ງໄດ້ .
ການລຸກຮືຂຶ້ນຂອງຊາວນາໄດ້ດຳເນີນຕໍ່ໄປຢູ່ທົ່ວທຸກຫົນທຸກແຫ່ງ.



ເຄື່ອງມືກະສິກຳໃນສະໄໝທາດກະສິກອນໃນສະຕະວັດທີXIX.
ຜູ້ດິນທີ່ມີຈຳນວນຫລວງຫລາຍອັ້ນ ໄດ້ພາກັນເຂົ້າໃຈວ່າ ລະບອບທາດກະສິກອນນັ້ນ ໄດ້ຈຳກັດການຂະຫຍາຍຕົວ ຂອງສັງຄົມແລະລັດລັດເຊຍໄວ້.

ລະບອບທຶນນິຍົມໃນວັດເຊຽ

ໃນ ໔໐ ປີຫລັງຂອງສະຕະວັດທີ XIX ນັ້ນ ລັດເຊຍ ໄດ້ເຮັດສົງຄາມກັບ ຕູລະກີ. ອັງກິດແລະຝະລັ່ງໄດ້ໃຫ້ການຊ່ວຍເຫລືອແກ່ຕູລະກີໃນສົງຄາມຄັ້ງນີ້. ທະຫານເຮືອແລະທະຫານບົກທີ່ທຳການປ້ອງກັນຕົວເມືອງ ເຊວາສະໂຕໂປນນັ້ນ ໄດ້ຕໍ່ສູ້ຢ່າງພິລະອາດຫານ, ແຕ່ວ່າລັດເຊຍກໍຍັງໄດ້ຮັບການ ປະລາໄຊຢູ່. ອັນນີ້ມັນເນື່ອງມາຈາກຄວາມຫລ້າຫລັງຫລາຍໆ ຢ່າງຂອງປະເທດ ແລະໂດຍສະເພາະແລ້ວ ແມ່ນຄວາມຫລ້າຫລັງທາງດ້ານເຕັກນິກ. ອັງກິດແລະຝະລັ່ງໄດ້ລື່ນກາຍລັດເຊຍໄປໃນດ້ານການສ້າງເຮືອກົນຈັກໃຊ້ອາຍນ້ຳ ແລະປັບປຸງອາວຸດ. ພະລາທິການຂອງກອງທັບພະເຈົ້າຊາ ແມ່ນມີການຈັດຕັ້ງບໍ່ດີ, ຢູ່ໃນກອງທັບນັ້ນ ກໍຍັງບໍ່ມີກົດລະບຽບແລະມີການປົກຄອງແບບກົດຂີ່ຂົ່ມເຫັງຢູ່.

ໃນລະຫວ່າງສົງຄາມ ຂ່າວເລົ່າລືໄດ້ແຜ່ໄປໃນໝູ່ ປະຊາຊົນຢູ່ເລື້ອງນີ້ວ່າ ພວກທີ່ຮ່ວມສົງຄາມຈະໄດ້ຮັບການປົດປ່ອຍອອກຈາກຄວາມເປັນທາດກະສິກອນ.ແຕ່ວ່າສົງຄາມກໍໄດ້ສິ້ນສຸດລົງແລ້ວ ແລະກໍບໍ່ມີຫຍັງໄດ້ເກີດປ່ຽນແປງ. ເພາະສະນັ້ນການລຸກຮືຂຶ້ນຈັບອາວຸດຂອງຊາວນາໃນປະເທດຈຶ່ງໄດ້ມີຢູ່ຕໍ່ໄປ

ໂດຍຢ້ານກົວຕໍ່ຄວາມຄຽດແຄ້ນຂອງຊາວນາຈະລະເບີດຂຶ້ນນັ້ນ, ພະເຈົ້າຊາ ອາເລັກຊານເດີທີIIຈຶ່ງໄດ້ອອກກົດໝາຍ

ກ່ຽວກັບການຍົກເລີກລະບອບທາດກະສິກອນ ໃນປີ ໑໘໖໑ . ເຂົາໄດ້ເວົ້າແກ່ພວກຊຸນນາງວ່າ: "ມັນຈະເປັນການດີທີ່ພວກເຮົາຈະຍົກເລີກລະບອບທາດກະສິກອນດີກ່ວາການຄອຍຖ້າໃຫ້ມັນຖືກທຳລາຍໄປ ໂດຍປະຊາຊົນຜູ້ລຸກຮືຂຶ້ນນັ້ນ."

ການກະກຽມກົດໝາຍ ແລະການນຳເອົາກົດໝາຍມາໃຊ້ນັ້ນ ໄດ້ດຳເນີນໄປໂດຍຄະນະກຳມະການຊຸນນາງ ທີ່ ຈັດຕັ້ງຂຶ້ນພິເສດ. ກົດໝາຍກ່ຽວກັບການຍົກເລີກລະບອບທາດກະສິກອນນີ້ ໄດ້ນຳເອົາການປ່ຽນແປງແນວໃດມາສູ່ຊີວິດຂອງຊາວນາ ?

ເວລານີ້ ພວກເຂົາບໍ່ໄດ້ພັນທະທີ່ຈະໄປເຮັດວຽກ ໃຫ້ແກ່ເຈົ້າທີ່ດິນໂດຍບໍ່ໄດ້ຮັບຄ່າອອກແຮງງານອີກແລ້ວ. ພວກ ຊຸນນາງບໍ່ສາມາດຈະລົງໂທດຊາວນາ, ຂາຍຫລືຊື້ພວກເຂົາອີກຕໍ່ໄປ. ແຕ່ວ່າທີ່ດິນຍັງຕົກເປັນຂອງເຈົ້າທີ່ດິນຄືເກົ່າ, ພະເຈົ້າຊາແລະພວກເຈົ້າທີ່ດິນ ຍັງໄດ້ເອົາທີ່ດິນອັນເປັນພາກສ່ວນ ທີ່ພວກເຂົາໄດ້ຂຸດຄົ້ນໄວ້ໃຫ້ແກ່ຕົນເອງ ແຕ່ກ່ອນນັ້ນ ໄປຈາກພວກຊາວນາ. ສິ່ງທີ່ຍັງເຫລືອໄວ້ໃຫ້ແກ່ພວກເຂົານັ້ນ ກໍມີແຕ່ທີ່ດິນອັນບໍ່ດີຈັກໜ້ອຍ ແລະກໍເປັນສ່ວນນ້ອຍໆ ເທົ່ານັ້ນ. ແຕ່ຮ້າຍກວ່ານັ້ນ ພວກເຂົາຍັງຈຳຕ້ອງຈ່າຍເງິນຄຳກ້ອນໃຫຍ່ສຳລັບດິນເຫລົ່ານີ້. ຖ້າຫາກບໍ່ຈ່າຍເງິນ ພວກເຂົາກໍຕ້ອງຮັບໃຊ້ແຮງງານໃຫ້ແກ່ພວກເຈົ້າທີ່ດິນຕໍ່ໄປອີກ. ເງິນທີ່ຊື້ໄປນັ້ນ ແມ່ນມີມູນຄ່າສູງກວ່າທີ່ດິນອີກ ແລະເພາະສະນັ້ນຊາວນາຈຶ່ງໄດ້ຊື້ພຽງແຕ່ທີ່ດິນເທົ່ານັ້ນ ແຕ່ຫາກຍັງຮອດເສລີພາບ ໃນທາງບຸກ

ຄົນອີກດ້ວຍ. ພວກເຂົາໄດ້ເຂົ້າໃຈວ່າ ພວກເຂົາ ໄດ້ຖືກຕົ້ມແລ້ວ. ຕາມລາຍງານຂອງຫົວໜ້າຕໍາຫລວດນັ້ນ ໄດ້ເວົ້າວ່າ ພຽງແຕ່ໃນປີ ໑໘໖໑ ເທົ່ານັ້ນ ໜ່ວຍທະຫານ ໄດ້ປາບປາມຊາວນາທີ່ລຸກຮືຂຶ້ນຮອດ ໑໘໐໐ ຄັ້ງ. ໃນລະຫວ່າງ ການລຸກຮືລະເບີດຂຶ້ນນັ້ນ ທະຫານໄດ້ຂ້າແລະໄດ້ເຮັດໃຫ້ຊາວນາຫລາຍຮ້ອຍຄົນໄດ້ຮັບບາດເຈັບ, ຫລາຍພັນຄົນໄດ້ຖືກຈັບແລະຖືກເນລະເທດໄປຢູ່ຊີບີລີ, ທັງໄດ້ຖືກຂ້ຽນແລະຖືກຕີ.

ການລຸກຮືຂຶ້ນຂອງຊາວນາໃນບ້ານເບສະດະນາ
ໃນທົດສະວັດທີ ໖ ຂອງສະຕະວັດທີXIX.

ການລຸກຮືຂຶ້ນທີ່ຍິ່ງໃຫຍ່ທີ່ສຸດຂອງຊາວນາ ໄດ້ເກີດຂຶ້ນໃນບ້ານເວສະດະນາໃກ້ເມືອງກາຊານ ໂດຍມີຊາວນາ ຊື່ ອັງໂຕນ ເປຕະລົບ ເປັນຫົວໜ້າ. ເຂົາໄດ້ເວົ້າວ່າ "ຢ່າໄປເຊື່ອເຈົ້າທີ່ດິນ !. ເຈົ້າທີ່ດິນໄດ້ທໍາລາຍກົດໝາຍທີ່ແທ້ຈິງ ຂອງພະເຈົ້າຊາ ເຊິ່ງໃນນັ້ນໄດ້ຂຽນໄວ້ວ່າ ທີ່ດິນທັງໝົດຕ້ອງສົ່ງ

ຄົນໃຫ້ແກ່ຊາວນາຢ່າງບໍ່ມີຄ່າຕອບແທນໃດໆ". ເມື່ອຊາວນາ ໄດ້ຟັງເປຕະລິບເວົ້າແລ້ວ ກໍເຫັນດີນຳເຂົາໂດຍເວົ້າວ່າ "ອັນນັ້ນ ແມ່ນເສລີພາບທີ່ແທ້ຈິງ !". ແຕ່ວ່າໃນເວລາ ດຽວກັນນັ້ນກອງທະຫານພະເຈົ້າຊາ ກໍໄດ້ເຄື່ອນເຂົ້າສູ່ບ້ານເບສະດະນາ. ນາຍພົນຜູ້ບັງຄັບທະຫານໄດ້ຮຽກຮ້ອງໃຫ້ຊາວນາ ມອບຕົວອັງໂຕນ ເປຕະລິບ ຫົວຫນ້າລູກຮ້ອນ, ແກ່ເຂົາ, ແຕ່ຊາວບ້ານໄດ້ປະຕິເສດທີ່ຈະເຮັດເຊັ່ນນັ້ນ. ເມື່ອເປັນແບບນັ້ນຜູ້ບັງຄັບບັນຊາກໍໄດ້ສັ່ງໃຫ້ຍິງ. ສຽງປືນພ້ອມກັນໄດ້ດັງຂຶ້ນ, ຜູ້ທີ່ຕາຍກໍໄດ້ລົ້ມລົງ ແລະຜູ້ທີ່ຖືກບາດເຈັບ ກໍໄດ້ຮ້ອງຄາງຂຶ້ນ. ຜູ້ຄົນທັງຫມົດທັງຕາຍແລະບາດເຈັບຢູ່ໃນບ້ານເວສະດະນານັ້ນມີປະມານ ໓໔໐ ຄົນ ສ່ວນອັງໂຕນ ເປຕະລິບ ໄດ້ຖືກ ຍິງເປົ້າ. ພະເຈົ້າຊາແລະພວກຂຸນນາງໄດ້ເຮັດໃຫ້ຊາວນາທີ່ຖືກຕົ້ມແລະຖືກຕັດສິນສະຫງົບລົງດ້ວຍລູກປືນແລະຫອກປາຍປືນໂດຍອໍຫົ້ນ.

ໃນເວລານັ້ນຊາວນາ ໄດ້ເວົ້າຢອກກັນ ຢ່າງຂົມຂື່ນ ວ່າ: "ເຈົ້າທີ່ດິນໄດ້ໃຫ້ທີ່ດິນແກ່ພວກເຮົານ້ອຍຫລາຍ ຈົນວ່າ ອາດຈະຢືນຢູ່ໄດ້ພຽງແຕ່ຂາເບື້ອງດຽວ ສ່ວນຂາເບື້ອງອື່ນບໍ່ມີບ່ອນຈະວາງລົງ!" ມັນເປັນການຍາກແທ້ ທີ່ຈະລ້ຽງຄອບຄົວດ້ວຍດິນຕອນນ້ອຍໆນີ້, ຊາວນາບໍ່ມີເຂົ້າພໍກິນ ຈາກລະດູເກັບກ່ຽວຫນຶ່ງໄປສູ່ລະດູເກັບກ່ຽວຫນຶ່ງ. ພວກເຂົາໄດ້ກູ້ຢືມເຂົ້າ ຈາກເຈົ້າທີ່ດິນມາ ແລະຕ້ອງເຮັດນາໃຫ້ເຂົາເປັນການຕອບແທນ. ຊາວນາສ່ວນຫລວງຫລາຍ ແມ່ນໄດ້ດຳລົງຊີວິດຢູ່ໃນລັກສະນະແບບນັ້ນ.

ມີແຕ່ຊາວນາຈຳນວນໜ້ອຍດຽວເທົ່ານັ້ນ ທີ່ໄດ້ສ້າງຄວາມຮັ່ງມີຂຶ້ນມາພາຍຫລັງທີ່ໄດ້ຍົກເລີກລະບອບທາດກະສິກອນແລ້ວ. ພວກເຂົາໄດ້ສະແຫວງຫາຄວາມຮັ່ງມີ ໂດຍວິທີທາງຕ່າງໆ ຄື ບາງພວກກໍໄດ້ຊື້ຜະລິດຕະພັນຕ່າງໆ ຈາກເພື່ອນບ້ານແລ້ວໄປຂາຍເອົາກຳໄລຢູ່ໃນເມືອງ, ສ່ວນພວກອື່ນ ກໍໃຫ້ເພື່ອນບ້ານຢືມເງິນດ້ວຍດອກເບ້ຍສູງ. ຊາວນາທີ່ຫາຄວາມຮັ່ງມີຕ່າງໆຂຶ້ນມາໂດຍວິທີນີ້ ໄດ້ຊື້ດິນພິເສດຕື່ມ ເປັນຂອງສ່ວນຕົວແລະກໍໄດ້ຈ້າງແຮງງານມາເຮັດວຽກ ຢູ່ໃນດິນນາຂອງຕົນ. ຊາວນາຮັ່ງຜູ້ທີ່ຈ້າງແຮງງານມາເຮັດວຽກນີ້ ເອີ້ນວ່າກູລັກ. ບັນດາບ້ານເຮືອນໃຫມ່ຂອງພວກກູລັກ ທີ່ຫ້ອມລ້ອມໄປດ້ວຍກະຕູບ ຂອງຊາວນາທຸກຈົນມະບິດ ຜູ້ທີ່ຖືກບັງຄັບມາເຮັດວຽກໃຫ້ເຈົ້າທີ່ດິນຫລືກູລັກນັ້ນ ແມ່ນສາມາດຫລຽວເຫັນໄດ້ ຈາກບ່ອນໄກ. ຫຼາຍຄອບຄົວໄດ້ຕົກຢູ່ໃນຄວາມທຸກຍາກ. ເພື່ອຊອກຫາຊີວິດ ອັນດີ, ຄອບຄົວເຫລົ່ານີ້ ຈຶ່ງໄດ້ໜີຈາກບ້ານເຮືອນໄປເຮັດວຽກ ຢູ່ໃນຕົວເມືອງ.

ພາຍຫລັງການຍົກເລີກລະບອບທາດກະສິກອນແລ້ວ ອຸດສາຫະກຳກໍໄດ້ຮັບການຂະຫຍາຍຕົວອອກ. ຢູ່ໃນຕົວເມືອງຕ່າງໆ ກໍໄດ້ມີການສ້າງໂຮງຈັກໂຮງງານໃຫມ່ຂຶ້ນ ແລະໃນຕົວເມືອງເກົ່າກໍໄດ້ຂະຫຍາຍຕົວອອກ. ເວລານີ້ແຮງງານ ກຳມະກອນແມ່ນມີພຽງພໍກັບຄວາມຕ້ອງການ. ຜູ້ຄົນຈຳນວນຫລວງຫລາຍໄດ້ຫລັ່ງໄຫລເຂົ້າສູ່ຕົວເມືອງຫລາຍກວ່າທົ່ວສາທະກິດ ອຸດສາຫະກຳຮຽກຮ້ອງຕ້ອງການ. ຄວາມຍາກຈົນເປັນການ ບັງຄັບ



ໃນໂຮງຈັກໂຮງງານຂອງນາຍທຶນ.໔໐ປີຫຼັງ
ຂອງສະຕະວັດ ທີ XIX.

ໃຫ້ຊາວນາຈຳຕ້ອງກຽມຕົວເຮັດວຽກຢູ່ໃນຕົວເມືອງ ໂດຍບໍ່ມີຊຸມຄ່າ ແລະເຈົ້າຂອງວິສາຫະກິດ ຄືພວກນາຍທຶນກໍໄດ້ ສວຍໃຊ້ເອົາໂອກາດນີ້. ມໍເຮັດວຽກຢູ່ໃນໂຮງຈັກໂຮງງານນັ້ນໄດ້ກິນເວລາຍາວຮອດ ໑໔-໑໔ ຊົ່ວໂມງ, ກຳມະກອນທັງຫລາຍເຮັດວຽກຢູ່ໃນຫ້ອງທຶບເອົາ ແລະມີແສງສະຫວ່າງໜ້ອຍ ທີ່ສຸດ. ພວກນາຍທຶນບໍ່ໄດ້ເປັນຫ່ວງໃຍ ກ່ຽວກັບສຸຂະພາບແລະຄວາມປອດໄພຂອງຊາວກຳມະກອນ. ອຸປັດຕິເຫດ ທີ່ເຮັດໃຫ້ຮ່າງກາຍເສຍອົງຄະໃນການຜະລິດນັ້ນ ມັກເກີດຂຶ້ນຢູ່ເລື້ອຍໆ. ພວກນາຍທຶນເຫັນວ່າຈະບໍ່ໄດ້ກຳໄລ ທີ່ຈະທົດແທນເຄື່ອງຈັກທີ່ຫລ້າສະໄໝ ແລະເປ່ເພແລ້ວນັ້ນ. ມັນຊ່າງໂຊກຮ້າຍເອົາແທ້ແທ້ທີ່ກຳມະກອນໄດ້ເສຍຊີວິດ ຫລືເສຍອົງຄະໄປ ! ມີຄົນຈຳ

ນວນຫລວງຫລາຍທີ່ປາຖະໜາຢາກຈະມາແທນບ່ອນຂອງເຂົາ ລໍຖ້າຢູ່ທີ່ປະຕູຂອງໂຮງງານ.

ຄົນຮັບໃຊ້ທີ່ຊື່ສັດ ຂອງເຈົ້າຂອງໂຮງຈັກໂຮງງານຄືຜູ້ເປັນຫົວໜ້າ, ໄດ້ສອດສ່ອງດູແລເບິ່ງວ່າພວກກຳມະກອນໄດ້ເຮັດວຽກໄປຢ່າງໃດກັນແທ້. ເຂົາໄດ້ຄອຍເອົາຄວາມຜິດ ທຸກສິ່ງທຸກຢ່າງ: ເວລານີ້ສິ່ງຂອງນີ້ໄດ້ຜະລິດອອກມາບໍ່ດີແທ້ໆ, ເວລານີ້ເຄື່ອງຈັກໄດ້ຕິດຂັດ ຍ້ອນຄວາມຜິດພາດຂອງກຳມະກອນ, ເວລານີ້ໄດ້ປາກົດວ່າ ກຳມະກອນໄດ້ຕອບຜູ້ເປັນຫົວໜ້າຢ່າງບໍ່ສຸພາບ. ຜູ້ເປັນຫົວໜ້າໄດ້ປັບໄໝກຳມະກອນສຳລັບທຸກສິ່ງທຸກຢ່າງທີ່ເຂົາໄດ້ກະທຳໄປ. ເມື່ອຮອດເວລາຮັບເງິນເດືອນເຂົາກໍບໍ່ມີຫຍັງທີ່ຈະຮັບເພາະເຈົ້າຂອງໂຮງຈັກ ໂຮງງານໄດ້ຫັກຄ່າປັບໄໝ, ໄດ້ຄິດຄ່າສະບຽງອາຫານ ອັນມີລາຄາແພງທີ່ກຳມະກອນໄດ້ຊື້ໄປດ້ວຍເງິນສິນເຊື່ອຢູ່ໃນຮ້ານຂອງໂຮງຈັກໂຮງງານ.

ພວກແມ່ຍິງແລະເດັກນ້ອຍ ໄດ້ໄປຮັບຈ້າງເຮັດວຽກ ຢ່າງຫລວງຫລາຍຢູ່ໃນໂຮງງານຕ່ຳແຜ່ນ. ຄ່າຈ້າງແຮງງານຂອງກຳມະກອນແມ່ຍິງແລະເດັກນ້ອຍທີ່ບໍ່ທັນເຖິງກະສຽນ ໄດ້ຕ່ຳກວ່າຄ່າຈ້າງແຮງງານຂອງກຳມະກອນຊາຍຜູ້ໃຫຍ່.

ຊາວກຳມະກອນໄດ້ອາໄສຢູ່ໃນໂຮງພັກກຳມະກອນພາຍໃນໂຮງພັກນັ້ນ ໄດ້ມີທາງຍ່າງຍາວແລະມືດ, ທາງຂ້າງ ມີປະຕູເຂົ້າສູ່ຫ້ອງນອນ. ໃນຫ້ອງນອນກໍມີຕຽງນອນສອງຊັ້ນ, ໂຕະທີ່ບໍ່ສະອາດແລະກະຖັງນ້ຳຕັ້ງຢູ່-ທັງໝົດນີ້ ແມ່ນສະພາບ ຂອງ

ຫ້ອງນອນ. ມັນມັກມີຢູ່ເລື້ອຍໆວ່າ ຊາວກຳມະກອນ ບໍ່ມີ ບ່ອນຂອງຕົນເອງທີ່ຈະນອນຊ້ຳ. ເມື່ອເຂົາອອກໄປເຮັດວຽກບ່ອນນອນຂອງເຂົາກໍມີຄົນອື່ນທີ່ຫາກໍແລ້ວຜຽນວຽກຂອງຕົນເຂົ້າມານອນແທນ ແລະຍິ່ງຮ້າຍໄປກວ່ານັ້ນ ພວກເຂົາຍັງຕ້ອງ ຈ່າຍເງິນຄ່າສະຖານທີ່ພັກເຊົາແບບນີ້ ໃຫ້ແກ່ເຈົ້າຂອງອີກດ້ວຍ.

ເຈົ້າຂອງໂຮງຈັກໂຮງງານພວມເບີກເງິນເດືອນໃຫ້ແກ່
ຊາວກຳມະກອນ. ໕໐ ປີຫຼັງຂອງສະຕະວັດທີ XIX.

ໃນທ້າຍສະຕະວັດທີ XIX ຢູ່ໃນລັດເຊຍກໍໄດ້ເລີ່ມມີການຜະລິດສິນຄ້າຊະນິດຕ່າງໆຫລາຍຂຶ້ນ ທັງສາຍທາງລົດໄຟໃຫມ່ ກໍໄດ້ສ້າງຂຶ້ນ ແລະການຫລໍ່ເຫລັກ ກໍໄດ້ເພີ່ມຂຶ້ນເກືອບຮອດ໑໐ເທົ່າ ຖ້າຫາກສົມທຽບໃສ່ ປີ ໑໘໖໑ ແລ້ວ. ທັງຫມົດເຫລົ່ານີ້ແມ່ນສ້າງຂຶ້ນມາ ດ້ວຍແຮງງານຂອງຊາວກຳມະກອນ ແຕ່ຊີ

ວິຖການເປັນຢູ່ຂອງພວກເຂົາກໍບໍ່ໄດ້ດີຂຶ້ນເລີຍ. ພວກນາຍທຶນ ໄດ້ຈ່າຍເງິນໃຫ້ຊາວກຳມະກອນ ພຽງແຕ່ພາກສ່ວນນ້ອຍໆ ທີ່ ພວກເຂົາຫາໄດ້ເທົ່ານັ້ນ ສ່ວນກຳໄລກ້ອນໃຫຍ່ນັ້ນ ພວກເຂົາ ເອົາໃສ່ກະເປົາໂຕເອງ.

ຈັກກະພັດລັດເຊຍ ແມ່ນເປັນລັດທີ່ຍິ່ງໃຫຍ່ທີ່ສຸດລັດໜຶ່ງໃນ ໂລກ. ຢູ່ໃນລັດນີ້ໄດ້ມີບັນດາປະຊາຊາດທັງໃຫຍ່ ແລະ ນ້ອຍ ໂຮມເຂົ້າຢູ່ປະມານ ໒໐ ຊາດ. ບັນດາປະຊາຊາດລັດເຊຍ, ອູກະລາອີນາ, ລັດຕິດ, ກະລູເຊຍ ແລະອື່ນໆອີກ ດຳລົງ ຊີວິດຢູ່ໃນລັດອັນດຽວກັນນີ້ ມາເປັນເວລາຫລາຍປີແລ້ວ. ຫລັງ ຈາກການຍົກເລີກລະບອບທາດກະສິກອນແລ້ວ ລະບອບ ທຶນນິຍົມກໍໄດ້ຮັບການຂະຫຍາຍຕົວອອກ ຢູ່ໃນເຂດຊາຍແດນລັດຊີນ ຊາດຕ່າງໆ. ຢູ່ໃນອູກະລາອີນາ, ບໍ່ແຮ່ແລະໂຮງງານ ຫຼໍ່ເຫຼັກ ກໍໄດ້ຮັບການສ້າງຂຶ້ນ, ຢູ່ໃນເຂດໃຕ້ກາວະກາດກໍໄດ້ ມີການ ເປີດອຸດສາຫະກຳ ບໍ່ນ້ຳມັນຂຶ້ນ ແລະບໍລິເວນອັນກວ້າງ ໃຫຍ່ ແຫ່ງຊີບີລີກໍໄດ້ເລີ່ມມີການບຸກເບີກຂຶ້ນ.

ເພື່ອທີ່ຈະຂະຫຍາຍອຸດສາຫະກຳ ແລະການຄ້າໄດ້ນັ້ນ ມັນ ຈຳເປັນຕ້ອງມີວັດຖຸດິບແລະຕະຫລາດຂາຍສິນຄ້າ. ໃນໄລຍະ ໔໐ ປີຫລັງຂອງສະຕະວັດທີ XIX ນັ້ນ ບັນດາປະຊາຊາດ ໃນ ເຂດອາຊີກາງ ແລະ ກາຊາກສະຕານ ກໍໄດ້ໂຮມເຂົ້າ ຢູ່ໃນ ລັດລັດເຊຍ. ພາຍຫລັງໂຮມເຂົ້າກັບລັດເຊຍແລ້ວ ຊີວິດການ ເປັນຢູ່ຂອງປະຊາຊົນໃນລັດເຫລົ່ານີ້ ກໍໄດ້ມີການປ່ຽນແປງໄປ ຄືພື້ນທີ່ອັນກວ້າງໃຫຍ່ຢູ່ໃນອາຊີກາງ ກໍໄດ້ເລີ່ມມີການປູກຝ້າຍ

ເປັນຈຳນວນຫລວງຫລາຍ. ຝ່າຍເຫລົ່ານີ້ໄດ້ສົ່ງໄປປ້ອນໂຮງ ງານຕ່ຳແຜ່ນຢູ່ໃນໃຈກາງລັດເຊຍແລະແຜ່ນແພ, ໄຖ, ຄາດ ແລະສິນຄ້າອື່ນໆທີ່ຜະລິດໂດຍກຳມະກອນລັດເຊຍນັ້ນ ກໍໄດ້ນຳ ເຂົ້າມາສູ່ອາຊີກາງ.

ຊາວກຳມະກອນແລະຊາວນາລັດເຊຍ ແມ່ນດຳລົງຊີວິດ ຢູ່ ດ້ວຍຄວາມລຳບາກ. ແຕ່ວ່າຊີວິດການເປັນຢູ່ຂອງປະຊາຊົນຜູ້ ອອກແຮງງານແຫ່ງບັນດາຊົນຊາດອື່ນໆ ທີ່ໂຮມເຂົ້າຢູ່ໃນ ຈັກ ກະພັດລັດເຊຍນັ້ນ ຊ້ຳພັດຮ້າຍໄປກວ່ານັ້ນອີກ. ພວກເຂົາຖືກກົດ ຂີ່ຂູດຮີດຈາກຂ້າລາຊະການຊັ້ນຈຳພະເຈົ້າຊາ ແລະຊົນຊັ້ນຮັ່ງ ມີຢ່າງຫາລູນໂຫດຮ້າຍ. ພວກນາຍທຶນແລະພວກເຈົ້າທີ່ດິນໄດ້ ຄອບຄອງປະຊາຊົນຜູ້ອອກແຮງງານ ໃຫ້ຢູ່ໃນຄວາມມືດ ແລະ ຄວາມໂງ່ຈ້າ. ມີຫລາຍບັນດາຊົນຊາດທີ່ບໍ່ມີໂຮງຮຽນແລະບໍ່ມີ ໂຕຫນັງສືຂຽນ.

ພະເຈົ້າຊາ, ພວກນາຍທຶນແລະເຈົ້າທີ່ດິນ ໄດ້ຢ້ານກົວວ່າ ບັນດາປະຊາຊາດທີ່ຖືກກົດຂີ່ຂູດຮີດ ຈະຕ້າໂຮມກັນເຂົ້າແລະ ລຸກຂຶ້ນຕໍ່ສູ້ແບບປະຕິວັດ. ດັ່ງນັ້ນພວກເຂົາຈຶ່ງໄດ້ພະຍາຍາມກໍ່ ຄວາມແຕກແຍກຂຶ້ນໃນລະຫວ່າງບັນດາປະຊາຊາດ ເຫລົ່ານັ້ນ ທີ່ອາໄສຢູ່ໃນລັດເຊຍ. ພວກເຂົາໄດ້ຍົວະເຍົ້າຊາວອູກະລາອີ ນາຕ້ານກັບຊາວລັດເຊຍ, ຊາວອາເຊລະໄບຊານ ຕ້ານ ກັບ ຊາວອາລະເມເນຍ ແລະຊາວອູຊະເບກຕ້ານກັບຊາວກາຊັກ.

ໄປພ້ອມໆກັນກັບການຂະຫຍາຍຕົວ ຂອງລະບອບ ທຶນນິຍົມ ນັ້ນ ຢູ່ໃນປະເທດກໍໄດ້ມີຈຳນວນກຳມະກອນເພີ່ມຂຶ້ນ ແລະປະ

ຊາວຈີນໃນຕົວເມືອງກໍໄດ້ເຕີບໃຫ່ຍຂະຫຍາຍຕົວອອກ. ແຕ່ວ່າ ພົນລະເມືອງສ່ວນໃຫ່ຍຂອງລັດເຊຍພະເຈົ້າຊາ ແມ່ນປະກອບດ້ວຍຊາວນາ. ພວກເຂົາໄດ້ດຳເນີນການຕໍ່ສູ້ເອົາທີ່ດິນ ແລະ ເສລີພາບອັນແທ້ຈິງ. ແຕ່ວ່າມັນກໍບໍ່ແມ່ນຂອງງ່າຍສຳລັບພວກເຂົາທີ່ຈະຈັດຕັ້ງກັນໄດ້. ເພາະວ່າຍ້ານຂອງພວກເຂົາ ບ້ານໜຶ່ງກໍຢູ່ປ່ຽວຈາກບ້ານອື່ນ. ຊາວນາທຸກໆຄົນເຮັດວຽກຢູ່ຕາມລຳພັງແລະກໍຜູກພັນຢູ່ກັບທີ່ດິນຕອນນ້ອຍໆຂອງຕົນ. ດັ່ງນັ້ນຈຶ່ງເປັນການຍາກສຳລັບຊາວນາ ທີ່ຈະມີການຕິກລົງ ແລະພົວພັນກັນໄດ້.

ພວກປັນຍາຊົນລັດເຊຍ ຜູ້ມີຫົວກ້າວໜ້າເຊັ່ນ - ຄູສອນ, ນາຍໝໍ, ນັກຂຽນໄດ້ພະຍາຍາມ ທີ່ຈະຊຸກຍູ້ໃຫ້ຊາວນາລຸກຮືຂຶ້ນຕ້ານກັບພະເຈົ້າຊາ. ໃນປີ ໑໘໗໔ ພວກຜູ້ຄົນທັງຫລາຍ, ແລະປະຊາຊົນໃນເມືອງທີ່ຍັງໜຸ່ມນ້ອຍປະມານພັນຄົນ ໄດ້ພາກັນແຕ່ງຕົວເປັນຊາວນາ ແລ້ວອອກໄປສູ່ຊົນນະບົດອາໄສຢູ່ນຳຊາວນາ ແລະຈັດຕັ້ງພວກເຂົາໃຫ້ດຳເນີນການຕໍ່ສູ້. ຜູ້ຄົນທັງຫລາຍເຫລົ່ານັ້ນເອີ້ນວ່າ ນາໂລດນິກ (ມີຄວາມໝາຍວ່າ"ປະຊາຊົນ", ມາຈາກຄຳວ່າ ນາໂລດ ໃນພາສາລັດເຊຍ).ແຕ່ວ່າພວກນາໂລດນິກ ກໍບໍ່ໄດ້ຮັບຜົນສຳເລັດ ໃນການຊຸກຍູ້ ໃຫ້ຊາວນາດຳເນີນການຕໍ່ສູ້, ເພາະພວກກູລັກໄດ້ໄປລາຍງານຕໍ່ເຈົ້າໜ້າທີ່ຕຳຫລວດຢູ່ເລື້ອຍໆ.

ຄັນແລ້ວພວກນາໂລດນິກ ຈຶ່ງໄດ້ຕັດສິນໃຈ ທີ່ຈະລອບ ສັງຫານຊີວິດພະເຈົ້າຊາ. ພວກເຂົາຄິດວ່າ ວິທີການນີ້ ຈະເຮັດ

ໃຫ້ມີການສະທ້ານຢ້ານກົວຂຶ້ນ ຢູ່ໃນວົງການປົກຄອງແລະເມື່ອ ຢູ່ໃນສະພາບການເຊັ່ນນັ້ນແລ້ວ ພວກເຂົາກໍຈະນຳພາ ປະຊາ ຊົນຕ້ານລະບອບພະເຈົ້າຊາ ແລະ ພວກນາຍທຶນແລ້ວທຳການ ຍຶດອຳນາດ. ພວກເຂົາໄດ້ຈັດຕັ້ງສະມາຄົມລັບນ້ອຍໆຂຶ້ນແລະ ໃຫ້ຊື່ວ່າ "ນາໂລດນາຍາ ໂວເລຍ" (ນ້ຳໃຈ ປະຊາຊົນ). ຫົວໜ້າສະມາຄົມນີ້ ກໍໄດ້ແກ່ອັງດະເລ ເຊເລຍບອບ ແລະ ໂຊເຟຍ ເປລົບສະກາຢາ. ສະມາຊິກຂອງ ນາໂລດນາຍາ ໂວເລຍ ນີ້ ໄດ້ພະຍາຍາມລອບສັງຫານຊີວິດພະເຈົ້າຊາ ອາ ເລັກຊານເດີທີ II ຫລາຍຄັ້ງ ແລະທ້າຍທີ່ສຸດ ກໍໄດ້ສັງຫານຊີ ວິດເຂົາໄດ້ເມື່ອວັນທີ ໑ ມີນາ ປີ ໑໘໘໑ .

ຢ່າງໃດກໍຕາມ ບັນລັງຂອງພະເຈົ້າຊາທີ່ ຜູ້ທີ່ຖືກລອບສັງ ຫານຊີວິດໄປນັ້ນ ກໍມີອາເລັກຊານເດີທີIIIຂຶ້ນມາແທນ. ພວກ ນາໂລດນິກ ຈຳນວນຫລາຍຄົນໄດ້ຖືກຈັບໄປແລະຜູ້ທີ່ເຂົ້າຮ່ວມ ໃນການລອບສັງຫານຊີວິດອາເລັກຊານເດີທີ II ນັ້ນ ກໍໄດ້ຖືກ ປະຫານຊີວິດ. ການກົດຂີ່ຂູດຮີດຂອງພະເຈົ້າຊາຢູ່ໃນປະເທດ ກໍບໍ່ໄດ້ລົດນ້ອຍລົງ, ແຕ່ກັງກັນຂ້າມຍັງເຂັ້ມແຂງຂຶ້ນ.

ພວກນາໂລດນິກໄດ້ເປັນນັກປະຕິວັດທີ່ກ້າຫານ, ແຕ່ໄດ້ຕໍ່ສູ້ ໄປໃນທາງທີ່ບໍ່ຖືກຕ້ອງ. ພວກເຂົາໄດ້ເບິ່ງແຕ່ຊາວນາ ເທົ່າ ນັ້ນ ແລະບໍ່ໄດ້ເຫັນຊົນຊັ້ນກຳມະກອນອັນເປັນກຳລັງໃຫມ່ແລະ ສຳຄັນໃນການຕໍ່ສູ້ກັບພວກກົດຂີ່ຂູດຮີດ ທີ່ພວມເຕີບໃຫຍ່ຂຶ້ນ ຢູ່ ໃນປະເທດ.

ໃນຕອນທ້າຍຂອງສະຕະວັດທີ XIX ຢູ່ໃນລັດເຊຍຊາວກຳ

ມະກອນກໍໄດ້ເລີ່ມລຸກຂຶ້ນຕໍ່ສູ້. ພວກເຂົານັບເປັນ ຫລາຍຮ້ອຍ ແຕ່ບາງທີກໍຫລາຍພັນ, ເຮັດວຽກຢູ່ໃນໂຮງງານດຽວກັນ, ບັງຄັບບັນຊາເຄື່ອງຈັກຢືນຢູ່ໃກ້ໆກັນ, ໄດ້ປະຕິບັດວຽກງານ ອັນຫນຶ່ງອັນດຽວກັນ. ມັນເປັນການງ່າຍສຳລັບພວກເຂົາທີ່ຈະຕົກລົງກັນແລະຈັດຕັ້ງການຕໍ່ສູ້.

ຊາວກຳມະກອນໄດ້ເຂົ້າໃຈວ່າ ເຈົ້າຂອງໂຮງຈັກ ໂຮງງານພວມຮັ່ງມີຂຶ້ນ ກໍຍ້ອນວ່າພວກເຂົາໄດ້ເຮັດວຽກ ໃຫ້ເຂົາ ແລະກໍໄດ້ຮູ້ວ່າ ຖ້າຫາກພວກເຂົາຢຸດເຮັດວຽກ ນາຍທຶນກໍຈະບໍ່ໄດ້ກຳໄລ. ບາງທີຊາວກຳມະກອນກໍໄດ້ຄິດຄືແນວນັ້ນ - ຈຶ່ງໄດ້ຢຸດເຮັດວຽກງານ, ໄດ້ຢຸດເຄື່ອງຈັກໄວ້ແລະໄດ້ຮຽກຮ້ອງໃຫ້ປັບປຸງເງື່ອນໄຂເຮັດວຽກ.

ການນັດຢຸດງານອັນຍິ່ງໃຫຍ່ທີ່ສຸດອັນຫນຶ່ງ ແມ່ນໄດ້ເກີດຂຶ້ນໃນປີ ໑໘໘໕ ໃນໂຮງງານຕຳແຜ່ນຢູ່ທີ່ເມືອງ ໂອເລໂຄໂວ-ຊູເຢວ ໃກ້ເມືອງມົດສະກູ. ເຈົ້າຂອງໂຮງງານ, ນາຍທຶນໂມໂລຊົບ ໄດ້ປັບໃຫມຊາວກຳມະກອນ ສຳລັບຄ່າ ເຂົ້າຫນົມເລັກໆນ້ອຍ. ປີເຕີ ໂມອີເຊຊຽນໂກ ພ້ອມດ້ວຍ ເພື່ອນຮ່ວມງານຂອງເຂົາໄດ້ພາກັນຮ່າງຄຳຮຽກຮ້ອງເຖິງເຈົ້າຂອງໂຮງງານ. ພວກຊ່າງຕຳແຜ່ນທັງຫລາຍ ໄດ້ພາກັນໂຮມຊຸມນຸມຂຶ້ນຢ່າງລັບໆ ແລະໄດ້ຮັບຮອງເອົາຄຳຮຽກຮ້ອງເຫລົ່ານັ້ນ ພ້ອມທັງໄດ້ຕັດສິນໃຈຍື່ນຂໍ້ສະເຫນີເຫລົ່ານັ້ນ ໃຫ້ແກ່ເຈົ້າຂອງໂຮງງານແລະເລີ່ມຕົ້ນນັດຢຸດງານ.

ເມື່ອຫມາກຫວິດໄດ້ດັງຂຶ້ນໃນຊົ່ວໂມງທີ່ນັດຫມາຍກັນ ແລ້ວ

ພວກຊາວກຳມະກອນກໍໄດ້ພາກັນຢຸດວຽກງານ ແລະເຄື່ອງຈັກຕ່າງໆກໍໄດ້ຢຸດເຊົາລົງທັນທີ. ໂມໂລຊົບ ໄດ້ປະຕິເສດ ທີ່ຈະປະຕິບັດຕາມຄຳຮຽກຮ້ອງກ່ຽວກັບການຍົກເລີກ ການປັບໄໝແລະຂຶ້ນຄ່າແຮງງານໃຫ້ແກ່ກຳມະກອນ. ເຈົ້າຂອງໂຮງງານໄດ້ສົ່ງໂທລະເລກໄປຫາລັດຖະມົນຕີພະເຈົ້າຊາວ່າ : " ພວກຊາວກຳມະກອນໄດ້ກໍ່ການຈະລາຈົນຂຶ້ນໃນໂຮງງານ...ພວກເຮົາຂໍຮຽກຮ້ອງມາຍັງທ່ານດ້ວຍຄວາມເຄົາລົບ ເພື່ອໄດ້ໃຊ້ມາດຕາການຢຸດການຈະລາຈົນນີ້".

ປ.ອາ. ມອຍເຊເຢນໂກ
ຜູ້ນຳພາການຢຸດງານທີ່ໂຮງງານໂອເລໂຄໂວ-ຊູເຢໂວ
ໃນ ປີ ໑໘໘໕.

ພໍເຖິງຕອນແລງກອງທະຫານພະເຈົ້າຊາ ກໍໄດ້ ມາຮອດ.

ການເວລາລ່ວງກາຍໄປ ມື ມື້ແລ້ວ ແຕ່ບໍ່ມີຜູ້ໃດ ອອກໄປເຮັດວຽກ.

ເຈົ້າແຂວງຜູ້ມາຮອດເມືອງ ໂອເລໂຄໂວ-ຊູເຢໂວ ໄດ້ປະຕິເສດທີ່ຈະຮັບຟັງຄຳຮຽກຮ້ອງ ຂອງຊາວກຳມະກອນແລະໄດ້ສັ່ງໃຫ້ຈັບຜູ້ແທນ ທີ່ສົ່ງໄປຫາເຂົານັ້ນ. ຈາກນັ້ນ ກອງທະ

ຫານກໍໄດ້ເລີ່ມໂຈມຕີພວກນັດຢຸດງານ. ພວກຊາວ ກຳມະກອນ ຝ໐໐ ກວ່າຄົນ ກໍໄດ້ຖືກຈັບໄປ ຕາມຄຳສັ່ງຂອງພະເຈົ້າຊາ. ນັ້ນໝາຍຄວາມວ່າການນັດຢຸດງານ ໄດ້ຖືກປາບລົງແລ້ວ.

ການນັດຢຸດງານ ແມ່ນມີຄວາມໝາຍສຳຄັນທາງດ້ານເສດຖະກິດແລະການເມືອງບໍ່ໜ້ອຍເລີຍ. ເຖິງວ່າ ຈະໄດ້ມີ ກົດໝາຍຈາກລັດຖະບານຫ້າມໄວ້ວ່າ ການເຂົ້າຮ່ວມໃນການນັດຢຸດງານ ຕ້ອງໄດ້ຮັບໂທດດ້ວຍການເຂົ້າຄຸກກໍຕາມ. ຊາວກຳມະກອນໂຮງຈັກໂຮງງານ ໃນຕົວເມືອງຕ່າງໆ ກໍໄດ້ເລີ່ມລຸກຮືຂຶ້ນຕໍ່ສູ້ຕາມຕົວຢ່າງຂອງຊາວກຳມະກອນເມືອງໂອເລໂຄໂວ-ຊູເຢັບ. ບັນດາເຈົ້າຂອງໂຮງຈັກໂຮງງານ ຕາມສະຖານທີ່ຕ່າງໆ ໄດ້ຖືກບັງຄັບໃຫ້ມີການຍິນຍອມນັ້ນ ຄື ໃຫ້ລົດຄ່າ ປັບໄໝລົງແລະໃຫ້ຍົກເງິນເດືອນຂອງຊາວກຳມະກອນ ຂຶ້ນ ສູງໜ້ອຍໜຶ່ງ. ໃນປີ ໑໘໘ຝ ລັດຖະບານພະເຈົ້າຊາໄດ້ຖືກບີບບັງຄັບໃຫ້ອອກກົດໝາຍ ກ່ຽວກັບການຈຳກັດຄ່າປັບໄໝໄວ້. ສານໄດ້ຕັດສິນຜູ້ເຂົ້າຮ່ວມການນັດຢຸດງານ ທີ່ເມືອງໂອເລໂຄໂວ-ຊູເຢັບ ພົ້ນໂທດໄປ. ອໍ່ຍິນຍອມເລັກໆນ້ອຍ ເຫຼົ່ານີ້ໄດ້ປັບປຸງຊີວິດການເປັນຢູ່ ຂອງຊາວກຳມະກອນ ໃນລັດເຊຍພະເຈົ້າຊາຂຶ້ນໜ້ອຍໜຶ່ງ. ແຕ່ວ່າການຕໍ່ສູ້ຍັງຄົງດຳເນີນຢູ່ຕໍ່ໄປ. ຢ່າງໃດກໍຕາມຊາວກຳມະກອນກໍໄດ້ປະຕິບັດການເຄື່ອນໄຫວໄປຢ່າງບໍ່ມີການຈັດຕັ້ງ ແລະ ກະທຳໄປໂດຍລຳພັງຄືໄດ້ດຳເນີນການນັດຢຸດງານຢູ່ໃນໂຮງຈັກໂຮງງານໜຶ່ງແລ້ວ ຊ້ຳພັດໄປເຮັດວຽກຢູ່ໃນໂຮງງານອື່ນ. ອັນນັ້ນມັນເປັນການງ່າຍ

ສຳລັບພະເຈົ້າຊາແລະພວກນາຍທຶນ ທີ່ຈະປາບປາມ ການກະທຳຂອງພວກເຂົາຢູ່ໃນວິສາຫະກິດຍ່ອຍ. ນອກນັ້ນພວກຊາວກຳມະກອນກໍຍັງບໍ່ທັນໄດ້ເຂົ້າໃຈວ່າ ມັນຍັງບໍ່ເປັນການພຽງພໍ ທີ່ຈະໄປບີບຄັ້ນເອົາຂໍ້ຍິນຍອມເລັກໆນ້ອຍໆ ຈາກພວກຜູ້ກົດຂີ່ຂູດຣີດແລະວ່າ ເພື່ອທີ່ຈະໃຫ້ໄດ້ຮັບຊີວິດຜາສຸກນັ້ນ ພວກເຂົາຈຳເປັນຕ້ອງທຳລາຍອຳນາດຂອງພະເຈົ້າຊາ, ເຈົ້າທີ່ດິນ ແລະພວກນາຍທຶນລົງແລ້ວ ສ້າງຕັ້ງອຳນາດຂອງຕົນຂຶ້ນ.

ຈະເຮັດແນວໃດ ຈິ່ງຈະໄດ້ຮັບໄຊຊະນະ? ຈະເຮັດ ແນວໃດຈຶ່ງຈະເຮັດໃຫ້ບັນດາຊາວກຳມະກອນແລະປະຊາຊົນຜູ້ອອກແຮງງານເຂົ້າຮ່ວມໃນການຕໍ່ສູ້?, ວະລາດີເມຍລະ ອີລິດ ເລນິນອາຈານສອນແລະນັກຈັດຕັ້ງຜູ້ຍິ່ງໃຫຍ່ແຫ່ງຊາວຜູ້ອອກແຮງງານໄດ້ເປັນຜູ້ຕອບບັນຫາເຫຼົ່ານີ້.

ວະລາດີເມຍລະ ອີລິດ ອູລະຢານອບ (ເລນິນ) ໄດ້ເກີດເມື່ອວັນທີ ໒໒ ເດືອນເມສາ ປີ ໑໘໗໐ ທີ່ເມືອງຊິມບີລະສະກະ. ຄອບຄົວຂອງອູລະຢານອບນີ້ ໄດ້ເກີດມີຄວາມເຫັນ ອົກເຫັນໃຈຕໍ່ປະຊາຊົນຜູ້ອອກແຮງງານ ແລະທັງໄດ້ຮູ້ຈັກຜົນງານຂອງ ເຊລະນີເຊັບສະກີ ແລະ ເນກະລາຊົບ ແລະ ຂອງນັກຂຽນລັດເຊຍຄົນອື່ນໆເປັນຢ່າງດີ ຜູ້ຊຶ່ງໄດ້ເຂົ້າຂ້າງ ກັບມະຫາຊົນຜູ້ທີ່ຖືກກົດຂີ່ຂູດຣີດໃນສະໄຫມລັດເຊຍ ພະເຈົ້າຊາ. ພໍ່ຂອງວະລາດີເມຍລະ ອີລິດ, ອີລິຢາ ນິໂກລາເຢວິດ ອູລະ-ຢານອບ (໑໘໓໑–໑໘໘໖) ຜູ້ເປັນຄູສອນ, ແລະຕໍ່ມາເປັນຜູ້ກວດກາແລະອຳນວຍການຂອງໂຮງຮຽນລັດແຂວງຊິມບີລະສະ

ກະນັ້ນ ໄດ້ສ້າງຜົນງານການສຶກສາໄວ້ຫລາຍຢ່າງ ໃຫ້ແກ່ປະຊາຊົນໃນເຂດແມ່ນ້ຳໂວນກາ ຄື ຊູວາເຊດ ມົນດະວາ ແລະບາສະເກຍລະ. ອ້າຍກົກຂອງວະລາດີເມຍລະ ອິລິດ, ອາເລັກຊານເດີ ອິລິດ ອູລະຢານອບ, ໄດ້ເປັນນັກ ປະຕິວັດ. ຍ້ອນການເຂົ້າຮ່ວມໃນການລອບສັງຫານຊີວິດ ພະເຈົ້າຊາອາເລັກຊານເດີທີIIIເອົາຈິງໄດ້ຖືກປະຫານຊີວິດ.ໃນເວລານັ້ນວະລາດີເມຍລະ ອິລິດ ມີອາຍຸໄດ້ ໑໗ ປີ. ໃນຂະນະ ທີ່ ມີຄວາມໂສກເສົ້າຢ່າງສຸດຊຶ້ງ ຕໍ່ການຕາຍຂອງອ້າຍ ທີ່ຮັກຂອງເຂົາແລະຍອມຮັບວ່າເຂົາເປັນຜູ້ມີຄວາມກ້າຫານ ແລະຄວາມເດັດດ່ຽວນັ້ນ, ວະລາດີເມຍລະ ອິລິດ ກໍບໍ່ສາມາດ ຈະຍອມຮັບເອົາເສັ້ນທາງການຕໍ່ສູ້ທີ່ອາເລັກຊານເດີ ອິລິດ ໄດ້ເລືອກເອົານັ້ນ. ເຂົາໄດ້ປະກາດຢ່າງເດັດດ່ຽວ ໃນເວລານັ້ນວ່າ: "ບໍ່, ພວກເຮົາຈະບໍ່ໄປຕາມທາງເສັ້ນນັ້ນ. ທາງເສັ້ນນັ້ນ ບໍ່ແມ່ນທາງທີ່ຈະຕ້ອງໄປ !"

ເລນິນ ໄດ້ຕັດສິນໃຈຕໍ່ພາລະກິດທີ່ທ່ານຈະອຸທິດຊີວິດໃຫ້ນັ້ນແລ້ວ. ທ່ານໄດ້ອຸທິດຊີວິດຂອງທ່ານ ຕໍ່ພາລະກິດການຕໍ່ສູ້ເພື່ອການປົດປ່ອຍປະຊາຊົນຜູ້ອອກແຮງງານ, ເພື່ອການຈັດຕັ້ງລະບອບສັງຄົມອັນໃໝ່ໃນໂລກ ເຊິ່ງພາຍໃຕ້ລະບອບນັ້ນ ບັນດາອຸປະກອນແລະພາຫະນະການຜະລິດ (ທີ່ດິນ, ໂຮງງານຕ່າງໆ,ບໍ່ແຮ່, ເວົ້າໃຫ້ສັ້ນກໍໄດ້ແກ່ສິ່ງທີ່ໃຊ້ໄປ ເພື່ອການຜະລິດສິນຄ້າທາງດ້ານວັດຖຸທີ່ມີຄວາມຈຳເປັນແກ່ຜູ້ຄົນທັງຫລາຍ)ຈະບໍ່ເປັນຂອງຜູ້ໃດຜູ້ໜຶ່ງ, ແຕ່ເປັນຂອງສ່ວນລວມທັງໝົດ ເຊິ່ງຈະບໍ່

ມີຜູ້ກົດຂີ່ຂູດຮີດແລະຜູ້ທີ່ຖືກກົດຂີ່ຂູດຮີດ, ຜູ້ຄົນທັງຫມົດຈະມີສິດສະເຫມີພາບກັນ ແລະແຕ່ລະຄົນກໍຈະເຮັດວຽກໄປຕາມຄວາມສາມາດຂອງຕົນ ເພື່ອຜົນປະໂຫຍດແກ່ສັງຄົມທັງຫມົດແລະຈະສາມາດຊົມໃຊ້ຕາມຄຳຮຽກຮ້ອງຕ້ອງການຂອງຕົນ ເພາະວ່າການຜະລິດແບບລວມຫມູ່ນັ້ນ ຈະຮັບປະກັນໃຫ້ມີຄວາມອຸດົມ ສົມບູນແທ້. ລະບອບສັງຄົມນັ້ນເອີ້ນວ່າລະບອບກອມມູນິດ .ບັນດານັກຕໍ່ສູ້ ແລະບັນດາຜູ້ນຳຂອງພວກທີ່ຖືກກົດຂີ່ຂູດຮີດ,ບັນດານັກປະຕິວັດ ແລະນັກປາດ ໄດ້ພາກັນໄຝ່ຝັນມາຕະຫລອດປະຫວັດສາດຂອງມວນມະນຸດຊາດ ກ່ຽວກັບຊີວິດທີ່ມີເສລີພາບ ແລະຄວາມຜາສຸກສຳລັບຜູ້ຄົນທັງຫລາຍໃນໂລກ. ເຖິງຢ່າງໃດ ກໍຕາມກໍບໍ່ມີຜູ້ໃດຜູ້ຫນຶ່ງທີ່ສາມາດສະແດງໃຫ້ເຫັນເຖິງ ວິທີການຈີ່ະບັນລຸເປົ້າຫມາຍນັ້ນໄດ້. ທ້າຍທີ່ສຸດເສັ້ນທາງທີ່ຈະສາມາດສ້າງລະບອບສັງຄົມກອມມູນິດນັ້ນ ກໍໄດ້ຖືກເປີດເຜີຍ ອອກມາໂດຍນັກປະຕິວັດ ແລະນັກຄິດຜູ້ຍິ່ງໃຫຍ່ ຄື ການ ມາກ ແລະຟະເລເດລິກ ອັງແກນ ຜູ້ທີ່ອາໄສຢູ່ ໃນປະເທດ ເຢຍລະມັນເມື່ອສະຕະວັດທີ XIX. ຄຳສອນຂອງພວກເຂົາ ເຊິ່ງພາຍຫລັງຕໍ່ມາໄດ້ເອີ້ນວ່າ ລັດທິມາກນັ້ນ ມັນບໍ່ແມ່ນຄວາມ ໄຝ່ຝັນແລະຄຳເທສະນາທີ່ເຮັດໃຫ້ຊີວິດແຕກຕ່າງກັນອອກໄປ,ແຕ່ມັນເປັນວິທະຍາສາດທີ່ແທ້ຈິງ ກ່ຽວກັບກົດເກນການຂະຫຍາຍຕົວຂອງສັງຄົມມະນຸດ. ເພາະສະນັ້ນ ຄຳສອນຂອງມາກແລະອັງແກນຈຶ່ງມີຊື່ວ່າ ລັດທິກອມມູນິດວິທະຍາສາດຄືກັນ. ດ້ວຍ ຜົນຂອງການສຶກສາຄົ້ນຄວ້າອັນເລິກເຊິ່ງ ແລະ ເຂົ້າອົກເຂົ້າໃຈ

ກ່ຽວກັບປະຫວັດສາດແລະຊີວິດ ຂອງສັງຄົມມະນຸດຊາດ ນັ້ນ, ມາກ ແລະ ອັງແກນ ຈຶ່ງໄດ້ຊີ້ໃຫ້ເຫັນວ່າຄວາມລຳບາກແລະຄວາມຜິດພາດຕ່າງໆ ຂອງລະບອບທຶນນິຍົມ-ໄດ້ແກ່ ການໃຊ້ຄວາມຮຸນແຮງ, ການກົດຂີ່ຂູດຮີດ, ການຫວ່າງງານ, ຄວາມທຸກຍາກ, ຄວາມອຶດຢາກມີຢູ່ທົ່ວໆທີ່ມີອາຫານເຫລືອກິນເຫລືອໃຊ້, ສົງຄາມຕ່າງໆ-ອັນເກີດຂຶ້ນມາຈາກການເປັນກຳມະສິດພາຫະນະການຜະລິດທຸກຢ່າງ ໂດຍຄົນຜູ້ຮັ່ງມີ, ແລະນາຍທຶນຜູ້ຊຶ່ງບໍ່ໄດ້ເອົາໃຈໃສ່ຕໍ່ສະຫວັດດີພາບ ຂອງປະຊາຊົນ, ແຕ່ຄິດເຖິງພຽງແຕ່ການຍົກຜົນກຳໄລຂອງຕົນໃຫ້ສູງຂຶ້ນເທົ່ານັ້ນແລະໃນເວລາດຽວກັນນັ້ນ ລັດຖະບານຂອງປະເທດທຶນນິຍົມ ກໍໄດ້ໃຫ້ການສະຫນັບສະຫນູນແກ່ພວກເຂົາຢ່າງເຕັມສ່ວນ. ພວກຄົນຮັ່ງມີແລະພວກນາຍທຶນ ຍາມໃດກໍບໍ່ປະລະຜົນປະໂຫຍດ ແລະອະພິສິດຂອງພວກເຂົາຢ່າງສະຫມັກໃຈ, ເພາະສະນັ້ນ ເພື່ອທີ່ຈະສ້າງຊີວິດຂອງມວນມະນຸດຊາດຂຶ້ນມາໃຫມ່ດ້ວຍຫລັກການທີ່ມີເຫດມີຜົນ ແລະມີຄວາມຍຸຕິທຳນັ້ນ ມັນຈຶ່ງຈຳເປັນຕ້ອງດຳເນີນໄປດ້ວຍການປະຕິວັດ ນັ້ນກໍຄື ໂຄ່ນລົ້ມລັດຖະບານ ທີ່ສະຫນັບສະຫນູນນາຍທຶນ, ຍຶດເອົາພາຫະນະການຜະລິດທຸກຢ່າງຈາກຄົນຮັ່ງມີແລະເຮັດໃຫ້ພາຫະນະເຫລົ່ານັ້ນເປັນສົມບັດຂອງສ່ວນລວມ. ບັນດາປະຊາຊົນຜູ້ອອກແຮງງານທັງຫມົດ ແມ່ນມີ

ຄຳວ່າກອມມູນິດ ມາຈາກຮາກສັບຂອງພາສາລາຕິນທີ່ວ່າ - ຫມາຍເຖິງສ່ວນລວມ.

ຄວາມສົນໃຈໃນເລື່ອງນີ້, ແຕ່ວ່າເພື່ອທີ່ຈະນຳພາ ການຕໍ່ສູ້ຂອງພວກເຂົາ ແລະນຳເອົາການຕໍ່ສູ້ໄປສູ່ໄຊຊະນະໄດ້ນັ້ນມັນກໍມີແຕ່ຊົນຊັ້ນກຳມາຊີບ (ຊົນຊັ້ນຜູ້ອອກແຮງງານ) ເທົ່ານັ້ນ ເພາະວ່າຊົນຊັ້ນນີ້ໄດ້ມີບັດຊະນຽມ ການອອກແຮງງານແລະການຕໍ່ສູ້ຕ້ານພວກນາຍທຶນໄປພ້ອມໆກັນທັງຍັງມີການຈັດຕັ້ງ, ຄວາມສາມັກຄີແລະຄວາມເດັດດ່ຽວອີກດ້ວຍ. ພວກຊາວກຳມາຊີບບໍ່ມີພາຫະນະການຜະລິດເປັນຂອງຕົນເອງ, ພວກເຂົາ ບໍ່ມີຮ້ານສ້ອມແປງເປັນຂອງຕົນເອງ ຄືດັ່ງພວກຊ່າງຫັດຖະກຳ ແລະກໍທັງບໍ່ມີດິນຕອນໃດຕອນໜຶ່ງ ຄືດັ່ງຊາວນາອີກດ້ວຍ. ພວກເຂົາມີຊີວິດຂຶ້ນຢູ່ກັບແຮງງານຂອງພວກເຂົາເທົ່ານັ້ນ. ເພາະສະນັ້ນມາກ ຈຶ່ງໄດ້ເວົ້າວ່າ "ພວກເຂົາບໍ່ມີຫຍັງຈະທຳລາຍ ນອກຈາກສາຍໂສ້ຂອງພວກເຂົາເທົ່ານັ້ນ". ພາຍຫລັງ ໄຊຊະນະຂອງການປະຕິວັດແລ້ວ ຊາວກຳມາຊີບກໍນຳພາປະຊາຊົນ ຜູ້ອອກແຮງງານທັງໝົດຕໍ່ສູ້ເພື່ອສ້າງສາສັງຄົມແບບສັງຄົມນິຍົມຂຶ້ນ ຄືດັ່ງບົດຮຽນທາງປະຫວັດສາດ ຂອງຫລາຍໆປະເທດໄດ້ສະແດງໃຫ້ເຫັນ. ປະເທດທີ່ການປະຕິວັດຂອງຊາວກຳມາຊີບມີໄຊຊະນະນັ້ນ ຈຳຕ້ອງດຳເນີນເສັ້ນທາງອັນຍາວນານກ່ອນທີ່ຈະບັນລຸເຖິງເປົ້າໝາຍອັນສຸດທ້າຍ ໄດ້ແກ່ການສ້າງລະບອບກອມມູນິດຂຶ້ນ, ປະເທດນັ້ນຈຳຕ້ອງເອົາຊະນະອຸປະສັກຫລາຍຢ່າງ. ການສ້າງພະເດັດການກຳມາຊີບ ແລະກຳມະສິດສ່ວນລວມໃນພາຫະນະການຜະລິດນັ້ນ ມັນເປັນບາດກ້າວອັນທຳອິດໃນເສັ້ນທາງອັນນີ້. ບາດກ້າວນີ້ຈະໃຫ້ໂອກາດແກ່ປະຊາຊົນ

ຜູ້ອອກແຮງງານ ໄດ້ເລີ່ມສ້າງລະບອບສັງຄົມນິຍົມຂຶ້ນ – ຊຶ່ງ
ເປັນຂັ້ນທຳອິດຂອງສັງຄົມກອມມູນິດ. ມາກ ໄດ້ກ່າວໄວ້ ວ່າ
"ສັງຄົມນິຍົມ–ໄດ້ແກ່ລະບອບຂອງສັງຄົມນັ້ນ ຄົນໄດ້ມີ ພາຫະ
ນະການຜະລິດຂັ້ນພື້ນຖານ ມາຢູ່ໃນກຳມືຂອງລັດແລ້ວ, ລັດກໍ
ສາມາດດຳເນີນວຽກງານເສດຖະກິດຂອງປະເທດໄປຢ່າງຖືກ
ຕ້ອງ, ຕາມແຜນການທີ່ວາງໄວ້ນັ້ນ. ເພາະສະນັ້ນມັນຈຶ່ງຈະ
ຂະຫຍາຍເສດຖະກິດນັ້ນໄປໄດ້ຢ່າງວ່ອງໄວ ແລະ ປະສົບຜົນ
ສຳເລັດຫລາຍຂຶ້ນກວ່າບັນດາປະເທດທຶນນິຍົມ, ເຖິງຢ່າງໃດ
ກໍຕາມ ມັນກໍຈະກິນເວລາດົນນານ ກ່ອນທີ່ການຂະຫຍາຍ ຕົວ
ທາງເສດຖະກິດຈະໃຫ້ຄວາມອຸດົມສົມບູນທາງສິນຄ້າ ວັດຖຸ ,
ແລະວຽກງານຈະຕອບສະໜອງຄວາມຮຽກຮ້ອງ ຕ້ອງການທີ່
ຈຳເປັນໃຫ້ແກ່ສະມາຊິກຂອງສັງຄົມແບບສັງຄົມນິຍົມນັ້ນໄດ້ທຸກ
ທຸກຄົນ. ເພາະສະນັ້ນ ພາຍໃຕ້ລະບອບສັງຄົມນິຍົມນີ້ທຸກໆຄົນ
ແມ່ນເຮັດວຽກໄປຕາມຄວາມສາມາດຂອງຕົນ ແຕ່ການ ຕອບ
ແທນໃຫ້ແກ່ວຽກງານຂອງເຂົາ ກໍແມ່ນຂຶ້ນຢູ່ກັບປະລິມານແລະ
ຄຸນຄ່າວຽກງານຂອງເຂົາ. ເພາະສະນັ້ນ ພາຍໃຕ້ ລະບອບ
ສັງຄົມນິຍົມນີ້ ຫລັກການຈຶ່ງມີວ່າ "ທຸກໆຄົນເຮັດວຽກ ຕາມ
ຄວາມສາມາດແລະຊົມໃຊ້ຕາມແຮງງານຂອງຕົນ" ນັ້ນ ເປັນ
ຫລັກການພື້ນຖານ. ຊາວກຳມະກອນ, ປະຊາຊົນຜູ້ອອກແຮງ
ງານໃນທຸກໆປະເທດ ທີ່ນຳພາການຕໍ່ສູ້ປະຕິວັດ ເພື່ອປົດປ່ອຍ
ຕົນເອງນັ້ນ ແມ່ນມີກຳລັງພຽງພໍຢູ່ສະເໝີທີ່ຈະຕໍ່ຕ້ານກັບພວກ
ກົດຂີ່ຂູດຮີດ, ກັບສັດຕູພາຍໃນຂອງຕົນ.ແຕ່ວ່າເພື່ອທີ່ຈະ ຍັບ

ຍັງບໍ່ໃຫ້ພວກນາຍທຶນໃນປະເທດອື່ນໆ ມາບົບລົ້ມການປະຕິວັດ ແລະເພື່ອໃຫ້ລະບອບກອມມູນິດມີໄຊໄປທົ່ວໂລກນັ້ນມັນຈຳເປັນຕ້ອງມີມິດຕະພາບ ແລະການຊ່ອຍເຫລືອເຊິ່ງກັນແລະກັນຂອງຊາວກຳມະກອນໃນທຸກໆປະເທດເຂົ້າໃນການຕໍ່ສູ້ ຂອງ ພວກເຂົາຕ້ານພວກກົດຂີ່ຂູດຮີດໃນທົ່ວໂລກ. ດັ່ງນັ້ນ ມາກແລະອັງແກນຈຶ່ງໄດ້ປະກາດຄຳຂວັນອອກມາວ່າ "ຊາວກຳມາຊີບ ໃນທຸກໆປະເທດ ຈົ່ງສາມັກຄີກັນເຂົ້າ !".

ຄືກັນກັບກອງທັບ ເພື່ອທີ່ຈະໃຫ້ມີຄວາມສາມາດຕໍ່ສູ້ ແລະເອົາຊະນະໄດ້ນັ້ນ ມັນຈຳເປັນຕ້ອງມີຜູ້ບັງຄັບບັນຊາ, ມີກອງບັນຊາການ, ມີແຜນການທະຫານ ທີ່ຮັບຮອງເອົາໄດ້, ເຊັ່ນດຽວກັນນັ້ນ ຊາວກຳມາຊີບທີ່ຢູ່ໃນການຕໍ່ສູ້ ແບບປະຕິວັດກໍຈຳເປັນຕ້ອງມີຜູ້ນຳພາ, ມີອົງການຈັດຕັ້ງສູນກາງຊີ້ນຳຄວາມພະຍາຍາມຂອງຕົນ ເພື່ອໃຫ້ໄດ້ບັນລຸເຖິງເປົ້າຫມາຍອັນນັ້ນ.ອົງການຈັດຕັ້ງທີ່ວ່ານີ້ ໄດ້ແກ່ພັກຂອງຊາວກຳມາຊີບ ເຊິ່ງສະມາຊິກຂອງພັກນີ້ ຕ້ອງເປັນຕົວແທນຂອງພັກທີ່ມີສະຕິ,ກ້າວຫນ້າ, ຫນັກແຫນ້ນ, ກ້າຫານ ແລະເປັນບຸກຄົນທີ່ໄດ້ຮັບຄວາມ ເຄົາລົບນັບຖື ແລະໄວ້ເນື້ອເຊື່ອໃຈຈາກເພື່ອນມິດສະຫາຍຂອງຕົນ. ພັກຕ້ອງມີແຜນການອັນຈະແຈ້ງໃນການເຄື່ອນໄຫວ ປະຕິວັດ, ພັກຕ້ອງອະທິບາຍບົດບາດແລະຫນ້າທີ່ຂອງຕົນ ແກ່ຊາວກຳມະກອນ, ຕ້ອງເຕົ້າໂຮມພວກເຂົາ ແລະຊີ້ນຳພວກເຂົາເຂົ້າໃນການຕໍ່ສູ້. ມາກແລະອັງແກນໄດ້ຕັ້ງພັກທີ່ວ່ານັ້ນຂຶ້ນໃນສະໄຫມຂອງຕົນ ແລະເອີ້ນຊື່ພັກນີ້ນວ່າ ພັກກອມມູນິດ. ຊື່ນັ້ນ ແມ່ນມີ

ຄວາມຫມາຍວ່າ ເປົ້າຫມາຍອັນສຸດທ້າຍຂອງພັກນັ້ນ ໄດ້ແກ່ການສ້າງລະບອບກອມມູນິດຂຶ້ນ.

ເມື່ອກ່ອນຫນ້ານີ້ ຫລາຍປີນັ້ນ ພວກເຮົາເວົ້າໄດ້ວ່າ ພັກຂອງຊົນຊັ້ນກຳມະກອນຢູ່ໃນເຢຍລະມັນ, ຝະລັ່ງແລະປະເທດເອີລົບອື່ນໆນັ້ນ ໄດ້ເອີ້ນຕົນເອງວ່າ ພັກສັງຄົມນິຍົມ, ນັ້ນເປັນການພິສູດໃຫ້ເຫັນເຖິງຄວາມພະຍາຍາມ ຂອງພວກເຂົາທີ່ຈະຈັດຕັ້ງລະບອບສັງຄົມນິຍົມຂຶ້ນ. ໃນຕົ້ນສະຕະວັດທີ XX ນັ້ນພວກນັກມາກຊິດປະຕິວັດລັດເຊຍ ໄດ້ເອີ້ນຕົນເອງວ່າ ນັກສັງຄົມນິຍົມ ຫລືວ່ານັກສັງຄົມນິຍົມ-ປະຊາທິປະໄຕ.

ເລນິນໄດ້ສຶກສາຄົ້ນຄວ້າຜົນງານຂອງມາກແລະອັງແກນຕັ້ງແຕ່ຍັງຫນຸ່ມນ້ອຍ ແລະກໍໄດ້ກາຍເປັນຜູ້ສືບທອດຢ່າງສະຫລາດສ່ອງໃສ ແລະມີຜົນສຳເລັດ. ຄົນໄດ້ຂະຫຍາຍແລະ ເພີ່ມເຕີມລັດທິມາກຢ່າງມີຫົວຄິດປະດິດສ້າງແລ້ວ ເຂົາກໍໄດ້ສ້າງພັກນັກມາກຊິດປະຕິວັດທີ່ແທ້ຈິງຂຶ້ນໃນລັດເຊຍ ເຊິ່ງນຳພາ ການຕໍ່ສູ້ຂອງຊາວກຳມະຊີບ ແລະຊາວຜູ້ອອກແຮງງານທັງຫມົດ ຂອງລັດເຊຍ ເພື່ອນຳເອົາແນວຄິດຂອງມາກແລະອັງແກນມາປະຕິບັດໃຫ້ເປັນຈິງຂຶ້ນ.

ເມື່ອອາຍຸດໄດ້ ໑໗ ປີ ເລນິນກໍໄດ້ເຂົ້າສຶກສາຢູ່ໃນມະຫາວິທະຍາໄລ ກາຊານ ແລະໃນບໍ່ຊ້າກໍໄດ້ເຂົ້າຮ່ວມ ໃນ ການເດີນຂະບວນທາງການເມືອງຂອງພວກນັກສຶກສາ. ພວກຂ້າລາ

ປະມວນບົດນິພົນກ. ມາກ, ຝ. ອັງແກນ. ເຫຼັ້ມທີ໔, ຫນ້າ໔໕໖.

ຊະການຊັ້ນຈຳພະເຈົ້າຊາ ໄດ້ໄລ່ເຂົາອອກຈາກມະຫາ ວິທະຍາໄລແລະຖືກເນລະເທດໄປຢູ່ໃນຊົນນະບົດ. ເມື່ອຢູ່ໃນ ລະຫວ່າງການເນລະເທດນັ້ນ ເຂົາໄດ້ມີໂອກາດໄປທຳຄວາມ ຮູ້ຈັກກັບສະພາບການອັນທຸກຍາກຂອງຊາວນາ.ລັນໄດ້ເປີດເບິ່ງ

ວ.ອິ.ເລນິນ. ທ້າຍໄລຍະ ປີ ໑໘໘໐.

ປົ້ມຂອງມາກແລະອັງແກນຫຼາຍຄັ້ງແລ້ວ, ວ.ອີ.ເລນິນໄດ້ ພະຍາຍາມເລີ່ມຕົ້ນເຮັດວຽກປະຕິວັດຢ່າງຫ້າວຫັນທີ່ທັນໃດ.

ຫລັງຈາກສັ້ງສູດໄລຍະເວລາເນລະເທດແລ້ວລັດຖະບານພະເຈົ້າຊາກໍບໍ່ໄດ້ອະນຸຍາດໃຫ້ ເລນິນ ເຂົ້າຮຽນຕໍ່ໃນສະຖາບັນການສຶກສາຊັ້ນສູງແຫ່ງໃດແຫ່ງຫນຶ່ງອີກເລີຍ ໃນປະເທດ. ດັ່ງນັ້ນເຂົາຈຶ່ງໄດ້ຕັດສິນໃຈຮຽນດ້ວຍຕົນເອງແລະໄດ້ສຳເລັດຫລັກສູດການຮຽນ ๔ ປີ ໃນຊົ່ວໄລຍະເວລາປີເຄິ່ງ. ໃນ ປີ ໑໘໙໑ ເຂົາກໍໄດ້ຜ່ານການສອບເສັງ ຂອງພະແນກ ນິຕິສາດແຫ່ງມະຫາວິທະຍາໄລ ເປເຕລະບຸກໄປຢ່າງຫນ້າສັນລະເສີນແລະໄດ້ຮັບປະກາສະນີຍະບັດອັນດັບຫນຶ່ງ.

ໃນປີ ໑໘໙໓ ວ.ອີ. ເລນິນ ໄດ້ເດີນທາງມາສູ່ເມືອງເປເຕລະບຸກ ແລ້ວກໍໄດ້ຕັດສິນໃຈຕັ້ງຖິ່ນຖານຢູ່ໃນຕົວເມືອງເຊິ່ງມີໂຮງຈັກໂຮງງານຫລາຍແຫ່ງຕັ້ງຢູ່ພ້ອມທັງມີຊາວກຳມະກອນຈຳນວນຫລວງຫລາຍອີກດ້ວຍ. ຢູ່ບ່ອນນີ້ເອງເລນິນໄດ້ຈັດຕັ້ງກຸ່ມກຳມະກອນຂຶ້ນ. ຊາວກຳມະກອນໄດ້ມາຊຸມນຸມກັນຢ່າງລັບລັບ. ພວກເຂົາໄດ້ຟັງເລນິນຜູ້ຫນຸ່ມນ້ອຍ ຢ່າງຕັ້ງອົກ ຕັ້ງໃຈເຊິ່ງໄດ້ອະທິບາຍໃຫ້ພວກເຂົາເຫັນເຖິງຄວາມຈຳເປັນ ໃນການເຕົ້າໂຮມຊາວກຳມະກອນ ທີ່ຢູ່ໃນໂຮງຈັກ ໂຮງງານ ທີ່ເມືອງເປເຕລະບຸກ, ເມືອງອື່ນໆຈາກທົ່ວປະເທດເຂົ້າຫາກັນ. ເລນິນ ໄດ້ສອນພວກເຂົາວ່າ ມັນມີຄວາມຈຳເປັນ ທີ່ຈະຕ້ອງຕໍ່ສູ້ບໍ່ແມ່ນເພື່ອຄຳຮຽກຮ້ອງສ່ວນຕົວຂອງຊາວກຳມະກອນ ແຕ່ຫາກເພື່ອໃຫ້ອຳນາດທັງຫມົດຢູ່ໃນປະເທດນັ້ນ ຕົກໄປຢູ່ໃນກຳ

ມືຂອງຊາວຜູ້ອອກແຮງງານ. ໃນປີ ໑໘໙໕ ວ.ອີ-ເລນິນໄດ້ເຕົ້າໂຮມເອົາກຸ່ມຊາວກຳມະກອນ ຂອງເມືອງ ເປເຕລະບຸກເຂົ້າມາເປັນອົງການຈັດຕັ້ງອັນໜຶ່ງອັນດຽວກັນ ຄື "ສະຫະພັນຕໍ່ສູ້ເພື່ອການປົດປ່ອຍຊົນຊັ້ນກຳມະກອນ" .ພາຍໃຕ້ການນຳພາຂອງອົງການຈັດຕັ້ງນີ້ ຈຶ່ງໄດ້ເລີ່ມເກີດມີການນັດຢຸດງານຂຶ້ນຢູ່ໃນເມືອງເປເຕລະບຸກ ເຊິ່ງໃນເວລາດຽວກັນນັ້ນກໍໄດ້ມີຊາວກຳມະກອນຈາກໂຮງຈັກໂຮງງານຕ່າງໆຫລາຍສິບພັນຄົນເຂົ້າຮ່ວມນຳ. ວ.ອີ. ເລນິນ ບໍ່ແມ່ນພຽງແຕ່ນຳພາກຸ່ມຊາວ ກຳມະກອນເທົ່ານັ້ນ. ເຂົາຍັງໄດ້ຂຽນປຶ້ມແລະໃບປິວອອກ ເຊິ່ງພວກນັກມາກຊິດໄດ້ແຈກໄປທົ່ວປະເທດ ຢ່າງຜິດ ກົດໝາຍ. ເລນິນ ໄດ້ຮຽກຮ້ອງຊາວກຳມະກອນ ແລະ ຊາວຜູ້ອອກແຮງງານທັງໝົດໃຫ້ທຳການຕໍ່ສູ້ ຢ່າງເດັດດ່ຽວ ກັບພະເຈົ້າຊາ, ພວກນາຍທຶນແລະພວກເຈົ້າທີ່ດິນ. ເຂົາໄດ້ອະທິບາຍວ່າ ໄຊຊະນະໃນການຕໍ່ສູ້ນີ້ ອາດຈະໄດ້ຮັບແຕ່ໃນກໍລະນີທີ່ວ່າ ຊົນຊັ້ນກຳມະກອນເປັນຜູ້ນຳພາເທົ່ານັ້ນ. ດ້ວຍອິດທິພົນຂອງປຶ້ມແລະໃບປິວຂອງທ່ານເລນິນນັ້ນ ຊາວກຳມະກອນຢູ່ໃນເມືອງ ອື່ນໆຂອງປະເທດຈຶ່ງໄດ້ເລີ່ມໂຮມເຂົ້າຫາກັນ ໂດຍເອົາຊາວ ກຳມະກອນເມືອງເປເຕລະບຸກເປັນຕົວຢ່າງ.

ໃນທ້າຍປີ ໑໘໙໕ ເລນິນ ໄດ້ຖືກຈັບ ແລະ ສົ່ງເອົາເຂົ້າໄປຢູ່ໃນຫ້ອງຂັງຫ້ອງໜຶ່ງຂອງຄຸກ. ແຕ່ພາຍຫລັງຕໍ່ມາ ກໍໄດ້ຖືກເນລະເທດໄປຢູ່ຊີບີລີທີ່ຫ່າງໄກ ແລະຈາກບ່ອນນັ້ນເອງເລນິນກໍໄດ້ພົບໂອກາດທີ່ຈະນຳພາຂະບວນການກຳມະກອນ ໃຫ້

ກ້າວໄປຢ່າງກວ້າງຂວາງ. ຈຳນວນຜູ້ຊ່ອຍເຫລືອ ໄດ້ແກ່ພວກນັກປະຕິວັດກຳມະກອນ ກໍໄດ້ເພີ່ມທະວີຂຶ້ນຫລາຍ ແລະ ພາຍໃຕ້ອິດທິພົນຂອງເຂົານັ້ນ ພວກເຂົາກໍໄດ້ເຂົ້າຮ່ວມ ເສັ້ນທາງການຕໍ່ສູ້ທີ່ມາກແລະອົງແກນ ໄດ້ຊີ້ແຈງອອກໄວ້ແລ້ວນັ້ນ.

ຫລັງຈາກການເນລະເທດໄປຢູ່ຊູບີເລີນແລ້ວ ເລນິນ ກໍບໍ່ສາມາດຈະຢູ່ໃນລັດເຊຍຕໍ່ໄປໄດ້ອີກ ເພາະພະເຈົ້າຊາໄດ້ສັ່ງຕຳຫລວດຕິດຕາມເຂົາຢູ່ທຸກໆບາດຢ່າງ ແລະກໍນາບຂູ່ທີ່ຈະຈັບເຂົາໃຫມ່. ດັ່ງນັ້ນເລນິນຈຶ່ງໄດ້ຕັດສິນໃຈ ເດີນທາງອອກໄປຕ່າງປະເທດ ແລະຈາກບ່ອນນັ້ນ ເຂົາກໍໄດ້ດຳເນີນສືບຕໍ່ ນຳພາການຕໍ່ສູ້ຂອງຊາວຜູ້ອອກແຮງງານລັດເຊຍ.

ກ່ອນອື່ນຫມົດ ມັນມີຄວາມຈຳເປັນທີ່ຈະເຕົ້າໂຮມເອົາຊາວກຳມະກອນຜູ້ທີ່ກ້າວຫນ້າຢູ່ໃນປະເທດ ໃຫ້ເຂົ້າມາເປັນພັກປະຕິວັດອັນຫນຶ່ງອັນດຽວກັນ ໄດ້ແກ່ພັກຂອງພວກນັກມາກຊິດ. ອັນນີ້ຈະດຳເນີນໄປໄດ້ແນວໃດ ໃນເມື່ອມັນຢູ່ໃນສະພາບ ການຂອງລະບົບຕຳຫລວດແຫ່ງພະເຈົ້າຊາລັດເຊຍ? ໃນເງື່ອນໄຂອັນນັ້ນທ່ານເລນິນກໍໄດ້ສະເຫນີໃຫ້ເລີ່ມຈັດຕັ້ງ ຫນັງສືພິມຊາວກຳມະກອນທົ່ວລັດເຊຍຂຶ້ນສະບັບຫນຶ່ງ.

ໃນປີ ໑໙໐໐ ຫນັງສືພິມ "ອິສະກະລາ" ຂອງເລນິນ ສະບັບທຳອິດກໍໄດ້ປາກົດຂຶ້ນຢູ່ຕ່າງປະເທດ. ນາເດສະດາ ກົນສະຕັງຕິໂນວະນາ ກະຣຸປະສະກາຢາ-ພັນລະຍາ ແລະເພື່ອນຮ່ວມຮົບຂອງວະລາດີເມຍລະ ອິລິດ ຜູ້ເຊິ່ງປະຕິບັດ ຫນ້າທີ່ເປັນເລຂາຂອງກອງບັນນາທິການແລະນັກປະຕິວັດຄົນອື່ນໆ ຜູ້

ເຊິ່ງໄດ້ເອົາຕົວຫລົບໜີຈາກການເນລະເທດ ແລະ ລູກຂອງພະເຈົ້າຊາລັດເຊຍນັ້ນ ກໍໄດ້ຊ່ອຍເລນິນ ໃນການຈັດທຳໜັງສືພິມ "ອິສະກະລາຂັ້ນ". "ອິສະກະລາ" ຂອງເລນິນໄດ້ຮຽກຮ້ອງໃຫ້ຊາວກຳມະກອນລັດເຊຍເຕົ້າໂຮມເຂົ້າກັນ, ໄດ້ເລົ່າໃຫ້ພວກເຂົາຟັງກ່ຽວກັບການຕໍ່ສູ້ທາງຊົນຊັ້ນວ່າ ບໍ່ແມ່ນມີຢູ່ແຕ່ໃນລັດເຊຍເທົ່ານັ້ນ, ແຕ່ຫາກມີຢູ່ ໃນຕ່າງປະເທດ ອີກດ້ວຍແລະໄດ້ເປີດເຜີຍເຖິງບຸກຄົນທີ່ພະຍາຍາມ ຈະຫັນຊາວກຳມະກອນອອກໄປຈາກການຍຶດເອົາອຳນາດ. ບົດຄວາມຂອງເລນິນຫລາຍກວ່າ ໕໐ ບົດ ແລະບົດຄວາມຂອງເພື່ອນຮ່ວມການຕໍ່ສູ້ຄົນອື່ນໆອີກ ກ່ຽວກັບການຕໍ່ສູ້ໄດ້ອະທິບາຍໃຫ້ເຫັນວ່າ ມັນ ມີຄວາມຈຳເປັນທີ່ຈະສ້າງຕັ້ງພັກປະຕິວັດຂັ້ນ ທີ່ປະກອບດ້ວຍທິດສະດີກ້າວໜ້າແລະມີຄວາມສາມາດທີ່ຈະນຳເອົາ ຊາວຜູ້ອອກແຮງງານເຂົ້າໃນການຕໍ່ສູ້ກັບພວກກົດຂີ່ຂູດຮີດ.

ເພື່ອນຮ່ວມການຕໍ່ສູ້ຂອງເລນິນ ເຊັ່ນ ອິວານ ບາບູສະກິນ, ນິໂກລາຍ ບາອູມານ, ໂລສາເມຍລະ ເຊມເຊຍສະກາ, ມີ-ຄາອິນ ກາລືນິນ, ຢາກົບ ຊະເວລະດະລົບ ແລະຄົນອື່ນໆອີກໄດ້ລັກລອບເອົາໜັງສືພິມ "ອິສະກະລາ" ເຂົ້າສູ່ລັດເຊຍຢ່າງລັບໆຫລາຍຄັ້ງ. ວິທີການນີ້ ແມ່ນຫຍຸ້ງຍາກ ແລະອັນຕະລາຍຫລາຍ. ເພື່ອໃຫ້ໜັງສືພິມມີຂະໜາດນ້ອຍລົງນັ້ນ ມັນ ຕ້ອງພິມໃສ່ເຈ້ຍບາງໆ. ໜັງສືພິມໄດ້ຍັດໃສ່ໃນກະເປົາເດີນທາງທີ່ມີພື້ນສອງຊັ້ນແລະຫຍິບຜ້າຕິດໃສ່ ແລ້ວສົ່ງຜ່ານຊາຍແດນໄປ. ບັນດານັກປະຕິວັດທີ່ສົ່ງໜັງສືພິມ "ອິສະກະລາ" ເຂົ້າສູ່ ລັດ

ເຊຍນັ້ນ ຕ້ອງເປັນຄົນມີຄວາມກ້າຫານເປັນພິເສດ. ພວກເຂົາ ເດີນທາງໄປທົ່ວປະເທດແລະຈັດຕັ້ງສາຍຕິດຕໍ່ ກັບກຸ່ມ ກຳມະກອນຕ່າງໆ. ໜັງສືພິມໄດ້ຊ່ອຍໃຫ້ຊາວກຳມະກອນຮູ້ຈັກ ຮູບການແລະວິທີການຕໍ່ສູ້ກັບພວກນາຍທຶນ ເຊິ່ງພວກເພື່ອນ ຂອງເຂົາໄດ້ໃຊ້ໄປຢູ່ໃນຕົວເມືອງແລະທ້ອງຖິ່ນຕ່າງໆຂອງປະເທດ.

ໜັງສືພິມ "ອິສະກະລາ" ໄດ້ຈັດຕັ້ງຊາວກຳມະກອນ ທີ່ກ້າວໜ້າຂອງລັດເຊຍຂຶ້ນ ແລະໄດ້ກະກຽມການສ້າງຕັ້ງ ພັກປະຕິວັດຂຶ້ນມາ ແນວນັ້ນ.

ໃນປີ ໑໙໐໓ ບັນດາຕົວແທນຂອງຊາວກຳມະກອນປະຕິວັດໃນລັດເຊຍທີ່ສັງກັດຢູ່ໃນອົງການສັງຄົມ ປະຊາທິປະໄຕຕ່າງໆກໍໄດ້ເດີນທາງເຂົ້າມາສູ່ນະຄອນລອນດອນ. ຕົວແທນເຫຼົ່ານັ້ນມີຢູ່ ໔໓ ຄົນ ເຊິ່ງມາຈາກທ້ອງຖິ່ນອຸດສາຫະກຳ ທີ່ໃຫຍ່ທີ່ສຸດຂອງປະເທດ. ພວກເຂົາໄດ້ມາປະຊຸມກັນ ຕາມຄຳສະ ເໜີຂອງເລນິນ ເພື່ອວ່າຈະໄດ້ຈັດຕັ້ງພັກນັກມາກຊິດປະຕິວັດຂຶ້ນ. ກອງປະຊຸມແບບນັ້ນ ແມ່ນບໍ່ສາມາດຈະດຳເນີນໄປໄດ້ຢູ່ໃນລັດເຊຍພະເຈົ້າຊາ, ເພາະສະນັ້ນ ຄະນະຜູ້ແທນ ຈຶ່ງໄດ້ມາປະຊຸມກັນຢູ່ທີ່ຕ່າງປະເທດ.

ເມື່ອ ວ.ອິ. ເລນິນ ໄດ້ກ່າວຄຳປາໄສຕໍ່ກອງປະຊຸມໃຫຍ່ແລ້ວ ກໍໄດ້ສະເໜີໃຫ້ຈັດຕັ້ງພັກ ທີ່ມີລະບຽບວິໄນ ຢ່າງເຄັ່ງຄັດແລະມີໂຄງການເຮັດວຽກຂອງຕົນຢ່າງຈະແຈ້ງແລະກໍມີແຕ່ບັນດານັກຮົບຜູ້ທີ່ກ້າວຫັນແລະເດັດດ່ຽວ ເພື່ອການ ປົດ ປ່ອຍຊາວຜູ້ອອກແຮງງານເທົ່ານັ້ນ ຈຶ່ງຈະຮັບເຂົ້າຢູ່ໃນພັກນີ້ໄດ້.

ແຕ່ວ່າຜູ້ຄັດຄ້ານຂອງເລນິນ ກໍໄດ້ເຂົ້າຮ່ວມຢູ່ ໃນກອງປະຊຸມນັ້ນຄືກັນ. ພວກເຂົາໄດ້ຄັດຄ້ານລະບຽບວິໄນ ອັນເຄັ່ງຄັດຢູ່ໃນພັກ ແລະໄດ້ສະເໜີໃຫ້ພິຈາລະນາຮັບເອົາສະມາຊິກຂອງພັກທົ່ວໆໄປຈາກບຸກຄົນຜູ້ທີ່ເຫັນອົກເຫັນໃຈຕໍ່ພັກ ເຖິງວ່າຈະບໍ່ໄດ້ເຂົ້າຮ່ວມຢູ່ໃນວຽກງານຂອງພັກກໍຕາມ.

ຢູ່ໃນກອງປະຊຸມນັ້ນ ໄດ້ເກີດມີການ ສູ້ຢັນກັນຢ່າງຮຸນແຮງກ່ຽວກັບໂຄງການຂອງພັກທີ່ທ່ານເລນິນ ໄດ້ສະເໜີຂຶ້ນ. ເພື່ອໃຫ້ສອດຄ່ອງກັບຄຳສອນຂອງມາກ ເລນິນໄດ້ຖືວ່າເປົ້າໝາຍທີ່ສຳຄັນຂອງພັກປະຕິວັດຢູ່ໃນລັດເຊຍນັ້ນ ໄດ້ແກ່ການປະຕິວັດສັງຄົມນິຍົມ ນັ້ນກໍຄື ໂຄ່ນລົ້ມອຳນາດຂອງພະເຈົ້າຊາ, ຂອງພວກເຈົ້າທີ່ດິນແລະຂອງພວກນາຍທຶນລົງ ແລະຈັດຕັ້ງຜະເດັດການກຳມາຊີບຂຶ້ນ ພ້ອມທັງມີເປົ້າໝາຍສ້າງລະບອບສັງຄົມນິຍົມອີກດ້ວຍ. ເລນິນໄດ້ຊີ້ແຈງວ່າຄົນບໍ່ມີອຳນາດເດັດຂາດແລ້ວ, ຊາວຜູ້ອອກແຮງງານກໍບໍ່ສາມາດສ້າງລະບອບ ສັງຄົມນິຍົມຂຶ້ນໄດ້, ເພາະວ່າເສດເຫຼືອຂອງພວກຊົນຊັ້ນ ທີ່ກົດຂີ່ຂົ່ມເຫັງທີ່ຖືກປາບປາມລົງໄປແລ້ວນັ້ນ ຈະຂັດຂວາງວຽກງານອັນນີ້ ໃນເມື່ອພວກເຂົາຫາກຍັງມີອຳນາດ ແລະອິດທິພົນຢູ່ ໃນລັດໃໝ່ນັ້ນຢູ່.

ພວກຝ່າຍຄ້ານຂອງເລນິນ ໄດ້ຄັດຄ້ານຕໍ່ເປົ້າໝາຍ ຂອງໂຄງການນີ້ຢ່າງຮຸນແຮງ. ພວກເຂົາຖືວ່າ ພັກສັງຄົມປະຊາທິປະໄຕລັດເຊຍ ຈະຕ້ອງເຮັດເປັນຕົວຢ່າງແກ່ພັກສັງຄົມປະຊາທິປະໄຕ ແລະສັງຄົມນິຍົມໃນປະເທດເອີລົບພຸກຢ່າງ. ພັກເຫຼົ່າ

ນີ້ພາຍຫລັງການມໍລະນະກຳຂອງມາກແລະອັງແກນແລ້ວ ເວົ້າ
ໂດຍຄວາມຈິງ ກໍແມ່ນໄດ້ປະຕິເສດການຕໍ່ສູ້ ເພື່ອຍຶດອຳນາດ
ແລະໄດ້ຫັກຫລັງລັດທິມາກປະຕິວັດ. ບັນດາຜູ້ນຳຂອງພວກເຫຼົ່າ
ນີ້ໄດ້ມີທັດສະນະວ່າ ຊາວກຳມາຊີບອາດຈະປັບປຸງຖານະຂອງ
ຕົນເອງໄດ້ ໂດຍພະຍາຍາມເຮັດໃຫ້ພວກນາຍທຶນ ມີການ ຍິນ
ຍອມດ້ວຍການຕໍ່ສູ້ແບບນັດຢຸດງານ. ພວກນັກປ້ອງກັນທັດສະນະ
ເຫລົ່ານີ້ຢູ່ໃນລັດເຊຍ ກໍໄດ້ຢືນຢັນວ່າ ຊາວກຳມາຊີບລັດເຊຍ
ຄວນຈະຈັດຕັ້ງການຕໍ່ສູ້ ເພື່ອຜົນປະໂຫຍດເສດຖະກິດຂອງຕົນ
ຄືກັນ.

ເລນິນໄດ້ຖືວ່າ ການປະຕິວັດສັງຄົມນິຍົມ ແລະ ການສ້າງ
ພະເດັດການກຳມາຊີບຂຶ້ນນັ້ນ ເປັນສິ່ງສຳຄັນ, ແຕ່ວ່າຊາພັດ
ເປັນເປົ້າໝາຍອັນຫ່າງໄກຂອງພັກຫລາຍກວ່າ (ໂຄງການ
ຂັ້ນສູງ) ເພາະວ່າເຂົາແລະຜູ້ສະໜັບສະໜູນ ເຂົາໄດ້ເຫັນ
ຢ່າງຈະແຈ້ງວ່າ ຊາວກຳມາຊີບໃນລັດເຊຍ ຍັງບໍ່ທັນ ຕື່ນຕົວ
ແລະມີການຈັດຕັ້ງພຽງພໍເພື່ອປະຕິບັດວຽກງານນີ້ ຢ່າງກະທັນ
ຫັນໄດ້ເທື່ອ. ເລນິນໄດ້ພິຈາລະນາເຫັນວ່າ ໃນບາດລ້ຽວທຳ
ອິດນີ້ ພັກຄວນຈະຊຸມໃສ່ຄວາມພະຍາຍາມຂອງຕົນເຂົ້າໃນການ
ນຳພາການປະຕິວັດປະຊາທິປະໄຕນາຍທຶນນັ້ນ ກໍຄືໂຄ່ນລົ້ມລະ
ບອບພະເຈົ້າຊາລົງ, ສ້າງຕັ້ງສາທາລະນະລັດປະຊາທິປະໄຕ
ຂຶ້ນ, ນຳເອົາສິດເລືອກຕັ້ງທົ່ວໄປມາໃຊ້, ມີໜຶ່ງເຮັດການ ໘
ຊົ່ວໂມງ, ທຸກໆປະຊາຊາດມີສິດສະເໝີພາບກັນ, ສົ່ງຄືນໃຫ້
ແກ່ຊາວນາທີ່ຖືກຍຶດໄປຈາກພວກເຂົາໃນເວລາມີການຍົກເລີກ

ລະບອບທາດກະສິກອນ, ທຳລາຍເສດເຫລືອຂອງລະບອບທາດກະສິກອນນັ້ນໃຫ້ໝົດໄປ. ເປົ້າໝາຍເຫລົ່ານີ້ ແມ່ນເປັນໂຄງການຂັ້ນຕ່ຳຂອງພັກ. ໃນໄລຍະປີເຫລົ່ານັ້ນບໍ່ແມ່ນມີແຕ່ຊາວກຳມາຊີບເທົ່ານັ້ນ ທີ່ມີຄວາມຮູ້ສຶກຄຽດຊັງຕໍ່ການກົດຂີ່ຂົ່ມເຫັງ, ຄວາມທາລຸນໂຫດຮ້າຍຂອງລັດຖະບານພະເຈົ້າຊາ ແລະການບໍ່ມີຄວາມສາມາດຂອງລັດຖະບານໃນການປົກຄອງ ປະເທດ, ແຕ່ພາກສ່ວນພົນລະເມືອງລັດເຊຍອື່ນໆ ຈຳນວນຫລວງຫລາຍ ເຊັ່ນພາກສ່ວນຊົນຊັ້ນນາຍທຶນ, ປັນຍາຊົນ, ຊ່າງ ຫັດຖະກຳເລັກໆນ້ອຍໆໃນຕົວເມືອງຕ່າງໆ, ຊາວນາ ແລະປະຊາຊາດລັດເຊຍທີ່ຖືກກົດຂີ່ຂູດຮີດ ກໍຄຽດຊັງຄືກັນ. ເພາະສະນັ້ນ ມັນຈຶ່ງສາມາດທີ່ຈະຄາດຄະເນໄດ້ວ່າ ພວກເຂົາເຫລົ່ານີ້ ຈະສະໜັບສະໜູນການປະຕິວັດປະຊາທິປະໄຕນາຍທຶນ. ແຕ່ບົດບາດທີ່ສຳຄັນໃນການປະຕິວັດນີ້, ຕາມຄວາມຄິດເຫັນຂອງ ເລນິນ ແລະຜູ້ສະໜັບສະໜູນຂອງເຂົາແລ້ວ ຄວນຈະແມ່ນຊາວ ກຳມາຊີບມີບົດບາດໂດຍໄດ້ຮັບການສະໜັບສະໜູນຈາກຊາວນາເປັນສ່ວນສຳຄັນ. ໂຄງການຂັ້ນຕ່ຳຂອງພັກເຫລົ່ານີ້ ກໍໄດ້ຖືກໂຈມຕີຈາກຝ່າຍຄ້ານຂອງເລນິນຢ່າງຮຸນແຮງ. ເຖິງຢ່າງໃດກໍຕາມ ກອງປະຊຸມກໍໄດ້ຮັບເອົາໂຄງການທີ່ທ່ານເລນິນເປັນຄົນສະເໜີຂຶ້ນນັ້ນ. ໃນເວລາເລືອກຕັ້ງເອົາອົງການຊຸນຳ ຂອງພັກນັ້ນ ຜູ້ສະໜັບສະໜູນເລນິນ ແມ່ນມີສຽງສ່ວນຫລາຍ. ດັ່ງນັ້ນພວກເຂົາຈຶ່ງເອີ້ນຊື່ວ່າ "ພວກໂບນເຊວິກ" (ມາຈາກພາສາລັດເຊຍວ່າ "ໂບນຊິນສະຕະໂວ" ໝາຍຄວາມວ່າ ສຽງ

ສ່ວນຫລາຍ) ແຕ່ພວກຝ່າຍຄ້ານຂອງເລນິນມີຊື່ວ່າ "ພວກເມນ ເຊວິກ" (ເມນຊິນສະຕະໂວ ໝາຍຄວາມ ວ່າ ສຽງ ສ່ວນ ໜ້ອຍ). ຕັ້ງແຕ່ນັ້ນມາ ຄຳວ່າ "ໂບນເຊວິກ" ຈຶ່ງກາຍເປັນ ຄຳທີ່ມີຄວາມໝາຍຄືກັນກັບແນວຄິດທີ່ວ່າ "ນັກປະຕິວັດ ມາກ ຊິດທີ່ສຸດກົກສຸດປາຍ, ຜູ້ທີ່ໄດ້ອຸທິດໃຫ້ແກ່ພາລະກິດຂອງຊົນຊັ້ນ ກຳມະກອນ ແລະພາລະກິດຂອງລະບອບກອມມູນິດ ຢ່າງເດັດ ດ່ຽວ".

ພັກໂບນເຊວິກທີ່ເລນິນສ້າງຂຶ້ນນັ້ນ ແມ່ນເປັນພັກ ຊະນິດ ໃໝ່ແລະກ້າວເດີນໄປຕາມເສັ້ນທາງທີ່ວາງອອກ ໂດຍ ມາກ ແລະອັງແກນຜູ້ສ້າງຕັ້ງລັດທິມາກວິທະຍາສາດນັ້ນຢ່າງຂະຫຍັນ ຂັນແຂງ. ເພື່ອທີ່ຈະດຳເນີນໂຄງການຂອງຕົນໄດ້ນັ້ນ ພັກຈະ ຕ້ອງຈັດຕັ້ງແລະປຸກລູກຊາວກຳມະກອນທັງໝົດ ເຂົ້າໃນການ ຕໍ່ສູ້, ສ້າງພັນທະພາບຊາວນາແລະກຳມະກອນໃຫ້ເຂັ້ມແຂງ. ພວກໂບນເຊວິກໄດ້ເຂົ້າໃຈວ່າ ການຕໍ່ສູ້ນັ້ນ ຈະດຳເນີນ ໄປ ເປັນເວລາຍາວນານແລະມີຄວາມລຳບາກຫລາຍ. ແຕ່ວ່າພວກ ເຂົາກໍໄດ້ເຊື່ອໝັ້ນໃນກຳລັງຂອງຊາວກຳມະກອນ ແລະຊາວ ນາ. ພາຍໃຕ້ການນຳພາຂອງເລນິນນັ້ນ ພວກເຂົາ ກໍໄດ້ຜະ ເຊີນໜ້າກັບຄວາມຍາກລຳບາກ ແລະ ອັນຕະລາຍຢ່າງພິລະ ອາດຫານ.

ໃນປີ ໑໙໐໔ ລັດເຊຍພະເຈົ້າຊາ ໄດ້ເລີ່ມເຮັດ ສົງຄາມ ກັບປະເທດຍີ່ປຸ່ນ. ທັງນາຍທຶນລັດເຊຍ ແລະຍີ່ປຸ່ນຕ່າງກໍຕ້ອງ ການຢາກຈະປຸ້ນສະດົມເກົາຫລີ ແລະປະເທດອື່ນໆໃນເຂດຕາ

ເວັນອອກໄກ. ພວກຈັກກະພັດຍີ່ປຸ່ນ ໄດ້ກະກຽມກອງທັບເພື່ອເຮັດສົງຄາມເປັນຢ່າງດີ. ສ່ວນກອງທັບຂອງລັດເຊຍພະເຈົ້າຊານັ້ນ ໄດ້ມີການກະກຽມບໍ່ດີແທ້ໆ.ແຕ່ພະເຈົ້າຊາແລະຂຸນພົນລັດເຊຍກໍໄດ້ປະກາດໂອ້ອວດວ່າ ໄຊຊະນະຈະຕົກເປັນ ຂອງຕົນຢ່າງງ່າຍດາຍ. ພວກເຂົາຕ້ອງການເຮັດສົງຄາມ ບໍ່ແມ່ນເພື່ອຍຶດເອົາດິນແດນໃຫມ່ເທົ່ານັ້ນ ແຕ່ຫາກເພື່ອຈະສ້າງ ອຳນາດຂອງຕົນຢູ່ພາຍໃນປະເທດໃຫ້ເຂັ້ມແຂງອີກ. ດ້ວຍໄຊຊະນະໃນສົງຄາມນີ້ ລັດຖະບານພະເຈົ້າຊາ ກໍຕ້ອງການທີ່ຈະສະກັດກັ້ນຄວາມເຕີບໃຫຍ່ຂອງຂະບວນການປະຕິວັດ ໃນລັດເຊຍໄວ້.

ພວກທະຫານບົກແລະທະຫານເຮືອ ໄດ້ຕໍ່ສູ້ຢ່າງອົງອາດກ້າຫານ, ແຕ່ເນື່ອງຈາກໄດ້ປະກອບອາວຸດທັນສະໄຫມ,ແລະບໍ່ມີປະສິດທິພາບໃຫ້ແກ່ກອງທັບ ແລະທັງໃນເວລານັ້ນ ກໍໄດ້ເກີດມີນາຍທະຫານຊັ້ນສູງທໍລະຍົດ ຈຶ່ງໄດ້ເຮັດໃຫ້ລັດເຊຍ ໄດ້ຮັບການປະລາໄຊໄປ.ສົງຄາມໄດ້ເຮັດໃຫ້ຖານະຂອງຊາວກຳມະກອນແລະຊາວນາລັດເຊຍ ຕົກຢູ່ໃນພາວະທີ່ຄັບຂັນຍິ່ງຂຶ້ນແລະກໍຖືໄດ້ວ່າເປັນຍອດສຸດທ້າຍທີ່ເຮັດໃຫ້ຄວາມອົດກັ້ນຂອງປະຊາຊົນໄດ້ລະເບີດຂຶ້ນ.

ຢູ່ຕາມໂຮງຈັກໂຮງງານຕ່າງໆ ໄດ້ເກີດມີການນັດຢຸດງານກັນຢ່າງບໍ່ຂາດໄລຍະ ແລະຊາວຊົນນະບົດກໍເກີດມີຄວາມ ອຶດຢາກຂຶ້ນມາ. ຫລາຍໆຄອບຄົວໄດ້ສູນເສຍຜູ້ທີ່ຮັກແພງທີ່ສຸດໄປໃນສົງຄາມທີ່ປະຊາຊົນບໍ່ປາຖະຫນານັ້ນ.ຊາວໂບນເຊວິກ ໄດ້

ຮຽກຮ້ອງໃຫ້ຊາວກຳມະກອນໂຄ່ນລົ້ມອຳນາດພະເຈົ້າຊາລົງ. ແຕ່ຊາວກຳມະກອນຫລາຍໆຄົນ ກໍບໍ່ສາມາດທີ່ຈະອົດຄິດໄດ້ວ່າ ຊີວິດທີ່ບໍ່ມີພະເຈົ້າຊານັ້ນ ຈະເປັນໄປໄດ້ບໍ. ເພາະວ່າຕັ້ງແຕ່ ຍັງເປັນເດັກນ້ອຍ ພວກເຂົາກໍໄດ້ຮັບການບອກສອນຢູ່ໃນໂຮງ ຮຽນແລະຢູ່ໃນວັດວ່າ ເທບພະເຈົ້າເອງ ໄດ້ເປັນຜູ້ເຮັດ ໃຫ້ ເຂົາເຊື່ອຟັງພະເຈົ້າຊາ. ໂດຍສວຍໃຊ້ແນວຄິດນີ້,ຕຳຫລວດ ພະເຈົ້າຊາຢູ່ທີ່ເມືອງເປເຕລະບຸກ ຈຶ່ງໄດ້ສົ່ງຊຸນພໍ່ກາປົງ ໄປ ຫາຊາວກຳມະກອນ ເພື່ອປຸກລຸກຊາວກຳມະກອນ ໃຫ້ປະຕິບັດ ການໄປແລ້ວ ຕຳຫລວດພະເຈົ້າຊາຈະໄດ້ປາບປາມຕາມຫລັງ. ຊຸນພໍ່ກາປົງໄດ້ຮຽກໂຮມປະຊຸມຂຶ້ນ ເຊິ່ງຢູ່ໃນທີ່ຊຸມນຸມນັ້ນເຂົາ ໄດ້ສະແດງຄວາມເຫັນອົກເຫັນໃຈກັບຊາວກຳມະກອນ ຢ່າງ ຫນ້າໄຫວ້ຫລັງຫລອກ. ຊຸນພໍ່ກາປົງໄດ້ຍອມຮັບວ່າ ປະຊາຊົນ ໄດ້ມີຄວາມທຸກຍາກລຳບາກແທ້.ແຕ່ກໍໄດ້ຊັກຊວນພວກເຂົາວ່າ ພະເຈົ້າຊາແມ່ນບໍ່ຮູ້ຫຍັງເລີຍກ່ຽວກັບເລື່ອງນີ້.ຊຸນພໍ່ກາປົງໄດ້ ເວົ້າວ່າ "ພວກເຮົາຄວນຈະໄປຫາພະເຈົ້າຊານຳກັນ ເພື່ອ ບອກໃຫ້ເພິ່ນຮູ້ກ່ຽວກັບທຸກສິ່ງທຸກຢ່າງ. ພະເຈົ້າຊາຈະຮັບຟັງ ແລະຈະໃຫ້ເສລີພາບແລະທີ່ດິນແກ່ປະຊາຊົນ".ພວກຊາວໂບນ ເຊວິກໄດ້ເຕືອນຊາວກຳມະກອນ ແລະໄດ້ອະທິບາຍ ໃຫ້ ແກ່ ພວກເຂົາຟັງວ່າ ພະເຈົ້າຊາແມ່ນເຈົ້າທີ່ດິນໃຫຍ່ແລະເປັນສັດ ຕູຂອງປະຊາຊົນຜູ້ອອກແຮງງານ.ແຕ່ວ່າຊາວກຳມະກອນຫຼາຍ ຄົນກໍຍັງຫວັງຕໍ່ຄວາມກະລຸນາຂອງພະເຈົ້າຊາຢູ່.ພາຍໃຕ້ການ ຊີ້ນຳຂອງຜູ້ຍຸຍົງຊຸນພໍ່ກາປົງນັ້ນ ຊາວກຳມະກອນເມືອງເປເຕ

ລະບຸກຈຶ່ງໄດ້ຮ່າງຄຳຮ້ອງທຸກຂຶ້ນ ແລະໃນວັນອາທິດທີ ໙ ມັງກອນ ປີ ໑໙໐໕ ພວກເຂົາກໍໄດ້ພາກັນແຫ່ເອົາຄຳຮ້ອງທຸກນັ້ນໄປສົ່ງໃຫ້ພະເຈົ້າຊາທີ່ພະລາຊະວັງລະດູໜາວ. ເມື່ອໄດ້ແຕ່ງຕົວດ້ວຍເຄື່ອງຈົບງາມດີແລ້ວ ພວກເຂົາກໍໄດ້ພາກັນໄປ ພ້ອມທັງລູກແລະເມຍໂດຍຖືເອົາຮູບຈຳລອງແລະຮູບຈິງ ຂອງ ພະເຈົ້າຊາໄປນຳດ້ວຍ.

ເມື່ອພວກເຂົາມາຮອດຖະໜົນສີ່ແຍກ ຕໍ່ໜ້າພະລາຊະວັງລະດູໜາວ ກໍໄດ້ເກີດມີຄວາມຕື່ນເຕັ້ນໃນໝູ່ປະຊາຊົນເພາະວ່າທຸກໆຄົນກະຕືລືລົ້ນຢາກຈະເຫັນພະເຈົ້າຊາ. ແຕ່ວ່າ ພວກເຂົາກໍບໍ່ເຫັນພະເຈົ້າຊາຢູ່ບ່ອນໃດ. ຄວາມຄາດຫວັງອັນສົດຊື່ນໄດ້ປ່ຽນໄປສູ່ຄວາມຕົກໃຈ ໃນເມື່ອພວກເຂົາ ເຫັນແຖວ ທະຫານພະເຊີນໜ້າກັບພວກເຂົາຢູ່ຕໍ່ໜ້າຖະໜົນສີ່ແຍກ. ພວກເຂົາໄດ້ຢຸດຢູ່ທີ່ນັ້ນ. ໃນເວລານັ້ນ ສຽງຄຳສັ່ງ ຂອງນາຍທະຫານກໍໄດ້ດັງຂຶ້ນ ແລະພວກທະຫານກໍໄດ້ເລ່ງປືນໃສ່ແລະສຽງປືນພ້ອມກັນນັດທຳອິດກໍໄດ້ດັງຂຶ້ນ, ຕໍ່ໄປກໍນັດ ທີສອງ-ທີສາມຕາມມາ. ຊາວກຳມະກອນໜຸ່ມໄດ້ລົ້ມຕາຍລົງ ຢູ່ກັບພື້ນ ຖະໜົນ. ແມ່ຍິງໄດ້ຮ້ອງຂຶ້ນ ໂດຍໄດ້ຫອບເອົາລູກ ທີ່ຕາຍແນບໃສ່ໜ້າເອິກ. ຝູງຊົນໄດ້ມີຄວາມຢ້ານກົວແລະກໍແລ່ນໜີໂດຍໄດ້ໂຍນຮູບຈຳລອງແລະຮູບຈິງຂອງພະເຈົ້າຊາລົງໃສ່ພື້ນດິນ. ຢູ່ໃນໜ້າຂອງຜູ້ຄົນທີ່ແລ່ນໜີນັ້ນ ຜູ້ຄົນອາດຈະເຫັນ ຄວາມຢ້ານກົວ, ຄວາມຄຽດຊັງ ແລະຄວາມງົງ. ສຽງຄົນຈົ່ມໄດ້ຍິນກັນຢູ່ບ່ອນນັ້ນແລະບ່ອນນີ້ວ່າ "ພະເຈົ້າຊາຜູ້ມີຄວາມ ກະລຸນາ

ຊ່າງເປັນໄປແບບນັ້ນ !" "ພວກເຮົາພ້ອມທັງຣູບ ຈຳລອງ ແລະຣູບຈິງໄດ້ເຂົ້າມາຫາພະເຈົ້າຊາ, ແຕ່ພະເຈົ້າຊາຊ້ຳພັດຕ້ອນຮັບເຮົາດ້ວຍລູກປືນ!" ຫລັງຈາກນັ້ນ ໜ່ວຍທະຫານມ້າກໍໄດ້ມາປາກົດຕົວຢູ່ທີ່ຖະໜົນສີ່ແຍກ–ດ້ວຍດາບທີ່ຖອດອອກມາຈາກຝັກນັ້ນ ພວກເຂົາກໍໄດ້ໂຈມຕີຝູງຊົນ ແລະຂ້າຜູ້ເຖົ້າຜູ້ແກ່, ແມ່ຍິງແລະເດັກນ້ອຍ. ຖະໜົນສີ່ແຍກໃກ້ກັບພະລາຊະວັງລະດູໜາວນັ້ນ ໃນບໍ່ຊ້າກໍບໍ່ມີຜູ້ຄົນເຫລືອຢູ່ເລີຍ, ມີແຕ່ສົບຂອງຜູ້ທີ່ຖືກຂ້າຕາຍແລະເລືອດປະໄວ້ຢູ່ເທິງກ້ອນຫິມະ ເຊິ່ງເປັນ ພະຍານຫລັກຖານໃຫ້ເຫັນວ່າ "ການພົບປະຂອງປະຊາຊົນກັບພະເຈົ້າຊາ" ນັ້ນໄດ້ສິ້ນສຸດລົງແລ້ວ.

ຂ່າວກ່ຽວກັບການໃຊ້ຄວາມຮຸນແຮງ ຕໍ່ຂະບວນສັນຕິ ຂອງຝູງຊົນນັ້ນ ໄດ້ແຜ່ໄປທົ່ວເມືອງເປເຕລະບຸກ ຢ່າງວ່ອງໄວ. ຊາວກຳມະກອນໄດ້ພາກັນສ້າງເຄື່ອງກີດຂວາງຂຶ້ນ ແລະ ຈັບອາວຸດ. ຊາວກຳມະກອນໄດ້ກ່າວວ່າ "ພະເຈົ້າຊາ ໄດ້ເຮັດກັບພວກເຮົາຢ່າງໃດ, ພວກເຮົາກໍຈະເຮັດຢ່າງນັ້ນກັບເຂົາ". ວັນທີ ໙ ມັງກອນ ປີ ໑໙໐໕ ພວກທະຫານແລະຕຳຫລວດໄດ້ຂ້າປະຊາຊົນຕາຍໄປພັນປາຍຄົນ ແລະບາດເຈັບຫລາຍພັນຄົນຢູ່ທີ່ສີ່ແຍກພະລາຊະວັງ ແລະຕາມຄຸ້ມເຮືອນ ຂອງຊາວກຳມະກອນທີ່ເມືອງເປເຕລະບຸກ. ຊາວກຳມະກອນໄດ້ເອີ້ນມື້ນັ້ນວ່າ "ວັນອາທິດນອງເລືອດ". ວ.ອີ. ເລນິນ ໄດ້ຂຽນ ກ່ຽວກັບເຫດການໃນວັນທີ ໙ ເດືອນມັງກອນໄວ້ວ່າ "ຊົນຊັ້ນ ກຳມະກອນໄດ້ຮັບບົດຮຽນອັນຍິ່ງໃຫຍ່ໃນສົງຄາມກາງເມືອງ; ການ

ຝຶກຝົນຫລໍ່ຫລອມປະຕິວັດຂອງຊາວກຳມາຊີບ ໃນໄລຍະມື້ດຽວນັ້ນ ມັນໄດ້ກ້າວໄປໄກຫລາຍກວ່າ ທີ່ມັນໄດ້ສ້າງ ມາຫລາຍເດືອນ, ຫລາຍປີ ແບບບໍ່ສົດຊື່ນ,ຫນ້າເບື່ອແລະດຳລົງຢູ່ຢ່າງຫລົ້ມຈົມ"1)

ປະຊາຊົນໄດ້ຂາດຄວາມເຊື່ອຖື ໃນພະເຈົ້າຊາ ໄປແລ້ວ. ພວກຊາວກຳມະກອນໄດ້ເຂົ້າໃຈວ່າ ພວກໂບນເຊວິກຖືກຕ້ອງທີ່ວ່າ ເສລີພາບອາດຈະໄດ້ມາດ້ວຍການໃຊ້ກຳລັງທາງອາວຸດ.

ເພື່ອເປັນການໂຕ້ຕອບຕໍ່ການສັງຫານໝູ່ຊາວກຳມະກອນຢູ່ໃນເມືອງເປເຕລະບູກນັ້ນ ພວກຊາວກຳມະກອນເມືອງມົດສະກູ, ລີກາ, ຕີຟະລິດ (ປະຈຸບັນນີ້ເອີ້ນວ່າ ຕະບີລີຊີ), ບາກູແລະເມືອງອື່ນໆກໍໄດ້ພາກັນນັດຢຸດງານ. ພຽງແຕ່ໃນເດືອນມັງກອນປີ ໑໙໐໕ ນັ້ນ ທົ່ວປະເທດກໍໄດ້ມີຜູ້ຄົນນັດຢຸດງານ ເຖິງ ໔໔໐ ພັນຄົນ. ຄຳຂວັນຂອງຊາວກຳມະກອນເມືອງເປເຕລະບູກທີ່ວ່າ" ເສລີພາບ ຫລືຄວາມຕາຍ"ນັ້ນ ໄດ້ດັງກ້ອງໄປທົ່ວປະເທດ. ດັ່ງນັ້ນການປະຕິວັດປະຊາທິປະໄຕນາຍທຶນຄັ້ງທຳອິດຈຶ່ງໄດ້ເລີ່ມຕົ້ນຂຶ້ນ.

ໃນເດືອນ ເມສາ ປີ ໑໙໐໕ ດ້ວຍການຂໍຮ້ອງຂອງເລນິນ ພວກຊາວໂບນເຊວິກ ຈຶ່ງໄດ້ຮຽກໂຮມ ກອງປະຊຸມພັກ ຄັ້ງທີIIIຂຶ້ນ ເພື່ອວາງແຜນຊີ້ນຳການປະຕິວັດ. ຢູ່ໃນມະຕິຂອງກອງປະຊຸມນັ້ນ ໄດ້ກ່າວໄວ້ວ່າ ຊົນຊັ້ນນາຍທຶນລັດເຊຍ ບໍ່ ມີ

I)ປະມວນບົດນິພົນເລນິນ(ເຫລັ້ມທີ ໙ ໜ້າ ໔໐໑-໔໐໔)

ຄວາມສາມາດຈະນຳພາ ການປະຕິວັດ ໄປໃຫ້ເຖິງ ທີ່ສຸດໄດ້ ເພາະວ່າຊົນຊັ້ນນັ້ນບໍ່ມີຄວາມສົນໃຈ ໃນການໂຄ່ນລົ້ມ ພະເຈົ້າ ຊາລົງ, ແຕ່ຫາກພະຍາຍາມທີ່ຈະຈຳກັດອຳນາດຂອງເຂົາໄວ້ ເທົ່ານັ້ນ ແລ້ວຕົກລົງກັນກັບເຂົາ ເພື່ອວ່າຕໍ່ໄປຈະໄດ້ ເອື່ອຍ ອີງເຂົາ ໃນການຕໍ່ສູ້ຕ້ານຊົນຊັ້ນກຳມາຊີບ. ພັນທະມິດຂອງຊົນ ຊັ້ນກຳມະກອນນັ້ນ ບາງທີກໍມີແຕ່ຊາວນາ ຜູ້ທີ່ພະຍາຍາມຢາກ ຈະໄດ້ທີ່ດິນ ຈາກເຈົ້າທີ່ດິນ ແລະ ໂຄ່ນລົ້ມການກົດຂີ່ຂົ່ມເຫັງ ຂອງເຈົ້າທີ່ດິນລົງເທົ່ານັ້ນ ແລະກໍມີແຕ່ອັນນັ້ນເທົ່ານັ້ນທີ່ຈະເຮັດ ໃຫ້ໄດ້ຮັບໄຊຊະນະອັນເດັດຂາດ ໃນການປະຕິວັດປະຊາທິປະ ໄຕ. ໂດຍວິທີການແບບນີ້ ຊາວກຳມາຊີບ ຕ້ອງສະໜັບ ສະ ໜູນຂໍ້ຮຽກຮ້ອງຕ່າງໆຂອງຊາວມະຫາຊົນ ເພື່ອໂຄ່ນລົ້ມ ລະ ບອບອັດຕາທິປະໄຕລົງ ແລະຈັດຕັ້ງສາທາລະນະລັດ ປະຊາທິ ປະໄຕຂຶ້ນ. ຊາວກຳມາຊີບຕ້ອງເຄື່ອນໄຫວຢ່າງເຂັ້ມແຂງຈົນ ວ່າຊົນຊັ້ນນາຍທຶນບໍ່ອາດສາມາດຈະສະກັດກັ້ນໄຊຊະນະ ຂອງ ການປະຕິວັດປະຊາທິປະໄຕນາຍທຶນໄວ້ໄດ້. ພາຍຫລັງໄຊຊະ ນະຂອງຕົນແລ້ວ ພວກເຂົາຕ້ອງເລີ່ມຕົ້ນກະກຽມເພື່ອດຳເນີນ ການປະຕິວັດສັງຄົມນິຍົມ, ເວົ້າອີກຢ່າງໜຶ່ງຕ້ອງພະຍາຍາມ ຫັນປ່ຽນການປະຕິວັດປະຊາທິປະໄຕນາຍທຶນ ໃຫ້ເປັນການປະ ຕິວັດສັງຄົມນິຍົມ. ແຜນການນີ້ອາດຈະດຳເນີນໄປໄດ້ໂດຍວິທີ ການລຸກຂຶ້ນຈັບອາວຸດເທົ່ານັ້ນ ເຊິ່ງຕິດຕາມມາດ້ວຍການນັດ ຢຸດງານທົ່ວໆໄປ ພ້ອມທັງຂໍ້ຮຽກຮ້ອງທາງການເມືອງ. ໃນລະ ດູຮ້ອນປີດຽວກັນນັ້ນ ທ່ານເລນິນໄດ້ຂຽນວ່າ ໄຊຊະນະ ຂອງ

ການປະຕິວັດປະຊາທິປະໄຕນາຍທຶນ ເຊິ່ງນຳພາໂດຍຊາວກຳມາຊີບນັ້ນ ຈະບໍ່ຕ້ອງນຳເອົາອຳນາດທີ່ຍຶດມາໄດ້ນັ້ນ ໄປ ໃຫ້ນາຍທຶນ ດັ່ງທີ່ໄດ້ເປັນມາແລ້ວ ໃນການປະຕິວັດນາຍທຶນ ຢູ່ໃນບັນດາປະເທດຕາເວັນຕົກ ແຕ່ວ່າຕ້ອງນຳໄປສູ່ ຜະເດັດການປະຊາທິປະໄຕປະຕິວັດຂອງຊາວກຳມາຊີບແລະຊາວນາ.

ໃນລະດູໃບໄມ້ປົ່ງ ແລະ ລະດູໜາວ ປີ ໑໙໐໕ ນັ້ນ ທົ່ວປະເທດໄດ້ເກີດມີການນັດຢຸດງານກັນ ຢ່າງບໍ່ຢຸດຢັ້ງ. ພາຍໃຕ້ການນຳພາຂອງຊາວໂບນເຊວິກ ອຶ ຟະລຸນເຊຍ ແລະອະຟານາຊະເຢັບ ນັ້ນ ຊາວກຳມະກອນໃນເມືອງ ອີວາໂນວະ-ໂວສະເນເຊນສະກະ ກໍໄດ້ຈັດຕັ້ງສະພາໂຊວຽດຂອງຜູ້ແທນຊາວກຳມະກອນຂຶ້ນ ເຊິ່ງກໍໄດ້ຊີ້ນຳການນັດຢຸດງານ ທີ່ກິນ ເວລານານກວ່າສອງເດືອນໄປໄດ້ສຳເລັດ. ຊາວກຳມະກອນ ໃນອູລານແລະອູກະລາອີນາ, ໃນເຂດໃຕ້ກາວະກາດແລະລັດເວຍກໍໄດ້ນັດຢຸດງານຂຶ້ນຄືກັນພ້ອມກັນນັ້ນ ຊາວນາກໍໄດ້ລຸກຮື້ຂຶ້ນ ຕໍ່ສູ້ເຊັ່ນດຽວກັນ. ໃນລະດູໃບໄມ້ປົ່ງຊາວນາຢູ່ໃນທ້ອງຖິ່ນຕ່າງໆກໍໄດ້ເລີ່ມຕົ້ນຄາດໄຖດິນນາຂອງເຈົ້າທີ່ດິນ ແລະ ຍຶດເອົາທົ່ງລ້ຽງສັດໄປ. ຊາວໂບນເຊວິກ ໄດ້ຮຽກຮ້ອງໃຫ້ ຊາວກຳມະກອນແລະຊາວນາລຸກຂຶ້ນຈັບອາວຸດ, ແຕ່ວ່າພວກເມນເຊວິກທີ່ເປັນຜູ້ຕ້ານລັດທິມາກປະຕິວັດ ແລະເປັນເຄື່ອງມື ໃຫ້ແກ່ພວກນາຍທຶນຢູ່ໃນຂະບວນການກຳມະກອນນັ້ນ ກໍໄດ້ເຮັດທຸກສິ່ງທຸກຢ່າງເພື່ອຍັບຍັ້ງຊາວກຳມະກອນ ບໍ່ໃຫ້ຈັບອາວຸດຂຶ້ນຕໍ່ສູ້.

ໃນລະດູຮ້ອນປີ ໑໙໐໕ ການລຸກຮື້ຂຶ້ນຂອງທະຫານເຮືອ ກໍ

ໄດ້ເກີດມີອົນຢູ່ໃນເຮືອລົບຊື່ "ໂປໂຈມກິນ" ແຫ່ງກອງທັບເຮືອ ປະຈຳທະເລດຳ. ພວກທະຫານເຮືອ ໄດ້ທຳການຕໍ່ຕ້ານການປະຕິບັດແບບບໍ່ມີມະນຸດສະທຳ ຂອງພວກນາຍທະຫານ ທີ່ ມີຕໍ່ພວກເຂົາ. ເມື່ອຍຶດເຮືອໄດ້ແລ້ວ, ພວກລູກຮົບກໍໄດ້ຊັກທຸງແດງປະຕິວັດຂຶ້ນຢູ່ໃນເຮືອ. ເຮືອຂອງພວກລູກຮົບ ໄດ້ອອກເດີນທາງມຸ່ງໜ້າໄປສູ່ ເມືອງ ໂອເດັດຊາ ເພື່ອ ເຕົ້າໂຮມເຂົ້າກັບພວກຊາວກຳມະກອນ ທີ່ລູກຮົບຢູ່ທີ່ນັ້ນ. ແຕ່ວ່າພວກເມນເຊວິກກໍໄດ້ຂັດຂວາງການກະທຳ ຂອງຊາວ ກຳມະກອນເພື່ອສະໜັບສະໜູນ ພວກທະຫານເຮືອໂປໂຈມກິນ. ເຖິງວ່າທະຫານເຮືອຈະມີນ້ຳໃຈກ້າຫານປານໃດກໍຕາມ, ການລູກຮົບນັ້ນ ກໍໄດ້ສິ້ນສຸດລົງດ້ວຍການປະລາໄຊ. ຢ່າງໃດກໍດີການລູກຮົບນັ້ນ ກໍໄດ້ສະແດງໃຫ້ເຫັນວ່າ ກອງກຳລັງປະກອບອາວຸດທີ່ຖືວ່າເປັນເສົາຄ້ຳໃຫ້ແກ່ລະບອບພະເຈົ້າຊານັ້ນ ມັນໄດ້ອ່ອນເພຍລົງແລ້ວ.

ໃນເດືອນຕຸລາປີ ໑໙໐໕ ການນັດຢຸດງານທົ່ວໆໄປ ທີ່ ກະກຽມໄວ້ໂດຍຊາວໂບນເຊວິກນັ້ນ ກໍໄດ້ເລີ່ມຕົ້ນຂຶ້ນແລ້ວ. ວຽກງານຢູ່ໃນໂຮງຈັກໂຮງງານຕ່າງໆ, ບໍ່ແຮ່, ບໍ່ຖ່ານຫີນ ແລະອື່ນໆທົ່ວດິນແດນອັນກວ້າງໃຫຍ່ຂອງລັດເຊຍພະເຈົ້າຊານັ້ນ ກໍໄດ້ຢຸດຊະງັກລົງ, ພ້ອມດຽວກັນນັ້ນ ການສັນຈອນໄປມາໂດຍທາງລົດໄຟກໍໄດ້ຢຸດລົງເຊັ່ນດຽວກັນ. ການນັດຢຸດງານເດືອນຕຸລາທົ່ວລັດເຊຍກໍໄດ້ດຳເນີນໄປ ພາຍໃຕ້ຄຳຂວັນ ການ ຕໍ່ສູ້ຂອງຊາວໂບນເຊວິກທີ່ວ່າ "ລະບອບອັດຕາທິປະໄຕ ຈົ່ງ ຈິບ

ຫາຍ !" ສາທາລະນະລັດປະຊາທິປະໄຕ ຈົ່ງໝັ້ນຍືນ !". ຊາວກຳມະກອນກໍໄດ້ຮຽກຮ້ອງໃຫ້ຈັດຕັ້ງມື້ເຮັດວຽກ ໘ ຊົ່ວໂມງຂຶ້ນ, ລົບລ້າງຖານະການບໍ່ມີສິດເທົ່າທຽມກັນຂອງຊາວຜູ້ອອກແຮງງານ. ໃນລະຫວ່າງທີ່ມີການນັດຢຸດງານ ຢູ່ໃນ ສູນກາງອຸດສາຫະກຳຫລາຍໆແຫ່ງນັ້ນ ສະພາໂຊວຽດຂອງຜູ້ແທນຊາວກຳມະກອນ-ອັນເປັນອົງການຈັດຕັ້ງທຳອິດ ແຫ່ງອຳນາດທາງການເມືອງຂອງຊາວກຳມາຊີບ ກໍໄດ້ເກີດມີຂຶ້ນ. ເມື່ອການນັດຢຸດງານຕ່າງໆ, ໃນນັ້ນມີຮອດການນັດຢຸດງານໃຫຍ່ໆ, ໄດ້ດຳເນີນໄປໃນວິສາຫະກິດຍ່ອຍຕ່າງໆນັ້ນ ລັດຖະບານ ພະເຈົ້າຊາກໍໄດ້ປາບປາມມັນລົງດ້ວຍອາວຸດ. ຢ່າງໃດກໍຕາມລັດຖະບານກໍບໍ່ສາມາດທີ່ຈະປາບປາມການນັດຢຸດງານໃຫຍ່ ແລະລວມກັນໄດ້ ເຖິງຈະໃຊ້ກຳລັງທະຫານກໍຕາມ.ດັ່ງນັ້ນພະເຈົ້າຊາທີ່ຕົກສະທ້ານຢ້ານກົວ ຈຶ່ງໄດ້ຖືກບັງຄັບໃຫ້ມີການ ຍິນຍອມຫລັກການບາງຢ່າງ ເພື່ອວ່າຈະໄດ້ຍັບຍັ້ງ ການຂະຫຍາຍຕົວຂອງການປະຕິວັດໄວ້.

ໃນວັນທີ ໑໗ ເດືອນ ຕຸລາ ປີ ໑໙໐໕ ຄຳຖະແຫລງການຂອງພະເຈົ້າຊາ ກໍໄດ້ຖືກພິມອອກ.ພະເຈົ້າຊາໄດ້ໃຫ້ຄຳໝັ້ນສັນຍາວ່າຈະຈັດຕັ້ງອົງການນິຕິບັນຍັດແບບເລືອກຕັ້ງຂຶ້ນໃນລັດເຊຍໄດ້ແກ່ລັດຖະສະພາ ດູມາ ແລະໃຫ້ສັນຍາວ່າຈະໃຫ້ເສລີພາບໃນການປາກເວົ້າແລະເສລີພາບ ໃນການໂຮມຊຸມນຸມ.ຢູ່ໃນຕົວເມືອງຕ່າງໆ ກໍໄດ້ເກີດມີການເດີນຂະບວນເຊິ່ງຈັດຕັ້ງຂຶ້ນໂດຍຕຳຫລວດ. ພວກພໍ່ຄ້າ, ພະນັກງານ ແລະຕຳຫລວດ

ທີ່ມຸ່ງເຄື່ອງພິມລະເຣືອນ ກໍໄດ້ຊິມເຊີຍຄວາມກະລຸນາຂອງພະເຈົ້າຊາ. ຊາວກຳມະກອນບາງຄົນ ກໍໄດ້ເຊື່ອຄຳໝັ້ນສັນຍາຂອງພະເຈົ້າຊາ. ພວກເມນເຊວິກໄດ້ຊັກຊວນ ຊາວກຳມະກອນວ່າ ເພື່ອຢາກຈະໄດ້ຮັບຍົນຍອມບາງຢ່າງຈາກພະເຈົ້າຊານັ້ນ ພວກເຂົາຕ້ອງຢຸດການນັດຢຸດງານ. ພວກໂບນເຊວິກໄດ້ອະທິບາຍວ່າ ຄຳຖະແຫລງການຂອງພະເຈົ້າຊານັ້ນ ເປັນຄຳຫລອກລວງ. ພວກເຂົາໄດ້ຮຽກຮ້ອງໃຫ້ກະກຽມ ການຕໍ່ສູ້ເອົາເສລີພາບດ້ວຍອາວຸດ. ໃນບໍ່ຊ້າຊີວິດກໍໄດ້ພິສູດໃຫ້ເຫັນຄວາມຖືກຕ້ອງຂອງຊາວໂບນເຊວິກ ນັ້ນຄືພາຍຫລັງ ການພິມຄຳຖະແຫລງການຂອງພະເຈົ້າຊາໄດ້ສອງມື້ເທົ່ານັ້ນ ນັກໂບນເຊວິກ ຈີ ນິໂກລາຍ ບາອູມານ-ຜູ້ເປັນນັກປະຕິວັດທີ່ມີຊື່ສຽງກໍໄດ້ຖືກລອບຄາຕະກຳ ໂດຍຕົວແທນຕຳຫລວດ. ສະຫະພັນຂອງຜູ້ນິຍົມລາຊາທິປະໄຕ ເຊິ່ງນຳພາໂດຍຕຳຫລວດນັ້ນ ໄດ້ເກີດ ມີຂຶ້ນທົ່ວປະເທດ. ເຈົ້າຂອງຮ້ານຄ້າ, ເຈົ້ານາຍແລະນັກໂທດອາຊະຍາກຳທີ່ຖືກປ່ອຍຕົວອອກມາຈາກຄຸກນັ້ນ ໄດ້ເຂົ້າຮ່ວມ ສະຫະພັນເຫລົ່ານີ້ ໂດຍໄດ້ຮັບການສະໜູນທາງການເງິນ ຈາກລັດຖະບານ. ປະຊາຊົນໄດ້ເອີ້ນພວກໂຈນເຫລົ່ານີ້ວ່າ "ກອງປາບຮ້ອຍສີດຳ". ພວກກອງປາບຮ້ອຍສີດຳໄດ້ປາບປາມຊາວກຳມະກອນ, ໄດ້ພະຍາຍາມກໍ່ຄວາມ ເປັນສັດຕູ ກັນຂຶ້ນ ລະຫວ່າງຊາວຜູ້ອອກແຮງງານໃນບັນດາຊົນຊາດຕ່າງໆ. ພາຍຫຼັງການພິມຄຳຖະແຫລງການໄດ້ເດືອນປາຍ ພວກກອງປາບຮ້ອຍສີດຳແລະຕຳຫລວດ ກໍໄດ້ຂ້າປະຊາຊົນໄປ ເຖິງ ໔ ພັນຄົນ,

ບາດເຈັບແລະເສຍອົງຄະໄປຫລາຍກວ່າ ໑໐ ພັນຄົນ.

ເມື່ອໄດ້ໃຫ້ເສລີພາບ ຢ່າງເຕັມສ່ວນ ແກ່ພວກ ກອງປາບຮ້ອຍສີດຳນັ້ນແລ້ວ, ລັດຖະບານພະເຈົ້າຊາກໍໄດ້ດຳເນີນການລອບສັງຫານພວກໂບນເຊວິກຕໍ່ໄປ. ຢູ່ໃນໂຮງຈັກ ໂຮງງານຕ່າງໆ ຕຳຫລວດໄດ້ຈົດເອົາຊາວກຳມະກອນ ຜູ້ທີ່ກ້າວ ໜ້າເຂົ້າໄວ້ໃນບັນຊີ "ບຸກຄົນທີ່ບໍ່ຫນ້າໄວ້ວາງໃຈ". "ເສລີພາບ" ຂອງພະເຈົ້າຊາໄດ້ເປັນໄປແບບນັ້ນແຫລະ !

ໃນຕົ້ນເດືອນ ພະຈິກ ປີ ໑໙໐໕ ທ່ານເລນິນໄດ້ກັບຄືນມາລັດເຊຍ. ພາຍໃຕ້ການຊີ້ນຳຂອງທ່ານ ພວກໂບນເຊວິກກໍໄດ້ດຳເນີນການຕໍ່ສູ້ດ້ວຍການກະກຽມລຸກຮືຂຶ້ນຈັບອາວຸດ. ອາວຸດຕ່າງໆທີ່ຊື້ຈາກຕ່າງປະເທດນັ້ນ ໄດ້ຖືກນຳເຂົ້າມາສູ່ ລັດເຊຍຢ່າງລັບໆ. ຢູ່ໃນໂຮງຈັກໂຮງງານຕ່າງໆ ກໍໄດ້ຈັດຕັ້ງ ກອງສູ້ຮົບຂຶ້ນ ແລະຊາວກຳມະກອນກໍໄດ້ຮ່ຳຮຽນໃຊ້ອາວຸດ.

ໃນເດືອນ ທັນວາ ປີ ໑໙໐໕ ຊາວກຳມະກອນ ເມືອງມົດສະກູທີ່ມີອາວຸດຢູ່ໃນມືເປັນຄັ້ງທຳອິດນັ້ນ ກໍໄດ້ທຳການ ໂຈມຕີຕ້ານພະເຈົ້າຊາ. ວັນທີ ໗ ເດືອນ ທັນວາໂດຍປະຕິບັດຕາມຄຳຮຽກຮ້ອງຂອງສະພາໂຊວຽດຂອງຜູ້ແທນ ຊາວກຳມະກອນປະຈຳເມືອງມົດສະກູ ເຊິ່ງນຳພາ ໂດຍພວກໂບນເຊວິກ ນັ້ນພວກເຂົາກໍໄດ້ທຳການນັດຢຸດງານອີກຄັ້ງໜຶ່ງ. ຊາວ ກຳມະກອນໄດ້ພາກັນອອກມາສູ່ຖະໜົນ, ໂຮມຊຸມນຸມກັນແລ້ວກໍຍົກທຸງສີແດງຂຶ້ນ ພ້ອມທັງຮ້ອງເພັງປະຕິວັດທີ່ວ່າ:

ໄປສູ້ຮົບອັນນອງເລືອດ, ອັນສັກກະລະບູຊາ ແລະຖືກຕ້ອງ

ປະຊາຊົນຜູ້ອອກແຮງງານ ຈົ່ງໄປ, ຈົ່ງບຸກໜ້າໄປ !

ພວກເຂົາໄດ້ເລີ່ມສ້າງເຄື່ອງກີດຂວາງຕ່າງໆຂຶ້ນທົ່ວເມືອງມິດສະກູ. ພວກລູກຮ້ອນໄດ້ພາກັນອັດຖະໜົນຕ່າງໆ ຄືໄດ້ອັດທົ່ນທາງເຂົ້າ, ໄດ້ໂຮມເອົາເສົາໂທລະເລກມາຕັນ ໄດ້ກິ້ງເອົາກະຖັງເປົ່າແລະໄດ້ເອົາທ່ອນໄມ້ມາຕັນເດີນໄວ້.ເມື່ອໄດ້ ຕັນຖະໜົນທົ່ນທາງດ້ວຍເຄື່ອງກີດຂວາງຕ່າງໆແລ້ວ ພວກ ຊາວກຳມະກອນກໍໄດ້ຍິງສູ້ກັບທະຫານແລະຕຳຫລວດ ພະເຈົ້າຊາ. ການສູ້ຮົບແບບທໍລະຫົດອົດທົນທີ່ສຸດເປັນພິເສດແມ່ນໄດ້ດຳເນີນໄປຢູ່ໃນຄຸ້ມປະເລສະເນຍ (ປະຈຸບັນນີ້ ຄຸ້ມນັ້ນຂອງເມືອງມິດສະກູໄດ້ເອີ້ນວ່າ ກະລາສະນາຢາ ປະເລສະເນຍ (ບ້ານປະເລສະເນຍ ສີແດງ).

ສ່ວນຫລາຍທະຫານຂອງພະເຈົ້າຊາ ແມ່ນມາຈາກຊາວນາ. ພວກເຂົາຫລາຍໆຄົນ ບໍ່ຕ້ອງການທີ່ຈະຍິງອ້າຍຊາວກຳມະກອນ. ກໍລະນີນີ້ໄດ້ເກີດຂຶ້ນມາແນວນີ້ ຄືໄດ້ມີຝູງຊົນ ຊາວກຳມະກອນຍ່າງໄປຕາມຖະໜົນ ປະເລສະເນຍ ໂດຍມີພວກກຳມະກອນແມ່ຍິງຖືທຸງແດງອອກໜ້າ. ໃນທັນໃດນັ້ນ ກອງທະຫານມ້າທີ່ອອກມາຈາກແຈຖະໜົນນັ້ນ ກໍໄດ້ປາກົດຕົວຂຶ້ນ. ເມື່ອໄດ້ຊັກດາບແລະແສ້ອອກແລ້ວ ພວກເຂົາກໍໄດ້ໂຈມຕີຊາວກຳມະກອນ. ໂດຍທີ່ບໍ່ໄດ້ພັບທຸງແດງນັ້ນໄວ້ແຕ່ຢ່າງໃດ, ພວກເຂົາກໍມຸ່ງກົງໄປຫາພວກທະຫານມ້າເຫລົ່ານັ້ນ ຢ່າງບໍ່ມີຄວາມຢ້ານກົວແລ້ວ **ໄດ້ຮ້ອງຂຶ້ນວ່າ: "ຈົ່ງຂ້າພວກເຮົາ! ເມື່ອພວກເຮົາມີ ຊີວິດຢູ່ພວກເຮົາຈະບໍ່ໃຫ້ທຸງນີ້ແກ່ພວກທ່ານ!"**

ການສູ້ຮົບຢູ່ທີ່ຮົ້ວໂກລະບາຕີໃນມົດສະກູ ທີ່ຊຸມປະເລສະຍາໃນລະຫວ່າງການລຸກຮືຂຶ້ນຈັບອາວຸດໃນເດືອນທັນວາ ປີ ໑໙໐໕.

ເມື່ອພວກທະຫານມ້າເຫັນແນວນັ້ນ ກໍຢຸດນິ່ງຢູ່ ແລະລັງເລໃຈຢູ່ບຶດໜຶ່ງແລ້ວກໍໄດ້ຄວບມ້າກັບຄືນ. ບັນດານາຍພົນພະເຈົ້າຊາໄດ້ພາກັນຢ້ານວ່າ ພວກທະຫານຈະໄປເຂົ້າກັບຝ່າຍ ຊາວກຳມະກອນ, ດັ່ງນັ້ນຈຶ່ງໄດ້ເລີ່ມກັກທະຫານເຫລົ່ານັ້ນໄວ້ ໃນຄ້າຍ. ພະເຈົ້າຊານິໂກລາຍທີ II ໄດ້ສົ່ງພວກທະຫານຜູ້ທີ່ຈົງຮັກພັກດີຕໍ່ເຂົ້າໄປມົດສະກູ. ກອງທະຫານເຫລົ່ານີ້ໄດ້ປະກອບປືນໃຫຍ່ແລະປືນກົນໃຫ້.

ເປັນການຍາກສຳລັບຊາວກຳມະກອນ ທີ່ມີອາວຸດບໍ່ດີຈະໄປຕໍ່ສູ້ກັບກອງທະຫານພະເຈົ້າຊາໄດ້. ຄັນມາຮອດກາງເດືອນທັນວາການລຸກຮືຂຶ້ນຂອງຊາວກຳມະກອນຢູ່ໃນຊຸມຕ່າງໆສ່ວນຫຼາຍ

ຂອງຕົວເມືອງມິດສະກູນັ້ນ ກໍໄດ້ຖືກພັງທະລາຍລົງ. ເຖິງຢ່າງໃດກໍຕາມ ພວກນັກປ້ອງກັນຈຸ້ມ ປະເລສະເນຍ ກໍໄດ້ຕໍ່ສູ້ຢ່າງທໍລະຫົດອົດທົນ. ກອງທະຫານໄດ້ປິດລ້ອມຈຸ້ມນັ້ນໄວ້ ຈາກທຸກໆດ້ານ, ແຕ່ວ່າຊາວກຳມະກອນ ກໍຍັງບໍ່ຢຸດ ການຕໍ່ສູ້. ດັ່ງນັ້ນພວກນາຍທະຫານຈຶ່ງໄດ້ສັ່ງໃຫ້ຍິງປືນໃຫຍ່ໃສ່ຈຸ້ມນັ້ນ. ຝູງລູກປືນໃຫຍ່ກໍໄດ້ທຳລາຍສິ່ງກີດຂວາງເຫລົ່ານັ້ນ ຢ່າງຫນັກຫນ່ວງແລະບ້ານເຮືອນກໍໄດ້ຖືກເຜົາຜານໄປ. ມາຮອດເວລານີ້ເທົ່ານັ້ນ ຊາວກຳມະກອນຈຶ່ງໄດ້ຢຸດເຊົາການຕໍ່ຕ້ານນັ້ນຢ່າງມີການຈັດຕັ້ງເປັນຢ່າງດີ.

ຄະນະບັນຊາການຂອງຫນ່ວຍສູ້ຮົບປະຈຳຈຸ້ມປະເລສະເນຍໄດ້ຂຽນໄວ້ໃນຄຳຊຸທອນຂອງພວກຕົນວ່າ "ພວກເຮົາໄດ້ເລີ່ມຕົ້ນການລຸກຮື້ອນ ແລະບັດນີ້ພວກເຮົາກໍໄດ້ສຽງສຸດ ການລຸກຮື້ອນນັ້ນ, ເລືອດ, ຄວາມຮຸນແຮງ ແລະຄວາມຕາຍ ຈະ ຕິດຕາມພວກເຮົາໄປທຸກຫົນທຸກແຫ່ງ. ແຕ່ວ່າອັນນີ້ ກໍບໍ່ໄຮ້ຜົນປະໂຫຍດ. ອະນາຄົດຈະເປັນຂອງຂົບຂັ້ນກຳມະກອນຕໍ່ໄປ. ບົດຮຽນຂອງການຕໍ່ສູ້ຢູ່ໃນຈຸ້ມປະເລສະເນຍນີ້ ຈະສອນຄວາມ ທໍລະຫົດອົດທົນອັນນັ້ນໄວ້ໃຫ້ແກ່ຮຸນຄົນຂອງຊາວກຳມະກອນຢູ່ໃນປະເທດຕ່າງໆ".

ຄັນໄດ້ລ່າຖອຍໄປແລ້ວ, ຊາວກຳມະກອນເຫລົ່ານັ້ນກໍບໍ່ໄດ້ປະອາວຸດແຕ່ຢ່າງໃດ. ພວກເຂົາໄດ້ເວົ້າວ່າ "ພວກເຮົາຍັງຕ້ອງການມັນອີກຕໍ່ໄປ".

ການລຸກຮື້ອນຈັບອາວຸດຂອງຊາວກຳມະກອນຢູ່ໃນຕົວເມືອງ

ມົດສະກູນີ້ ແມ່ນເປັນຍອດການປະຕິວັດຂອງລັດເຊຍຄັ້ງທຳອິດ.

ການລຸກຮືຂຶ້ນຂອງຊາວກຳມະກອນເມືອງມົດສະກູ ແມ່ນໄດ້ຖືກປາບປາມລົງ. ແຕ່ວ່າປີເຄິ່ງຕໍ່ມາ ພາຍຫລັງເຫດການ ນີ້ແລ້ວ ການລຸກຮືຂຶ້ນແບບປະຕິວັດ ກໍໄດ້ເກີດຂຶ້ນມາອີກ. ພວກຊາວກຳມະກອນເມືອງ ນິສະນີ ໂນວະໂກໂລດ, ໂນວາລົດຊີອິສະກະ, ກະລາສະໂນຢາລະສະກະ, ຊິຕາ ແລະເມືອງອື່ນອື່ນອີກ ໄດ້ລຸກຂຶ້ນຈັບອາວຸດ ຕ້ານລະບອບພະເຈົ້າຊາ. ຊາວຜູ້ອອກແຮງງານອູກະລາອີນາ, ເອສະໂຕເນຍ, ເຂດໃຕ້ກາວະກາດແລະຊົນຊາດອື່ນໆພາຍໃນຊາຍແດນຂອງຈັກກະພົບລັດເຊຍກໍໄດ້ລຸກຂຶ້ນຕໍ່ສູ້ດ້ວຍອາວຸດ. ແຕ່ວ່າການລຸກຮືຂຶ້ນເຫລົ່ານີ້ບໍ່ໄດ້ດຳເນີນໄປໃນເວລາດຽວກັນ. ເພາະສະນັ້ນລັດຖະບານພະເຈົ້າຊາຈຶ່ງສາມາດເຄື່ອນຍ້າຍກອງທະຫານທີ່ໄວ້ໃຈໄດ້ນັ້ນຈາກເມືອງຫນຶ່ງໄປສູ່ເມືອງອື່ນໄດ້ ແລະ ທຳການ ປາບປາມການລຸກຂຶ້ນຈັບອາວຸດພ້ອມທັງກວາດລ້າງບັນດານັກປະຕິວັດໄປຢ່າງຮຸນແຮງ. ນັກໂບນເຊວິກ ຊື່ ອີວານ ບາບູສະກິນ, ກຳມະກອນ, ໄດ້ຖືກຍິງເປົ້າຢູ່ທີ່ຊຸບລີ ໂດຍບໍ່ມີການຕັດສິນ ຂອງສານ. ທ່ານເລນິນໄດ້ເວົ້າກ່ຽວກັບ ບາບູສະກິນແລະນັກປະຕິວັດຄົນອື່ນໆວ່າ : ຖ້າຫາກປາສະຈາກຜູ້ຄົນເຫລົ່ານີ້ແລ້ວປະຊາຊົນລັດເຊຍກໍຈະຍັງເປັນປະຊາຊົນ ແບບຂ້າທາດ, ປະຊາຊົນແບບກວາງລ່າມຕະຫລອດໄປ. ຍ້ອນຜູ້ຄົນເຫລົ່ານີ້ແຫລະປະຊາຊົນລັດເຊຍຈຶ່ງໄດ້ມີການປົດປ່ອຍຕົນເອງຢ່າງສົມບູນ ໃຫ້ອອກຈາກພວກກົດຂີ່ຂົ່ມເຫັງໄດ້ "   ".(ປະມວນບົດນິພົນເລນິນ,

ເຫລັ້ມທີ ໔໐, ໜ້າ ໗໔). ບັນດານັກຣົບຜູ້ໃໝ່ ກໍໄດ້ເຂົ້າມາແທນທີ່ຂອງນັກປະຕິວັດ ຜູ້ທີ່ໄດ້ເສຍສະລະຊີວິດໄປນັ້ນ. ພັກເລນິນຂອງພວກໂບນເຊວິກໄດ້ມີຄວາມເຂັ້ມແຂງ ແລະ ມີຈຳນວນເພີ່ມຂຶ້ນ.

ໃນປີ ໑໙໐໖ ຊາວນາໄດ້ລຸກຮື້ຂຶ້ນ ເປັນຈຳນວນຫຼວງຫຼາຍ. ພວກຊາວນາໄດ້ປຸ້ນສະດົມເອົາຊັບສົມບັດ ຂອງພວກເຈົ້າທີ່ດິນ, ແລະໄດ້ແບ່ງທີ່ດິນຂອງພວກເຂົາ ໃນລະຫວ່າງຊາວນາເອງ. ແຕ່ວ່າຄັນໄດ້ທຳການຕໍ່ຕ້ານພວກເຈົ້າທີ່ດິນແລ້ວ, ຊາວນາສ່ວນຫລວງຫລາຍກໍບໍ່ໄດ້ທຳການຕໍ່ຕ້ານພະເຈົ້າຊາ, ສິ່ງນີ້ເອງເປັນເຫດຜົນສຳຄັນອັນໜຶ່ງຂອງການປະລາໄຊ ໃນການປະຕິວັດ. ນອກນັ້ນຊາວນາກໍບໍ່ໄດ້ມີແຜນການດຳເນີນງານ ຢ່າງຈະແຈ້ງພ້ອມທັງມີການພົວພັນຕິດຕໍ່ກັບພວກນັກປະຕິວັດຊາວກຳມະກອນຢ່າງເບົາບາງ. ໃນປີ ໑໙໐໗ ລັດຖະບານພະເຈົ້າຊາໄດ້ຮັບຜົນສຳເລັດໃນການປາບປາມ ການລຸກຮື້ຂຶ້ນ ແບບປະຕິວັດໃນປະເທດ. ຜູ້ຄົນ ໔໕ ພັນປາຍຄົນ ໄດ້ຖືກຂັງຄຸກ, ຖືກໄປເຮັດວຽກໜັກແລະຖືກເນລະເທດ ແລະບັນດານັກປະຕິວັດ ໔ ພັນປາຍຄົນກໍໄດ້ຖືກສັ່ງຫານຊີວິດໄປຕາມຄຳສັ່ງຂອງສານພະເຈົ້າຊາ. ຜູ້ຄົນຫລາຍພັນຄົນໄດ້ຖືກຂ້າຕາຍ ແລະ ຖືກເສຍອົງຄະຍ້ອນການກະທຳຂອງພວກກອງປາບຮ້ອຍສິດຳ.

ການປະຕິວັດລັດເຊຍຄັ້ງທຳອິດ ໄດ້ສອນບົດຮຽນ ອັນມີຄຸນຄ່າໃຫ້ແກ່ຊາວຜູ້ອອກແຮງງານລັດເຊຍໄວ້ຢ່າງຫລວງຫລາຍ. ເລນິນພ້ອມທັງເພື່ອນຮ່ວມງານຂອງທ່ານໄດ້ອະທິບາຍແກ່ຊາວ

ກຳມະກອນໄວ້ວ່າ ເພື່ອຢາກໄດ້ໄຊຊະນະນັ້ນມັນຈຳເປັນຕ້ອງ ໂຈມຕີຢ່າງເດັດຂາດ. ໃນການກະກຽມເພື່ອການລຸກຮືຂຶ້ນ ນັ້ນ ມັນມີຄວາມຈຳເປັນທີ່ຈະຕ້ອງເອົາຊະນະ ຕໍ່ຝ່າຍທະຫານຂອງ ຕົນໃຫ້ໄດ້. ການລຸກຮືຂຶ້ນຈັບອາວຸດ ຈຳເປັນຕ້ອງເຮັດໄປໃນ ເວລາດຽວກັນຢູ່ໃນເມືອງຕ່າງໆ. ຊາວກຳມະກອນຕ້ອງຊັກດຶງ ເອົາຊາວນາໃຫ້ເຂົ້າຮ່ວມກັບຕົນ ໃນການຕໍ່ສູ້ຕ້ານລະບອບພະ ເຈົ້າຊາ.

ການປະຕິວັດ ປີ ໑໙໐໕-໑໙໐໗ ນັ້ນ ໄດ້ສະແດງໃຫ້ເຫັນ ວ່າ ມີແຕ່ຊາວໂບນເຊວິກແບບເລນິນເທົ່ານັ້ນ ຈຶ່ງຈະ ຈັດຕັ້ງ ການຕໍ່ສູ້ເພື່ອເອົາໄຊຊະນະມາໃຫ້ຢ່າງແທ້ຈິງໄດ້. ພວກເຂົາ ແມ່ນເປັນກອງນຳຫນ້າຂອງການລຸກຮືຂຶ້ນຢູ່ສະເຫມີ. ພວກເມນ ເຊວິກໄດ້ພະຍາຍາມຂັດຂວາງ ການຂະຫຍາຍຕົວ ຂອງການ ປະຕິວັດຢູ່ຕະຫລອດເວລາ. ພວກເຂົາໄດ້ຂັດຂວາງ ການລຸກ. ຂຶ້ນຈັບອາວຸດຂອງຊາວກຳມະກອນເມືອງເປເຕລະບູກ ຜູ້ເຊິ່ງ ໄດ້ໃຫ້ການສະຫນັບສະຫນູນແກ່ເພື່ອນສະຫາຍຂອງຕົນທີ່ເມືອງ ມົດສະກູໃນເດືອນທັນວາ ປີ ໑໙໐໕ ນັ້ນ. ຄັນໄດ້ຕີລາຄາຜົນ ຂອງການປະຕິວັດແລ້ວ, ພວກເມນເຊວິກກໍໄດ້ເວົ້າວ່າ "ມັນ ບໍ່ຈຳເປັນທີ່ຈະຕ້ອງຕໍ່ສູ້ດ້ວຍອາວຸດ!". ເລນິນພ້ອມດ້ວຍເພື່ອນ ຮ່ວມງານໄດ້ຕອບພວກເຂົາວ່າ: "ກົງກັນຂ້າມ, ມັນຈຳເປັນ ຕ້ອງຕໍ່ສູ້ດ້ວຍອາວຸດຢ່າງເດັດດ່ຽວ, ເຂັ້ມແຂງ ແລະຮຸນແຮງ ຫລາຍຂຶ້ນກວ່າເກົ່າ, ມັນຈຳເປັນຕ້ອງອະທິບາຍໃຫ້ມະຫາຊົນ ຟັງ...ກ່ຽວກັບຄວາມຈຳເປັນໃນການຕໍ່ສູ້ດ້ວຍອາວຸດ ຢ່າງບໍ່

ຢ້ານກົວແລະບໍ່ລັງເລໃຈ " ".(ປະມວນບົດນິພົນ ເລນິນ, ເຫລັ້ມທີ ໑໓ ຫນ້າ ໓໗໑-໓໗໔.) ໃນລະຫວ່າງການປະຕິວັດນັ້ນ ຊາວກຳມະກອນສ່ວນຫລວງຫລາຍ ໄດ້ເຂົ້າໃຈວ່າ ມັນມີຄວາມຈຳເປັນທີ່ຈະຕ້ອງໄປຕາມພວກ **ໂບນເຊວິກ**, ໄປຕາມທ່ານເລນິນ, ແລະມັນເປັນໄປບໍ່ໄດ້ທີ່ຈະໄປເຊື່ອຟັງ ຄຳຫມັ້ນສັນຍາຂອງພະເຈົ້າຊາແລະຈຸ້ມຈຸ້ມນາຍທຶນ. ມັນມີຄວາມ ຈຳເປັນທີ່ຈະຕ້ອງຕໍ່ສູ້ ບໍ່ແມ່ນເພື່ອໃຫ້ມີການຍິນຍອມແບບສ່ວນຕົວກັບຝ່າຍລັດຖະບານ ແຕ່ຫາກເພື່ອການທຳລາຍອຳນາດ ຂອງພະເຈົ້າຊາ, ຂອງພວກນາຍທຶນແລະພວກເຈົ້າທີ່ດິນ. ການປາກົດຂຶ້ນຂອງສະພາໂຊວຽດແທ່ງຜູ້ແທນກຳມະກອນນັ້ນ ແມ່ນສະແດງໃຫ້ເຫັນວ່າ ຊາວກຳມະກອນໄດ້ຮູ້ຈັກວິທີການຈັດຕັ້ງ, ວ່າພວກເຂົາກຽມພ້ອມທີ່ຈະຍຶດເອົາອຳນາດມາໄວ້ໃນມືຂອງຕົນ.

ເມື່ອພິຈາລະນາເບິ່ງລັກສະນະ ແລະຫນ້າທີ່ຂອງມັນແລ້ວ, ການປະຕິວັດ ປີ ໑໙໐໕ ຢູ່ໃນລັດເຊຍນັ້ນ ແມ່ນມີ ລັກສະນະແບບປະຊາທິປະໄຕນາຍທຶນ ເພາະວ່າມັນບໍ່ໄດ້ແນໃສ່ ບັນຫາການລົບລ້າງລະບອບທຶນນິຍົມໂດຍກົງ. ຢ່າງໃດກໍຕາມ, ຄືກັນກັບທີ່ໄດ້ກ່າວມາແລ້ວນັ້ນ, ການປະຕິວັດນີ້ ມັນກໍມີລັກສະນະພິເສດຈຳນວນຫນຶ່ງ ເຊິ່ງວ່າແຕກຕ່າງໄປຈາກ ການ ປະຕິວັດນາຍທຶນໃນເອີລົບຕາເວັນຕົກທີ່ແລ້ວມາ. ລັກສະນະພິເສດເຫຼົ່ານີ້ ແມ່ນໄດ້ສ້າງຄວາມອາດສາມາດໃຫ້ແກ່ການປ່ຽນແປງໄປສູ່ການປະຕິວັດສັງຄົມນິຍົມ.

ການປະຕິວັດລັດເຊຍຄັ້ງທຳອິດ ແມ່ນເປັນການ ລຸກຮື ຂຶ້ນ

ໂດຍປະຊາຊົນ ເຊິ່ງນຳພາໂດຍຊາວກຳມາຊີບ. ໃນກໍລະນີນີ້ ແລະຄັນເວົ້າເຖິງວິທີການຕໍ່ສູ້ຄືກັນແລ້ວ (ການນັດຢຸດງານ ທີ່ຂະຫຍາຍຕົວຂຶ້ນໄປສູ່ການລຸກຂຶ້ນຈັບອາວຸດ)ນັ້ນມັນກໍເປັນການປະຕິວັດຂອງຊາວກຳມາຊີບ.

ການປະຕິວັດລັດເຊຍຄັ້ງທຳອິດ ແມ່ນໄດ້ຮັບການປະລາໄຊລົງແລ້ວ, ແຕ່ວ່າຊາວກຳມາຊີບຜູ້ນຳພາການປະຕິວັດແລະມະຫາຊົນຜູ້ອອກແຮງງານ ຜູ້ເຂົ້າຮ່ວມໃນການປະຕິວັດນັ້ນ ແມ່ນໄດ້ມີບົດຮຽນອັນໃຫຍ່ຫລວງໃນການຕໍ່ສູ້ແບບປະຕິວັດ, ສ່ວນພັກຂອງຊາວໂບນເຊວິກກໍໄດ້ມີບົດຮຽນອັນໃຫຍ່ຫລວງໃນການຈັດຕັ້ງມວນຊົນເຂົ້າຮ່ວມໃນການຕໍ່ສູ້ເຊັ່ນດຽວກັນ. ທ່ານເລນິນໄດ້ຂຽນໄວ້ວ່າ "ຄັນບໍ່ມີການຝຶກຊ້ອມທົ່ວໆໄປແບບນີ້" ຄືຢ່າງ ປີ ໑໙໐໕ ແລ້ວ ການປະຕິວັດໃນປີ ໑໙໑໗ ທັງຂອງຊົນຊັ້ນນາຍທຶນ ຄືການປະຕິວັດເດືອນກຸມພາ ແລະທັງຂອງຊາວກຳມາຊີບຄືການປະຕິວັດເດືອນຕຸລາ ກໍບໍ່ສາມາດ ຈະມີຂຶ້ນໄດ້ "1)".

ການປະຕິວັດລັດເຊຍຄັ້ງທຳອິດ ແມ່ນມີຄວາມໝາຍ ທາງສາກົນອັນຍິ່ງໃຫຍ່. ທ່ານເລນິນໄດ້ຖືການປະຕິວັດລັດເຊຍໃນປີ ໑໙໐໕-໑໙໐໗ ວ່າ "ເປັນການເລີ່ມຕົ້ນ ໃຫ້ແກ່ການປະຕິວັດເອີລົບທີ່ພວມຈະຕິດຕາມມາ "2)".

ຕົວຢ່າງຂອງຊາວຜູ້ອອກແຮງງານລັດເຊຍ ທີ່ໄດ້ໂຍນບາດ

---

1) ປະມວນບົດນິພົນເລນິນ, ເຫລັ້ມທີ ໓໖ ໜ້າ ໓໐໖ .

2) ປະມວນບົດນິພົນເລນິນ, ເຫລັ້ມທີ ໓໐ ໜ້າ ໓໔໗ .

ລ້ອນລຶງທຳອິດໃສ່ລະບອບອັດຕາທິປະໄຕນັ້ນ ແມ່ນໄດ້ເຮັດໃຫ້ ຊາວຜູ້ອອກແຮງງານ ໃນປະເທດຕ່າງໆຖືເອົາເປັນຕົວຢ່າງ. ຊາວກຳມະກອນແຫ່ງປະເທດເຢຍລະມັນ, ອິຕາລີ, ໂອຕະລິດ-ຮຸງກາລີ ກໍໄດ້ສວຍໃຊ້ເອົາບົດຮຽນຂອງລັດເຊຍນີ້ ໄປເປັນ ການຈັດຕັ້ງການນັດຢຸດງານທາງການເມືອງຢ່າງມີຜົນສຳເລັດ. ຊາວຜູ້ອອກແຮງງານນະຄອນປາລີ ໄດ້ປະກາດຄວາມສາມັກຄີ ຂອງຕົນກັບພວກນັກປະຕິວັດລັດເຊຍ. ຢູ່ໃນນະຄອນປະລາກ, ບູດາເປັດ, ລະວົບ ແລະ ວຽນ ກໍໄດ້ເກີດມີກະແສຟອງການ ເດີນຂະບວນທາງການເມືອງ ແລະການນັດຢຸດງານຂຶ້ນ ຢ່າງ ໃຫຍ່ຫລວງແລະກໍໄດ້ບັງຄັບໃຫ້ລັດຖະບານໂອຕະລິດ-ຮຸງກາລີ ນຳເອົາສິດການເລືອກຕັ້ງທົ່ວໆໄປມາໃຊ້.ພ້ອມກັນນັ້ນຊາວກຳ ມະກອນ ບຸນກາລີກໍໄດ້ດຳເນີນການຕໍ່ສູ້ທາງການເມືອງ ຢ່າງ ທໍລະຫົດອົດທົນ ເຊັ່ນດຽວກັນ.

ພາຍໃຕ້ອິດທິພົນຂອງການປະຕິວັດລັດເຊຍ ຄັ້ງທີໜຶ່ງໂດຍ ກົງ ກະແສຟອງອັນເຂັ້ມແຂງ ຂອງຂະບວນການປົດປ່ອຍ ຊົນ ຊາດກໍໄດ້ປາກົດຂຶ້ນ. ຢູ່ໃນປະເທດຈີນ, ອີລັງ, ຕູລະກີ ໃນ ປີ ໑໙໐໕-໑໙໑໘ ການປະຕິວັດຊົນຊັ້ນນາຍທຶນກໍໄດ້ເກີດຂຶ້ນ. ການຂະຫຍາຍຕົວທາງດ້ານການຕໍ່ສູ້ປົດປ່ອຍຊາດຢູ່ໃນອິນເດຍ, ອາຟະການິສະຖານ ແລະ ອິນໂດເນເຊຍ ກໍໄດ້ເລີ່ມຕົ້ນຂຶ້ນ. ກະແສຟອງປະຕິວັດ ໄດ້ແຜ່ລາມໄປຮອດປະເທດ ອາເມລິກາ ລາຕິນ ເຊັ່ນ ເມກຊິກ, ອາເຢນຕິນາ, ຊິລີແລະບະລາຊິນ. ສຽງກ້ອງສະນັ່ນຂອງການປະຕິວັດລັດເຊຍ ກໍໄດ້ຍິນ ໄປຮອດ

ທະວີບອາຟະລິກາ.

ເມື່ອໄດ້ປາບປາມການປະຕິວັດ ປີ ໑໙໐໕-໑໙໐໗ແລ້ວ ລັດຖະບານພະເຈົ້າຊາ ກໍໄດ້ພະຍາຍາມປ້ອງກັນບໍ່ໃຫ້ການປະຕິວັດໃຫມ່ເກີດຂຶ້ນ ດ້ວຍການໃຊ້ຄວາມຮຸນແຮງ, ການນາບຂູ່ ແລະການຫລອກລວງ. ສານທະຫານພິເສດໄດ້ລົງໂທດຜູ້ເຂົ້າຮ່ວມການນັດຢຸດງານຢ່າງໂຫດຮ້າຍປ່າເຖື່ອນ. ພວກນາຍທຶນໄດ້ຕົກລົງລະຫວ່າງພວກເຂົາເອງວ່າ ພວກເຂົາຈະບໍ່ຮັບເອົາຊາວກຳມະກອນຜູ້ທີ່ມີຊື່ຢູ່ໃນບັນຊີ "ບຸກຄົນທີ່ບໍ່ຫນ້າໄວ້ວາງໃຈ" ນັ້ນ ເຂົ້າເຮັດວຽກຢູ່ໃນໂຮງຈັກໂຮງງານຂອງຕົນ. ພວກນາຍທຶນໄດ້ພາກັນປະກາດຢ່າງເຍາະເຍີ້ຍວ່າ "ຂໍໃຫ້ພວກເຂົາອຶດຕາຍຈັກບຶດເສຍກ່ອນ. ເພື່ອວ່າພວກເຂົາຈະບໍ່ໄດ້ກໍ່ການ ນັດຢຸດງານຂຶ້ນ". ລັນໄດ້ຟື້ນຕົວຂຶ້ນມາຈາກການຢ້ານກົວນັ້ນແລ້ວ ພວກເຈົ້າຂອງໂຮງຈັກໂຮງງານ ກໍໄດ້ປະຕິເສດ ຂໍ້ຍິນ ຍອມຕ່າງໆທີ່ພວກຊາວກຳມະກອນໄດ້ຮັບມາໃນລະຫວ່າງການປະຕິວັດນັ້ນ. ເຈົ້າຫນ້າທີ່ພະເຈົ້າຊາໄດ້ທຳທ່າວ່າ ມີຄວາມສົນໃຈໃນຊີວິດການເປັນຢູ່ຂອງຊາວກຳມະກອນ ແລະ ກໍໄດ້ດຳເນີນການສຳຫລວດສະພາບການຂອງພວກເຂົາ. ດັ່ງນັ້ນໃນຄຳລາຍງານສະບັບຫນຶ່ງສຳລັບປີ ໑໙໐໘ ນັ້ນ ມັນໄດ້ໃຫ້ຂໍ້ສັງເກດໄວ້ວ່າ ຊາວກຳມະກອນທີ່ມີຄອບຄົວເຄິ່ງຫນຶ່ງຫລືຊາວກຳມະກອນໂສດເກືອບທັງຫມົດໃນເມືອງເປເຕລະບຸກ ມີແຕ່ຕຽງນອນຫລືວ່າ ຕຽງຜ້າເທົ່ານັ້ນ ຢູ່ໃນເຮືອນພັກ. ສະພາບການ ຢູ່ໃນບໍ່ຖ່ານຫີນ ຫລືວ່າໃນບໍ່ແຮ່ຂອງປະເທດ ຍິ່ງຮ້າຍແຮງ ກວ່ານັ້ນ

ອີກ. ພາຍຫລັງໄປຢັ່ງມຢາມບໍ່ຖ່ານຫີນໂດນບັດ ໃນປີ ໑໙໐໑ ມາແລ້ວ ຄະນະກຳມະການກໍໄດ້ດຳເນີນການພິສູດໂດຍໄດ້ຕັ້ງ ຂໍ້ສັງເກດໄວ້ວ່າ "ກະຕູບໃຕ້ດິນຂອງຊາວກຳມະກອນທີ່ມີຄອບ ຄົວນັ້ນ ຄະນະກຳມະການບໍ່ສາມາດຈະພັນລະນາໄດ້ເພາະວ່າ ມັນບໍ່ເຫມາະສົມຮອດສັດລ້ຽງອີກ". ລາຍງານຂອງຄະນະກຳ ມະການ ໄດ້ຮິບໂຮມໄວ້ຢ່າງເປັນລະບຽບ ແຕ່ສະພາບ ການ ເປັນຢູ່ຂອງຊາວກຳມະກອນນັ້ນ ກໍບໍ່ມີຫຍັງປ່ຽນແປງ.

ເພື່ອຈະຍັບຍັ້ງການລຸກຮື້ຂຶ້ນຂອງຊາວນາໄວ້ໄດ້ນັ້ນ ລັດຖະ ບານພະເຈົ້າຊາກໍໄດ້ເລີ່ມຕົ້ນ ເຄື່ອນຍ້າຍຊາວນາ ຜູ້ທຸກຍາກ ໄປສູ່ດິນແດນຊີບີລີ. ຢ່າງໃດກໍດີພວກທີ່ໄປຕັ້ງຖິ່ນຖານ ໂດຍບໍ່ ໄດ້ຮັບການຊ່ອຍເຫລືອໃນຂັ້ນຕົ້ນນັ້ນ ກໍບໍ່ສາມາດ ຈະທຳການ ສັບຊ່າວດິນໃຫມ່ ເພື່ອການປູກຝັງໄດ້. ມີຜູ້ຄົນຈຳນວນຫລວງ ຫລາຍໄດ້ຕາຍໄປຍ້ອນຄວາມອຶດຢາກ ແລະເຈັບໄຂ້ໄດ້ປ່ວຍ. ບັນດາພວກທີ່ກັບຄືນມາ ກໍບໍ່ມີທາງເລືອກ ນອກຈາກເປັນແຮງ ງານຮັບຈ້າງໃຫ້ແກ່ພວກຊາວນາຮັ່ງອີກ.

ການລ່າຕິດຕາມພວກໂບນເຊວິກ ຢ່າງເອົາຈິງເອົາຈັງໄດ້ ດຳເນີນໄປທົ່ວປະເທດ. ພວກສາລະວັດຕຳຫລວດ ໄດ້ວາງ ສາຍລັບແລະຫນ່ວຍທຳລາຍໄວ້ໃນອົງການຈັດຕັ້ງຂອງຊາວກຳ ມະກອນ. ຕັ້ງແຕ່ປີ ໑໙໐໗ ໄປເຖິງປີ ໑໙໑໐ ຕຳຫລວດໄດ້ ຈັບສະມາຊິກຂອງຄະນະກຳມະການໂບນເຊວິກ ປະຈຳເມືອງ ຫລາຍຄັ້ງຫລາຍຄາວ. ບັນດານັກປະຕິວັດຜູ້ມີຊື່ສຽງ ຫລາຍໆ ຄົນໄດ້ຖືກຈັບໄປຂັງຄຸກ ແລະເນລະເທດ ໄປເຮັດວຽກຫນັກ.

ສະໂຕລີປິນ ຫົວໜ້າລັດຖະບານຂອງພະເຈົ້າຊາໄດ້ຖືກປະຊາຊົນ ເອີ້ນວ່າ "ເພັດຊະຄາດ".

ພາຍໃຕ້ການໂຈມຕີອັນໂຫດຮ້າຍ ຂອງລະບອບພະເຈົ້າຊານັ້ນ ພວກນັກບອນເຊວິກ ກໍໄດ້ສືບຕໍ່ການຕໍ່ສູ້ໄປ ໂດຍດຳເນີນການແບບໃຕ້ດິນ. ເພື່ອປ້ອງກັນຊີວິດຂອງຜູ້ນຳໄວ້ນັ້ນ ໃນລະດູໃບໄມ້ລົ່ນ ປີ ໑໙໐໗ ສູນກາງພັກໂບນເຊວິກ ກໍໄດ້ສະເໜີໃຫ້ທ່ານເລນິນ ອອກເດີນທາງໄປຕ່າງປະເທດ. ເພື່ອຈະເຮັດສິ່ງນີ້ໄດ້ນັ້ນ ມັນມີຄວາມຍາກລຳບາກຫລາຍ. ທ່ານເລນິນບໍ່ສາມາດຈະເດີນທາງໄປດ້ວຍກຳປັ່ນ ຈາກທ່າເຮືອ ອາໂບໃນຟິນແລນໄດ້ ເຊິ່ງເປັນບ່ອນທີ່ສາຍລັບໄດ້ສິ່ງຊອມເບິ່ງຢູ່ຕະຫລອດເວລາ. ດັ່ງນັ້ນ ມັນຈຶ່ງມີທາງອອກຢູ່ທາງດຽວ ຄື ອອກເດີນທາງຍ່າງໄປຕາມນ້ຳກ້ອນທີ່ຈັບບໍ່ແຂງປານໃດ ໄປຮອດ ໓ ກິໂລແມດ ຈຶ່ງຮອດດອນທີ່ຢູ່ໃກ້ໆ ແລະຈາກບ່ອນນັ້ນຈຶ່ງສາມາດເດີນທາງໄປດ້ວຍກຳປັ່ນໄດ້. ໃນສາຍທາງທີ່ຍ່າງໄປນັ້ນທ່ານເລນິນເກືອບຈະເສັຍຊີວິດໄປ ເພາະວ່າ ຢູ່ໃນບ່ອນໜຶ່ງ ນັ້ນນ້ຳກ້ອນໄດ້ເປື່ອຍຍຸບລົງໄປ.

ເມື່ອໄປເຖິງຕ່າງປະເທດແລ້ວ ທ່ານເລນິນກໍໄດ້ຂຽນບົດ-ຄວາມຂອງຕົນລົງ ໃນໜັງສືພິມ "ປະໂລລີຕາລີ" ຂອງພວກໂບນເຊວິກ ແລະໃນນັ້ນ ທ່ານໄດ້ອະທິບາຍບົດຮຽນການປະຕິວັດ ຄັ້ງທຳອິດ ໃຫ້ແກ່ປະຊາຊົນຟັງ, ໄດ້ສະໜັບສະໜູນບຸກຄົນຜູ້ທີ່ມີຈິດໃຈເດັດດ່ຽວ, ໄດ້ເປີດເຜີຍການຫັກຫລັງ ພວກເມນເຊວິກ ແລະໄດ້ກະກຽມຊາວຜູ້ອອກແຮງງານໄວ້ ເພື່ອ

ການຕໍ່ສູ້ຄັ້ງໃຫມ່. ຕາມຄໍາແນະນໍາຂອງເລນິນນັ້ນ ພວກໂບນ ເຊວິກຕ້ອງສວຍໃຊ້ເອົາທຸກໆໂອກາດ ເພື່ອສ້າງສາຍພົວພັນ-ກັບຊາວກໍາມະກອນ. ຄັນໄດ້ພະຍາຍາມຫັນຊາວ ກໍາມະກອນ ໃຫ້ອອກຈາກການຕໍ່ສູ້ທາງການເມືອງແລ້ວ, ພວກນາຍທຶນແລະ ສະຫນຸນຮັບໃຊ້ຂອງພວກມັນ ກໍໄດ້ສ້າງສະມາຄົມ ແລະສັງຄົມ ຕ່າງໆອື່ນ ຄື ສະຫະກອນ, ຊ່າງຫັດຖະກໍາ ແລະອື່ນໆ ອີກ. ບັນດານັກປຸກລະດົມອົບຂວາຍຊາວໂບນເຊວິກຜູ້ທີ່ແຊກຊຶມຢູ່ໃນ ອົງການຈັດຕັ້ງຕ່າງໆເຫລົ່ານີ້ ກໍໄດ້ອະທິບາຍໃຫ້ແກ່ຊາວກໍາມະກອນ ຟັງວ່າ ເພື່ອທີ່ຈະເຮັດໃຫ້ຊີວິດການເປັນຢູ່ຂອງພວກເຂົາດີຂຶ້ນ ນັ້ນ ມັນມີທາງເປັນໄປໄດ້ ແຕ່ພຽງໂຄ່ນລົ້ມລະບອບ ອັດຕາທິ ປະໄຕລົງເທົ່ານັ້ນ. ພວກໂບນເຊວິກໄດ້ເປີດເຜີຍ ໃຫ້ເຫັນ ເຖິງບຸກຄົນຜູ້ທີ່ຕົບແຕ່ງຄໍາເວົ້າອັນຈົບງາມ ເພື່ອເຮັດໃຫ້ຊາວ ຜູ້ອອກແຮງງານ ຫັນອອກໄປຈາກການຕໍ່ສູ້ ປະຕິວັດ.

ຢູ່ທີ່ມືດສະກູ ນັກໂບນເຊວິກທີ່ເປັນກໍາມະກອນ ,ຊື່ ມິຄາອິນ ກາລີນິນ ກໍໄດ້ສ້າງ "ສະໂມສອນ ເພື່ອຊຸມຄົນຜູ້ທີ່ບໍ່ຮັ່ງມີ" ຂຶ້ນ. ສະໂມສອນນີ້ ໄດ້ກາຍເປັນສູນກາງການປຸກລະດົມອົບຂວາຍ-ຂອງຊາວໂບນເຊວິກໄປ. ເມື່ອຕໍາຫລວດພົບກິດຈະການຂອງ ສະໂມສອນນີ້ແລ້ວ ກໍຈັບມິຄາອິນ ກາລີນິນ ແລະເນລະເທດ-ຫນີໄປ.

ພວກໂບນເຊວິກໄດ້ແຈກຢາຍຫນັງສືພິມປະໂລລີຕາລີ(ຊາວ ກໍາມາຊີບ), ໃບປິວທີ່ພິມອອກມາໂດຍເຄື່ອງພິມໃຕ້ດິນນັ້ນໄປ ໃນຫມູ່ຊາວຜູ້ອອກແຮງງານ. ວຽກງານແບບນີ້ໄດ້ດໍາເນີນໄປ

ທີ່ວປະເທດ. ພຽງແຕ່ໃນອູລານເທົ່ານັ້ນກໍມີເຄື່ອງພິມໃຕ້ດິນຢູ່-ຮອດ ໑໑ ແຫ່ງ, ແລະກ່ອນວັນທີ ໑ ພຶດສະພາ ປີ ໑໙໐໕ ພວກໂບນເຊວິກເມືອງບາກູ ກໍໄດ້ພິມໃບປິວ ທີ່ເປັນພາສາລັດເຊຍ, ພາສາອາເຊລະໃບຊານ ແລະອາລະເມເນຍ ອອກຮອດ ໔໐ ພັນສະບັບ.

ຢູ່ໃນກອງທັບ ໃບປິວກໍໄດ້ແຈກຢາຍໄປເຖິງຄືກັນ. ພວກໂບນເຊວິກ ໄດ້ຮຽກຮ້ອງເຖິງພວກທະຫານວ່າ "ຈົ່ງມາຮ່ວມມືກັນກັບຊາວກຳມະກອນແລະຊາວນາ, ຊ່ວຍໃຫ້ພວກເຂົາຍຶດເອົາທີ່ດິນຈາກເຈົ້າທີ່ດິນ, ຊ່ວຍໃຫ້ພວກເຂົາໂຄ່ນລົ້ມ ກຸ່ມລະບອບອັດຕາທິປະໄຕ ທີ່ເປິເປື້ອນໄປດ້ວຍເລືອດແລະຈົ່ງໃຫ້ປະຊາຊົນເອງ ປົກຄອງປະເທດຂອງພວກເຂົາ ໂດຍຜ່ານການເລືອກຕັ້ງຂອງຕົນ".

ການຕິດຕາມລອບທຳຮ້າຍພວກໂບນເຊວິກ ໄດ້ທະວີຄວາມຮຸນແຮງຂຶ້ນ. ນັກປະຕິວັດຜູ້ເຂັ້ມແຂງ, ຢາກອບ ຊະເວລະດະລິບ ທີ່ເປັນນັກຈັດຕັ້ງການຕໍ່ສູ້ຢູ່ໃນອູລານແລະໃນເປເຕລະບູກ ໄດ້ຖືກເນລະເທດໄປເຖິງສອງເທື່ອ ແລະກໍໂຕນໜີຈາກຄ້າຍນາລິມ ທີ່ຢູ່ຫ່າງໄກມາໄດ້ເຖິງສອງເທື່ອຄືກັນ. ມິຄາອິນ ຟະລຸນເຊ ຫົວໜ້າຊາວກຳມະກອນຕໍ່າແຜ່ນ ເມືອງ ອີວາໂນວາ ໄດ້ຖືກຕັດສິນໃຫ້ປະຫານຊີວິດ, ແລະມີແຕ່ຄວາມຄຽດແຄ້ນຂອງປະຊາຊົນ ທີ່ໄດ້ລະເບີດຂຶ້ນຢ່າງຮຸນແຮງເທົ່ານັ້ນ ຈຶ່ງໄດ້ບັງຄັບໃຫ້ລັດຖະບານພະເຈົ້າຊາ ປ່ຽນຈາກການປະຫານຊີວິດມາເປັນການລົງໂທດໄປຮັດວຽກໜັກເຖິງ ໑໐ ປີ.

ພວກນັກໂບນເຊວິກ ຄື ສະຕາລິນ, ໂອລະດະໂຊນິກິດຄະເຊ, ຊາອູມານ ຜູ້ທີ່ນຳພາການຕໍ່ສູ້ປະຕິວັດ ຢູ່ໃນເຂດພູ ກາວະກາດ, ກໍລິບ ຫົວໜ້າການປຸກລຸກຂົນຂວາຍຂອງຊາວໂບນເຊວິກ ຢູ່ໃນຊີບີລີ ແລະຕໍ່ມາໃນພາກເໜືອພູກາວະກາດກໍໄດ້ຖືກຈັບ ແລະຈຳຄຸກຢູ່ຫລາຍໆຄັ້ງ.

ນັກໂບນເຊວິກ ດະເຊລະຊິນສະກີ ຫົວໜ້າຊາວ ກຳມະກອນ ໄປໂລຍຸ ທີ່ຖືກຈັບໃນປີ ໑໙໐໘ ນັ້ນ ກໍໄດ້ຖືກຈັບອີກ. ນັກປະຕິວັດຜູ້ທີ່ລົ້ມປ່ອຍລົງຢ່າງໜັກ ເຊິ່ງຖືກຕັດສິນ ແນລະເທດໄປສູ່ຊີບີລີ ເປັນເວລາດົນນານນັ້ນ ໄດ້ໂຕນໜີອອກຈາກການແນລະເທດມາໄດ້. ໃນປີ ໑໙໑໑ ດະເຊລະຊິນສະກີ ກໍໄດ້ເປັນຫົວໜ້າການຕໍ່ສູ້ປະຕິວັດ ຂອງຊາວກຳມະກອນ ໃນແຂວງຕາເວັນຕົກ ຂອງລັດເຊຍພະເຈົ້າຊາອີກເທື່ອໃໝ່.

ເຖິງວ່າຈະຖືກຈັບແລະຖືກແນລະເທດກໍຕາມ ສິ່ງເຫລົ່ານັ້ນກໍບໍ່ສາມາດຈະມາຢັບຢັ້ງວຽກງານ ທີ່ອົງອາດກ້າຫານ ຂອງລູກສິດ ແລະເພື່ອນຮ່ວມງານຂອງທ່ານເລນິນ ໃນການເຕົ້າໂຮມຊາວຜູ້ອອກແຮງງານທັງໝົດ ເພື່ອຕໍ່ສູ້ກັບລະບອບພະເຈົ້າຊານັ້ນໄດ້. ຄວາມກ້າຫານແລະຄວາມບໍ່ເຫັນແກ່ຕົວຂອງຜູ້ທີ່ເດີນຕາມເລນິນນັ້ນ ໄດ້ເປັນຕົວຢ່າງ ໃຫ້ແກ່ຊາວກຳມະກອນເປັນຢ່າງດີ.

ໂຮງຮຽນຂອງພັກທີ່ຈັດຕັ້ງຂຶ້ນ ຢູ່ທີ່ນະຄອນປາລີ ໂດຍທ່ານເລນິນນັ້ນ ໄດ້ສ້າງບົດບາດອັນສຳຄັນ ໃນການຝຶກຝົນ ອົບຮົມໃຫ້ແກ່ຊາວກຳມະກອນຜູ້ກ້າວໜ້າ ຢ່າງຫລວງຫລາຍ. ຜູ້ທີ່

ເຂົ້າຮຽນຢູ່ໃນໂຮງຮຽນນີ້ ກໍໄດ້ແກ່ຊາວກຳມະກອນລັດເຊຍຜູ້ທີ່ໄດ້ໂຕນໜີອອກຈາກຄຸກພະເຈົ້າຊາ ແລະຈາກການ ເນລະເທດ ເຊິ່ງຈຳເປັນໄດ້ມາລີ້ໄພຢູ່ໃນຕ່າງປະເທດ ຊົ່ວຄາວ . ພວກເຂົາໄດ້ສຶກສາຮ່ຳຮຽນ ທິດສະດີປະຕິວັດຂອງມາກ ແລະໄດ້ຮ່ຳຮຽນວິທີການນຳພາ ໃນການປະຕິບັດງານ ຂອງຊາວຜູ້ອອກແຮງງານ. ໂດຍວິທີການນີ້ແຫລະ ທີ່ພວກໂບນເຊວິກພາຍໃຕ້ການນຳພາຂອງເລນິນ ໄດ້ພາກັນກະກຽມ ການຕໍ່ສູ້ທີ່ຈະມາເຖິງ ເພື່ອການປົດປ່ອຍທີ່ແທ້ຈິງ ຂອງຊາວຜູ້ອອກແຮງງານ.

ໃນເດືອນມີນາ ປີ ໑໙໑໒ ຊາວກຳມະກອນ ທີ່ຢູ່ໃນ ບໍ່ຄຳເລນາ ກໍໄດ້ນັດຢຸດງານຂຶ້ນ. ບໍ່ຄຳທີ່ຈົມເລິກຢູ່ໃນປ່າ ໄຕກາຂອງຊີບີລີ້ ໄດ້ນຳເອົາຜົນກຳໄລອັນໃຫຍ່ຫລວງ ມາໃຫ້ແກ່ເຈົ້າຂອງ ຄື ນາຍທຶນອັງກິດ ແລະຜູ້ເຂົ້າຫຸ້ນສ່ວນ ຄືນາຍທຶນລັດເຊຍຄືກັນ. ຊາວກຳມະກອນຢູ່ທີ່ນັ້ນ ໄດ້ເຮັດວຽກຮອດ ໑໒ຊົ່ວໂມງຕໍ່ໜຶ່ງມື້ ໂດຍເອົາຫົວເຂົ້າຈົມຢູ່ໃນນ້ຳອັນເຢືອກເຢັນຢ່າງບໍ່ໄດ້ພົບພໍ່ແສງສະຫວ່າງເລີຍ. ການຂຸດຄຳກໍໄດ້ໃຊ້ມືຂຸດ. ຊາວກຳມະກອນ ພັກພາອາໄສຢູ່ໃນເຮືອນພັກ ທີ່ສົກກະປົກ , ໜາວ, ປຽກຈົ້ນ ແລະອຶດອັດ. ໃນລະດູໜາວ ພວກເຂົານອນຢ່າງບໍ່ໄດ້ປົດໝວກ, ເພາະວ່າ ຝາທີ່ຕຽງນອນ ແຂວນຕິດຢູ່ນັ້ນ ມັນໜາວເຢັນທີ່ສຸດ. ໃນລະຫວ່າງກາງຄືນນັ້ນເກີບບົດທີ່ປຽກຂອງພວກເຂົາ ກໍໄດ້ແຂງກ້າມຕິດກັບພົນ. ຄ່າຈ້າງແຮງງານ ກໍຕ່ຳຫລາຍທີ່ສຸດ. ຊາວກຳມະກອນ ບໍ່ໄດ້ຮັບຄ່າ-

ຈ້າງເລີຍ ຈີນກ່າວພວກເຂົາຈະສຳເລັດວຽກງານຕາມສັນຍາ ນັ້ນ. ຊາວກຳມະກອນໄດ້ເບີກອາຫານກິນຈາກຮ້ານທີ່ໄດ້ ຕັ້ງ ຂຶ້ນ ໂດຍການຄິດໄລ່ເອົາຄ່າຈ້າງຂອງພວກເຂົາແລະອາຫານ ທີ່ຮ້ານຈັດໄວ້ໃຫ້ນັ້ນ ກໍມີລາຄາແພງທີ່ສຸດ ພວກເຈົ້າຂອງ ຮ້ານ ໄດ້ເວົ້າຢ່າງເຍາະເຍີ້ຍວ່າ "ພວກນັກຂຸດບໍ່ແຮ່ບໍ່ແມ່ນໝູເຂົາ ຈະກິນທຸກຢ່າງ". ໂລກລະບາດ ໄດ້ສັງຫານຊີວິດ ກຳມະ ກອນໄປຈຳນວນຫລວງຫລາຍ ເພາະບໍ່ມີການຊ່ວຍເຫລືອທາງ ດ້ານຢູກຢາ. ຊາວກຳມະກອນໄດ້ເອີ້ນລະບົບຢູ່ໃນບໍ່ຄຳນັ້ນວ່າ "ລຸະບອບທາດກະສິກອນ ຊະນິດໃຫມ່". ພວກກຳມະກອນໄດ້ ເລີ່ມເຮັດການນັດຢຸດງານ ເຊິ່ງນຳພາໂດຍຄະນະກຳມະການ ຂອງກຳມະກອນ ທີ່ເລືອກຕັ້ງຂຶ້ນມາ ຕ້ານການປະຕິບັດ ແບບ ບໍ່ມີມະນຸດສະທຳ. ພວກໂບນເຊວິກ ໄດ້ມີບົດບາດສຳຄັນຫຼາຍ ຢູ່ໃນຄະນະກຳມະການນັ້ນ. ຊາວກຳມະກອນໄດ້ຮຽກຮ້ອງໃຫ້ ເຈົ້າຂອງບໍ່ຄຳ ຈັດຕັ້ງມື້ເຮັດວຽກ ມື້ລະ ໘ ຊົ່ວໂມງ ຂຶ້ນ , ເພີ່ມຄ່າຈ້າງແຮງງານ, ຈ່າຍເງິນຄ່າຈ້າງໃຫ້ເປັນເດືອນ , ປັບປຸງສະພາບການເປັນຢູ່ ແລະຄຸນນະພາບອາຫານການ ກິນ ໃຫ້ດີຂຶ້ນ, ຍຸຕິການປະຕິບັດແບບປ່າເຖື່ອນຂອງຕົນແທນ ເຈົ້າ ຂອງບໍ່ຄຳ ແລະປະຕິບັດຕໍ່ຊາວກຳມະກອນດ້ວຍຄວາມສຸພາບ.

ວັນທີ ໔ ເມສາ ກຳມະກອນ ໓ ພັນກ່າວຄົນ ໄດ້ພາກັນ-ເດີນຂະບວນ ໄປຫາຕຶກບໍລິຫານຂອງບໍ່ຄຳ ເພື່ອວ່າຈະໄດ້ຍື່ນ ຄຳຮຽກຮ້ອງຂອງຕົນ. ພວກເຂົາໄດ້ພາກັນຍ່າງໄປໃນ ແບບ ເປັນແຖວ ໔-໕ ຄົນ ຕາມທາງຍ່າງແຄບໆຂອງກອງຫີນະນັ້ນ.

ໃນທັນທີທັນໃດນັ້ນກໍໄດ້ເກີດມີການຍິງປືນມາໃສ່. ກອງທະຫານທີ່ເອີ້ນອອກມາ ໂດຍເຈົ້າຂອງບໍ່ຄຳນັ້ນ ໄດ້ເປີດສາກຍິງປືນ-ໃສ່ ການເດີນຂະບວນແບບສັນຕິນັ້ນ. ຊາວກຳມະກອນໄດ້ພາກັນແຕກກະຈັດກະຈາຍໄປ ໂດຍປະຜູ້ທີ່ຖືກຂ້າຕາຍ ໔໗໐ ຄົນ ແລະບາດເຈັບ ໔໕໐ ຄົນ ໄວ້ເທິງຫິມະ ເຊິ່ງເປື້ອນເປິະໄປດ້ວຍເລືອດສີແດງ ຂອງຜູ້ໄດ້ຮັບເຄາະກຳ.

ຂ່າວກ່ຽວກັບການສັງຫານໝູ່ແບບນອງເລືອດຢູ່ໃນບໍ່ຄຳເລນານັ້ນ ໄດ້ເຮັດໃຫ້ຜູ້ຄົນທີ່ອາໃສຢູ່ໃນລັດເຊຍທັງໝົດ ເກີດຄວາມຄຽດແຄ້ນ ແລະແໜັນໃຈຂຶ້ນ, ແຕ່ວ່າ ລັດຖະມົນຕີພະເຈົ້າຊາ ມາກາລົບ ໄດ້ປະກາດກ່ຽວກັບການສັງຫານ ໝູ່ ທີ່ເລນານັ້ນວ່າ "ອັນນີ້ມັນໄດ້ເປັນມາແລ້ວແລະມັນກໍຈະເປັນອີກຕໍ່ໄປ !". ຄຳເວົ້າແບບເຍາະເຍີ້ຍນີ້ ໄດ້ເປັນການ ຢືນຢັນໃຫ້ເຫັນວ່າ ລະບອບຂອງອັດຕາທິປະໄຕ ໃນລັດເຊຍນັ້ນ ໄດ້ມີຄວາມໝັ້ນຄົງ ແລະບໍ່ສັ່ນສະເທືອນ. ຢ່າງໃດກໍຕາມ ຊາວກຳມະກອນລັດເຊຍ ກໍໄດ້ທຳການປະທ້ວງ ແບບນັດຢຸດງານແລະເດີນຂະບວນ ເຊິ່ງມີຄົນເຂົ້າຮ່ວມ ຢ່າງຫລວງຫຼາຍແລະໄດ້ເວົ້າຕໍ່ລັດຖະບານວ່າ "ບໍ່, ເຫດການທຳນອງນີ້ຈະບໍ່ຕ້ອງໃຫ້ເກີດຂຶ້ນອີກ !".

ການນັດຢຸດງານທາງການເມືອງ ແບບມີຄວາມສາມັກຄີກັນນີ້ ໄດ້ເລີ່ມຕົ້ນຂຶ້ນທົ່ວປະເທດ. ຊາວກຳມະກອນເມືອງເປເຕລະບຸກ ໄດ້ຮັບຮອງເອົາມະຕິປະທ້ວງ ເຊິ່ງມີເນື້ອຄວາມ ວ່າ "ພວກເຮົາ, ຊາວກຳມະກອນ ບໍ່ແມ່ນກ່າວຟ້ອງພຽງແຕ່ພວກ

ເຜັດຊະຄາດຢູ່ທີ່ບໍ່ຄ່ຳເລນມາເທົ່ານັ້ນແຕ່ຫາກຮອດລະບອບການ
ເມືອງ ປະຈຸບັນນີ້ ທີ່ຫຍໍ້ຫຍັນຕໍ່ຈຸ້ມຈຸ້ມກຳມະກອນຢ່າງໜັກອີກ
ດ້ວຍ !" ມະຕິອື່ນໆຍັງໄດ້ເວົ້າຕໍ່ໄປອີກວ່າ "ຂໍໃຫ້ການຕາຍ
ຈອງພວກຜູ້ໄດ້ຮັບເຄາະກຳ ຈາກການກົດຂີ່ໜີບເຕັງນັ້ນເຮັດ
ໃຫ້ພວກເຮົາຈັດຕັ້ງແລະສ້າງຄວາມສາມັກຄີ ເຂັ້ມແຂງ ຂຶ້ນ
ຕໍ່ໄປ".

ການນັດຢຸດງານທາງການເມືອງຢູ່ໃນສະຖານທີ່ຕ່າງໆກໍໄດ້
ຕິດຕາມມາດ້ວຍການເດີນຂະບວນ ແລະການຊຸມນຸມ ມິດຕິງ.
ຊາວກຳມະກອນໃນເມືອງ ເປເຕລະບູກ, ມົດສະກູ, ເຢກາ
ເຕລິໂນສະລາ (ປະຈຸບັນນີ້ ເມືອງດະເນປະລົບເປຕະລົບສະ
ກະ), ໂອເດັດຊາ, ຄາລະກົບ, ກີເຢັບ, ລູການຊະກະ
(ປະຈຸບັນນີ້ ໂວໂລສີລົບກະລາດ), ຊາມາລະ (ປະບຸນນີ້ກູຍ
ບີເຊັບ), ຊາລາຕອບ, ລີກາ, ຕິຊີໂຍບ ແລະເມືອງ ອື່ນໆ
ອີກ ກໍໄດ້ທຳການນັດຢຸດງານ ເຊິ່ງມີຈຳນວນຮອດ ໓໐໐ ພັນ
ຄົນ. ການລາອອກຈາກຕຳແໜ່ງຂອງນາຍົກລັດຖະມົນຕີແລະ
ການໃຫ້ຄຳໝັ້ນສັນຍາຄັ້ງຫລ້າສຸດ ຂອງລັດຖະບານວ່າ ຈະ
"ສືບສວນຄະດີນີ້" ນັ້ນ ກໍບໍ່ໄດ້ເຮັດໃຫ້ການນັດຢຸດງານນັ້ນໄດ້
ຍຸຕິລົງເລີຍ. ຊາວກຳມະກອນຫລາຍແສນຄົນ ກໍໄດ້ເຂົ້າຮ່ວມ
ໃນການນັດຢຸດງານ ແລະການເດີນຂະບວນ ເມື່ອວັນທີ ໑
ພຶດສະພາ ປີ ໑໙໑໘. ການປາບປາມອັນໜັກໜ່ວງ ແລະ
ການຕິດຕາມລອບທຳຮ້າຍ ຕໍ່ພວກນັກປະຕິວັດນັ້ນ ປາກົດວ່າບໍ່
ມີຄວາມຮຸນແຮງປານໃດ ໃນເມື່ອພວກເຂົາພະເຊີນໜ້າ ກັບ

ຄວາມເປັນນ້ຳໜຶ່ງໃຈດຽວກັນ ຂອງມວນມະຫາຊົນ ທີ່ນຳພາໂດຍພວກໂບນເຊວິກ. ພວກເດີນຂະບວນໄດ້ຖືທຸງແດງ ແລະຮ້ອງເພງປະຕິວັດ. ຢູ່ໃນທຸກຫົນທຸກແຫ່ງ ແມ່ນໄດ້ຍິນສຽງຄຳຮຽກຮ້ອງໃຫ້ໂຄ່ນລົ້ມ ລະບອບອັດຕາທິປະໄຕລົງ.

ທ່ານເລນິນ ໄດ້ຂຽນໄວ້ວ່າ "ການນັດຢຸດງານອັນຍິ່ງໃຫຍ່ຂອງຊາວກຳມາຊີບທີ່ລັດເຊຍ ເມື່ອວັນທີ ໑ ພຶດສະພາແລະຕິດຕາມມາດ້ວຍ ການເດີນຂະບວນຢູ່ຕາມຖະໜົນ ຫົນທາງ, ການແຈກຢາຍໃບປິວປະຕິວັດ ແລະຄຳເວົ້າແບບປະຕິວັດ ຕໍ່ໜ້າການຊຸມນຸມ ຂອງຊາວກຳມະກອນນັ້ນ ແມ່ນເປັນການສະແດງໃຫ້ເຫັນຢ່າງຄັກແນ່ວ່າ ລັດເຊຍໄດ້ກ້າວເຂົ້າສູ່ການລຸກຮືຂຶ້ນ ແບບປະຕິວັດແລ້ວ" (ປະມວນບົດນິພົນເລນິນ ສະບັບສົມບູນ ເຫຼັ້ມທີ ໒໑ ໜ້າ ໓໓໖).

ໜັງສືພິມ "ປະລາວະດາ" ຂອງຊາວໂບນເຊວິກໄດ້ມີບົດບາດສຳຄັນຫລາຍທີ່ສຸດ ຢູ່ໃນການຈັດຕັ້ງຂອງຂະບວນ ການຊາວກຳມະກອນ, ໜັງສືພິມນີ້ ໄດ້ພິມສະບັບທຳອິດອອກເມື່ອວັນທີ ໕ ພຶດສະພາ ປີ ໑໙໑໒. ບົດບັນນາທິການໄດ້ກ່າວວ່າ "ຊົນຊັ້ນກຳມະກອນ ຄື ຜູ້ສ້າງຄວາມຮັ່ງມີທັງໝົດແລະຊົນຊັ້ນນີ້ ຈະຊົມໃຊ້ໝາກຜົນແຮງງານທັງໝົດຂອງຕົນ. ຄົນໄດ້ຕໍ່ສູ້ເພື່ອຍົກເລີກການກົດຂີ່ຂູດຮີດ, ໄດ້ຕໍ່ສູ້ເພື່ອສິດສະເໝີພາບກັນທັງໝົດ ແລະເສລີພາບແລ້ວ, ຊົນຊັ້ນກຳມະກອນ ກໍແມ່ນພວມຕໍ່ສູ້ ເພື່ອຍົກເລີກການກົດຂີ່ຂົ່ມເຫັງທຸກໆຢ່າງ, ການກົດຂີ່ຂູດຮີດ ແລະການໃຊ້ຄວາມຮຸນແຮງທຸກຢ່າງ, ເພື່ອເສລີພາບ

ຂອງສາກົນແລະຄວາມເປັນອ້າຍນ້ອງຂອງມະນຸດຊາດ. ຄົນໄດ້ປົດປ່ອຍຕົນເອງແລ້ວ, ເຂົາກໍບໍ່ຕ້ອງການທີ່ຈະກົດຂີ່ ຂົ່ມເຫັງຄົນໃດຄົນໜຶ່ງ, ແຕ່ເຂົາກໍບໍ່ຕ້ອງການໃຫ້ຜູ້ໃດຜູ້ໜຶ່ງ ມາກົດຂີ່ຂົ່ມເຫັງເຂົາ ເຊັ່ນດຽວກັນ". ຊາວກຳມະກອນໄດ້ ພໍໃຈຕໍ່ໜັງສືພິມຂອງຕົນ ແລະເຊື່ອໝັ້ນຕໍ່ມັນ ແລະຂຽນກ່ຽວກັບ - ການຕໍ່ສູ້ຂອງຕົນ, ຄວາມຕ້ອງການຂອງຕົນລົງໃນໜັງສືພິມນີ້.

ໃນປີ ໑໙໑໓ ທົ່ວລັດເຊຍກໍໄດ້ມີຊາວກຳມະກອນ ເຖິງ ໑໒໗໒ ພັນຄົນນັດຢຸດງານ. ໃນລະຫວ່າງປີ ໑໙໑໐- ໑໙໑໔ ນັ້ນ ໄດ້ມີການລຸກຮື້ຂຶ້ນຂອງຊາວນາ ໑໓ ພັນກ່ວາຄັ້ງ. ໃບປິວ ແລະປຶ້ມນ້ອຍຂອງຊາວໂບນເຊວິກ ກໍໄດ້ຮັບການແຈກຢາຍໄປໃນໝູ່ຊາວນາ. ຢູ່ໃນທ່າມກາງກອງທັບກໍໄດ້ເກີດມີຄວາມວຸ້ນວາຍເຊັ່ນດຽວກັນ. ດ້ວຍອິດທິພົນການປຸກລຸກຂົນຂວາຍ ຂອງຊາວໂບນເຊວິກນັ້ນ ທະຫານຊ່າງຢູ່ໃນຕາສະເກນ ໜ່ວຍທະຫານປືນໃຫຍ່ຢູ່ໃນກີເຢັບ ກໍໄດ້ລຸກຮື້ຂຶ້ນແລະການລຸກຮື້ຂຶ້ນຂອງກອງທະຫານເຮືອ ປະຈຳທະເລບັນຕິກ ກໍໃກ້ຈະລະເບີດຂຶ້ນ. ການປາບປາມການເຄື່ອນໄຫວປະຕິວັດ ຢູ່ໃນຊົນນະບົດ ແລະໃນກອງທັບ ຂອງລັດຖະບານພະເຈົ້າຊາກໍໄດ້ດຳເນີນໄປຢ່າງຮຸນແຮງ. ຊາວກຳມະກອນໄດ້ພາກັນຈັດຕັ້ງການນັດຢຸດ ງານຂຶ້ນ ເພື່ອເປັນການສະໜັບສະໜູນ ໃຫ້ແກ່ການຕໍ່ສູ້ຂອງຊາວນາ ແລະ ທະຫານ.

ໃນລະດູຮ້ອນ ປີ ໑໙໑໔ ກອງທະຫານແລະຕຳຫຼວດ ໄດ້ຍິງປືນໃສ່ການຊຸມນຸມ ຂອງຊາວກຳມະກອນທີ່ໂຮງງານປູຕີລົບ

ສະກະໃນເມືອງເປຕລະບຸກ, ເພື່ອເປັນການຕອບໂຕ້ຕໍ່ອາຊະຍາກຳອັນນີ້ ຈຶ່ງໄດ້ເກີດມີການນັດຢຸດງານ ຢູ່ໃນເມືອງຕ່າງໆຂອງລັດເຊຍຂຶ້ນ. ຢູ່ບ່ອນນັ້ນແລະບ່ອນນີ້ ກໍໄດ້ມີການສ້າງສິ່ງກີດຂວາງຂຶ້ນ ແລະເກີດການປະທະກັນດ້ວຍອາວຸດ ລະຫວ່າງຊາວກຳມະກອນກັບຕຳຫລວດ. ລັດຖະບານໄດ້ເລີ້ມຊຸມນຸມ ທະຫານໄວ້ໃນເມືອງເປຕລະບຸກ ແລະພວກຕຳຫລວດ ກໍໄດ້ທຳການບຸກໂຈມຕີກອງບັນນາທິການໜັງສືພິມ "ປະລາວະດາ".

ສົງຄາມຈັກກະພັດໂລກໄດ້ລະເບີດຂຶ້ນ ເມື່ອວັນທີ ໑ ສິງຫາ ປີ ໑໙໑໔. ລັດຖະບານພະເຈົ້າຊາ ໄດ້ສວຍໃຊ້ເອົາໂອກາດນີ້ ເພື່ອປາບປາມການເຄື່ອນໄຫວປະຕິວັດ ຂອງຊາວກຳມະກອນ. ລະບອບພະເຈົ້າຊາຫວັງວ່າ ສົງຄາມຈະຊ່ວຍໃຫ້-ຕົນ ຫລຸດພົ້ນຈາກການປະຕິວັດໄປໄດ້.

ສົງຄາມທີ່ລະເບີດຂຶ້ນໃນປີ ໑໙໑໔ ນັ້ນ ໄດ້ມີ ໓໘ ປະເທດເຂົ້າຮ່ວມ ເຊິ່ງນັບວ່າ ເປັນພາກສ່ວນໃຫຍ່ຂອງປະເທດຕ່າງໆທົ່ວໂລກ. ເພາະສະນັ້ນ ສົງຄາມນີ້ຈຶ່ງມີຊື່ວ່າ ສົງຄາມໂລກ. ດ້ວຍເຫດໃດຈຶ່ງເອີ້ນສົງຄາມນີ້ວ່າສົງຄາມຈັກກະພັດ? ແລະລັດທິຈັກກະພັດນິຍົມ ໝາຍຄວາມວ່າແນວໃດ ?

ການແຂ່ງຂັນກັນແບບເສລີຢູ່ໃນທ້າຍສະຕະວັດທີ໑໙ແລະຕົ້ນສະຕະວັດທີ ໒໐ ນັ້ນໄດ້ນຳເອົາຄວາມເສື່ອມໂຊມມາໃຫ້ເຈົ້າຂອງຊັບສິນບັດລັກໆນ້ອຍ ແລະຂະໜາດກາງ ເປັນຈຳນວນຫລວງຫລາຍເທື່ອລະກ້າວໆ ແລະກໍນຳໄປສູ່ການປຸ້ມ ແປງກອງທຶນການຜະລິດຂັ້ນພື້ນຖານ ໃຫ້ຕົກໄປຢູ່ໃນກຳມືຂອງກຸ່ມ-

ນາຍທຶນໃຫຍ່ເຊິ່ງໄດ້ເຕົ້າໂຮມກັນເຂົ້າເປັນສະຫະບໍລິສັດ-ຄືບໍລິສັດໃຫຍ່ ແລະສະມາຄົມ. ສະຫະບໍລິສັດເຫລົ່ານີ້ ໄດ້ກາຍເປັນເຈົ້າຂອງຂະແໜງການອຸດສາຫະກຳ ແລະ ກະເສດຕະກຳທັງໝົດ ຢ່າງສົມບູນ, ດັ່ງນັ້ນ ສະຫະບໍລິສັດເຫລົ່ານີ້ ຈິ່ງເອີ້ນວ່າ ບໍລິສັດຜູກຂາດ; ຄຳວ່າຜູກຂາດ ໝາຍຄວາມວ່າມີສິດແຕ່ຜູ້ດຽວ ໃນການຜະລິດ ແລະຂາຍສິນຄ້າບາງຢ່າງແລະບຸກຄົນຜູ້ທີ່ມີສິດເຫລົ່ານີ້ ກໍແມ່ນໄດ້ຮັບຜົນກຳໄລອັນຍິ່ງໃຫຍ່-ຄືກຳໄລມະຫາສານ. ໂດຍວິທີການນີ້ແຫລະກອງທຶນມະຫາສານ-ຈຶ່ງໄດ້ຮັບການສະສົມໄວ້ໃນກຳມື ຂອງພວກນັກຜູກຂາດ. ພວກເຂົາແມ່ນຕ້ອງການຕະຫລາດໃໝ່ສຳລັບຂາຍສິນຄ້າ. ຢູ່ໃນປະເທດທີ່ຫລ້າຫລັງແລະຫົວເມືອງຂຶ້ນ ພວກເຂົາໄດ້ຂາຍວັດຖຸສິນຄ້າປະເພດອຸດສາຫະກຳຂອງຕົນ ດ້ວຍລາຄາສູງ -ແຕ່ໃນເວລາດຽວກັນນັ້ນ ພວກເຂົາກໍໄດ້ສົ່ງສິນຄ້າປະເພດນ້ຳມັນທີ່ຊື້ໄດ້ດ້ວຍລາຄາຕ່ຳໆ ແລະວັດຖຸດິບອອກໄປ ໂດຍສວຍໃຊ້ເອົາຊັບພະຍາກອນທຳມະຊາດອັນຮັ່ງມີ ແລະແຮງງານຂອງຊາວກຳ-ມະກອນ ທີ່ມີລາຄາຖືກໆ ຂອງປະເທດເຫລົ່ານີ້. ເພື່ອຈະຍາດແຍ່ງເອົາກຳໄລມະຫາສານນັ້ນ ພວກເຂົາໄດ້ຊຸກຍູ້ລັດຖະບານປະເທດຂອງເຂົາ ເຊິ່ງເປັນເຄື່ອງມືອັນເຊື່ອຟັງຂອງເຂົານັ້ນເຂົ້າໄປບຸກຍຶດເອົາປະເທດເຫລົ່ານັ້ນ.

ທ່ານເລນິນ, ຜູ້ໄດ້ສຶກສາຄົ້ນຄ້ວາບັນຫາເລື່ອງນີ້ຢ່າງຮອບດ້ານແລ້ວນັ້ນ ໄດ້ຊີ້ໃຫ້ເຫັນວ່າ ໄລຍະຂັ້ນຄອບຄອງ ຂອງກຸ່ມຜູກຂາດນັ້ນ ແມ່ນໄລຍະຂັ້ນທີ່ສູງທີ່ສຸດ ແລະກໍແມ່ນຂັ້ນສຸດທ້າຍ

ຂອງລະບອບທຶນນິຍົມ. ເລນິນໄດ້ເອີ້ນໄລຍະນັ້ນວ່າ ລັດທິຈັກກະພັດນິຍົມ.

ພໍມາຮອດຕົ້ນສະຕະວັດທີ ໒໐ ໂລກທັງໝົດ ໄດ້ຖືກແບ່ງອອກ ໃນໝູ່ປະເທດຈັກກະພັດນິຍົມໃຫຍ່ໆ. ແຕ່ວ່າແຕ່ລະປະເທດໃນບັນດາປະເທດເຫລົ່ານີ້ ໄດ້ພະຍາຍາມທີ່ຈະຂະຫຍາຍດິນແດນຂອງຕົນອອກໄປ ຢ່າງບໍ່ລົດລະ ຈຶ່ງໄດ້ເກີດມີການຕໍ່ສູ້ກັນລະຫວ່າງພວກເຂົາຢູ່ບໍ່ເຊົາ ແລະໄດ້ເປັນຮູບການອັນແຫຼມຄົມໂດຍສະເພາະ ເມື່ອຄູ່ແຂ່ງອັນໃໝ່ທີ່ເປັນປະເທດນາຍທຶນທີ່ມີການພັດທະນາຊຸກຍູ້ກວ່າໝູ່ ໄດ້ຮຽກຮ້ອງໃຫ້ມີການແບ່ງປັນຫົວເມືອງຂຶ້ນ ເພື່ອຜົນປະໂຫຍດຂອງຕົນ ໄດ້ປາກົດຂຶ້ນໃນເວທີໂລກ.

ອັນນີ້ແມ່ນເຫດຜົນອັນສຳຄັນ ຂອງການເກີດສົງຄາມ ໂລກເມື່ອປີ ໑໙໑໔. ຈັກກະພັດອັງກິດແລະຝະລັ່ງໄດ້ຄອບຄອງອາຟະລິກາແລະອາຊີ. ລັດເຊຍພະເຈົ້າຊາ ກໍເປັນຈັກກະພົບຫົວເມືອງຂຶ້ນ ທີ່ຍິ່ງໃຫຍ່ປະເທດໜຶ່ງ ໂດຍໄດ້ກົດຂີ່ຂູດຮີດບັນດາປະຊາຊາດອາຊີກາງ, ພູກາວະກາດ, ເຂດແມ່ນ້ຳ ໂວນກາ ແລະດິນແດນອື່ນໆອີກ ທີ່ຢູ່ຕາມຊາຍແດນຂອງຕົນ. ນອກຈາກນັ້ນ ພວກຈັກກະພັດລັດເຊຍ ກໍຕ້ອງການຢາກເປັນເຈົ້າ ຂອງຊ່ອງແຄບຈາກທະເລດຳ ໄປສູ່ທະເລເມດິເຕລານເນ ເຊິ່ງເປັນຂອງຕຸລະກີ. ເຢຍລະມັນ ໄດ້ລົບກາຍອັງກິດ ແລະ ປະເທດເອີລົບອື່ນໆ ດ້ວຍການຂະຫຍາຍອຸດສາຫະກຳ ຂອງຕົນ, ແຕ່ວ່າເຢຍລະມັນຊຳພັດມີຫົວເມືອງຂຶ້ນໜ້ອຍກວ່າໝູ່. ດັ່ງນັ້ນ

ປະເທດນີ້ຈຶ່ງໄດ້ພະຍາຍາມ ທີ່ຈະຂະຫຍາຍດິນແດນຫົວເມືອງຂຶ້ນຂອງຕົນອອກ ໂດຍຄິດໄລ່ເອົາຫົວເມືອງຂຶ້ນ ຂອງປະເທດເອີລົບອື່ນໆ. ສົງຄາມໂລກຄັ້ງທີໜຶ່ງ ໄດ້ເປັນການປະທະກັນລະຫວ່າງຄູ່ແຂ່ງຂັນຈັກກະພັດ ເພື່ອແບ່ງປັນເອົາໂລກ ທີ່ຖືກແບ່ງປັນໄວ້ກ່ອນແລ້ວນັ້ນ.

ເຫດຜົນທີ່ສຳຄັນທີ່ສຸດອີກອັນໜຶ່ງ ໃນການລະເບີດຂຶ້ນຂອງສົງຄາມ ກໍໄດ້ແກ່ຄວາມພະຍາຍາມຂອງພວກຈັກກະພັດ ທີ່ຈະປາບປາມຂະບວນການປະຕິວັດ ທີ່ມີອິດທິພົນສູງສຸດຢູ່ໃນໄລຍະສິບປີຫລັງມານີ້. ພວກຈັກກະພັດໄດ້ຫວັງວ່າການທີ່ຈະທຳລາຍພາກສ່ວນຫລວງຫລາຍຂອງຊາວກຳມະກອນທີ່ກ້າວໜ້າ ແລະປາບປາມຫລື ຢ່າງໜ້ອຍທີ່ສຸດ, ເຮັດໃຫ້ການໂຈມຕີປະຕິວັດຕໍ່ມວນຊົນອ່ອນແອລົງໄດ້ນັ້ນ ກໍມີແຕ່ໂດຍເຮັດໃຫ້ຊາວ ກຳມະກອນ ໃນປະເທດຕ່າງໆກັນນັ້ນ ເກີດເປັນສັດຕູກັນຂຶ້ນເທົ່ານັ້ນພວກເຂົາຈຶ່ງຈະສາມາດທັບມ້າງຄວາມສາມັກຄີສາກົນ ຂອງຊາວກຳມາຊີບໄດ້.

ພັກຊົນຊັ້ນນາຍທຶນໃນປະເທດຕ່າງໆ ໄດ້ຮຽກຮ້ອງໃຫ້ ປະຊາຊົນສະໜັບສະໜູນສົງຄາມ. ຢູ່ໃນປະເທດ ເຢຍລະມັນພວກເຂົາໄດ້ຂຽນວ່າ ລະບອບພະເຈົ້າຊາລັດເຊຍ ໄດ້ນາບຂູ່ທີ່ຈະທຳລາຍ ຂະບວນການປະຊາທິປະໄຕ ຂອງປະຊາ ຊົນເຢຍລະມັນ, ຢູ່ໃນຝະລັ່ງ ພວກເຂົາກໍໄດ້ອ້າງວ່າ ລະບອບຊຸນເສິກເຢຍລະມັນ ຈະຢຽບຢ່ຳທຳລາຍ ປະຊາທິປະໄຕ ຝະລັ່ງ. ຢູ່ໃນລັດເຊຍ ພວກເຂົາກໍໄດ້ເວົ້າແລ້ວເວົ້າອີກວ່າພວກ

ເຢຍລະມັນໄດ້ເປັນຜູ້ກໍ່ໃຫ້ສົງຄາມຄັ້ງທີ່ຫນຶ່ງເກີດຂຶ້ນແລະຕ້ອງການຢາກໃຫ້ລັດເຊຍເປັນຂ້າທາດໄປ. ເວົ້າລວມແລ້ວ, ລັດຖະບານຂອງປະເທດທີ່ພວມຕໍ່ສູ້ກັນ ແລະພັກຂອງຊົນຊັ້ນ ນາຍທຶນ ໄດ້ພະຍາຍາມທີ່ຈະເຮັດໃຫ້ປະຊາຊົນເຊື່ອຫມັ້ນວ່າ ສົງຄາມໄດ້ດຳເນີນໄປ ກໍເພື່ອຄວາມປອດໄພຂອງປະເທດ ຊາດ ແລະກໍໄດ້ຮຽກຮ້ອງໃຫ້ເຂົາປ້ອງກັນປິຕຸພູມ. ປະຊາຊົນ ໄດ້ຖືກຫລອກລວງ ດ້ວຍການເລົ່າວ່າ ສົງຄາມນີ້ ເປັນສົງຄາມສຸດທ້າຍ.

ພວກຜູ້ນຳເມນເຊວິກ ໄດ້ຊ່ວຍເຫລືອແກ່ພວກນາຍທຶນແລະພວກເຈົ້າທີ່ດິນລັດເຊຍ ຕົບຕາປະຊາຊົນຜູ້ອອກແຮງງານ . ພວກເຂົາໄດ້ສະຫນັບສະຫນູນ ຢ່າງເຕັມປ່ຽມ ຕໍ່ຊົນຊັ້ນ ນາຍທຶນລັດເຊຍ ເຊິ່ງດຳເນີນໄປພາຍໃຕ້ຄຳຂວັນທີ່ວ່າ "ຈົ່ງປ້ອງກັນປະເທດຊາດ" ເພື່ອປົກປິດເປົ້າຫມາຍຂອງສົງຄາມປຸ້ນສະດົມນັ້ນໄວ້. ຄຳຂວັນຫລອກລວງທີ່ວ່າ "ຈົ່ງປ້ອງກັນປະເທດ-ຊາດ" ນັ້ນ ແມ່ນບັນດາຜູ້ນຳພັກສັງຄົມນິຍົມ-ປະຕິວັດ (ແອແສຣ໌) ເປັນຜູ້ຍົກຂຶ້ນ. ພັກນີ້ເຊິ່ງເກີດຂຶ້ນມາໃນຕົ້ນສະຕະວັດທີ ໒໐ ນັ້ນ, ຄົນໄດ້ປົກປິດຄຳຂວັນປະຕິວັດນັ້ນໄວ້ແລ້ວ ກໍໄດ້ດຶງດູດເອົາພາກສ່ວນຊາວຜູ້ອອກແຮງງານ ແລະຊົນຊັ້ນນາຍ-ທຶນນ້ອຍ ເຂົ້າມາສູ່ຝ່າຍຕົນ. ສົງຄາມທີ່ເກີດຂຶ້ນນັ້ນໄດ້ເຜີຍ-ແຜເນື້ອໃນກິດຈະການ ຂອງພວກແອແສຣ໌ ທີ່ຕ້ານປະຊາ ຊົນ ເຊິ່ງພວກເຂົາໄດ້ຮຽກຮ້ອງໃຫ້ປະຊາຊົນ ຢຸດເຊົາການຕໍ່ສູ້ກັບພວກກົດຂີ່ຂູດຮີດຂອງຕົນ ຢູ່ພາຍໃນປະເທດ ໃນລະຫວ່າງສົງ

ຄາມ.

ບັນດາຜູ້ນຳພັກຊາວກຳມະກອນສ່ວນຫລວງຫຼາຍໃນປະເທດທີ່ເຂົ້າຮ່ວມສົງຄາມນັ້ນ ໄດ້ຖືກເບື່ອເມົາຈາກແນວຄິດ ຊາດໃຫຍ່ ແລະໄດ້ດຳເນີນການຮຽກຮ້ອງໃຫ້ສະໜັບສະໜູນ"ລັດຖະບານຂອງຕົນ", ໃຫ້ຈັດຕັ້ງສັນຕິພາບທາງຊົນຊັ້ນຂຶ້ນໃນລະຫວ່າງສົງຄາມ. ອັນນີ້ແມ່ນເປັນການທໍລະຍົດຕໍ່ຜົນປະໂຫຍດຂອງຊາວຜູ້ອອກແຮງງານ ຢ່າງເຊັ່ນ "ພວກສັງຄົມນິຍົມ"ໃນປະເທດອັງກິດ, ເຢຍລະມັນ, ຝະລັ່ງ ແລະປະເທດອື່ນໆ ທີ່ເຂົ້າຮ່ວມສົງຄາມ ໄດ້ຮຽກຮ້ອງໃຫ້ຊາວຜູ້ອອກແຮງງານ ປະຫັດປະຫານເຊິ່ງກັນແລະກັນ ເພື່ອຜົນປະໂຫຍດຂອງພວກຈັກກະພັດຕ່າງດ້າວ. ໃນເວລາສົງຄາມເລີ່ມຕົ້ນຂຶ້ນນັ້ນສະມາຄົມຂອງອົງການຈັດຕັ້ງຊາວກຳມະກອນ ໃນປະເທດຕ່າງໆ ຄືສາກົນທີ II ນັ້ນ ກໍໄດ້ພັງທະລາຍລົງ.

ມີແຕ່ຊາວໂບນເຊວິກ ທີ່ມີທ່ານເລນິນ ເປັນຜູ້ນຳພາ ເທົ່ານັ້ນ ທີ່ໄດ້ຮັກສາແລະຍົກຄັນທຸງຂອງລັດທິສາກົນກຳມາຊີບ ຂຶ້ນສູງ ໂດຍໄດ້ເປີດແປລັກສະນະສົງຄາມຈັກກະພັດ.

ເຢຍລະມັນ ແລະໂອຕະລິດ ໄດ້ເລີ່ມຕົ້ນເປີດສາກ ໂຈມຕີປະເທດອັງກິດ, ຝະລັ່ງ ແລະ ລັດເຊຍເປັນປະເທດທຳອິດ. ສ່ວນປະເທດອື່ນໆນັ້ນ ໄດ້ຖືກຊັກດຶງເຂົ້າສູ່ສົງຄາມໃນພາຍຫຼັງ.

ໃນສີ່ທ້າມທຳອິດຂອງສົງຄາມນັ້ນ ປະເທດລັດເຊຍ ໄດ້ລະດົມພົນເຂົ້າເປັນທະຫານປະມານ ໔ ລ້ານຄົນ ແຕ່ຕໍ່ມາໃນລະຫວ່າງສົງຄາມ (ປີ ໑໙໑໔-໑໙໑໘) ຈຳນວນຜູ້ຄົນ ທີ່ໄດ້ຖືກ

ລະດົມເຂົ້າເປັນທະຫານຢູ່ໃນລັດເຊຍນັ້ນກໍມີຮອດ໑໕ລ້ານຄົນ.

ຢູ່ທີ່ແນວໜ້າການສູ້ຮົບໄດ້ດຳເນີນໄປ ຢ່າງຮຸນແຮງ ກອງທັບລັດເຊຍ ໄດ້ສູ້ຮົບຢ່າງກ້າຫານແລະໜຽວແໜ້ນ, ແຕ່ໄຊຊະນະຈະມີໄດ້ນັ້ນ ກໍມີແຕ່ຄູນນະພາບການສູ້ຮົບ ຂອງທະຫານເທົ່ານັ້ນ. ອຸດສາຫະກຳທີ່ຫລ້າຫລັງ ຂອງລັດເຊຍພະເຈົ້າຊາບໍ່ສາມາດທີ່ຈະຈັດຫາອາວຸດຍຸດໂທປະກອນ ທີ່ຈຳເປັນແກ່ກອງທັບໄດ້.

ສົງຄາມໄດ້ເຜົາຜານປະເທດຊາດໄປ ຄື ເສດຖະກິດ ໄດ້ເສື່ອມໂຊມລົງ. ໂຮງຈັກໂຮງງານຕ່າງໆຫລາຍແຫ່ງ ໄດ້ຢຸດຊະງັກ. ສາຍທາງລົດໄຟບໍ່ສາມາດທີ່ຈະດຳເນີນການຮອດຂົນສົ່ງກອງທະຫານໄດ້. ບ້ານຕ່າງໆໃນຊົນນະບົດໄດ້ຖືກປະຮ້າງໄປ. ພວກຜູ້ຊາຍຈຳນວນຫລວງຫລາຍ ກໍໄດ້ຖືກເກນໄປສູ່ - ແນວໜ້າ. ລັດຖະບານໄດ້ຍຶດເອົາມ້າແລະສັດລ້ຽງ ຈຳນວນຫລວງຫລາຍຂອງຊາວນາໄປໃຫ້ແກ່ກອງທັບ. ທີ່ດິນປູກຝັງໄດ້ລົດຈຳນວນລົງ ໃນເມື່ອບໍ່ມີຜູ້ຄົນພຽງພໍ ທີ່ຈະມາຮອດມັນໄດ້. ປະເທດຊາດໄດ້ພວມເກີດມີຄວາມອຶດຢາກຂຶ້ນ.

ພວກໂບນເຊວິກໄດ້ອະທິບາຍແກ່ທະຫານທີ່ຢູ່ໃນແນວ ໜ້າ ແລະແນວຫລັງຟັງ ຕັ້ງແຕ່ຕອນເລີ່ມຕົ້ນຂອງສົງຄາມວ່າ ສົງຄາມນີ້ ບໍ່ມີຄວາມຍຸຕິທຳ ແລະວ່າມັນໄດ້ດຳເນີນໄປໂດຍພວກຈັກກະພັດ ເພື່ອຜົນປະໂຫຍດແກ່ຕົວເອງ. ສານທະຫານ ພະເຈົ້າຊາ ໄດ້ຕັດສິນປະຫານຊີວິດ ພວກນັກປຸກລຸກ ຂົນຂວາຍຂອງພວກໂບນເຊວິກ, ແຕ່ຄວາມຈິງກ່ຽວກັບສົງຄາມກໍໄດ້ແຜ່

ໄປຮອດທະຫານ, ຊາວກຳມະກອນ ແລະຊາວນາ. ມີປະຊາຊົນຜູ້ອອກແຮງງານຫລາຍຍິ່ງຂຶ້ນ ໄດ້ສະໜັບສະໜູນ ຄຳຂວັນຂອງພວກໂບນເຊວິກ ທີ່ວ່າ "ຈົ່ງຫັນປ່ຽນສົງຄາມ ຈັກກະພັດມາເປັນສົງຄາມກາງເມືອງ !" ຄຳວ່າ: " ສົງຄາມຈົ່ງຈິບຫາຍ !", "ພະເຈົ້າຊາຈົ່ງຈິບຫາຍ !" ນັ້ນໄດ້ຍິນກັນຢ່າງຈະແຈ້ງ ແລະແຮງຫລາຍຍິ່ງຂຶ້ນ. ການປະຕິວັດ ແມ່ນພວມສຸກງອມຢູ່ແລ້ວ ໃນລັດເຊຍ.

ເດືອນກຸມພາ ປີ ໑໙໑໗ ມາເຖິງ. ຊາວກຳມະກອນຢູ່ໃນເມືອງເປຕະໂລກຼະລາດ (ໃນລະຫວ່າງສົງຄາມນັ້ນຍັງມີຊື່ວ່າເປເຕລະບຸກ) ທີ່ໄດ້ຮັບຄວາມທຸກທໍລະມານຈາກສົງຄາມແລະຄວາມອຶດຢາກ ໄດ້ພາກັນນັດຢຸດງານຂຶ້ນຕາມຄຳ ຮຽກຮ້ອງຂອງຊາວໂບນເຊວິກ. ພວກເຂົາໄດ້ພາກັນອອກໄປສູ່ຖະໜົນພ້ອມທັງຖືທຸງແດງ ແລະໄດ້ສ້າງສິ່ງກີດຂວາງຂຶ້ນ. ເວລານັ້ນການຕໍ່ສູ້ກັບຕຳຫລວດ ໄດ້ລະເບີດຂຶ້ນແລ້ວ. ຊາວກຳມະກອນໄດ້ຮ້ອງຄຳຂວັນອອກໄປວ່າ: "ສົງຄາມຈົ່ງຈິບຫາຍ ! ພະເຈົ້າຊາຈົ່ງຈິບຫາຍ ! ເຂົ້າກິນ ! ສັນຕິພາບ !". ພະເຈົ້າຊານິໂກລາຍທີ II ໄດ້ອອກຄຳສັ່ງແກ່ນາຍພົນຂອງຕົນ: "ໃຫ້ຍຸຕິຄວາມບໍ່ເປັນລະບຽບຮຽບຮ້ອຍນັ້ນທັນທີ". ວັນທີ໒໖ ເດືອນກຸມພາ ພວກນາຍທະຫານກໍໄດ້ນຳເອົາທະຫານບາງ ໜ່ວຍອອກໄປສູ່ຖະໜົນ ແລະອອກຄຳສັ່ງໃຫ້ທະຫານຍິງປືນໃສ່ຊາວກຳມະກອນ. ແຕ່ວ່າເວລານີ້ ພວກທະຫານບໍ່ໄດ້ເປັນຄືກັນກັບພວກທີ່ໄດ້ຍິງຊາວກຳມະກອນ ໃນປີ ໑໙໐໕ ນັ້ນ ເສຍແລ້ວ.

ພວກເຂົາຫລາຍຄົນ ບໍ່ພຽງແຕ່ບໍ່ຍິງປືນໃສ່ ພວກເດີນຂະບວນເທົ່ານັ້ນ ແຕ່ຫາກຍັງໄດ້ຖິ້ມປືນແລ້ວ ເຂົ້າໄປສົມທົບກັບ ຊາວກຳມະກອນ ຢ່າງເປັນກັນເອງເສຍອີກ. ພໍຮອດກາງຄືນ ມາພວກທະຫານກໍກັບຄືນໄປສູ່ຄ້າຍ ແຕ່ກໍບໍ່ໄດ້ພັກຜ່ອນ ແລະຫລັບນອນ. ໂດຍສະເພາະແມ່ນກອງພັນທະຫານໂວລິນສະກີ ແມ່ນມີຄວາມຕື່ນເຕັ້ນເປັນພິເສດ. ພໍມາຮອດຕອນເຊົ້າໆ ພວກທະຫານປະຈຳກອງພັນນີ້ ກໍໄດ້ພາກັນຕັດສິນໃຈວ່າ: "ພວກເຮົາຈະຕາຍດີກ່ວາ ທີ່ຈະໄປຍິງປະຊາຊົນຂອງຕົນເອງ". ມື້ເຊົ້າມາ ນາຍທະຫານກໍມາເຖິງ, ເຂົາຕ້ອງການຢາກຈະ ສ້າງກອງພັນຄືນມາໃຫມ່ ແລະນຳກອງພັນນັ້ນ ໄປຕ້ານກັບຊາວກຳມະກອນ. ແຕ່ພວກທະຫານກໍໄລ່ນາຍທະຫານຄົນນັ້ນ ຫນີໄປແລະແລ້ວພວກເຂົາກໍໄດ້ເຄື່ອນອອກໄປສູ່ຖະຫນົນ. ພວກທະຫານຈາກກອງພັນອື່ນໆ ກໍໄດ້ມາເຂົ້າຮ່ວມກັບພວກເຂົາອີກ . ຊາວກຳມະກອນໄດ້ຮ້ອງຂຶ້ນດ້ວຍຄວາມຍິນດີວ່າ"ພວກທະຫານຈົ່ງຫມັ້ນຍືນ" ! ແລ້ວກໍເຂົ້າໄປຮ່ວມກັບພວກເຂົາ. ພວກທະຫານພ້ອມດ້ວຍຊາວກຳມະກອນ ໄດ້ພາກັນຍ່າງມຸ່ງຫນ້າ ໄປສູ່ຄຸກ ແລະປົດປ່ອຍພວກນັກປະຕິວັດ ທີ່ຖືກຂັງຢູ່ນັ້ນອອກ. ຊາວກຳມະກອນ ແລະພວກທະຫານ ທີ່ລຸກຮຂຶ້ນນີ້ ແມ່ນໄດ້ຖືກນຳພາໂດຍ ຊາວໂບນເຊວິກ. ພວກຕຳຫລວດແລະນາຍທະຫານໄດ້ພະຍາຍາມທີ່ຈະປາບປາມການລຸກຮຂຶ້ນ ແລະຍິງປະຊາຊົນແຕ່ກໍໄດ້ພົບກັບການປະລາໄຊໄປ.

ຫລັງຈາກການລຸກຮຂຶ້ນ ຂອງຊາວຜູ້ອອກແຮງງານ ໃນ

ເມື່ອງປຕະໂລກະລາດນັ້ນແລ້ວ, ຊາວກຳມະກອນ, ຊາວນາ ແລະປະຊາຊົນ ຜູ້ທີ່ຖືກກົດຂີ່ຂູດຮີດທົ່ວປະເທດ ກໍໄດ້ພາກັນລຸກຂຶ້ນຕ້ານອຳນາດຂອງພະເຈົ້າຊາ. ພວກທະຫານທັງທີ່ຢູ່ໃນ - ແນວໜ້າ ແລະແນວຫລັງ ກໍໄດ້ເຂົ້າຂ້າງຝ່າຍປະຕິວັດ ເຈັ່ນດຽວກັນ.

ອີກຄັ້ງໜຶ່ງ, ຄືດັ່ງປີ 1905, ທົ່ວປະເທດກໍໄດ້ເລີ່ມເກີດມີສະພາໂຊວຽດຂຶ້ນມາ. ເວລານີ້ສະພາໂຊວຽດ ບໍ່ແມ່ນສ້າງແຕ່ພຽງເປັນຂອງຜູ້ແທນຊາວກຳມະກອນເທົ່ານັ້ນ ແຕ່ຍັງເປັນຂອງຜູ້ແທນທະຫານອີກດ້ວຍ. ອັນນີ້ໝາຍຄວາມວ່າ ຊາວນາ (ທະຫານສ່ວນຫລວງຫລາຍ ແມ່ນມາຈາກຊາວນາ)ແມ່ນເຂົ້າໄປຮ່ວມກັບຊາວກຳມະກອນ. ນັ້ນຄືພັນທະພາບອັນໜັ້ນໜຽວລະຫວ່າງຊາວກຳມະກອນກັບຊາວນາ ໃນການຕໍ່ສູ້ ຕ້ານລະບອບພະເຈົ້າຊານັ້ນ ແມ່ນໄດ້ເລີ່ມສ້າງຂຶ້ນແລ້ວ. ການກະທຳແບບປະຕິວັດ ອັນມືດທີ່ພົ້ນນີ້ ໄດ້ເຮັດໃຫ້ພວກນາຍທຶນ ແລະພວກເຈົ້າທີ່ດິນ ມີຄວາມສະທ້ານຢ້ານກົວ ຢ່າງຂົມຜອງ ສະຫຍອງເກົ້າ. ຄັນໄດ້ຮູ້ແຈ້ງວ່າ ການທີ່ຈະຮັກສາລະບອບ ລາຊາທິປະໄຕຕໍ່ໄປໄວ້ບໍ່ໄດ້ແລ້ວນັ້ນ, ບັນດາຕົວແທນຈົນຈຸ້ມ ນາຍທຶນລັດເຊຍ ກໍໄດ້ຊຸກຊອນໃຫ້ພະເຈົ້າຊານິໂກລາຍທີ II ສະລະລາຊະບັນລັງ ແລະໄດ້ປະກາດກ່ຽວກັບການຈັດຕັ້ງ ລັດຖະບານ ເຊິ່ງຈະຕ້ອງປົກຄອງປະເທດໄປຊົ່ວຄາວກ່ອນ ຈົນກ່ວາຈະມີການເລືອກຕັ້ງ. ພວກເຈົ້າທີ່ດິນໃຫຍ່ ແລະ ເຈົ້າຂອງໂຮງຈັກໂຮງງານ ໄດ້ເຂົ້າຮ່ວມຢູ່ໃນລັດຖະບານຊົ່ວຄາວນີ້.

ດ້ວຍເຫດນີ້ ລະບອບອັດຕາທິປະໄຕຂອງພະເຈົ້າຊາ ເຊິ່ງກົດຂີ່ຂູດຮີດປະຊາຊົນຜູ້ອອກແຮງງານລັດເຊຍ ມາເປັນເວລາຫລາຍສະຕະວັດນັ້ນ ກໍໄດ້ພັງທະລາຍລົງ ພາຍໃຕ້ການບີບບັງຄັບ ຈາກຊາວກຳມະກອນ, ຊາວນາ ແລະ ທະຫານ.

ລັດຖະບານຊົ່ວຄາວ ໄດ້ໃຫ້ຄຳໝັ້ນສັນຍາຕໍ່ປະຊາຊົນ ໄວ້ຫລາຍຢ່າງ. ລັດຖະບານນີ້ໄດ້ຮັບການຊ່ວຍເຫລືອຈາກບັນດາຜູ້ນຳພັກການເມືອງ ຂອງຊົນຊັ້ນນາຍທຶນນ້ອຍ-ຄືພວກເມນເຊວິກ ແລະພວກແອແສຣ໌ ເຊິ່ງຍັງມີອິດທິພົນອັນເຂັ້ມແຂງຕໍ່ຊາວນາ, ຊົນຊັ້ນນາຍທຶນນ້ອຍໃນເມືອງ. ອິດທິພົນອັນນີ້ ໄດ້ອຳນວຍໃຫ້ບັນດາຜູ້ນຳເມນເຊວິກ ແລະແອແສຣ໌ ມີບົດບາດຊີ້ນຳຢູ່ໃນສະພາໂຊວຽດ ຂອງຜູ້ແທນຊາວກຳມະກອນແລະທະຫານໃນເມືອງໃຫຍ່ໆຂອງລັດເຊຍ. ພວກເຂົາໄດ້ພະຍາຍາມທີ່ຈະເຮັດໃຫ້ ປະຊາຊົນເຊື່ອໝັ້ນວ່າ ພາລະໜ້າທີ່ອັນສຳຄັນຂອງການປະຕິວັດ ຄືການໂຄ່ນລົ້ມພະເຈົ້າຊາລົງນັ້ນແມ່ນໄດ້ແກ້ໄຂໄປແລ້ວ. ພວກເມນເຊວິກ ແລະພວກແອແສຣ໌ ໄດ້ເວົ້າວ່າ "ເວລານີ້ມັນຄວນທີ່ຈະໃຫ້ໂອກາດແກ່ລັດຖະບານຊົ່ວຄາວ ໄດ້ແກ້ໄຂບັນຫາອື່ນໆ". ຜູ້ຄົນຈຳນວນຫລວງຫລາຍໄດ້ເຊື່ອຕໍ່ຄຳໝັ້ນສັນຍາຂອງລັດຖະບານຊົ່ວຄາວ ແລະຜູ້ນຳພັກຊົນຊັ້ນນາຍທຶນນ້ອຍ ທີ່ໄດ້ກ່າວໄວ້ນັ້ນ.

ສອງສາມເດືອນໄດ້ຜ່ານພົ້ນໄປ. ຄືກັນກັບແຕ່ກ່ອນໂຮງຈັກໂຮງງານຕ່າງໆ ກໍຍັງຕົກເປັນຂອງນາຍທຶນຢູ່. ຢູ່ໃນຊົນນະບົດນັ້ນ ພວກເຈົ້າທີ່ດິນ ແລະພວກກູລັກ (ຊາວນາຮັ່ງ) ກໍຍັງ

ມີກຳມະສິດຢູ່ຄືເກົ່າ. ຢູ່ທີ່ແນວໜ້າພວກທະຫານກໍຍັງດຳເນີນ-ການເສຍສະລະເລືອດເນື້ອຢູ່ຕໍ່ໄປ. ບັນດາຕົວແທນຂອງ ລັດຖະບານຊົ່ວຄາວ ກໍໄດ້ຮຽກຮ້ອງໃຫ້ດຳເນີນສົງຄາມ ຕໍ່ໄປ "ເພື່ອໃຫ້ລັດເຊຍມີເສລີພາບ". ຢູ່ໃນໝູ່ປະຊາຊົນກໍໄດ້ເກີດມີຄວາມບໍ່ພໍໃຈຂຶ້ນ. ພວກໂບນເຊວິກທີ່ກັບຄືນມາຈາກການເນລະເທດ ແລະການຈຳຄຸກ ກໍໄດ້ອະທິບາຍໃຫ້ຊາວກຳມະກອນ, ພວກທະຫານ, ຊາວນາຟັງວ່າ ມັນບໍ່ຫ້ອນຈະມີເສລີພາບທີ່ແທ້ໄດ້ ຕາບໃດພວກນາຍທຶນ ແລະພວກເຈົ້າທີ່ດິນ ຍັງມີອຳນາດຢູ່. ທ່ານເລນິນ ເມື່ອໄດ້ມາເວົ້າກັບຊາວກຳມະກອນແລ້ວ ກໍໄດ້ເວົ້າວ່າ ການໂຄ່ນລົ້ມອຳນາດພະເຈົ້າຊານັ້ນເປັນພຽງແຕ່ບາດກ້າວຂັ້ນທຳອິດເທົ່ານັ້ນ. ທ່ານໄດ້ຮຽກຮ້ອງ ຊາວຜູ້ອອກແຮງງານ ຈົ່ງຢ່າໄປເຊື່ອຕໍ່ລັດຖະບານຊົ່ວຄາວ ແລະ ຈົ່ງກະກຽມເພື່ອການຕໍ່ສູ້ ດັ່ງຕໍ່ໄປອີກ.

ມະຫາປະຕິວັດສັງຄົມນິຍົມເດືອນຕຸລາ

ການປະຕິວັດເດືອນກຸມພາ ແມ່ນໃຫ້ໂອກາດແກ່ທ່ານເລນິນກັບຄືນປະເທດຕົນ ຈາກຕ່າງປະເທດ. ປະຊາຊົນໄດ້ຄອຍຖ້າຜູ້ນຳຂອງເຂົາເຈົ້າຢູ່. ແຕ່ວ່າ ລັດຖະບານຊົ່ວຄາວແລະພວກນາຍທຶນຂອງປະເທດຕ່າງໆ ໄດ້ພາກັນຢ້ານທ່ານເລນິນ. ດັ່ງນັ້ນ ພວກເຂົາຈຶ່ງພະຍາຍາມທຸກວິທີທາງ ເພື່ອສະກັດກັ້ນບໍ່ໃຫ້

ທ່ານເລນິນ ກັບຄືນສູ່ປະເທດລັດເຊຍ.

ເຖິງວ່າຈະມີຄວາມຫຍຸ້ງຍາກຫລາຍປານໃດກໍຕາມວະລາດີເມຍອິລິດ ເລນິນ ກໍໄດ້ເດີນທາງມາຮອດ ເປຕະໂລກະລາດ ເມື່ອວັນທີ ໓ ເມສາ ປີ ໑໙໑໗. ລົດໄຟໄດ້ເດີນທາງ ມາຮອດຊ້າ ທີ່ສະຖານີລົດໄຟ ເປຕະໂລກະລາດ-ຟິນແລນ ໃນຕອນກາງຄືນ. ແຕ່ຊາວກຳມະກອນ, ທະຫານບົກ ແລະ ທະຫານເຮືອຫລາຍພັນຄົນ ກໍໄດ້ພາກັນມາອັ່ງອໍຢູ່ທີ່ເດີ່ນ ຫນ້າສະຖານີລົດໄຟ ຕັ້ງແຕ່ຕອນຄ່ຳ. ພວກເຂົາທັງຫມົດ ຕ້ອງການຢາກຟັງຄຳເວົ້າຂອງເລນິນ ທີ່ສະຫລາດສ່ອງໃສ ແລະການຕີລາຄາສະພາບການຂອງທ່ານໃນລັດເຊຍ. ບັນດາຜູ້ນຳຂອງຊາວເມນເຊວິກ ກໍໄດ້ມາຮັບຕ້ອນທ່ານເລນິນຄືກັນ. ພວກເຂົາຕ້ອງການຢາກພົບກັບທ່ານ ດ້ວຍການສົນທະນາແລະສະກັດກັ້ນທ່ານບໍ່ໃຫ້ກ່າວຄຳປາໄສຕໍ່ປະຊາຊົນ. ຢ່າງໃດກໍຕາມເມື່ອອອກຈາກຕູ້ລົດໄຟແລ້ວ, ເລນິນກໍມຸ່ງຫນ້າໄປສູ່ເດີ່ນ ຫນ້າສະຖານີລົດໄຟໃນທັນທີ. ປະຊາຊົນໄດ້ຕ້ອນຮັບຜູ້ນຳຂອງ ພວກເຂົາດ້ວຍຄວາມຍິນດີຢ່າງລົ້ນເຫລືອ. ທ່ານໄດ້ຂຶ້ນແກ່ນຂອງລົດຫຸ້ມເກາະ ເຊິ່ງໄດ້ນຳມາຈອດໄວ້ທີ່ເດີ່ນ ໂດຍພວກທະຫານຝ່າຍປະຕິວັດ. ເລນິນໄດ້ກ່າວຕໍ່ຝູງຊົນວ່າ ພະເຈົ້າຊາໄດ້ຖືກໂຄ່ນລົ້ມລົງໄປແລ້ວ, ແຕ່ວ່າ ພວກເຈົ້າທີ່ດິນແລະພວກນາຍທຶນຍັງມີອຳນາດຢູ່. ພວກເຂົາຍັງສືບຕໍ່ມີກຳມະສິດໃນທີ່ດິນ, ໂຮງຈັກໂຮງງານຕ່າງໆ. ພວກເຂົາຍັງກົດຂີ່ຂູດຮີດຊາວ ກຳມະກອນແລະຊາວນາຕໍ່ໄປ. ເພື່ອແທນອຳນາດຂອງນາຍທຶນແລະເຈົ້າ

ທີ່ດິນນັ້ນ ພວກເຮົາຈຳເປັນຕ້ອງສ້າງອຳນາດຂອງຊາວຜູ້ອອກແຮງງານຂຶ້ນ. ປະຊາຊົນຈຳຕ້ອງເປັນເຈົ້າຂອງທີ່ດິນ, ໂຮງຈັກແລະໂຮງງານຂອງຕົນ. ເລນິນໄດ້ສັ້ນສຸດຄຳປາໄສ ຂອງທ່ານ ດ້ວຍການກ່າວຄຳຂວັນ "ການປະຕິວັດ ສັງຄົມນິຍົມຈົ່ງໝັ້ນຍືນ !".

ໃນມື້ຕໍ່ມາ, ວັນທີ ໔ ເມສາ, ເລນິນໄດ້ສະເໜີ ແຜນການດຳເນີນງານຂອງພັກຕໍ່ໄປ ຕໍ່ທີ່ຊຸມນຸມ ຂອງພວກໂບນເຊວິກ. ເລນິນໄດ້ເວົ້າວ່າ ມັນເປັນສິ່ງຈຳເປັນ ທີ່ຈະຕ້ອງອະທິບາຍ ຢ່າງອົດທົນຕໍ່ປະຊາຊົນ ໃຫ້ເຫັນເຖິງຄຳຂີ້ຕົວະ ໃນຄຳໝັ້ນສັນຍາ ຂອງລັດຖະບານຊົ່ວຄາວ. ຢູ່ໃນສະພາ ໂຊວຽດ ມັນຈຳເປັນຕ້ອງເປີດເຜີຍການຫຼອກຫຼວງຂອງພວກ ເມນເຊວິກ ແລະພວກແອແສຣ໌ ທັງນີ້ກໍເພື່ອໃຫ້ສະພາໂຊວຽດ ເຂົ້າມາຫາຝ່າຍພວກໂບນເຊວິກ. ສະພາໂຊວຽດຂອງຜູ້ແທນຊາວກຳມະກອນ ແລະທະຫານ ຈຳເປັນຕ້ອງມອບທີ່ດິນ ໃຫ້ແກ່ຊາວນາ, ຈັດຕັ້ງການກວດກາ ຂອງຊາວກຳມະກອນ ຕໍ່ໂຮງຈັກ ໂຮງງານຂຶ້ນ ແລະຮັບປະກັນໃຫ້ລັດເຊຍ ຖອນອອກຈາກສົງຄາມ. ໂດຍອີງໃສ່ການສະໜັບສະໜູນ ຂອງປະຊາຊົນເທົ່ານັ້ນ,ສະພາໂຊວຽດ ຈຶ່ງໄດ້ສາມາດ ແລະຮັບໂຮມອຳນາດທັງໝົດໃນປະເທດມາໄວ້ໃນກຳມືຂອງຕົນ. ຄຳຂວັນທີ່ວ່າ "ຈົ່ງມອບອຳນາດທັງໝົດ ໃຫ້ແກ່ສະພາໂຊວຽດ" ເຊິ່ງທ່ານເລນິນ ສະເໜີຂຶ້ນນັ້ນ ແມ່ນໝາຍເຖິງເສັ້ນທາງສັນຕິພາບ ໃນການຂະຫຍາຍການປະຕິວັດ ໃຫ້ກວ້າງອອກ. ພວກໂບນເຊວິກໄດ້ດຳ

ເນີນການຂະຫຍາຍວຽກງານແບບມີການອະທິບາຍຢ່າງກ້ວາງຂວາງ ອອກໄປໃນໝູ່ຊາວກຳມະກອນ, ທະຫານ ແລະຊາວນາ. ໂຄງການອັນຈະແຈ້ງ ແລະບໍ່ກຳກອມຂອງພວກເຂົານັ້ນແມ່ນສອດຄ່ອງກັບຄວາມຫວັງອັນສົດໃສ ຂອງປະຊາຊົນຜູ້ອອກແຮງງານ. ອິດທິພົນຂອງພວກໂບນເຊວິກ ຢູ່ໃນໝູ່ຊາວ ກຳມະກອນ, ຊາວນາ ແລະທະຫານນັ້ນ ແມ່ນເຕີບໃຫຍ່ຂຶ້ນຢ່າງວ່ອງໄວ.

ຢູ່ທີ່ເດີ່ນໂຮງງານໄດ້ມີການຊຸມນຸມ ຂອງຊາວກຳມະກອນ-ຂຶ້ນ. ງານຊຸມນຸມມິດຕິງໄດ້ດຳເນີນຕໍ່ໄປ.ພວກເຂົາພວມ ຟັງຄຳປາໄສຂອງລັດຖະມົນຕີ ແຫ່ງລັດຖະບານຊົ່ວຄາວ. ຄຳປາໄສຂອງເຂົາ ແມ່ນຮຸນແຮງແລະເຕັມໄປດ້ວຍສຳນວນໂອຫານຊວນເຊື່ອ, ແຕ່ປະຊາຊົນເບິ່ງຄືຈັງວ່າ ບໍ່ເຂົ້າໃຈວ່າເມື່ອໃດຊີວິດການເປັນຢູ່ຂອງພວກເຂົາ ຈະໄດ້ຮັບການປັບປຸງຂຶ້ນ ໃນທີ່ສຸດ. ທ່ານລັດຖະມົນຕີເວົ້າ, ກ່ອນອື່ນໝົດ,ພວກເຮົາຕ້ອງເອົາຊະນະໃນສົງຄາມ, ແລ້ວຕໍ່ໄປພວກເຮົາຕ້ອງຄອຍ ຖ້າການເລືອກຕັ້ງ, ແລ້ວ...ມວນຊົນກໍໄດ້ຮ້ອງຂຶ້ນວ່າ "ຂໍໃຫ້ສົງຄາມຈົ່ງຈິບຫາຍ !, ເຂົ້າກິນ ! ສັນຕິພາບ ! ເສລີພາບ !" ສຽງໜາກວິດໄດ້ດັງຂຶ້ນ ແລະຮຽກຮ້ອງໃຫ້ທ່ານ-ລັດຖະມົນຕີຢຸດເວົ້າ ແລະແລ້ວເຂົາກໍລົງຈາກເວທີໄປໂດຍຍັງບໍ່ທັນໝົດຄຳປາໄສຂອງເຂົາ. ແຕ່ເວລານີ້ພວກທີ່ຊຸມນຸມຢູ່ນັ້ນກໍຟັງຄຳປາໄສຂອງຊາວກຳມະກອນ ໂບນເຊວິກ ຢ່າງຕັ້ງອົກຕັ້ງໃຈ. ທຸກໆຄຳເວົ້າຢູ່ໃນແຜນການ ປະຕິບັດງານ ຂອງເລ

ນິນ ແມ່ນເປັນທີ່ເຂົ້າໃຈ ແລະໃກ້ຊິດກັບພວກເຂົາ.

ຊາວກຳມະກອນໄດ້ປະຕິເສດທີ່ຈະຟັງຄຳປາໄສຂອງບັນດາ ຕົວແທນ ແຫ່ງລັດຖະບານຊົ່ວຄາວນັ້ນ ໄດ້ມີຫລາຍຂຶ້ນເລື້ອຍໆ ແລະຜູ້ຄົນທີ່ເຊື່ອຟັງຕໍ່ອຳນາດຂອງພວກເຈົ້າທຶນ ແລະ ພວກ ນາຍທຶນນັ້ນ ກໍມີຫນ້ອຍລົງຈັກໄຈ້. ເນື່ອງຈາກການເຂົ້າຮ່ວມ ຂອງພວກແອແສຣ໌ ຢູ່ໃນສ່ວນປະກອບຂອງລັດຖະບານນັ້ນ ມັນ ຈຶ່ງເຮັດໃຫ້ອຳນາດຂອງລັດຖະບານຊົ່ວຄາວເປື່ອຍເຍື່ອຍລົງ, ເພາະສະນັ້ນ ລັດຖະບານຈຶ່ງໄດ້ຕັດສິນໃຈ ທີ່ຈະປາບປາມຄຳ ເວົ້າຂອງພວກໂບນເຊວິກ ທີ່ເວົ້າຄວາມຈິງນັ້ນ ດ້ວຍອາວຸດ. ໃນເດືອນກໍລະກົດ ປີ ໑໙໑໗ ພວກນັກຮຽນນາຍຮ້ອຍທະຫານ ຈາກໂຮງຮຽນທະຫານ ກໍໄດ້ຍິງປືນໃສ່ການເດີນຂະບວນຕ້ານ ສົງຄາມ ຂອງຊາວກຳມະກອນ ແລະທະຫານຢູ່ໃນເມືອງ ເປ ຕະໂລກະລາດ.ລັດຖະບານຊົ່ວຄາວໄດ້ອອກຄຳສັ່ງ ໃຫ້ຈັບກຸມ ທ່ານເລນິນ ແລະພວກຕຳຫລວດ ກໍໄດ້ຮັບຄຳສັ່ງລັບ ໃຫ້ລອບ ຂ້າຜູ້ນຳຂອງການປະຕິວັດ. ການລອບທຳຮ້າຍພວກ ໂບນເຊ ວິກ ໄດ້ເລີ່ມຂຶ້ນແລ້ວ ໄປທົ່ວປະເທດ.ຄັນໄດ້ວິດການເວົ້າຫຼກ ຢາ່ງ ກ່ຽວກັບປະຊາທິປະໄຕແລ້ວ, ລັດຖະບານຊົ່ວຄາວກໍໄດ້ ປ່ຽນໃຈໄປໃຊ້ການບຸກໂຈມຕີ ຕ້ານຊາວຜູ້ອອກແຮງງານ ນັ້ນ ແທນ.

ເພື່ອປ້ອງກັນຊີວິດຂອງຜູ້ນຳໄວ້, ພັກໂບນເຊວິກຈຶ່ງໄດ້ຕັດ ສິນໃຈ ນຳເອົາທ່ານເລນິນໄປເຊື່ອງໄວ້. ທ່ານໄດ້ອອກເດີນ ທາງໄປຊານເມືອງເປຕະໂລກະລາດ ສູ່ສະຖານີລົດໄຟລາຊະ

ລົບແລະລີ້ຊ່ອນຢູ່ໃນກະຕູບນ້ອຍຫ່າງໄກຈາກສະຖານີລົດໄຟໄປ ປະມານ ໕-໖ ກິໂລແມດ ຣິມຝັ່ງຂອງທະເລສາບນ້ອຍໆແຫ່ງໜຶ່ງ ອັນເປົ່າປ່ຽວ ໂດຍປອມຕົວເປັນຄົນຕັດຫຍ້າ. ຈາກບ່ອນນັ້ນ ທ່ານເລນິນກໍໄດ້ສືບຕໍ່ຊີ້ນຳໃນການຕໍ່ສູ້. ບັນດາເພື່ອນ ຜູ້ຮ່ວມງານ ໄດ້ເດີນທາງມາພົບທ່ານຢູ່ເລື້ອຍໆເພື່ອຂໍຄຳປຶກສາ ແລະຄຳຊີ້ນຳ. ເລນິນຖືວ່າ ການກະທຳຂອງລັດຖະບານຊົ່ວ-ຄາວ ໄດ້ຕັດໂອກາດຂອງພວກໂບນເຊວິກ ທີ່ຈະໄດ້ ອຳນາດມາໂດຍສັນຕິວິທີ ແລະວ່າຍຸກສັນຕິພາບ ຂອງການປະຕິວັດນັ້ນໄດ້ສ້ຽງສຸດລົງແລ້ວ. ແຕ່ນີ້ໄປມັນຈຳເປັນຕ້ອງກະກຽມປະຊາຊົນໄວ້ ເພື່ອການລຸກຮືຂຶ້ນຈັບອາວຸດຕ້ານພວກເຈົ້າທີ່ດິນ ແລະພວກນາຍທຶນ.

ຢູ່ໃນກອງປະຊຸມໃຫຍ່ຂອງພັກ ຄັ້ງທີ VI ໃນເດືອນສິງຫາປີ ໑໙໑໗ ນັ້ນ ພວກໂບນເຊວິກ ໄດ້ຮັບຮອງເອົາມະຕິ ກ່ຽວກັບການກະກຽມການລຸກຂຶ້ນຈັບອາວຸດ.

ມາຮອດລະດູໃບໄມ້ຫຼົ່ນ ປີ ໑໙໑໗ ສະພາບການໃນ ປະເທດ ໄດ້ຊຸດໂຊມໜັກຍິ່ງຂຶ້ນ. ສົງຄາມຍັງດຳເນີນ ສືບຕໍ່ໄປຄວາມອຶດຢາກກໍໄດ້ປາກົດຂຶ້ນ ແລະອຸດສາຫະກຳ ກໍຍິ່ງເສື່ອມໂຊມໜັກຂຶ້ນ ເຊັ່ນດຽວກັນ. ເວລານີ້ ຊາວຜູ້ອອກແຮງງານສ່ວນຫລວງຫລາຍ ໄດ້ເລີ່ມເຂົ້າໃຈວ່າ ມັນຈຳເປັນຕ້ອງໂຄ່ນລົ້ມລັດຖະບານຊົ່ວຄາວ ແລະຍຶດເອົາອຳນາດມາໄວ້ໃນມືຂອງຕົນ. ພາຍໃຕ້ການຊີ້ນຳຂອງຊາວໂບນເຊວິກ ຢູ່ໃນໂຮງຈັກ-ໂຮງງານຕ່າງໆ ກໍໄດ້ມີການຈັດຕັ້ງກອງປະກອບອາວຸດ ຂອງ

ຊາວກຳມະກອນຂຶ້ນ. ນັກຮົບຂອງກອງປະກອບອາວຸດເຫລົ່ານີ້ໄດ້ເອີ້ນວ່າ ນັກປ້ອງກັນແດງ. ໃນຈັ່ນມະບົດ ພວກຊາວນາກໍໄດ້ຍຶດເອົາທີ່ດິນຂອງເຈົ້າທີ່ດິນ ແລະກໍໄດ້ຈູດເຜົາ ຈຸ້ບສີນບັດຂອງພວກເຈົ້າທີ່ດິນຖິ້ມ, ພວກທະຫານຢູ່ແນວຫນ້າ ກໍໄດ້ປະຕິເສດການສູ້ຮົບ ແລະບໍ່ປະຕິບັດຄຳສັ່ງ ຂອງນາຍພົນແລະນາຍທະຫານ.

ເຖິງວ່າຈະມີການລັກລອບທຳຮ້າຍຫລາຍປານໃດກໍຕາມ , ຖັນແຖວພັກຂອງພວກໂບນເຊວິກ ກໍເຕີບໃຫຍ່ຂຶ້ນຢ່າງວ່ອງໄວ. ໃນເດືອນເມສາ ປີ ໑໙໑໗ ຢູ່ໃນຖັນແຖວພັກນັ້ນ ໄດ້ມີສະມາຊິກຢູ່ຮອດ ໘໐ ພັນຄົນ ແລະໃນເດືອນກໍລະກົດ ກໍໄດ້ຂຶ້ນຮອດ ໒໔໐ ພັນຄົນ.

ເພື່ອເຮັດໃຫ້ການລຸກຂຶ້ນຈັບອາວຸດ ມີໄຊຊະນະໄດ້ນັ້ນ ມັນຈຳເປັນຕ້ອງມີແຜນການ ຢ່າງຈະແຈ້ງ. ແຜນການທີ່ວ່ານີ້ແມ່ນໄດ້ຖືກຮ່າງຂຶ້ນໂດຍທ່ານເລນິນ. ວາລະດີເມຍ ອິລິດເລນິນ ໄດ້ສອນວ່າ ການລຸກຮືຂຶ້ນນັ້ນ ຈຳເປັນຕ້ອງເລີ່ມຂຶ້ນ ໃນທັນທີທັນໃດ ໃນເວລາທີ່ລັດຖະບານຊົ່ວຄາວ ບໍ່ໄດ້ຄາດຫວັງ-ໄວ້ກ່ອນ. ຄັນການລຸກຮືຂຶ້ນໄດ້ເລີ່ມແລ້ວ ມັນຈຳເປັນ ຕ້ອງໂຈມຕີພ້ອມກັນບາດດຽວ. ເລນິນໄດ້ຂຽນວ່າ"ການປ້ອງກັນ-ແມ່ນຄວາມເປັນຕາຍ ຂອງການລຸກຂຶ້ນຈັບອາວຸດ". ກ່ອນອື່ນຫມົດ ຕ້ອງຍຶດແລະຮັກສາສະຖານີລົດໄຟ, ໄປສະນີ, ໂທລະເລກ, ໂທລະສັບ, ຂົວຂ້າມແມ່ນ້ຳເນວາ ໄວ້ຢ່າງບໍ່ຄຳນຶງເຖິງວ່າຈະສູນເສຍໄປເທົ່າໃດກໍຕາມ.ມັນຈຳເປັນຕ້ອງ ປະຕິ

ບັດການໄປຢ່າງວ່ອງໄວແລະເດັດຂາດພາຍໃຕ້ການຊີ້ນຳຂອງກອງບັນຊາການລຸກຮືຂຶ້ນ ອັນໜຶ່ງອັນດຽວກັນ ແລະ ຈຳເປັນຕ້ອງໂຮມກອງກຳລັງປະກອບອາວຸດ ຂອງຊາວກຳມະກອນ , ທະຫານບົກ ແລະທະຫານເຮືອເຂົ້າກັນແລະບັນຊາພວກເຂົາ.

ວັນທີ ໗ ຕຸລາ ປີ ໑໙໑໗ ເລນິນໄດ້ກັບຄືນມາເມືອງ ເປຕະໂລກະລາດ ຢ່າງລັບໆ. ສອງມື້ຕໍ່ມາ ກໍໄດ້ເປີດກອງ ປະຊຸມ ຄະນະກຳມະການສູນກາງພັກ ຂອງພວກໂບນເຊວິກຂຶ້ນ. ຢູ່ໃນກອງປະຊຸມນີ້ ເລນິນໄດ້ກ່າວວ່າ ກາລະໂອກາດ ທີ່ຈະໂຄ່ນລົ້ມລັດຖະບານຊົ່ວຄາວ ໄດ້ມາຮອດແລ້ວ ແລະຝ່າປະຊາຊົນ ແມ່ນກຽມພ້ອມທີ່ຈະລຸກຮືຂຶ້ນແລ້ວ. ດັ່ງນັ້ນ ຄະນະກຳມະການສູນກາງພັກ ຂອງພວກໂບນເຊວິກ ຈຶ່ງໄດ້ລົງມະຕິ ຮັບເອົາການຕັດສິນໃຈ ເລີ່ມຕົ້ນກະກຽມ ເພື່ອການລຸກຂຶ້ນຈັບອາວຸດນັ້ນ ຢ່າງບໍ່ຊັກຊ້າ.

ເພື່ອການຊີ້ນຳໃຫ້ແກ່ການລຸກຮືຂຶ້ນ ພາຍໃຕ້ການ ນຳພາຂອງສະພາໂຊວຽດ ປະຈຳເມືອງເປຕະໂລກະລາດນັ້ນຄະນະກຳມະການປະຕິວັດ ຝ່າຍທະຫານ ກໍໄດ້ຮັບການຈັດຕັ້ງ ຂຶ້ນເຊິ່ງໃນນັ້ນ ກໍມີຕົວແທນຂອງຄະນະກຳມະການ ສູນກາງພັກ, ຕົວແທນຂອງສະພາໂຊວຽດ ປະຈຳເມືອງເປຕະໂລກະລາດ, ຕົວແທນຂອງສະຫະພັນກຳມະບານ, ຕົວແທນຂອງກອງ ທະຫານເຮືອທະເລບັນຕິກແລະອົງການຈັດຕັ້ງອື່ນໆ ເຂົ້າຮ່ວມນຳດ້ວຍ.ທ່ານໂປດະໂວຍສະກີບຸກຄົນຜູ້ມີຊື່ສຽງຂອງ ພັກໂບນເຊວິກໄດ້ຖືກແຕ່ງຕັ້ງໃຫ້ເປັນປະທານຂອງຄະນະກຳມະການນີ້.

ເລນິນໃນເວລາຢູ່ທີ່ສະໂມລະນີພວມຊີ້ນຳການລຸກຮື້ນ.

ຄະນະກຳມະການປະຕິວັດຝ່າຍທະຫານປະຈຳເມືອງເປຕະໂລກະລາດ ໄດ້ສົ່ງຕົວແທນຂອງຕົນ ໄປຍັງບັນດາ ໂຮງຈັກໂຮງງານ ແລະໜ່ວຍທະຫານຕ່າງໆ.ການກະກຽມເພື່ອການປະທະກັນ ຢ່າງເດັດຂາດກັບພວກນາຍທຶນ ແລະເຈົ້າທີ່ດິນນັ້ນ ໄດ້ເລີ່ມຂຶ້ນແລ້ວ.

ຕາມການສະເໜີຂອງທ່ານເລນິນນັ້ນ ການລຸກຮື້ນນີ້ ຈະໄດ້ເລີ່ມຕົ້ນຂຶ້ນໃນວັນທີ ໒໔ ເດືອນຕຸລາ (ວັນທີ ໖ ພະຈິກຕາມປະຕິທິນໃໝ່). ກອງປະກອບອາວຸດຊາວກຳມະກອນໄດ້ຍ່າງໄປຕາມຖະໜົນ ເປຕະໂລກະລາດ ມຸ່ງໜ້າໄປສູ່ສະຖາບັນ ສະໂມລະນີ ເຊິ່ງເປັນບ່ອນທີ່ກອງບັນຊາການຂອງການລຸກຮື້ນ ເຊິ່ງມີທ່ານເລນິນ ເປັນຫົວໜ້ານັ້ນໄດ້ຕັ້ງຢູ່. ພວກ

ນັກຣຽນນາຍທະຫານໄດ້ພະຍາຍາມທີ່ຈະຍຶກຂົວຂ້າມແມ່ນ້ຳເນວາຂິ້ນ ເພື່ອປ້ອງກັນບໍ່ໃຫ້ໜ່ວຍນັກປ້ອງກັນແດງເຂົ້າມາສູ່ໃຈກາງເມືອງໄດ້. ແຕ່ວ່າມັນເປັນໄປບໍ່ໄດ້ ທີ່ຈະຊຸກດັນ ກະແສຄື້ນຂອງພວກລຸກຮື້ນ ຈຳນວນຫລວງຫລາຍ ໃຫ້ຖອຍຫລັງຄືນໄດ້. ພວກນັກປ້ອງກັນແດງ ໄດ້ບັງຄັບໃຫ້ພວກນັກຣຽນ ນາຍທະຫານ ຖອຍຫລັງຄືນໄປ ແລະກໍຍຶດເອົາຂົວນັ້ນໄວ້ໄດ້.ພວກທະຫານບົກແລະທະຫານເຮືອ ກໍໄດ້ຍ່າງມຸ່ງໜ້າເຂົ້າສູ່ສະຖາບັນ ສະໂມລະນີ ພ້ອມໆດຽວກັນກັບຊາວກຳມະກອນ.ບັນດາຜູ້ຄົນທີ່ບໍ່ມີອາວຸດ ກໍໄດ້ຮັບການແຈກຢາຍປືນເລັກຍາວ ແລະລູກແຕກມື ໃຫ້ຢູ່ທີ່ເດີ່ນສະຖາບັນສະໂມລະນີ.ປືນກົນກໍໄດ້ນຳເອົາອອກຈາກສາງອາວຸດ ຢູ່ບ່ອນນັ້ນຄືກັນ ແລະສະຖາບັນດັ່ງກ່າວກໍໄດ້ຫັນໜ້າໃສ່ຄ້າຍທະຫານ. ຕົ້ນທາງເຂົ້າໄດ້ມີທະຫານປ້ອງກັນໄວ້ ຢ່າງເຂັ້ມແຂງ. ກອງທະຫານມ້າກໍຢືນຢູ່ໃນທ່າກຽມ-ພ້ອມ ທີ່ຈະແລ່ນອອກໄປ ແລະປືນໃຫຍ່ກໍໄດ້ນຳມາຕັ້ງໄວ້ບ່ອນນັ້ນ. ພວກຜູ້ບັງຄັບບັນຊາ ໜ່ວຍທະຫານ ໄດ້ຍ່າງເລາະ ໄປເລາະມາ ຢ່າງຟ້າວຟັ່ງຕາມທາງຍ່າງ ອັນຍາວຍຽດຂອງສະໂມລະນີ. ບາງຄົນໄດ້ຮັບຄຳສັ່ງໃຫ້ໄປສູ້ຮົບ,ສ່ວນຄົນອື່ນເມື່ອໄດ້ຮັບຄຳສັ່ງແລ້ວ ກໍຟ້າວນຳຄຳສັ່ງໄປໃຫ້ນັກຮົບຂອງຕົນປະຕິບັດ. ທ່ານເລນິນພ້ອມທັງພັກພວກຂອງທ່ານ ກໍພວມຊີ້ນຳການປະຕິບັດ ໃຫ້ແກ່ກອງທະຫານຢູ່.ພວກເພິ່ນໄດ້ກວດກາຢ່າງຕັ້ງໃຈ ເພື່ອເບິ່ງວ່າ ແຜນການຂອງການລຸກຂຶ້ນຈັບອາວຸດນັ້ນໄດ້ປະຕິບັດໄປ ຢ່າງຄັກແນ່ຫລືບໍ່. ຂ່າວໄດ້ລາຍງານມາເຖິງວ່າ

ໜ່ວຍປ້ອງກັນແດງໄດ້ປະທະກັບການຕໍ່ຕ້ານຢ່າງຮຸນແຮງຈາກ ຝ່າຍນັກຣາຊານາຍຮ້ອຍທະຫານ. ທັນທີທີ່ໄດ້ຮັບຂ່າວ ກອງທະຫານເຮືອທະເລບັນຕິກ ກໍໄດ້ຖືກສົ່ງໄປຊ່ວຍເຫລືອໃນທັນໃດ. ສ່ວນໃຫຍ່ທີ່ຈະຕ້ອງສືບຕໍ່ບຸກໂຈມຕີຕໍ່ໄປຂ້າງໜ້ານັ້ນຍັງບໍ່ຢຸດ.

ວັນທີ ໒໕ ຕຸລາ, ຂ່າວຄາວທີ່ຊຸ່ມຊື່ນຍິນດີ ກໍໄດ້ເລີ່ມຫລັ່ງໄຫລເຂົ້າມາສູ່ ສະໂມລະນີ ວ່າ:

" ໂທລະເລກ ຍຶດໄດ້ແລ້ວ "

" ສະຖານີລົດໄຟ ຍຶດໄດ້ແລ້ວ "

" ສູນກາງໂທລະສັບ ຍຶດໄດ້ແລ້ວ ".

ເວລານີ້ພາກສ່ວນໃຫຍ່ຂອງຕົວເມືອງ ໄດ້ຖືກຍຶດມາໄວ້ໃນກຳມື ຂອງປະຊາຊົນຜູ້ລຸກຮືຂຶ້ນແລ້ວ. ແຕ່ວ່າ ເພື່ອໃຫ້ການປະຕິວັດ ມີໄຊຊະນະໄດ້ນັ້ນ ມັນຈຳເປັນຕ້ອງຍຶດເອົາພະລາຊະວັງລະດູໜາວ ແລະຈັບລັດຖະບານຊົ່ວຄາວໃຫ້ໄດ້.

ຄະນະລັດຖະມົນຕີ ຂອງລັດຖະບານຊົ່ວຄາວ ໄດ້ປະຊຸມກັນຢູ່ໃນຫ້ອງໜຶ່ງ ຂອງພາລາຊະວັງລະດູໜາວ. ໂທລະສັບໄດ້ມິດງຽບໄປ, ການຕິດຕໍ່ທາງໂທລະເລກກໍຖືກຢຸດສະງັກໄປ-ນັ້ນຄືຄະນະລັດຖະມົນຕີໄດ້ຖືກຕັດຂາດອອກປະເທດທັງໝົດ, ພວກເຂົາຄືກັນກັບຜູ້ຄົນທີ່ຕົກຄ້າງຢູ່ໃນດອນມະຫາສະໝຸດແຫ່ງໜຶ່ງ. ພະລາຊະວັງ ໄດ້ຖືກຫ້ອມລ້ອມໄປດ້ວຍເຄື່ອງຮັກສາຄວາມ - ປອດໄພ ເຊິ່ງມີນາຍທະຫານ ແລະນັກຮຽນນາຍຮ້ອຍທະຫານຢູ່ ກ໔໐ ຄົນ ແລະກໍຖືກຕັ້ງໄວ້ດ້ວຍເຄື່ອງກີດຂວາງຕ່າງໆ . ປືນເລັກຍາວແລະປືນກົນ ໄດ້ຖືກນຳມາຕິດຕັ້ງໄວ້ຕໍ່ໜ້າ ຈະຕູ

ລັດພະລາຊະວັງເຊິ່ງເປັນບ່ອນທີ່ພວກເຂົາໄດ້ຍິງການເດີນຂະບວນ ແບບສັນຕິຂອງຊາວກຳມະກອນ ເມືອວັນທີ ໙ ເດືອນມັງກອນ ປີ ໑໙໐໕. ໃນເວລານັ້ນ ຊາວກຳມະກອນ ໄດ້ພາກັນມາຢືນຄຳຮ້ອງທຸກຕໍ່ພະເຈົ້າຊາ. ແຕ່ເວລານີ້ ມັນເປັນເວລາ ທີ່ຈະຍຶດເອົາອຳນາດມາໄວ້ໃນກຳມືຂອງຕົນ ດ້ວຍການໃຊ້ກຳລັງ.



ເຮືອຮົບປະຫວັດສາດ "ອາວະໂລລາ".

ພວກລູກຮືຂຶ້ນໄດ້ຍິນຄຳຂາດໃຫ້ລັດຖະບານຊົ່ວຄາວຍອມຈຳນົນ ແຕ່ກໍບໍ່ໄດ້ຮັບຄຳຕອບ. ຄັນແລ້ວໃນເວລານັ້ນ ຄຳສັ່ງໃຫ້ບຸກໂຈມຕີພະລາຊະວັງລະດູໜາວ ກໍ່ຍັງໄດ້ມີຂຶ້ນຕາມການຕົກລົງຂອງຄະນະກຳມະການປະຕິວັດ ຝ່າຍທະຫານ. ດັ່ງນັ້ນ ສັນຍານສຽງປືນໃຫຍ່ຈາກເຮືອລົບ ໂອໂລລາ ເພື່ອການບຸກໂຈມ

ຕີກໍໄດ້ດັງຂຶ້ນ. ນັ້ນໝາຍຄວາມວ່າການບຸກໂຈມຕີພະລາຊະວັງ ລະດູໜາວ ໄດ້ເລີ່ມຕົ້ນຂຶ້ນແລ້ວ. ພວກໜ່ວຍປ້ອງກັນແດງ, ທະຫານບົກ ແລະທະຫານເຮືອ ກໍໄດ້ປາກົດຂຶ້ນຕໍ່ໜ້າຈະຕູລັດ ພະລາຊະວັງ. ພວກເຂົາໄດ້ພົບກັບທ່າລູກປືນ ຈາກພວກ ນັກ ຮຽນນາຍຮ້ອຍທະຫານ. ເມື່ອໄດ້ຍິງເບີກທາງແລ້ວ,ພວກລູກ ຮ້ອນ ກໍໄດ້ບຸກເຂົ້າໄປໃກ້ພະລາຊະວັງລະດູໜາວ.ທັນໃດນັ້ນ ລົດຫຸ້ມເກາະກໍໄດ້ມາປະກົດຕົວ ຢູ່ທີ່ຈະຕູລັດ ແລະກໍໄດ້ຍິງປືນ ກົນຂອງມັນອອກໄປ. ອາວ, ບຸກໜ້າຕໍ່ໄປ ! ກະແສຄົນ ຂອງຜູ້ຄົນທັງຫລາຍ ໄດ້ຫຍັບເຂົ້າໃກ້ປະຕູ ພະລາຊະວັງ . ພວກສັດຕູທີ່ລີ້ຊ່ອນຢູ່ບ່ອນກຳບັງ ກໍໄດ້ຍິງໂຕ້ຕອບ. ທ້າຍທີ່ສຸດ ພວກນາຍທະຫານ ແລະພວກນັກຮຽນນາຍຮ້ອຍທະຫານກໍແຕກ ກະຈັດກະຈາຍກັນໄປ. ຫົນທາງເຂົ້າສູ່ພະລາຊະວັງ ລະດູ ໜາວໄດ້ໄຂແລ້ວ. ແຕ່ວ່າ ປະຕູຫລັກຂອງພະລາຊະວັງຍັງ ຖືກອັດໄວ້ຢູ່. ຜູ້ຄົນທັງຫລາຍໄດ້ຊຸກທັ່ງປະຕູຫລັກເຂົ້າໄປ . ຄົນທັນຕໍ່ການຊຸກດັນບໍ່ໄດ້ ປະຕູນັ້ນກໍສັ່ນສະເທືອນແລະຊິກເຫຼັກ ຂອງມັນກໍແຕກອອກ. ພວກລູກຮ້ອນໄດ້ພາກັນໂຫ່ ເຂົ້າໄປໃນ ພະລາຊະວັງລະດູໜາວ ແລະບຸກເຂົ້າໄປໂດຍຜ່ານຫ້ອງເລັກ ນ້ອຍ ແລະຫ້ອງໃຫຍ່ຕ່າງໆ ແລະມຸ່ງໜ້າໄປສູ່ຫ້ອງເຊິ່ງເປັນ ບ່ອນທີ່ຄະນະລັດຖະມົນຕີ ຂອງລັດຖະບານຊົ່ວຄາວລີ້ຢູ່. ເມື່ອ ໄດ້ປົດອາວຸດ ແລະຈັບພວກນັກຮຽນນາຍຮ້ອຍທະຫານ ຜູ້ທີ່ພະ ຍາຍາມຂັດຂວາງຫົນທາງ ຂອງພວກເຂົາແລ້ວ,ພວກລູກຮ້ອນ ກໍໂຫ່ເຂົ້າໄປຍັງຫ້ອງ ເຊິ່ງເປັນບ່ອນທີ່ລັດຖະມົນຕີ ບາງຄົນ

ຢ້ານສິ້ນພວມນັ່ງອ້ອມໂຕະຢູ່. ອັນນີ້ເປັນລັດຖະບານ ສຸດທ້າຍຂອງພວກນາຍທຶນ ແລະພວກເຈົ້າທີ່ດິນລັດເຊຍ–ໄດ້ແກ່ລັດຖະບານຊົ່ວຄາວ. ຜູ້ຄົນທັງຫລາຍໄດ້ຫລຽວເບິ່ງກຸ່ມຄົນໜ້ອຍ ໆ ເຫລົ່ານີ້ ຜູ້ເຊິ່ງຍັງບໍ່ທັນຫາຍຈາກຄວາມຢ້ານກົວ ຕໍ່ການບຸກໂຈມຕີນັ້ນ ດ້ວຍຄວາມຄຽດຊັງ. ອັງໂຕນນອບອົບເຊຍຽນ ໂກຊາວໂບນເຊວິກ ໄດ້ຍ່າງອອກໄປຂ້າງໜ້າແລະເປັ່ງຄຳເວົ້າຂອງເຂົາອອກດ້ວຍສຽງຄ່ອຍໆແລະໜັກແໜ້ນວ່າ "ໃນນາມຄະນະກຳມະການປະຕິວັດ ຝ່າຍທະຫານ ແຫ່ງສະພາໂຊວຽດປະຈຳເມືອງ ເປຕະໂລກະລາດ, ຂ້າພະເຈົ້າຂໍປະກາດ ວ່າລັດຖະບານຊົ່ວຄາວ ໄດ້ຖືກໂຄ່ນລົ້ມລົງແລ້ວ. ພວກທ່ານແມ່ນ–ຖືກຈັບ ".



ການບຸກໂຈມຕີ ພະລາຊະວັງລະດູໜາວ.

ວ.ອິ.ເລນິນພວມປະກາດອຳນາດໂຊວຽດ.

ໃນຕອນແລງວັນທີ ໒໕ ຕຸລາ, ໃນເວລາທີ່ການບຸກໂຈມຕີ ພະລາຊະວັງລະດູໜາວໄດ້ດຳເນີນໄປຢູ່ນັ້ນ, ກອງປະຊຸມໃຫຍ່ ສະພາໂຊວຽດທົ່ວລັດເຊຍ ຄັ້ງທີ II ກໍໄດ້ເລີ່ມຂຶ້ນ. ໂຫລະ ເລກໄດ້ສົ່ງຄຳຮຽກຮ້ອງຂອງກອງປະຊຸມໃຫຍ່ເຖິງ "ຊາວກຳ ມະກອນ, ທະຫານ ແລະຊາວນາ" ທົ່ວປະເທດ. ຄຳຮຽກ ຮ້ອງນີ້ ແມ່ນທ່ານເລນິນເປັນຄົນຂຽນຂຶ້ນ ເຊິ່ງມີເນື້ອ ຄວາມ ວ່າ:

"ໂດຍອີງໃສ່ຄວາມປາຖະໜາ ອັນແຮງກ້າ ຂອງຊາວກຳ ມະກອນ, ທະຫານ ແລະ ຊາວນາ ຈຳນວນຫລວງຫລາຍ , ໂດຍອີງໃສ່ການລຸກຮື້ຂຶ້ນ ທີ່ມີໄຊຊະນະ ຂອງຊາວກຳມະກອນ ແລະ ກອງທະຫານ ເຊິ່ງໄດ້ເກີດຂຶ້ນ ຢູ່ທີ່ເມືອງເປຕະໂລກະ ລາດນັ້ນ, ກອງປະຊຸມໃຫຍ່ ຈຶ່ງຍຶດເອົາອຳນາດມາໄວ້ ໃນມື ຂອງຕົນ .... ກອງປະຊຸມໃຫຍ່ ໄດ້ຕົດສິນໃຈວ່າ:ອຳນາດ ທັງໝົດ ຢູ່ໃນທ້ອງຖິ່ນຕ່າງໆ ແມ່ນມອບໃຫ້ແກ່ສະພາໂຊວຽດ ຂອງຜູ້ແທນຊາວກຳມະກອນ, ທະຫານ ແລະ ຊາວນາ ເຊິ່ງ ຈຳຕ້ອງຮັບປະກັນ ລະບອບປະຕິວັດ ຢ່າງແທ້ຈິງ (ປະມວນ ບົດນິພົນ ເລນິນ ສະບັບສົມບູນ ເຫລັ້ມທີ ໓໕ ໜ້າ ໑໑.

ອຳນາດໂຊວຽດ ແລະ ອຳນາດຂອງຊາວຜູ້ອອກແຮງງານ ແມ່ນໄດ້ເກີດຂຶ້ນມາແນວນັ້ນ. ມະຕິທຳອິດຂອງອົງການຈັດຕັ້ງ ຂັ້ນສູງສຸດ ແຫ່ງອຳນາດໃໝ່-ຄືກອງປະຊຸມໃຫຍ່ ສະພາໂຊ ວຽດທົ່ວລັດເຊຍ ແມ່ນໄດ້ສະແດງໃຫ້ທົ່ວໂລກເຫັນວ່າ ຄວາມ ຫວັງໃນທີ່ສຳຄັນ ຂອງອຳນາດໂຊວຽດນັ້ນ ແມ່ນບໍ່ມີສິ່ງ ໃດ

ຫລາຍໄປກ່ວາຄວາມຫວ່ງໃຍ ກ່ຽວກັບການຢູ່ດີກິນດີ ຂອງປະຊາຊົນຜູ້ອອກແຮງງານ.

ໃນຖານະ ທີ່ ໄດ້ຮັບ ມອບໝາຍ ຈາກຄະນະກຳມະການສູນກາງ ພັກ ແຫ່ງ ຊາວໂບນເຊວິກ ທ່ານ ເລນິນ ໄດ້ກ່າວລາຍງານ ກ່ຽວກັບ ຂໍ້ດຳລັດ ສະບັບ ທຳອິດ ຂອງ ອຳນາດໂຊວຽດ ຕໍ່ ກອງປະຊຸມໃຫຍ່ ນັ້ນ. ເມື່ອຜູ້ນຳ ທີ່ ຍິ່ງ ໃຫຍ່ຂອງ ການປະຕິວັດ ປາກົດຕົວຂຶ້ນ ຢູ່ ທີ່ ເວທີ ປະຊຸມ ໃຫຍ່ນັ້ນ ບັນດາ ຄະນະຜູ້ແທນ ຂອງ ກອງປະຊຸມໃຫຍ່ ກໍໄດ້ ຂານັບ ຮັບຕ້ອນ ດ້ວຍ ການຕົບມື ຢ່າງຟົດຟື້ນ ແລະ ດ້ວຍການກ່າວຮ້ອງ ອອກ ມາ ວ່າ " ອຳນາດ ໂຊວຽດ ຈົ່ງ ໝັ້ນຍືນ ! ຂໍ ຊົມເຊີຍ ເລນິນ ! ເລນິນ ຈົ່ງ ໝັ້ນຍືນ !"

ເລນິນ ໄດ້ສະເໜີ ຕໍ່ ຄະນະຜູ້ແທນ ຂອງ ກອງ ປະຊຸມໃຫຍ່ ໃຫ້ເຮັດ ຄຳຂໍຮ້ອງ ໃນທັນໃດ ໄປຍັງ ຊາວ ຜູ້ອອກ-ແຮງງານ ແລະ ລັດຖະບານ ຂອງ ປະເທດ ທີ່ ເຂົ້າ ຮ່ວມສົງຄາມ ເພື່ອ ໃຫ້ ຍຸຕິ ສົງຄາມ ແລະ ເຊັນ ສັນຍາ ສັນຕິພາບ ທີ່ ມີ ຄວາມຍຸຕິທຳ ຕໍ່ ບັນດາ ປະຊາຊາດ ທົ່ວໂລກ, ສັນຕິພາບ ທີ່ ບໍ່ມີ ການເຮັດໃຫ້ ປະຊາຊາດໜຶ່ງ ເປັນ ຂ້າທາດ ຂອງ ປະຊາຊາດອື່ນ.

ຄະນະຜູ້ແທນ ຂອງ ກອງປະຊຸມໃຫຍ່ ໄດ້ ຕົກລົງຮັບເອົາຂໍ້ດຳລັດ ກ່ຽວກັບ ສັນຕິພາບ ຢ່າງ ເປັນເອກະສັນ. ຫລັງຈາກນັ້ນ ຕາມ ຄຳສະເໜີ ຂອງ ທ່ານເລນິນ ກອງ ປະຊຸມ

ໃຫຍ່ ຂອງ ສະພາໂຊວຽດ ກໍໄດ້ ຮັບຮອງເອົາຂໍ້ດຳລັດກ່ຽວກັບ ທີ່ດິນ. ຂໍ້ດຳລັດ ສະບັບ ນີ້ ໄດ້ ຍົກເລີກ ກຳມະສິດ ທີ່ດິນ ຂອງ ເຈົ້າ ທີ່ດິນ ໄປ. ຊາວນາ ໄດ້ ຮັບທີ່ດິນຫລາຍກ່ວາ ໑໕໐ ລ້ານເຮັກຕາ ເພື່ອໃຊ້ສອຍຢ່າງບໍ່ມີການເສຍຄ່າຕອບແທນແຕ່ຢ່າງໃດ, ນອກຈາກນັ້ນ ພວກເຂົາຍັງໄດ້ຮັບ ອຸປະກອນຕ່າງໆ ຈາກເຈົ້າທີ່ດິນ ເຊິ່ງມີມູນຄ່າຫລາຍກ່ວາ໓໐໐ ລ້ານຫລຽນຄຳ. ຊາວນາຍັງໄດ້ຮັບການປົດປ່ອຍອອກຈາກການເຊົ່າທີ່ດິນ ແລະຄ່າໃຊ້ຈ່າຍໃນການຊື້ທີ່ດິນໃໝ່ ມີມູນຄ່າເຖິງ໗໐໐ ລ້ານຫລຽນຄຳຕໍ່ປີ. ທີ່ດິນພ້ອມທັງຊັບພະຍາກອນ ທຳມະຊາດທັງໝົດ ປ່າໄມ້ແລະນ້ຳ ແມ່ນໄດ້ຖືກຍຶດເປັນຂອງຊາດ. ດ້ວຍເຫດນັ້ນ ຊາວນາຜູ້ເຊິ່ງເປັນພາກສ່ວນປະກອບສ່ວນຫລວງຫລາຍຂອງພົນລະເມືອງ ກໍໄດ້ທີ່ດິນແລະເສລີພາບ ທີ່ຄອຍຖ້າມາເປັນເວລາດົນນານນັ້ນໄປ.

ຄວາມໄຝ່ຝັນມາເປັນເວລາດົນນານ ຂອງຊາວນາ ຜູ້ອອກແຮງງານນັ້ນ ໄດ້ປາກົດເປັນຈິງຂຶ້ນແລ້ວ. ຊາວກຳມະກອນແລະຊາວນາ ໄດ້ກາຍເປັນເຈົ້າຂອງປະເທດຊາດແລ້ວ.ກອງປະຊຸມໃຫຍ່ຂອງສະພາໂຊວຽດ ໄດ້ຈັດຕັ້ງລັດຖະບານ ທຳອິດຂອງຊາວຜູ້ອອກແຮງງານຂຶ້ນໃນໂລກ ຄື ສະພາລັດຖະມົນ ຕີປະຊາຊົນ. ວາລາດີເມຍອິລິດເລນິນ ໄດ້ຖືກແຕ່ງຕັ້ງເປັນຫົວໜ້າລັດຖະບານ ຢ່າງເປັນເອກະສັນ.

ຂ່າວກ່ຽວກັບໄຊຊະນະ ຂອງການລຸກຮືຂຶ້ນຈັບອາວຸດ ຢູ່ທີ່ເມືອງເປຕະໂລກະລາດນັ້ນ ໄດ້ແຜ່ໄປຮອດເມືອງໃຫຍ່ໆ ທັງ

ຫມົດຢ່າງໄວວາ. ໃນທຸກທີ່ນທຸກແຫ່ງຂອງລັດເຊຍຄືໃນຊີບີລີ, ເບໂລລູດເຊຍ, ອາຊີກາງ, ຊູກະລາອີນາ, ເມືອງຕ່າງໆ ເຂດແມ່ນ້ຳໂວນກາ-ອຳນາດໄດ້ຕົກໄປຢູ່ໃນກຳມື ຂອງສະພາ ໂຊວຽດ. ແຕ່ວ່າ ຢູ່ໃນເມືອງຕ່າງໆອີກຫລາຍແຫ່ງນັ້ນ ຊາວຜູ້ອອກແຮງງານ ຈຳຕ້ອງໄດ້ສູ້ຮົບກັບສັດຕູ ຂອງການປະຕິວັດຢ່າງແທ້ຈິງ. ເຊັ່ນ ຢູ່ໃນມົດສະກູ, ການຕໍ່ສູ້ຢ່າງຮຸນແຮງໄດ້ດຳເນີນໄປ ຮອດຫນຶ່ງອາທິດເຕັມໆ.ຫນ່ວຍປ້ອງກັນແດງ, ທະຫານເຮືອຈາກເມືອງເປຕະໂລກະລາດ ແລະຊາວກຳມະກອນຈາກເມືອງທີ່ໃກ້ຄຽງ ໄດ້ຟ້າວມາຊ່ວຍເຫລືອຊາວຜູ້ອອກແຮງງານເມືອງນີ້. ແຕ່ການລຸກຮື້ຂຶ້ນຢູ່ໃນເມືອງມົດສະກູ ກໍໄດ້ຮັບໄຊຊະນະເຊັ່ນດຽວກັນ. ມະຫາປະຕິວັດ ສັງຄົມນິຍົມ ເດືອນຕຸລາ ໄດ້ຮັບໄຊຊະນະ ໄປທົ່ວປະເທດ.

ການປະຕິວັດໄດ້ຮັບໄຊຊະນະ ກໍເພາະວ່າປະຊາຊົນໄດ້ຖືກນຳພາໂດຍ ຊົນຊັ້ນກຳມະກອນປະຕິວັດ ທີ່ມີພັນທະພາບອັນສະຫນິດແຫນ້ນກັບຊາວນາຜູ້ທຸກຍາກ.

ການປະຕິວັດໄດ້ຮັບໄຊຊະນະ ກໍເພາະວ່າ ການຕໍ່ສູ້ຂອງຊາວຜູ້ອອກແຮງງານ ໄດ້ຖືກນຳພາໂດຍ ພັກຂອງຊາວ ໂບນເຊວິກ ເຊິ່ງມີທ່ານເລນິນ ເປັນຫົວຫນ້າ.

ໄຊຊະນະຂອງການປະຕິວັດ ສັງຄົມນິຍົມຢູ່ໃນລັດເຊຍແມ່ນເປັນການໂຫມ່ງບາດຄ້ອນອັນຫນັກ ໃສ່ພັນທະມິດຂອງມັນ ໃນສົງຄາມ-ຄື ອັງກິດແລະຝະລັ່ງ ແລະໃສ່ພວກນາຍທຶນທົ່ວໂລກຄືກັນ. ເຖິງວ່າລັດເຊຍພະເຈົ້າຊາ ເປັນລັດຈັກກະພັດເອງກໍ

ຕາມ, ຄັນເວົ້າເຖິງເລື່ອງເສດຖະກິດແລ້ວ ມັນເປັນປະເທດທີ່ຫລ້າຫລັງ, ໄປຂຶ້ນກັບມະຫາປະເທດຈັກກະພັດທີ່ຈະເລີນຫຼາຍກ່ວາ, ລັດເຊຍສົ່ງຜະລິດຕະພັນ ທາງດ້ານກະເສດອອກເປັນສ່ວນໃຫຍ່, ເຄື່ອງຈັກຫລາຍກ່ວາເຄິ່ງທີ່ນຳມາໃຊ້ໃນປະເທດນັ້ນ ແມ່ນໄດ້ນຳເຂົ້າມາຈາກຕ່າງປະເທດ. ໃນປີ ໑໙໑໗ ວິສາຫະກິດ ໃນຂະແໜງອຸດສາຫະກຳທີ່ສຳຄັນໆ (ການຂຸດຄົ້ນ-ຖ່ານຫີນແລະນ້ຳມັນ, ການຜະລິດເຫລັກ) ທີ່ຕົກເປັນ ຂອງນາຍທຶນຕ່າງດ້າວ ມີຮອດສາມສ່ວນສີ່ ແລະກອງທຶນ ທະນາຄານໃຫຍ່ແຫ່ງລັດເຊຍ ທີ່ນາຍທຶນຕ່າງດ້າວເປັນເຈົ້າຂອງກໍມີຮອດເກືອບເຄິ່ງໜຶ່ງ. ໃນລະຫວ່າງປີ ທີ່ສົງຄາມນັ້ນ ເອກະລາດຂອງລັດເຊຍ ກໍໄປຂຶ້ນຢູ່ກັບພວກພັນທະມິດຂອງມັນ ທີ່ມີຄວາມເຂັ້ມແຂງຫລາຍກ່ວາ. ການປະຕິວັດເດືອນຕຸລາບໍ່ພຽງແຕ່ຂັບໄລ່ ພວກຈັກກະພັດ ພ້ອມທັງກອງທຶນ ຂອງພວກເຂົາອອກໄປເທົ່ານັ້ນ ແຕ່ຍັງເຮັດໃຫ້ແຜນການຂອງພວກມັນ ໃນການເຮັດໃຫ້ລັດເຊຍ ຕົກເປັນຂ້າທາດໃນທີ່ສຸດແລະການແບ່ງປັນ ທີ່ດິນຂອງລັດເຊຍ ໃນລະຫວ່າງພວກເຂົານັ້ນພັງທະລາຍລົງອີກດ້ວຍ. ສ່ວນໃຫຍ່ແລ້ວ, ພວກນາຍທຶນທົ່ວໂລກ ພາກັນຢ້ານກົວວ່າ ແປວໄຟແຫ່ງການປະຕິວັດ ທີ່ເກີດຂຶ້ນຢູ່ໃນ ລັດເຊຍນັ້ນ ຈະແຜ່ລາມໄປສູ່ປະເທດຂອງພວກເຂົາ.

ການປະຕິວັດເດືອນຕຸລາ ໄດ້ເຮັດໃຫ້ການຄອບຄອງ ແບບແບ່ງແຍກບໍ່ໄດ້ ຂອງລັດທິຈັກກະພັດນັ້ນ ສ້ຽງສູດລົງ. ພົນລະເມືອງທີ່ອາໄສຢູ່ໃນໜຶ່ງສ່ວນຫົກດິນແດນຂອງໂລກໄດ້ພາ ກັນ



ວ.ອິ.ເລນິນເມື່ອ ປີ ໑໙໑໗–໑໙໑໘.

ເລີ່ມຕົ້ນສ້າງສາລະບອບສັງຄົມນິຍົມຂຶ້ນ. ໂລກໄດ້ຖືກແບ່ງແຍກອອກເປັນສອງຄ້າຍຄື ຄ້າຍທຶນນິຍົມທີ່ພວມຈະຕາຍຢູ່ແລະຄ້າຍສັງຄົມນິຍົມທີ່ພວມຈະເລີນເຕີບໃຫຍ່ຂຶ້ນ.

ການປະຕິວັດເດືອນຕຸລາ ແມ່ນເປັນຕົວຢ່າງອັນດີເລີດ ໃຫ້ແກ່ການຕໍ່ສູ້ ຂອງຊາວຜູ້ອອກແຮງງານໃນທຸກໆປະເທດ. ການປະຕິວັດນີ້ ໄດ້ຊີ້ທິດທາງໃຫ້ແກ່ພວກເຂົາ ໄປສູ່ໄຊຊະນະແລະການສ້າງສາຊີວິດທີ່ມີເສລີພາບ ແລະຢູ່ດີກິນດີ.

ໃນສອງສາມເດືອນທຳອິດ ແຫ່ງການດຳເນີນງານຂອງຕົນນັ້ນ ລັດຖະບານໂຊວຽດ ທີ່ມີທ່ານເລນິນເປັນຫົວໜ້າ ໄດ້ແກ້ໄຂບັນຫາສຳຄັນ ໃຫ້ແກ່ປະເທດໄປຫລາຍຢ່າງ. ຢູ່ໃນໂຮງຈັກໂຮງງານຕ່າງໆ ກໍໄດ້ຈັດຕັ້ງການກວດກາ ຂອງຊາວ ກຳມະກອນຂຶ້ນ ແລະຊາວຜູ້ອອກແຮງງານ ກໍໄດ້ກະກຽມ ທີ່ຈະເປັນເຈົ້າຂອງທີ່ແທ້ຈິງ ຂອງໂຮງຈັກໂຮງງານ. ສະພາເສດຖະກິດສູງສຸດແຫ່ງຊາດ ກໍໄດ້ຮັບການຈັດຕັ້ງຂຶ້ນ, ທະນາຄານ, ສາຍທາງລົດໄຟ ແລະເຮືອ ພ້ອມໄດ້ຖືກໂອນເປັນຂອງລັດ ແລະການຜູກຂາດຂອງລັດ ໃນທາງການຄ້າພາຍນອກກໍໄດ້ຮັບການຈັດຕັ້ງຂຶ້ນ. ມາຮອດລະດູໃບໄມ້ຫລົ່ນ ປີ ໑໙໑໘ ການໂອນເອົາວິສາຫະກິດໃຫຍ່ໆທັງໝົດ ຂອງປະເທດເຂົ້າເປັນ ຂອງລັດນັ້ນ ສ່ວນໃຫຍ່ແລ້ວໄດ້ສຳເລັດ. ຄວາມຮັ່ງມີທັງໝົດ ຂອງປະເທດ ໄດ້ກາຍເປັນຊັບສົມບັດຂອງປະຊາຊົນ ຜູ້ອອກແຮງງານໄປ. ຢູ່ໃນໂຮງຈັກໂຮງງານຕ່າງໆ ການເຮັດວຽກມື້ລະ ໘ ຊົ່ວໂມງ ກໍໄດ້ນຳມາໃຊ້. ການລາພັກ ໂດຍບໍ່ຕັດເງິນ

ເດືອນ, ການປະກັນໄພຕໍ່ການເຈັບເປັນປ່ວຍໄຂ້ຕໍ່ການສູນເສຍ ຄວາມສາມາດ ໃນການອອກແຮງງານ ແລະການຫວ່າງງານ ກໍໄດ້ຖືກຈັດຕັ້ງຂຶ້ນ.

ລັດຖະບານໂຊວຽດ ໄດ້ເລີ່ມຕົ້ນເຮັດວຽກຂອງຕົນໄປ ໃນ ສະພາບທີ່ຫຍຸ້ງຍາກທີ່ສຸດ. ພວກຂ້າລາຊະການກະຊວງຕ່າງໆ ຂອງລັດຖະບານຊົ່ວຄາວ ທີ່ຖືກໂຄ່ນລົ້ມລົງໄປນັ້ນໄດ້ຂັດຂວາງ ອຳນາດການປົກຄອງ ຂອງຊາວກຳມະກອນແລະຊາວນາ ທຸກ ຢ່າງ. ພວກເຂົາບໍ່ໄດ້ມາສະເໜີຕົວຕໍ່ໂຮງການຂອງຕົນຢ່າງ ໃດຢ່າງໜຶ່ງເລີຍ ແລະກໍທັງໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອໃຫ້ ວຽກງານທັງໝົດ ເກີດສັບສົນຂຶ້ນ. ພວກພະນັກງານ ທະນາ ຄານ ໄດ້ຊຸກເຊື່ອງກະແຈຕູ້ເຊັບໄວ້ ແລະ ກໍໄດ້ເຮັດໃຫ້ການ ຈ່າຍເງິນເດືອນ ແກ່ຊາວກຳມະກອນຊັກຊ້າລົງດ້ວຍເງື່ອນໄຂ ຕ່າງໆ. ພວກນາຍທຶນແລະລູກແຸຫລັງຕີນມືຂອງພວກມັນ — ຄື ພວກຂ້າລາຊະການ ຕ້ອງການທີ່ຈະເຮັດໃຫ້ປະເທດເກີດການ ຈາລະຈົນ ແລະໂຄ່ນລົ້ມອຳນາດການປົກຄອງໂຊວຽດລົງໄປ.

ວັນທີ ໑໘ ພະຈິກ ປີ ໑໙໑໗ ເລນິນໄດ້ຮຽກຮ້ອງຕໍ່ປະຊາ ຊົນ ໃນປະເທດວ່າ :

"ບັນດາສະຫາຍຊາວຜູ້ອອກແຮງງານ ! ພວກທ່ານ ຈົ່ງຈື່ ຈຳໄວ້ວ່າ ເວລານີ້ ພວກທ່ານເອງເປັນຜູ້ປົກຄອງປະເທດ. ບໍ່ ມີຜູ້ໃດຈະມາຊ່ວຍພວກທ່ານ, ຖ້າຫາກພວກທ່ານເອງບໍ່ລວມ-ກັນ ແລະບໍ່ດຳເນີນວຽກງານຂອງລັດ ທີ່ຢູ່ໃນມືຂອງຕົນ ດ້ວຍ ຕົນເອງ. ສະພາໂຊວຽດຂອງພວກທ່ານແມ່ນເປັນອົງການອຳ

ນາຄລັດຕັ້ງແຕ່ດຽວນີ້ໄປ, ເປັນອົງການນິຕິບັນຍັດພ້ອມທັງມີສິດເຕັມສ່ວນ.

ຈົ່ງເຕົ້າໂຮມກັນເຂົ້າ ອ້ອມຂ້າງສຸະພາໂຊວຽດ ຂອງພວກທ່ານ. ຈົ່ງເຮັດໃຫ້ມັນເຂັ້ມແຂງ. ຈົ່ງດຳເນີນວຽກງານຂອງພວກທ່ານເອງ ຕັ້ງແຕ່ຂັ້ນລຸ່ມດ້ວຍຕົນເອງ, ບໍ່ຕ້ອງ ຄອຍຖ້າຜູ້ໃດ " *

ພວກຊາວຜູ້ອອກແຮງງານ ໄດ້ຕອບສະໜອງຕໍ່ຄຳຮຽກ - ຮ້ອງຂອງຜູ້ນຳແຫ່ງຕົນ. ຊາວກຳມະກອນໂຮງງານເມືອງເປຕະໂລກະລາດ ໄດ້ເຂົ້າມາເຮັດວຽກ ຢູ່ໃນກະຊວງແຮງງານປະຊາຊົນ. ພວກພະນັກງານສາຍໂທລະເລກທະຫານ ເຮືອຈາກເມືອງ ກະລົນສະຕາດ-ຄືຖານທັບເຮືອທີ່ຢູ່ໃກ້ງເມືອງເປຕະໂລກະລາດ ກໍໄດ້ເຂົ້າມາຮັບໃຊ້ຢູ່ໃນກະຊວງ ທີ່ແຕ່ກ່ອນເອີ້ນວ່າ ໄປສະນີແລະໂທລະເລກ. ພວກເຂົາໄດ້ເຂົ້າ ມາແທນພະນັກງານເກົ່າ ຜູ້ທີ່ທຳການກໍ່ວິນາສະກຳ ແລະກໍໄດ້ຮັບຜິດຊອບວຽກງານຄະມານາຄົມທາງດ້ານໄປສະນີ ແລະໂທລະເລກ ດ້ວຍມືຂອງພວກເຂົາເອງ. ຂ້າລາຊະການ ທະນາຄານລັດ ໄດ້ປະຕິເສດທີ່ຈະມອບເງິນ ທີ່ຢູ່ໃນຕູ້ເຊັບ ໃຫ້ແກ່ລັດຖະບານໂຊວຽດ. ພວກປ້ອງກັນແດງ ໄດ້ຈັບຜູ້ອຳນວຍການ ທະນາຄານໄປ ດັ່ງນັ້ນ ຂ້າລາຊະການ ໄດ້ຢ້ານກົວ ແລະຈິ່ງໄດ້

----

* ປະມວນບົດນິພົນ ເລນິນ ສະບັບສົມບູນ, ເຫລັ້ມທີ ໓໕ ໜ້າ ໖໖.

ເປີດຕູ້ເຊັບໃຫ້ ໂດຍອີງໃສ່ການສະໜັບສະໜູນ ອັນກ້ວາງຂວາງ ຂອງຊາວຜູ້ອອກແຮງງານ, ອີງການຈັດຕັ້ງ ອຳນາດການປົກຄອງໂຊວຽດ ຈຶ່ງໄດ້ຈັດຫາສະບຽງອາຫານໃຫ້ແກ່ຕົວເມືອງຕ່າງໆໄດ້. ຄອບຄົວຂອງຊາວກຳມະກອນ ກໍໄດ້ຍ້າຍຈາກຫ້ອງໃຕ້ດິນ ອັນປຽກຊຸ່ມ ໄປສູ່ເຮືອນຊານຂອງພວກຮັ່ງມີ.

ລັດຖະບານໂຊວຽດ ໄດ້ລົບລ້າງເງິນກູ້ທັງໝົດ ທີ່ພະເຈົ້າຊາ ແລະລັດຖະບານຊົ່ວຄາວ ໄດ້ເຮັດສັນຍາໄວ້ກັບພວກນາຍທຶນຕ່າງດ້າວ ແລະນາຍທຶນລັດເຊຍ.

ປະເທດໄດ້ຫລຸດພົ້ນອອກຈາກຫາບໜີ້ສິນລັດເຊິ່ງກູ້ຢືມຈາກຕ່າງປະເທດ ມີຈຳນວນຮອດ ໑໖ ຕື້ຫລຽນ ແລະເງິນກູ້ພາຍ-ໃນຮອດ ໑໗ ຕື້ຫລຽນຄຳ.

ຂໍ້ກຳລັດຕ່າງໆ ຍົກເລີກຕຳແໜ່ງແລະຊັ້ນທັງໝົດອັນເກົ່າແກ່ ແລະຈັດຕັ້ງຄວາມສະເໝີພາບ ລະຫວ່າງຊາຍ ກັບ ຍິງ ແລະຄວາມສະເໝີພາບ ຂອງບັນດາປະຊາຊາດຕ່າງໆໃນປະເທດ ກໍໄດ້ຮັບການຈັດຕັ້ງຂຶ້ນດຸກັນ.

ຄະນະກຳມະການພິເສດ ທົ່ວລັດເຊຍ (ເວເຊກາ) ເຊິ່ງມີທ່ານ ຟ.ແອ.ດະເຊລະຊິນຊະກີ ເປັນຫົວໜ້າກໍໄດ້ຮັບການຈັດຕັ້ງຂຶ້ນ ເພື່ອຕໍ່ສູ້ຕ້ານພວກນັກກໍ່ວິນາສະກຳ ແລະພວກຕ້ານປະຕິວັດ. ສານຍຸຕິທຳປະຊາຊົນ ແລະຕຳຫລວດປະຊາຊົນ ກໍໄດ້ຮັບການຈັດຕັ້ງຂຶ້ນ. ຢູ່ໃນກອງທັບ ອຳນາດ ແມ່ນມອບໄວ້ໃນກຳມືຂອງສະພາໂຊວຽດ ຝ່າຍທະຫານ. ຕົວແທນຂອງຊາວກຳມະກອນ ແລະຊາວນາ ໄດ້ຮັບການແຕ່ງຕັ້ງ ໃຫ້ຢູ່ໃນ ຕຳ

ແທນ່ງຜູ້ບັງຄັບບັນຊາ.

ຊາວຜູ້ອອກແຮງງານ ແຫ່ງລັດເຊຍໂຊວຽດ ພວມໄດ້ສ້າງຊີວິດໃໝ່ ຂອງຕົນຂຶ້ນມາ ໃນສະພາບການອັນຫຍຸ້ງຍາກຢ່າງບໍ່ເຄີຍມີປົກຄຽນມາກ່ອນເລີຍ.ແລະໂດຍວເລາດຽວກັນ ນັ້ນພວກສັດຕູຂອງລັດຊາວກຳມະກອນແລະຊາວນາ ກໍໄດ້ກະກຽມເພື່ອການຕໍ່ສູ້ດ້ວຍອາວຸດ ຕ້ານສາທາລະນະລັດໂຊວຽດທີ່ໜຸ່ມນ້ອຍຄືກັນ.

ການແຊກແຊງທາງທະຫານ ຂອງຕ່າງດ້າວ

ໃນມື້ທຳອິດຂອງການກຳເນີດຂຶ້ນຂອງຕົນນັ້ນລັດຖະບານໂຊວຽດ ໄດ້ສະເໜີໄປຍັງລັດຖະບານ ຂອງປະເທດທີ່ເຂົ້າຮ່ວມສົງຄາມ ໃຫ້ເຮັດສັນຍາສັນຕິພາບ ແບບທີ່ມີຄວາມຍຸຕິທຳ.ລັດຖະບານອັງກິດແລະຝະລັ່ງ ບໍ່ໄດ້ຕອບຂໍ້ສະເໜີນີ້.ລັດຖະບານເຢຍລະມັນ ໄດ້ຕົກລົງເຮັດສັນຍາສັນຕິພາບ, ແຕ່ກໍໄດ້ ຮຽກຮ້ອງໃຫ້ໂຮມເອົາດິນແດນ ທີ່ກອງທະຫານເຢຍລະມັນ ຍຶດໄດ້ຈາກລັດເຊຍ ໃນລະຫວ່າງສົງຄາມນັ້ນເຂົ້າເປັນຂອງເຢຍລະມັນ. ການເຈລາຈາໄດ້ແກ່ຍາວອອກໄປ. ຫົວໜ້າ ຄະນະຜູ້ແທນໂຊວຽດ ໃນການເຈລາຈານັ້ນ ຄື ທ່ານຕະລົດສະກີ ລະເມີດຄຳຊີ້ນຳ ຂອງເລນິນ ແລະໄດ້ປະກາດວ່າ ສາທາລະນະລັດໂຊວຽດ ປະຕິເສດທີ່ຈະລົງນາມ ສັນຍາສັນຕິພາບ ຕາມ

ເງື່ອນໄຂຂອງເຢຍລະມັນທີ່ໄດ້ສະເໜີນັ້ນ,ແລະອັນນັ້ນບໍ່ພຽງແຕ່ຈະມີສົງຄາມຕໍ່ໄປເທົ່ານັ້ນ ແຕ່ມັນຍັງຈະສືບຕໍ່ທຳລາຍກອງທັບອີກດ້ວຍ.

ຝ່າຍເຢຍລະມັນ ຄັນໄດ້ສວຍໃຊ້ເອົາການທັກຫລັງຂອງຕະລົດສະກີແລ້ວ ກໍໄດ້ເລີ່ມບຸກໂຈມຕີຕາມແນວຣົບທັງໝົດ.ກອງທັບເກົ່າທີ່ຊຳລຸດຊຸດໂຊມຢູ່ແລ້ວນັ້ນ ບໍ່ສາມາດຈະທຳການຕ້ານທານການບຸກໂຈມຕີຂອງສັດຕູໄດ້. ໃນເວລານັ້ນກອງທັບໃໝ່ຍັງບໍ່ທັນໄດ້ຈັດຕັ້ງຂຶ້ນເທື່ອ. ເຢຍລະມັນໄດ້ເຄື່ອນກອງ ທະຫານຂອງຕົນ ໄປສູ່ເມືອງເປຕະໂລກະລາດ, ແລະ ກໍໄດ້ຍຶດເອົາເມືອງປະສະກົບ. ພວກເຈົ້າທີ່ດິນແລະພວກນາຍທຶນທີ່ຖືກການປະຕິວັດຂອງປະຊາຊົນໂຄ່ນລົ້ມລົງນັ້ນກໍໄດ້ມີຄວາມຊື່ນຊົມຍິນດີ. ພວກເຂົາບໍ່ສາມາດທີ່ຈະກັບຄືນໄປຫາອຳນາດ ທີ່ດິນແລະໂຮງຈັກໂຮງງານ ທີ່ສູນເສຍໄປນັ້ນ ແລະກໍຫວັງວ່າມີແຕ່ຫອກປາຍປືນຕ່າງປະເທດເທົ່ານັ້ນ ຈິ່ງສາມາດປາບປາມການປະຕິວັດໄດ້. ການນາບຂູ່ອັນໜ້າຢ້ານກົວ ໄດ້ແຂວນຫ້ອຍ ຢູ່ເທິງລັດເຊຍໂຊວຽດແລ້ວ. ໃນນາມລັດຖະບານ ເລນິນ ໄດ້ປະກາດວ່າ "ປິຕຸພູມສັງຄົມນິຍົມ ໄດ້ຕົກຢູ່ໃນ ອັນຕະລາຍແລ້ວ !" ແລະກໍໄດ້ຮຽກຮ້ອງໃຫ້ຊາວຜູ້ອອກແຮງງານ ທັງໝົດ ໃດ້ທຳການປ້ອງກັນປິຕຸພູມ ສັງຄົມນິຍົມໄວ້. ພັກຂອງຊາວໂບນເຊວິກ ແລະລັດຖະບານໂຊວຽດ ໄດ້ສ້າງ ກອງທັບແດງປະຕິວັດຂຶ້ນມາ ຢ່າງຮີບດ່ວນ. ໃນວັນເວລາ ອັນໜັກໜ່ວງເຊັ່ນນີ້ ເລນິນໄດ້ເຮັດວຽກ ຢ່າງບໍ່ໄດ້ຫລັບ ໄດ້ນອນ.

ທ່ານໄດ້ກ່າວຄຳປາໄສຕໍ່ຫນ່ວຍທະຫານ ຊາວກຳມະກອນ, ໄດ້ແນະນຳຜູ້ບັງຄັບບັນຊາກອງທັບແດງ ແລະໄດ້ຄິດເຖິງວ່າ ຈະໃຫ້ເຄື່ອງແບບ ແລະປະກອບອາວຸດແກ່ກອງທັບແນວໃດ. ພາຍຫລັງສົງຄາມ ປະເທດໄດ້ຕົກຢູ່ໃນສະພາບທີ່ເສື່ອມໂຊມ, ບໍ່ມີຮອດນ້ຳມັນເຊື້ອໄຟ. ຜູ້ຄົນທັງຫລາຍໄດ້ຢືນເຂົ້າແຖວເປັນເວລາຫລາຍຊົ່ວໂມງ ເພື່ອຮັບເອົາເຂົ້າຈີ່ ໑໐໐ ກະລາມ ຫລືບາງຄັ້ງກໍໄດ້ພຽງແຕ່ ໕໐ ກະລາມເທົ່ານັ້ນ. ແຕ່ຊາວຜູ້ອອກແຮງງານ ກໍໄດ້ກະກຽມທີ່ຈະນຳເອົາຄວາມສຸກສ່ວນຕົວ ໄປປ້ອງກັນອຳນາດການປົກຄອງໂຊວຽດ ຂອງຕົນໄວ້. ເຖິງວ່າທະຫານແດງຈະມີການຝຶກຊ້ອມ ມາຢ່າງບໍ່ດີ, ປະກອບອາວຸດທີ່ຫລ້າສະໄຫມ ແລະນຸ່ງເຄື່ອງເກົ່າໆກໍຕາມ ພວກເຂົາກໍໄດ້ຕໍ່ສູ້ຢ່າງບໍ່ຢ້ານກົວໃດໆ ແລະກໍໄດ້ຮັບໄຊຊະນະມາ.

ການສູ້ຮົບຄັ້ງທຳອິດ ໄດ້ເກີດຂຶ້ນໃກ້ໆເມືອງປະສະກົບແລະນາລະວາ. ການບຸກໂຈມຕີຂອງເຢຍລະມັນ ຕໍ່ ເປຕະໂລກະລາດ ກໍໄດ້ຢຸດສະງັກລົງ ໃນເວລານັ້ນ. ອັນນີ້ໄດ້ເກີດຂຶ້ນເມື່ອວັນທີ ໒໓ ກຸມພາ ປີ ໑໙໑໘. ຕັ້ງແຕ່ນັ້ນມາ ວັນທີ ໒໓ ກຸມພາ ຈຶ່ງກາຍເປັນມື້ບຸນ ໃນສະຫະພາບໂຊວຽດໃນຖານະເປັນມື້ກຳເນີດເກີດຂຶ້ນ ຂອງກອງທັບແດງ.

ການໂຕ້ຕອບທີ່ກອງທັບແດງຫນຸ່ມ ໄດ້ມີແກ່ພວກຮຸກຮານນັ້ນແມ່ນໄດ້ບັງຄັບໃຫ້ລັດຖະບານເຢຍລະມັນ ຮື້ຟື້ນການເຈລະຈາກ່ຽວກັບການເຊັນສັນຍາສັນຕິພາບຄືນໃຫມ່. ໃນວັນທີ ໓ ມີນາ ປີ ໑໙໑໘ ສົນທິສັນຍາສັນຕິພາບ ກໍໄດ້ເຊັນກັນຢູ່ທີ່ເມືອງ ບະ

ເລັດ. ສົນຍານີ້ ແມ່ນເຮັດໃຫ້ສາທາລະນະລັດໂຊວຽດ ເສຍຫາຍ. ໂຊວຽດໄດ້ເສຍດິນແດນໄປບາງພາກສ່ວນເຊິ່ງມີພື້ນທີ່ປະມານ ໑ ລ້ານກິໂລແມດມົນທົນ ໃນນັ້ນກໍມີເຂດບັນຕິກແລະບາງພາກສ່ວນຂອງເບໂລລູດເຊຍ ແລະອູກະລາອີນາ. ຢ່າງໃດກໍຕາມ ບໍ່ວ່າສົນຍາສັນຕິພາບ ບະເລັດ ຈະເຮັດໃຫ້ ໂຊວຽດເສຍຫາຍ ໄປຫລາຍປານໃດກໍຕາມ, ມັນກໍຍັງມີ ຄວາມຫມາຍສຳຄັນທີ່ຍິ່ງໃຫຍ່ ໃຫ້ແກ່ປະເທດໂຊວຽດຢູ່. ສາທາລະນະລັດ ທີ່ຫນຸ່ມນ້ອຍຂອງໂຊວຽດ ໄດ້ຖອນຕົວອອກຈາກ ສົງຄາມໂລກຄັ້ງທີ່ຫນຶ່ງ ຢ່າງເປັນທາງການ ແລະໄດ້ຮັບການພັກຜ່ອນ ເປັນໄລຍະເວລາສັ້ນໆ ເພື່ອເຮັດໃຫ້ລັດໂຊວຽດ ແລະກອງທັບແດງ ມີຄວາມເຂັ້ມແຂງ.

ກອງປະຊຸມໃຫຍ່ພັກຄັ້ງທີ VII ໃນເດືອນມີນາປີ ໑໙໑໘ ໄດ້ຕົກລົງຮັບເອົາຊື່ໃຫມ່ ຂອງພັກວ່າ. ພັກກອມມູນິດລັດເຊຍ (ໂບນເຊວິກ)ຕາມຄຳແນະນຳຂອງເລນິນ.ເລນິນໄດ້ເລັ່ງໃສ່ເລື່ອງນີ້ກໍເພາະທ່ານຖືວ່າຊື່ຂອງພັກນັ້ນຄວນຈະສະແດງ ເປົ້າຫມາຍອັນສຸດທ້າຍຂອງພັກອອກແລະກໍເພື່ອວ່າຢາກຈະ ເນັ້ນຄວາມແຕກຕ່າງຂອງພັກອອກໄປຈາກພັກຕາເວັນຕົກ ເຊິ່ງມີຊື່ວ່າສັງຄົມປະຊາທິປະໄຕແລະເຮັດໃຫ້ຊື່ນັ້ນເສື່ອມເສຍແກ່ລັດທິມາກແລະຖືກຊັກດຶງເອົາໄປໂດຍຊົນຊັ້ນນາຍທຶນ*.

----

* ພາຍຫລັງການສ້າງຕັ້ງ ສະຫະພາບໂຊວຽດ ໃນປີ ໑໙໒໒ ແລ້ວ ພັກກໍໄດ້ມີຊື່ວ່າ ພັກກອມມູນິດທົ່ວລັດເຊຍ(ໂບນເຊວິກ)



ການຍົກພົນຂຶ້ນບົກຂອງກອງທະຫານອັງກິດ
ທີ່ອາລະຮັງແກນສະກະເມື່ອ ປີ ໑໙໑໘.

ການທົດສອບໃໝ່ໆໄດ້ຄອຍຖ້າປະຊາຊົນແລະກອງທັບແຫ່ງສາທາລະນະລັດໂຊວຽດ ທີ່ໜຸ່ມນ້ອຍຢູ່. ພວກນາຍທຶນທົ່ວໂລກພາກັນຢ້ານກົວການປະຕິວັດ. ທ່ານເລນິນໄດ້ກ່າວວ່າ " ພວກເຂົາມີແນວຄິດອັນໜຶ່ງ ຄື ປ້ອງກັນບໍ່ໃຫ້ໝັດໄຟຂອງ ພວກເຮົາຕົກໃສ່ຫລັງຄາເຮືອນຂອງພວກເຂົາ" *. ເປົ້າໝາຍ

ແລະພາຍຫລັງການສ້ຽງສຸດຂອງມະຫາສົງຄາມປ້ອງກັນປິຕຸພູມ ແລ້ວກໍມີຊື່ວ່າ ພັກກອມມູນິດ ແຫ່ງສະຫະພາບໂຊວຽດ.

* ປະມວນບົດນິພົນເລນິນສະບັບສົມບູນເຫຼັ້ມທີ ໓໕ ໜ້າ ໓໘໔.

24/VII
ຫ້າມຈຳໜ່າຍ

ການຍິງເປົ້າຄະນະປົກຄອງເມືອງບາກູ ໒໖ ຄົນ.

ຂອງພວກນາຍທຶນ ກໍຄືທຳລາຍສາທາລະນະລັດໂຊວຽດ ແລະມອດໄຟຂອງລັດທິສັງຄົມນິຍົມສາກົນນັ້ນລົງ.ຍິ່ງໄປກ່ວານັ້ນ , ພວກນາຍທຶນອັງກິດ,ຝະລັ່ງແລະປະເທດອື່ນໆກໍ່ຕ້ອງການຢາກຈະໄດ້ໂຮງຈັກໂຮງງານຕ່າງໆຄືນໃຫ້ແກ່ຕົນເຊິ່ງພວກເຂົາມີຢູ່ໃນລັດເຊຍ ກ່ອນການປະຕິວັດ. ພວກຮຸກຮານຕ່າງດ້າວ ໄດ້ເຊື່ອໝັ້ນວ່າ ພວກເຂົາຈະໄດ້ໄຊຊະນະຢ່າງວ່ອງໄວ ຕໍ່ລັດເຊຍໂຊວຽດ.ພວກເຂົາໄດ້ເວົ້າວ່າ"ພວກເຮົາສາມາດ ເອົາຊະນະພວກໂບນເຊວິກໄດ້ຢ່າງງ່າຍດາຍ,ລັດເຊຍໂຊວຽດໄດ້ຮັບຄວາມເສຍຫາຍຈາກສົງຄາມແລະມັນກໍມີອາວຸດ ແລະເຂົ້າກິນເຫລືອຢູ່ໜ້ອຍດຽວ.ຊາວລັດເຊຍຈະຕ້ອງຍອມຈຳນົນນັ້ນຕໍ່ຄວາມເມດຕາ ຂອງພວກເຮົາຢ່າງໄວວາ ".

ໃນລະດູໃບໄມ້ປົ່ງປີ ໑໙໑໘ ເຮືອລົບອາເມລິກາ ແລະອັງກິດໄດ້ມຸ່ງໜ້າເຂົ້າສູ່ຝັ່ງທະເລໂຊວຽດໃນພາກເໜືອແລະທ່າເຮືອໃຫຍ່ທາງດ້ານພາກເໜືອຄືອາລະຄັງແກນສະກະ ແລະມູລານະສະກະກໍໄດ້ຖືກທະຫານອາເມລິກາແລະອັງກິດຍຶດເອົາ.

ຄັນໄດ້ລະເມີດມາດຕາ ຂອງສັນຍາສັນຕິພາບ ບະເລັດນັ້ນແລ້ວ,ທະຫານເຢຍລະມັນກໍໄດ້ຍຶດເອົາພື້ນທີ່ຂອງໂຊວຽດຕໍ່ໄປອີກ ໃນນັ້ນ ກໍມີເຂດກະລີມ ແລະ ເຂດແມ່ນ້ຳໂດນ.

ກອງທະຫານອັງກິດ ໄດ້ຮຸກຮານເຂດພູກາວະກາດ ແລະອາຊີກາງ. ພາຍໃຕ້ການຊ່ວຍເຫລືອ ຂອງພວກເຂົານັ້ນພວກນາຍທຶນທ້ອງຖິ່ນ ກໍໄດ້ໂຄ່ນລົ້ມ ອຳນາດໂຊວຽດໃນອາເຊລະໄບຊານລົງ.

ໂດຍອີງໃສ່ການຊ່ວຍເຫລືອແລະການສະໜັບສະໜູນຂອງພວກຈັກກະພັດຕ່າງດ້າວນັ້ນ ພວກນາຍທຶນແລະເຈົ້າທີ່ດິນ ແຕ່ເກົ່າກ່ອນ ໃນທ້ອງຖິ່ນຕ່າງໆຫລາຍແຫ່ງ ໃນປະເທດກໍໄດ້ໂງຫົວຂຶ້ນມາ. ພວກເຂົາໄດ້ສ້າງກອງທັບທີ່ໃຫຍ່ໂຕຂຶ້ນເຊິ່ງເອີ້ນວ່າ ໜ່ວຍປ້ອງກັນຂາວ. ກອງທັບເຫລົ່ານີ້ ແມ່ນໄດ້ຖືກນຳພາໂດຍ ບັນດານາຍພົນຂອງພະເຈົ້າຊາ ແຕ່ເກົ່າກ່ອນ.ພວກສັດຕູຂອງການປະຕິວັດ ສັງຄົມນິຍົມ ໄດ້ຍຶດຄອງພາກ ສ່ວນໃຫຍ່ຂອງປະເທດໄວ້. ລັດໂຊວຽດທີ່ໜຸ່ມນ້ອຍແມ່ນໄດ້ຖືກປິດລ້ອມຈາກພວກສັດຕູ.

ພວກໜ່ວຍປ້ອງກັນຂາວ ແລະພວກຣຸກຣານຕ່າງດ້າວ ໄດ້ຈັດຕັ້ງລະບອບການປົກຄອງເກົ່າຂຶ້ນ ໃນເຂດທີ່ພວກເຂົາ ຍຶດຄອງໄດ້. ກ່ອນອື່ນໝົດ ພວກເຂົາໄດ້ຄືນອຳນາດ,ທີ່ດິນແລະໂຮງຈັກໂຮງງານຕ່າງໆ ໃຫ້ແກ່ພວກເຈົ້າທີ່ດິນແລະພວກນາຍທຶນ. ພວກໜ່ວຍປ້ອງກັນຂາວ ໄດ້ຊ່ວຍເຫລືອໃຫ້ພວກ ຣຸກຣານຕ່າງດ້າວ ປຸ້ນສະດົມປະເທດ. ບັນດາລົດໄຟໄດ້ບັນທຸກເຂົ້າກິນ, ນ້ຳຕານ, ນ້ຳມັນເບີ ແລະຖ່ານຫີນຈາກອູກະລາອີນາ ໄປຍັງເຢຍລະມັນ. ໃນທາງດ້ານພາກເໜືອ ແລະເຂດຕາເວັນອອກໄກ ພວກທະຫານອາເມລິກາ, ອັງກິດແລະຍີ່ປຸ່ນກໍໄດ້ເລີ່ມຕົ້ນຕັດປ່າໄມ້ ແລະອົບເອົາຄຳ ແລະອົບສັດ ທີ່ມີລາຄາແພງໜີໄປ.

ພວກຣຸກຣານຕ່າງດ້າວພ້ອມທັງພວກນາຍທຶນລັດເຊຍ,ອູກະລາອີນາ ແລະພວກນາຍທຶນອື່ນ ໄດ້ປາບປາມຊາວຜູ້ອອກແຮງ

ງານຢ່າງໂຫດຮ້າຍປ່າເຖື່ອນ.ລູກໄດ້ຕົມໄປດ້ວຍຜູ້ຄົນ ທີ່ຖືກກັກຂັງ. ຊາວກຳມະກອນ ແລະຊາວນາຫລາຍພັນຄົນ ໄດ້ຖືກປະຫານຊີວິດ. ພວກນັກເພັດຊະຄາດ ໄດ້ປະຕິບັດຕໍ່ຊາວກອມມູນິດ ຢ່າງປ່າເຖື່ອນເປັນພິເສດ. ພວກເຂົາໄດ້ຖືກທໍລະມານໂດຍວິທີການຕ່າງໆ ຢ່າງໜ້າຢ້ານກົວ ຄື ໄດ້ປາດໜ້າເອິກຂອງພວກເຂົາອອກເປັນດາວຫ້າແຈ, ໄດ້ເຈາະຕາທັງ ສອງ ແລະຕັດລີ້ນອອກ. ເຊລະກາຢາ ລາໂຊ ຜູ້ນຳທີ່ກ້າຫານຂອງກອງຫລອນ ແຫ່ງຊາວກອມມູນິດ ພາກຕາເວັນອອກໄກໄດ້ຖືກເຕະ ແລະທຸບຕີ ໃຫ້ສະຫລົບໄປແລ້ວ ກໍຖືກເຜົາໄຟ ໃນເຕົາລົດໄຟ. ບັນດາຜູ້ນຳ ໔໕ ຄົນ ຂອງອຳນາດໂຊວຽດ ໃນອາເຊລະໄບຊານ ແລະໃນຈຳນວນນັ້ນ ກໍມີຊາວກອມມູນິດ ເຊັ່ນຊາອູມຽນ, ຢາປາລິດະເຊ, ຟີໂອເລຕົບ ອາຊິສະເບກົບ ຜູ້ເປັນລູກສິດ ແລະເພື່ອນຮ່ວມງານຂອງເລນິນ ໃນການຕໍ່ສູ້ປະຕິວັດ ກໍໄດ້ຖືກຍິງເປົ້າ ໂດຍບໍ່ມີການຕັດສິນຂອງສານ.

ໂດຍພະຍາຍາມທີ່ຈະສັງຫານຊີວິດຂອງຜູ້ນຳພັກ ແລະ ຫົວໜ້າລັດໂຊວຽດ ທີ່ໜຸ່ມນ້ອຍ, ພວກແອແສຣ໌ກໍໄດ້ທຳການພະຍາຍາມ ລອບສັງຫານຊີວິດຂອງທ່ານເລນິນ ດັ່ງນັ້ນໃນເດືອນສິງຫາ ປີ ໑໙໑໘ ທ່ານຈຶ່ງໄດ້ຮັບບາດເຈັບ ຢ່າງສາຫັດ.

ແຕ່ວ່າ ບໍ່ມີກຳລັງໃດໃນໂລກ ທີ່ຈະມາທັບມ້າງຊາວກອມມູນິດໄດ້. ຢູ່ໃນເຂດທີ່ສັດຕູຍຶດຄອງນັ້ນ ພວກເຂົາ ໄດ້ຈັດຕັ້ງໜ່ວຍກອງຫລອນຂຶ້ນ, ແລະໄດ້ເຮັດໃຫ້ຊາວຜູ້ອອກແຮງງານເຂົ້າຮ່ວມໃນການຕໍ່ສູ້ ຕ້ານພວກຝັ່ນປະຕິວັດ.ພາຍໃຕ້ການນຳ

ພາຂອງ ດະເຊລະຊິນສະກີ ຄວາມພະຍາຍາມ ຂອງພວກແອ ແສຣ໌ ທີ່ຈະລຸກຂຶ້ນກໍ່ຄວາມບໍ່ສະຫງົບ ຕ້ານອໍານາດໂຊວຽດ ຢູ່ ໃນມິດສະກູ ແລະຢາໂລສະລາບນັ້ນກໍໄດ້ຖືກປາບປາມລົງ.

ເພື່ອເປັນການຕອບສະໜອງ ຕໍ່ຄໍາຮຽກຮ້ອງຂອງພັກກອມ ມູນິດນັ້ນ ຊາວກໍາມະກອນແລະຊາວນາ ຫລາຍລ້ານຄົນ ກໍໄດ້ ພາກັນລຸກຂຶ້ນ ເພື່ອປ້ອງກັນອໍານາດໂຊວຽດໄວ້.ຢູ່ໃນກອງທັບ ແດງນັ້ນ ກໍໄດ້ມີການສ້າງຕັ້ງກອງພັນແລະກອງພົນໃຫມ່ຂຶ້ນ . ຄະນະກໍາມະການສູນກາງ ພັກກອມມູນິດ ທີ່ມີທ່ານເລນິນເປັນ ຫົວຫນ້ານັ້ນ ກໍໄດ້ຊີ້ນໍາການປະຕິບັດ ການທະຫານທຸກຢ່າງ.ມີ ຄາລິນ ຟະລຸນເຊ, ວາຊີລີ ບະລຸກເຄລະ, ນິໂກລາຍ ໂຊລະ ສະ, ກະລິເມດ ໂວໂລຊີລົບ, ຊາເມນບູເດນນີ, ມິຄາອິນ ຕູຄາເຊບສະກີ, ປານຟາບະລີຊີຊູດ ແລະຊາວກອມມູນິດ ຄົນ ອື່ນໆ ກໍໄດ້ກາຍເປັນຜູ້ນໍາ ທີ່ສະຫລາດຂອງກອງທັບແດງ.

ຫົວຫນ້າຝ່າຍການເມືອງປະຈໍາກອງທັບ ເຊິ່ງພັກໄດ້ສົ່ງໄປ ຍັງກອງພັນ, ກອງພົນນ້ອຍ ແລະກອງພົນໃຫຍ່ຕ່າງໆ ແຫ່ງ ກອງທັບແດງນັ້ນ ໄດ້ຊ່ວຍຜູ້ບັງຄັບບັນຊາ ສ້າງຄວາມສາມັກຄີ ແລະອົບຮົມຝຶກຝົນທະຫານແດງ ໄດ້ເປັນຢ່າງດີ.

ສະມາຊິກສະຫະພັນຊາວຫນຸ່ມກອມມູນິດ–ຄື ຊາວຫນຸ່ມ ກົມ ໂຊໂມນນັ້ນ ກໍໄດ້ຕໍ່ສູ້ຄຽງບ່າຄຽງໄຫລ່ ກັບຊາວກອມມູນິດ ຢູ່ ໃນຖັນແຖວແນວຫນ້າຄືກັນ. ຢູ່ທີ່ຫນ້າປະຕູຂອງສໍານັກງານຄະ ນະກໍາມະການຊາວຫນຸ່ມກົມໂຊໂມນຫລາຍແຫ່ງ ໄດ້ປາກົດມີ ການຂຽນປ້າຍຕິດໄວ້ຢູ່ເລື້ອຍໆວ່າ: "ຄະນະກໍາມະການ ໄດ້

ອັດ. ທຸກໆຄືນໄດ້ອອກໄປແນວໜ້າໝົດ".

ປະຊາຊົນ ຂອງປະເທດໂຊວຽດ ບໍ່ໄດ້ຢູ່ໂດດດ່ຽວເລີຍໃນການຕໍ່ສູ້ຂອງຕົນ. ຊາວກອມມູນິດອັງກິດ, ຝະລັ່ງ, ເຢຍລະມັນ ແລະໃນປະເທດທຶນນິຍົມຕ່າງໆ ກໍໄດ້ກະທໍາການຕໍ່ສູ້ເຂົ້າໃນການປ້ອງກັນລັດ ຂອງຊາວກໍາມະກອນ-ຊາວນາທໍາອິດໃນໂລກຄືກັນ. ພວກເຂົາໄດ້ຮຽກຮ້ອງລັດຖະບານ ຂອງຕົນ ວ່າ "ຈົ່ງໄດ້ວາງມືອອກຈາກລັດເຊຍໂຊວຽດ !" ຊາວກໍາມະກອນໃນໂຮງງານຜະລິດອຸປະກອນສົງຄາມ ໄດ້ປະຕິເສດ ທີ່ຈະຜະລິດອາວຸດໃຫ້ແກ່ທະຫານຂາວ ແລະກໍາມະກອນແບກຫາບກໍປະຕິເສດ ທີ່ຈະນໍາເອົາອາວຸດເຫລົ່ານັ້ນ ຂຶ້ນໃສ່ກໍາປັນ.ພວກລູກເຮືອ ກໍປະຕິເສດທີ່ຈະເດີນເຮືອ ທີ່ມີອຸປະກອນສົງຄາມໄປໃຫ້ແກ່ສັດຕູ ຂອງປະເທດໂຊວຽດ. ພວກທະຫານບົກ ແລະທະ-ຫານເຮືອຕ່າງດ້າວ ກໍໄດ້ປະຕິເສດ ທີ່ຈະທໍາການຕໍ່ສູ້ຕ້ານປະເທດໂຊວຽດເລື້ອຍໆຫລາຍຂຶ້ນ.

ພວກຊາວຮູ່ງກາລີ, ລູມານີ, ເຊັກ, ເຊີເບຍ, ອີຕາລີ ແລະຊາວຜູ້ອອກແຮງງານຈີນຊາດອື່ນ ຜູ້ເຊື່ອງຮູ້ວ່າຕົນເອງຕົກຢູ່ໃນສົງຄາມໂລກ ໃນປະເທດລັດເຊຍແລ້ວນັ້ນກໍໄດ້ຕັດສິນໃຈຈັບອາວຸດໄວ້ໃນກໍາມື ເພື່ອປ້ອງກັນບັນດາອ້າຍນ້ອງ ໂຊວຽດ ຂອງຕົນ ແລະເຂົ້າຮ່ວມຢູ່ໃນກອງທັບແດງ.ຊາວຮູ່ງກາລີ ບ. ກູນ ແລະ ຟ.ມູນນິກ, ຊາວເຊີເບຍ ໂອ.ດູນດິດ,ຊາວເຊັກ ຢາ.ກາເຊັກ, ຊາວຟິນແລນ ອາ.ອັນຕິກາຍນຽນ, ຊາວໂອຕະລິດ ອີ.ໂກປະລຽນນິກ, ຊາວຈີນ ເຈນຟູເຊນ,ຊາວລູມາ

ນີ ອີ.ມຸນບານູແລະຊາວກອມມູນິດຕ່າງດ້າວຄົນອື່ນໆ ແມ່ນໄດ້ສະແດງບົດບາດສຳຄັນ ໃນການຈັດຕັ້ງໜ່ວຍທະຫານ ສາກົນຂຶ້ນ ຢູ່ໃນກອງທັບແດງ.

ໃນລະດູໃບໄມ້ຫລົ່ນ ປີ ໑໙໑໘ ອັງກິດ, ຝະລັ່ງ ແລະສະຫະລັດອາເມລິກາກໍໄດ້ພາບແຜ່ເຢຍລະມັນ ໃນແນວຣົບ ດ້ານທິດຕາເວັນຕົກ. ໃນເດືອນພະຈິກ ປີ ໑໙໑໘ ໄດ້ມີການປະຕິວັດເກີດຂຶ້ນ ຢູ່ໃນເຢຍລະມັນ, ພວກປະຕິການເຢຍລະມັນໄດ້ປາບປາມການປະຕິວັດໄດ້ສຳເລັດ ແຕ່ລະບອບລາຊາທິປະໄຕຂອງປະເທດນີ້ ກໍໄດ້ຖືກໂຄ່ນລົ້ມລົງ.

ຍ້ອນຜົນຂອງການປະຕິວັດ ແລະດ້ວຍອິດທິພົນ ຂອງຄວາມບໍ່ສະຫງົບ ທີ່ມີຢູ່ໃນກອງທັບເຢຍລະມັນ ເຊິ່ງຍຶດຄອງດິນແດນລັດເຊຍ ພ້ອມດ້ວຍບາດຄ້ອນ ທີ່ພວກເຂົາໄດ້ຮັບຈາກກອງທະຫານ ແລະກອງຫລອນລັດເຊຍນັ້ນ ພວກຮຸກຮານ ເຢຍລະມັນຈຶ່ງໄດ້ຟ້າວຖອນຕົວອອກຈາກດິນແດນລັດເຊຍໄປ.ແຕ່ການປະລາໄຊຂອງເຢຍລະມັນ ກໍມີຜົນໃນແບບທີ່ບໍ່ດີ ໃຫ້ແກ່ສາທາລະນະລັດໂຊວຽດຄືກັນ : ຄື ອັງກິດ, ຝະລັ່ງ ແລະ ສະຫະລັດອາເມລິກາ ເວລານີ້ໄດ້ສາມາດຊ່ວຍໃຊ້ເອົາກອງທະຫານ -ຂອງພວກມັນ ມາຮຸກຮານຕ້ານ ສາທາລະນະລັດໂຊວຽດ ໄດ້ຢ່າງກ້ວາງຂວາງຂຶ້ນ ຄືກອງທະຫານອັງກິດ, ຝະລັ່ງໄດ້ເຂົ້າມາຄອບຄອງສະຖານທີ່ຂອງເຢຍລະມັນຢູ່ໃນອູກະລາອີນາແລະເຂດພູກາວະກາດ. ໃນເດືອນພະຈິກ-ທັນວາ ປີ ໑໙໑໘ພວກເຂົາກໍໄດ້ຍົກກອງທະຫານຂຶ້ນບົກ ທີ່ໂອເດັດຊາ,ເຊວາສະໂຕ

ໂປນແລະທ່າເຮືອທາງໃຕ້ອື່ນໆອີກ. ຢູ່ທີ່ມູລະມານສະກະ ແລະ ອາລະຄັງແກນ ກໍໄດ້ມີທະຫານອັງກິດແລະອາເມລິກາ ຍົກພົນຂຶ້ນບົກ ໔໐ ພັນປາຍຄົນ. ໃນທາງດ້ານຕາເວັນອອກໄກກໍໄດ້ມີທະຫານອາເມລິກາ ແລະຍີ່ປຸ່ນ ຍົກພົນຂຶ້ນບົກ ໑໐໐ພັນປາຍຄົນ ເຂັ່ນດຽວກັນ. ເປັນຄວາມຈິງທີ່ວ່າ ໃນລະດູໃບໄມ້ປົ່ງປີ ໑໙໑໙ ນັ້ນ, ໂດຍອີງຫມັດຖໄຟປະຕິວັດ ທີ່ຢູ່ໃນກອງທະຫານ-ຂອງຕົນ ເຊິ່ງບໍ່ຕ້ອງການທີ່ຈະສູ້ຮົບ ກັບປະຊາຊົນໂຊວຽດນັ້ນ, ພວກແຊກແຊງກໍໄດ້ຖືກບັງຄັບໃຫ້ຍົກຍ້າຍອອກໄປຈາກເຂດ - ຕ່າງໆຫລາຍແຫ່ງ ຂອງປະເທດໂຊວຽດ. ເຖິງຢ່າງໃດກໍຕາມ ພວກເຂົາກໍບໍ່ໄດ້ຕັ້ງໃຈ ທີ່ຈະຍຸຕິການຕໍ່ສູ້ຕ້ານສາທາລະນະລັດ ໂຊວຽດ, ພວກເຂົາໄດ້ພຽງແຕ່ຕັດສິນໃຈວ່າ ໃນອະນາຄົດນີ້ ພວກເຂົາຈະໃຫ້ການສະຫນັບສະຫນູນ ພວກປ້ອງກັນຂາວຢູ່ໃນແນວຫລັງ.

ພວກສັດຕູຍັງມີກຳລັງເຂັ້ມແຂງຫລາຍຢູ່. ດ້ວຍການ ຊ່ວຍເຫລືອ ຂອງພວກຈັກກະພັດຕ່າງດ້າວນັ້ນ ພວກຫນ່ວຍປ້ອງກັນຂາວ ຢູ່ໃນຊີບີລີ ກໍໄດ້ຮັບການສ້າງຕັ້ງຂຶ້ນ ເປັນກອງທັບໃຫຍ່ພິເສດ. ຫົວຫນ້າກອງທັບເຫລົ່ານີ້ ກໍໄດ້ແກ່ນາຍພົນ ເອກທະຫານເຮືອ ຂອງພະເຈົ້າຊາແຕ່ເກົ່າ ຊື່ ໂກລະຈາກ. ເຂົາໄດ້ປະກາດຕົນເອງເປັນ "ຜູ້ປົກຄອງລັດເຊຍສູງສຸດ" ຢູ່ໃນເມືອງ ໂອມສະກະ ແຫ່ງຊີບີລີ. ຊາວຊີບີລີໄດ້ແຕ່ງເພງ ກ່ຽວກັບໂກລະຈາກ ແລະຜູ້ຊຸດຫນູນຕ່າງດ້າວຂອງເຂົາໄວ້ວ່າ :

ເຄື່ອງແບບອັງກິດ

ຕ່ອງໃສ່ບ່າຈາກຝະລັ່ງ
ຢາສູບຍີ່ປຸ່ນ
ໂກລະຈາກເປັນຜູ້ປົກຄອງ.

ໃນລະດູໃບໄມ້ປົ່ງປີ ໑໙໑໙ ກອງທັບຂອງໂກລະຈາກ ໄດ້ມຸ່ງໜ້າເຂົ້າໃກ້ແມ່ນ້ຳໂອນກາ. ມັນພິຄວາມຈຳເປັນທີ່ຈະຕ້ອງ ຍັບຍັ້ງ ແລະທຳລາຍສັດຕູໃຫ້ໄດ້. ພາກສ່ວນດີເດັ່ນຂອງກອງທັບ - ແດງ ໄດ້ຖືກສົ່ງໄປຕ້ານກອງທັບຂອງໂກລະຈາກ. ຝ່າຍກອງທັບແດງ ໄດ້ມີມິຄາອິນ ອາຊິນເຢອິດ ຟະລຸນເຊ ທີ່ສະຫລຽວ ສະຫລາດ ແລະນັກໂບນເຊວິກຜູ້ມີບົດຮຽນ ເປັນຜູ້ບັງຄັບບັນຊາ. ຢູ່ໃນກອງທະຫານ ທີ່ມີພວກເຂົາເປັນຜູ້ບັງຄັບບັນຊານີ້ ກໍໄດ້ເກີດມີບັນດາຜູ້ບັງຄັບບັນຊາ ທີ່ສະຫລຽວສະຫລາດຫລາຍຄົນ ຂຶ້ນມາ. ກອງພົນທີ່ບັງຄັບບັນຊາໂດຍ ວາຊິນເລຍ ຊາປາເຢັບ ວິລະຊົນແຫ່ງຊາດ. ນັ້ນໄດ້ມີຊື່ສຽງດັ່ງດັງຂຶ້ນເປັນພິເສດ ໃນການຕໍ່ສູ້ກັບກອງທະຫານໂກລະຈາກ. ຟູລະມານົບ ຜູ້ຊຶ່ງເປັນນັກຂຽນ ໂຊວຽດທີ່ມີຊື່ສຽງ ຕໍ່ມາພາຍຫລັງນັ້ນ ກໍໄດ້ແກ່ຜູ້ຊ່ວຍເຫລືອ ທີ່ໄວ້ເນື້ອເຊື່ອໃຈ ແລະຜູ້ຊີ້ນຳຝ່າຍການເມືອງ ໃຫ້ແກ່ນັກຮົບ ປະຈຳກອງພົນ ຂອງຊາປາເຢັບນັ້ນເອງ.

ໂກລະຈາກ ໄດ້ຖືກຕີໃຫ້ຖອຍຈາກແມ່ນ້ຳໂອນກາ. ກອງກຳລັງຂອງເຂົາສ່ວນໃຫຍ່ ແມ່ນໄດ້ຕັ້ງໝັ້ນຢູ່ທີ່ເມືອງອູຟາບົນຝັ່ງອັນຊັນຂອງແມ່ນ້ຳເບລາຢາ. ຟະລຸນເຊ ໄດ້ນຳເອົາກອງທະຫານ ທີ່ດີເດັ່ນຂອງຕົນ ເຂົ້າໄປປິດລ້ອມສັດຕູ. ເຂົາໄດ້ເລີ່ມຂ້າມ ແມ່ນ້ຳໃນບ່ອນທີ່ຢູ່ຫ່າງໄກຈາກຕົວເມືອງ ແລະໄດ້ມີການສູ້ຮົບ ຢ່າງຮຸນ

ແຮງຂຶ້ນໃນເວລາຂ້າມນ້ຳນີ້.ພວກທະຫານຂາວ ໄດ້ເລີ່ມຫນີບທະຫານແດງບາງຫນ່ວຍໄວ້. ຟະລຸນເຊ ໄດ້ຖືທຸງແດງ ບຸກຫນ້າໄປ ໂດຍບໍ່ຫົວຊາຕໍ່ການຍິງຂອງສັດຕູ.ເຂົາໄດ້ຮ້ອງບອກວ່າ "ພວກສະຫາຍເອີຍ ! ຈົ່ງຕາມຂ້າພະເຈົ້າມາ !"ທ້າຍທີ່ສຸດ ການຂ້າມນ້ຳກໍໄດ້ດຳເນີນໄປ ຢ່າງສຳເລັດຜົນແລະບັນດາກອງພັນແດງ ກໍມຸ່ງຫນ້າໄປສູ່ເມືອງຊຸຟາ.ກອງພົນຂອງຊາປາເຢັບ ໄດ້ຢູ່ໃນແຖວຫນ້າ. ພວກທະຫານຂາວ ໄດ້ມຸ່ງຫນ້າມາຫາພວກເຂົາ. ຊາປາເຢັບ ໄດ້ອອກຄຳສັ່ງໃຫ້ຫາທີ່ກຳບັງແລະຄອຍຖ້າສັດຕູ. ພວກຫນ່ວຍປ້ອງກັນຂາວ ໄດ້ຄືບຫນ້າເຂົ້າມາ ໃນລັກສະນະທີ່ແຫນ້ນຫນາ, ຢ່າງກົງເຂົ້າມາ ແລະ ມິດງຽບ. ມັນຄືກັນກັບວ່າ ກຳແພງອັນຫນາແຫນ້ນທີ່ຫນ້າຢ້ານກົວພວມກຳລັງຈະລົ້ມທັບສິ່ງໃດສິ່ງຫນຶ່ງ. ພວກທະຫານຂາວ ໄດ້ພາກັນຄິດວ່າ ນັກຮົບທະຫານແດງ ຈະຖອຍກັບໄປຢ່າງສັບສົນ. ແຕ່ວ່າ ພວກຊາປາເຢັບ ບໍ່ຮູ້ຄ່າວ່າຢ້ານ. ສັດຕູໄດ້ບຸກເຂົ້າ-ມາໃກ້ເຂົ້າໃກ້ເຂົ້າ. ທ້າຍທີ່ສຸດ ຊາປາເຢັບ ໄດ້ອອກຄຳສັ່ງວ່າ "ຍິງ". ດັ່ງນັ້ນປືນກົນແລະປືນເລັກຍາວທັງຫລາຍ ກໍໄດ້ລັ່ນອອກໄປພ້ອມໆກັນ. ພາຍໃນສອງສາມນາທີຕໍ່ມາສະຫນາມຮົບນັ້ນ ກໍເຕັມໄປດ້ວຍຊາກສົບ ຂອງພວກທະຫານຂາວ.ພວກມັນໄດ້ຖືກຕີ ໃຫ້ຖອຍຄືນໄປ. ພວກທະຫານມ້າແດງໄດ້ໄລ່ຕິດຕາມພວກເຂົາໄປ ດ້ວຍການກ່າວຮ້ອງວ່າ "ໄຊໂຍ" ໂດຍມີຊາປາເຢັບ ເປັນຫົວຫນ້າ.

ຢູ່ໃນຊຸບໍລົ້ນ[໑໑໑໕] ພວກທະຫານກອງຫລອນ ກໍໄດ້ໃຫ້ການຊ່ວຍ

ເຫລືອກອງທັບແດງ ຢ່າງຂະຫຍັນຂັນແຂງ. ຄຽງຄູ່ໄປກັບຊາວ
ກຳມະກອນ ແລະຊາວນາລັດເຊຍ ທີ່ຢູ່ໃນຖິ່ນແຖວກອງຫລອນ
ນັ້ນ ພວກຢາກູດ, ພວກບູລຽດ ແລະຊົນຊາດອື່ນໆ ໃນຊີບີລີ
ໄດ້ທຳການຕໍ່ສູ້ ຕ້ານພວກທະຫານຂາວ ເຊັ່ນດຽວກັນ.

ທ້າຍທີ່ສຸດ ກອງທັບທະຫານຂາວ ຂອງໂກລະຈາກກໍໄດ້ຖືກ
ທັບມ້າງລົງ ຢ່າງສິ້ນເຊີງ. ປືນເລັກຍາວ ກ໐໐ ພັນກະບອກ.
ປືນກົນ ໝື່ນ໑໘໐ ກະບອກ, ປືນໃຫຍ່ ໕໕໐ ກະບອກແລະເຮືອ
ບິນ ໝື່ນ໐ ລຳ ທີ່ພວກນາຍທຶນອາເມລິກາ, ອັງກິດ, ຝະລັ່ງ
ແລະຍີ່ປຸ່ນ ຈັດຫາໃຫ້ແກ່ເຂົານັ້ນ ກໍບໍ່ສາມາດຈະຊ່ວຍເຫຼືອແກ່
ໂກລະຈາກໄດ້. ຊີບີລີໄດ້ເຂົ້າລວມຢູ່ໃນລັດເຊຍໂຊວຽດ ອີກ
ຄັ້ງໜຶ່ງ.

ໃນຂະນະທີ່ການຕໍ່ສູ້ຕ້ານໂກລະຈາກ ພວມດຳເນີນໄປຢ່າງ
ດູເດືອດນັ້ນ ພວກໜ່ວຍປ້ອງກັນຂາວ ພາຍໃຕ້ການບັງຄັບບັນ
ຊາຂອງນາຍພົນ ຢູເດນິດ ກໍໄດ້ເລີ່ມຕົ້ນບຸກໂຈມຕີ ເຂົ້າໃສ່
ເມືອງເປຕະໂລກະລາດ. ປວງຊົນຜູ້ອອກແຮງງານ ຂອງ
ເມືອງນີ້ ກໍໄດ້ລຸກຂຶ້ນທຳການປ້ອງກັນ ເປຕະໂລກະລາດໄວ້.
ຊາວກຳມະກອນທັງໝົດ ທີ່ມີອາຍຸແຕ່ ໑໗ ປີ ຫາ ໔໕ ປີ ກໍ
ໄດ້ພາກັນຈັບອາວຸດ. ຢູ່ຕາມໂຮງຈັກໂຮງງານຕ່າງໆກໍໄດ້ຈັດ
ຕັ້ງໜ່ວຍທະຫານແລະກອງພັນກອມມູນິດຂຶ້ນ. ຄຽງຄູ່ໄປກັບນັກ
ຮົບກອງທັບແດງນັ້ນ ຊາວກຳມະກອນ ທີ່ປະກອບອາວຸດກໍໄດ້ຕີ
ກອງທະຫານຂອງ ຢູເດນິດ ໃຫ້ຖອຍຫ່າງອອກໄປຈາກເປຕະ
ໂລກະລາດ ແລະກໍໄດ້ປົດປ່ອຍ ເມືອງປະສະກົບ ໃຫ້ພົ້ນຈາກ

ການຄອບຄອງຂອງພວກໜ່ວຍປ້ອງກັນຂາວໄດ້.ດັ່ງນັ້ນ ການນາບຂູ່ທີ່ເປັນອັນຕະລາຍ ຕໍ່ເມືອງເປຕະໂລກະລາດນັ້ນ ກໍໄດ້ຖືກທັບມ້າງລົງ.

ແຕ່ວ່າ ພວກສັດຕູຊ້ຳພັດໄດ້ເລີ່ມ ການບຸກໂຈມຕີ ຄັ້ງໃຫຍ່ໃໝ່ຂຶ້ນ ຕ້ານປະເທດໂຊວຽດອີກ. ກອງທັບທະຫານ ຂາວຂອງນາຍພົນເດນິກິນ ກໍໄດ້ບຸກຄືບໜ້າຈາກດ້ານໃຕ້ແລະຈາກແຫລມກະລິມ. ກອງທັບນີ້ໄດ້ເຂົ້າຄອບຄອງອູກະລາອີນາແລະມຸ່ງໜ້າເຂົ້າສູ່ມົດສະກູ ຢ່າງໄວວາ (ມົດສະກູ ໄດ້ເປັນນະຄອນຫລວງຂອງປະເທດໂຊວຽດ ຕັ້ງແຕ່ເດືອນມີນາປີ ຈຸໝຈຊ).

ພວກນາຍທຶນອັງກິດ, ອາເມລິກາ ແລະ ປະເທດອື່ນໆໄດ້ຈັດຫາອາວຸດ, ອຸປະກອນສົງຄາມ ແລະຣອດລົດຖັງ ໃຫ້ແກ່ກອງທະຫານ ຂອງເດນິກິນ. ກອງທະຫານຂອງນາຍພົນຢູເດນິດ ເຊິ່ງຕັ້ງຢູ່ໃນ ລັດແຄມທະເລບັນຕິກນັ້ນ ກໍໄດ້ກຽມພ້ອມທີ່ຈະປະຕິບັດ ການຊ່ວຍເຫລືອໃຫ້ແກ່ກອງທະຫານຂອງນາຍພົນເດນິກິນ. ພວກກຳອຳນາດປົກຄອງໂປໂລຍ ທີ່ເປັນສັດຕູຕໍ່ໂຊວຽດນັ້ນ ກໍໄດ້ກະກຽມທີ່ຈະບຸກໂຈມຕີ ເຂົ້າໃສ່ເຂດແດນທາງດ້ານທິດຕາເວັນຕົກ ຂອງສາທາລະນະລັດໂຊວຽດ.

ພວກສັດຕູໄດ້ມີຄວາມເຊື່ອໝັ້ນໃນໄຊຊະນະຂອງພວກເຂົາ. ພວກເຂົາໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະຈ່າຍເງິນໜຶ່ງລ້ານຫຼຽນໃຫ້ແກ່ກອງພັນທະຫານຂາວທີ່ບຸກເຂົ້າສູ່ນະຄອນມົດສະກູ ໄດ້ເປັນຄັ້ງທຳອິດ. ມ້າຂາວສຳລັບພິທີ ເຂົ້າສູ່ນະຄອນຫຼວງຂອງເດນິກິນນັ້ນ ໄດ້ກະກຽມໄວ້ແລ້ວ.

"ເຈົ້າໄດ້ອາສາສະໝັກແລ້ວບໍ່"?

ຄະນະກຳມະການສູນກາງພັກກອມມູນິດ ໄດ້ຮຽກຮ້ອງ ໄປຍັງຊາວຜູ້ອອກແຮງງານ ໃຫ້ລະດົມຫຼາຍກຳລັງເຂົ້າຕໍ່ສູ້ກັບເດນີກິນ.ເລນິນໄດ້ຂຽນວ່າ "ກຳລັງທັງໝົດ ຂອງຊາວກຳມະ-ກອນແລະຊາວນາ, ກຳລັງທັງໝົດ ຂອງສາທາລະນະລັດໂຊວຽດ ຈຳເປັນຕ້ອງໂຮມກັນເຂົ້າ ເພື່ອໂຕ້ຕອບການບຸກໂຈມຕີຂອງເດນີກິນ ແລະເອົາຊະນະເຂົາ, ໂດຍບໍ່ຢຸດຢັ້ງຢູ່ແຕ່ການບຸກໂຈມຕີ ທີ່ມີໄຊຊະນະຂອງກອງທັບແດງ ທີ່ອູລານ ແລະທີ່ຊີບີລເທົ່ານັ້ນ.ອັນນັ້ນແມ່ນໜ້າທີ່ອັນຕົ້ນຕໍຂອງໄລຍະເວລານີ້"*

ເພື່ອເປັນການຕອບສະໜອງຕໍ່ຄຳຮຽກຮ້ອງຂອງຜູ້ນຳການປະຕິວັດນັ້ນ ສາທາລະນະລັດໂຊວຽດ ກໍໄດ້ຫັນໄປເປັນ ຄ້າຍທະຫານ ອັນໜຶ່ງອັນດຽວກັນ. ພວກອາສາສະໝັກໃໝ່ກໍໄດ້ຫລັ່ງໄຫລເຂົ້າສູ່ກອງທັບແດງ ຫລາຍຍິ່ງຂຶ້ນ.ທ່ານເລນິນ ໄດ້ໄປກວດກາເບິ່ງອາວຸດ ແລະການປະກອບອາວຸດ ໃຫ້ແກ່ກອງທະຫານໃໝ່ ດ້ວຍຕົວທ່ານເອງ. ພາຍໃນໜຶ່ງເດືອນ ຕໍ່ມາຈຳນວນນັກຮົບຂອງກອງທະຫານແດງຢູ່ໃນແນວຮົບດ້ານໃຕ້ ກໍໄດ້ເພີ່ມຂຶ້ນຮອດ ໔ ເທົ່າກ່ວາຈຳນວນປືນກົນ ແລະ ກຳລັງແຮງທາງດ້ານປືນໃຫຍ່ ກໍໄດ້ເພີ່ມຂຶ້ນ ຢ່າງຫລວງຫລາຍເຊັ່ນດຽວກັນ. ບົດບາດຂອງກຳລັງບຸກໂຈມຕີ ແມ່ນໄດ້ຮັບການສະແດງອອກຈາກກອງທັບມ້າ ໜ່ວຍທີໜຶ່ງ ເຊິ່ງບັງຄັບບັນ ຊາ

----

* ປະມວນບົດນິພົນ ເລນິນ ສະບັບສົມບູນ ເຫລັ້ມທີ ໓໙ ໜ້າ ໔໕ .

ໂດຍ ສ.ມ.ບູດເນນີ ວິລະຊົນຜູ້ມີຊື່ສຽງໃນສົງຄາມ ກາງ ເມືອງ.

ກອງທັບມ້າຫນ່ວຍທີຫນຶ່ງ ໄດ້ແຊກຊຶມເຂົ້າຢູ່ໃນ ແນວຫລັງ ຂອງພວກທະຫານຂາວ ຢ່າງເລິກແລບທີ່ສຸດ.ກອງທະຫານມ້າ ແດງນີ້ ໄດ້ປາກົດຕົວຂຶ້ນ ຢູ່ໃນແນວຫລັງຂອງສັດຕູຢ່າງບໍ່ຄາດ ຫວັງໄວ້ ແລະກໍໄດ້ທຳລາຍກອງທະຫານ ຂອງເດນີກິນ.ກອງ ກຳລັງສ່ວນໃຫຍ່ໃນແນວຮົບດ້ານໃຕ້ ໄດ້ໂຈມຕີ ທະຫານຂາວ ຈາກດ້ານເມືອງໂອລຽນ. ກອງທະຫານຂອງກອງທັບແດງໄດ້ ບຸກຄືບຫນ້າໄປ ຢ່າງວ່ອງໄວ ແລະໃນບໍ່ຊ້າ ກໍໄດ້ໄປຈອດກັນ ກັບກອງທະຫານມ້າຂອງບູດເນນີ. ກອງທະຫານຂາວຂອງເດ ນີກິນ ຈຳນວນຫລວງຫລາຍ ໄດ້ຖືກປິດລ້ອມ ແລະກໍໄດ້ຖືກທຳ ລາຍໄປ. ສ່ວນພວກທີ່ເຫລືອ ຂອງກອງທັບເດນີກິນນັ້ນ ກໍໄດ້ ປົບຫນີໄປສູ່ແຫລມກະລິມ. ດ້ວຍການບຸກໂຈມຕີສັດຕູ ຕໍ່ໄປນັ້ນ ກອງທັບແດງກໍໄດ້ປົດປ່ອຍອູກະລາອີນາແລະເຂດພູກາວະກາດ.

ໄປພ້ອມດຽວກັນກັບການທຳລາຍກອງທັບຂອງເດນີກິນ ໃນ ປີ ໑໙໑໙ ນັ້ນ ການທຳລາຍກອງທັບຂາວຂອງຢູເດນິດ ໃກ້ ເມືອງເປຕະໂລກະລາດກໍໄດ້ສຳເລັດເສັດສັ້ນລົງເຊັ່ນດຽວກັນ.

ປີ ໑໙໑໙ ເປັນປີທີ່ສະຫນາມຮົບທຸກໆແຫ່ງ ໄດ້ສິ້ນສຸດລົງ ດ້ວຍໄຊຊະນະ ຂອງກອງທະຫານໂຊວຽດ.

ລັນຕິກມາຮອດປີ ໑໙໒໐, ພວກນາຍທຶນແລະເຈົ້າທີ່ດິນ ກໍ ຍັງບໍ່ໄດ້ຢຸດຢັ້ງ ຄວາມພະຍາຍາມຂອງເຂົາ ທີ່ຈະໂຄ່ນລົ້ມອຳ ນາດການປົກຄອງ ຂອງປະຊາຊົນລົງ ດ້ວຍການໃຊ້ ກຳລັງ

ທາງອາວຸດ. ພວກເຈົ້າທີ່ດິນແລະພວກນາຍທຶນໂປໂລຍ ກໍໄດ້ເຄື່ອນກຳລັງທະຫານຂອງຕົນ ເຂົ້າສູ່ປະເທດໂຊວຽດ. ພວກທະຫານຂາວ ພາຍໃຕ້ການບັງຄັບບັນຊາ ຂອງບາລົນວະລັງ-ເກນ ໄດ້ເປີດສາກໂຈມຕີ ຈາກດ້ານແຫຼມກະລິມ. ພວກທະຫານຂາວໂປໂລຍ ແລະກອງທັບຂອງວະລັງເກນ ໄດ້ຖືກປະກອບອາວຸດ ແລະຕິດຕັ້ງອາວຸດໃຫ້ ໂດຍກອງທຶນຂອງ ພວກນາຍທຶນອາເມລິກາ, ອັງກິດ ແລະຝະລັ່ງ.ກອງທະຫານຂາວໂປໂລຍ ໄດ້ຍຶດເອົາມິນສະກະ ແລະກີເຢັບໄວ້ໄດ້.ກອງທະ-ຫານຂອງວະລັງເກນ ໄດ້ບຸກເຂົ້າໄປຮອດແມ່ນ້ຳດະເນບແລະເຄື່ອນໄປໃຫ້ຈອດກັບພວກທະຫານຂາວໂປໂລຍ.

ກອງທະຫານພາຍໃຕ້ການບັງຄຸບບັນຊາຂອງ ມ.ນ.ຕູຄາ-ເຈັບສະກີ ໄດ້ສະແດງຄວາມດີເດັ່ນຂອງຕົນອົ້ນໃນການຕໍ່ສູ້ກັບທະຫານຂາວໂປໂລຍ. ການບຸກໂຈມຕີຂອງກອງທະຫານ ໂປໂລຍ ໄດ້ຖືກຢຸດສະງັກລົງ. ພາກສ່ວນໃຫຍ່ຂອງອູກະລາອີນາ ແລະເບໂລລຸດເຊຍ ໄດ້ຮັບການປົດປ່ອຍ ອອກຈາກ ພວກຮຸກຮານ. ແຕ່ວ່າ ພົນລະເມືອງທີ່ຢູ່ໃນເຂດຕາເວັນຕົກຂອງອູກະລາອີນາ ແລະເບໂລລຸດເຊຍນັ້ນ ໄດ້ຕົກຢູ່ໃຕ້ອິດທິພົນ ຂອງພວກເຈົ້າທີ່ດິນ ແລະພວກນາຍທຶນໂປໂລຍ.

ໃນລະດູໃບໄມ້ຫຼົ່ນປີ ໑໙໒໐ ນັ້ນກອງທັບແດງກໍໄດ້ດຳເນີນການບຸກໂຈມຕີຕ້ານພວກວະລັງເກນ.ກອງທະຫານແດງ ທີ່ບັງຄັບບັນຊາໂດຍ ມ.ວ.ຟຸະລຸນເຊັນ ໄດ້ຕົກຢູ່ໃນສະຖານທີ່ ທີ່ເປັນອັນຕະລາຍຫລາຍທີ່ສຸດ ແລະເຂົາກໍໄດ້ສະແດງຕົວຢ່າງ-

ຂອງຄວາມກ້າຫານໃຫ້ທະຫານເຫັນ. ບັ້ນຣົບທີ່ຍິ່ງໃຫຍ່ ໄດ້ເກີດຂຶ້ນຢູ່ໃກ້ໆເມືອງກາໂລວະກາ ບໍລິເວນແມ່ນ້ຳ ດະເນບ. ພວກທະຫານຂາວໄດ້ໃຊ້ລົດຖັງ ເຂົ້າໃນການຕໍ່ສູ້. ພວກທະຫານແດງ ຫລາຍຄົນໄດ້ເຫັນລົດສູ້ຣົບທີ່ໃຫຍ່ໆນັ້ນ ເປັນຄັ້ງທຳອິດ ແຕ່ກໍບໍ່ມີຜູ້ໃດໄດ້ຢ້ານກົວ.ພາຍໃຕ້ການຊີ້ນຳຂອງຜູ້ບັງຄັບບັນຊານັ້ນ ພວກນັກຣົບໄດ້ຜະເຊີນໜ້າກັບໄພອັນຕະລາຍຢ່າງກ້າຫານ ແລະໄດ້ແກະລູກໄລລະເບີດ ທີ່ກຳຢູ່ໃນມືນັ້ນໃສ່ກອງລົດຖັງ. ຫລາຍຄົນໄດ້ເສຍສະລະຊີວິດໄປ ຢູ່ກອງລົດຖັງນັ້ນ ແລະລົດຖັງກໍໄດ້ຢຸດສະງັກຢູ່ກັບທີ່. ພວກທະຫານຂາວໄດ້ເລີ່ມຖອຍຄືນ. ຟະລຸນເຊ ໄດ້ອອກຄຳສັ່ງ "ໃຫ້ຕິດຕາມສັດຕູ ໄປ ແລະໄລ່ທະຫານຂາວທີ່ປົບໜີນັ້ນ ໄປຮອດແຫລມກະລິມ".ແຕ່ຢູ່ທີ່ນັ້ນກໍບໍ່ໄດ້ມີການສູ້ຣົບເກີດຂຶ້ນທັນທີ. ພວກທະຫານຂາວໄດ້ໃຊ້ເວລາປັບປຸງກຳລັງຢູ່ທີ່ຊ່ອງແຄບຂອງແຫລມ ເປເລກົບນັ້ນໃຫ້ເຂັ້ມແຂງ. ຢູ່ບ່ອນນີ້ພວກເຂົາສາມາດຮັກສາປ້ອມຄ້າຍໄວ້ດົນນານໄດ້ ເຖິງແມ່ນວ່າ ຈະມີກຳລັງໜ້ອຍດຽວກໍຕາມ.

ຟະລຸນເຊ ໄດ້ນຳກອງທະຫານເຂົ້າໄປປິດລ້ອມ.ແຫລມກະລິມ ໄດ້ຖືກຕັດແບ່ງອອກຈາກພື້ນແຜ່ນດິນໃຫຍ່ດ້ວຍອ່າວຊີວາດນ້ອຍໆ.ຢູ່ໃນບໍລິເວນນີ້ກໍມີບ່ອນລຸຍຂ້າມນ້ຳໄດ້ເຊິ່ງໃນບໍລິເວນດັ່ງກ່າວນີ້ ມັນກໍສາມາດພໍຂ້າມໄດ້ ແຕ່ວ່າມັນກໍເປັນການສ່ຽງໄພຫລາຍແທ້. ການປ່ຽນທິດທາງຂອງລົມອາດສາມາດ ເຮັດໃຫ້ລະດັບຂອງນ້ຳໃນອ່າວນັ້ນມີຟອງສູງຂຶ້ນ ແລະເຮັດໃຫ້ພວກເຂົາຂ້າມໄປບໍ່ໄດ້ ພວກທະຫານແດງກໍເລີ່ມລຸຍຂ້າມນ້ຳຊີວາດ

ນັ້ນໄປ ຢ່າງບໍ່ມີຄວາມຢ້ານກົວ. ລະດັບຂອງນ້ຳແມ່ນສູງພຽງ ແອວ ແລະໃນບາງບ່ອນກໍສູງພຽງບ່າ. ພວກເຂົາໄດ້ຊຸກ ແພ ເຊິ່ງບັນທຸກປືນກົນ, ປືນໃຫຍ່ແລະລູກປືນນັ້ນໄປ. ຊາວນາທ້ອງ ຖິ່ນ ໄດ້ເປັນຜູ້ພາໄປ. ດັ່ງທີ່ເຮົາຮູ້ນັ້ນແລ້ວ, ພວກຊາວກອມມູ ນິດ ແມ່ນເປັນກອງນຳໜ້າ ໂດຍໃຫ້ຕົວຢ່າງຂອງຄວາມກ້າ-ຫານຢູ່ສະເໝີ.

ກອງທັບແດງໄດ້ບຸກເຂົ້າສູ່ແຖບກະລຶມແລະກໍໄດ້ທຳລາຍວະ ລັງເກນ. ພວກທະຫານຂາວທີ່ເຫຼືອຢູ່ ກໍໄດ້ຂຶ້ນເຮືອ ແລ້ວກໍ ອອກເດີນທາງໜີໄປ ຢ່າງປອດໄພ.

ດ້ວຍຄວາມກ້າຫານແລະຄວາມຊຳນິຊຳນານ ໃນທາງດ້ານ ທະຫານ ມິຄາອິນ ຟະລຸນເຊ ກໍໄດ້ຮັບດາບປະຕິວັດ ທີ່ມີກຽດ ເຊິ່ງໄດ້ຈາລຶກຕົວອັກສອນໄວ້ວ່າ "ເພື່ອວິລະຊົນຂອງປະຊາຊົນ".

ໃນປີ ໑໙໒໐ ກອງທັບທະຫານຂາວ ກອງສຸດທ້າຍທີ່ບຸກລຸກ ເຂົ້າສູ່ລັດເຊຍໂຊວຽດນັ້ນ ກໍໄດ້ຖືກທັບມ້າງໄປ. ແຕ່ວ່າ ຊາວ ຜູ້ອອກແຮງງານອາຊີກາງ ແລະເຂດຫຼັງພູກາວະກາດຍັງຕົກ ຢູ່ໃຕ້ການກົດຂີ່ຂູດຮີດ ຂອງພວກເຈົ້າທີ່ດິນ ແລະພວກນາຍທຶນ ເຊິ່ງພວກຮຸກຮານຕ່າງດ້າວ ໃຫ້ການຊ່ວຍເຫຼືອແກ່ພວກເຂົາ. ທ່ານເລນິນໄດ້ສົ່ງກອງທັບແດງພາຍໃຕ້ການບັງຄັບບັນຊາຂອງ ມິຄາອິນ ຟະລຸນເຊ ແລະ...ກູຍບິເຊັບ ໄປໃຫ້ການ ຊ່ວຍ ເຫຼືອແກ່ບັນດາຊົນຊາດອາຊີກາງ. ຊາວກຳມະກອນ ແລະ ຊາວນາໃນອາຊີກາງ ທີ່ໄດ້ຮັບການຊ່ວຍເຫຼືອ ຈາກກອງທັບ ແດງນັ້ນ ກໍໄດ້ທັບມ້າງພວກກົດຂີ່ຂູດຮີດ ຂອງພວກເຂົາລົງ.

ດັ່ງນັ້ນ ອຳນາດການປົກຄອງໂຊວຽດ ກໍໄດ້ມີໄຊຊະນະ ຢູ່ໃນອາຊີກາງອີກ.

ຕັ້ງແຕ່ລະດູໃບໄມ້ປົ່ງ ປີ ໑໙໒໐ ພວກຊາວຜູ້ອອກແຮງ - ງານ ກໍໄດ້ພາກັນລຸກຮື້ນ ຕ້ານຈີນຈຸ້ມນາຍທຶນທ້ອງຖິ່ນອີກຢູ່ໃນ ເຂດພູກາວະກາດ. ທະຫານຂອງກອງທັບໂຊວຽດ ພາຍໃຕ້ ການບັງຄັບບັນຊາຂອງເສັນໂກໂອລະດະໂຊນິກິດເຊແລະກິລົບ ກໍໄດ້ຖືກສົ່ງໄປໃຫ້ການຊ່ວຍເຫລືອ ແກ່ພວກລຸກຮື້ນ.ຈີນຊາດ ຕ່າງໆ ໃນເຂດພູກາວະກາດ ໄດ້ໂຄ່ນລົ້ມອຳນາດຂອງຈີນຈຸ້ມ ນາຍທຶນລົງ ແລະໄດ້ຈັດຕັ້ງອຳນາດໂຊວຽດຂອງຕົນຂື້ນແທນ.

ໃນປີ ໑໙໒໒ ພວກຮຸກຮານຍີ່ປຸ່ນ ແລະກອງປຸ້ນ ທະຫານ ຂາວ ກໍໄດ້ຖືກທັບມ້າງ ແລະຖືກຂັບໄລ່ອອກຈາກເຂດຕາເວັນ ອອກໄກໄປ. ເຂດຕາເວັນອອກໄກ ກໍໄດ້ກາຍເປັນ ໂຊວຽດ ໄປ. ດ້ວຍເຫດນັ້ນ ດິນແດນໂຊວຽດທັງຫມົດກໍໄດ້ຮັບການປົດ ປ່ອຍ ອອກຈາກພວກຮຸກຮານຕ່າງດ້າວແລະພວກທະຫານຂາວ.

ປະຊາຊົນໂຊວຽດໄດ້ດຳເນີນການຕໍ່ສູ້ ຕ້ານກັບພວກສັດຕູທີ່ ມີຈຳນວນຫລວງຫລາຍ ໃນເງື່ອນໄຂທີ່ມີຄວາມຫຍຸ້ງຍາກຫຼາຍ ທີ່ສຸດ. ໃນການແຊກແຊງທາງທະຫານ ຕ້ານລັດເຊຍໂຊວຽດ ນັ້ນໄດ້ມີຮອດ ໑໔ ປະເທດເຂົ້າຮ່ວມ.ປະເທດໂຊວຽດທີ່ຫນຸ່ມ ນ້ອຍນັ້ນ ໄດ້ຮັບຄວາມເສື່ອມໂຊມ ທາງເສດຖະກິດ ທີ່ສືບ ເນື່ອງມາຈາກລັດເຊຍ ໃນສະໄຫມພະເຈົ້າຊາ ເຊິ່ງສົງຄາມ ໂລກໄດ້ທຳລາຍ. ຢູ່ໃນປະເທດບໍ່ມີເຂົ້າຈີ່, ນ້ຳມັນ ເຊື້ອໄຟ ແລະສິ່ງຈຳເປັນຫລາຍສິ່ງຫລາຍຢ່າງພຽງພໍ. ໃນເວລາທີ່ສົງ

ຄາມກາງເມືອງ ພວມໄດ້ດຳເນີນໄປຢູ່ນັ້ນ ໜັງສືພິມ ໃນບັນດາປະເທດທຶນນິຍົມ ໄດ້ພາກັນພະຍາຍາມໄວ້ວ່າ: ອຳນາດໂຊວຽດ ຈະດຳລົງຄົງຕົວຢູ່ຕໍ່ໄປອີກ ໄດ້ຈັກອາທິດນໍ ! . ແຕ່ວ່າກໍບໍ່ມີກຳລັງໃດ ທີ່ສາມາດຈະມາຍາດເອົາອຳນາດ ໄປຈາກຊາວກຳມະກອນ ທີ່ພວກເຂົາຕໍ່ສູ້ເອົາມາໄດ້ນັ້ນ.ຢູ່ໃນທົ່ວແນວຮົບ ຂອງສົງຄາມກາງເມືອງນັ້ນ ພວກນັກຮົບແຫ່ງກອງທັບ - ແດງ ກໍໄດ້ຕໍ່ສູ້ດ້ວຍຄວາມພິລະອາດຫານ.ຢູ່ໃນເຂດທີ່ພວກສັດຕູຍຶດໄດ້ຊົ່ວຄາວນັ້ນ ຊາວກຳມະກອນແລະຊາວນາກໍໄດ້ພາກັນຈັດຕັ້ງໜ່ວຍກອງຫລອນຂຶ້ນ. ພວກເຂົາໄດ້ຕໍ່ສູ້ຢ່າງບໍ່ໄດ້ເຫັນແກ່ຕົວ ຕ້ານກັບພວກເຈົ້າທີ່ດິນ, ພວກນາຍທຶນ ແລະພວກຮຸກຮານຕ່າງດ້າວ ທີ່ໄດ້ດຳເນີນໄປເພື່ອຢາກໄດ້ທີ່ດິນ, ໂຮງຈັກໂຮງງານຄືນມາອີກ. ປະຊາຊົນໄດ້ສະແດງຄວາມຮູ້ບຸນຄຸນ ຕໍ່ພວກວິລະຊົນ ແຫ່ງສົງຄາມກາງເມືອງ ດ້ວຍການມອບຫລຽນໄຊ ນັກຮົບໂຊວຽດຊັ້ນທີ່ໜຶ່ງ ຄື ຫລຽນໄຊທຸງແດງ ໃຫ້ແກ່ພວກເຂົາ.

ໄຊຊະນະແນວໜ້າຈະມີບໍ່ໄດ້, ຖ້າຫາກຊາວຜູ້ອອກແຮງ-ງານ ທີ່ເຮັດວຽກຢູ່ໃນແນວຫລັງ ບໍ່ມີການເສຍສະລະ. ຊາວນາໄດ້ສະລະເຂົ້າຈີ່ທັງໝົດໃຫ້ແກ່ລັດ ໂດຍຈົ່ງໄວ້ແຕ່ພຽງຈຳນວນທີ່ຈຳເປັນ ແກ່ຕົນເອງເທົ່ານັ້ນ. ລະບົບການຈັດຫາ ສະບຽງອາຫານ ໃຫ້ແກ່ຕົວເມືອງແລະກອງທັບແບບນັ້ນ ເອີ້ນວ່າການເກນເອົາສະບຽງອາຫານ. ຊາວນາໄດ້ເຂົ້າໃຈວ່າ ມັນເປັນສິ່ງຈຳເປັນ ທີ່ຈະຕ້ອງສະໜັບສະໜູນ ອຳນາດໂຊວຽດ

ຫ້າມຈຳໜ່າຍ

ໄວ້ ບໍ່ວ່າຈະສົ້ນເປືອງໄປເທົ່າໃດກໍຕາມ ບໍ່ດັ່ງນັ້ນ ເຈົ້ານາຍເກົ່າ-ດີ ເຈົ້າທີດິນຈະກັບຄືນມາອີກ. ຊາວນາຫຼາກໄດ້ຍຶດເອົາເຂົ້າຈີ່ ຈາກພວກຊາວນາຮັ່ງມາດ້ວຍກຳລັງແລະກໍໄດ້ມອບໃຫ້ແກ່ລັດ. ເຖິງຢ່ານັ້ນກໍຕາມ ຢູ່ໃນປະເທດກໍຍັງມີເຂົ້າຈີ່ ບໍ່ພຽງພໍ. ຊາວກຳມະກອນ ໃນຕົວເມືອງໄດ້ຮັບເຂົ້າຈີ່ ຜູ້ໜຶ່ງ ໑໐໐ ກະລາມ ມື້ໜຶ່ງ. ຊາວຜູ້ອອກແຮງງານ ໃນໂຮງຈັກໂຮງງານ ໄດ້ພະຍາຍາມຈັດຫາອາວຸດແລະເສື້ອຜ້າ ໃຫ້ແກ່ກອງທັບແດງຂອງຕົນ ໃນສະພາບການແບບນີ້.

ຄົນໄດ້ລຸກຂຶ້ນປ້ອງກັນໝາກຜົນ ຂອງມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາໄວ້ແລ້ວ, ຊາວຜູ້ອອກແຮງງານກໍໄດ້ປົກປັກຮັກສາ ແລະສ້າງອຳນາດການປົກຄອງໂຊວຽດໃຫ້ເຂັ້ມແຂງ.

ຊາວກອມມູນິດ ທີ່ມີທ່ານເລນິນເປັນຫົວໜ້າ ກໍໄດ້ຊຸມກຳລັງຂອງມວນມະຫາຊົນ. ພວກໂບນເຊວິກ ທີ່ໄດ້ຢູ່ໃນຖັນແຖວໜ້າ: ບໍ່ວ່າຢູ່ໃນການບຸກໂຈມຕີທີ່ແນວໜ້າ ແລະ ຢູ່ໃນຂະແໜງການວຽກງານ ຂອງໂຮງຈັກໂຮງງານຕ່າງໆ ກໍຕາມພວກເຂົາກໍໄດ້ແບ່ງເອົາແບກຫາບອັນໜັກແລະວຽກງານສ່ວນຕົວ ກັບປະຊາຊົນຢູ່ສະເໝີ.

ໃນລະດູໃບໄມ້ປົ່ງ ປີ ໑໙໑໙ ຊາວກອມມູນິດ ປະຈຳສາງສາຍທາງລົດໄຟ ມົດສະກູ ໄດ້ຕັດສິນໃຈສ້ອມແປງ ຫົວລົດໄຟຫລາຍຫົວໃນວັນເສົາ ພາຍຫລັງມີເຮັດວຽກງານ ທຳມະດາໂດຍບໍ່ຄິດຄ່າແຮງງານ ແຕ່ຢ່າງໃດ.ການເລີ່ມຕົ້ນຂອງພະນັກງານສາຍທາງລົດໄຟ ມົດສະກູນີ້ ໄດ້ເຮັດໃຫ້ຊາວກຳມະກອນ

ໃນເມືອງຕ່າງໆ ໄດ້ຖືເອົາເປັນແບບຢ່າງ. ການອອກແຮງງານວັນເສົາ ຂອງຊາວກອມມູນິດ- ຄື ການອອກແຮງ ງານຂອງຊາວກຳມະກອນ ທີ່ເປັນເຈົ້າຂອງປະເທດຊາດ ໂດຍບໍ່ເອົາຄ່າຈ້າງແຮງງານ ຢ່າງສະໝັກໃຈນັ້ນໄດ້ເກີດຂຶ້ນມາໃນປະເທດແບບນີ້. ທ່ານເລນິນໄດ້ຕີລາຄາສູງ ຕໍ່ການເກີດ ຂຶ້ນຂອງການປະຕິບັດງານຊະນິດໃໝ່ນີ້. ທ່ານໄດ້ເອີ້ນການອອກແຮງງານໃນມື້ວັນເສົາ ຂອງຊາວກອມມູນິດນີ້ວ່າ ເປັນການເລີ່ມຕົ້ນອັນຍິ່ງໃຫຍ່.

ໃນລະຫວ່າງສົງຄາມທີ່ຫຍຸ້ງຍາກນີ້ ລັດຖະບານໂຊວຽດໄດ້ເອົາໃຈໃສ່ຕໍ່ພວກເດັກນ້ອຍ ຜູ້ເຊິ່ງພໍ່ແມ່ຂອງພວກເຂົາ ໄດ້ຕາຍຈາກໄປ. ໂຮງຮຽນອະນຸບານ, ໂຮງຮຽນແລະເຮືອນພັກເດັກນ້ອຍ ເຊິ່ງເປັນບ່ອນທີ່ເດັກນ້ອຍ ບໍ່ມີບ່ອນຢູ່ອາໄສໃຫ້ໄດ້ຮັບການສຶກສາ, ໄດ້ຮັບການອົບຮົມສັ່ງສອນນັ້ນ ກໍໄດ້ຮັບການຈັດຕັ້ງຂຶ້ນ ທັງນີ້ກໍເພື່ອວ່າ ຈະໄດ້ເຮັດໃຫ້ພວກເຂົາກາຍເປັນພົນລະເມືອງດີ ຂອງປະເທດໂຊວຽດຕໍ່ໄປ.

ພາຍຫລັງທີ່ໄດ້ເອົາຊະນະພວກຮຸກຮານຕ່າງດ້າວແລະພວກທະຫານຂາວ ແລະປ້ອງກັນໝາກຜົນ ຂອງການປະຕິວັດໄວ້-ແລ້ວ, ປະຊາຊົນໂຊວຽດ ກໍໄດ້ມີໂອກາດທີ່ຈະສືບຕໍ່ການສ້າງສາໃນຍາມສັນຕິ ເຊິ່ງສົງຄາມກາງເມືອງ ມາຂັດຂວາງ ນັ້ນຕໍ່ໄປ.

ການຟື້ນຟູເສດຖະກິດແຫ່ງຊາດ ພາຍຫລັງສົງຄາມກາງເມືອງ

ໃນໄລຍະປີສົງຄາມໂລກແລະສົງຄາມກາງເມືອງຕິດ ຕາມ ມານັ້ນ ໄດ້ເຮັດໃຫ້ອຸດສາຫະກຳ ແລະກະສິກຳຂອງ ປະເທດ ຕົກຕໍ່າ. ຊັບສົມບັດທີ່ມີຄຸນຄ່າ ຈຳນວນຫລວງຫລາຍໄດ້ຖືກປຸ້ນ ສະດົມຈາກພວກຮຸກຮານ ແລະທະຫານຂາວ ແລະແລ້ວ ກໍຂົນ ໜີໄປຕ່າງປະເທດ.

ຄົນໄດ້ປະສົບກັບຄວາມຫລົ້ມແຫລວ ໃນຄວາມ ພະຍາຍາມ ທີ່ຈະໂຄ່ນລົ້ມອຳນາດໂຊວຽດລົງ ດ້ວຍກຳລັງອາວຸດ ແລ້ວ, ພວກສັດຕູກໍໄດ້ຕັ້ງໃຈ ທີ່ຈະບີບຄໍ ສາທາລະນະລັດໂຊວຽດ ທີ່ ໜຸ່ມນ້ອຍ ໃຫ້ຕາຍດ້ວຍຄວາມອຶດຢາກ.

ໜັງສືພິມໃນປະເທດທຶນນິຍົມ ໄດ້ພາກັນຊຸ່ນຊື່ມຍິນດີຕໍ່ໂຊກ ຮ້າຍຂອງປະຊາຊົນໂຊວຽດ ດ້ວຍການຄິດໄລ່ໄວ້ໃນເວລາສົງ ຄາມກາງເມືອງ ຈະສິ້ນສຸດລົງນັ້ນວ່າ ການຜະລິດຫລັກ ຢູ່ ໃນລັດເຊຍໂຊວຽດ ໄດ້ມີຈຳນວນຫລວງຫລາຍຢູ່ໃນ ໕໐ ປີ ຫລັງ ຂອງສະຕະວັດທີ ໑໘ ໃນສະໄໝລັດເຊຍພະເຈົ້າຊາ.

ໃນປີ ໑໙໘໐ ການຜະລິດຖ່ານຫີນຢູ່ໃນປະເທດໄດ້ລຸດລົງເຖິງ ໓ ເທົ່າ ແລະການຜະລິດນ້ຳມັນລົດລົງຮອດ ໔ ເທົ່າ ຫນ້ອຍກ່ວາທີ່ຜະລິດໄດ້ ໃນປີ ໑໙໑໓.

ຢູ່ໃນຊົນນະບົດ ສະພາບການແມ່ນບໍ່ມີຫຍັງດີຂຶ້ນເລີຍ. ຈຳນວນທີ່ດິນທີ່ຄາດໄຖ ໄດ້ມີຫນ້ອຍລົງ ແລະສັດລ້ຽງ ກໍລົດນ້ອຍລົງໄປອີກ. ຜະລິດຕະພັນກະສິກຳ ໄດ້ລົດນ້ອຍລົງ ໄປກ່ວາກ່ອນສົງຄາມເຖິງ ໘ ເທົ່າ.

ມັນມີຄວາມຈຳເປັນທີ່ຈະຕ້ອງຟື້ນຟູ ເສດຖະກິດ ແຫ່ງຊາດໃຫ້ໄວເທົ່າທີ່ຈະໄວໄດ້. ຫລັງຈາກໄດ້ຮັບການອິດເມື່ອຍຈາກສົງຄາມແລ້ວ ປະຊາຊົນໂຊວຽດ ແຕ່ລະຄົນເຂົ້າໃຈວ່າ ໃນວຽກງານຟື້ນຟູເສດຖະກິດນີ້ ພວກເຂົາຈະໄປຄອຍຖ້າ ຄວາມຊ່ວຍເຫລືອ ຈາກຜູ້ໃດຜູ້ຫນຶ່ງນັ້ນ ບໍ່ມີແລ້ວ. ປະເທດໂຊວຽດແມ່ນຕົກຢູ່ໃນວົງປິດລ້ອມ ຂອງປະເທດທຶນນິຍົມ. ວຽກງານທີ່ສັບສົນ ກ່ຽວກັບການຟື້ນຟູເສດຖະກິດແຫ່ງຊາດນີ້ແມ່ນໄດ້ຮຽກຮ້ອງ ໃຫ້ຊາວກອມມູນິດທຸກໆຄົນ ມີລະບຽບວິໄນແລະການຈັດຕັ້ງອັນເຂັ້ມແຂງ. ພັກຂອງຊາວໂບນເຊວິກ ໄດ້ດຳເນີນການຕ້ານພວກຜູ້ທີ່ຢູ່ໃນຖັນແຖວຂອງພັກ ຢ່າງເດັດຂາດ ທີ່ໄດ້ພະຍາຍາມຍຶດຫມັ້ນວ່າ ພັກບໍ່ຄວນເຂົ້າໄປຫຍຸ້ງກ່ຽວໃນວຽກງານເສດຖະກິດ ແລະຜູ້ທີ່ໄດ້ຮຽກຮ້ອງວ່າ ການຊີ້ນຳລວມສູນຂອງພັກ ແລະປະເທດນັ້ນ ຄວນຈະຍົກເລີກໄປ.ພວກຊາວໂບນເຊວິກ ໄດ້ປະນາມບຸກຄົນເຫລົ່ານີ້ ຢ່າງຮຸນແຮງ ແລະໄດ້ຊີ້ແຈງຕໍ່ຊາວຜູ້ອອກແຮງງານ ເຖິງການກະທຳ ແບບຫລອກ ລວງ

ຂອງພວກເຂົາ.

ລົນມາຮອດຕົ້ນປີ ໑໙໔໑ ນັ້ນສະພາບການພາຍໃນຂອງສາທາລະນະລັດໂຊວຽດ ກໍໄດ້ປະສົບກັບຄວາມຮ້າຍແຮງ ຍິ່ງຂຶ້ນອີກ. ການເກັບກ່ຽວທີ່ບໍ່ໄດ້ຜົນດີ ໃນປີ ໑໙໔໐ ນັ້ນ ໄດ້ເຮັດໃຫ້ເກີດມີຄວາມອຶດຢາກ ຮ້າຍແຮງຂຶ້ນ ແລະເຮັດໃຫ້ສັດລ້ຽງລົດລົງໄປຢ່າງຫລວງຫລາຍ. ຄວາມເສື່ອມໂຊມ ທາງດ້ານເສດຖະກິດຊາວນາ ໄດ້ມີຂຶ້ນຢ່າງຂະໜາດໃຫຍ່.ຄວາມຂາດເຂີນທາງດ້ານນ້ຳມັນເຊື້ອໄຟ ແລະວັດຖຸດິບ ໄດ້ເຮັດໃຫ້ການຜົນສົ່ງ ແລະອຸດສາຫະກຳ ເປັນອຳມະພາດໄປ.ການສົນຈອນໄປມາ ໂດຍທາງລົດໄຟ ຈຳນວນ ໓໐ ສາຍ ຂອງປະເທດເກືອບຈະຢຸດລົງ ຢ່າງສິ້ນເຊີງ. ພຽງແຕ່ໃນເມືອງເປຕະໂລກະລາດເທົ່ານັ້ນ ກໍມີວິສາຫະກິດ ໄດ້ອັດໄປແລ້ວ ເຖິງ ໓໔ແຫ່ງ. ໃນເດືອນກຸມພາ ປີ ໑໙໔໑ ລັດຖະບານໂຊວຽດ ໄດ້ລົງມະຕິ ກ່ຽວກັບການລົດອັດຕາແບ່ງປັນສະບຽງອາຫານ ໃນຕົວເມືອງຕ່າງໆລົງ. ໃນລະຫວ່າງສົງຄາມກາງເມືອງ ນັ້ນຊາວນາໄດ້ຍິນຍອມກັບການເກັບເອົາສະບຽງອາຫານໄປດ້ວຍຄວາມເຂົ້າໃຈວ່າ ທາງອອກຈາກສະພາບການ ໃນເວລານັ້ນແມ່ນບໍ່ມີທາງອື່ນໃດ. ມາບັດນີ້, ເມື່ອສົງຄາມສ້ຽງສຸດ ລົງແລ້ວ, ພວກຊາວນາໄດ້ເລີ່ມເກີດຄວາມບໍ່ພໍໃຈ ໃນລະບົບນີ້ຂຶ້ນ ເຊິ່ງໄດ້ຍັບຍັ້ງເຂົາບໍ່ໃຫ້ມີໂອກາດນຳເອົາເຂົ້າເຫລືອກິນເຫຼືອໃຊ້ໄປຂາຍ ທີ່ທ້ອງຕະຫລາດ ໄດ້ຢ່າງເສລີ. ອຸດສາຫະກຳ ທີ່ຖືກສົງຄາມທຳລາຍນັ້ນ ບໍ່ອາດສາມາດທີ່ຈະອຳນວຍສົ່ງ

ຂອງທີ່ຈຳເປັນແກ່ຈີນນະບົດໄດ້ແລະການຄ້າເອກະຊົນກໍໄດ້ຖືກຫ້າມ. ພວກສັດຕູລັດໂຊວຽດ, ຄັນໄດ້ສວຍໃຊ້ເອົາຄວາມບໍ່ພໍໃຈ ຂອງຊາວນານີ້ແລ້ວ, ກໍໄດ້ພະຍາຍາມທີ່ຈະກໍ່ໃຫ້ ພວກເອົາລູກຂຶ້ນຈັບອາວຸດ ຕ້ານອຳນາດໂຊວຽດ ແລະພະຍາຍາມເຮັດໃຫ້ຊາວນາ ກັບຊາວກຳມະກອນເກີດເປັນສັດຕູກັນຂຶ້ນ.

ໃນສະພາບການແບບນີ້ ມັນມີຄວາມຈຳເປັນ ທີ່ຈະຕ້ອງໃຊ້ມາດຕາການອັນຮີບດ່ວນ ເພື່ອບັບປຸງຖານະຂອງຊາວນາໃຫ້ດີຂຶ້ນ ບໍ່ດັ່ງນັ້ນແລ້ວ ການຟື້ນຟູເສດຖະກິດ ກໍຈະເປັນໄປບໍ່ໄດ້. ຕາມຄຳສະເໜີຂອງເລນິນນັ້ນ ການເກັບເອົາສະບຽງ ອາຫານ ຢູ່ໃນຈີນນະບົດນັ້ນ ຄວນຈະປ່ຽນເປັນການເສຍພາສີສະບຽງອາຫານແທນ. ອັດຕາເສຍພາສີນັ້ນ ຈຳຕ້ອງກຳນົດ ໄວ້ຕັ້ງແຕ່ຕົ້ນປີຂອງການປູກຝັງ. ພາຍຫລັງທີ່ໄດ້ເສຍພາສີ ສະບຽງອາຫານແລ້ວ ຊາວນາກໍມີຄວາມສາມາດທີ່ຈະຂາຍຜົນຜະລິດຕະພັນກະສິກຳ ທີ່ເຫລືອໃນທ້ອງຕະຫລາດໄດ້. ການນຳເອົາການເສຍພາສີສະບຽງອາຫານມາແທນການເກັບເອົາສະບຽງອາຫານນັ້ນ ແມ່ນໄດ້ເຮັດໃຫ້ສະພາບການ ໃນຈີນນະບົດດີຂຶ້ນ. ອາດຈະກ່າວໄດ້ຢ່າງແນ່ນອນວ່າ ອັດຕາເມັດພືດ ທີ່ເກັບໄດ້ທົ່ວປະເທດນັ້ນ ມີຮອດ ໔໕໐ ລ້ານປູດ ຄັນທຽບໃສ່ການເກັບເອົາຕັ້ງແຕ່ກ່ອນມີຮອດ ໔໐໐ ລ້ານປູດ * . ຊາວ

----

*. ໑) ປູດ ເທົ່າກັບ ໑໖ ກິໂລກະລາມ (ເຄື່ອງ ວັດແທກນ້ຳໜັກ ລັດເຊຍ.)

ມາໄດ້ເກີດມີຄວາມສົນໃຈໃນການພັດທະນາກະສິກຳຂຶ້ນເພາະ ວ່າ ພວກເຂົາເວລານີ້ ໄດ້ມີສິດທີ່ຈະຂາຍຜະລິດຕະພັນເຫລືອ ກິນເຫລືອໃຊ້ ຕາມຄວາມຕ້ອງການຂອງຕົນໄດ້. ເອກະຊົນກໍ ໄດ້ຮັບອະນຸຍາດ ໃຫ້ເປີດໂຮງຈັກໂຮງງານເລັກໆນ້ອຍໆແລະ ດຳເນີນການຄ້າຂາຍໄດ້. ລະບົບຂອງມາດຕາການ ທີ່ແນໃສ່ ເພື່ອປັບປຸງສະພາບເສດຖະກິດ ໃນປະເທດໃຫ້ດີຂຶ້ນນີ້ໄດ້ເປັນ ທີ່ຮູ້ຈັກກັນດີວ່າ ນະໂຍບາຍເສດຖະກິດໃຫມ່ (ເນບ). ການ ນຳເອົານະໂຍບາຍເສດຖະກິດໃຫມ່ມາໃຊ້ນັ້ນແມ່ນຫມາຍເຖິງ ການຟື້ນຊີບຂອງມູນເຊື້ອນາຍທຶນຂຶ້ນ ໃນແບບໃດ ແບບຫນຶ່ງ, ແຕ່ວ່າ ສຳລັບປະເທດໂຊວຽດແລ້ວ ການເອົານະໂຍບາຍ ນີ້ ມາໃຊ້ນັ້ນ ບໍ່ໄດ້ກໍ່ໃຫ້ເກີດອັນຕະລາຍຮ້າຍແຮງ ແຕ່ຢ່າງໃດ, ເພາະວ່າ ທີ່ດິນ, ຊັບສິນຂອງມັນ ແລະວິສາຫະກິດ ພື້ນຖານ ທຸກຢ່າງ ແມ່ນຕົກຢູ່ໃນກຳມື ຂອງລັດກຳມາຊີບ.

ໃນ ປີຂອງການໃຊ້ນະໂຍບາຍເສດຖະກິດໃຫມ່ນີ້ໄດ້ເຮັດໃຫ້ ການຈັດຫາສະບຽງອາຫານແກ່ຕົວເມືອງ ໄດ້ເປັນ ປົກ ກະຕິ ແລະກໍເຮັດໃຫ້ເສດຖະກິດຊາວນາ ມີຄວາມເຂັ້ມແຂງຂຶ້ນ.ພັນ ທະພາບ ລະຫວ່າງ ຊາວກຳມະກອນ ກັບ ຊາວນາ ກໍໄດ້ມີ ຄວາມແຫນັ້ນແຟ້ນຍິ່ງຂຶ້ນ. ບັນດາໂຮງຈັກໂຮງງານ ທີ່ໄດ້ຮັບ ການຟື້ນຟູຂຶ້ນນັ້ນ ກໍໄດ້ເປີດຄືນອີກ ແລະໄດ້ເຮັດໃຫ້ສາຍທາງ ລົດໄຟ ເຮັດວຽກໄດ້ດີຂຶ້ນ. ຮ້ານຄ້າລັດຫລາຍແຫ່ງ ໄດ້ເປີດ ຂຶ້ນ ແລະການຄ້າຂາຍສ່ວນຕົວ ກໍໄດ້ຕົກຕ່ຳລົງ.

ຜົນສຳຄັນຂອງນະໂຍບາຍ ເສດຖະກິດໃຫມ່ນີ້ ແມ່ນເປັນ

ການສ້າງພື້ນຖານເສດຖະກິດໃຫມ່ໃຫ້ແກ່ພື້ນທະພາບຂອງຊາວນາ ແລະຊາວກຳມະກອນ, ເປັນການເຮັດໃຫ້ພື້ນທະພາບ ນີ້ເຂັ້ມແຂງຂຶ້ນ ເພື່ອການສ້າງສາສັງຄົມນິຍົມ ໃຫ້ປະສົບ ຜົນສຳເລັດ.

ເພື່ອຈະຜະລິດເຫລັກ, ຖ່ານຫີນ ແລະກົນຈັກຕ່າງໆ ໃຫ້ຫລາຍຂຶ້ນໄດ້ ໃນປະເທດນັ້ນ ມັນຈຳເປັນຕ້ອງມີພະລັງງານ-ໄຟຟ້າຫລາຍ. ເພາະສະນັ້ນ ທ່ານເລນິນຈຶ່ງໄດ້ສະເຫນີ ໃຫ້ສ້າງສະຖານີພະລັງງານໄຟຟ້າຂຶ້ນ ໓໐ ແຫ່ງ ໃນເຂດອຸດສາຫະກຳໃຫຍ່.

ແຜນການໂຊວຽດຄັ້ງທຳອິດ ໃນການພັດທະນາເສດຖະກິດນີ້ ໄດ້ເຮັດໃຫ້ການຫລໍ່ເຫລັກ ເພີ່ມຂຶ້ນຮອດ ໒,໔ ລ້ານໂຕນຕໍ່ປີ ໃນແຜນການ ໑໐ ປີຂ້າງຫນ້າ, ຄືນທຽບໃສ່໔,໔ ລ້ານໂຕນ ໃນປີ ໑໙໑໓ ແລ້ວນັ້ນ ການຫລໍ່ເຫລັກກ້າເພີ່ມຂຶ້ນຮອດ ໖,໕ ລ້ານໂຕນ ຄືນທຽບໃສ່ປີ ໑໙໑໓. ການຂຸດຄົ້ນຖ່ານຫີນ ແລະການສ້າງສາຍທາງລົດໄຟໃຫມ່ ກໍໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ. ໃນເງື່ອນໄຂອັນຫຍຸ້ງຍາກນີ້ ພັກຂອງຊາວ ໂບນເຊວິກ ໄດ້ປຸກລຸກປະຊາຊົນ ເພື່ອປະຕິບັດແຜນການ ຂອງເລນິນໃຫ້ສຳເລັດ, ໂດຍໄດ້ທຳການຕໍ່ສູ້ ການຄັດຄ້ານຂອງພວກ ແອແສຣ໌ ທີ່ໄດ້ພະຍາຍາມປຸກລຸກປະຊາຊົນ ໃຫ້ກໍ່ຄວາມບໍ່ສະຫງົບຂຶ້ນມາໃຫມ່ ແລະຈາກພວກຕະລົດສະກີ ຜູ້ທີ່ໄດ້ກະທຳການຄັດຄ້ານ ທິດທາງໃຫຍ່ຂອງພັກ ແລະໂດຍພະຍາຍາມ ທີ່ຈະແບ່ງແຍກພັກ ແລະທີ່ຈະເຮັດໃຫ້ພັກນັ້ນ ເຫີນຫ່າງອອກຈາກປະຊາ

ຊົນ. ພັກເລນິນຂອງຊາວໂບນເຊວິກ ທີ່ໄດ້ຮັບການສະໜັບສະໜູນ ຈາກຊາວຜູ້ອອກແຮງງານ ຈຳນວນຫລວງຫລາຍໃນປະເທດໂຊວຽດນັ້ນ ກໍໄດ້ຮັບໄຊຊະນະໃນການຕໍ່ສູ້ ທາງການເມືອງ ແລະເສດຖະກິດທີ່ສັບສົນ.

ການຜະລິດວັດຖຸສິ່ງຂອງ ທາງໂຮງຈັກໂຮງງານ ໄດ້ເພີ່ມຂຶ້ນເກືອບຮອດ ๑ ເທົ່າໃນໄລຍະເວລາຂອງການຟື້ນຟູ ເສດຖະກິດນີ້. ສະຖານີໄຟຟ້າຂະໜາດນ້ອຍແຕ່ງທຳອິດກໍໄດ້ປາກົດຂຶ້ນໃນຊົນນະບົດ. ຢູ່ໃນບ້ານກາຊິໂນບໍ່ໄກຈາກມົດສະກູປານໃດ, ທ່ານເລນິນກໍໄດ້ມາຮ່ວມໃນພິທີເປີດສະຖານີໄຟຟ້າ ຕາມຄຳເຊີນຂອງຊາວນາ. ໃນເວລາກ່າວຄຳປາໄສຕໍ່ຊຸມນຸມຊົນ ນັ້ນທ່ານເລນິນເວົ້າວ່າ : "ພວກທ່ານເຫັນແລ້ວ, ບ້ານກາຊິໂນຂອງພວກທ່ານໄດ້ເລີ່ມມີໄຟຟ້າໃຊ້. ອັນນີ້ເປັນພຽງແຕ່ ບ້ານດຽວເທົ່ານັ້ນ. ແຕ່ວ່າ ພວກເຮົາກໍຕ້ອງການຢາກໃຫ້ທົ່ວ ປະເທດໄດ້ຖ້ວມລົ້ນໄປດ້ວຍແສງສະຫວ່າງ... ໄຟຟ້າຈະເຮັດໃຫ້ພວກເຮົາທຳການປູກຝັງ ແລະມີດິນຊູດົມສົມບູນ, ຈະອຳນວຍໃຫ້ພວກເຮົາສັນຈອນໄປມາໄດ້ສະດວກ". * ທ່ານເລນິນໄດ້ເລົ່າກ່ຽວກັບແຜນການຕິດຕັ້ງໄຟຟ້າທົ່ວປະເທດໃຫ້ຊາວນາຟັງ ແລະຢູ່ໃນການສະແດງແບບທາງການນັ້ນ ໂຄມໄຟຟ້າທຳອິດໃນຊົນນະບົດລັດເຊຍ ທີ່ຊາວນາຕັ້ງຊື່ວ່າ "ໂຄມໄຟຟ້າເລ

----

* ໑) ເລນິນ ກ່ຽວກັບໄຟຟ້າ. ສຳນັກພິມ ວັນນະຄະດີການເມືອງ ມົດສະກູ ປີ ໑໙໒໔ – ໜ້າ ໑໑໙–໑໘໐.

ນິນ" ນັ້ນ ກໍໄດ້ໄຕ້ຂຶ້ນ.

ຕັ້ງແຕ່ມື້ທຳອິດຂອງການກຳເນີດເກີດຂຶ້ນຂອງຕົນນັ້ນລັດໂຊວຽດ ແລະພັກກອມມູນິດ ກໍໄດ້ສະແດງຄວາມເປັນຫ່ວງ ເປັນໃຍ ກ່ຽວກັບການຂະຫຍາຍວັດທະນະທຳ ໃຫ້ແກ່ ຊາວກຳມະກອນ ແລະຊາວນາ ຢ່າງບໍ່ໄດ້ລຶດລະ. ທົ່ວປະເທດ ໄດ້ດຳເນີນວຽກງານ ກ່ຽວກັບການສິດສອນໃຫ້ພົນລະເມືອງ ຮູ້ໜັງສື. ພະແນກຊາວກຳມະກອນ ເຊິ່ງເປັນບ່ອນທີ່ຊາວ ກຳມະກອນ ແລະຊາວນາຜູ້ທຸກຍາກ ໄດ້ຮ່ຳຮຽນນັ້ນ ໄດ້ຮັບການຈັດຕັ້ງຂຶ້ນ ຢູ່ໃນສະຖາບັນການສຶກສາຊັ້ນສູງ. ມັນຕ້ອງໃຊ້ເວລາຮຽນ ໓ ປີ ຢ່າງຂະຫຍັນຂັນແຂງ ພວກເຂົາຈິ່ງໄດ້ຮັບໃບປະກາສະນີຍະບັດ ອອກຈາກໂຮງຮຽນ ແລະເຂົ້າຮຽນຕໍ່ທີ່ສະຖາບັນການສຶກສາຊັ້ນສູງໄດ້. ພວກນັກຊ່ຽວຊານໂຊວຽດ ທີ່ມາຈາກຊາວກຳມະກອນ ແລະຊາວນາ ກໍໄດ້ປາກົດຂຶ້ນໃນ ປະເທດ.

ການສຶກສາພາກບັງຄັບເບື້ອງຕົ້ນ ແກ່ເດັກນ້ອຍທີ່ມີ ອາຍຸເຂົ້າຮຽນ ກໍໄດ້ນຳມາໃຊ້ ແລະຈຳນວນໂຮງຮຽນຊັ້ນຕົ້ນແລະຊັ້ນກາງ ກໍໄດ້ເພີ່ມຂຶ້ນໄປຫລາຍເທົ່າ ຄົນສົມທຽບກັບລັດເຊຍພະເຈົ້າຊາແລ້ວ.

ນັບເປັນຄັ້ງທຳອິດໃນປະຫວັດທີ່ມີມາຫລາຍສະຕະວັດທີ່ຊາວຜູ້ອອກແຮງງານ ເຂົ້າໄປເຖິງລະດັບວັດທະນະທຳໂລກ. ໂຮງລະຄອນ, ຫໍພິພິດທະພັນ ແລະຫ້ອງສະໝຸດທັງໝົດເຫລົ່າ ນັ້ນໄດ້ກາຍເປັນຊັບສົມບັດ ຂອງປະຊາຊົນໄປ. ເມື່ອມາຮອດຕອນ

ທ້າຍຂອງໄລຍະການຟື້ນຟູນີ້ໃນປະເທດກໍໄດ້ພິມໜັງສືພິມອອກ ໑໑໔໐ ສະບັບ ແລະວາລະສານ ໑໗໔໙ ສະບັບ.ປຶ້ມອ່ານໂຊວຽດທີ່ໜຸ່ມນ້ອຍ ໄດ້ຂະຫຍາຍອອກ ຢ່າງກ້ວາງຂວາງ. ບັນດາຜູ້ທີ່ເຂົ້າຮ່ວມ ໃນສົງຄາມກາງເມືອງ ຢ່າງຫ້າວຫັນ ຄືຄະມີຕະລີ ຟູລະມານອບ, ອາເລັກຊາດະລະຟາເດເຢັບ, ອາລະກາດີ ກາຍດາຣ ກໍໄດ້ແຕ່ງປຶ້ມ ຂອງຕົນອອກ ເປັນຄັ້ງທຳອິດ.

ຄືກັນກັບ ໃນໄລຍະເວລາ ສົງຄາມ ກາງເມືອງນັ້ນ ກາບກອນ ທີ່ຂຽນ ອອກ ໂດຍ ນັກກາວີ ໂຊວຽດ ຊື່ ວະລາ ດີເມຍລະ ມາຢາກອບສະກີ ກໍໄດ້ ມີຊື່ ດົງດັງ ໄປ. ບັນດານັກຂຽນ ໂຊວຽດ ທີ່ ໜຸ່ມນ້ອຍ ຄົນໄດ້ ອີງໃສ່ການສະໜັບສະໜູນ ຢ່າງ ແຂງແຮງ ຂອງ ນັກຂຽນ ຊາວກຳມາຊີບ ຜູ້ຍິ່ງໃຫຍ່ ຄື ມາກຊິມ ກົກກີ ແລ້ວກໍໄດ້ ກ້າວເຂົ້າ•ສູ່ເວທີອັນມະຄະດີ.

ຄັນມາຮອດຕອນຂອງໄລຍະການຟື້ນຟູນັ້ນສະວັດດີພາບທາງດ້ານວັດຖຸ ແລະລະດັບວັດທະນະທຳ ຂອງພົນລະເມືອງ ກໍໄດ້ເພີ່ມຂຶ້ນ ຢ່າງຫລວງຫລາຍ.

ການເຕົ້າໂຮມກັນ ຂອງ ບັນດາ ຊົນຊາດ ຕ່າງໆ ທີ່ ອາໄສຢູ່ ໃນ ດິນແດນ ຂອງ ຈັກກະພົບ ລັດເຊຍແຕ່ກ່ອນ ເຂົ້າເປັນ ລັດໜຶ່ງ ລັດດຽວກັນ ນັ້ນ ແມ່ນໄດ້ຊ່ວຍ ໃຫ້ ຕັດສິນບັນຫາ ໃນ ການຟື້ນຟູ ເສດຖະກິດ ແຫ່ງຊາດ ທີ່ສະຫລັບສັບຊ້ອນໄດ້.

ເຄື່ອງໝາຍຊາດແບບທຳອິດ
ແຫ່ງ ສະຫະພາບ ສາທາລະ
ນະລັດ ສັງຄົມນິຍົມ ໂຊວຽດ.

ໄຊຊະນະ ຂອງ ມະຫາ ປະຕິວັດ ສັງຄົມນິຍົມເດືອນຕຸລາ ໄດ້ ປົດປ່ອຍ ຊາວຜູ້ອອກແຮງງານ ແຫ່ງຈັກກະພົບ ລັດເຊຍ ແຕ່ກ່ອນນັ້ນ ບໍ່ພຽງແຕ່ ໃຫ້ອອກຈາກອຳນາດ ຂອງພວກເຈົ້າ ທີ່ດິນ ແລະນາຍທຶນເທົ່ານັ້ນ ແຕ່ຫາກຍັງອອກຈາກ ການກົດຂີ່ ຫນີບເຕັງຂອງຊົນຊາດອີກດ້ວຍ. ປະຊາຊົນທຸກຄົນມີສິດທີ່ຈະຕັດ ສິນໂຊກຊາຕາຂອງຕົນເອງ. ຊາວກຳມະກອນແລະຊາວນາໃນ ອູກະລາອີນາ, ເບໂລລຸດເຊຍ, ເຂດໃຕ້ພູກາວະກາດ ແລະ ຊາຍແດນຊົນຊາດອື່ນ ໃນຈັກກະພົບລັດເຊຍແຕ່ກ່ອນນັ້ນໄດ້ຈັດ ຕັ້ງສາທາລະນະລັດຊົນຊາດຂຶ້ນ. ຢູ່ໃນແຕ່ລະສາທາລະນະລັດ ໂຊວຽດນີ້, ທີ່ດິນ, ໂຮງຈັກໂຮງງານຕ່າງໆ ຍັງເປັນຊັບສົມ ບັດ ຂອງຊາວຜູ້ອອກແຮງງານຢູ່. ຊາວຜູ້ອອກແຮງງານ ໄດ້ ເລີ່ມເຮັດວຽກບໍ່ແມ່ນເພື່ອພວກນາຍທຶນ ແລະພວກເຈົ້າ ທີ່ດິນ ອີກແລ້ວ ແຕ່ຫາກເພື່ອຕົນເອງ. ສາທາລະນະລັດສັງຄົມນິຍົມ ໂຊວຽດ ອູກະລາອີນາ, ສາທາລະນະລັດ ສັງຄົມນິຍົມ ໂຊ ວຽດ ເບໂລລຸດເຊຍ ແລະສາທາລະນະລັດ ສັງຄົມນິຍົມ ສະ ຫະພັນໂຊວຽດ ເຂດໃຕ້ພູກາວະກາດ ແມ່ນໄດ້ເກີດຂຶ້ນ ມາ ແນວນັ້ນ. ສ່ວນພວກຕາຕາ, ບາສະກີລະ, ຢາກູດ, ຊູວາດ, ອູດະມູລະຕະ, ໂກມີ ແລະບັນດາຊົນຊາດອື່ນໆ ກໍໄດ້ຈັດຕັ້ງ ເປັນສາທາລະນະລັດໂຊວຽດປົກຄອງຕົນເອງ ແລະ ເຂດປົກ ຄອງຕົນເອງຂຶ້ນ. ບັນດາຊົນຊາດເຫລົ່ານີ້ ໄດ້ຈັດຕັ້ງເປັນສາ ທາລະນະລັດ ສັງຄົມນິຍົມ ສະຫະພັນໂຊວຽດລັດເຊຍໄປພ້ອມ ພ້ອມກັບປະຊາຊົນລັດເຊຍ.

ໃນໄລຍະປີສົງຄາມກາງເມືອງນັ້ນ ຊາວຜູ້ອອກແຮງງານຂອງສາທາລະນະລັດໂຊວຽດທົ່ວໜົດ ກໍໄດ້ພ້ອມພຽງກັນ ຕໍ່ສູ້ຕ້ານກັບພວກຜູ້ຮຸກຮານຕ່າງດ້າວ ແລະພວກທະຫານຂາວແລະກໍໄດ້ດັບສູນສັດຕູໄປ. ການຕໍ່ສູ້ຮ່ວມກັນ ຕ້ານພວກສັດຕູນັ້ນໄດ້ເຮັດໃຫ້ມິດຕະພາບ ລະຫວ່າງ ສາທາລະນະລັດໂຊວຽດ ຊົນຊາດເຂັ້ມແຂງຂຶ້ນ. ໃນໄລຍະຟື້ນຟູເສດຖະກິດ ທີ່ຖືກທຳລາຍຈາກສົງຄາມນັ້ນ ບັນດາສາທາລະນະລັດໂຊວຽດກໍໄດ້ໃຫ້ການຊ່ວຍເຫລືອ ເຊິ່ງກັນແລະກັນດີກັນ. ແນວຄິດກ່ຽວກັບ ການໂຮມກັນເຂົ້າເປັນລັດ ໜຶ່ງລັດດຽວກັນ ຢູ່ໃນບັນດາ ຊົນຊາດຕ່າງໆ ຂອງສາທາລະນະລັດໂຊວຽດຊົນຊາດນັ້ນ ໄດ້ມີຄວາມເຂັ້ມແຂງຂຶ້ນ. ພັກກອມມູນິດໄດ້ສະໜັບສະໜູນ ຂໍ້ສະເໜີຂອງຊາວອູກະລາອີນາໂຊວຽດ, ຊາວເບໂລລູດເຊຍໂຊວຽດແລະສາທາລະນະລັດ ສັງຄົມນິຍົມ ສະຫະພັນໂຊວຽດເຂດໃຕ້ພູກາວະກາດ ກ່ຽວກັບການສ້າງຕັ້ງສະຫະພັນສາທາລະນະລັດສັງຄົມນິຍົມ ໂຊວຽດຂຶ້ນ.

ໃນປີ ໑໙໒໒ ໄດ້ມີຄະນະຜູ້ແທນ ຈາກສາທາລະນະລັດໂຊວຽດທົ່ວໜົດ ເດີນທາງມາຮ່ວມກອງປະຊຸມໃຫຍ່ ສະພາໂຊວຽດທົ່ວລັດເຊຍ ຄັ້ງທີ I ຢູ່ທີ່ນະຄອນມົດສະກູ. ບັນດາຕົວແທນຂອງຊົນຊາດຕ່າງໆ ໄດ້ນຳເອົາມະຕິໃຫ້ເຕົ້າໂຮມສາທາລະນະລັດໂຊວຽດທົ່ວໜົດ ເຂົ້າເປັນສະຫະພັນອັນດຽວກັນມາສະເໜີຕໍ່ກອງປະຊຸມນີ້. ເພາະສະນັ້ນ ການໂຮມກັນແບບສະໝັກໃຈ ຂອງບັນດາປະຊາຊາດ ທີ່ມີສິດສະເໝີພາບກັນ- ດີ

ສະຫະພາບສາທາລະນັະລັດ ສັງຄົມນິຍົມໂຊວຽດ (ສ.ສ.ສ.ຊ.) ກໍໄດ້ເກີດຂຶ້ນ. ບັນດາປະຊາຊາດທັງຫມົດແຫ່ງ ສ.ສ.ສ.ຊ. ໄດ້ເລີ່ມຕົ້ນດຳລົງຊີວິດ ຢູ່ໃນຄອບຄົວອ້າຍນ້ອງ ແບບມິດຕະພາບ ເປັນນ້ຳຫນຶ່ງໃຈດຽວກັນ ໂດຍໄດ້ສ້າງລັດທິ ສັງຄົມນິຍົມທຳອິດໃນໂລກ ໃຫ້ເຂັ້ມແຂງຂຶ້ນ.

ສຸຂະພາບຂອງທ່ານເລນິນ, ຜູ້ນຳຂອງຊາວຜູ້ອອກແຮງ - ງານ ໄດ້ອ່ອນເພຍລົງ ເນື່ອງຈາກການຕິດຄຸກ ແລະການເນລະເທດ ຂອງພະເຈົ້າຊາ ເປັນເວລາຫລາຍປີ ພ້ອມທັງການກາກກຳຕໍ່ວຽກງານ ຢ່າງບໍ່ຢຸດບໍ່ຢ່ອນ. ບາດແຜ່ທີ່ທ່ານໄດ້ຮັບໃນປີ ໑໙໑໘ ຢ່າງຫນັກຫນ່ວງນັ້ນ ໄດ້ເຮັດໃຫ້ສຸຂະພາບຂອງທ່ານຊຸດໂຊມລົງ. ໃນໄລຍະປີທີ່ຮ້າຍແຮງ ຂອງສົງຄາມກາງເມືອງ ເລນິນໄດ້ແບ່ງເບົາຄວາມສຸກສ່ວນຕົວ ຮ່ວມທຸກກັບປະຊາຊົນ. ມານະຈິດອັນເຂັ້ມແຂງ ແລະຄວາມຮັບຜິດຊອບທີ່ສູງຕໍ່ຊາຕາກຳຂອງປະຊາຊົນນັ້ນ ໄດ້ເຮັດໃຫ້ທ່ານດຳລົງຢູ່ໃນຕຳແຫນ່ງ ຈົນຮອດລະດູໃບໄມ້ຫລົ່ນ ປີ ໑໙໒໒. ເລນິນໄດ້ ຖືກສົ່ງໄປປິ່ນປົວ ຢູ່ໃນບ້ານໂກລະກີ ທີ່ບໍ່ຫ່າງໄກຈາກ ມົດສະກູ ຕາມມະຕິຂອງຄະນະກຳມະການສູນກາງພັກກອມມູນິດ.ແຕ່ວ່າຢູ່ໃນບ້ານໂກລະກີນີ້ ທ່ານເອງກໍຍັງເຮັດວຽກຢູ່ຢ່າງບໍ່ຢຸດຢັ້ງ. ດ້ວຍຄວາມຮູ້ສຶກທີ່ວ່າ ວາລະສຸດທ້າຍຂອງທ່ານໄດ້ໃກ້ເຂົ້າມານັ້ນ, ທ່ານຈຶ່ງໄດ້ຝາກຝັງຮ່ວມອອກແນວຄິດແລະແຜນ ການຂອງທ່ານ ໃນການສ້າງສັງຄົມນິຍົມ ຢູ່ໃນ ສ.ສ.ສ.ຊ. ນັ້ນກັບພັກແລະປະຊາຊົນ. ໃນບົດຄວາມສຸດທ້າຍຂອງທ່ານເລນິນ

ໄດ້ຊີ້ໃຫ້ເຫັນຮູບພາບອະນຸນາຄົດອັນຈະແຈ້ງໃນການ ພັດທະນາລັດສັງຄົມນິຍົມ. ກ່ອນອື່ນໝົດ ທ່ານເລນິນ ໄດ້ຊີ້ແຈງອອກວ່າ ມັນມີຄວາມຈຳເປັນ ທີ່ຈະຕ້ອງສ້າງໂລຫະກິດແລະອຸດສາຫະກຳກົນຈັກ ໃຫ້ມີຄວາມເຂັ້ມແຂງ.ເວລາໃດມີກົນຈັກມັນຈຶ່ງມີຄວາມອາດສາມາດເປັນໄປ ທີ່ຈະສ້າງອຸດສາຫະກຳ ຈະນິດອື່ນໆໄດ້ ແລະເລີ່ມສ້າງຮູບພາບທາງດ້ານກະສິກຳອື່ນ. ຄົນໄດ້ເວົາເຖິງສະພາບການ ໃນຊົນນະບົດແລ້ວ ທ່ານເລນິນ ກໍໄດ້ກ່າວວ່າ ມັນເປັນໄປບໍ່ໄດ້ ທີ່ຈະກຳຈັດຄວາມທຸກຍາກອອກໄປໂດຍກະສິກຳຂະໜາດນ້ອຍ. ທ່ານໄດ້ແນະນຳແກ່ຊາວນາໃຫ້ເຕົ້າໂຮມກັນເຂົ້າ ເປັນສະຫະກອນກະເສດ ແລະໃຊ້ກົນຈັກເຂົ້າໃນກະສິກຳ. ເລນິນໄດ້ຢ້ຳວ່າ ກຳລັງແຮງຂອງລັດທິສັງຄົມນິຍົມ ແມ່ນນອນຢູ່ໃນພັນທະພາບ ອັນສະໜິກແໜ້ນ ລະຫວ່າງຊາວກຳມະກອນ ກັບ ຊາວນາ, ຢູ່ໃນມິດຕະພາບ ອັນໜັ້ນຄົງ ຂອງຊາວຜູ້ອອກແຮງງານ ໃນບັນດາປະຊາ ຊາດຕ່າງໆ. ທ່ານໄດ້ສະແດງຄວາມເຊື່ອໝັ້ນວ່າ ປະຊາຊົນ ໂຊວຽດ ພາຍໃຕ້ການນຳພາຂອງພັກກອມມູນິດນັ້ນຈະສ້າງສັງຄົມແບບສັງຄົມນິຍົມຂຶ້ນໄດ້.

ປະຊາຊົນໂຊວຽດ ໄດ້ສະແດງຄວາມເປັນຫ່ວງເປັນໃຍ ຕໍ່ສຸຂະພາບຂອງທ່ານເລນິນ ຢ່າງສູດຊຶ້ງ. ແຕ່ກໍບໍ່ມີນາຍແພດທີ່ດີເລີດຄົນໃດ ຈະສາມາດຊ່ວຍຊີວິດຂອງທ່ານໄວ້ໄດ້. ວັນທີ ໒໑ ເດືອນມັງກອນ ປີ ໑໙໒໔ ທ່ານໄດ້ເຖິງແກ່ກຳໄປທີ່ບ້ານໂກລະກີໃກ້ໆມົດສະກູ.ຄວາມເສົ້າໂສກອັນຍິ່ງໃຫຍ່ໄດ້ຟາດລົງ

ໃສ່ຊາວຜູ້ອອກແຮງງານຫລາຍລ້ານຄົນ. ທົ່ວປະເທດໄດ້ຕົກຢູ່
ໃນຄວາມເສົ້າສະຫລົດໃຈ. ຫິບສົບຂອງທ່ານເລນິນໄດ້ນຳມາ
ວາງໄວ້ໃນຫ້ອງໃຫຍ່ທີ່ສຸດຫ້ອງໜຶ່ງ ທີ່ນະຄອນມົດສະກູ. ປະ
ຊາຊົນຜູ້ອອກແຮງງານ ຫລາຍລ້ານຄົນ ໄດ້ມາສະແດງຄວາມ
ເຄົາລົບຄັ້ງສຸດທ້າຍ ຕໍ່ຜູ້ນຳທີ່ຍິ່ງໃຫຍ່ຂອງຕົນ. ປະຊາຊົນ ອູ
ກະລາອິນາ,ປະຊາຊົນເບໂລລູດເຊຍ, ຜູ້ຄົນທີ່ມາຈາກ ພູກາ
ວະກາດທີ່ຫ່າງໄກ, ຈາກອາຊີກາງທີ່ຮ້ອນຫລາຍແລະຈາກຊີບີ
ລີທີ່ໜາວເຢັນ ກໍໄດ້ສົ່ງຜູ້ແທນຂອງຕົນ ເຂົ້າມາມົດສະກູ.ຖັນ
ແຖວອັນຍາວຢຽດ ຂອງຊາວຜູ້ອອກແຮງງານ ທີ່ຢືນຢູ່ໃນທ່າມ
ກາງຄວາມໜາວເດືອນມັງກອນ ທີ່ຮ້າຍແຮງນັ້ນ ໄດ້ຄອຍຖ້າ
ເຂົ້າໄປສັ່ງລາກັບຜູ້ນຳທີ່ຍິ່ງໃຫຍ່ ແສນຮັກຂອງຕົນ.ຊາວກຳ-
ມະກອນ, ຊາວນາ, ທະຫານແດງ, ນັກປາດ, ນັກສຶກສາ
ແລະນັກຮຽນ ໄດ້ພາກັນຍ່າງຜ່ານຫິບສົບໄປຢ່າງຊ້າໆ.ບັນດາ
ສະຫາຍຂອງເລນິນ ໃນການຕໍ່ສູ້ປະຕິວັດ, ລູກສິດຜູ້ຊື່ສັດຂອງ
ທ່ານ ກໍໄດ້ພາກັນຜັດປ່ຽນເວນຍາມເປັນກຽດ. ໃນລະຫວ່າງ
ພິທີຊາປະນະກິດ, ເວລາຍ່າຍ ໔ ໂມງແລງນັ້ນ ຜູ້ຄົນ ແລະ
ພາຫະນະທີ່ສັນຈອນໄປມາ ແລະເຄື່ອງຈັກຢູ່ໂຮງຈັກໂຮງງານ
ຕ່າງໆທັງໝົດ ໄດ້ພາກັນຢຸດ ເປັນເວລາ ໕ ນາທີ. ປະຊາ
ຊົນທັງໝົດ ໄດ້ສະແດງຄວາມເຄົາລົບຄັ້ງສຸດທ້າຍຕໍ່ຜູ້ສ້າງຕັ້ງ
ພັກກອມມູນິດ ແລະລັດໂຊວຽດ ທີ່ສະຫລາດສ່ອງໃສ. ການມໍ
ລະນະກຳຂອງທ່ານເລນິນ ໄດ້ເຮັດໃຫ້ຊາວຜູ້ອອກແຮງງານ-
ທົ່ວໂລກ ມີຄວາມເສົ້າສະຫລົດໃຈ ຢ່າງສຸດຊຶ້ງ.



ພິທີຊາປະນະກິດສົບຂອງທ່ານເລນິນ. ຈະຕຸລັດແດງ, ເດືອນມັງກອນ ປີ ໑໙໒໔.

ພວກສັດຕູຂອງປະເທດທີ່ພວມສ້າງສາລະບອບສັງຄົມນິຍົມຢູ່ ໃນໂລກທຳອິດນັ້ນ ໄດ້ພາກັນຄິດວ່າ ເມື່ອບໍ່ມີເລນິນແລ້ວ ມັນ ກໍຈະເປັນຜົນດີແກ່ພວກເຂົາ ທີ່ຈະທຳລາຍ ສ.ສ.ສ.ຊ.ໄດ້. ແຕ່ວ່າ ພວກເຂົາໄດ້ຄາດຄິດຜິດໄປ. ເລນິນໄດ້ຕາຍໄປແລ້ວ ແຕ່ທ່ານກໍໄດ້ແຈ້ງຫົນທາງທີ່ປະຊາຊົນຈະຕ້ອງເດີນຕາມ ເພື່ອ ສ້າງສາຊີວິດ ທີ່ມີເສລີພາບ ແລະມີຄວາມຜາສຸກ.ທ່ານເລນິນ ໄດ້ຕາຍໄປແລ້ວ ແຕ່ພັກທີ່ທ່ານສ້າງຂຶ້ນມາຍັງມີຢູ່.ຊາວຜູ້ອອກ ແຮງງານ ໄດ້ເຕົ້າໂຮມກັນ ຢ່າງສະຫນິດແຫນ້ນຍິ່ງຂຶ້ນອ້ອມ ຂ້າງພັກກອມມູນິດ. ຊາວກຳມະກອນຫລາຍພັນຄົນ ທີ່ບໍ່ໄດ້ສັງ ກັດພັກ ທີ່ໄດ້ຫລໍ່ຫລອມຢູ່ໃນການຕໍ່ສູ້ປະຕິວັດແລະສົງຄາມກາງ ເມືອງນັ້ນ ກໍໄດ້ພາກັນສະຫມັກເຂົ້າເປັນສະມາຊິກພັກ. ພັກ ກອມມູນິດ ທີ່ນຳພາໂດຍຄະນະກຳມະການສູນກາງພັກ ແລະຜູ້

ຊົນຳຂອງພັກ-ຄືລູກສິດຂອງທ່ານເລນິນນັ້ນໄດ້ນຳພາປະຊາຊົນ ໂຊວຽດ ໄປຕາມເສັ້ນທາງຂອງເລນິນ ຢ່າງເຊື່ອໝັ້ນ ເພື່ອໄປສູ່ສັງຄົມນິຍົມ.

ເມື່ອມາຮອດທ້າຍປີ ໑໙໒໕ ເສດຖະກິດແຫ່ງຊາດກໍໄດ້ຮັບການຟື້ນຟູຂຶ້ນເປັນສ່ວນໃຫຍ່ແລ້ວ. ແຜນການເລນິນ ກ່ຽວກັບການຕິດຕັ້ງໄຟຟ້າໃນປະເທດນັ້ນ ໄດ້ດຳເນີນໄປ ຢ່າງໄດ້ຮັບຜົນສຳເລັດ. ສະຖານີໄຟຟ້າ ກາຊິລະສະກາຍາ, ຊາຕູລະສະກາຍາ ແລະອື່ນໆອີກ ແມ່ນໄດ້ກໍ່ສ້າງແລ້ວ. ການສ້າງສະຖານີໄຟຟ້ານ້ຳຕົກ ໂວນຄົບສະກາຍາ ທີ່ໃຫຍ່ທີ່ສຸດ ແມ່ນເກືອບຈະສຳເລັດລົງແລ້ວ. ໃນປີ ໑໙໒໕ ການຜະລິດພະລັງງານ ໄຟຟ້າ ໄດ້ມີຂຶ້ນຫລາຍກວ່າ ປີ ໑໙໑໓ ເຖິງ ໑ ເທົ່າເຄິ່ງ. ກະສິກຳ ກໍຜະລິດໄດ້ເກືອບເທົ່າໆກັນກັບໃນເວລາກ່ອນສົງຄາມ.

ທົ່ວໂລກໄດ້ເຫັນວ່າ ລັດຂອງຊາວກຳມະກອນແລະຊາວນາຫົວທຳອິດໃນໂລກ ໄດ້ຕໍ່ສູ້ເພື່ອການດຳລົງຄົງຕົວຢູ່ ຢ່າງໜັກໜ່ວງ ແລະກໍເລີ່ມມີຄວາມເຂັ້ມແຂງຂຶ້ນ. ອັນນີ້ໄດ້ ເຮັດໃຫ້ປະຊາຊົນຜູ້ອອກແຮງງານໃນໂລກ ພາກັນດີໃຈ ແລະໄດ້ຄຽດແຄ້ນຕໍ່ພວກຈັກກະພັດ ຜູ້ຊີງຂັດຂວາງການສ້າງສາແບບສັນຕິຢູ່ໃນ ສ.ສ.ສ.ຊ. ນັ້ນຫຼາຍຢ່າງ. ພວກລັດຖະບານ ອັງກິດ, ຝະລັ່ງ ແລະປະເທດທຶນນິຍົມຕ່າງໆ ໄດ້ວາງແຜນກໍ່ ການເກາະຜິດຕ່າງໆ ຕ້ານປະເທດໂຊວຽດ. ໃນປີ ໑໙໒໓ ນັກການທູດໂຊວຽດສອງຄົນ ຄື ວາຊິລາບ ໂວລົບສະກີ ແລະເປີຕະລະວອຍກອບ ກໍໄດ້ຖືກລອບສັງຫານຊີວິດ ດ້ວຍນ້ຳມືຄາຕະ

ກອນຮັບຈ້າງຢູ່ຕ່າງປະເທດ.ພວກນາຍທຶນອັງກິດ,ຄັນໄດ້ນາບຂູ່ ດ້ວຍການເຮັດສົງຄາມແລ້ວ, ກໍໄດ້ບັງຄັບໃຫ້ ສະຫະພາບໂຊວຽດ ຖອນຕົວແທນທາງການທູດຂອງຕົນ ອອກຈາກກຸອິລັງແລະອັບຟະການິສະຖານ. ພວກນາຍທຶນອັງກິດແລະຝະລັ່ງໄດ້ຮຽກຮ້ອງໃຫ້ເຮືອຂອງຕົນ ແລ່ນໄປມາຕາມທະເລດຳໄດ້ຢ່າງເສລີ. ພວກເຂົາຕ້ອງການຢາກສ້າງການນາບຂູ່ ເປັນປະຈຳຕໍ່ຊາຍແດນທາງດ້ານທິດໃຕ້ຂອງ ສ.ສ.ສ.ຊ. ດ້ວຍການສະເໜີໃຫ້ຂະຫຍາຍການຄ້າທາງທະເລ.ຄັນໄດ້ພະຍາຍາມ ທຳລາຍປະຊາຊົນໂຊວຽດແລ້ວ ປະເທດທຶນນິຍົມບາງປະເທດ ກໍໄດ້ປະຕິເສດ ທີ່ຈະທຳການຄ້າຂາຍກັບ ສ.ສ.ສ.ຊ.ແລະຍິ່ງໄປກ່ວານັ້ນ ອັງກິດກໍຍັງໄດ້ນາບຂູ່ ທີ່ຈະຕັດສາຍສຳພັນກັບສະຫະພາບໂຊວຽດອີກ.

ລັດຖະບານໂຊວຽດ ໄດ້ປະຕິເສດຢ່າງເດັດດ່ຽວ ຕໍ່ຂໍ້ຮຽກຮ້ອງ ອັນເປັນຕາຢາກຫົວ ຂອງພວກນາຍທຶນ ຕ່າງດ້າວ ທັງໝົດ ແລະກໍໄດ້ປະກາດຢ່າງເຄັ່ງຂຶມວ່າ ຈະບໍ່ທຳລາຍເຈລະຈາກັບຄຳຂາດໃດໆທັງໝົດ.

ສະພາບການອັນເຄັ່ງຕຶງ ໄດ້ຮຽກຮ້ອງໃຫ້ສ້າງກຳລັງປ້ອງກັນ ສ.ສ.ສ.ຊ. ໃຫ້ເຂັ້ມແຂງຂຶ້ນ. ຄັນໄດ້ຟື້ນຟູເສດຖະກິດແຫ່ງຊາດແລ້ວ, ໃນເວລາດຽວກັນນັ້ນ ປະຊາຊົນ ໂຊວຽດກໍໄດ້ສ້າງກອງທັບແດງຂອງຕົນ ໃຫ້ເຂັ້ມແຂງຂຶ້ນ.

ຢູ່ໃນພາຍໃນປະເທດໂຊວຽດ ກໍຍັງມີສັດຕູປະຊາຊົນຄືກັນ. ຄັນໄດ້ເຊື່ອງແລະຮັບຮູ້ອຳນາດໃໝ່ ດ້ວຍຄຳເວົ້າລ້າໆ ຂອງ

ຕົນແລ້ວ,ພວກທີ່ກົດຂີ່ຂູດຮີດແຕ່ເກົ່າ ແລະລູກແຫລ້ງຕີນມືຂອງພວກເຂົາ ກໍໄດ້ພະຍາຍາມທີ່ຈະທຳລາຍ ດ້ວຍວິທີການ ໃດໜຶ່ງ ຄື ທຳລາຍເຄື່ອງຈັກ, ຈັດຕັ້ງລະເບີດທຳລາຍ ໃນບໍ່ແຮ່, ຈູດເຜົາເຮືອນຊານ ແລະວາງຢາພິດໃສ່ເມັດພືດ. ອຳນາດການປົກຄອງໂຊວຽດ ໂດຍອີງໃສ່ການຊ່ວຍເຫລືອ ແລະການສະໜັບສະໜູນ ປະຊາຊົນຂອງຕົນນັ້ນ ກໍໄດ້ທັບມ້າງ - ການດຳເນີນ ການກໍ່ວິນາສະກຳນັ້ນ ຢ່າງຮອບຄາບ.

ເຖິງວ່າຈະມີຄວາມຫຍຸ້ງຍາກ ຫລາຍປານໃດກໍຕາມ, ປະຊາຊົນໂຊວຽດ ພາຍໃຕ້ການນຳພາຂອງພັກກອມມູນິດກໍໄດ້ຮຳບາດແຜ ແລະຟື້ນຟູເສດຖະກິດຂອງຊາດຂຶ້ນມາໄດ້.

ການສ້າງສາສັງຄົມນິຍົມ ຢູ່ໃນສະຫະພາບໂຊວຽດ

ໃນລະຫວ່າງໄລຍະການຟື້ນຟູ ຢູ່ໃນ ສ.ສ.ສ.ຊ.ນັ້ນໂຮງຈັກໂຮງ ງານຕ່າງໆ, ບໍ່ແຮ່ແລະສາຍທາງລົດໄຟ ແລະການກໍ່ສ້າງ ທີ່ພວກນາຍທຶນປະໄວ້ນັ້ນ ກໍໄດ້ຮັບການສ້ອມແປງຂຶ້ນ. ຢ່າງໃດກໍຕາມ ໂຮງຈັກໂຮງງານ ທີ່ສະໜອງຄວາມ ຕ້ອງການຂອງປະຊາຊົນນັ້ນ ກໍຍັງມີໜ້ອຍ. ໂຮງຈັກໂຮງງານ ທີ່ຜະລິດລົດຍົນ, ລົດຕະລັກເຕີ, ເຮືອບິນ ແລະກົນຈັກ ຕ່າງໆອີກຫລາຍຢ່າງນັ້ນ ແມ່ນບໍ່ມີເລີຍ. ຈຳນວນເຫລັກທີ່ຫຼໍ່ຫລອມ-ແລ້ວ,ນ້ຳມັນ, ຖ່ານຫີນ ທີ່ຜະລິດໄດ້ຢູ່ໃນ ສ.ສ.ສ.ຊ. ນັ້ນ

ແມ່ນມີຫລາຍກ່ວາລັດເຊຍພະເຈົ້າຊາຫນ້ອຍຫນຶ່ງ.ແຕ່ວ່າ ລັດເຊຍພະເຈົ້າຊາ ກໍໄດ້ເປັນປະເທດທີ່ຫລ້າຫລັງ.ໃນດ້ານກະສິກຳນັ້ນ ຍັງມີການໃຊ້ໄຖແລະຄາດເປັນເຄື່ອງມືອອກແຮງທາງພື້ນຖານຢູ່. ແມ່ນແຕ່ເຄື່ອງຈັກສຳລັບກະສິກຳ ແບບທຳມະດາກໍແມ່ນອາດຈະເຫັນໄດ້ຍາກ ແລະກໍມີຢູ່ແຕ່ໃນວຽກງານ ກະສິກຳຂອງຊາວນາຮັ່ງເທົ່ານັ້ນ. ເພື່ອທີ່ຈະຈັດຫາສິ່ງຈຳເປັນທັງຫລາຍ ໃຫ້ແກ່ປະເທດໄດ້ ແລະເຮັດໃຫ້ ສ.ສ.ສ.ຊ. ເຂັ້ມແຂງ ແລະເປັນລັດເອກະລາດນັ້ນ ມັນຈຳເປັນຕ້ອງ ປະຕິບັດຄຳແນະນຳຂອງເລນິນ ໃຫ້ຄົບຖ້ວນ.

ທ່ານເລນິນໄດ້ສັ່ງສອນວ່າ ກ່ອນອື່ນຫມົດ ມັນຈຳເປັນຕ້ອງສ້າງອຸດສາຫະກຳຫນັກ ທີ່ມີລະດັບຂະຫຍາຍຕົວ ຄືຜະລິດເຫຼັກກ້າໃຫ້ໄດ້ຫລາຍຂຶ້ນ, ສ້າງສາໂຮງຈັກໂຮງງານ ຂະຫນາດໃຫຍ່ ເພື່ອສ້າງກົນຈັກຂຶ້ນ. ຫລັງຈາກນັ້ນ ກໍນຳເອົາ ກົນຈັກຕ່າງໆເຫລົ່ານັ້ນມາໃຊ້ ເພື່ອເຮັດໃຫ້ຊີວິດການເປັນຢູ່ ຂອງຊາວນາໃຫ້ດີຂຶ້ນ, ເຮັດໃຫ້ຊາວນາມັກໃຊ້ການອອກແຮງງານລວມຫມູ່ ແລະຮັບປະກັນການຈັດຫາສະບຽງອາຫານ ແລະວັດຖຸດິບສິນຄ້າຕ່າງໆ ທີ່ມີຈຳນວນພຽງພໍ ໃຫ້ແກ່ພົນລະເມືອງທັງຫມົດ. ຄົນໄດ້ເປັນເຈົ້າຂອງຊັບສົມບັດທັງຫມົດ ໃນປະເທດແລ້ວ, ປະຊາຊົນໂຊວຽດ ກໍໄດ້ມີໂອກາດທີ່ຈະພັດທະນາເສດຖະກິດ ໄປຕາມແຜນການລວມໄດ້. ໃນປີ ໑໙໒໘ ແຜນການຫ້າປີ ຊຸດທຳອິດ ກໍໄດ້ຮັບການຮ່າງຂຶ້ນ. ເພື່ອໃຫ້ເປັນ ການສອດຄ່ອງກັບຄຳແນະນຳຂອງເລນິນຕໍ່ໄປນັ້ນ ການພັດທະນາ

ເສດຖະກິດທັງຫມົດຢູ່ໃນ ສ.ສ.ສ.ຊ.ກໍໄດ້ປະຕິບັດໄປແລະກໍພວມປະຕິບັດຢູ່ຕາມແຜນການນັ້ນ. ແຜນການຫ້າປີທຸກໆຄັ້ງໄດ້ວາງຫນ້າທີ່ຕົວຈິງ ແລະຈະແຈ້ງຕໍ່ປະຊາຊົນ ຄົນປະຕິບັດຫນ້າທີ່ນີ້ໃຫ້ສຳເລັດແລ້ວນັ້ນ, ປະຊາຊົນໂຊວຽດ ກໍແມ່ນໄດ້ ມີຄວາມພໍໃຈ ໃນປະສົບການທາງສ່ວນຕົວນັ້ນ ກໍຄືທຸກໆປີ ຊີວິດການເປັນຢູ່ຂອງພວກເຂົາ ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ປະຊາຊົນໂຊວຽດ ໄດ້ປະຕິບັດແຜນການຫ້າປີ ຊຸດທຳອິດນີ້ໃຫ້ສຳເລັດໄປ ດ້ວຍຄວາມກະຕືລືລົ້ນທີ່ສຸດ.

ຢູ່ໃນອູລານ ມີພູຢູ່ຫນ່ວຍຫນຶ່ງ ຊື່ ມາກນິຕະນາຢາ, ເຊິ່ງມີທາດເຫລັກຢູ່. ຕາມແຜນການຫ້າປີຊຸດທຳອິດນີ້ ເພິ່ນຕັດສິນໃຈ ທີ່ຈະສ້າງໂຮງງານຫລອມເຫລັກຂຶ້ນ ອັນເປັນໂຮງງານທີ່ຜະລິດເຫລັກ ແລະເຫລັກກ້າທີ່ໃຫຍ່ທີ່ສຸດແຫ່ງຫນຶ່ງ.ການສ້າງສາຄັ້ງທຳອິດນີ້ ໄດ້ດຳເນີນໄປຢ່າງຍາກລຳບາກທີ່ສຸດ ທັງນີ້ກໍເພາະວ່າ ເຂດສ້າງສານີ້ ຢູ່ຫ່າງໄກຈາກສະຖານີລົດໄຟແລະຈຳຕ້ອງຂົນສົ່ງອຸປະກອນໄປ ດ້ວຍລົດມ້າ.ໃນປີທຳອິດນີ້ ພວກນັກສ້າງສາໄດ້ອາໄສຢູ່ຕາມຕູບ ແລະເຮືອນທີ່ສ້າງດ້ວຍ ໄມ້ເລື່ອຍ. ວຽກງານໄດ້ດຳເນີນໄປຕະຫລອດປີບໍ່ວ່າອາກາດຈະຢູ່ໃນລະດູໃບໄມ້ຫລົ່ນ ແລະລະດູຫນາວ ທີ່ເຢືອກເຢັນກໍຕາມ. ນອກຈາກນັ້ນ ອາຫານການກິນ ກໍຍັງບໍ່ພຽງພໍ,ແຕ່ຊາວກຳມະກອນ ກໍໄດ້ດຳເນີນວຽກງານທີ່ຫຍຸ້ງຍາກນັ້ນໄປຢ່າງກ້າຫານ.

ມັນຄວນຈະຈື່ຈຳໄວ້ວ່າ ໃນເວລາທີ່ສະຫະພາບໂຊວຽດໄດ້ກ້າວເຂົ້າສູ່ ການສ້າງສາປະເທດ ໃຫ້ເປັນປະເທດ ອຸດສາ-

ທະກຳນັ້ນ. ສະທະພາບໂຊວຽດເປັນປະເທດສັງຄົມນິຍົມ ປະເທດດຽວເທົ່ານັ້ນ ແລະກໍຕົກຢູ່ໃນການປິດລ້ອມຂອງໂລກທຶນນິຍົມ ທີ່ເປັນປໍລະປັກ. ມັນບໍ່ໄດ້ຮັບການຊ່ວຍເຫລືອ ຈາກປະເທດໃດປະເທດໜຶ່ງ ບໍ່ວ່າຈະເປັນເງິນກູ້ຢືມຫຼືເງິນສິນເຊື່ອ. ກ້ອນທຶນທີ່ມີຄວາມຈຳເປັນ ເພື່ອຊື້ເຄື່ອງຈັກ. ສ້າງ ໂຮງຈັກໂຮງງານນັ້ນ ແມ່ນໄດ້ມາຈາກການຂາຍໄມ້ ແລະ ຂາຍສະບຽງອາຫານ ອອກສູ່ຕະຫລາດໂລກ. ເພາະສະນັ້ນ ໃນລະຫວ່າງແຜນການຫ້າປີ ຊຸດທຳອິດນີ້ ມັນຈຶ່ງມີການຂາດເຂີນ - ທາງສະບຽງອາຫານ ແລະກໍໄດ້ນຳເອົາລະບົບການແຈກຢາຍອາຫານ ແບບມີໃບບົງມາໃຊ້. ແຕ່ປະຊາຊົນໂຊວຽດ ກໍໄດ້ກຽມພ້ອມຕໍ່ສູ້ກັບຄວາມອຶດຢາກນັ້ນ ເພື່ອເອົາຊະນະ ຕໍ່ຄວາມຫລ້າຫລັງຂອງປະເທດ ຢ່າງມີສະຕິແລະມີເອກະລາດ. ການສ້າງປະເທດ ໃຫ້ເປັນປະເທດອຸດສາຫະກຳນັ້ນມັນເປັນ ວິລະກຳອັນລ້ຳເລີດ ຂອງຊົນຊັ້ນກຳມະກອນ ແລະ ຂອງປະຊາຊົນໂຊວຽດທັງໝົດ. ໃນຍຸກຂອງພວກເຮົາ, ໃນເວລາເມື່ອສະຫະພາບໂຊວຽດ ໄດ້ກາຍເປັນປະເທດອຸດສາຫະກຳ ທີ່ເຂັ້ມແຂງ, ໃນເວລາເມື່ອການຮ່ວມມືກັນ ຢ່າງເຂັ້ມແຂງຂອງບັນດາລັດ ສັງຄົມນິຍົມ ທີ່ໄດ້ຮັບການຂະຫຍາຍຕົວພວມເກີດຂຶ້ນຢູ່, ຫຼາຍໆປະເທດທີ່ພວມພັດທະນາຢູ່, ທີ່ພວມເລີ່ມຕົ້ນສ້າງສາ ເສດຖະກິດຂອງຕົນຢູ່ນັ້ນ ກໍແມ່ນໄດ້ຮັບການສະໜັບສະໜູນ ແບບອ້າຍນ້ອງຈາກບັນດາປະເທດເຫລົ່ານີ້ ຈາກການຊ່ວຍເຫລືອທີ່ບໍ່ມີຂໍ້ຜູກມັດຈາກຄ້າຍ ສັງຄົມນິຍົມ. ປະຈຸບັນ ປະເທດຕ່າງໆທີ່

ພວມກ້າວເຂົ້າສູ່ເສັ້ນທາງການສ້າງສາສັງຄົມນິຍົມນັ້ນ ແມ່ນບໍ່ໄດ້ຮັບຄວາມຫຍຸ້ງຍາກ ແລະຄວາມຂາດແຄນ ດັ່ງທີ່ວ່າມານັ້ນ.

ສອງສາມປີໄດ້ຜ່ານໄປ, ທຸກສິ່ງທຸກຢ່າງ ທີ່ຢູ່ໃນພູ ມາກນີຕະນາຢານັ້ນ ກໍໄດ້ປ່ຽນແປງໄປຄືໄດ້ມີຄວນພຸ່ງຂຶ້ນຈາກ ທໍ່ລົມຂອງໂຮງງານ ແລະເມືອງໃຫມ່ ມາກນີໂຕໂກລະຊະກະກໍໄດ້ເຕີບໃຫຍ່ຂຶ້ນ. ທົ່ວປະເທດ ທຸກຫີນທຸກແຫ່ງ ກໍໄດ້ມີລົດໄຟນຳເອົາເຫລັກທີ່ຫລໍ່ຫລອມແລ້ວ, ເຫຼັກກ້າແລະເຫລັກໄປສົ່ງໃຫ້. ໃນຕົວເມືອງກໍໄດ້ມີໂຮງລະຄອນ, ໂຮງຮຽນ, ເຮືອນຊານທີ່ຈົບງາມ ແລະຖະຫນົນທີ່ກວ້າງຂວາງ ປາກົດຂຶ້ນ.

ທົ່ວປະເທດໄດ້ກາຍເປັນສະຫນາມກໍ່ສ້າງ ທີ່ກວ້າງໃຫຍ່.ຢູ່ໃນທົ່ງຫຍ້າຂອງກາຊັກສະຖານ ກໍໄດ້ມີການສ້າງ ບໍ່ຖ່ານຫີນ. ແລະໂຮງງານຜະລິດທອງແດງຂຶ້ນ. ໂຮງງານກ່ຽວກັບ ການຜະລິດເຄື່ອງຈັກ ສຳລັບການກະສິກຳ ກໍໄດ້ສ້າງຂຶ້ນ ຢູ່ໃນເມືອງຄາລະກັບ ແຫ່ງອູກະລາອີນາ, ເມືອງຕາສະເກນແຫ່ງອູຊະເບກິສະຕານ, ເມືອງໂກເມນ ແຫ່ງເບໂລລູດເຊຍ . ເມືອງກົມໂຊໂມລະສະກະ ອັນເປັນເມືອງອຸດສາຫະກຳ ໃຫຍ່ກໍໄດ້ຮັບການສ້າງຂຶ້ນ ໂດຍສີມືຂອງພວກນັກສ້າງສາຊາວຫນຸ່ມກົມໂຊໂມນ ໃນເຂດຕາເວັນອອກໄກ.ການຂຸດຄົ້ນບໍ່ນ້ຳມັນ ຢູ່ໃນອາເຊລະໄບຊານ ກໍໄດ້ຮັບການປັບປຸງ ແລະ ຂະຫຍາຍກວ້າງອອກ ແລະເຂດໃຫມ່ຂອງການຂຸດຄົ້ນບໍ່ນ້ຳມັນກໍໄດ້ເປີດຂຶ້ນ ຢູ່ໃນກາຊັກສະຕານ ແລະຕູລະກະເມເນຍ.ສາຍທາງລົດໄຟ ທີ່ມີຄວາມຍາວ ໑໔໐໐ ກິໂລແມດ ກໍໄດ້ເຊື່ອມຈອດ ລະ

ຫວ່າງຊີບີລີກສາທາລະນະລັດອາຊີກາງ. ໂຮງງານສ້າງລົດຍົນແຫ່ງທຳອິດ ໃນປະເທດ ກໍໄດ້ສ້າງຂຶ້ນຢູ່ໃນນະຄອນມົດສະກູ ແລະໃນເມືອງ ໂກລະກີ.

ໃນລະຫວ່າງແຜນການຫ້າປີ ຊຸດທຳອິດນີ້ ວິສາຫະກິດໃຫມ່ຫລາຍກ່ວາ ໑໕໐໐ ແຫ່ງ ກໍໄດ້ຮັບການສ້າງຂຶ້ນ ແລະ ກໍໄດ້ເລີ່ມພະລິດລົດຍົນ, ເຮືອບິນ, ລົດຕະລັກເຕີ, ລົດຖັງ, ລົດກ່ຽວເຂົ້າ, ກົງຫັນນ້ຳ, ລູກເພົາ, ຫົວລົດໄຟ ແລ່ນດ້ວຍໄຟຟ້າ ແລະອຸປະກອນເຄື່ອງຈັກຕ່າງໆອີກ. ໃນປີ ໑໙໓໘ ສະຫະພາບໂຊວຽດ ກໍໄດ້ພະລິດເຄື່ອງຈັກ ໄດ້ຫລາຍກ່ວາ ທີ່ພະລິດໄດ້ໃນລັດເຊຍພະເຈົ້າຊາ ປີ ໑໙໑໓ ເຖິງ ໑໐ ເທົ່າ.

ແຜນການເລນິນ ກ່ຽວກັບການຕິດຕັ້ງໄຟຟ້າໃນປະເທດໄດ້ດຳເນີນໄປ ຢ່າງມີຜົນສຳເລັດ. ສະຖານີພະລັງງານ ໄຟຟ້າໃຫຍ່ ໃນອູກະລາອີນາ ກໍໄດ້ສ້າງຂຶ້ນ ຢູ່ເທິງຝັ່ງແມ່ນ້ຳ ດະເນບ. ເຂື່ອນໄຟຟ້າໃຫຍ່ ຈຳເປັນຕ້ອງໄດ້ສ້າງຂ້າມແມ່ນ້ຳທີ່ກວ້າງໃຫຍ່ ແລະໄຫລແຮງ. ພວກນັກສ້າງສາ ບໍ່ໄດ້ຫລັບ ບໍ່ໄດ້ນອນ ທັງຄືນແລະເວັນ ແລະເຮັດວຽກຢູ່ໃນນ້ຳ ທີ່ມີຫນາວເຢັນ ແລະວຽກງານຂອງພວກເຂົາ ກໍໄດ້ປະສົບຜົນສຳເລັດ. ສະຖານີພະລັງງານໄຟຟ້າ ທີ່ມີກຳລັງແຮງສູງ ຊື່ວ່າ ວະລາດີເມຍລະອີລິດ ເລນິນ-ຄີ ສະຖານີພະລັງງານໄຟຟ້ານ້ຳຕົກນັ້ນກໍໄດ້ນຳເອົາແມ່ນ້ຳມາໃຊ້ ໃຫ້ເປັນຜົນປະໂຫຍດ, ໄດ້ແຈກຢາຍກະແສໄຟຟ້າ ໄປຍັງໂຮງງານໃຫມ່, ໄປຍັງເມືອງແລະບ້ານຕ່າງໆ. ສະຖານີພະລັງງານໄຟຟ້ານ້ຳຕົກດະເນບ ໄດ້

ເລີ່ມຜະລິດພະລັງງານໄຟຟ້າ ໄດ້ຫລາຍກ່ວາ ສະຖານີພະລັງງານໄຟຟ້າ ໃນລັດຊຸຍພະເຈົ້າຊາເສຍອີກ. ສະຖານີພະລັງງານໄຟຟ້າໃຫມ່ ໄດ້ຖືກສ້າງຂື້ນ ຢູ່ໃນເບໂລລູດເຊຍຢູ່ໃນກະລູເຊຍ, ອາລະເມເນຍ ແລະໃນສາທາລະນະລັດສະຫະພາບອື່ນໆອີກ.



ການສ້າງສະຖານີໄຟຟ້ານ້ຳຕົກດະເນບ.

ໃນລະຫວ່າງແຜນການຫ້າປີຊຸດທຳອິດນັ້ນສ.ສ.ສ.ຊ.ບໍ່ໄດ້ມີນັກວິ ສະວະກອນຂອງຕົນພຽງພໍເລີຍ, ລັດຖະບານ ໂຊວຽດໄດ້ຊື້ອເຊີນ ນັກຊ່ຽວຊານເອກະຊົນ ຈາກຕ່າງປະເທດເຂົ້າມາຊ່ອຍວຽກງານ. ນັກວິສະວະກອນຕ່າງປະເທດ ບໍ່ເຂົ້າໃຈຫລາຍສິ່ງຫລາຍຢ່າງ ທີ່ດຳເນີນໄປໃນການສ້າງສາຂອງຊາວໂຊວຽດ. ຍົກຕົວຢ່າງເຊັ່ນ ການສ້າງສາຮ້ານສ້ອມແປງຢູ່ໃນ

ໂຮງງານສ້າງລົດຍົນ, ຕາມການຄິດໄລ່ຂອງພວກນັກວິສະວະກອນຕ່າງປະເທດນັ້ນ ມັນຈຳເປັນຕ້ອງໃຊ້ເວລາຮອດປີເຄິ່ງ, ແຕ່ຊາວກຳມະກອນ ກໍ່ສ້າງຮ້ານສ້ອມແປງນັ້ນໃຫ້ແລ້ວພາຍໃນສອງສາມເດືອນ. ໃນວຽກງານສ້າງສານັ້ນ ເກືອບຈະບໍ່ມີຮອດລົດຊຸດດິນ, ບໍ່ມີລົດຍົນ, ລົດຍົກເລີຍ ແລະເຄື່ອງຈັກອື່ນໆກໍ່ມີໜ້ອຍທີ່ສຸດ ແລະຂົ້ນດິນຈີ່ກໍແມ່ນອົນໄປດ້ວຍການແບກຫາບ . ເຖິງປານນັ້ນກໍຕາມ ວຽກງານທັງໝົດ ກໍແມ່ນສຳເລັດ ແລ້ວກ່ອນອື່ນໝົດ ທັງນີ້ກໍຍ້ອນວ່າ ຜູ້ຄົນທັງຫລາຍ ເຮັດວຽກໄປໂດຍບໍ່ຄຳນຶງເຖິງເວລາ. ພໍແຜນການຫ້າປີເລີ່ມຕົ້ນ ຊາວກຳມະກອນຫລາຍຄົນ ກໍແມ່ນສະແດງຄວາມຕັ້ງໃຈໃນທັນໃດທີ່ຈະໃຫ້ແລ້ວ ໃນພາຍໃນ ໔ ປີ. ຊາວກຳມະກອນຜູ້ກ້າວໜ້າ ທີ່ພະຍາຍາມເຮັດສິ່ງທຸກຢ່າງ ໃນອຳນາດຂອງຕົນ ໃຫ້ແລ້ວນັ້ນໄດ້ເອີ້ນວ່າ ນັກສ້າງສາແຜນການຫ້າປີທີ່ດີເດັ່ນ. ຈຳນວນຂອງພວກເຂົາເຫລົ່ານັ້ນ ໄດ້ເຕີບໃຫຍ່ຂະຫຍາຍຕົວ ໄປນຳທຸກມື້. ຊາວກອມມູນິດ ແລະຊາວໜຸ່ມກົມໂຊໂມນ ໄດ້ຢູ່ໃນແຖວໜ້າສະເໝີ. ຂະບວນການອອກແຮງງານໃນວັນເສົາແລະວັນອາທິດ ຂອງຊາວກອມມູນິດ ໄດ້ແຜ່ກວ້າງອອກໄປ. ບັນດານັກຊ່ຽວຊານຕ່າງປະເທດ ຜູ້ທີ່ເຄີຍຊິນເຮັດວຽກຢູ່ກັບພວກ ນາຍທຶນນັ້ນ ແມ່ນມີຄວາມປະຫລາດໃຈ ຕໍ່ຄວາມກະຕືລືລົ້ນແບບນັ້ນ ແລະພາຍຫລັງຕໍ່ມາ ກໍເລີ່ມຕົ້ນອົດກັ້ນຊົມເຊີຍຕໍ່ການອອກແຮງງານ ແບບເສຍສະລະຂອງປະຊາຊົນໂຊວຽດເຫລົ່ານັ້ນບໍ່ໄດ້.

ແຜນການຫ້າປີຊຸດທຳອິດ ໄດ້ປະຕິບັດໄປແລ້ວກ່ອນກຳນົດຄື

ສຳເລັດພາຍໃນ ໔ ປີ ໓ ເດືອນ.ອັນນີ້ນັບວ່າ ເປັນວິລະກຳ ອັນຍິ່ງໃຫຍ່ ໃນການອອກແຮງງານຂອງປະຊາຊົນ ໂຊວຽດ ຢ່າງແທ້ຈິງ. ຫລັກການຂອງເລນິນນັ້ນ ໄດ້ປະຕິບັດໄປ ສຳເລັດແລ້ວ. ພາຍໃຕ້ການຊີ້ນຳຂອງພັກກອມມູນິດນັ້ນ ສ.ສ . ສ.ຊ. ກໍໄດ້ກາຍເປັນປະເທດອຸດສາຫະກຳທີ່ກ້າວຫນ້າໄປ.

ຜົນສຳເລັດຄັ້ງທຳອິດ ໃນການພັດທະນາ ອຸດສາຫະກຳ ນີ້ ນັບວ່າໄດ້ໃຫ້ໂອກາດແກ່ປະເທດໂຊວຽດ ກ້າວເຂົ້າໄປສູ່ການ ປະຕິບັດສັງຄົມນິຍົມ ຢູ່ໃນຊົນນະບົດໄດ້. ໃນໄລຍະເວລາ ທີ່ ໂຮງຈັກໂຮງງານຂອງລັດ ທີ່ທັນສະໄຫມ ໄດ້ຮັບການສ້າງຂຶ້ນ ຢູ່ໃນຕົວເມືອງນັ້ນ ຊາວນາສ່ວນຫລາຍ ກໍໄດ້ເຮັດວຽກ ຢ່າງ ເປັນເອກະເທດ ຄືແຕ່ລະຄົນ ເຮັດວຽກຢູ່ໃນທີ່ດິນ ຂອງໃຜ ລາວ. ຊາວນາໄດ້ເຮັດນາດ້ວຍໄຖແລະຈົກ, ກ່ຽວເຂົ້າດ້ວຍ ກ່ຽວ, ຟາດເຂົ້າດ້ວຍກັງ ຫລືໄມ້ຟາດ ແລະຕັດຫຍ້າດ້ວຍພ້າ ຂໍ. ຊາວນາຫລາຍຄົນແມ່ນບໍ່ມີຮອດໄຖ ແລະການເກັບກ່ຽວກໍ ໄດ້ຫນ້ອຍທີ່ສຸດ. ຢູ່ໃນຊົນນະບົດ ກໍຍັງມີພວກກູລັກ (ຊາວນາ ຮັ່ງ) ຢູ່. ເພື່ອທີ່ຈະປັບປຸງຊີວິດການເປັນຢູ່ ຂອງຊາວໃຫ້ດີຂຶ້ນ, ເພື່ອທີ່ຈະເຮັດໃຫ້ປະເທດມີເຂົ້າຈີ່ກິນ, ມີນ້ຳຕານ, ມີຝ້າຍ ແລະຜະລິດຕະພັນອື່ນໆພຽງພໍນັ້ນ ມັນຈຳເປັນຕ້ອງ ປ່ຽນແປງ ລະບຽບແບບແຜນອັນເກົ່າແກ່ ຢູ່ໃນຊົນນະບົດນັ້ນ. ກ່ອນອື່ນ ຫມົດ ມັນຈຳເປັນຕ້ອງເຕົ້າໂຮມ ເອົາຊາວນາ ເຮັດວຽກນຳ ກັນ ບໍ່ແມ່ນເປັນແບບເອກະເທດ ແຕ່ຫາກເປັນແບບລວມຫມູ່. ເຄື່ອງຈັກອາດຈະໃຊ້ໄດ້ຢູ່ແຕ່ໃນນາ ທີ່ກວ້າງໃຫຍ່ ເທົ່ານັ້ນ

ແລະລົດຕະລັກເຕີ, ລົດກ່ຽວເຂົ້າ ບໍ່ສາມາດຈະໃຊ້ໄປໃນນາທີນ້ອຍໆໄດ້.

ຊາວນາພວມຍື່ນໃບສະຫມັກເຂົ້າເປັນ
ສະມາຊິກສະຫະກອນກະເສດ.

ເພື່ອຕອບສະຫນອງຕໍ່ຄຳຮຽກຮ້ອງຂອງພັກກອມມູນິດ ຊາວນາທີ່ຢູ່ໃນບ້ານຕ່າງໆ ໄດ້ເລີ່ມພາກັນເຕົ້າໂຮມນາເລັກໆນ້ອຍຂອງຕົນ ເຂົ້າມາເປັນນາໃຫຍ່ທົ່ວໄປ ອັນຫນຶ່ງ ອັນດຽວກັນ. ນາລວມຫມູ່ແບບທີ່ວ່ານີ້ ໄດ້ເອີ້ນຊື່ວ່າ ກະສິກຳລວມຫມູ່ (ສະຫະກອນກະເສດ). ຢູ່ໃນນາລວມຫມູ່ນີ້ ເພິ່ນໄດ້ໂຮມເອົາດິນນາ, ມ້າ, ໄຖແລະຄຸາດ ເຂົ້າມາເປັນຂອງສ່ວນລວມ, ແຕ່ວ່າ ຊາວນາທຸກຄົນ ທີ່ເຂົ້າຮ່ວມຢູ່ໃນສະຫະກອນກະເສດນີ້ ກໍໄດ້ໃຫ້ມີສວນຜັກໃກ້ເຮືອນ, ງົວ, ຄວາຍ ແລະເປັດໄກ່ເປັນຂອງສ່ວນຕົວຢູ່. ວຽກງານຂອງຊາວນາ ຢູ່ໃນສະຫະກອນກະ

ເສດນີ້ ມັນງ່າຍກ່ວາ ແລະກໍມີຜົນເກັບກ່ຽວໄດ້ຫລາຍກ່ວາມາ ເອກະເທດ. ດັ່ງນັ້ນຊາວນາຈຶ່ງໄດ້ພາກັນເຂົ້າມາຮ່ວມຢູ່ໃນສະຫະກອນກະເສດ. ກອງປະຊຸມທົ່ວໄປຂອງສະມາຊິກ ສະຫະກອນກະເສດ ໄດ້ເລືອກເອົາຄະນະບໍລິຫານຂຶ້ນມາ ເຊິ່ງເປັນຜູ້ຊີ້ນຳວຽກງານທົ່ວໄປ ຢູ່ໃນສະຫະກອນກະເສດ ແລະ ລາຍງານກ່ຽວກັບວຽກງານຂອງຕົນ ຕໍ່ກອງປະຊຸມ ທີ່ໄດ້ຖືກເລືອກຂຶ້ນມານັ້ນ. ຍິ່ງເກັບກ່ຽວໄດ້ຫລາຍຂຶ້ນເທົ່າໃດ ຊາວສະຫະກອນກະເສດ ກໍຍິ່ງໄດ້ຮັບສິ່ງຂອງຕ່າງໆ ຕາມແຮງງານຂອງຕົນ ຫລາຍຂຶ້ນເທົ່ານັ້ນ. ນອກນັ້ນກໍຍັງໄດ້ລາຍງານ ກ່ຽວກັບບຸກຄົນຜູ້ມີຫົດສະນະດີ ຕໍ່ວຽກງານນີ້ອີກດ້ວຍ. ຜູ້ໃດເຮັດວຽກໄດ້ດີ ແລະຫລາຍກ່ວາຜູ້ນັ້ນ ກໍຕ້ອງໄດ້ຮັບຜະລິດຕະພົນ ຈາກສະຫະກອນກະເສດ ຫລາຍກ່ວາໝູ່. ຜະລິດຕະພົນສ່ວນໜຶ່ງຂອງສະຫະກອນກະເສດນີ້ ຈຳເປັນຕ້ອງສົ່ງໄປໃຫ້ລັດ ຕາມຂໍ້ຜູກພັນ. ພວກຊາວນາຮັ່ງມີ (ກູລັກ) ໄດ້ຕັ້ງຕົວເປັນສັດຕູຕໍ່ກິດຈະການ ສະຫະກອນກະເສດນີ້ ຢ່າງຮຸນແຮງ. ພວກເຂົາໄດ້ເຂົ້າໃຈວ່າ ພວກເຂົາບໍ່ສາມາດ ຈະສວຍໃຊ້ຊາວນາອີກຕໍ່ໄປໄດ້, ຖ້າຫາກຊາວນາໄດ້ໂຮມກັນເຂົ້າຢູ່ໃນສະຫະກອນ ກະເສດ. ພວກເຂົາໄດ້ເລີ່ມຕໍ່ສູ້ ຕ້ານອຳນາດໂຊວຽດ ແລະສະຫະກອນກະເສດ.

ຊາວນາຮັ່ງ (ກູລັກ) ບາງຄົນໄດ້ພາກັນໄປລີ້ຊ່ອນຢູ່ໃນປ່າ ແລະຈັດຕັ້ງກັນເປັນກອງປຸ້ນຂຶ້ນ. ສ່ວນຄົນອື່ນ ກໍພາກັນດຳລົງຊີວິດ ຢູ່ໃນບ້ານຄືແຕ່ເກົ່າ ແມ່ນຮອດເຂົ້າຮ່ວມ ຢູ່ໃນສະຫະ

ກອນກະເສດ.ພວກເຂົາທຳລາຍສະຫະກອນກະເສດຢູ່ພາຍໃນ ແລະລະມັດລະວັງທີ່ສຸດ ບໍ່ໃຫ້ຜູ້ໃດຮູ້. ພວກເຂົາວາງຢາເບື່ອ ໃຫ້ສັດລ້ຽງ ຂອງສະຫະກອນກະເສດກິນ,ຈູດສາງເຂົ້າ ແລະ ຮອດຂ້າຊາວກອມມູນິດ ຜູ້ທີ່ເປັນນັກສະໜັບສະໜູນ ອັນຕັ້ງໜ້າຂອງການອອກແຮງງານ ແບບລວມໝູ່ອີກ. ແຕ່ພວກສັດຕູ ກໍບໍ່ສາມາດ ທີ່ຈະທຳລາຍຊາວນາໄດ້.

ຊາວນາໄດ້ເຂົ້າໃຈວ່າ ຊີວິດທີ່ດີນັ້ນ ແມ່ນສາມາດຈະສ້າງຂຶ້ນໄດ້ ຢູ່ໃນແຕ່ສະຫະກອນກະເສດເທົ່ານັ້ນ.ແຕ່ວ່າຖ້າປາສະຈາກການຊຸກຍູ້ ແລະການຊ່ວຍເຫລືອ ຈາກຊາວ ກຳມະກອນແລ້ວ ຊາວນາກໍບໍ່ສາມາດຈະສ້າງສະຫະກອນກະເສດ ແລະບໍ່ສາມາດສ້າງຊີວິດໃໝ່ຂຶ້ນໄດ້. ເພື່ອຕອບສະໜອງຕໍ່ຄຳຮຽກຮ້ອງ ຂອງພັກກອມມູນິດນັ້ນ ຊາວກຳມະກອນຈຳນວນ ຫລວງຫລາຍ ກໍໄດ້ຍ້າຍຈາກຕົວເມືອງ ລົງໄປສູ່ຊົນນະບົດ. ຄຽງຄູ່ໄປກັບຊາວນານັ້ນ ພວກເຂົາກໍໄດ້ດຳເນີນການຕໍ່ສູ້ ຕ້ານພວກກູລັກ ແລະປາບປາມພວກສັດຕູເຫລົ່ານີ້ ຂອງຊີວິດສະຫະກອນກະເສດ. ຊາວກຳມະກອນໄດ້ສິດສອນຊາວນາ ໃຫ້ເຮັດວຽກລວມໝູ່ ແລະໃຊ້ເຄື່ອງຈັກ ທີ່ມີຢູ່ໃນສະຫະກອນກະເສດຫຼາຍຂຶ້ນນັ້ນ ໄປໃນທາງທີ່ຖືກຕ້ອງ. ໃນປີ ໑໙໓໘ ຢູ່ໃນປະເທດໄດ້ມີລົດຕະລັກເຕີຮອດ໑໔໐ ພັນຄັນ ເຊິ່ງຜະລິດຂຶ້ນຢູ່ໃນໂຮງງານໃໝ່ໂຊວຽດ. ລົດເກັບກ່ຽວ ແລະເຄື່ອງຈັກສຳລັບກະສິກຳອື່ນໆຫລາຍສິບພັນຄັນກໍໄດ້ອອກຈາກສາຍພານ ການຜະລິດຂອງໂຮງງານທຸກໆປີ. ຢູ່ໃນສະຫະກອນກະເສດ ກໍໄດ້ເກີດມີ

ອາຊີໃຫມ່ອື່ນເຊັ່ນນັກອັບລົດຕະລັກຕີ, ນັກອັບລົດເກັບກ່ຽວ , ນັກອັບລົດແລະຊ່າງແປງ ກົນຈັກ.

ບັນດານັກກະເສດທີ່ດິນ, ຜູ້ຊ່ຽວຊານປູກຕົ້ນໄມ້ ແລະ ຫມໍປົວສັດ ກໍໄດ້ມາຊ່ວຍເຫລືອ ສະຫະກອນກະເສດ. ພຽງແຕ່ໃນລະຫວ່າງແຜນການຫ້າປີ ຊຸດທຳອິດນີ້ເທົ່ານັ້ນ ບັນດານັກຊ່ຽວຊານທາງດ້ານກະສິກຳ ກໍໄດ້ຮັບການຝຶກຝົນ ຢູ່ໃນ ສະຖາບັນການສຶກສາຂັ້ນສູງ ແລະຂັ້ນກາງ ກວ່າ ພັນປາຍຄົນ.

ສອງສາມປີຜ່ານໄປ, ຊີວິດຂອງຊາວນາ ກໍໄດ້ມີການປ່ຽນແປງໄປ, ການເກັບກ່ຽວກໍໄດ້ຫລາຍຂຶ້ນ ແລະ ລາຍໄດ້ຂອງຊາວສະຫະກອນກະເສດ ກໍໄດ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນ. ຢູ່ໃນຊົນນະບົດ ກໍໄດ້ມີການສ້າງສາໂຮງຮຽນ, ໂຮງຫມໍ ແລະຫໍ ວັດທະນະທຳ ຂຶ້ນ ແລະ ໃນບ້ານ ຫລາຍແຫ່ງ ກໍ ໄດ້ ມີແສງສະຫວ່າງໄຟຟ້າປາກົດຂຶ້ນ ເຊັ່ນດຽວກັນ. ແຕ່ຊາວສະຫະກອນກະເສດ ກໍຈຳຕ້ອງເຮັດວຽກຫນັກຫລາຍຢ່າງຂຶ້ນອີກເພື່ອສ້າງສະຫະກອນກະເສດ ໃຫ້ເຂັ້ມແຂງ ແລະສ້າງຊີວິດ ການເປັນຢູ່ຂອງຕົນ ໃຫ້ອຸດົມສົມບູນ. ເຖິງຢ່າງໃດກໍຕາມ ວຽກງານສ່ວນໃຫຍ່ ກໍໄດ້ປະຕິບັດໄປແລ້ວ ຄື ຊາວນາໄດ້ປົດປ່ອຍຕົນເອງ ອອກຈາກພວກກູລັກໄດ້, ໄດ້ໂຮມກັນເຂົ້າ ຢູ່ໃນສະຫະກອນກະເສດ ແລະເລີ່ມຕົ້ນເຮັດວຽກລວມຫມູ່. ຄຳຊີ້ນຳຂອງເລນິນ ກ່ຽວກັບການເຕົ້າໂຮມຊາວນາ ເຂົ້າຫາກັນ ນັ້ນໄດ້ປະຕິບັດໄປສຳເລັດແລ້ວ.

ໃນລະຫວ່າງແຜນການຫ້າປີ ຊຸດທຳອິດນີ້ ພົນຖານອັນຫມັ້ນ

ຄົງສຳລັບການສ້າງສາຕໍ່ໄປແລະການເຮັດໃຫ້ ລະບອບສັງຄົມນິຍົມ ຢູ່ໃນ ສ.ສ.ສ.ຊ. ມີຄວາມເຂັ້ມແຂງນັ້ນ ໄດ້ວາງໄວ້ແລ້ວ. ໃນວຽກງານດ້ານອຸດສາຫະກຳ ແລະກະສິກຳນັ້ນ ປະຊາຊົນໂຊວຽດ ກໍໄດ້ເຮັດວຽກຮ່ວມກັນ ຄື ລວມໝູ່.ບໍ່ມີຜູ້ໃດດຳລົງຊີວິດຢູ່ດ້ວຍການໃຊ້ຈ່າຍຂອງຄົນອື່ນ. ຫລັກການ ຂອງສັງຄົມນິຍົມທີ່ວ່າ: "ແຕ່ລະຄົນເຮັດວຽກຕາມຄວາມ ສາມາດແລະຊົມໃຊ້ຕາມແຮງງານ" ນັ້ນ ໄດ້ກາຍເປັນຫລັກການ ທີ່ມີອິດທິພົນສູງສຸດ ຢູ່ໃນຕົວເມືອງ ແລະໃນຊົນນະບົດ. ໃນລະຫວ່າງແຜນການຫ້າປີ ຊຸດທຳອິດນີ້ ພັນທະພາບລະຫວ່າງຊາວນາ ແລະຊາວກຳມະກອນ ທີ່ມີຄວາມເຂັ້ມແຂງຫລາຍຂຶ້ນນັ້ນກໍໄດ້ກາຍເປັນສິ່ງທີ່ໃຜບໍ່ສາມາດ ຈະມາທຳລາຍໄດ້.

ໃນການຕໍ່ສູ້ເພື່ອສ້າງສາ ລະບອບສັງຄົມນິຍົມນັ້ນພັກເລນິນຂອງພວກໂບນເຊວິກ ຈຳຕ້ອງໄດ້ເອົາຊະນະການຕໍ່ຕ້ານຂອງພວກທີ່ມີທັດສະນະ ຕໍ່ຕ້ານຕ່າງໆ ທີ່ມີຢູ່ໃນພັກ. ຍົກຕົວຢ່າງພວກຕະລົດສະກີ ໄດ້ສ້າງຄວາມບໍ່ເຊື່ອໝັ້ນຂຶ້ນຢູ່ໃນໝູ່ປະຊາຊົນ ດ້ວຍການເວົ້າກັບປະຊາຊົນວ່າ ມັນເປັນໄປບໍ່ໄດ້ ທີ່ຈະສ້າງລະບອບສັງຄົມນິຍົມຂຶ້ນ ຢູ່ໃນປະເທດໜຶ່ງ ປະເທດດຽວແລະກໍຢືນຢັນວ່າ ສັງຄົມນິຍົມ ອາດຈະສາມາດສ້າງຂຶ້ນໄດ້ກໍມີແຕ່ໃນເມື່ອ ພາຍຫລັງທີ່ທົ່ວໂລກ ໄດ້ເກີດການປະຕິວັດ ແລ້ວເທົ່ານັ້ນ. ພວກເຂົາໄດ້ຮຽກຮ້ອງໃຫ້ເພີ່ມພາສີ ຈາກຊາວນາຂຶ້ນອີກ ແລະອັນນີ້ຈະເປັນການນຳເອົາຄວາມແຕກແຍກ ມາສູ່ພັນທະພາບ ລະຫວ່າງ ຊາວນາກັບຊາວກຳມະກອນ ອັນເປັນ

ພົນຖານຂອງອຳນາດໂຊວຽດ. ກຸ່ມອື່ນໆຂອງພວກຝ່າຍຄ້ານຢູ່ໃນຖັນແຖວພັກ ອັນນີ້ເອີ້ນວ່າ ກຸ່ມນິຍົມຂວາຈັດ ກໍໄດ້ດຳເນີນການຕ້ານການຖືເອົາ ຊຸດສາຫະກຳຫນັກເປັນຈຸດຫນັກ ແລະຮຽກຮ້ອງຢ່າງມີການຫລອກລວງວ່າ ກ້ອນທຶນນັ້ນບໍ່ຄວນຈະໃຊ້ໄປ ເພື່ອສ້າງສາໂຮງຈັກໂຮງງານ ແຕ່ໃຊ້ໄປເພື່ອຊື້ ສິນຄ້າມາຈາກຕ່າງປະເທດ. ພວກນິຍົມຂວາໄດ້ພະຍາຍາມທຳລາຍການສ້າງສາສະຫະກອນກະເສດ ແລະຕ້ອງການຢາກ ຈະໃຫ້ຊາວນາເອກະເທດ ມີຄວາມເຂັ້ມແຂງຂຶ້ນໂດຍສະເພາະວຽກງານກະສິກຳ ຂອງພວກກູລັກ ໂດຍໄດ້ຮຽກຮ້ອງໃຫ້ ລັດຖະບານປຽນທ່າທີຕໍ່ພວກກູລັກ.

ພາຍໃຕ້ການນຳພາຂອງພັກໂບນເຊວິກໂດຍເດີນຕາມເສັ້ນທາງ ຂອງເລນິນນັ້ນ ປະຊາຊົນໂຊວຽດ ໄດ້ແກ້ໄຂ ບັນຫາການສ້າງສາສັງຄົມນິຍົມ ໄດ້ຢ່າງສຳເລັດ ທັງຢູ່ໃນຕົວເມືອງແລະໃນຊົນນະບົດ. ຊີວິດຕົວຈິງໄດ້ສະແດງໃຫ້ເຫັນຄວາມຜິດພາດ ແລະທັດສະນະອັນເປັນອັນຕະລາຍ ຂອງພວກຝ່າຍ ຕໍ່ຕ້ານແລະພວກເຂົາກໍໄດ້ຖືກຂັບໄລ່ອອກຈາກຖັນແຖວພັກໄປ.

ໃນປີ ໑໙໓໓ ແຜນການຫ້າປີ ຊຸດທີສອງ ກໍໄດ້ຖືກຮັບຮອງເອົາ. ຕາມແຜນການນີ້ ມັນມີຄວາມຈຳເປັນທີ່ຈະຕ້ອງ ສ້າງໂຮງຈັກໂຮງງານໃຫມ່ຂຶ້ນ, ປະຕິບັດໃຫ້ມີຈຳນວນ ລົດຕະລັກເຕີ ສຳລັບສະຫະກອນກະເສດ ແລະດຳເນີນການຜະລິດ ສິນຄ້າ ທີ່ມີຄວາມຈຳເປັນ ແກ່ພົນລະເມືອງໃຫ້ຫລາຍຂຶ້ນ.

ເພື່ອປະຕິບັດແຜນການຫ້າປີຊຸດທີສອງໃຫ້ແລ້ວນັ້ນ, ປະຊາ

ຊຶ່ງໂຊວຽດກໍໄດ້ສ້າງສາໂຮງງານໃຫມ່ຂະຫນາດໃຫຍ່ອື່ນຫຼາຍຮ້ອຍແຫ່ງ ແລະໃນຈຳນວນນັ້ນ ກໍມີໂຮງງານສ້າງກົນຈັກ ທີ່ອູລານ, ໂຮງງານສ້າງລົດຕະລັກເຕີ ທີ່ເຊລຍບິນສະກີ, ໂຮງງານສ້າງຫົວລົດໄຟ ໃນເມືອງລູການສະກະ ແລະວິສາຫະກິດອື່ນໆອີກ.

ສະຫະກອນກະເສດກໍໄດ້ຮັບລົດອິນສິ່ງ ປະມານ ໑໕໐ ພັນຄັນ, ລົດກ່ຽວເຂົ້າທີ່ປັບປຸງແລ້ວ ໓໓ ພັນຄັນ ແລະລົດຕະລັກເຕີ ຫລາຍໆຄັນອີກ.

ດ້ວຍການຊ່ວຍເຫລືອຂອງກົນຈັກຕ່າງໆນັ້ນ ຄອງເດີນເຮືອທີ່ເຊື່ອມຈອດທະເລຂາວ ກັບທະເລບັນຕິກ ແລະ ແມ່ນ້ຳໂວນກາ ກັບແມ່ນ້ຳມົດສະກູ ກໍໄດ້ຮັບການສ້າງຂຶ້ນ. ຢູ່ໃນນະຄອນມົດສະກູ ສາຍທາງລົດໄຟໃຕ້ດິນ ກໍໄດ້ຖືກສ້າງຂຶ້ນ ເຊັ່ນດຽວກັນ.

ໃນລະຫວ່າງແຜນການຫ້າປີ ຊຸດທີສອງນີ້ ເພິ່ນໄດ້ເອົາໃຈໃສ່ຫລາຍບໍ່ພຽງແຕ່ຕໍ່ການສ້າງວິສາຫະກິດໃຫມ່ຂຶ້ນເທົ່ານັ້ນແຕ່ຫາກຍັງຕໍ່ການຮ່ຳຮຽນເອົາເຕັກນິກ ທີ່ໄດ້ມີຢູ່ແລ້ວນັ້ນດີກັນ. ດ້ວຍການລິ່ເລີ່ມຂອງພັກກອມມູນິດນັ້ນ ຢູ່ໃນໂຮງຈັກໂຮງງານຕ່າງໆ ກໍ່ຈຶ່ງໄດ້ເກີດມີຂະບວນການຮ່ຳຮຽນເຕັກນິກຂຶ້ນ ຢ່າງກວ້າງຂວາງ. ຂະບວນການນີ້ ໄດ້ນຳພາໂດຍພວກນັກ ວິສະວະກອນ ແລະນັກເຕັກນິກ ຜູ້ທີ່ໄດ້ຝຶກຝົນອົບຮົມຢູ່ໃນສະຖາບັນການສຶກສາຊັ້ນສູງແລະຊັ້ນກາງໂຊວຽດ. ຢູ່ໃນຈຳພວກນີ້ ກໍມີຜູ້ຄົນຫລາຍຄົນ ທີ່ໄດ້ຮ່ຳຮຽນຢູ່ໃນສະຖາບັນການສຶກສາຈາກພະ

ແນກຂອງຊາວກຳມະກອນ.

ການແຂ່ງຂັນກັນເພື່ອປະຕິບັດການຜະລິດ ໃຫ້ໄດ້ລື່ນລະດັບຄາດຫມາຍນັ້ນ ແມ່ນໄດ້ດຳເນີນໄປຢູ່ໃນປະເທດ ຢ່າງກ້ວາງຂວາງ. ຊາວກຳມະກອນຢູ່ໃນໂຮງຈັກໂຮງງານຕ່າງໆໄດ້ພະຍາຍາມ ທີ່ຈະຜະລິດສິ່ງຂອງຕ່າງໆ ໃຫ້ໄດ້ຫລາຍທີ່ສຸດໃນລະຫວ່າງມື້ເຮັດວຽກແປດຊົ່ວໂມງ ເຊິ່ງພວກເຂົາຈະເປັນ ຕ້ອງໄດ້ຜະລິດເປັນເວລາສອງມື້ ຫລືວ່າຫລາຍກ່ວານັ້ນ. ເມື່ອໄດ້ຮ່ຳຮຽນເອົາເຕັກນິກເປັນຢ່າງດີ ແລະປັບປຸງວິທີການ ເຮັດວຽກ ຢ່າງຫມັ້ນຄົງຖາວອນແລ້ວ ກໍໄດ້ມີຊາວກຳມະກອນຫຼາຍຍິ່ງຂຶ້ນ ປະຕິບັດການຜະລິດ ໃຫ້ໄດ້ລື່ນອັດຕາຫລາຍເທົ່າ. ໃນປີ ໑໙໓໕ ອາເລັກເຊສະຕາຄານົບ, ນັກຂຸດບໍ່ຖ່ານຫີນ ໂດເນດ ຂຸດຖ່ານຫີນໄດ້ເຖິງ ໑໔,໕ ເທົ່າ ຫລາຍກ່ວາອັດຕາທີ່ຂຸດໄດ້ໃນວັນເຮັດວຽກທຳມະດາມື້ດຽວ. ຕົວຢ່າງຂອງສະຕາຄານົບນີ້ ໄດ້ມີຊາວກຳມະກອນຫລາຍຄົນດຳເນີນຕາມ. ຂະບວນການນີ້ ເຊິ່ງມີຊື່ວ່າ ຂະບວນການສະຕາຄານົບນັ້ນ ກໍໄດ້ເລີ່ມເກີດຂຶ້ນ ຢູ່ໃນປະເທດ. ນັກຂຸດບໍ່ຖ່ານຫີນໂດເນດ ຊື່ ນິກິຕາອີໂຊຕົບ ໄດ້ທຳການສຶກສາຄົ້ນຄ້ວາເຕັກນິກໃຫມ່ ຢ່າງເລິກເຊິ່ງ, ໄດ້ຈັດຕັ້ງວຽກງານຂອງຕົນຂຶ້ນຢ່າງສະຫຼາດແລະກໍຜະລິດຖ່ານຫີນໄດ້ໄດ້ຫລາຍເທົ່າກັບຄົນ ໓໐ ຄົນ ຜະລິດໄດ້ໃນມື້ຫນຶ່ງ. ອາເລັກຊານເດີບູຊີກິນ ຜູ້ທີ່ເຮັດວຽກຢູ່ໃນ ໂຮງງານສ້າງລົດຍົນ ທີ່ເມືອງໂກລະກີ ໃນຖານະເປັນຜູ້ໃສ່ນ້ຳມັນໃຫ້ຊ່າງຕີເຫລັກນັ້ນ ກໍໄດ້ຮຽນເປັນຊ່າງຕີເຫລັກ. ໃນເວລາ

ນັ້ນ ມັນຕ້ອງໃຊ້ຄ້ອນຕີເຫລັກ ເຖິງ ໘໘ ບາດ. ເພື່ອຈະຕີເຫລັກໃຫ້ເປັນຄານລົດໄດ້. ແຕ່ບູຊີກຸນ ກໍໄດ້ພົບວິທີ ທີ່ຈະ ຕີເຫລັກນັ້ນ ໄດ້ພຽງແຕ່ ໑໐ ບາດເທົ່ານັ້ນ. ຊ່າງຕ່ຳຫູກເປອະໂດກີຢາ ແລະມາລີຢາ ວິໂນກະລາໂດວາ ກໍຄືກັນກັບຊ່າງຕ່ຳຫູກຄົນອື່ນຢູ່ທີ່ໂຮງງານ, ທ່າອິດກໍປັ່ນຝ້າຍໄດ້ ໘໔ ຫລອດໃນເວລາດຽວ. ແຕ່ວ່າພວກເຂົາຕ້ອງການທີ່ຈະຜະລິດ ແຜ່ນໃຫ້ໄດ້ຫລາຍກ່ວານັ້ນ ສຳລັບປະຊາຊົນໂຊວຽດ. ດັງນັ້ນຄົນໄດ້ສຶກສາຄົ້ນຄວ້າເຕັກນິກ ຢ່າງລະອຽດແລ້ວ ໂດຍໄດ້ແກ້ໄຂ ເສັ້ນທາງທີ່ສັ້ນກ່ວາ ລະຫວ່າງຫລອດທີ່ເຂົາປະຕິບັດການຢູ່ນັ້ນແລ້ວ, ຊ່າງຕ່ຳຫູກອິໂນກະລາດົບ ກໍເລີ່ມປະຕິບັດໄດ້ເຖິງ໑໔໔ ຫຼອດແລ້ວ ຕໍ່ມາກໍຮອດ ໘໑໖ ຫລອດ ໃນເວລາດຽວ. ການເກັບກ່ຽວຫົວຜັກກາດເຮັດນ້ຳຕານ ທີ່ມີລະດັບສູງຢ່າງບໍ່ຄາດຝັນນັ້ນ ແມ່ນໄດ້ປູກຂຶ້ນໂດຍ ຊາວສະຫະກອນກະເສດຍິງ ຊື່ ມາລີຢາ ເດມເຊນໂກ ຢູ່ໃນອູກະລາອີນາ. ໃນເວລາດຽວກັນ ອັດຕາການປະຕິບັດງານສູງ ກໍແມ່ນໄດ້ຮັບໂດຍບັນດາ ນັກຂັບລົດຕະລັກເຕີ ແຫ່ງຫນ່ວຍຂັບລົດຕະລັກເຕີແມ່ຍິງ ທີ່ນຳພາໂດຍ ປະລາສະກົບ ອັງເກລີນາ. ຂະບວນການສະຕາຄານົບ ໄດ້ຮັບການຂະຫຍາຍຕົວໄປ ທັງໃນດ້ານວຽກງານອຸດສາຫະກຳແລະວຽກງານກະສິກຳ. ບັນດາຜູ້ເຂົ້າຮ່ວມຢູ່ໃນຂະບວນສະຕາຄານົບ ແມ່ນຍິນດີແບ່ງປັນຄວາມລັບ ແຫ່ງຜົນສຳເລັດຂອງຕົນ , ແລະເຜີຍແຜ່ຄວາມຮູ້ແລະບົດຮຽນຂອງຕົນ ໄປຍັງຊາວກຳມະກອນ ແລະ ຊາວສະຫະກອນກະເສດຜູ້ອື່ນ.

ນັກຂຸດຖ່ານຫີນທີ່ດີເດນ ອາ. ສະຕາຄານົບ
ພ້ອມດ້ວຍເພື່ອນຝູ່ງ. ໂດນບາດ ປີ ໑໙໓໕.

ແຮງງານແບບວິລະກຳນີ້ໄດ້ເກີດດອກອອກຜົນຂອງມັນຂຶ້ນຄື ໄດ້ເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນໂຊວຽດດີຂຶ້ນ. ໃນປີ ໑໙໓໔ ການແຈກຢາຍເຂົ້າຈີ່ ແລະຜະລິດຕະພັນອື່ນໆຕາມໃບບົງ ໃຫ້ແກ່ພົນລະເມືອງນັ້ນ ໄດ້ຖືກຍົກເລີກໄປ. ພໍມາຮອດປີ ໑໙໓໖ ຢູ່ໃນປະເທດກໍໄດ້ມີການຜະລິດບໍ່ພຽງແຕ່ເຂົ້າຈີ່ໃຫ້ພຽງພໍເທົ່ານັ້ນ ແຕ່ຫາກຍັງຮອດຊີ້ນ, ນ້ຳມັນເບີ, ນ້ຳຕານ ແລະຜະລິດຕະພັນທາງດ້ານສະບຽງອາຫານອື່ນໆອີກ. ໂຮງຈັກໂຮງງານ ທີ່ຜະລິດແຜ່ນແພ, ເສື້ອຜ້າ, ເກີບ, ເຄື່ອງເຮືອນ, ຖ້ວຍຊາມແລະວັດຖຸສິ່ງຂອງ ປະເພດອື່ນໆ ທີ່ຈຳເປັນ ແກ່ພົນລະເມືອງ ກໍໄດ້ມີຫລາຍຂຶ້ນໃນປະເທດ. ໃນລະຫວ່າງ ແຜນການຫ້າປີ ຊຸດທີ່ສອງນີ້ ການຜະລິດວັດຖຸສິ່ງຂອງ ທີ່ໃຊ້ສອຍຕ່າງໆ ກໍໄດ້ເພີ່ມຂຶ້ນຮອດສອງເທົ່າ. ໃນໄລຍະເວລານັ້ນອັດຕາເງິນເດືອນ ຂອງຊາວກຳມະກອນ ແລະພະນັກງານ ໄດ້ເພີ່ມຂຶ້ນຫລາຍກວ່າສອງເທົ່າ, ສ່ວນລາຍໄດ້ຂອງຊາວສະຫະກອນກະເສດ ຊ້ຳພັດໄດ້ເພີ່ມຂຶ້ນເກືອບຮອດ ໓ ເທົ່າ. ໃນເວລານັ້ນ ປະຊາຊົນໂຊວຽດ ໄດ້ມີອາຫານການກິນດີແລ້ວ ແລະໄດ້ເລີ່ມມີເຄື່ອງນຸ່ງດີຂຶ້ນ. ພວກເຂົາໄດ້ປ່ຽນເອົາເຄື່ອງນຸ່ງ-ເປັນຊຸດ ແລະເສື້ອຜ້າຈາກແຜ່ນແພ ທີ່ມີຄຸນນະພາບສູງ ແລະເກີບທີ່ສະດວກສະບາຍມາໃຊ້ແທນ ເຄື່ອງນຸ່ງແບບເກົ່າ ທະຫານ ແລະເກີບໂບກ. ໃນເວລາດຽວກັນນັ້ນ ປະຊາຊົນໂຊວຽດ ກໍສາມາດຊື້ສິນຄ້າທີ່ຜະລິດດ້ວຍມືໄດ້ຫລາຍກວ່າທີ່ຜະລິດຈາກໂຮງງານ.

ເຮືອນຊານໃໝ່ໆຂະໜາດໃຫຍ່ ກໍໄດ້ຖືກສ້າງຂຶ້ນຢູ່ໃນຕົວເມືອງຕ່າງໆ ແລະກໍໄດ້ມີຄອບຄົວຈຳນວນຫລາຍຂຶ້ນຍ້າຍໄປຢູ່ບ້ານໃໝ່ນັ້ນ. ມິດສະກູອັນເກົ່າແກ່ ກໍພວມຟື້ນຟູຂຶ້ນໃໝ່ແລະໄດ້ກາຍເປັນນະຄອນທີ່ມີຄວາມຈົບງາມແລະທັນສະໄໝ ທີ່ສຸດແຫ່ງໜຶ່ງໃນໂລກ. ຢູ່ໃນບ້ານຂອງຊາວສະຫະກອນກະເສດກໍໄດ້ມີເຮືອນຊານຊາວນາ ທີ່ສະດວກສະບາຍປາກົດຂຶ້ນ.ແທນທີ່ຈະໃຊ້ສິນຄ້າທີ່ເຮັດດ້ວຍມືແລະມີສີລະປະນັ້ນຊາວນາ ກໍໄດ້ເລີ່ມໃຊ້ສິນຄ້າ ທີ່ຜະລິດຂຶ້ນຢູ່ໃນໂຮງຈັກໂຮງງານ ທີ່ມີ ລາຄາຖືກ.

ຊາວກຳມະກອນແລະຊາວນາ ຜູ້ທີ່ໄດ້ຮັບຄວາມ ທຸກຍາກແລະຄວາມລຳບາກ ກ່ຽວກັບການບໍ່ມີເຂົ້າຈະກິນເປັນເວລາຫລາຍສະຕະວັດມານັ້ນ ກໍໄດ້ພະຍາຍາມສະແຫວງຫາຄວາມຮູ້ແລະວັດທະນະທຳ ຢ່າງກະຕືລືລົ້ນ. ຢູ່ໃນປະເທດ ເຊິ່ງເມື່ອກ່ອນການປະຕິວັດເດືອນຕຸລານັ້ນ ພົນລະເມືອງສອງສ່ວນສາມທີ່ບໍ່ສາມາດອ່ານແລະຂຽນໄດ້ນັ້ນ ມາດຽວນີ້ການກົກໜັງສືນັ້ນກໍໄດ້ຖືກລົບລ້າງໄປແລ້ວ. ຕາໜ່າງການສຶກສາທົ່ວໄປແລະສະຖາບັນການສຶກສາອື່ນໆ ກໍໄດ້ຂະຫຍາຍອອກ ຢ່າງບໍ່ຢຸດ ຢັ້ງ. ພຽງແຕ່ໃນລະຫວ່າງ ປີ ໑໙໓໓–໑໙໓໗ ເທົ່ານັ້ນ ໂຮງຮຽນໃໝ່ ໓໕໐໐ ກວ່າແຫ່ງ ກໍໄດ້ຖືກສ້າງຂຶ້ນຢູ່ໃນບ້ານຂອງຊາວກຳມະກອນ ແລະໃນເມືອງຕ່າງໆ,ແລະໂຮງຮຽນຊັ້ນ ປະຖົມໃໝ່ລະບົບ ໗ ປີ ໑໔ ພັນກວ່າແຫ່ງ ກໍໄດ້ເປີດຂຶ້ນຢູ່ໃນບ້ານແລະຊົນນະບົດ. ຈຳນວນນັກຮຽນຢູ່ໃນໂຮງຮຽນ ໄດ້ເພີ່ມຂຶ້ນ

ຈາກ ໑໐ ລ້ານຄົນ ໃນປີ ໑໙໓໓ ໄປເຖິງ ໘໙ ລ້ານຄົນໃນ ປີ ໑໙໓໗. ພົນລະເມືອງໜຸ່ມນ້ອຍທັງໝົດ ຂອງປະເທດໂຊວຽດ ໄດ້ຖືກບັງຄັບໃຫ້ໄປຮຽນໜັງສືຢູ່ໃນໂຮງຮຽນແລະການຮຽນ ກໍບໍ່ໄດ້ເສຍຄ່າຈ້າງແຕ່ປະການໃດເລີຍ.

ເພື່ອທີ່ຈະພັດທະນາອຸດສາຫະກຳ ແລະກະສິກຳ,ເພື່ອທີ່ຈະສ້າງກົນຈັກຕ່າງໆໄດ້ ແລະເພື່ອທີ່ຈະອົບຮົມສັ່ງສອນເດັກນ້ອຍໄດ້ນັ້ນ ມັນຈຳເປັນຕ້ອງໄດ້ມີພວກນັກຊ່ຽວຊານ ໃນວິຊາການຕ່າງໆ. ໃນລະຫວ່າງແຜນການຫ້າປີ ຊຸດທີສອງນັ້ນມີຜູ້ຄົນປະ-ມານໜຶ່ງລ້ານຄົນ ໄດ້ຮັບການຝຶກຝົນອົບຮົມ ຢູ່ໃນສະຖາບັນແລະໂຮງຮຽນຊັ້ນກາງພິເສດ. ດັ່ງນັ້ນ ນັກປັນຍາຊົນ ໃໝ່ຂອງໂຊວຽດ ທີ່ມາຈາກຊາວກຳມະກອນແລະຊາວນາ ຈຶ່ງໄດ້ເກີດມີຂຶ້ນ.

ໃນແບບແຜນການດຳລົງຊີວິດ ຂອງທຸກໆຄອບຄົວ ໂຊວຽດນັ້ນ ກໍມີໜັງສືພິມ, ວາລະສານ, ປຶ້ມແລະວິທະຍຸອ່ານ ແລະຮັບຟັງກັນ ຢ່າງຖາວອນ. ຫ້ອງສະໝຸດສາທາລະນະຊົນກໍໄດ້ເປີດຂຶ້ນ ຢູ່ໃນຕົວເມືອງແລະຊົນນະບົດ. ປຶ້ມຕ່າງໆໄດ້ພິມຂຶ້ນຢູ່ໃນ ສ.ສ.ສ.ຊ. ເປັນພາສາຕ່າງໆ ເຖິງ ໑໑໑ ພາສາ. ຢູ່ໃນມົດສະກູ ຫໍສະໝຸດໃໝ່ທີ່ໃຫຍ່ທີ່ສຸດ ໃນປະເທດ ຊື່ ວ. ອີ. ເລນິນ ກໍໄດ້ຖືກສ້າງຂຶ້ນ.

ບັນດານັກຂຽນໂຊວຽດ ຄື ມາກຊິມ ໂກລະກີ,ອາເລັກເຊໂຕນສະຕອຍ, ມີຄາອິນ ໂຊໂລຄົບ, ນິໂກລາຍ ໂອສະຕະລົບສະກີ, ໂບລິດ ໂກລະບາຕອບ, ອາເລັກເຊ ຊູລະກອບ,

ນິໂກລາຍ ຕິໂຂນົບ ແລະຄົນອື່ນໆ ກໍໄດ້ແຕ່ງປຶ້ມສິລະປະອັນດີ
ເດັ່ນ ເຊິ່ງໄດ້ເປີດເຜີຍເຖິງວຽກງານວິລະກຳຂອງປະຊາຊົນ
ໂຊວຽດ ທັງໃນດ້ານການສູ້ຮົບ ແລະ ການອອກແຮງງານ.
ການກອນຂອງ ດະເຊບາເຢັບ ຊາວກາຊາກ, ຕາບິໂອຕີຊິນ
ຊາວອູກະລາອິນາ, ຊາດະລິເຢດດີນ ຊາວຕາດຊິກ,ຢານໂກ
ກູປາລະ ຊາວເບໂລລູດເຊຍ, ຕີຊີອານຕາບິດະເຊ ຊາວກະ
ລູຊິນ, ອາເວຕິກ ອິຊາອາກຽນ ຊາວອາລະເມເນຍ, ຊາ
ເຊດູ ວູລະກູນ ຊາວອາເຊລະໄບຊານ ກໍໄດ້ມີຊື່ສຽງ ດັງດັງ
ໄປທົ່ວປະເທດ. ວັນນະຄະດີ ໃນຮູບແບບຫລາຍຊົນຊາດແລະ
ໃນເນື້ອໃນສັງຄົມນິຍົມ ກໍໄດ້ຖືກຂຽນຂຶ້ນ ໃນ ສ.ສ.ສ.ຊ.
ບັນດາຕົວແທນຂອງ ໔໘ ຊົນຊາດໄດ້ມາຮ່ວມກອງປະຊຸມໃຫຍ່
ນັກຂຽນໂຊວຽດ ທົ່ວສະຫະພາບ ຄັ້ງທຳອິດ ເຊິ່ງໄດ້ຈັດຂຶ້ນ
ໃນປີ ໑໙໓໔.

ມະຫາຊົນຊາວຜູ້ອອກແຮງງານ ອັນກ້ວາງໃຫຍ່ໄພສານໄດ້
ພາກັນສ້າງສິລະປະປະຊາຊົນຂຶ້ນ ຢ່າງຂະຫຍັນຂັນແຂງ.ທຸກໆ
ຄົນແມ່ນສາມາດສ້າງ ແລະຂະຫຍາຍຄວາມສາມາດ ແລະ
ຄວາມຊຳນິຊຳນານຂອງຕົນຂຶ້ນ ໃນສະໂມສອນ ຊາວກຳມະ
ກອນແລະຊົນນະບົດ. ຊາວກຳມະກອນແລະຊາວນາຫຼາຍແສນ
ຄົນ ພາຍຫລັງເລີກວຽກງານແລ້ວ ກໍໄດ້ພາກັນໄປຮ່ວມ ໃນ
ການສະແດງສິລະປະ, ຮ້ອງເພັງເປັນຄະນະ ແລະຫລິ້ນຢູ່ໃນ
ວົງດົນຕີ. ນັກສິລະປະສະຫມັກຫລິ້ນ ທີ່ມີແວວດີທີ່ສຸດໄດ້ຖືກສົ່ງ
ໄປຮຽນ ໂດຍຄ່າໃຊ້ຈ່າຍຂອງລັດ ແລະກໍໄດ້ກາຍເປັນນັກສະ

ແດງ ທີ່ມີຊື່ສຽງ ໃນດ້ານສິລະປະໄປ.

ໂຮງລະຄອນອາຊີບ ຫລາຍຮ້ອຍແຫ່ງ ກໍໄດ້ຮັບການຈັດຕັ້ງ ຂຶ້ນຢູ່ໃນປະເທດ. ລະຄອນເລື່ອງ "ການເສຍສະລະ ຂອງກອງເຮືອຮົບ" ແລະ "ປະລາຕົບກະເລເຊດ" ທີ່ສະແດງໂດຍ ອາເລັກຊານດະລະໂກລະເນຊູກ, ເລື່ອງ "ອາສິສະໂຕກະລາດ" ແລະ "ຄົນກັບປືນກົນ" ສະແດງໂດຍ ນິໂກລາຍ ໂປໂກດິນ, ລະຄອນດົນຕີໂຊວຽດ ເລື່ອງທຳອິດເລື່ອງຫນຶ່ງຊື່ "ແມ່ນ້ຳໂດນທີ່ສະຫງົບ" ທີ່ແຕ່ງໂດຍ ອີວານດະເຊລະຊິນສະກີ ແລະການສະແດງອື່ນໆອີກ ເຊິງຊາວກຳມະກອນໂຊວຽດ, ຊາວນາແລະທະຫານແດງ ໄດ້ເປັນວິລະຊົນ ຢູ່ໃນເລື່ອງນັ້ນ ແມ່ນໄດ້ດຳເນີນໄປ ຢ່າງມີຜົນສຳເລັດ ອັນໃຫຍ່ຫລວງ.

ເຄື່ອງສາຍຮູບເງົາເຄື່ອນທີ່ ໄດ້ແນະນຳໃຫ້ປະຊາຊົນຜູ້ທີ່ຢູ່ໃນບ້ານ ແລະຊົນນະບົດ ອັນຫ່າງໄກໄດ້ຮູ້ຈັກກັບຜົນງານຂອງສິລະປະຮູບເງົາໂຊວຽດ ຜູ້ຫນຸ່ມນ້ອຍ ທີ່ມີແວວດີພິເສດ. ຮູບເງົາເລື່ອງ "ຊາປາເຢັບ", "ກາຍະສິນລະຄອນສັດ" ແລະ "ໄລຍະຫນຸ່ມຂອງມາກຊິມ" ທີ່ເລົ່າເລື່ອງກ່ຽວກັບ ປະຫວັດສາດວິລະກຳ ໃນການສ້າງຕັ້ງລັດໂຊວຽດ, ກ່ຽວກັບມະນຸດສະຍະຊາດ ຂອງສັງຄົມໂຊວຽດນັ້ນ ແມ່ນໄດ້ຮັບການສະແດງ - ອອກ ຢູ່ໃນເວທີຮູບເງົາທົ່ວປະເທດດ້ວຍຜົນສຳເລັດ ອັນຍິ່ງໃຫຍ່.

ເຖິງຢ່າງໃດກໍຕາມ ຄັນໄດ້ຂະຫຍາຍສິລະປະໃຫມ່ ຂອງຊາວກຳມາຊີບແລ້ວ ປະຊາຊົນໂຊວຽດ ກໍບໍ່ໄດ້ລືມຄວາມຮັ່ງມີ

ທາງວັດທະນະທຳ ອັນເປັນມໍລະດົກປະເທດຂອງຕົນ.ຜົນງານ
ຂອງນັກຂຽນລັດເຊຍຮຸ່ນເກົ່າ. ຄື ປູສະກິນ, ເລລະມົນຕົບ,
ໂກໂກລະ, ໂຕນສະຕອຍ, ຕູລະກະເນບ,ເຊຄົບແລະຄົນອື່ນ
ອື່ນໂຮມທັງຂອງພວກຮຸ່ນເກົ່າຂອງປະຊາຊົນແຫ່ງສະຫະພາບ-
ໂຊວຽດ ຄົນອື່ນໆກໍໄດ້ພິມອອກໃນໄລຍະເວລານັ້ນ (ຄືດັ່ງພິມ
ອອກໃນສະໄໝພວກເຮົາ) ເປັນຫລາຍລ້ານສະບັບ. ຄຽງຄູ່
ໄປກັບບົດລະຄອນຂອງນັກຂຽນ ແລະນັກປະພັນໂຊວຽດ ຢູ່ໃນ
ສາກໂຮງລະຄອນນັ້ນ ລະຄອນຂອງໂອສະຕະລົບສະກີ,ເຊຄົບ,
ລະຄອນດົນຕີ ແລະການສະແດງດົນຕີອື່ນໆ ຂອງກະລິນກາ,
ຊາຍຄົບສະກີ, ລິມສະກີ ໂກລະສາກົບ,ປາລີອາສະວິລະ,ສຸ
ເປັນດີອາລົບ ກໍໄດ້ຮັບການສະແດງຂຶ້ນແລະຜົນງານທີ່ດີ ເດັ່ນ
ຂອງພວກຮຸ່ນເກົ່າ ຕາເວັນຕົກກໍຄືກັນ.

ຫໍພິພິດທະພັນ ສະຫະພາບໂຊວຽດ ໄດ້ຮັກສາສົມບັດທາງສີ
ລະປະ, ການຄວັດ ແລະສິລະປະປະສົມ ຂອງປະຊາຊາດ -
ຕ່າງໆ ແຫ່ງສະຫະພາບໂຊວຽດ ແລະ ປະເທດຕາເວັນຕົກ
ແລະພ້ອມດຽວກັນນັ້ນ ກໍແນະນຳຄົນຮຸ່ນໃໝ່ທຸກໆຄົນ ຂອງປະ
ຊາຊົນໂຊວຽດ ໃຫ້ຮູ້ຈັກກັບສິ່ງເຫລົ່ານີ້.

ພວກນັກວິທະຍາສາດໂຊວຽດ ກໍໄດ້ຮັບຜົນສຳເລັດ ໃຫຍ່ໆ
ຫລາຍຢ່າງ. ຄຳສອນຂອງລັດຖະບັນດິດ ອີວານປາວະລົບ
ກ່ຽວກັບກິດຈະກຳປະສາດຂັ້ນສູງ, ວຽກງານຂອງນັກດັດແປງ
ທຳມະຊາດ ອີວານມິຊູລິນ, ຂອງ "ບິດານັກອາວະກາດ ໂຊ
ວຽດ" ຊີ່ ກົນສະຕິນຕິນ ຊີໂອລະກົບສະກີ້ນແມ່ນໄດ້ວາງພື້ນ

ຖານໄວ້ໃຫ້ແກ່ການຂະຫຍາຍຕົວ ກ່ຽວກັບກະແສແນວຄິດວິທະຍາສາດໃໝ່. ບັນດານັກວິທະຍາສາດໂຊວຽດເລໂອນິດມານເດລະສະຕາມ, ກະລີໂກລີ ລານສະເບລະກະ, ດິມະຕະສີສະໂກເບນຊິນ ແລະຄົນອື່ນໆອີກນັ້ນ ໄດ້ສ້າງສ່ວນປະກອບສຳຄັນເຂົ້າໃນການຂະຫຍາຍ ວິຊາຟີຊິກ. ນັກວິທະຍາສາດ-ເຄມີເຊລະເກ ເລເບເດບ ແລະອາເລັກເຊຟາໂບລະສະກີ ກໍໄດ້ຊ່ວຍຈັດຕັ້ງການຜະລິດຝຸ່ນທຽມ ໃຫ້ແກ່ວຽກງານຊຸດສາຫະກຳແລະຢາງທຽມຂຶ້ນ. ພວກນັກພູມີສາດໂຊວຽດ ກໍໄດ້ຈັດຕັ້ງສະຖານີວິທະຍາສາດຂຶ້ນ ໃນຂົ້ວໂລກເໜືອ. ເປັນຄັ້ງທຳອິດໃນໂລກ. ພວກນັກຄະນິດສາດ, ປະຫວັດສາດແລະຕົວແທນວິທະຍາສາດດ້ານອື່ນໆ ແມ່ນໄດ້ຮັບຜົນສຳເລັດ ອັນຍິ່ງໃຫຍ່. ຊື່ສຽງຂອງນັກວິທະຍາສາດໂຊວຽດ ແມ່ນໄດ້ດັງກ້ອງໄປ ໃນກອງປະຊຸມໃຫຍ່ ແລະກອງປະຊຸມນ້ອຍ ທາງດ້ານ ວິທະຍາສາດ ລະຫວ່າງຊາດຕ່າງໆ.

ສ.ສ.ສ.ຊ. ໄດ້ກາຍເປັນປະເທດທີ່ມີການລົບລ້າງ ການກົກໜັງສື ແລະມີລະດັບວັດທະນະທຳສູງ ໜ້ອຍກ່ວາ ໔໐ ປີແລ້ວ ອັນນີ້ແມ່ນໄຊຊະນະອັນຍິ່ງໃຫຍ່ ອີກອັນໜຶ່ງຂອງປະຊາຊົນໂຊວຽດ ຄື ໄຊຊະນະການປະຕິວັດ ວັດທະນະທຳ ໃນປະເທດ.

ແຜນການຫ້າປີ ຊຸດທຳອິດ ໄດ້ປ່ຽນຊາຍແດນແຕ່ເກົ່າ ໃນລັດເຊຍພະເຈົ້າຊາ ທີ່ຍັງບໍ່ທັນມີການຮັບຮູ້ກັນນັ້ນ ແຕ່ດຽວນີ້ຊາຍແດນດັ່ງກ່າວ ໄດ້ກາຍເປັນສະມາຊິກຂອງສະຫະພາບສາ

ທາລະນະລັດສັງຄົມນິຍົມໂຊວຽດໄປແລ້ວ. ທົ່ວທຸກທົ່ນທຸກແຫ່ງ ໄດ້ມີສາຍທາງລົດໄຟ ເຊື່ອມຈອດກັນຕະຫລອດແລ້ວແລະຢູ່ໃນ ສະຫະພາບ ສາທາລະນະລັດເຫລົ່ານີ້ ກໍໄດ້ມີໂຮງຈັກ ໂຮງ ງານໃຫມ່ຂຶ້ນ. ມິດຕະພາບລະຫວ່າງ ປະຊາຊາດຕ່າງໆແຫ່ງ ສ.ສ.ສ.ຊ. ໃນການເຮັດວຽກງານຮ່ວມກັນກໍໄດ້ມີຄວາມເຂັ້ມ ແຂງຂຶ້ນ.

ຜູ້ຄົນຈາກທົ່ວທຸກແຫ່ງໃນປະເທດ ໄດ້ເດີນທາງເຂົ້າມາ ສູ່ ອາຊີກາງ ເພື່ອຮ່ວມການສ້າງຄອງຊົນລະປະທານ. ຄອງທີ່ ໃຫຍ່ທີ່ສຸດແຫ່ງຫນຶ່ງ–ກໍຄືຄອງ ເຟລະການາ ທີ່ມີຄວາມ ຍາວ ເຖິງ ៤៣០ ກິໂລແມດ ເຊິ່ງໃຊ້ຄົນຊຸດເຖິງ ១៦០,ພັນຄົນໃນ ເວລາພຽງ ៤៥ ມື້ເທົ່ານັ້ນ. ດິນນາໃນສະຫະກອນກະເສດອູ ສະເບັກ ທີ່ມີຮອງນ້ຳຊົນລະປະທານນັ້ນ ໄດ້ໃຫ້ການເກັບກ່ຽວ ຝ້າຍໄດ້ສູງຂຶ້ນ. ຝ້າຍເຫລົ່ານີ້ ໄດ້ເປັນວັດຖຸດິບ ໃຫ້ແກ່ໂຮງ ງານຕໍ່າແຜ່ນ ດັ່ງນັ້ນ ຢູ່ໃນຮ້ານຄ້າຈຶ່ງໄດ້ມີແຜ່ນແພ ຊະນິດ ຕ່າງໆ ຂາຍກັນຫລາຍຂຶ້ນ. ດ້ວຍການຊ່ວຍເຫລືອ ຈາກຊາວ ກຳມະກອນລັດເຊຍນັ້ນ ຊາວຜູ້ອອກແຮງງານແຫ່ງອູຊະເບັກ, ຕາດຊິກ ແລະກີລະກິດ ຈຶ່ງໄດ້ຮຽນຮູ້ວິທີດຳເນີນການປູກຝ້າຍ ໄດ້ດີ. ໂຮງງານຕໍ່າແຜ່ນຂະຫນາດໃຫຍ່ ກໍໄດ້ຖືກສ້າງຂຶ້ນ ຢູ່ ໃນສາທາລະນະລັດ ອາຊີກາງ.

ຊົນຊາດທີ່ມີບໍ່ມີວັດທະນະທຳ ແລະຫລ້າຫລັງທີ່ສຸດ ໃນລັດ ເຊຍພະເຈົ້າຊານັ້ນ ແມ່ນບໍ່ມີຊົນຊາດໃດຫລາຍໄປກວ່າ ຊົນ ຊາດ ທີ່ຢູ່ທາງພາກເຫນືອສຸດ. ພວກເຂົາດຳລົງຊີວິດຢູ່ ດ້ວຍ

ການຫາປາແລະລ່າສັດ.ບາງຄົນກໍແມ່ນລ້ຽງກວາງ, ບໍ່ມີຢາວເຮືອນຢູ່ເປັນປົກກະຕິ, ອາໄສຢູ່ໃນກະຕູບນ້ອຍ ທີ່ເຮັດດ້ວຍເປືອກໄມ້ເບີກ ຫລືໜັງກວາງ. ຜູ້ຄົນເຫລົ່ານີ້ ເຈັບໄຂ້ໄດ້ປ່ວຍຢູ່ເລື້ອຍໆ. ປະຊາຊົນທີ່ຢູ່ໃນພາກເໜືອສຸດບາງຈຳພວກກໍໄດ້ຕາຍໄປ ຍ້ອນບໍ່ມີຢູກຢາປິ່ນປົວ ແລະດັ່ງນັ້ນໃນປີ ໑໙໑໗ ຜູ້ຄົນເຫລົ່ານີ້ ຈຶ່ງມີຈຳນວນຢູ່ໜ້ອຍທີ່ສຸດ. ປະຊາຊົນໃນພາກເໜືອສຸດນີ້ ບໍ່ມີໜັງສືຂອງຕົນເອງ ແລະພວກເຂົາ ແມ່ນບໍ່ຮູ້ຮອດປຶ້ມ ແລະໜັງສືພິມເລີຍ. ພວກເຂົາຖືກກົດຂີ່ ໜີບເຕັງຈາກພວກທີ່ຮັ່ງມີ ໃນຊົນເຜົ່າດຽວກັນ ແລະ ພວກພໍ່ຄ້າ ລັດເຊຍ ພ້ອມທັງພວກໝໍຢາ ປະຈຳທ້ອງຖິ່ນ ແຕ່ວ່າ ເມື່ອອຳນາດໂຊວຽດ ໄດ້ຮັບການຈັດຕັ້ງຂຶ້ນ ໃນພາກເໜືອສຸດ ພວກເຂົາກໍໄດ້ຂັບໄລ່ ພວກກົດຂີ່ຂູດຮີດອອກໄປ ແລະຈັດຕັ້ງສະຫະກອນກະເສດຂຶ້ນ. ພວກສະຫະກອນຫາປາ ກໍໄດ້ມີເຮືອຈັກໃຊ້ ແລະກົນຈັກຕ່າງໆ ກໍໄດ້ຖືກສົ່ງໄປສູ່ພາກເໜືອ.ຢູ່ພາກເໜືອນີ້ ໂຮງງານເຮັດປາກະປ໋ອງແລະອື່ນໆ ກໍໄດ້ຖືກສ້າງ ຂຶ້ນ. ເຮືອນທີ່ແໜ້ນໜາຖາວອນ ກໍໄດ້ຖືກສ້າງຂຶ້ນມາແທນກະຕູບ. ນອກນັ້ນ ຊົນຊາດພາກເໜືອນີ້ ກໍໄດ້ສ້າງຕົວໜັງສືຂອງຕົນຂຶ້ນ ແລະເວລານີ້ກໍສາມາດອ່ານປຶ້ມແລະໜັງສືພິມເປັນພາສາຕົນເອງໄດ້. ໂຮງຮຽນ, ໂຮງໝໍ ແລະໂຮງຮຽນອະນຸບານ ກໍໄດ້ເປີດຂຶ້ນ ຢູ່ໃນພາກເໜືອສຸດນີ້. ພວກຊາຍໜຸ່ມຍິງໜຸ່ມຂອງຊົນຊາດພາກເໜືອນີ້ ກໍໄດ້ເຂົ້າຮຽນສະຖາບັນການສຶກສາຊັ້ນສູງ ຢູ່ໃນເລນິນກະລາດ ຄາບາລົບສະກະ,ຢາກູດແລະ

ໃນເມືອງໃຫຍ່ອື່ນໆ.

ຊາວຜູ້ອອກແຮງງານຂອງບັນດາຊົນຊາດອື່ນໆທີ່ອາໄສຢູ່ໃນ ສ.ສ.ສ.ຊ. ກໍຄືພາຍໃນສະຫະພາບ ແຫ່ງສາທາລະນະລັດທີ່ມີສິດເສລີນິຍົມ ໄດ້ພາກັນສ້າງສາຊີວິດໃຫມ່ຂອງຕົນຂຶ້ນໃນແບບຄອບຄົວ ທີ່ມີມິດຕະພາບ ລະຫວ່າງ ຊົນຊາດໂຊວຽດ ຢ່າງມີຄວາມເຊື່ອຫມັ້ນ.

ຄືດັ່ງທີ່ໄດ້ເວົ້າມາຢ່າງຈະແຈ້ງ ໃນຂ້າງເທິງນັ້ນແລ້ວ,ຄັນມາຮອດປີ ໑໙໓໖ ການປ່ຽນແປງຂັ້ນພື້ນຖານ ໃນຊີວິດ ທາງດ້ານເສດຖະກິດ, ການເມືອງແລະວັດທະນະທຳ ຂອງປະຊາຊົນໂຊວຽດ ກໍໄດ້ເກີດຂຶ້ນ. ຢູ່ໃນປະເທດແມ່ນບໍ່ມີຜູ້ຄົນທີ່ກົດຂີ່ຂູດຮີດ ເຊິ່ງມີຊີວິດຢູ່ດ້ວຍແຮງງານ ຂອງຄົນອື່ນນັ້ນອີກແລ້ວ. ສັງຄົມໂຊວຽດ ແມ່ນປະກອບດ້ວຍຊາວກຳມະກອນ,ຊາວນາ ແລະປັນຍາຊົນຊາວຜູ້ອອກແຮງງານ. ທີ່ດິນ,ຊັບໃນດິນສິນໃນນ້ຳ, ໂຮງຈັກໂຮງງານ, ຄວາມຮັ່ງມີທັງຫມົດເຫລົ່ານີ້ ຂອງປະເທດ ແມ່ນຕົກເປັນຊັບສິນບັດ ຂອງປະຊາຊົນຕະຫລອດໄປກາລະນານ. ມິດຕະພາບ ແບບບໍ່ສາມາດຈະທຳລາຍໄດ້ ລະຫວ່າງ ຊາວຜູ້ອອກແຮງງານ ຂອງບັນດາຊົນຊາດຕ່າງໆກໍໄດ້ຮັບການຈັດຕັ້ງຂຶ້ນ. ສະພາໂຊວຽດ ແຫ່ງຜູ້ແທນ ຊາວຜູ້ອອກແຮງງານ ໄດ້ປົກຄອງປະເທດໃນນາມທີ່ໄດ້ຮັບ ການແຕ່ງຕັ້ງຈາກຊາວກຳມະກອນ ແລະຊາວນາ.

ຄັນມາຮອດແຜນການຫ້າປີ ຊຸດທີສອງ, ຊາວຜູ້ອອກແຮງງານ ພາຍໃຕ້ການນຳພາ ຂອງພັກກອມມູນິດກໍໄດ້ສ້າງສັງຄົມ

ແບບສັງຄົມນິຍົມຂຶ້ນຢູ່ໃນ ສ.ສ.ສ.ຊ. ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ປ່ຽນແປງໄປອີກເທື່ອໜຶ່ງ ຄືວ່າ ມັນຈຳເປັນຕ້ອງປ່ຽນແປງກົດໝາຍຂອງລັດ ທີ່ຜູ້ຄົນທັງຫລາຍໄດ້ດຳລົງຊີວິດມາຕາມນັ້ນແຕ່ກ່ອນ. ຮ່າງລັດຖະທຳມະນູນໃໝ່ 1) ກໍໄດ້ຮັບການພິມອອກ ຢູ່ໃນໜັງສືພິມຕ່າງໆ ເພື່ອໃຫ້ປະຊາຊົນໄດ້ອະພິປາຍກັນ. ການອະພິປາຍນີ້ ໄດ້ກິນເວລາຮອດຫ້າເດືອນເຄິ່ງ. ວັນທີ ໕ ເດືອນທັນວາ ປີ ໑໙໓໖ ກອງປະຊຸມ ໃຫຍ່ສະພາໂຊວຽດທົ່ວລັດເຊຍ ສະໄໝວິສາມັນ ຄັ້ງທີ VIII ກໍໄດ້ຮັບຮອງເອົາລັດຖະທຳມະນູນ ຂອງ ສ.ສ.ສ.ຊ.ອັນເປັນລັດຖະທຳມະນູນ ແຫ່ງສັງຄົມນິຍົມ ທີ່ໄຊຊະນະ.

ຢູ່ໃນມາດຕາທຳອິດ ຂອງລັດຖະທຳມະນູນ ປີ ໑໙໓໖ ນີ້ ໄດ້ບົ່ງໄວ້ວ່າ ສ.ສ.ສ.ຊ. ແມ່ນລັດສັງຄົມນິຍົມແຫ່ງຊາວກຳມະກອນ ແລະຊາວນາ ແລະອຳນາດສູງສຸດ ຢູ່ໃນ ສ.ສ.ສ.ຊ. ນີ້ ແມ່ນເປັນຂອງປະຊາຊົນ. ປະຊາຊົນແມ່ນເລືອກ ຕັ້ງເອົາຜູ້ແທນຂອງຕົນ ເຂົ້າໃນສະພາໂຊວຽດ. ທຸກບ້ານ, ທຸກເມືອງ ແລະທຸກສາທາລະນະລັດສະຫະພາບ ແມ່ນມີສະພາໂຊວຽດ ຂອງຜູ້ແທນຊາວຜູ້ອອກແຮງງານ ເຊິ່ງຕັດສິນວຽກງານ

----

1) ລັດຖະທຳມະນູນໂຊວຽດ ຄັ້ງທຳອິດ ໄດ້ຮັບຮອງເອົາໃນປີ ໑໙໑໘. ພາຍຫລັງການສ້າງຕັ້ງ ສ.ສ.ສ.ຊ.ໃນປີ໑໙໒໔ ແລ້ວລັດຖະທຳມະນູນ ຄັ້ງທີສອງ ກໍໄດ້ຖືກຮັບຮອງເອົາ ໃນປີ ໑໙໓໖.

ທັງໝົດຂອງບ້ານ, ຂອງເມືອງ ແລະຂອງສາທາລະນະລັດ. ສະຫະພາໂຊວຽດສູງສຸດ ແມ່ນເປັນຫົວໜ້າຂອງປະເທດທັງໝົດ ເຊິ່ງຕັດສິນວຽກງານສຳຄັນທຸກຢ່າງ ຂອງສະຫະພາບໂຊວຽດທັງໝົດ. ສ.ສ.ສ.ຊ. ເປັນລັດທີ່ມີຫລາຍຊົນຊາດ. ປະຊາຊາດທັງໝົດ ຂອງ ສ.ສ.ສ.ຊ.ແມ່ນມີສິດສະເໝີພາບແລະດຳລົງຊີວິດຢູ່ໃນມິດຕະພາບ ແບບອ້າຍນ້ອງ. ສ.ສ.ສ.ຊ. ເປັນສະຫະພາບແບບສະໝັກໃຈ ແຫ່ງສາທາລະນະລັດສະຫະພາບ ທີ່ມີສິດສະເໝີພາບກັນ. ໃນໄລຍະເວລາສ້າງຕັ້ງ ສ.ສ.ສ.ຊ. ໃນປີ ໑໙໒໒ ນັ້ນ ມີສາທາລະນະລັດ ສະຫະພາບຢູ່ ໔ ສາທາລະນະລັດ: ຄັນມາຮອດປີ ໑໙໓໖ ຈຳນວນ ສາທາລະນະລັດ ກໍໄດ້ເພີ່ມຂຶ້ນຮອດ ໑໑ ສາທາລະນະລັດ ເຊິ່ງປະກອບໄປດ້ວຍສາທາລະນະລັດ ສັງຄົມນິຍົມ ສະຫະພັນໂຊວຽດລັດເຊຍ, ສາທາລະນະລັດ ສັງຄົມນິຍົມໂຊວຽດອູກະລາອີນາ, ສາທາລະນະລັດ ສັງຄົມນິຍົມໂຊວຽດເບໂລລູດເຊຍ, ສາທາລະນະລັດ ສັງຄົມນິຍົມໂຊວຽດ ກາຊັກ, ສາທາລະນະລັດ ສັງຄົມນິຍົມໂຊວຽດ ກະລູຊິນ, ສາທາລະນະລັດ ສັງຄົມນິຍົມໂຊວຽດ ອາເຊີລະໄບຊານ, ສາທາລະນະລັດ ສັງຄົມນິຍົມໂຊວຽດ ກີລະກີເຊຍ, ສາທາລະນະລັດ ສັງຄົມນິຍົມ ໂຊວຽດ ຕາດຊິກ, ສາທາລະນະລັດ ສັງຄົມນິຍົມໂຊວຽດອາລະເມເນຍ ແລະ ສາທາລະນະລັດ ສັງຄົມນິຍົມໂຊວຽດຕູລະກະເມເນຍ. ລັດຖະທຳມະນູນ ໄດ້ອຳນວຍການປ້ອງກັນ ພົນປະໂຫຍດ, ການຂະຫຍາຍເສດຖະກິດ ແລະວັດທະນະທຳ ຮອດ

ບັນດາຊົນຊາດນ້ອຍທີ່ສຸດ ທີ່ໂຮມເຂົ້າຢູ່ໃນຊົນຊາດໃຫຍ່ ເຊັ່ນ ສາທາລະນະລັດສະຫະພັນ. ບັນດາຕົວແທນຂອງທຸກໆຊົນຊາດ ແລະປະຊາຊົນໄດ້ສົ່ງຜູ້ແທນຂອງຕົນ ເຂົ້າຢູ່ໃນສະພາໂຊວຽດສູງສຸດ–ເຊິ່ງເປັນບ່ອນທີ່ສະພາພິເສດ ແຫ່ງຊົນຊາດ ໄດ້ຖືກຈັດຕັ້ງຂຶ້ນ.

ລັດຖະທຳມະນູນ ໄດ້ຢັ້ງຢືນອີກເທື່ອໜຶ່ງວ່າບັນດາຍິງແລະຊາຍ ຢູ່ໃນ ສ.ສ.ສ.ຊ. ນີ້ ແມ່ນມີສິດສະເໝີກັນໃນທຸກຂະແໜງການຕ່າງໆ ຂອງປະເທດ.

ລັດຖະທຳມະນູນ ສ.ສ.ສ.ຊ. ໄດ້ຮັບປະກັນສິດ ໃນການເຮັດວຽກງານ, ໃນການປາກເວົ້າ, ໃນການຊຸມນຸມ, ໃນການຂີດຂຽນແລະພິມໃຫ້ແກ່ພົນລະເມືອງນັ້ນ ກໍຄືມີເສລີພາບປະຊາທິປະໄຕ ຢ່າງກວ້າງຂວາງ ຄື ເສລີພາບໃນການປາກເວົ້າ, ເສລີພາບໃນການພິມ, ເສລີພາບໃນຊຸມນຸມ, ເສລີພາບ ໃນການເຊື່ອຖື. ເພື່ອໃຫ້ເປັນການສອດຄ່ອງກັບຄວາມ ປາຖະໜາ ຂອງພົນລະເມືອງ ແຫ່ງ ສ.ສ.ສ.ຊ. ຢູ່ໃນລັດຖະທຳມະນູນ ຈຶ່ງໄດ້ມີການບົ່ງໄວ້ວ່າ ພັກກອມມູນິດ ແມ່ນກອງ ນຳໜ້າ ຂອງຊາວຜູ້ອອກແຮງງານ ໃນການຕໍ່ສູ້ເພື່ອສ້າງສາລະບອບກອມມູນິດຂຶ້ນ. ອັນນີ້ແມ່ນພິສູດໃຫ້ເຫັນເຖິງອິດທິພົນ ອັນຍິ່ງໃຫຍ່ ຂອງພັກກອມມູນິດ ເຊິ່ງໄດ້ມອບກຳລັງແຮງທັງໝົດໃຫ້ແກ່ການປ້ອງກັນ ເພື່ອຄວາມຜາສຸກ ຂອງປະຊາຊົນ.

ຄັນໄດ້ຮັບປະກັນສິດ ຢ່າງກວ້າງຂວາງນັ້ນແລ້ວ,ລັດຖະທຳມະນູນ ກໍໄດ້ຮຽກຮ້ອງໃຫ້ພົນລະເມືອງ ແຫ່ງ ສ.ສ.ສ.ຊ.

ຈຶ່ງໄດ້ປະຕິບັດໜ້າທີ່ທີ່ກຳນົດໄວ້ນັ້ນໃຫ້ສົມບູນດີ: ຮັກສາແລະຂະຫຍາຍຈຸດສົມບັດສັງຄົມ, ຮັກສາລະບຽບວິໄນ ການອອກແຮງງານ, ປະຕິບັດກົດໝາຍລັດໃຫ້ສົມບູນ ແລະປ້ອງກັນປິຕຸພູມຂອງຕົນ ໃຫ້ພົ້ນຈາກການບຸກໂຈມຕີຂອງສັດຕູ.

ຄົນໄດ້ຮັບຄຳຊີ້ນຳຈາກ ລັດຖະທຳມະນູນ ປີ ໑໙໓໖ ເຊິ່ງສ່ອງແສງໃຫ້ເຫັນ ການສ້າງສາສັງຄົມນິຍົມ ຂັ້ນພື້ນຖານ ນັ້ນແລ້ວປະຊາຊົນໂຊວຽດກໍໄດ້ດຳເນີນສືບຕໍ່ເຮັດວຽກງານ ດ້ວຍຄວາມຂະຫຍັນຂັນແຂງ ເພື່ອປັບປຸງຊີວິດການເປັນຢູ່ ຂອງແຕ່ລະຄອບຄົວ ໃຫ້ດີຂຶ້ນກ່ວາເກົ່າ ແລະສ້າງກຳລັງແຫ່ງປະເທດສັງຄົມນິຍົມ ທີ່ມີໄຊຊະນະ ໃນໂລກທຳອິດນັ້ນ ໃຫ້ເຂັ້ມແຂງ.

ພົນສຳເລັດແຫ່ງ ສ.ສ.ສ.ຊ. ໄດ້ເຮັດໃຫ້ຊາວຜູ້ອອກ - ແຮງງານທົ່ວປະເທດ ຊົມຊື່ນຍິນດີ ແຕ່ເຮັດໃຫ້ ພວກນາຍທຶນໂກດແຄ້ນຂຶ້ນ. ໃນລະຫວ່າງບັນດາແຜນການຫ້າປີ ຊຸດທຳອິດນັ້ນ ພວກນາຍທຶນໄດ້ພະຍາຍາມ ໃຊ້ກຳລັງອາວຸດ ທຳລາຍແຮງງານ ແບບສັນຕິ ຂອງປະຊາຊົນໂຊວຽດ.

ໃນປີ ໑໙໓໘ ກອງທະຫານຂອງຈັກກະພັດຍີ່ປຸ່ນ ໄດ້ຂ້າມຊາຍແດນເຂົ້າມາ ໃນດ້ານຕາເວັນອອກໄກ ໃນທ້ອງຖິ່ນ ທະເລສາບຄາຊານ ແລະໄດ້ພະຍາຍາມ ທີ່ຈະຍຶດເອົາບາງພາກສ່ວນຂອງດິນແດນໂຊວຽດ. ທະຫານຍາມຊາຍແດນ ໂຊວຽດໄດ້ຂັບໄລ່ພວກຮຸກຮານອອກໄປ. ໃນປີ ໑໙໓໙ ພວກຈັກກະ-ພັດຍີ່ປຸ່ນ ໄດ້ຮຸກຮານດິນແດນ ເພື່ອນມິດແຫ່ງລັດສ.ສ.ສ.ຊ. ຄື ສາທາລະນະລັດ ປະຊາຊົນມົງໂກລີ. ໃນການສູ້ຮົບ ໃກ້ໆ

ແມ່ນ້ຳ ຄານຄິນ-ໂກລະນັ້ນ ກອງທະຫານໂຊວຽດຮ່ວມກັນກັບ ກອງທະຫານ ແຫ່ງກອງທັບປະຊາຊົນມົງໂກລີ ກໍໄດ້ເຮັດ ໃຫ້ ພວກຈັກກະພັດຍີ່ປຸ່ນ ໄດ້ຮັບການປະລາໄຊໄປ ຢ່າງສິ້ນເຊີງ.

ນັກຮົບພວມປັກທຸງແດງຢູ່ເທິງພູສູງທີ່ທະເລສາບ
ຄາຊານ ເມື່ອ ປີ ໑໙໓໘.

ພວກນັກປົກຄອງປະຕິການຂອງຟິນແລນ ໃນເວລານັ້ນ ໄດ້ກໍ່ການຂັດແຍ້ງທາງດ້ານທະຫານຂຶ້ນ ໃນບໍລິເວນຊາຍແດນໂຊວຽດຟິນແລນ ເຊິ່ງບໍ່ໄກຈາກ ເລນິນກະລາດ ໃນລະດູໜາວອັນຮ້າຍແຮງປີ ໑໙໔໐ ນັ້ນ ທະຫານແຫ່ງກອງທັບໂຊວຽດ ກໍໄດ້ທຳການໂຈມຕີ ຕ້ານພວກທ້າທາຍເກາະຜິດຟິນແລນ ແລະໄດ້ກຳຈັດໄພອັນຕະລາຍ ທີ່ມາບຸ່ເລນິນກະລາດນັ້ນອອກໄປ.

ໃນປີ ໑໙໓໓ ຟາຊິດເຢຍລະມັນ ໄດ້ຂຶ້ນຄອງອຳນາດ ໃນປະເທດເຢຍລະມັນ ແລະໄດ້ເລີ່ມກະກຽມ ເພື່ອໂຈມຕີ ຕ້ານສະຫະພາບໂຊວຽດ ແລະປະເທດອື່ນໆ ຢ່າງຟ້າວຟັ່ງ. ລັດຖະບານໂຊວຽດໄດ້ສະເໜີ ຕໍ່ບັນດາລັດເອີລົບທັງຫລາຍໃຫ້ເຕົ້າໂຮມກັນ ແລະບໍ່ໃຫ້ຟາຊິດເຢຍລະມັນກໍ່ສົງຄາມໂລກຄັ້ງທີສອງຂຶ້ນອີກ. ແຕ່ວ່າພວກຈັກກະພັດອັງກິດ, ຝະລັ່ງ, ສະຫະລັດອາເມລິກາແລະປະເທດອື່ນໆ ບໍ່ຕ້ອງການທີ່ຈະຈັດຕັ້ງ ການ ໂຕ້ຕອບຮ່ວມກັນຕ້ານພວກຊຸກຊານຟາຊິດ. ພວກເຂົາ ຫວັງວ່າພວກຟາຊິດ ກ່ອນອື່ນໝົດ ຈະໂຈມຕີຕໍ່ ສະຫະພາບ ໂຊວຽດແລະທຳລາຍລັດສັງຄົມນິຍົມ ທີ່ເປັນລັດ ເຊິ່ງພວກນາຍທຶນທັງໝົດຄຽດຊັງຫລາຍ.

ຮິດແລ, ຫົວໜ້າພວກຟາຊິດເຢຍລະມັນ, ຄັນໄດ້ສວຍໃຊ້ເອົາການສະໜັບສະໜູນຈາກກຸ່ມປະຕິການ ອັງກິດ, ຝະລັ່ງແລະສະຫະລັດອາເມລິກາແລ້ວ ກໍໄດ້ຍຶດຄອງປະເທດ ເອີລົບອື່ນໆໄປເທື່ອລະກ້າວ.

ໂດຍເຫັນວ່າ ລັດຖະບານມະຫາອຳນາດຕາເວັນຕົກບໍ່ຕ້ອງ

ການທີ່ຈະຮ່ວມມືກັບ ສ.ສ.ສ.ຈ. ໃນການຕໍ່ສູ້ເພື່ອສັນຕິພາບ
ແລ້ວ, ລັດຖະບານໂຊວຽດໄດ້ໃຊ້ມາດຕາການ ຫລາຍ ຢ່າງ
ເພື່ອເສີມສ້າງຄວາມປອດໄພຂອງຕົນ ໃຫ້ເຂັ້ມແຂງ. ເພື່ອ
ປ້ອງກັນການຈັດຕັ້ງແນວຮົບຕ້ານໂຊວຽດຜູ້ດຽວ ແລະຫຼີກເວັ້ນ
ທີ່ຈະແກ່ດຶງເອົາ ສ.ສ.ສ.ຈ. ໃຫ້ເຂົ້າໄປສູ່ ການ ຂັດແຍ້ງ
ທາງທະຫານ.

ໃນລະດູຮ້ອນປີ ໑໙໓໙ ສະຫະພາບໂຊວຽດ ໄດ້ຮັບເອົາຂໍ້
ສະເໜີຂອງເຢຽລະມັນ ກ່ຽວກັບການເຊັນສັນຍາ ບໍ່ຮຸກຮານ
ກັນລະຫວ່າງ ສ.ສ.ສ.ຈ. ກັບເຢຽລະມັນ.ການເຊັນສັນຍາ
ກ່ຽວກັບການບໍ່ຮຸກຮານກັນນັ້ນ ໄດ້ເຮັດໃຫ້ ປະເທດໂຊວຽດມີ
ເວລາຫັນໃຈໄດ້ໃນພາຍໃນ ໑໘ ເດືອນ ແລະເຮັດໃຫ້ຕົນໄດ້
ມີໂອກາດກະກຽມ ເພື່ອໂຕ້ຕອບ ຕໍ່ພວກຮຸກຮານ.

ໃນປີ ໑໙໓໙ ຟາຊິດເຢຽລະມັນ ໄດ້ທຳການບຸກໂຈມຕີປະ
ເທດໂປໂລຍ. ພວກປົກຄອງຊົນຊັ້ນນາຍທຶນໂປໂລຍບໍ່ສາມາດ
ທີ່ຈະຈັດຕັ້ງການຕໍ່ຕ້ານ ກັບພວກຮຸກຮານໄດ້. ກອງທະ ຫານ
ເຢຽລະມັນໄດ້ບຸກລຶບໜ້າໄປຢ່າງໄວວາ ມຸ່ງໜ້າ ສູ່ດິນແດນ
ອູກະລາອີນາພາກຕາເວັນຕົກແລະເບໂລລຸດເຊຍພາກຕາເວັນ
ຕົກ ເຊິ່ງໄດ້ຕົກຢູ່ໃນຄວາມຄຸ້ມຄອງ ຂອງພວກເຈົ້າທີ່ດິນ ໂປ
ໂລຍໃນເວລາສົງຄາມກາງເມືອງເກີດຂຶ້ນ.

ເມື່ອເປັນແນວນັ້ນ ກອງທະຫານໂຊວຽດ ໄດ້ເຄື່ອນຍ້າຍ
ເຂົ້າສູ່ດິນແດນ ພາກຕາເວັນຕົກຂອງອູກະລາອີນາແລະເບໂລ
ລຸດເຊຍ ແລະໄດ້ຕັ້ງກຳລັງຂອງຕົນໄວ້ທີ່ນັ້ນ ເພື່ອປ້ອງກັນພົນ

ລະເມືອງແຫ່ງນີ້ ຊາວຜູ້ອອກແຮງງານອູກະລາອີນາ ແລະເບໂລລູດເຊຍ ໄດ້ຕ້ອນຮັບພວກປົດປ່ອຍ ແລະພວກປ້ອງກັນຂອງຕົນ ດ້ວຍຄວາມຊຸ່ມຊື່ນຍິນດີ. ພາຍຫລັງທີ່ໄດ້ແຍກອອກໄປເປັນເວລາດົນນານແລ້ວນັ້ນ ຊາວອູກະລາອີນາ ແລະຊາວເບໂລລູດເຊຍທັງຫມົດ ກໍໄດ້ຕ້າໂຮມ ເຂົ້າມາສູ່ຄອບຄົວ ໂຊວຽດໃນແບບມິດຕະພາບອີກ.

ແຕ່ວ່າສົງຄາມໂລກຄັ້ງທີສອງ ກໍໄດ້ລູກເປັນແປວໄຟ ຂຶ້ນແລ້ວໃນໂລກ. ຄັນໄດ້ມືວເມົາຕໍ່ໄຊຊະນະ ທີ່ໄດ້ມາຢ່າງງ່າຍດາຍນັ້ນແລ້ວ ພວກຟາຊິດເຢຍລະມັນ ກໍໄດ້ກະກຽມເພື່ອໂຈມຕີຮຸກຮານຄັ້ງໃຫມ່.

ໃນສະພາບການທີ່ມີການທ້າທາຍເກາະຜິດ ທາງທະຫານຕໍ່ຊາຍແດນທາງດ້ານທິດຕາເວັນອອກ ແລະ ທິດຕາເວັນຕົກ ຢູ່ເປັນປະຈຳ, ໃນສະພາບການທີ່ສົງຄາມໂລກຄັ້ງທີສອງ ພວມລະເບີດຂຶ້ນຢູ່ນັ້ນ, ປະຊາຊົນໂຊວຽດ ຈຳຕ້ອງໄດ້ເອົາໃຈໃສ່ຕໍ່ຄວາມເຂັ້ມແຂງທາງດ້ານກຳລັງ ກອງທັບຂອງຕົນ ແລະ ຕໍ່ການຮັກສາຊາຍແດນປະເທດ ໃຫ້ເຂັ້ມແຂງຢ່າງເຄັ່ງຄຣັດ.

ພວກຮຸກຮານຟາຊິດ ໄດ້ກະກຽມທີ່ຈະຮຸກຮານເຂົ້າປະເທດແຄມຝັ່ງທະເລບັນຕິກ ຄື ລັດເວຍ, ເອສະໂຕເນຍ ແລະລິດວາ. ພວກນັກປົກຄອງຊົນຊັ້ນນາຍທຶນຂອງປະເທດເຫລົ່ານີ້ໄດ້ກະກຽມທີ່ຈະຍອມຈຳນົນ ຕໍ່ພວກຮຸກຮານເຢຍລະມັນ ຢູ່ແລ້ວຢ່າງບໍ່ມີການຕໍ່ຕ້ານ. ໃນກໍລະນີນີ້ ຣັດແລ ໄດ້ໃຫ້ຄຳຫມັ້ນ ສັນຍາຕໍ່ພວກເຂົາວ່າ ພວກເຂົາຈະຍັງສາມາດຮັກສາ ຈັບສິນບັດ

ທັງໝົດຂອງພວກເຂົາໄວ້ໄດ້ ແລະກໍຈະອະນຸຍາດ ໃຫ້ພວກເຂົາປົກຄອງປະຊາຊົນຕໍ່ໄປໃນນາມ ຟາຊິດເຢຍລະມັນ. ແຕ່ວ່າຊາວກຳມະກອນ, ຊາວນາ ແລະ ບັນດາຜູ້ຮັກຊາດທີ່ຊື່ສັດທັງໝົດຂອງປະເທດແຄມຝັ່ງທະເລບັນຕິກ ໄດ້ລຸກໄປໃນແບບອື່ນ. ຊາວຜູ້ອອກແຮງງານ ລິດວາ, ລັດວຍແລະເອສະໂຕເນຍ ໄດ້ພາກັນເດີນຂະບວນໄປຕາມຖະໜົນ. ພວກເຂົາໄດ້ຮຽກຮ້ອງໃຫ້ຟື້ນຟູອຳນາດໂຊວຽດຄືນ ໃນປະເທດ ຂອງຕົນເອງໄດ້ຖືກໂຄ່ນລົ້ມລົງ ໂດຍປະເທດພັນທະມິດ (ອັງຕັງເຕີ) ໃນປີ ໑໙໑໙ ນັ້ນ. ລັດຖະບານຊົນຊັ້ນນາຍທຶນບໍ່ສາມາດທີ່ຈະຕ້ານທານຄວາມກົດດັນ ໜື່ກຳລັງແຮງຂອງປະຊາຊົນນັ້ນໄດ້. ດັ່ງນັ້ນຊາວຜູ້ອອກແຮງງານ ຈຶ່ງໄດ້ຟື້ນຟູອຳນາດ ໂຊວຽດຂຶ້ນໃນລິດວາ, ເອສະໂຕເນຍ ແລະ ລັດວຍ.

ໃນປີ ໑໙໔໐ ລັດຖະບານໂຊວຽດ ແຫ່ງສາທາລະນະລັດແຄມຝັ່ງທະເລບັນຕິກ ໃນນາມປະຊາຊາດຂອງຕົນທັງໝົດໄດ້ຂໍຮ້ອງຕໍ່ສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ. ເພື່ອໃຫ້ຮັບເອົາສາທາລະນະລັດໂຊວຽດລິດວາ, ເອສະໂຕເນຍແລະລັດວຍເຂົ້າເປັນພາກສ່ວນຂອງ ສ.ສ.ສ.ຊ.ສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ. ໄດ້ຍິນດີຕໍ່ຄຳຮຽກຮ້ອງນັ້ນ ແລະ ກໍໄດ້ຮັບເອົາປະຊາຊົນແຫ່ງສາທາລະນະລັດປະເທດແຄມທະເລບັນຕິກ ເຂົ້າມາຢູ່ໃນຄອບຄົວມິດຕະພາບ ແຫ່ງບັນດາປະຊາຊາດໂຊວຽດ. ໃນປີ ໑໙໔໐ປະຊາຊົນແຫ່ງເບດຊາລາເບຍເຊິ່ງສັກດີນາ ລູມານີ ໄດ້ຍາດແຍ່ງເອົາໄປຈາກອ້າຍນ້ອງ ໂມລະດາ

ວຍຂອງຕົນ ໃນລະຫວ່າງສົງຄາມກາງເມືອງນັ້ນ ກໍໄດ້ຕ້ານ
ໂຮມເຂົ້າກັບໂນລະດາວຍ ເຂົ້າເປັນສາທາລະນະລັດ ໂຊ
ວຽດອັນໜຶ່ງອັນດຽວກັນ. ດ້ວຍເຫດນັ້ນ ສາທາລະນະລັດສັງ
ຄົມນິຍົມໂຊວຽດ ໂນລະດາວຍຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນມາ.

ຄັນມາຮອດປີ ໑໙໔໑ ພາກສ່ວນປະກອບຂອງ ສ.ສ.ສ.ຊ
ກໍໄດ້ມີຮອດ ໑໘ ສາທາລະນະລັດແຫ່ງສະຫະພາບ. ການປະຕິ
ຮູບສັງຄົມນິຍົມຢູ່ໃນພາກສ່ວນປະກອບແຫ່ງ ສ.ສ.ສ.ຊ. ເຊິ່ງ
ໄດ້ເຂົ້າມາຕ້ານໂຮມກັນອີກຄັ້ງໜຶ່ງນັ້ນ ກໍໄດ້ຮັບການດຳເນີນ
ຕໍ່ໄປແລະພົນລະເມືອງແຫ່ງລັດວຍ, ລິດວາ, ເອສະໂຕເນຍ
ແລະໂນລະດາວຍ ໂຊວຽດກໍໄດ້ເລີ່ມດຳລົງຊີວິດ ທີ່ມີຄວາມ
ຜາສຸກແລະມີສິດຄົບຖ້ວນແລະລັດຖະທຳມະນູນແຫ່ງ ສ.ສ.ສ.
ຊ. ກໍໄດ້ເປັນກົດໝາຍພື້ນຖານ ສຳລັບພວກປະຊາຊົນເຫລົ່ານີ້.

ການປະຕິບັດແຜນການຫ້າປີຊຸດທີສາມທີ່ຜ່ານມາໃນປີ໑໙ມີກ
ນັ້ນ ໄດ້ດຳເນີນໄປຢ່າງສຳເລັດຜົນ. ຢູ່ໃນໂຮງຈັກໂຮງງານ
ຕ່າງໆ ກໍໄດ້ມີຂະບວນການປະຕິບັດງານ ໂດຍເຄື່ອງຈັກຕ່າງ
ຕ່າງເກີດຂຶ້ນ. ຊາວກຳມະກອນໜຸ່ມຄົນ ໄດ້ພະຍາຍາມ ທີ່ຈະ
ເຮັດໃຫ້ເຄື່ອງຈັກຫລາຍໆເຄື່ອງ ປະຕິບັດການ ໄປພ້ອມໆກັນ.
ໂຮງຮຽນສະຕາຄານົບພິເສດ ເຊິ່ງເປັນບ່ອນ ທີ່ ຊາວກຳມະ
ກອນກ້າວໜ້າ ໄດ້ຖ່າຍທອດບົດຮຽນຂອງຕົນ ກ່ຽວກັບ ການ
ເຮັດວຽກງານໃຫ້ແກ່ບັນດາເພື່ອນຮ່ວມວຽກງານນັ້ນ ກໍໄດ້ຖືກ
ຈັດຕັ້ງຂຶ້ນເປັນພິເສດ ຢູ່ໃນໂຮງຈັກໂຮງງານຕ່າງໆ. ໂຮງຈັກ
ໂຮງງານຕ່າງໆ ໄດ້ຖືກຈັດໃຫ້ມີເຄື່ອງຈັກ ແລະເຄື່ອງກົນຈັກ

ທີ່ສະຫລັບສັບຊ້ອນຫລາຍຍິ່ງຂຶ້ນ ເຊິ່ງຮຽກຮ້ອງຕ້ອງການຊາວກຳມະກອນຜູ້ມີຄວາມຊຳນິຊຳນານເປັນຢ່າງດີມາຄວບຄຸມມັນ. ເພາະສະນັ້ນ ລະບົບການຝຶກຊ້ອມຊາວກຳມະກອນ ໃຫ້ມີວິຊາຊີບຈິ່ງໄດ້ຮັບການຈັດຕັ້ງຂຶ້ນ. ຍິງໜຸ່ມ ແລະຊາຍໜຸ່ມທີ່ຮຽນຢູ່ໃນໂຮງຮຽນພິເສດ ກໍໄດ້ຮ່ຳຮຽນເອົາວິຊາສະເພາະຕ່າງໆຈາກຊາວກຳມະກອນ. ຢູ່ໃນໂຮງຮຽນວິຊາຊີບ ການຝຶກຫັດພາກຕົວຈິງ ແມ່ນໄດ້ສົມທົບເຂົ້າກັບການສຶກສາ ຂັ້ນພື້ນ ຖານທາງດ້ານວິທະຍາສາດ ແລະການສຶກສາທົ່ວໄປ. ພາກສ່ວນໂຮງງານ, ໂຮງຈັກແລະບໍ່ແຮ່ສ່ວນໃຫຍ່ ແມ່ນໄດ້ຖືກ ນຳພາໂດຍຊາວໜຸ່ມຜູ້ມີຄວາມຊຳນານເປັນພິເສດ ເຊິ່ງໄດ້ຮັບການຝຶກຫັດຢູ່ໃນສະຖາບັນການສຶກສາຊັ້ນສູງໂຊວຽດ. ຊາວຜູ້ອອກແຮງງານ ໄດ້ປະຕິບັດແຜນການຫ້າປີຊຸດທີສາມ ສຳເລັດ ໄປກ່ອນລະດັບຄາດໝາຍ. ການເຮັດໃຫ້ແລະການປັບປຸງອຸດສາຫະກຳໜັກເຂັ້ມແຂງແລະດີຂຶ້ນ ແມ່ນໄດ້ເອົາໃຈໃສ່ ເປັນ ພິເສດ. ໃນປີ ໑໙໔໐ ຢູ່ໃນ ສ.ສ.ສ.ຊ. ໄດ້ມີການ ຜະລິດເຫລັກ, ເຫລັກກ້າ, ຖ່ານຫີນ ນ້ຳມັນໄດ້ຫລາຍກວ່າການຜະລິດໄດ້ໃນລັດເຊຍພະເຈົ້າຊາ ປີ ໑໙໑໓ ຮອດ ໔ ເທົ່າ. ທົ່ວສາທາລະນະລັດແຫ່ງສະຫະພາບ ໄດ້ຮັບ ຜົນສຳເລັດ ອັນຍິ່ງໃຫຍ່. ການຜະລິດອຸດສາຫະກຳຂະໜາດໃຫຍ່ໃນປີ ໑໙໔໐, ຄັບສົມທຽບກັບ ປີ ໑໙໑໓ ແລ້ວ, ແມ່ນໄດ້ເພີ່ມຂຶ້ນດັ່ງນີ້: ໃນ ສ.ສ.ສ.ຊ.ອຸສະເບັກ ເພີ່ມຂຶ້ນ ໗ ເທົ່າ, ໃນ ສ.ສ.ຊ ກາຊັກ ເພີ່ມຂຶ້ນ ໘໐ ເທົ່າ, ໃນ ສ.ສ.ຊ.ກີລະກີເຊຍ ເພີ່ມ

ຂຶ້ນ ໑໔໓ ເທົ່າ, ໃນ ສ.ສ.ຊ.ຕາດຊິກ ເພີ່ມຂຶ້ນ໓໒໔ເທົ່າ. ໃນປີ ໑໙໔໐ ຢູ່ໃນທົ່ງນາສະຫະກອນກະເສດຂອງປະເທດໄດ້ມີລົດຕະລັກເຕີເຮັດວຽກເຖິງ ໔໓໑ ພັນຄັນ, ລົດ ເກັບກ່ຽວເຂົ້າ ໑໘໒ ຄັນ, ລົດຂົນສົ່ງ ໒໒໘ ພັນຄັນ. ຊາວສະຫະກອນກະເສດໄດ້ຜະລິດ ຜະລິດຕະພັນສະບຽງອາຫານແລະວັດຖຸດິບສຳລັບອຸດສາຫະກຳ ໄດ້ຫລາຍຍິ່ງຂຶ້ນ.

ການເຕີບໃຫຍ່ຂະຫຍາຍຕົວ ທາງດ້ານການຜະລິດ ອຸດສາຫະກຳແລະກະສິກຳນັ້ນ ແມ່ນໄດ້ສະແດງໃຫ້ເຫັນເຖິງສະວັດດີພາບຂອງປະຊາຊົນໂຊວຽດ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະໄດ້ຊ່ວຍໃຫ້ການຂະຫຍາຍຕົວທາງດ້ານວັດທະນະທຳຢູ່ໃນ ສ.ສ.ສ.ຊ.ດີຂຶ້ນເຊັ່ນດຽວກັນ. ແຕ່ປີ ໑໙໓໗ ເຖິງປີ ໑໙໔໐ ລາຍໄດ້ແຫ່ງຊາດໄດ້ເພີ່ມຂຶ້ນຈາກ ໙໖,໓ ຕື້ລູບເຖິງ໑໒໘,໓ ຕື້ລູບ. ກອງທຶນທີ່ໃຊ້ເປັນເງິນເດືອນ ສຳລັບໃນໄລຍະນັ້ນ ກໍໄດ້ເພີ່ມຂຶ້ນ ໔໐ ສ່ວນ ໑໐໐. ການໃຊ້ຈ່າຍຂອງລັດ ຕໍ່ ການສ້າງສາໂຮງຮຽນ, ສະໂມສອນ, ໂຮງໝໍ, ແລະ ຫ້ອງສະໝຸດ ກໍໄດ້ເພີ່ມຂຶ້ນຈາກປີ ໑໙໓໘ ເຖິງປີ ໑໙໔໐ເກືອບຮອດ ໒໐ ສ່ວນ ໑໐໐. ໃນປີ ໑໙໔໐ ເດັກນ້ອຍນັກຮຽນ ທີ່ ເຂົ້າຮຽນໜັງສື ໄດ້ເພີ່ມຂຶ້ນ ໓໔ ລ້ານກວ່າຄົນ ແລະນັກສຶກສາທີ່ຮຽນຢູ່ໃນສະຖາບັນການສຶກສາຊັ້ນສູງ ກໍໄດ້ມີຮອດ ໘໐໐ ພັນຄົນ. ການສະແດງສິລະປະຂອງປະຊາຊົນແຫ່ງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ ເປັນເວລາ ໑໐ ປີ ນັ້ນໄດ້ເປັນງານບຸນສິລະປະຊົນຊາດຕ່າງໆຢ່າງແທ້ຈິງ.ມົດສະກູ,ນະ

ຄອນຫລວງແຫ່ງ ສ.ສ.ສ.ຊ. ໄດ້ສະແດງຕົວເປັນ ເຈົ້າພາບ
ດ້ວຍຄວາມດີໃຈຕໍ່ບັນດານັກສິລະປະອາຊີ ແລະນັກສິລະປະສະ
ໝັກຫລິ້ນ ຈາກທົ່ວສາທາລະນະລັດ ແຫ່ງສະຫະພາບ. ທຸກໆ
ປີເຮືອນໃໝ່ສຳລັບພັກຜ່ອນ ແລະສະຖານພັກຟື້ນກໍໄດ້ເປີດປະ
ຕູຕ້ອນຮັບຊາວຜູ້ອອກແຮງງານຢ່າງມີຄວາມເອື້ອເຟື້ອ. ໂດຍ
ໄດ້ສະແດງຄວາມເປັນຫ່ວງເປັນໄຍ ຕໍ່ຮຸ່ນຄົນໃໝ່ນັ້ນ ແລ້ວ,
ລັດໂຊວຽດ ຈຶ່ງບໍ່ໄດ້ມີຄວາມກັງວົນໃຈຕໍ່ການເສຍສະລະກ້ອນ
ທຶນໄປ ເພື່ອການພັດທະນາເດັກ ຜູ້ທີ່ມີຄວາມສາມາດ ແລະມີ
ແວວດີ, ແລະຈັດຕັ້ງສະຖານທີ່ພັກຜ່ອນໃຫ້ແກ່ພວກເຂົາ. ສະ
ໂມສອນເດັກນ້ອຍຕ່າງໆ ທີ່ມີເຄື່ອງອຸປະກອນຄົບຖ້ວນ ຢ່າງດີ
ນັ້ນໄດ້ເປີດຂຶ້ນຢູ່ໃນເມືອງຕ່າງໆ.ປະຊາຊົນໄດ້ເອີ້ນ ສະຖານ
ທີ່ເຫລົ່ານັ້ນວ່າ ທໍ່ວັດທະນະທຳຂອງນັກຮຽນ ຍຸວະຊົນຄໍແດງ.
ຕຶກເຮືອນພັກຫລາຍພັນຫລັງ ເຊິ່ງເປັນບ່ອນທີ່ ພວກເດັກ ນັກ
ຮຽນໄປພັກໃນລະດູຮ້ອນນັ້ນ ກໍໄດ້ຖືກສ້າງຂຶ້ນ ຢູ່ໃນສະຖານທີ່
ອັນມີທິວທັດຈົບງາມ. ການອອກກຳລັງກາຍແລະກິລາ ຕ່າງໆ
ໄດ້ຮັບການພັດທະນາຂຶ້ນ ຢ່າງກວ້າງຂວາງໃນປະເທດ. ປະ
ຊາຊົນໂຊວຽດໄດ້ດຳລົງຊີວິດ ຢູ່ດ້ວຍການເຄື່ອນໄຫວ ແລະ
ການອອກເຫື່ອແຮງ. ທຸກໆຄອບຄົວ ແມ່ນໄດ້ມີຄວາມຮູ້ສຶກ ຕໍ່
ຄວາມເປັນຫ່ວງເປັນໄຍອັນໝັ້ນຄົງຖາວອນຂອງລັດ ສັງຄົມນິ
ຍົມທີ່ມີຈຸດປະສົງຢາກຈະຮັບປະກັນຊີວິດທີ່ມີຄວາມສຸກແລະປອດ
ໄພຕໍ່ປະຊາຊົນໂຊວຽດ.

ການປະຕິບັດແຜນການຫ້າປີຊຸດທີສາມ ໄດ້ດຳເນີນໄປ ໃນ

ສະພາບການສາກົນທີ່ເກີດຄວາມສັບສົນຂຶ້ນ. ໃນລະດູຮ້ອນ ປີ ໑໙໔໐ ກອງທະຫານ ຮິດແລ ໄດ້ເຂົ້າຍຶດຄອງປະເທດຝະລັ່ງ. ເພື່ອເປັນການກະກຽມທີ່ຈະບຸກໂຈມຕີ ສ.ສ.ສ.ຊ.ນັ້ນພວກຟາຊິດເຢຍລະມັນ ກໍໄດ້ຮຸກຮານ ຢູໂກສະລາເວຍ ແລະ ກະເລັກ ແລະກໍໄດ້ກວາດເອົາພວກນັກປົກຄອງທີ່ເຫນົ່າເຫມັນ ຢູ່ໃນຮຸ່ງກາລີ, ລູມານີ, ບຸນກາລີ ມາຂຶ້ນກັບຕົນ. ພວກຮິດແລໄດ້ກາຍເປັນເຈົ້າຂອງບໍ່ພຽງແຕ່ປະເທດເອີລົບ ຕາເວັນ ຕົກເທົ່ານັ້ນ ແຕ່ຫາກຍັງຮອດພາກສ່ວນເອີລົບ ຕາເວັນອອກອີກດ້ວຍ. ຜະລິດຕະພັນທຸກຢ່າງຂອງໂຮງງານທະຫານ ໃນ ປະເທດທີ່ຖືກຍຶດຄອງ ໄດ້ຖືກໃຊ້ໄປ ເພື່ອປະກອບອາວຸດ ໃຫ້ແກ່ກອງທັບຟາຊິດ-ເຢຍລະມັນ.

ພາຍໃຕ້ສະພາບການເຫລົ່ານີ້ ປະຊາຊົນໂຊວຽດ ກໍໄດ້ພະຍາຍາມເຮັດທຸກສິ່ງທຸກຢ່າງ ເພື່ອສ້າງການປ້ອງກັນ ປະເທດຂອງຕົນໃຫ້ເຂັ້ມແຂງ, ຊົ່ວໄລຍະ ໑໐ ປີ ຄືຕັ້ງແຕ່ປີ ໑໙໓໐ ເຖິງປີ ໑໙໓໙ ນັ້ນ, ຈຳນວນເຮືອບິນ ແລະປືນໃຫຍ່ທີ່ກອງທັບແດງມີຢູ່ນັ້ນ ໄດ້ເພີ່ມຂຶ້ນ ໗ ເທົ່າ. ການໃຊ້ຈ່າຍໃນທາງທະຫານຂອງລັດໂຊວຽດນັ້ນ ໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ.ມາດຕາການຂອງລັດຖະບານໂຊວຽດ ກ່ຽວກັບການສ້າງ ກອງທັບໃຫ້ເຂັ້ມແຂງນັ້ນ ແມ່ນໄດ້ຮັບການສະຫນັບສະຫນູນຈາກປະຊາຊົນ.ໃນລະດູຮ້ອນປີ໑໙໔໑ ການໂຈມຕີຂອງເຢຍລະມັນຮິດແລເຂົ້າສູ່ສະຫະພາບໂຊວຽດນັ້ນ ແມ່ນໄດ້ເຮັດໃຫ້ການອອກແຮງງານຂອງປະຊາຊົນໂຊວຽດໃນຍາມສັນຕິນັ້ນຢຸດຕິລົງ.

ມະຫາສົງຄາມປ້ອງກັນປິຕຸພູມ ຂອງປະຊາຊົນໂຊວຽດ ຕ້ານພວກຣຸກຮານຟາຊິດ

ວັນອາທິດທີ ໒໒ ເດືອນ ມິຖຸນາ ປີ ໑໙໔໑ ເປັນມື້ທີ່ຮ້ອນ ໃນລະດູຮ້ອນ. ປະຊາຊົນໂຊວຽດພວມພາກັນກະກຽມທີ່ຈະໄປ ມ່ວນຊື່ນໃນມື້ພັກ; ມີຫລາຍຄົນຕັ້ງໃຈທີ່ຈະອອກຈາກເມືອງໄປ ຍ່າງຫລິ້ນໃນປ່າ, ໄປຕຶກເບັດ. ເມື່ອພວກເຂົາພາກັນໄປນອນ ໃນຕອນຄ່ຳ ພວກເຂົາກໍບໍ່ຮູ້ເລີຍວ່າ ຄ່ຳມື້ນັ້ນເປັນຄ່ຳຄືນ ທີ່ສະຫງົບສຸດທ້າຍຂອງພວກເຂົາ.

ເວລາ ໔ ໂມງເຊົ້າ, ວັນທີ່ ໒໒ ມິຖຸນາ ປີ ໑໙໔໑, ກອງພົນທະຫານເຢຍລະມັນ ໑໗໐ ກອງພົນ ເຊິ່ງໄດ້ຮັບການ ສະໜັບສະໜູນ ຈາກກອງລົດຖັງ ແລະກອງທັບອາກາດ ນັ້ນ ໄດ້ບຸກລຸກສະຫະພາບສາທາລະນະລັດສັງຄົມນິຍົມ ໂຊວຽດ . (ສ.ສ.ສ.ຊ.). ເຢຍລະມັນຟາຊິດໄດ້ເປີດການໂຈມຕີໂດຍ ບໍ່ໄດ້ປະກາດສົງຄາມ ເຊິ່ງນັບວ່າເປັນການລະເມີດຕໍ່ສັນຍາບໍ່ ຮຸກຮານກັນ. ເຮືອບິນຖິ້ມລະເບີດຂອງຟາຊິດໄດ້ມາຖິ້ມລູກລະ ເບີດສັງຫານໃສ່ເມືອງຕ່າງໆຂອງໂຊວຽດ.

ການບຸກໂຈມຕີແບບກະທັນຫັນ ຂອງພວກຟາຊິດ ແລະການ ຖິ້ມລະເບີດຢ່າງປ່າເຖື່ອນ ໃສ່ເມືອງຕ່າງໆທີ່ສະຫງົບນັ້ນແມ່ນ

ໄດ້ດຳເນີນໄປຕາມແຜນການຂອງຮິດແລ ທີ່ຈະທຳລາຍມານະຈິດຂອງປະຊາຊົນໂຊວຽດທີ່ຈະຕໍ່ຕ້ານ.ຮິດແລ ໄດ້ປະກາດວ່າເຂົາຈະບົດຂະຍີ້ສະຫະພາບໂຊວຽດ ໃຫ້ແລ້ວພາຍໃນ ໔ - ໖ ອາທິດ. ແຕ່ວ່າໃນມື້ທຳອິດຂອງສົງຄາມຢູ່ໃນດິນແດນໂຊວຽດນັ້ນ ພວກຮຸກຮານກໍໄດ້ຜະເຊີນໜ້າກັບການຕໍ່ຕ້ານ ຢ່າງກ້າຫານຂອງກອງທະຫານຮັກສາຊາຍແດນ.ພວກທະຫານປ້ອງກັນຊາຍແດນກຳແພງຄ້າຍບະເລັດສະຕະ ຄົນໄດ້ຕົກຢູ່ໃນ ວົງປິດລ້ອມເປັນເວລາກວ່າໜຶ່ງເດືອນແລ້ວ ກໍໄດ້ທຳການຕໍ່ຕ້ານສັດຕູຢ່າງໝັ້ນໜຽວ ເຊິ່ງມີຈຳນວນຫລາຍກວ່າ ກອງທະຫານປ້ອງກັນຊາຍແດນໂຊວຽດຕັ້ງ ໑໐ ເທົ່າ.ຢູ່ໃນບໍລິເວນແມ່ນ້ຳບຸກອັນເປັນເຂດໜຶ່ງຂອງຊາຍແດນ ພວກທະຫານທີ່ຢູ່ໃຕ້ການບັງຄັບບັນຊາຂອງນາຍທະຫານ ມາກຊິມົບ ກໍໄດ້ທຳການປ້ອງກັນໄວ້. ກອງປືນໃຫຍ່ແລະເຮືອບິນຂອງສັດຕູ ໄດ້ຍິງແລະຖິ້ມລະເບີດໃສ່ທະຫານຊາຍແດນຢູ່ເປັນເວລາຫລາຍຊົ່ວໂມງ.ລູກລະເບີດໄດ້ຖືກຖິ້ມລົງມາຕິດຕໍ່ເນື່ອງກັນ ແລະເຮັດໃຫ້ດິນຝັ່ງກະເດັນຂຶ້ນ-ຢູ່ໃນບໍລິເວນນີ້ ເບິ່ງຄືຈັ່ງວ່າ ບໍ່ມີຫຍັງຈະສາມາດມີຊີວິດຢູ່ໄດ້. ແຕ່ວ່າໃນທັນທີທັນໃດນັ້ນກອງທະຫານລາບຂອງສັດຕູທີ່ບຸກຄືບໜ້າມານັ້ນ ໄດ້ໂງຫົວຂຶ້ນແຕ່ມັນກໍໄດ້ພົບກັບການຍິງທີ່ແມ່ນ ຈາກທະຫານໂຊວຽດ ທີ່ໄດ້ລີ້ຢູ່ໃນຂຸມຄອງ.ທະຫານໂຊວຽດຈຳນວນ ໔໐ ຄົນ ໄດ້ຕໍ່ສູ້ຕ້ານກັບ ກອງທະຫານສັດຕູໜຶ່ງກອງພົນ. ພວກຟາຊິດໄດ້ຮຽກເອົາກອງລົດຖັງຂອງຕົນມາຊ່ວຍ. ກອງທະຫານຊາຍແດນໄດ້ຮັກສາຖານທີ່ໝັ້ນໄວ້

ຕ້ານກັບພວກເຂົາ ຈົນວ່າໝົດລູກແຕກ ລູກສຸດທ້າຍ,ໝົດລູກປືນລູກສຸດທ້າຍ ແລະໝົດລົມຫັນໃຈ.

ເວລາ ໔ ໂມງເຊົ້າຂອງວັນທີ່ ໒໒ ເດືອນມິຖຸນາ ລູກປືນໃຫຍ່ຂອງສັດຕູໄດ້ເລີ່ມລະເບີດຂຶ້ນ ໃນບໍລິເວນຄ້າຍຊາຍແດນເຊິ່ງບັງຄັບບັນຊາໂດຍນາຍຮ້ອຍໂທ ໂລປາຕິນ. ໄຟຈາກລູກປືນໄດ້ໄໝ້ຄ້າຍ ແລະການຕິດຕໍ່ກັບກອງບັນຊາການແລະຄ້າຍຊາຍແດນທີ່ຢູ່ໃກ້ຄຽງກັນ ກໍໄດ້ຢຸດຊະງັກໄປ. ພາຍຫລັງການຍິງປືນໃຫຍ່ເບີກທາງໃຫ້ເປັນເວລາສອງຊົ່ວໂມງແລ້ວ, ກອງທະຫານຊາຍແດນກໍໄດ້ເຫັນພວກທະຫານປືນກົນເຢຍລະມັນຄືບຄານເຂົ້າມາໃກ້. ນາຍຮ້ອຍໂທ ໂລປາຕິນ ໄດ້ອອກ ຄຳສັ່ງໃຫ້ ໂກນກິນ ແລະ ເປສະກົບ ເປີດການຍິງໃສ່ພວກມັນແລະກໍໄດ້ບັງຄັບໃຫ້ສັດຕູລ່າຖອຍໄປພ້ອມທັງປະຊາກສົບໄວ້ຕາມທົ່ງເປັນຈຳນວນຫລວງຫລາຍ;ແຕ່ວ່າພວກເຂົາທັງໝົດກໍໄດ້ເຂົ້າໃຈວ່າ ອັນນີ້ມັນເປັນພຽງການຫັນໃຈ ຊົ່ວໄລຍະ ເວລາສັ້ນໆເທົ່ານັ້ນ. ທະຫານທີ່ກ້າຫານຈຳນວນໜ້ອຍດຽວນັ້ນທ້າຍທີ່ສຸດກໍຖືກທະຫານສັດຕູປິດລ້ອມໄວ້.ພວກທະຫານຊາຍແດນໄດ້ຮ້ອງຄຳຂວັນອອກມາວ່າ: "ຂໍໃຫ້ພວກເຮົາ ຈົ່ງຕໍ່ສູ້ເຖິງວິນາທີສຸດທ້າຍ. ພວກເຮົາຈະບໍ່ປ່ອຍໃຫ້ພວກສັດຕູມາຈັບ ພວກເຮົາໄດ້ໃນເວລາມີຊີວິດຢູ່ !". ພວກທະຫານຮີດແລ ໄດ້ທຸ່ມເທກອງກຳລັງໃໝ່ໃສ່ປ້ອມຄ້າຍຊາຍແດນ.ການຕໍ່ສູ້ທີ່ບໍ່ມີເວລາພັກໄດ້ດຳເນີນໄປຮອດ ໑ ມື້ ໑ ຄືນ. ໃນມື້ທີ່ ໑໐ ຮ້ອຍໂທໂລປາຕິນໄດ້ຕັດສິນໃຈ ພະຍາຍາມທີ່ຈະແຕກ ອອກຈາກ ວົງລ້ອມ.

ເມື່ອໄດ້ສຳຫລວດກວດກາເບິ່ງຄັກໆແລ້ວ, ເຂົາກໍໄດ້ມີຄວາມເຊື່ອໝັ້ນວ່າ ທາງທີ່ຈະຫລົບຫລີກໄດ້ນັ້ນ ກໍມີແຕ່ທາງທີ່ນຳໄປສູ່ທົ່ງປູກເຂົ້າບະເລທີ່ຂຶ້ນຢ່າງໜາທຶບ ເຊິ່ງພວກຟາຊິດ ບໍ່ໄດ້ສັງເກດເຫັນ. ຄ່ຳຄືນນັ້ນ ທະຫານຊາຍແດນ ກໍໄດ້ໜີອອກຈາກວົງລ້ອມຂອງສັດຕູ. ພວກເຂົາໄດ້ນຳເອົາທະຫານທີ່ບາດເຈັບແລະລູກເມຍຂອງນາຍທະຫານ ທີ່ຍັງມີຊີວິດຢູ່ໄປນຳພວກເຂົາດ້ວຍ.

ນາຍຮ້ອຍໂທ ໂລປາຕິນ ໄດ້ເວົ້າຄ່ອຍໆວ່າ "ພວກສະຫາຍເອີຍ, ພວກເຮົາຂໍລາໄປກ່ອນ, ຂໍໃຫ້ພວກສະຫາຍຈົ່ງມຸ່ງໜ້າໄປທາງທິດຕາເວັນອອກ. ເມຍຂອງເຂົາໄດ້ມາກອດຈູບຜົວ. ລາກ່ອນອ້ອຍຟ້າວກັບຄືນໄປໄວໆ." ເຂົາໄດ້ອອກ ເດີນທາງໄປຕາມສາຍທາງຢ່າງວ່ອງໄວ ໂດຍບໍ່ໄດ້ຫລຽວຫລັງກັບເລີຍ ແລະພວກເພື່ອນສູ້ຮົບຂອງເຂົາ ກໍໄດ້ຕິດຕາມເຂົາໄປຢ່າງມິດງຽບ. ການສູ້ຮົບທີ່ຕ້ານການບຸກໂຈມຕີຂອງພວກຟາຊິດນັ້ນໄດ້ດຳເນີນໄປໄດ້ອີກສອງມື້. ພໍມາຮອດມື້ທີ່ ໑໘ ພວກທະຫານຮິດແລກໍໄດ້ແຊກຊຶມເຂົ້າມາສູ່ຊຸມຊຸມຄອງ ຂອງກອງທະຫານຊາຍແດນແລະກໍໄດ້ຄ່ວງລູກລະເບີດມືໃສ່ພວກໜ່ວຍປ້ອງກັນ ທີ່ກ້າຫານ ເຊິ່ງມີຈຳນວນໜ້ອຍນັ້ນ ເຊິ່ງກໍໄດ້ເຮັດໃຫ້ ພວກເຂົາຕາຍໝົດທຸກຄົນ.

ປ້ອມຄ້າຍຊາຍແດນທີ່ບັງຄັບບັນຊາ ໂດຍພວກນາຍທະຫານເຊັ່ນ ຊູໂນວິສະກີ, ເຟໂດຕົບ, ລູກູຢານອບ ແລະ ຄົນອື່ນໆອີກ ກໍໄດ້ທຳການຕໍ່ສູ້ຢ່າງບໍ່ມີຄວາມຢ້ານກົວແຕ່ຢ່າງໃດຄືກັນ.

ກອງທະຫານຊາຍແດນໂຊວຽດ ພາຍໃຕ້ການບັງຄັບບັນຊາຂອງນາຍທະຫານ ຊື່ ໂປລີໂວດາ ໄດ້ທຳການຕີໂຕ້ ພວກຟາຊິດຢ່າງດຸເດືອດ ແລະກໍເຮັດໃຫ້ພວກເຂົາຖອຍໄປຈາກເຂດແດນເມືອງ ເປເຣມີສະລະ. ເມື່ອໄດ້ບັງຄັບການໂຈມຕີຂອງສັດຕູຢ່າງບໍ່ຢຸດຢັ້ງ ໃຫ້ຖອຍຫ່າງໄປແລ້ວ ກອງທະຫານ ຊາຍແດນກໍໄດ້ອຳນວຍການຍົກຍ້າຍພົນລະເມືອງ ແລະສິ່ງຂອງທີ່ມີຄຸນຄ່າອອກຈາກເມືອງໄປ. ການສູ້ຮົບໄດ້ດຳເນີນໄປຮອດທ້າຍ ມື້. ວັນທີ່ ໒໗ ມິຖຸນາ, ເມື່ອໄດ້ປະຕິບັດ ຕາມຄຳສັ່ງຂອງກອງບັນຊາການແລ້ວ,ກອງທະຫານຂອງຮ້ອຍເອກໂປລີໂວດາກໍໄດ້ຖອຍອອກຈາກເມືອງ ເປເຣມີສະລະໄປຮ່ວມກັບກອງທະຫານໂຊວຽດສ່ວນໃຫຍ່. ພວກນັກຮົບຂອງກອງທະຫານ ຊາຍແດນເມືອງ ເປເຣມີສະລະ ໄດ້ທຳລາຍທະຫານແລະນາຍທະຫານຂອງສັດຕູ ໄດ້ຫລາຍກວ່າ ໕໐໐໐ ຄົນ ໃນມື້ທຳອິດຂອງສົງຄາມ.

ກອງທະຫານໂຊວຽດ ທີ່ຢູ່ໃນເຂດແນວໜ້າອື່ນໆ ກໍໄດ້ທຳການຕໍ່ສູ້ຢ່າງໝັ້ນຫລວງ ໂດຍໄດ້ສະແດງຄວາມກ້າຫານ ອັນຍິ່ງໃຫຍ່ໃນການຕໍ່ສູ້ກັບທະຫານຮິດເລ. ນາຍພົນຂອງຟາຊິດຊື່ ກູເດລຽນ ໄດ້ຂຽນໄວ້ໃນສະໝຸດບັນທຶກຂອງຕົນວ່າ: "ຟະເລດລິກ ຜູ້ຍິ່ງໃຫຍ່ໄດ້ກ່າວກ່ຽວກັບການຕໍ່ຕ້ານຂອງທະຫານລັດເຊຍໄວ້ວ່າ: ເຂົາຈຳເປັນຕ້ອງຍິງສອງເທື່ອ ແລະພາຍຫລັງຕໍ່ມາເຖິງວ່າເຂົາຈະຕ້ອງຖືກບັງຄັບ ໃຫ້ປະລາໄຊໄປ ກໍຕາມ. ເຂົາໄດ້ເຂົ້າໃຈທະຫານເຫລົ່ານີ້ ໄດ້ເປັນຢ່າງຖືກຕ້ອງ ໃນປີ

໑໙໔໑ ພວກເຮົາກໍຈຳຕ້ອງ ໄດ້ພິສູດໃຫ້ເຫັນດ້ວຍຕົນເອງວ່າ ເລື່ອງນັ້ນໄດ້ເປັນຈິງແທ້. ພວກທະຫານເຫລົ່ານີ້ ໄດ້ທຳການປ້ອງກັນຖານທີ່ໝັ້ນ ທີ່ໄດ້ສ້າງຂຶ້ນມານັ້ນ ໄວ້ຢ່າງໝັ້ນ ຄົງ, ເຖິງວ່າພາກສ່ວນໃຫຍ່ຂອງຖານທີ່ໝັ້ນ ຈະໄດ້ຖືກຍຶດໄປແລ້ວກໍຕາມ ພວກປ້ອງກັນທີ່ຍັງເຫລືອຢູ່ ກໍໄດ້ດຳເນີນສູ້ຕໍ່ໄປ ເຖິງວ່າຈະຖືກຂ້າ ຫລືວ່າຖືກຈັບເປັນຊະເລີຍໄປ ໃນການຕໍ່ສູ້ ກັນດ້ວຍມືກໍຕາມ, ແຕ່ວ່າໃນກໍລະນີທີ່ພວກເຮົາໄດ້ຍອມຈຳນົນນັ້ນບໍ່ຄ່ອຍມີ."

ໂດຍບໍ່ຄຳນຶງເຖິງວ່າ ຈະສູນເສຍໄປເທົ່າໃດກໍຕາມ,ພວກທະຫານຮິດແລກໍໄດ້ຟ້າວຟັ່ງທີ່ຈະຍຶດເອົານະຄອນຫລວງມົດສະກູແຫ່ງ ສ.ສ.ສ.ຊ ກ່ອນທີ່ລະດູໜາວຈະມາເຖິງ. ໃນເດືອນທຳອິດຂອງສົງຄາມນັ້ນ ພວກຟາຊິດໄດ້ມີລົດຖັງ ແລະເຮືອບິນຫລາຍກວ່າກອງທັບໂຊວຽດ. ເພາະວ່າໃນຂະນະ ທີ່ກະກຽມເພື່ອໂຈມຕີ ສ.ສ.ສ.ຊ.ນັ້ນ ພວກທະຫານຮິດແລ ໄດ້ໃຊ້ອຸດສາຫະກຳທັງໝົດທີ່ຍຶດເອົາມາໄດ້ ຈາກປະເທດ ເອີລົບ ນັ້ນເຂົ້າມາປະກອບອາວຸດ ໃຫ້ແກ່ກອງທັບຂອງຕົນ. ກອງທັບຮິດແລໄດ້ມີບົດຮຽນ ອັນໃຫຍ່ຫລວງ ໃນການເຮັດສົງຄາມທັນສະໄໝ ເຊິ່ງພວກເຂົາໄດ້ຮັບມາໃນລະຫວ່າງການເຮັດສົງຄາມຢູ່ໃນປະເທດເອີລົບຕາເວັນຕົກ. ພາຍຫລັງທີ່ພວກຟາຊິດໄດ້ຂຶ້ນກຳອຳນາດຢູ່ໃນເຢຍລະມັນແລ້ວ ຊີວິດທັງໝົດຂອງ ປະເທດນັ້ນ ໄດ້ຂຶ້ນຢູ່ກັບຈຸດປະສົງອັນດຽວຄື ການຕ້ານ ສ.ສ.ສ.ຊ. ທະຫານຢູ່ໃນກອງທັບຟາຊິດເຢຍລະມັນ ກໍແມ່ນມີຈຳນວນຫລວງ

ຫຼາຍ.

ຢ່າງໃດກໍຕາມ, ປະຊາຊົນໂຊວຽດ ກໍໄດ້ດຳເນີນ ການສ້າງສາໄປຢ່າງສະຫງົບ ແລະກໍມີແຕ່ພົນລະເມືອງ ຜູ້ທີ່ມີອາຍຸເຖິງລະດັບເຂົ້າຮັບໃຊ້ໃນກອງທັບປ້ອງກັນປະເທດເທົ່ານັ້ນ ທີ່ໄດ້ຖືກເກນເຂົ້າໄປເປັນທະຫານ. ການຮຸກຮານຂອງກອງທະຫານຟາຊິດໄດ້ປ່ຽນແປງປະເທດໂຊວຽດໄປເປັນຄ້າຍທະຫານອັນໜຶ່ງອັນດຽວກັນ. ເພື່ອຕອບສະໜອງຕໍ່ຄຳຮຽກຮ້ອງຂອງຄະນະກຳມະການສູນກາງພັກກອມມູນິດ ແລະ ລັດຖະບານໂຊວຽດນັ້ນ ປະຊາຊົນໂຊວຽດທັງໝົດ ກໍໄດ້ພາກັນລຸກຂຶ້ນ ຕໍ່ ສູ້ປ້ອງກັນປິຕຸພູມໄວ້ ພວກເຂົາໄດ້ເຂົ້າໃຈວ່າ ພາລະໜ້າທີ່ ນີ້ເປັນວຽກງານກ່ຽວກັບຊີວິດ ຫຼືຄວາມຕາຍຂອງປະຊາຊົນໂຊວຽດ, ເປັນພາລະໜ້າທີ່ກ່ຽວກັບວ່າປະຊາຊົນໂຊວຽດຈະຍັງຄົງມີເສລີພາບ ຫຼືວ່າຈະຕົກເປັນຂ້າທາດຂອງຟາຊິດເຢຍລະມັນໄປ. ແນວຄິດແລະຄວາມຮູ້ສຶກຂອງປະຊາຊົນໂຊວຽດກ່ຽວກັບເລື່ອງນີ້ ໄດ້ສະແດງອອກ ຢູ່ໃນບົດເພງຊື່ວ່າ "ສົງຄາມທີ່ສັກສິດ" ທີ່ວ່າ:

ປະເທດອັນຍິ່ງໃຫຍ່ ຈົ່ງລຸກຂຶ້ນ,
ຈົ່ງລຸກຂຶ້ນ ຕໍ່ສູ້ຈົນສົ້ນລົມຫັນໃຈ,
ຈົ່ງຕໍ່ສູ້ກັບອິທິກຳລັງຟາຊິດ ທີ່ມືດມົນ
ຈົ່ງຕໍ່ສູ້ກັບກອງທັບ ທີ່ຄຽດຊັງ!
ຈົ່ງຕໍ່ສູ້ຢ່າງຮ້າຍແຮງ ແບບຍຸຕິທຳ
ປາກົດຂຶ້ນ ຄື ຟອງນ້ຳ

- ສົງຄາມແບບປະຊາຊົນ ທີ່ພວມດຳເນີນໄປ
- ແມ່ນສົງຄາມ ອັນສັກສິດ.

ໃນມື້ທຳອິດຂອງສົງຄາມນັ້ນ ໄດ້ມີຜູ້ຊາຍຈຳນວນຫລາຍສິບພັນຄົນ ໄດ້ເຂົ້າມາສະເໜີຕົວ ຕໍ່ສູນກາງລະດົມທະຫານ. ພົນລະເມືອງທີ່ຍັງໜຸ່ມນ້ອຍ ແລະເຖົ້າແກ່ຊະລາ ທັງໝົດໄດ້ພາກັນຮ້ອງຂໍທຳນອງດຽວກັນ ຄື ສົ່ງພວກເຂົາເຈົ້າໄປສູ່ແນວຣົບໃຫ້ໄວທີ່ສຸດ. ດັ່ງນັ້ນ ແຕ່ລະມື້ ຈຳນວນພົນທະຫານຂອງກອງທັບໂຊວຽດ ກໍໄດ້ເພີ່ມຂຶ້ນ.

ຢູ່ທີ່ຫ້ອງກົນຈັກແລະອຸປະກອນກົນຈັກ ໃນໂຮງຈັກໂຮງງານຂອງພວກທີ່ໄດ້ອອກໄປສູ່ແນວຣົບນັ້ນ ກໍໄດ້ມີແມ່ຍິງ, ເດັກນ້ອຍແລະຄົນແກ່ເຂົ້າມາແທນ. "ທຸກສິ່ງທຸກຢ່າງ ເພື່ອແນວຣົບ , ທຸກສິ່ງທຸກຢ່າງເພື່ອໄຊຊະນະ ! " ຄຳຮຽກຮ້ອງຂອງພັກກອມມູນິດອັນນີ້ໄດ້ກາຍເປັນຄຳຂວັນຂອງປະຊາຊົນໂຊວຽດທັງໝົດ.

ໂດຍສວຍໃຊ້ເອົາຄວາມເໜືອກວ່າຂອງຕົນປະຈຸບັນນີ້ເຊິ່ງພວກເຂົາໄດ້ມາດ້ວຍການລະເມີດສັນຍາປີ ໑໙໓໙ ແລະການໂຈມຕີແບບສາຍຟ້າແມບນັ້ນ, ພວກທະຫານຮິດແລ ກໍໄດ້ມຸ່ງໜ້າເຂົ້າສູ່ນະຄອນມົດສະກູ. ດິນແດນປະເທດໂຊວຽດ ສ່ວນຫລວງຫລາຍ ກໍໄດ້ຖືກພວກຟາຊິດຍຶດຄອງ. ແຕ່ວ່າ ເມື່ອຍຶດຄອງເມືອງແລະບ້ານຕ່າງໆ ຂອງໂຊວຽດໄດ້ນັ້ນ, ພວກຟາຊິດກໍໄດ້ພົບເຫັນແຕ່ໂຮງສ້ອມແປງຂອງໂຮງງານຕ່າງໆນັ້ນ ເປົ່າແປນໄປແລະຖະໜົນຫົນທາງກໍບໍ່ມີຜູ້ຄົນ. ຕາມຄຳສັ່ງຂອງພັກກອມມູນິດ ປະຊາຊົນໂຊວຽດໄດ້ພາກັນຍົກຍ້າຍອຸປະກອນໂຮງ



ເມື່ອປີ ໑໙໔໑ ປ້າຍຂຽນວ່າ:
"ມາຕຸພູມຮຽກຮ້ອງພວກເຈົ້າ!"

ຈັກໂຮງງານໃຫຍ່ໄປຍັງອູລານ, ຊີບີລີ ແລະ ອາຊີກາງ ໃນ ປີ ໑໙໔໑. ໃນຊົ່ວໄລຍະເວລາສາມເດືອນເທົ່ານັ້ນ ຂອງສົງຄາມ, ໂຮງຈັກໂຮງງານໃຫຍ່ໆ ໑໕໐໐ ແຫ່ງ, ຜູ້ຄົນຫລາຍລ້ານຄົນ ແລະ ຊັບສົມບັດທີ່ມີຄ່າອີກ ຈຳນວນຫລວງຫລາຍໄດ້

ຖືກຍົກຍ້າຍອອກຈາກເຂດແນວຣົບ ໄປຍັງເຂດ ຕາເວັນອອກ ຂອງປະເທດ. ຊາວກຳມະກອນທັງຍິງແລະຊາຍ ໄດ້ຈັດຕັ້ງ ໂຮງຈັກໂຮງງານໃຫມ່ຂຶ້ນ ແລະກໍໄດ້ຕິດຕັ້ງ ເຄື່ອງຈັກໃສ່ , ໂຮງສ້ອມແປງແລະໂຮງງານດັ່ງກ່າວ ໄດ້ສ້າງຂຶ້ນ ຢູ່ໃນ ທົ່ງຫຍ້າ, ກາງແຈ້ງ, ມີຝົນຕົກຮຳແລະທັງຫນາວເຍືອກເຢັນ . ທຸກໆມື້ເຮືອບິນ, ລົດຖັງ, ປືນ, ປືນໃຫຍ່ແລະອາວຸດອື່ນໆອີກ ຈຳນວນຫລວງຫລາຍ ໄດ້ຖືກສົ່ງໄປແນວຣົບ. ຊາວກຳມະກອນ ໄດ້ເວົ້າວ່າ "ພວກເຮົາຈະເຮັດວຽກ ບໍ່ແມ່ນ ເພື່ອຕົນເອງ ເທົ່ານັ້ນ ແຕ່ຍັງເພື່ອບັນດາສະຫາຍ ຜູ້ທີ່ໄດ້ອອກໄປສູ່ແນວຣົບ ອີກດ້ວຍ!" ຊາວກຳມະກອນຫລາຍແສນຄົນ ໄດ້ປະຕິບັດ ອັດຕາເຮັດວຽກແລ້ວສອງສາມອັດຕາ ໃນເດືອນທຳອິດ ຂອງສົງຄາມ. ມີຢູ່ເລື້ອຍໆທີ່ຊາວກຳມະກອນ ບໍ່ໄດ້ ກັບເມືອ ຢາວເຮືອນ ພາຍຫລັງເຮັດວຽກຂອງຕົນແລ້ວ. ພວກເຂົາໄປພັກຢູ່ໃນຫໍພັກປະມານ ໔-໕ ຊົ່ວໂມງ ແລ້ວກໍກັບໄປເຮັດວຽກອີກ. ບັນດາເມຍຜູ້ທີ່ໄດ້ໄປແທນບ່ອນເຮັດວຽກຜົວຂອງຕົນຢູ່ໃນຫ້ອງອຸປະກອນເຄື່ອງຈັກນັ້ນ ກໍໄດ້ກາຍເປັນຜູ້ມີຄວາມຊຳນິຊຳນານທີ່ແທ້ຈິງໃນວຽກງານນັ້ນໄປ. ພວກເຂົາໄປເຮັດວຽກຢູ່ໃນທຸກໆແຫ່ງ ຄື ຢູ່ໃນເຕົາຫລອມເຫລັກ, ໂຮງຣີດເຫລັກແລະໃນບໍ່ແຮ່. ພວກເດັກນ້ອຍ, ນັກຮຽນຢູ່ໃນໂຮງຮຽນອາຊີບ ໄດ້ຖືກມອບຫມາຍໃຫ້ຮັບຜິດຊອບໃນພາກສ່ວນການຜະລິດ. ອາດຈະ ເຫັນໄດ້ຢູ່ເລື້ອຍໆວ່າ ແທ່ນພິເສດຈຳຕ້ອງໄດ້ສ້າງຂຶ້ນ ເພາະ ວ່າພວກເຂົາຍັງບໍ່ທັນສູງພຽງພໍ ທີ່ຈະຢືນບັນຊາເຄື່ອງຈັກໄດ້. ແຕ່

ວ່າ ກະສອບທີໜຶ່ງ-ທີສອງ-ທີສາມ ສຳລັບລູກປືນໃຫຍ່ນັ້ນ ກໍໄດ້ພະລິດຂຶ້ນ. ພວກເຂົາກໍເຮັດວຽກງານ ໄດ້ຜົນດີເທົ່າໆກັບຊາວກຳມະກອນຜູ້ໃຫຍ່. ປະຊາຊົນໄດ້ເອີ້ນກຳມະກອນ ໜຸ່ມນ້ອຍນັກຮຽນທີ່ຮຽນຢູ່ໃນໂຮງຮຽນອາຊີບນ້ວ່າ ກຳມະກອນຄຳຢ່າງໃດຢ່າງໜຶ່ງຂຶ້ນມາ.

ພວກນັກວິທະຍາສາດໂຊວຽດ ກໍໄດ້ອຸທິດເຫື່ອແຮງຂອງຕົນຕໍ່ໄຊຊະນະຄືກັນ. ພວກເຂົາໄດ້ພະລິດເຫລັກກ້າ ທີ່ມີ ຄຸນນະພາບສູງໃໝ່ຂຶ້ນ ແລະໄດ້ສ້າງອາວຸດໃໝ່ໆຂຶ້ນມາ ເຊັ່ນດຽວກັນ. ຊາວຜູ້ອອກແຮງງານຢູ່ໃນແນວຫລັງທັງໝົດ ກໍໄດ້ເຮັດວຽກໂດຍບໍ່ມີເວລາໄປພັກຜ່ອນ ແລະ ໄດ້ລາພັກ ວຽກງານ. ພວກເຂົາໄດ້ເຂົ້າໃຈວ່າ ທຸກໆມື້ແລະທຸກໆຊົ່ວໂມງມີຄຸນຄ່າສູງ. ບັນດາຜູ້ຄົນທີ່ມາຈາກແນວໜ້າ ເພື່ອຮັບເອົາປືນ, ລົດຖັງແລະເຮືອບິນ ໄດ້ຂອບອົກຂອບໃຈຕໍ່ຊາວກຳມະກອນ ແລະໄດ້ເລົ່າໃຫ້ພວກເຂົາຟັງກ່ຽວກັບການຕໍ່ສູ້ຢ່າງໜັກໜ່ວງທີ່ໄດ້ດຳເນີນໄປເພື່ອປິຕຸພູມ. ພາຍຫລັງການພົບປະກັນເຫລົ່ານີ້ແລ້ວ ຊາວກຳມະກອນກໍຍິ່ງເຮັດວຽກເຂັ້ມແຂງຂຶ້ນ ແລະພະເຊີນໜ້າກັບຄວາມຫຍຸ້ງຍາກຂອງຊີວິດໃນຍາມສົງຄາມ ໄດ້ຢ່າງ ກ້າຫານຫລາຍຍິ່ງງຂຶ້ນ.

ຄວາມຫຍຸ້ງຍາກເຫລົ່ານີ້ ບໍ່ແມ່ນຂອງເລັກນ້ອຍ. ຢູ່ໃນປະເທດໄດ້ນຳເອົາການແບ່ງປັນສະບຽງອາຫານ ແລະສິນຄ້າອຸດສາຫະກຳແບບມີອັດຕາແກ່ພົນລະເມືອງມາໃຊ້. ຢູ່ໃນສະຖານທີ່ໃໝ່ເຫລົ່ານີ້ ບໍ່ມີບ່ອນພັກພາອາໄສພຽງພໍ. ຊາວລັດເຊຍ,

ເບໂລຣຸດເຊຍ, ອູກະລາອີນາ ແລະ ຊົນຊາດອື່ນໆ ຜູ້ທີ່ ຫນີ ອອກຈາກເຂດຍຶດຄອງ ໂດຍພວກຟາຊິດນັ້ນກໍໄດ້ຮັບການຕ້ອນ ຮັບຢ່າງອົບອຸ່ນຈາກຊາວອູສະເບັກ, ຊາວກາຊັກ, ຊາວຕາດຊິກ, ຊາວອູດະມູລະ ແລະຊາວໂກມີ. ປະຊາຊົນ ແຫ່ງບັນດາ ຊົນ ຊາດຕ່າງໆ ບໍ່ພຽງແຕ່ເຮັດວຽກງານຮ່ວມກັນ ຢ່າງມີ ມິດຕະ ພາບເທົ່ານັ້ນ ແຕ່ຫາກຍັງສາມາດ ໃຫ້ການຊ່ອຍເຫລືອ ເຊິ່ງ ກັນແລະກັນໃນທຸກໆດ້ານອີກດ້ວຍ.

ໃນລະຫວ່າງສົງຄາມ ອັນດຸເດືອດນັ້ນ ປະຊາຊົນ ໄດ້ສະ ແດງຄວາມເປັນຫ່ວງເປັນໄຍຢ່າງໃຫ່ຍຫລວງ ຕໍ່ພວກ ເດັກ ນ້ອຍ, ຕໍ່ການຝຶກຝົນອົບຮົມ ແລະຕໍ່ການລ້ຽງດູພວກເຂົາ.ດັ່ງ ນັ້ນເຮືອນສຳລັບເດັກນ້ອຍ ທີ່ພໍ່ແມ່ໄດ້ລົ້ມຕາຍ ຕາຍໄປ ເຊິ່ງ ເປັນບ່ອນທີ່ພວກເຂົາໄດ້ດຳລົງຊີວິດຢູ່ ແລະໄດ້ສຶກສາຮ່ຳຮຽນ ນັ້ນ ກໍໄດ້ຖືກສ້າງຂຶ້ນຢູ່ໃນແນວຫລັງ ທີ່ເລິກເຂົ້າໄປ.ໃນພາກ ສ່ວນດິນແດນຂອງປະເທດ ທີ່ສັດຕູບໍ່ໄດ້ຍຶດຄອງນັ້ນ ໂຮງຮຽນ ແລະໂຮງຮຽນອະນຸບານຕ່າງໆ ກໍໄດ້ດຳເນີນ ວຽກງານຕໍ່ໄປ ຕາມປົກກະຕິ. ປະຊາຊົນໂຊວຽດໄດ້ເຊື່ອຢ່າງຫມັ້ນໃຈໃນໄຊ ຊະນະ ແລະກໍໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອໃຫ້ໄດ້ ໄຊຊະນະ ນັ້ນ.

ພວກຟາຊິດເຢຍລະມັນ ບໍ່ໄດ້ມີໂອກາດ ທີ່ຈະຈັດຕັ້ງ ການ ກວດກາຂຶ້ນ ຢູ່ໃນດິນແດນໂຊວຽດ ທີ່ຖືກຍຶດຄອງເລີຍ.ທຸກໆມື້ ສາງລູກລະເບີດແລະນ້ຳມັນເຊື້ອໄຟ ກໍໄດ້ລະເບີດ ແລະ ລຸກ ໃຫມ້ຂຶ້ນ ຢູ່ໃນບ່ອນຫນຶ່ງແລ້ວ ກໍເກີດຂຶ້ນໃນບ່ອນໃຫມ່ ຕໍ່ໄປ.

ລົດໄຟທີ່ບັນທຸກທະຫານແລະອາວຸດຈາກເຢຍລະມັນ ໄປສູ່ແນວໜ້າ ກໍໄດ້ຖືກເຮັດໃຫ້ຕົກລາງໄປ. ພວກໜ່ວຍທະຫານຮິດແລກໍໄດ້ຖືກທຳລາຍໄປ ດ້ວຍການໂຈມຕີໃນຍາມຄ່ຳຄືນຢ່າງສາຍຟ້າແມບ. ເຮືອບິນຖິ້ມລະເບີດຂອງໂຊວຽດໄດ້ໄປຖິ້ມລະເບີດໃສ່ເປົ້າໝາຍໄດ້ຢ່າງແມ່ນຢຳຂຶ້ນ ຄືພວກນັກບິນຮູ້ວ່າບ່ອນໃດເປັນບ່ອນທີ່ເປົ້າໝາຍທະຫານທີ່ສຳຄັນທີ່ສຸດ ຂອງສັດຕູຕັ້ງຢູ່. ພວກທະຫານຮິດແລໄດ້ຂຽນ ຈ.ມ. ເຖິງຄອບຄົວ ຂອງພວກເຂົາດ້ວຍຄວາມກັງວົນວ່າ ຢູ່ໃນດິນແດນທີ່ຍຶດຄອງນັ້ນ ໄພອັນຕະລາຍແມ່ນນາບຂູ່ພວກເຂົາຢູ່ທຸກເວລາ. ຢູ່ໃນຈົດໝາຍຂອງທະຫານຟາຊິດ, ໃນຄຳລາຍງານທະຫານຂອງເຢຍລະມັນນັ້ນຄຳວ່າ "ກອງຫລອນ" ໄດ້ເຮັດໃຫ້ພວກຍຶດຄອງມີຄວາມຢານກົວຫລາຍຍິ່ງຂຶ້ນ.

ກອງຫລອນໂຊວຽດ ແມ່ນບໍ່ໃຫ້ໂອກາດ ແກ່ກອງ ທະຫານຂອງສັດຕູ ໄດ້ມີເວລາພັກຜ່ອນໄດ້ເລີຍ. ໃນເດືອນທຳອິດຂອງສົງຄາມນັ້ນ ໜ່ວຍກອງຫລອນ ກໍໄດ້ຖືກຈັດຕັ້ງຂຶ້ນ ຢູ່ໃນເຂດທີ່ຟາຊິດຍຶດຄອງ ຕາມຄຳສັ່ງຂອງພັກກອມມູນິດ ແລະ ລັດຖະບານໂຊວຽດ. ບັນດາຜູ້ຮັກຊາດທີ່ຢູ່ໃນແນວຫລັງຂອງສັດຕູໄດ້ຈ່ອຍກອງທັບໂຊວຽດຕໍ່ສູ້ກັບພວກຮຸກຮານ. ນາຍແລະພົນ ທະຫານຂອງທະຫານຮິດແລຫລາຍແສນຄົນ, ລົດໄຟ, ລົດຍົນສົ່ງປືນແລະລົດຖັງຫລາຍໝື່ນຄັນ ໄດ້ຖືກທຳລາຍໄປ ໂດຍພວກກອງຫລອນໂຊວຽດ. ດ້ວຍການຕິດຕໍ່ກັບກອງບັນຊາການຂອງກອງທັບໂຊວຽດ, ພວກເຂົາໄດ້ລາຍງານຂ່າວ ທີ່ມີຄຸນຄ່າກ່ຽວກັບ

ສັດຕູແລະໄດ້ບອກສະຖານທີ່ງກອງທະຫານແລະອຸປະກອນຂອງ
ສັດຕູໄດ້ຕັ້ງຢູ່. ຢູ່ໃນອູກະລາອີນາແລະເບໂລຣຸດເຊຍບາງຕາ
ແສງນັ້ນ ໄດ້ຕົກຢູ່ໃຕ້ການຄວບຄຸມຂອງກອງຫລອນ. ກອງຫຼອນ
ຊາວອູກະລາອີນາ ບັງຄັບບັນຊາໂດຍ ຊີໂດລະໂກວະປັກ ໄດ້
ກວມພົບທີ່ຫລາຍພັນກິໂລແມດ ໃນການປະຕິບັດງານ ຕ້ານກັບ
ສັດຕູ. ພວກເຂົາໄດ້ລໍ້ລວງສັດຕູແລະໂຈມຕີມັນໃນບ່ອນທີ່ພວກ
ເຂົາບໍ່ຄາດຫວັງໄວ້ຢ່າງກ້າຫານ ແລະຢ່າງສາຍຟ້າແມບ.

ລູກຊາຍຜູ້ກ້າຫານຂອງປະຊາຊົນເບໂລຣຸດເຊຍ ຊື່ ກົນສະ
ຕານຕິນ ຊາສະໂລນອບ ໄດ້ໄປເຮັດວຽກ ຢູ່ທີ່ ສາງລົດໄຟ.
ເຂົາພ້ອມດ້ວຍພັກພວກ ໄດ້ທຳລາຍສັດຕູໂດຍໄດ້ທຳລາຍວຽກ
ງານສາຍທາງລົດໄຟ. ເມື່ອພວກຟາຊິດໄດ້ຮູ້ກ່ຽວກັບ ການກະ
ທຳຂອງ ຊາສະໂລນົບ, ເຂົາກໍໄປລີ້ຊ່ອນຢູ່ໃນປ່າ ແລະການ
ເປັນຜູ້ບັງຄັບບັນຊາຂອງກອງຫລອນໄປ.

ເມືອງນ້ອຍງແຫ່ງໜຶ່ງ ຢູ່ໃນອູກະລາອີນາ ຊື່ກະລາສະໂນ
ດົນ ກຸ່ມຂອງພວກໜຸ່ມ, ສະມາຊິກຂອງກົມໂຊໂມນ ກໍໄດ້ຈັດ
ຕັ້ງອົງການໃຕ້ດິນຂຶ້ນ ຊື່ "ໜ່ວຍປ້ອງກັນໜຸ່ມ". ພວກເຂົາ
ໄດ້ເຜົາສຳນັກງານ ເຊິ່ງເປັນບ່ອນທີ່ພວກຟາຊິດໄດ້ມີຣຽນບັນຊີ
ລາຍຊື່ປະຊາຊົນໂຊວຽດໄວ້ ເຊິ່ງໄດ້ຖືກບັງຄັບ ໃຫ້ໄປສູ່ເຢຍ
ລະມັນແລະເຮັດວຽກເປັນຂ້າທາດແຮງງານຢູ່ທີ່ນັ້ນ. ວິລະຊົນ
ທີ່ໜຸ່ມນ້ອຍ ໄດ້ຕິດປ້າຍປະກາດຢູ່ຕາມເມືອງ ໂດຍໄດ້ ບອກ
ຄວາມຈິງກ່ຽວກັບສະພາບການຢູ່ໃນແນວໜ້າໃຫ້ປະຊາຊົນຮູ້.
ເມື່ອງໃນມື້ບຸນສະຫລອງການປະຕິວັດເດືອນຕຸລານັ້ນພວກເຂົາ

ໄດ້ຈັກສູງໂຊວຽດຂຶ້ນ ໃນສະຖານທີ່ງເຫັນໄດ້ ຢ່າງຈະແຈ້ງຢູ່ໃນຕົວເມືອງ.

ການກະທຳຂອງກອງຫລອນໂຊວຽດ ແລະໜ່ວຍໃຕ້ດິນນັ້ນໄດ້ນຳເອົາຄວາມເສັຍຫາຍມາໃຫ້ແກ່ພວກຍຶດຄອງ ຢ່າງໃຫຍ່ຫລວງ. ໃນເວລາດຽວກັນນັ້ນ ພວກເຂົາກໍໄດ້ນຳເອົາຄວາມຫວັງມາສູ່ປະຊາຊົນ ໃນດິນແດນທີ່ສັດຕູຍຶດຄອງ ແລະໄດ້ແນະນຳໃຫ້ພວກເຂົາມີຄວາມເຊື່ອໝັ້ນ ໃນໄຊຊະນະ ຂັ້ນສຸດທ້າຍຂອງກອງທັບໂຊວຽດ.

ລີຊາ ໄຊກີນາ ກອງຫລອນຜູ້ຍິງທີ່ກ້າຫານ ໄດ້ອອກຈາກບ້ານນີ້ໄປສູ່ບ້ານນັ້ນ ໂດຍໄດ້ບອກ ໃຫ້ປະຊາຊົນຮູ້ ຄວາມຈິງກ່ຽວກັບການຕໍ່ສູ້ຢ່າງພິລະອາດຫານ ຂອງກອງທັບໂຊວຽດ , ເອົາຈິດໃຈເຂົ້າໄປສູ່ບຸກຄົນຜູ້ທີ່ຜິດຫວັງ ແລະສັ່ງສອນໃຫ້ພວກເຂົາຮູ້ວິທີການຕໍ່ສູ້ກັບພວກຜູ້ຮຸກຮານ. ກ່ອນສົງຄາມນັ້ນ ລີຊາໄຊກີນາ ໄດ້ເປັນຫົວໜ້າອົງການຊາວໜຸ່ມກົມໂຊໂມນປະຈຳຕາແສງ. ປະຊາຊົນໄດ້ຮູ້ນາງດີແລະກໍເຊື່ອນາງເຊັ່ນດຽວກັນ. ພວກທະຫານຮິດແລຈັບນາງໄດ້ຢ່າງສຳເລັດຜົນ. ການ ທໍລະມານທີ່ໜ້າຢ້ານກົວທີ່ພວກເຂົາໄດ້ນຳມາໃຊ້ກັບນາງນັ້ນ ບໍ່ໄດ້ທຳລາຍມານະຈິດຂອງທີ່ກ້າຫານຂອງກອງຫລອນແຕ່ຢ່າງໃດ. ພາຍຫລັງທີ່ພວກເຂົາໄດ້ພະຍາຍາມທີ່ຈະສືບເອົາຂ່າວກ່ຽວກັບກອງຫລອນຈາກນາງ ບໍ່ປະສົບຜົນສຳເລັດແລ້ວ, ພວກທະຫານຮິດແລກໍໄດ້ຍິງເປົ້ານາງ. ເມື່ອຫັນໜ້າໄປສູ່ພວກເພັດຊະຄາດແລ້ວ ນາງໄດ້ຮ້ອງອອກມາວ່າ : "ຍິງ! ຂ້າພະເຈົ້າ ກຽມ

ພ້ອມທີ່ຈະຕາຍແລ້ວ. ປັຖຸພູມຂອງພວກເຮົາຈົ່ງໝັ້ນຍືນ !"

ຂະບວນການກອງຫລອນ ໄດ້ຂະຫຍາຍຕົວອອກ ແລະເຂັ້ມແຂງຂຶ້ນ. ພວກທະຫານຣິດແລໄດ້ສົ່ງໜ່ວຍທະຫານພິເສດ ຈຳນວນຫລວງຫລາຍ ໄປຕ້ານກອງຫລອນ, ໄດ້ຍິງປະຊາຊົນທີ່ບໍ່ມີຄວາມຜິດຫຍັງ ແລະໄດ້ທຳລາຍບ້ານນ້ອຍ ແລະ ບ້ານໃຫຍ່ທີ່ສົງໄສວ່າ ມີການພົວພັນກັບກອງຫລອນ, ແຕ່ວ່າພວກເຂົາກໍບໍ່ສາມາດທີ່ຈະເຮັດໃຫ້ປະຊາຊົນໂຊວຽດຢ້ານກົວໄດ້. ຢູ່ໃນຕົວເມືອງແລະບ້ານນອກ ປະຊາຊົນໄດ້ໃຫ້ການຊ່ອຍເຫລືອ ແກ່ພວກປົດປ່ອຍຂອງເຂົາເຈົ້າ. ພຽງແຕ່ໃນອູກະລາອີນາ ແລະເບໂລລຸດເຊຍເທົ່ານັ້ນ ພວກນັກຮັກຊາດໂຊວຽດ ກໍໄດ້ຮ່ວມກັນຕໍ່ສູ້ຢູ່ໃນຖັນແຖວກອງຫລອນ ຝ໒໐ ພັນກວ່າຄົນ. ພວກຮຸກຮານບໍ່ໄດ້ປະສົບພົບພໍ້ຫຍັງ ນອກຈາກໄດ້ຮັບຄວາມຄຽດຊັງໃນທຸກໆບ່ອນທີ່ພວກເຂົາຜ່ານໄປ.

ໃນກາງເດືອນຕຸລາ ປີ ໑໙໔໑ ເຖິງວ່າທະຫານຮິດແລຈະໄດ້ຮັບການສູນເສຍໄປຫລວງຫລາຍປານໃດກໍຕາມ ພວກເຂົາກໍໄດ້ຫຍັບເຂົ້າໃກ້ນະຄອນມົດສະກູ. ຮິດແລ ໄດ້ປະກາດຢ່າງຈຸຍໂມ້ວ່າ ກອງທະຫານເຢຽລະມັນຈະໄດ້ກ້າວເຂົ້າໄປສູ່ ນະຄອນຫລວງໂຊວຽດ ໃນພາຍໄລຍະບໍ່ດົນນີ້. ໜັງສືພິມຟາຊິດໄດ້ປະຊ່ອງຫວ່າງໄວ້ ສຳລັບລົງຂ່າວ ກ່ຽວກັບການເຂົ້າ ຍຶດນະຄອນມົດສະກູ ເມື່ອໜັງສືພິມນັ້ນ ໄດ້ລົງຂ່າວ ປະຈຳວັນຂອງຕົນ.

ທີ່ວໜ້າຊາວກອມມູນິດເມືອງມົດສະກູ, ອາເລັກຊານດະລະ

ເຊລະບາກິບ, ເມື່ອໄດ້ກ່າວຄຳປາໄສຕໍ່ປະຊາຊົນ ນະຄອນຫລວງແລ້ວ ກໍໄດ້ເວົ້າວ່າ "ນະຄອນມົດສະກູໄດ້ຕົກຢູ່ໃຕ້ການນາບຂູ່ແລ້ວ, ແຕ່ວ່າພວກເຮົາຈະຕໍ່ສູ້ເພື່ອນະຄອນມົດສະກູຈົນເຖິງຢາດເລືອດສຸດທ້າຍຂອງພວກເຮົາ. ພວກເຮົາທຸກໆຄົນ ບໍ່ວ່າຈະຢູ່ໃນຖານະຕຳແໜ່ງໃດ, ບໍ່ວ່າເຂົາຈະພົວພັນ ຢູ່ໃນວຽກງານໃດກໍ່ຕາມ ຈະຕ້ອງເປັນທະຫານໃຫ້ແກ່ກອງທັບປ້ອງກັນນະຄອນມົດສະກູ ຕ້ານພວກຮຸກຮານຟາຊິດ."

ເພື່ອຕອບສະໜອງຕໍ່ຄຳຮຽກຮ້ອງຂອງພັກກອມມູນິດນັ້ນ. ປະຊາຊົນຊາວນະຄອນມົດສະກູກໍໄດ້ສ້າງກອງພົນ, ກອງພົນອາສາສະໝັກປະຊາຊົນຂຶ້ນ. ທຸກໆຄົນທີ່ສາມາດພາຍປືນໄດ້ກໍໄດ້ກາຍເປັນສະມາຊິກຂອງກອງທະຫານເຫລົ່ານັ້ນ. ຊາວກອມມູນິດແລະຊາວໜຸ່ມກົມໂຊໂມນຫລາຍກວ່າ ໓ ແສນຄົນ ກໍໄດ້ປະກອບເຂົ້າຢູ່ໃນກອງໜ້າຂອງກອງພົນອາສາສະໝັກເຫລົ່ານັ້ນ. ຊາວນະຄອນມົດສະກູ ໘ ໝື່ນ ໔ ພັນຄົນ ໄດ້ເຂົ້າຮ່ວມຢູ່ໃນໜ່ວຍປ້ອງກັນຕ້ານການໂຈມຕີທາງອາກາດ. ບັນດາຍິງສາວຜູ້ກ້າຫານ ກໍໄດ້ບັນຈຸເຂົ້າຢູ່ໃນໜ່ວຍປືນຈັກແລະປືນຕໍ່ສູ້ ອາກາດແລະໃນດ້ານສົ່ງເກດການ. ເຮືອບິນຂອງພວກຟາຊິດຈຳນວນຫລາຍລຳ ໄດ້ຖືກຍິງຕົກຈາກພວກແມ່ຍິງທີ່ກ້າຫານເຫລົ່ານັ້ນ.

ພວກຜູ້ຄົນຫລາຍກວ່າ ຫ້າແສນຄົນ ກໍໄດ້ພາກັນສ້າງຖານທີ່ໝັ້ນປ້ອງກັນອ້ອມຮອບນະຄອນມົດສະກູ. ພວກແມ່ແລະລູກ, ແມ່ເຖົ້າແລະຫລານ, ໝົດຄອບຄົວ ກໍໄດ້ພາກັນ ເຂົ້າຮ່ວມຢູ່ໃນ

ວຽກງານນັ້ນ. ຊາວນະຄອນມີດສະກູ ຜູ້ທີ່ບໍ່ເຄີຍຈັບສຽມ ຫລື ຫລົວມາແຕ່ກ່ອນ ກໍໄດ້ປະຕິບັດໜ້າວຽກຂອງຕົນໄປຮອດ ໑໒໐ -໑໔໐ ເປີເຊັນ ແລະເຮັດແລ້ວພາຍໃນ ໒-ນີ ອາທິດ.

ຢູ່ໃນດິນແດນຂອງແຂວງມີດສະກູນັ້ນ ໄດ້ມີໜ່ວຍກອງຫລອນປະຕິບັດການຕໍ່ສູ້ຢູ່ຫລາຍກວ່າ ໔໐ ໜ່ວຍ. ທົ່ວໂລກແມ່ນຮູ້ຊື່ ໂຊຍາ ໂກສະໂມດຽມຢານສະກາຢາ ເປັນຢ່າງດີ. ເມື່ອພວກຟາຊິດບຸກເຂົ້າມາໃກ້ນະຄອນມີດສະກູນັ້ນ ໂຊຍາ ຜູ້ເປັນ ນັກຮຽນຍິງ ແລະສະມາຊິກຊາວໜຸ່ມກົມໂຊໂມນ ເມືອງມີດສະກູ ກໍໄດ້ເຂົ້າຮ່ວມກອງຫລອນ. ພວກຟາຊິດຈັບນາງໄດ້ເມື່ອນາງ ປະຕິບັດການສູ້ຮົບຢູ່ ແລະຕ້ອງການຢາກຈະໃຫ້ນາງບອກບ່ອນພວກກອງຫລອນລີ້ຊ່ອນຢູ່. ພວກສັດຕູໄດ້ຕີນາງດ້ວຍສາຍແອວ ແລະກໍໄດ້ໂຍນນາງລົງໄປໃນນ້ຳກ້ອນ, ແຕ່ນາງ ກໍບໍ່ໄດ້ບອກຫຍັງເລີຍ, ບໍ່ໄດ້ບອກບ່ອນຢູ່ເພື່ອນຂອງນາງ. ພວກເຂົາໄດ້ນຳນາງໂຊຍາໄປຍິງເປົ້າ. ຄັນໄດ້ຫັນໜ້າມາທາງຜູ້ຄົນ ທັງຫລາຍທີ່ຖືກບັງຄັບໃຫ້ມາເບິ່ງການຍິງເປົ້ານັ້ນແລ້ວ,ໂຊຍາໄດ້ຮ້ອງຂຶ້ນວ່າ: "ພວກເພື່ອນເອີຍ! ຂ້າພະເຈົ້າ ບໍ່ຢ້ານຄວາມຕາຍດອກ! ຂໍລາໄປກ່ອນ, ຂໍໃຫ້ສະຫາຍທັງຫລາຍ ຈົ່ງ ດຳເນີນການຕໍ່ສູ້ຕໍ່ໄປ ແລະຢ່າໄດ້ຢ້ານກົວ! ຕາຍເພື່ອປິຕຸພູມ, ເພື່ອນະຄອນມີດສະກູ-ແມ່ນມີຄວາມສຸກ. ໃນທີ່ສຸດ ພວກເຮົາຈະຊະນະ !".

ພວກປ້ອງກັນຕົວເມືອງມີດສະກູ,ພວກທະຫານແຫ່ງກອງທັບແດງໂຊວຽດ ແມ່ນໄດ້ຍອມສະລະຊີວິດຕົນເອງໄປ ດ້ວຍກຽດ

ອັນສູງສົ່ງ. ການຕໍ່ສູ້ກັນທີ່ຮຸນແຮງ ໄດ້ດຳເນີນໄປ ຫ່າງໄກ
ຈາກນະຄອນມົດສະກູພຽງ ໓໐ ກິໂລແມດ. ຢູ່ໃນເຂດ ແນວ
ໜ້າແຫ່ງໜຶ່ງ ກອງລົດຖັງຟາຊິດ ຈຳນວນ ໕໐ ຄັນໄດ້ໂຈມ
ຕີຊຸນລຸ້ມຄອງແຫ່ງໜຶ່ງ ຂອງກອງທະຫານໂຊວຽດ ເຊິ່ງມີຈຳ
ນວນພົນຢູ່ ໔໘ ຄົນ. ໜ່ວຍປ້ອງກັນ ໔໘ ຄົນ ໃນກອງພົນ
ຂອງນາຍພົນ ອີວານ ປານຟີລົບ ໄດ້ຕົກຢູ່ໃນທ່າຮັບການຕໍ່ສູ້.
ທະຫານວິລະຊົນຂອງປານຟີລົບ ໄດ້ເວົ້າວ່າ "ລັດເຊຍ ມີດິນ
ແດນອັນກວ້າງໃຫຍ່ ແຕ່ມົດສະກູຢູ່ໃນເບື້ອງຫລັງ ພວກ ເຮົາ
ການລ່າຖອຍ ແມ່ນບໍ່ມີບ່ອນຈະຖອຍອີກແລ້ວ !" ດັ່ງນັ້ນ ພວກ
ເຂົາຈຶ່ງໄດ້ຕັດສິນໃຈປ້ອງກັນຖານທີ່ໝັ້ນຂອງພວກເຂົາໄວ້ຈົນ
ເຖິງທີ່ສຸດ. ການຕໍ່ສູ້ທີ່ໝົດກຳລັງຫລຸດລົ້ມກັນຫລາຍ ໄດ້ກິນ ເວ
ລາດົນນານຮອດສີ່ຊົ່ວໂມງ ແລະໃນທ້າຍທີ່ສຸດ ລົດຖັງຂອງສັດ
ຕູຈຳນວນ ໑໔ ຄັນ ກໍໄດ້ຖືກທຳລາຍໄປ. ພວກວິລະຊົນສ່ວນ
ຫລວງຫລາຍກໍໄດ້ເສຍສະລະຊີວິດໄປ ແຕ່ວ່າ ການບຸກໂຈມຕີ
ຂອງພວກຟາຊິດ ໄດ້ຖືກທັບມ້າງລົງ. ບັນດາຊາວລັດເຊຍ ,
ຊາວອູກະລາອີນາ, ຊາວກາຊັກແລະຊາວກີລະກິດ ແລະ ຕົວ
ແທນຊົນຊາດອື່ນໆ ກໍໄດ້ຕໍ່ສູ້ຄຽງບ່າ ຄຽງໄຫລ່ກັນ ຢູ່ໃນການ
ຕໍ່ສູ້ຄັ້ງນັ້ນກັນ.

ທຸກກາງຄືນ ເຮືອບິນຂອງພວກຟາຊິດ ຫລາຍຮ້ອຍລຳ ໄດ້ບິນ
ມາຖິ້ມລະເບີດໃສ່ນະຄອນມົດສະກູ.ແຕ່ວ່າເມື່ອມາໃກ້ນະຄອນ
ມົດສະກູ ເຮືອບິນເຫລົ່ານັ້ນ ກໍໄດ້ພົບກັບການຍິງປ້ອງກັນຢ່າງ
ໜາແໜ້ນ ແລະມີແຕ່ສອງສາມລຳເທົ່ານັ້ນ ທີ່ສາມາດ ເລັດ

ລອບເຂົ້າມາຖິ້ມລະເບີດໃສ່ນະຄອນມົດສະກູໄດ້ຢ່າງສຳເລັດ. ພວກນັກບິນໂຊວຽດ ກໍໄດ້ປ້ອງກັນນະຄອນມົດສະກູໄວ້ ຢ່າງບໍ່ໄດ້ເຫັນແກ່ຕົວ. ນີ້ແມ່ນຕົວຢ່າງອັນໜຶ່ງ ຂອງວິລະກຳ ຂອງພວກເຂົາ. ຄືນໜຶ່ງນັກບິນໂຊວຽດ ຊື່ ວິກໂຕລະ ຕາລາລິຄິນ ເວລາບິນຢູ່ດ້ວຍຄວາມສູງເຖິງ ໔,໘໐໐ ແມດນັ້ນ ກໍໄດ້ສັງເກດເຫັນເຮືອບິນຖິ້ມລະເບີດຂອງສັດຕູ ໄດ້ບິນມຸ່ງໜ້າໃສ່ເມືອງມົດສະກູ. ທັນໃດນັ້ນ ຕາລາລິຄິນ ກໍໄດ້ຕໍ່ສູ້ເຮືອບິນຖິ້ມລະເບີດຂອງຟາຊິດໄວ້. ເຂົາໄດ້ຕໍ່ສູ້ຢ່າງກ້າຫານເພື່ອສະກັດກັ້ນບໍ່ໃຫ້ເຮືອບິນຂອງສັດຕູ ເຂົ້າໄປເຖິງມົດສະກູ. ເຂົາໄດ້ຍິງຈົນໝົດລູກປືນ. ເຂົາຈະຕ້ອງເຮັດສິ່ງໃດ ສິ່ງໜຶ່ງ, ບໍ່ດັ່ງນັ້ນພາຍໃນສອງສາມນາທີ້ ເຮືອບິນຟາຊິດກໍຈະບິນເຂົ້າເຖິງມົດສະກູແລະຖິ້ມລູກລະເບີດລົງໃສ່. ດັ່ງນັ້ນ ຕາລາລິຄິນ ຈຶ່ງໄດ້ເລັ່ງເຮືອບິນຂອງເຂົາຢ່າງສຸດຂີດ ແລະໄປຕຳເອົາຫາງເຮືອບິນຖິ້ມລະເບີດຂອງສັດຕູ ຂາດລົງແລະລູກລະເບີດ ກໍໄດ້ລະເບີດຂຶ້ນ ແລະຕົກລົງພື້ນດິນ ເຊິ່ງກໍນັບວ່າ ເປັນຄັ້ງທຳອິດໃນປະຫວັດການບິນທີ່ໄດ້ໃຊ້ເຮືອບິນຕ້ານເຮືອບິນຂອງຟາຊິດ ໃນການສູ້ຮົບກາງຄືນ.

ພວກນັກຮົບຂອງກອງທັບແດງ ແລະພວກທະຫານອາສາສະໝັກ ໄດ້ທຳການຕໍ່ສູ້ກັບພວກສັດຕູ ທຸກໆບາດກ້າວ ຂອງ ດິນແດນເຂດມົດສະກູຢ່າງໜຽວແໜ້ນທີ່ສຸດ. ພຽງແຕ່ຈາກວັນທີ ໑໔ ເຖິງ ວັນທີ ໓໐ ເດືອນ ຕຸລາ ຢູ່ໃນບັ້ນຮົບເຂດມົດສະກູນີ້ ທະຫານຮິດແລ ກໍໄດ້ສູນເສຍຈຳນວນພົນໄປຮອດ ໗ ໝື່ນ

ຄືນ. ພຸກວນັ້ ກອງທະຫານໃໝ່ໂຊວຽດຈາກ ຊິບີລີ,ອູລານ, ກາຊັກສະຕານ ແລະ ເຂດອື່ນໆໃນແນວຫລັງກໍໄດ້ມາເຖິງນະຄອນ ມົດສະກູ ເພື່ອ ຊ່ອຍເຫລືອ ພວກນັກປ້ອງກັນນະຄອນຫລວງ.

ວັນທີ ກ ເດືອນ ພະຈິກ ປີ ໑໙໔໑ ການສວນ ສະໜາມຂອງກອງທະຫານໂຊວຽດ ທີ່ໄດ້ດຳເນີນໄປເພື່ອສະຫລອງວັນຄົບຮອບ ໒໔ ປີ ຂອງມະຫາປະຕິວັດສັງຄົມນິຍົມ ເດືອນຕຸລານັ້ນ ໄດ້ຈັດຂຶ້ນທີ່ຈະຕຸລັດແດງໃນນະຄອນມົດສະກູ. ກອງ ທະຫານໄດ້ພາກັນຍ່າງຈາກສະໜາມທີ່ຈະຕຸລັດແດງນັ້ນ ກົງໄປຍັງສະໜາມລົບເລີຍ.

ເມື່ອໄດ້ເຮັດໃຫ້ກອງທະຫານຂອງສັດຕູ ອ່ອນເພຍລົງ ໃນການບຸກເຂົ້າໃກ້ນະຄອນມົດສະກູ ແລະໄດ້ຖອນ ກອງພົນໃໝ່ຈາກແນວຫລັງ ມາເພີ່ມໃຫ້ແກ່ແນວໜ້າແລ້ວ, ກອງ ບັນຊາການທະຫານໂຊວຽດ ກໍໄດ້ຕັດສິນໃຈທຳການບຸກໂຈມຕີ ທຳລາຍສັດຕູຢູ່ທີ່ເຂດມົດສະກູ ຢ່າງໜັກໜ່ວງ.

ວັນທີ ໖ ເດືອນທັນວາ ປີ ໑໙໔໑ ກອງທະຫານໂຊວຽດກໍໄດ້ເລີ່ມບຸກໂຈມຕີໜັກ ເຊິ່ງໄດ້ເຮັດໃຫ້ພວກທະຫານຮິດແລ ໄດ້ຖອຍຄືນໄປເຖິງ ໔໐໐ ກິໂລແມດ ໃນດ້ານຕາເວັນຕົກລິພວກເຂົາ ໄດ້ປະຊາກສົບນາຍແລະພົນທະຫານທີ່ຖືກຂ້າຕາຍນັບແສນສິບ.

ການປະຕິບັດການຂອງກອງທະຫານໂຊວຽດນີ້ ໄດ້ດຳເນີນ

ການເດີນສວນສະໜາມຢູ່ທີ່ຈະຕຸລັດແດງທີ່ນະຄອນ ມົດສະກູ ເມື່ອວັນທີ ໗ ເດືອນພະຈິກ ປີ ໑໙໔໑.

ໄປພາຍໃຕ້ການບັງຄັບບັນຊາຂອງນາຍພົນ ກີໂອລະກິຊູກອບ, ນາຍພົນກົນສະຕັນຕິນ ໂລກົດຊົບສະກີ, ນາຍພົນອີວານ ໂກເນບ, ນາຍພົນ ເລໂອນິດ ໂກໂວລົບ ແລະ ບັນດານາຍພົນໂຊວຽດທີ່ມີຄວາມສາມາດພິເສດອື່ນໆ. ການພັງທະລາຍຂອງກອງທະຫານຟາຊິດໃນເຂດມົດສະກູນັ້ນ ແມ່ນໄດ້ຖືກຈັດວາງຂຶ້ນ ໂດຍເສນາທິການໃຫຍ່ ຂອງກອງບັນຊາການທະຫານສູງສຸດທີ່ມີສະຕາລິນເປັນຫົວໜ້າ.

ຄັນໄດ້ປົດປ່ອຍເມືອງແລະບ້ານຕ່າງໆແລ້ວ ພວກທະຫານໂຊວຽດກໍໄດ້ເຫັນຮ່ອງຮອຍແບບທີ່ໜ້າຢ້ານກົວ ແລະການທຳລາຍ ເຊິ່ງໄດ້ກະທຳໄປໂດຍພວກຟາຊິດ ຄືເຫັນຊາກສົບຂອງແມ່ຍິງ, ເດັກນ້ອຍແລະຄົນເຖົ້າຫລາຍພັນສົບ. ເຮືອນຊານທີ່

ຖືກປຸ້ນແລະຈູດເຜົາຕ່າງໆ. ພວກປ່າເຖື່ອນຟາຊິດໄດ້ທຳລາຍປະຊາຊົນໂຊວຽດໄປ ກໍ່ຕໍ່ເມື່ອພວກເຂົາຮູ້ວ່າ ຜູ້ຄົນເຫລົ່ານັ້ນເປັນປະຊາຊົນໂຊວຽດ. ຄວາມຄຽດແຄ້ນແລະຄວາມຄຽດຊັງຕໍ່ສັດຕູ, ຄວາມຮັກຕໍ່ປິຕຸພູມຂອງຕົນຢ່າງເລິກເຊິ່ງນັ້ນໄດ້ເຮັດໃຫ້ທະຫານໂຊວຽດທຳການຕໍ່ສູ້ ດ້ວຍຄວາມກ້າຫານ ເປັນ ພິເສດ. ໄຊຊະນະໃນເຂດມົດສະກູນັ້ນໄດ້ເຮັດໃຫ້ທົ່ວໂລກເຫັນກຳລັງແຮງຂອງກອງທັບໂຊວຽດ. ແຜນການຂອງພວກຮິດແລໃນການເຮັດສົງຄາມແບບສາຍຟ້າແລບຕ້ານ ສ.ສ.ສ.ຊ. ນັ້ນໄດ້ຖືກພັງທະລາຍລົງແລ້ວ. ໄຊຊະນະຂອງການດຳເນີນ ສົງຄາມໃນເຂດມົດສະກູນັ້ນ ຖືວ່າເປັນບາດລ້ຽວທີ່ມີຄວາມໝາຍອັນສຳຄັນໃນປະຫວັດສາດທົ່ວໂລກ. ຄຳອວດອ້າງກ່ຽວກັບວ່າບໍ່ມີໃຜຈະສາມາດທັບມ້າງເຢຍລະມັນຟາຊິດໄດ້ນັ້ນ ໄດ້ຖືກພັດປິວຫນີໄປແລ້ວ. ປະຊາຊົນໂຊວຽດ ທີ່ມີກຳລັງໃຈຈາກໄຊຊະນະຂັ້ນນັ້ນ ກໍໄດ້ກຽມພ້ອມທີ່ຈະບຸກໂຈມຕີສັດຕູຢ່າງແຂງແຮງຫລາຍຍິ່ງຂຶ້ນອີກ.

ໃນໄລຍະເວລາສອງ-ສາມອາທິດທຳອິດນັ້ນ ພວກທະຫານຮິດແລໄດ້ພະຍາຍາມທີ່ຈະຍຶດເມືອງເລນິນກະລາດ - ອັນເປັນເມືອງທີ່ການປະຕິວັດ ເດືອນ ຕຸລາ ໄດ້ກຳເນີດ ເກີດຂຶ້ນ . ພວກເຂົາໄດ້ບຸກເຂົ້າໄປໃກ້ຕົວເມືອງ ແລະກໍໄດ້ປິດລ້ອມໄວ້. ທຸກໆມື້ ປືນໃຫຍ່ຂອງພວກເຂົາ ໄດ້ຍິງມາໃສ່ຕົວເມືອງ ແລະກໍໄດ້ເຮັດໃຫ້ເກີດໄຟໄຫມ້ໂຮງຮຽນ, ໂຮງຫມໍ, ແລະ ຢ້າວ

ເຮືອນ. ແຕ່ວ່າຄວາມອຶດຢາກ ເຊິ່ງເກີດຂຶ້ນ ຢູ່ໃນຕົວເມືອງ ນັ້ນ ຍິ່ງເຮັດໃຫ້ເປັນອັນຕະລາຍຫລາຍໄປກວ່າ ການຍິງ ຖະຫລົ່ມແລະການຖິ້ມລູກລະເບີດເສຍອີກ. ຮ້າຍແຮງກວ່ານັ້ນພວກທະຫານຮິດແລຍັງໄດ້ຖິ້ມລະເບີດໃສ່ສາງສະບຽງອາຫານອີກ. ການທີ່ຈະນຳສະບຽງອາຫານມາສູ່ເມືອງເລນິນກະລາດໄດ້ນັ້ນແມ່ນຫຍຸ້ງຍາກຫລາຍທີ່ສຸດ. ມີແຕ່ໃນລະດູໜາວ ເທົ່ານັ້ນມັນຈຶ່ງສາມາດສ້າງທົນທາງຊົ່ວຄາວຂ້າມທະເລສາບລາໂດກາໄປສູ່ເມືອງທີ່ຖືກປິດລ້ອມນັ້ນໄດ້. ໃນກາງຄືນຂະບວນລົດຂົນສົ່ງສະບຽງອາຫານທີ່ບໍ່ໄຕ້ໄຟ ໄດ້ແລ່ນຂ້າມທົນທາງນັ້ນ ໄປໃນທ່າມກາງຄວາມມືດ. ກອງທະຫານທີ່ສົ່ງໄປຊ່ອຍເຫລືອເມືອງ ເລນິນກະລາດກໍໄດ້ໄປ ໂດຍທາງສາຍນ້ດີກັນ. ເຮືອບິນສູ້ຮົບແລະກອງປືນຕໍ່ສູ້ອາກາສະຍານ ໂຊວຽດໄດ້ທຳໜ້າທີ່ປ້ອງກັນທາງສາຍນີ້ໄວ້. ເຖິງປານນັ້ນ ເຮືອບິນຟາຊິດກໍໄດ້ ມາຖິ້ມລູກລະເບີດໃສ່ທາງສາຍນີ້ຢ່າງໜັກ, ລູກລະເບີດບາງໜ່ວຍໄດ້ແຕກຂຶ້ນໃກ້ງລົດຂົນສົ່ງ ແລະກໍໄດ້ທຳລາຍລົດນັ້ນ ໄປພ້ອມ ທັງສະບຽງອາຫານ. ພວກຄົນຂັບລົດທີ່ນຳລົດໄປສູ່ເມືອງ ເລນິນກະລາດ ຖືກປິດລ້ອມຢູ່ນັ້ນໄດ້ ກໍໄດ້ກາຍເປັນວິລະຊົນທີ່ແທ້ຈິງໄປ. ຊາວເມືອງເລນິນກະລາດ ໄດ້ເອີ້ນສາຍທາງນ້ຳກ້ອນທີ່ເຊື່ອມໂຍງເມືອງນີ້ກັບດິນແດນໂຊວຽດ ສ່ວນໃຫຍ່ນັ້ນວ່າ "ສາຍທາງຊີວິດ". ປະຊາຊົນໂຊວຽດທັງໝົດ ໄດ້ພະຍາຍາມ ໃຫ້ ການຊ່ອຍເຫລືອແກ່ເມືອງເລນິນກະລາດ ຢ່າງສຸດຄວາມສາມາດ.

ເມືອງນີ້ໄດ້ຕົກຢູ່ໃນວົງປິດລ້ອມຂອງສັດຕູຢູ່ຮອດ ໗໐໐ ມື້.ເລ ນິນກະລາດໄດ້ສູ້ທົນຢູ່ຮອດ ໗໐໐ ມື້ ຢ່າງທົນທຸກທໍລະມານແຕ່ ກໍບໍ່ສາມາດຕີໃຫ້ແຕກໄດ້-ດັ່ງນັ້ນຈຶ່ງກາຍເປັນເມືອງ ວິລະຊົນ ຫຍິ່ງໃຫຍ່.

ລົມໄດ້ຮັບການປະລາໄຊ ຢູ່ໃນບັ້ນຮົບເຂດມົດສະກູ ແລ້ວ, ພວກທະຫານຮິດແລກໍໄດ້ຕັດສິນໃຈ ທີ່ຈະບຸກລຸກ ໄປສູ່ ແມ່ນໍ້າ ໂວນກາໃຫ້ໄດ້ ຢ່າງບໍ່ຄຳນຶງເຖິງວ່າ ຈະສູນເສຍໄປເທົ່າໃດ ເພື່ອຍຶດເອົາເຂດນໍ້າມັນທີ່ຮັ່ງມີ ຂອງສະຫະພາບໂຊວຽດແລະ ເພື່ອຕັດມົດສະກູໃຫ້ຂາດຈາກເຂດໃຕ້ຂອງປະເທດ.ດັ່ງນັ້ນບັ້ນ ຮົບທີ່ນອງເລືອດ ຈຶ່ງໄດ້ເກີດຂຶ້ນຢູ່ໃນເຂດເມືອງສະຕາລິນກະ ລາດ (ປະຈຸບັນເປັນໂວນໂກກະລາດ),ມີແຕ່ຍຶດເມືອງນີ້ ໃຫ້ ໄດ້ເທົ່ານັ້ນ, ພວກຟາຊິດ ຈຶ່ງສາມາດໄດ້ປະຕິບັດ ແຜນການ ຂອງຕົນໄດ້.ທະຫານຂອງພວກຮິດແລ ຫລາຍກວ່າ ໜຶ່ງລ້ານ ຄົນໄດ້ມຸ່ງໜ້າໄປສູ່ແມ່ນໍ້າໂວນກາ. ດ້ວຍການທຸ່ມເທ ກຳລັງ ໃສ່ຢ່າງໜັກ, ພວກສັດຕູຈຶ່ງສາມາດເຂົ້າໄປເຖິງຊານເມືອງ ໄດ້ແລະຍຶດໃຈກາງເມືອງໄດ້.ບັ້ນຮົບທີ່ດຸເດືອດໄດ້ດຳເນີນໄປ ຢູ່ໃນບໍລິເວນຂອງໂຮງງານສ້າງລົດຕະລັກເຕີ.ເຖິງວ່າຈະຕົກ ຢູ່ໃນສະພາບການທີ່ຫຍຸ້ງຍາກທີ່ສຸດກໍຕາມ,ຊາວກຳມະກອນໃນ ໂຮງງານນັ້ນ ກໍບໍ່ໄດ້ປະລະເຄື່ອງຈັກຂອງຕົນ - ພວກເຂົາໄດ້ ສ້ອມແປງລົດຖັງພາຍໃຕ້ການຍິງຖະຫລົ່ມຢ່າງໜັກ. ໃນ ລະ ຫວ່າງນີ້ ພວກນັກປ້ອງກັນຕົວເມືອງສະຕາລິນກະລາດໄດ້ຂຽນ

ຈິດໝາຍເຖິງປະຊາຊົນໂຊວຽດທັງໝົດ ເຊິ່ງມີ ເນື້ອຄວາມ ວ່າ "ພວກເຮົາໄດ້ຕັດສິນໃຈປ້ອງກັນເມືອງສະຕາລິນກະລາດ ດ້ວຍຊີວິດຂອງພວກເຮົາ ! ການຕໍ່ສູ້ເພື່ອເມືອງ ສະຕາລິນກະລາດ, ພວກເຮົາເຂົ້າໃຈວ່າ ມັນບໍ່ແມ່ນການຕໍ່ສູ້ສະເພາະແຕ່ເມືອງນີ້ເທົ່ານັ້ນ. ຢູ່ທີ່ເມືອງສະຕາລິນກະລາດພວກເຮົາພວມຕໍ່ສູ້ປ້ອງກັນປິຕຸພູມຂອງພວກເຮົາ, ຕໍ່ສູ້ປ້ອງກັນທຸກສິ່ງທຸກຢ່າງທີ່ມີຄຸນຄ່າແກ່ພວກເຮົາ, ທຸກສິ່ງທຸກຢ່າງ ທີ່ເຮັດໃຫ້ພວກເຮົາສາມາດດຳລົງຊີວິດຢູ່ໄດ້. ຢູ່ທີ່ນີ້, ທີ່ເມືອງສະຕາລິນກະລາດ ບັນຫາທີ່ວ່າ ປະຊາຊົນໂຊວຽດຈະຍັງຄົງມີອິດສະລະພາບ ຫລືບໍ່ນັ້ນ ແມ່ນໄດ້ຖືກຕັດສິນໄປແລ້ວ. ຄັນໄດ້ສົ່ງຈົດໝາຍນີ້ອອກຈາກຊຸມລຸມຄອງແລ້ວ,ພວກເຮົາກໍ່ຂໍສາບານຕົວວ່າ ພວກເຮົາຈະປ້ອງກັນເມືອງນີ້ໄວ້ຈົນຮອດເລືອດຢາດສຸດທ້າຍ, ຈົນຮອດລົມຫັນໃຈຄັ້ງສຸດທ້າຍ, ຈົນຮອດໝາກຫົວໃຈ ເຕັ້ນສຸດ ທ້າຍ ແລະວ່າພວກເຮົາຈະບໍ່ໃຫ້ສັດຕູເຂົ້າເຖິງແມ່ນ້ຳໂວນກາໄດ້".

ກອງທະຫານໂຊວຽດໄດ້ຮັກສາຄຳໝັ້ນສັນຍາ ຕາມທີ່ ພວກເຮົາໄດ້ໃຫ້ໄວ້ນັ້ນຢ່າງແທ້ຈິງ.

ຢູ່ທີ່ບ້ານ ໂບນຊາຢາ ລົດໂຊຊະກາ ໜ່ວຍປ້ອງກັນ ມີມີຄົນ ຈາກກອງພົນຂອງນາຍພົນ ອູຕະວວນໂກ ໄດ້ອັບໄລ່ລົດຖັງຂອງຟາຊິດ ກູ0 ຄັນອອກໄປ.ທະຫານເຮືອທີ່ບັງຄັບບັນຊາໂດຍນາຍທະຫານເຮືອ ອຸ ບາຕະລາກົບ ກໍໄດ້ທຳລາຍ ທະຫານສັດຕູຫລາຍກວ່າ ໑໔,000 ຄົນ ໃນລະຫວ່າງ ຝ ອາທິດ

ຂອງການຕໍ່ສູ້ກັນຢູ່ທີ່ເມືອງສະຕາລິນກະລາດ. ການຕໍ່ສູ້ກັນຢູ່ໃນຕົວເມືອງ ໄດ້ດຳເນີນໄປຢູ່ໃນທຸກໆຈຸ້ມເຮືອນ, ທຸກໆຖະໜົນ. ໜ່ວຍທະຫານນ້ອຍໆໜ່ວຍໜຶ່ງ ທີ່ບັງຄັບບັນຊາໂດຍນາຍສິບເອກ ປາວະລົບ ໄດ້ປ້ອງກັນຕຶກສີ່ຊັ້ນທີ່ເພພັງຫລັງໜຶ່ງ ຢູ່ໃນຖະໜົນສີ່ແຍກແຫ່ງໜຶ່ງຂອງເມືອງນັ້ນ ໄວ້ຮອດສອງເດືອນ. ຢູ່ໃນໝູ່ທະຫານຂອງ ປາວະລົບ ທີ່ປ້ອງກັນຕຶກ ຫລັງນັ້ນ ໄວ້ຢ່າງເຂັ້ມແຂງນັ້ນ ກໍມີກະລູເຊນໂກຊາວອູກະລາອີນາ, ໂປຊີ-ຢາບວິລີ ຊາວກະລູຊີນ, ຕູລະກູນົບ ຊາວອູຊະເບັກ, ມູລະຊາເຢັບ ຊາວກາຊັກ, ຕູລະດີເຢັບ ຊາວຕາດຊິກ, ລາມາຊານົບ ຊາວຕາຕາ ແລະອື່ນໆອີກ. ດີກັນກັບຢູ່ໃນ ພາກສ່ວນ ແນວໜ້າອື່ນໆ ບັນດາຕົວແທນຂອງຊົນຊາດຕ່າງໆແຫ່ງ ສ.ສ.ສ.ຊ. ກໍໄດ້ຕໍ່ສູ້ຄຽງບ່າຄຽງໄຫລ່ກັນຢູ່ໃນການປ້ອງກັນເມືອງສະຕາລິນກະລາດ.

ໃນໄລຍະເວລາອັນໜ່ວງນີ້ ກອງບັນຊາການຂອງກອງທັບໂຊວຽດໄດ້ຮ່າງແຜນການທັບມ້າງ ພວກຮຸກຮານ ຟາຊິດຂຶ້ນ. ແຜນການນັ້ນ ໄດ້ຕັດສິນໃຈບຸກໂຈມຕີ ຈາກທິດເໜືອແລະທິດໃຕ້ຢ່າງລຽນຕິດ ແລະປິດລ້ອມພວກຟາຊິດ ຢູ່ໃນເຂດ ຂອງເມືອງນັ້ນໄວ້, ຮັດແຄບພວກເຂົາເຂົ້າຢູ່ໃນວົງແຫວນ ແລະທຳລາຍພວກມັນ.

ໃນຕອນເຊົ້າໆຂອງວັນທີ ໑໙ ເດືອນພະຈິກປີ໑໙໔໒ ສຽງສະໜັ່ນຫວັ່ນໄຫວ ກໍໄດ້ດັງຂຶ້ນຢູ່ທົ່ງຫຍ້າ ໃນເຂດເມືອງສະ

ນີ້ສະແດງໃຫ້ເຫັນວ່າເມືອງ ສະຕາລິນກະລາດ ມີສະພາບ ເປັນ ແນວໃດພາຍຫລັງການສິ້ນສຸດບັ້ນຮົບສະຕາລິນກະລາດ

ຕາລິນກະລາດ. ລູກປືນໃຫ່ຍຫລາຍສິບພັນນັດ ກໍໄດ້ຍິງໄປໃສ່ ທີ່ຕັ້ງທະຫານຂອງພວກທະຫານຮິດເລີ. ໃນການຍິງຖາງທາງ ດ້ວຍປືນໃຫ່ຍນີ້ ກໍຍັງມີຊຸດຈະຫລວດ ເຂົ້າຮ່ວມນຳອີກ. ຊຸດຈະຫລວດນີ້ ເປັນອາວຸດໃຫມ່ ທີ່ສ້າງຂຶ້ນມາ ໂດຍນັກ ອອກແບບສ້າງໂຊວຽດ. ພາຍຫລັງ ປືນໃຫ່ຍ ໄດ້ຍິງຖາງທາງໃຫ້ແລ້ວ ລົດຖັງ ເຕ-໓໔ ກໍໄດ້ແລ່ນເຂົ້າສູ່ສະຫນາມຮົບ ເຊິ່ງຕິດຕາມ ມາດ້ວຍທະຫານລາບ. ຢູ່ໃນກຳມືຂອງທະຫານນັ້ນ ບໍ່ພຽງແຕ່ ມີປືນເຫລັກຍາວ, ແຕ່ຫາກຍັງມີປືນກົນຍິງໄວ ດ້ວຍອັດຕະໂນ ມັດ-ທີ່ເປັນຂອງຂວັນຈາກຊາວກຳມະກອນ ໃນແນວຫລັງ ໂຊ ວຽດອີກດ້ວຍ. ການໂຈມຕີຂອງກອງທະຫານລາບ ຍັງໄດ້ຮັບ ການສະຫນັບສະຫນູນຈາກເຮືອບິນຖິ້ມລະເບີດ, ເຮືອບິນໂຈມ

ຕີ ແລະເຮືອບິນຍັບໄຫລ່. ພວກນັກອອກແບບສ້າງເຮືອບິນໂຊ ວຽດ ເຊັ່ນ ເຊລະເກ ອິລູຊິນ, ເຊເມີນ ລາໂວຊະກິນ , ອາເລັກຊານດະລະ ຢາໂກວະເລັບ ແລະຄົນອື່ນໆອີກກໍໄດ້ຜະ ລິດເຮືອບິນສູ້ຮົບ ທີ່ຫນ້າໄວ້ໃຈອອກມາ. ກອງທະຫານໂຊວຽດ ໄດ້ບຸກຄືບຫນ້າຈາກທິດເຫນືອແລະທິດໃຕ້ມາພົບກັນແລະໄດ້ພະ ຍາຍາມປິດລ້ອມກອງທັບຂອງສັດຕູໄວ້.

ບັນຮົບຄັ້ງຍິ່ງໃຫຍ່ຢູ່ທີ່ແມ່ນ້ຳໂວນກາ ໄດ້ດຳເນີນໄປ ຕະ ຫລອດມື້ຕະຫລອດຄືນ. ກອງລົດຖັງໂຊວຽດໄດ້ເຄື່ອນໄປໂດຍ ຜ່ານຫລຸມເລິກ ແລະຂຸມຕ້ານລົດຖັງ, ໄດ້ທຳລາຍ ຮົ້ວຫນາມ ຫນາກຈັບແລະຢຽບທຳລາຍປືນແລະປືນກົນຂອງສັດຕູແລະຈາກ ການຕໍ່ສູ້ກັນດັ່ງນັ້ນ ພວກເຂົາກໍໄດ້ບຸກຄືບຫນ້າໄປເລື້ອຍໆ. ໃນ ບໍ່ຊ້າພາກສ່ວນທີ່ບຸກໂຈມຕີ ມາຈາກທິດເຫນືອແລະທິດໃຕ້ກໍມາ ພົບພໍ້ກັນ ແລະທ້າຍທີ່ສຸດກອງທະຫານຂອງສັດຕູ ທີ່ມີ ຈຳນວນ ຫລວງຫລາຍຮອດ ນ້ ແສນຄົນນັ້ນ ກໍໄດ້ຖືກປິດລ້ອມໄວ້. ກອງ ບັນຊາການທະຫານໂຊວຽດ ໄດ້ສະເຫນີໃຫ້ທະຫານຮິດແລ ທີ່ ຖືກປິດລ້ອມໄວ້ນັ້ນ ຍອມຈຳນົນ ແຕ່ພວກນາຍພົນ ຂອງຟາຊິດ ກໍໄດ້ປະຕິເສດຂໍ້ສະເຫນີ ແບບມີມະນຸດສະທຳນີ້. ເມື່ອເປັນດັ່ງ ນັ້ນ ກຸ່ມທະຫານຟາຊິດ ທີ່ຖືກປິດລ້ອມຢູ່ໃນວົງແຫວນນັ້ນ ກໍໄດ້ ຖືກທຳລາຍໄປ. ສ່ວນພວກທີ່ເຫລືອຢູ່ ເຊິ່ງມີຈອມພົນປາອູລູດ ເປັນຫົວຫນ້ານັ້ນ ກໍໄດ້ຖືກຈັບເປັນຊະເລີຍເສິກ.

ໂຊຊະນະຢູ່ທີ່ສະຕາລິນກະລາດນັ້ນ ໄດ້ເຮັດໃຫ້ພວກນັກຮົບ

ທັງຫມົດມີກຳລັງແຮງໃຫມ່ ຕ້ານພວກຟາຊິດ. ຊາວກຳມະກອນ ແລະຊາວນາ ໃນຢູໂກສະລາວີ, ຟະລັ່ງ, ໂປໂລຍແລະ ປະເທດອື່ນໆທີ່ຖືກພວກທະຫານຮິດແລປາບປາມນັ້ນ ໄດ້ເຮັດ ສົງຄາມແບບກອງຫລອນ ຕ້ານພວກຮຸກຮານຢ່າງເຂັ້ມແຂງ. ລົມໄດ້ເຫັນແຈ້ງ ໃນຄວາມເຂັ້ມແຂງ ທາງດ້ານອາວຸດ ຂອງໂຊວຽດແລ້ວ ພວກລັດທະບານ ຕູລະກີແລະຍີ່ປຸ່ນ ກໍບໍ່ກ້າຕັດສິນໃຈທຳການຕ້ານ ສ.ສ.ສ.ຊ. ເຖິງວ່າພວກເຂົາຈະໄດ້ມີແຜນການເຮັດຊັ່ນນັ້ນກໍຕາມ ໃນເວລາສົງຄາມລະເບີດຂຶ້ນ. ຂັ້ນຮົບຄັ້ງຍິ່ງໃຫຍ່ໃນແມ່ນ້ຳໂວນການັ້ນ ໄດ້ເຮັດໃຫ້ ເກີດ ມີການຫັນປ່ຽນໃນແນວທາງຂອງມະຫາສົງຄາມປ້ອງກັນ ປິຕຸພູມຂອງປະຊາຊົນໂຊວຽດ ກໍຄືໃນແນວທາງຂອງສົງຄາມໂລກຄັ້ງທີສອງທົ່ວໄປ. ຕັ້ງແຕ່ນັ້ນມາ ການຂັບໄລ່ສັດຕູ ອອກຈາກດິນແດນສະຫະພາບໂຊວຽດຢ່າງຂະຫນາດໃຫຍ່ ກໍໄດ້ເລີ່ມຕົ້ນຂຶ້ນແລ້ວ. ໃນລະດູຫນາວ ປີ ໑໙໔໒-໑໙໔໓ ກອງທັບ ໂຊວຽດກໍໄດ້ຂັບໄລ່ພວກຮຸກຮານ ອອກຈາກດິນແດນພູກາວະກາດພາກເຫນືອ, ເຂດຕ່າງໆ ເຊັ່ນ ໂວໂລເນັດ, ສະຕາລິນກະລາດ, ລົດສະຕົບ, ກູລະສະກະ, ຊະໂມເລນສະກະ, ໂອລະລົບແລະ

ກໍໄດ້ບຸກຄືບຫນ້າໄປ ທາງດ້ານທິດຕາເວັນຕົກຈາກ໕໐໐ເຖິງ ໑໓໐໐ ກິໂລແມດ. ພ້ອມດຽວກັນນັ້ນ ການປິດລ້ອມເລນິນກະລາດກໍໄດ້ຖືກທັບມ້າງໄປ.

ໃນລະດູຮ້ອນປີ ໑໙໔໓ ກອງບັນຊາການທະຫານ ຮິດແລ

ໄດ້ພະຍາຍາມທີ່ຈະເປີດບັ້ນໂຈມຕີໃສ່ເຂດກູລະສະກະ.ພວກ ຟາຊິດໄດ້ໜຸ່ມເທທະຫານໃສ່ເຖິງ ໔ ແສນຄົນ,ລົດຖັງ ແລະ ເຮືອບິນຫລາຍພັນລຳ ຕ້ານການປ້ອງກັນ ຂອງທະຫານ ໂຊວຽດ. ກອງທະຫານໂຊວຽດພາຍໃຕ້ການບັງຄັບບັນຊາຂອງ ບັນດານາຍພົນທີ່ມີຊື່ສຽງ ເຊັ່ນ ນາຍພົນ ນິໂກລາຍ ວາຕູ-ຕິນ, ນາຍພົນອີວານ ໂກເນັບ, ນາຍພົນ ກົນສະຕານຕິນ ໂລກົດຊົບສະກີ, ນາຍພົນ ວາຊິນລີ ໂຊໂກລົບສະກີ, ນາຍພົນ ມາລະກິເຊນ ໂປປົບ ແລະນາຍພົນອື່ນໆ ກໍໄດ້ທັບມ້າງສັດຕູ ພາຍຫລັງທີ່ໄດ້ສູ້ຣົບກັນມາຢ່າງໜັກ ເປັນເວລາໜຶ່ງເດືອນ ແລະກໍໄດ້ທຳລາຍແນວປ້ອງກັນຂອງເຂົາແລະໄດ້ປົດປ່ອຍເມືອງ ໂອເລນ ແລະ ເບນໂກລົດ.ເມື່ອດຳເນີນການບຸກໂຈມຕີຕໍ່ໄປນັ້ນ, ໃນລະດູຮ້ອນ ແລະ ລະດູໃບໄມ້ຫລົ່ນປີ ໑໙໔໓ ກອງທະຫານໂຊວຽດ ກໍໄດ້ປົດປ່ອຍປະຊາຊົນ ອອກຈາກລ້າຍກັກຂັງເຖິງ ໓໘,໐໐໐ ແຫ່ງໂຮມທັງເມືອງ ໑໖໒ ເມືອງ. ນາຍແລະພົນທະຫານໂຊວຽດ ໄດ້ກາຍ ເປັນຜູ້ ມີຄວາມຊຳນານໃນວິຊາການສູ້ຣົບ ແລະໄດ້ມີຄວາມຮອບຮູ້ໃນການໃຊ້ແລະຕິດຕັ້ງອາວຸດທັນສະໄໝ ເຊິ່ງພວກເຂົາໄດ້ຮັບມາຈາກໂຮງງານ ໃນແນວຫລັງຂອງປະເທດໂດຍກົງ.

ພວກທະຫານຂອງກອງທັບໂຊວຽດ ໄດ້ສະແດງຄວາມ ກ້າຫານເປັນພິເສດ ໃນການບຸກໂຈມຕີເຫລົ່ານັ້ນ.ຕົວຢ່າງອັນໜຶ່ງກໍຄືພົນທະຫານອາເລັກຊານດະລະ ມາຕະໂລຊົບ ໄດ້ສ້າງ ວິ

ລະກຳແບບອະມະຕະໄວ້. ຢູ່ໃກ້ບ້ານ ເຊລະນູສະກີ ສັດຕູໄດ້ ພະຍາຍາມທີ່ຈະສະກັດກັ້ນ ການບຸກຄືບໜ້າຂອງທະຫານ ໂຊວຽດໄວ້. ມາຕະໂລຊົບ, ຊາວໜຸ່ມກົມໂຊໂມນ, ໄດ້ ໂດດເຂົ້າໄປໃນສູ່ຖານທີ່ໝັ້ນຂອງສັດຕູ ແລະໄດ້ເອົາ ຮ່າງກາຍຂອງເຂົາອັດປາກກະບອກປືນ ຂອງສັດຕູນັ້ນໄວ້. ວິລະຊົນໄດ້ເສຍສະລະຊີວິດໄປ, ແຕ່ເຂົາກໍໄດ້ເຮັດໃຫ້ພັກພວກຂອງເຂົາບຸກຄືບໜ້າໄປໄດ້ ແລະຊ່ອຍຊີວິດ ຂອງບັນດາເພື່ອນສະຫາຍຂອງເຂົາໄວ້. ຢູ່ໃນພາກສ່ວນແນວຮົບອື່ນໆ ວິລະກຳ ຂອງອາ. ມາຕະໂລຊົບນັ້ນ ກໍໄດ້ຖືເອົາເປັນແບບຢ່າງຂອງ ຊູ.ອາເວຕີຊຽນຊາວອາລະເມເນຍ, ຕ.ເອລະດະຊີກີຕົບ ຊາວ ຊູຊະເບັກ, ສ.ບາຍມາການເບຕົບ ຊາວກາຊັກ, ອາ.ເຊວະເຊນໂກ ຊາວຊູກະລາອີນາ, ກ.ກູນາວິນ ແລະອາ.ຊູໂດຄົບຊາວລັດເຊຍ. ຄຳຂວັນຂອງທະຫານໂຊວຽດທຸກຄົນຕັ້ງແຕ່ພົນທະຫານເຖິງຈອມພົນ ແມ່ນມີວ່າ "ບຸກຕໍ່ໄປ ທາງດ້ານທິດຕາເວັນຕົກ !" ການບຸກໂຈມຕີຂອງກອງທັບໂຊວຽດ ຢູ່ໃນແນວຮົບທຸກດ້ານນັ້ນ ແມ່ນໄດ້ຮັບການຊ່ອຍເຫລືອ ຈາກກອງຫລອນຢ່າງເຂັ້ມແຂງ. ພາຍໃນຫ້າມື້ເທົ່ານັ້ນ ຄືຈາກວັນທີ ໑໙ ເຖິງ ໒໔ ກໍລະກົດ ປີ ໑໙໔໓, ກອງຫລອນ, ພາຍໃຕ້ການບັງຄັບບັນຊາຂອງ ສ.ອາ.ໂກວະປາກ ຢູ່ໃນແນວຫລັງຂອງສັດຕູ ກໍໄດ້ທຳລາຍສະຖານີລົດໄຟ ໑໔ ແຫ່ງ, ຖັງນ້ຳມັນ ໔໑ ຖັງ, ສາງນ້ຳມັນ ໑໓ ແຫ່ງ, ໂຮງງານກັ່ນນ້ຳມັນ ໓ ແຫ່ງ,ນາຍ

ແລະພິນທະຫານຂອງສັດຕູ ຫລາຍພັນຄົນ. ຄົນໄດ້ລ່າຖອຍໄປ ຍ້ອນການໂຈມຕີຂອງກອງທະຫານໂຊວຽດນັ້ນ, ໃນປີ ໑໙໔໓ ພວກທະຫານຮິດແລໄດ້ສູນເສຍຈຳນວນພົນໄປ ທັງຕາຍ,ບາດ ເຈັບແລະຖືກຈັບເປັນຊະເລີຍເສິກ ແມ່ນມີຮອດ ໔ ລ້ານຄົນ, ເຮືອບິນຫລາຍກວ່າ ໑໔,໐໐໐ ລຳ, ລົດຖັງ ຫລາຍ ກວ່າ ໒໔,໐໐໐ ຄັນ ແລະ ປືນໃຫຍ່ ໔໐,໐໐໐ ກະບອກ.

ກອງບັນຊາການຂອງກອງທັບໂຊວຽດ ໄດ້ເຮັດທຸກສິ່ງ ທຸກ ຢ່າງເພື່ອເຮັດໃຫ້ການບຸກໂຈມຕີ ໄດ້ຂະຫຍາຍຕົວໄປ ຢ່າງ ວ່ອງໄວ, ບໍ່ໃຫ້ພວກທະຫານຮິດແລ ໄດ້ມີເວລາປັບປຸງກຳລັງ ແລະກັບຄືນມາຕ້ານທານຢ່າງໝັ້ນທນຽວໄດ້. ລົດໄຟທີ່ບັນທຸກ ລົດຖັງ, ປືນແລະລູກປືນນັ້ນ ໄດ້ສັບຈອນໄປມາຫມົດມື້ຫມົດຄືນ ໂດຍມຸ່ງຫນ້າໄປສູ່ແນວຫນ້າອັນຍາວຢຽດ ເຊິ່ງຢູ່ທາງດ້ານທິດ ຕາເວັນຕົກ. ການບຸກໂຈມຕີຂອງກອງທະຫານໂຊວຽດໄດ້ຄືບ ຫນ້າໄປໃນທຸກດ້ານຂອງແນວຫນ້າ. ໃນເດືອນ ມັງກອນ ປີ ໑໙໔໔ ສັດຕູໄດ້ຖືກຂັບໄລ່ອອກໄປຈາກເຂດເລນິນກະລາດ , ໃນລະດູໃບໄມ້ປົ່ງ ດິນແດນອູກະລາອີນາທັງຫມົດໃນທາງດ້ານ ທິດຕາເວັນຕົກຂອງແມ່ນ້ຳ ດະເນັບແລະແຫລມກະລີມກໍໄດ້ຮັບ ການປົດປ່ອຍ, ໃນລະດູຮ້ອນສັດຕູໄດ້ຖືກຂັບໄລ່ ໃຫ້ອອກ ໄປ ຈາກເບໂລລູດເຊຍ ແລະ ໂມນດາເວຍ,ໃນລະດູໃບໄມ້ຫລົ່ນ ເອສະໂຕເນຍ, ລັດວາ ແລະພາກສ່ວນໃຫຍ່ຂອງດິນແດນລັດ ເວຍກໍໄດ້ຮັບການປົດປ່ອຍ. ຍ້ອນພົນຂອງການບຸກໂຈມຕີຢ່າງ

ມີຜົນສຳເລັດນັ້ນ ດິນແດນໂຊວຽດທັງໝົດ ຈຶ່ງໄດ້ຮັບການປົດປ່ອຍອອກຈາກພວກຮຸກຮານຟາຊິດ ທີ່ໜ້າກຽດຊັງໃນປີ໑໙໔໔. ຢູ່ບົນເສັ້ນທາງທີ່ທະຫານໂຊວຽດບຸກໂຈມຕີໄປນັ້ນ ພວກເຂົາກໍໄດ້ພົບພໍ້ຮູບພາບທີ່ໜ້າສະຫຍົດສະຫຍອງຂອງຄວາມເສຍຫາຍຫລາຍຢ່າງ. ໃນບ່ອນໃດທີ່ພວກຟາຊິດໄດ້ຢຽບຕີນລົງບ່ອນນັ້ນຈະບໍ່ມີຫຍັງເຫລືອໄວ້ ນອກຈາກຂີ້ເທົ່າ ແລະຊາກເພພັງເທົ່ານັ້ນ. ປະຊາຊົນໂຊວຽດຫລາຍແສນຄົນ ທີ່ຢູ່ໃນດິນແດນທີ່ສັດຕູໄດ້ຍຶດຄອງນັ້ນ ໄດ້ຖືກທໍລະມານ ຈົນຕາຍຫລືວ່າຖືກ ໄລ່ຕ້ອນຄືງົວຄວາຍໄປເຮັດວຽກໜັກໃຫ້ແກ່ພວກຟາຊິດ ຢູ່ໃນເຢຍລະມັນ.

ມັນມີຄວາມຈຳເປັນທີ່ສຸດ ທີ່ຈະຕ້ອງຟື້ນຟູເສດຖະກິດຂຶ້ນໃນເຂດທີ່ຖືກປົດປ່ອຍ ໃຫ້ໄວເທົ່າທີ່ຈະໄວໄດ້. ສັດຕູຍັງມີຄວາມເຂັ້ມແຂງຢູ່, ເຂົາຍັງຕໍ່ສູ້ຢູ່ຢ່າງດຸເດືອດ.ມັນມີຄວາມຈຳເປັນທີ່ຈະຕ້ອງຊ່ອຍປະຊາຊົນ ຢູ່ໃນເຂດທີ່ຖືກປົດປ່ອຍ ໃຫ້ລຳລຽງວັດຖຸອຸປະກອນໄປສູ່ແນວໜ້າ ຢ່າງບໍ່ຕ້ອງຊັກຊ້າ.ຊາວກຳມະກອນໂຮງງານຜະລິດອາວຸດ ໄດ້ຜະລິດອຸປະກອນປູກຝັງ, ໄຖແລະລົດຕະລັກເຕີ ໃຫ້ແກ່ສະຫະກອນກະເສດ ໃນເຂດ ທີ່ໄດ້ຮັບການປົດປ່ອຍ ພາຍຫລັງໂມງເລີກການແລ້ວ. ຊາວຜູ້ອອກແຮງງານແຫ່ງອຸຊະເບັກກິສະຕານ ໄດ້ສົ່ງເຂົ້າປູກ໙ແສນໂຕນແລະສັດລ້ຽງຫລາຍກວ່າ ໘ ພັນໂຕ ໄປໃຫ້ອູກະລາອີນາທີ່ຖືກສັດຕູທຳລາຍ. ເຄື່ອງຈັກສຳລັບການກະເສດຫລາຍພັນເຄື່ອງ

ແລະສັດລ້ຽງຫລາຍພັນໂຕ ກໍໄດ້ສົ່ງຈາກແຂວງກູບີເຊັບໄປຍັງແຂວງສະໂມເລນສະກະ.ຕູ້ລົດໄຟ ໆ໕ ຕູ້ພ້ອມທັງອຸປະກອນ, ວັດຖຸປະກອນກໍ່ສ້າງແລະອຸດສາຫະກຳຕ່າງໆ ກໍໄດ້ ສົ່ງ ຈາກແຂວງໂກລະກີໄປຍັງແຂວງກາລີນິນ ເຊັ່ນດຽວກັນ- ຂະບວນການຊ່ວຍເຫລືອເຂດທີ່ຖືກປົດປ່ອຍ ກໍໄດ້ແຜ່ຂະຫຍາຍອອກໄປທົ່ວປະເທດ. ຄືກັນກັບຢູ່ໃນຄອບຄົວ ທີ່ມີຄວາມກົມກຽວກັນທີ່ດີນັ້ນ, ປະຊາຊົນໂຊວຽດ ກໍໄດ້ເລີ່ມຟື້ນຟູເສດຖະກິດ ທີ່ຖືກທຳລາຍຈາກພວກທະຫານຮິດແລຮ່ວມກັນ.

ເມື່ອໄດ້ຂັບໄລ່ສັດຕູ ອອກຈາກດິນແດນ ສ.ສ.ສ.ຊ. ໄປແລ້ວ, ກອງທັບໂຊວຽດກໍໄດ້ດຳເນີນຕິດຕາມພວກຟາຊິດຕໍ່ໄປແລະກໍໄດ້ປົດປ່ອຍ ບັນດາປະເທດເອີລົບຕາເວັນອອກ ອອກຈາກພວກຮຸກຮານ. ພົນລະເມືອງຂອງໂປໂລຍ,ບູນກາລີ,ຢູ-ໂກສະລາວີ, ເຊັກໂກສະໂລວາກີ, ຮຸ່ງກາລີແລະລູມານີກໍໄດ້ຊ່ອຍກອງທະຫານໂຊວຽດ ຕໍ່ສູ້ຕ້ານພວກຮຸກຮານແລະລູກແຫ້ງຕີນມືຂອງພວກມັນ. ການຕໍ່ສູ້ຮ່ວມກັນກັບສັດຕູຕົວດຽວກັນ ໄດ້ເຮັດໃຫ້ມິດຕະພາບຂອງປະເທດເຫລົ່ານັ້ນກັບປະຊາຊົນໂຊວຽດມີຄວາມເຂັ້ມແຂງແລະເຕີບໃຫ່ຍຂະຫຍາຍຕົວຂຶ້ນ. ປະຊາຊົນຊາວຜູ້ອອກແຮງຂອງບັນດາປະເທດເອີລົບ ຕາເວັນອອກ ໄດ້ເຫັນຕົວຢ່າງຂອງ ສ.ສ.ສ.ຊ. ວ່າປະເທດທີ່ຖືກ ປົກຄອງໂດຍຊາວກຳມະກອນແລະຊາວນາ ໄດ້ທົນທຸກ ຕໍ່ການຕໍ່ສູ້ຢ່າງໜັກໜ່ວງ ແລະກໍໄດ້ໄຊຊະນະ.ພວກເຂົາ ໄດ້ເລີ່ມເຂົ້າໃຈຫລາຍຍິ່ງຂຶ້ນວ່າ ການຕໍ່ສູ້ທີ່ແທ້ຈິງ ເພື່ອຄວາມ ເປັນ ເອກະ

ລາດແຫ່ງຊາດ ຈະສາມາດມີໄດ້ນັ້ນ ກໍ່ຕໍ່ເມື່ອຜູ້ດິນທັງຫລາຍຢູ່ພາຍໃນປະເທດ ໄດ້ຮັບການປົດປ່ອຍ ອອກຈາກການກົດຂີ່ຂູດຮີດເທົ່ານັ້ນ. ຊາວກຳມະກອນແລະຊາວນາໃນບັນດາປະເທດທີ່ໄດ້ຮັບການປົດປ່ອຍໂດຍກອງທັບໂຊວຽດນັ້ນກໍໄດ້ພາກັນເລີ້ມຈັດຕັ້ງລະບອບປະຊາທິປະໄຕໃຫມ່ຂຶ້ນ.

ດ້ວຍການດຳເນີນການບຸກໂຈມຕີຕໍ່ໄປນັ້ນ, ກອງທັບໂຊວຽດກໍໄດ້ບຸກເຂົ້າສູ່ດິນແດນຂອງເຢຍລະມັນຟາຊິດ. ໃນລະດູຮ້ອນປີ ໑໙໔໔ ກອງທະຫານພັນທະມິດ ຄື ສ.ລ.ອ. ແລະອັງກິດກໍໄດ້ຍົກພົນທະຫານຂຶ້ນສູ່ພາກເຫນືອຝະລັ່ງ. ກອງທະຫານຂອງອາເມລິກາ, ອັງກິດແລະຝະລັ່ງ ກໍໄດ້ເລີ້ມບຸກເຂົ້າສູ່ເຢຍລະມັນ ຈາກດ້ານທິດຕາເວັນຕົກ. ພວກເຂົາໄດ້ພະເຊີນຫນ້າກັບກອງທະຫານຮິດແລ ມີແຕ່ຈຳນວນ ໔໐ ກອງພົນເທົ່ານັ້ນ. ໃນເວລາດຽວກັນນັ້ນ ກອງທະຫານສັດຕູ ເຊິ່ງມີຈຳນວນພົນ ຢູ່ຮອດ ໒໐໐ ກອງພົນ ກໍໄດ້ຕໍ່ສູ້ຕ້ານກອງທັບ ໂຊວຽດ ຢ່າງຫນຽວແຫນ້ນ.

ລັນຕົກມາຮອດລະດູໃບໄມ້ປົ່ງ ປີ ໑໙໔໕, ກອງເສນາທິການໃຫຍ່ແຫ່ງກອງທັບໂຊວຽດ ກໍໄດ້ຮ່າງແຜນການ ເພື່ອທັບມ້າງສັດຕູຄັ້ງສຸດທ້າຍຂຶ້ນ. ປືນໃຫຍ່ ແລະຝູງລົດຖັງ ກໍໄດ້ຮັບການສ້າງຂຶ້ນ, ເວລາກາງຄືນ, ໃນຊົ່ວໂມງ ທີ່ນັດຫມາຍກັນໄວ້ນັ້ນ, ດິນແດນຕ່າງໄດ້ສະຫນັ່ນຫວັ່ນໄຫວ ໄປດ້ວຍສຽງປືນໃຫຍ່ຫມື່ນກຳລັງແຮງຕ້ານຟາຊິດເປັນບັ້ນສຸດທ້າຍ ຂອງສົງຄາມ. ພູກຈູຫລັກກິໂລແມດ ຂອງຖານທີ່ຫມັ້ນ ທະຫານຮິດແລ ໄດ້ຖືກ

ຍິງຈາກປືນໃຫຍ່ຫລາຍຮ້ອຍລູກ ໃນເວລາດຽວກັນ. ເລົາປືນໄດ້ຮ້ອນແດງປານໄຟ ເນື່ອງຈາກການຍິງບໍ່ມີເວລາເຊົາ ຈັກເທື່ອ. ປືນໃຫຍ່ໄດ້ຍິງຖາງທາງໃຫ້ແກ່ກອງທະຫານລາບແລະຝູງລົດຖັງ.ການບຸກໂຈມຕີຂັ້ນເດັດຂາດນີ້ໄດ້ດຳເນີນໄປ ພາຍໃຕ້ການບັງຄັບບັນຊາຂອງຈອມພົນ ກ.ກ. ຊຸກອບ, ອີ. ສ. ໂກເນັບ, ແລະ ກ.ກ. ໂລກົດຊົບສະກີ.ສ່ວນກອງທັບນັ້ນໄດ້ນຳພາໂດຍນາຍພົນ ວາຊີລີ ຊຸຍກອບ, ນາຍພົນດີມີຕະລີ ເລລູເຊນໂກ, ນາຍພົນ ປາເວນ ລີບານໂກ, ນາຍພົນ ວາຊີລີ ກູຊະເນຊອບ ແລະທະຫານທີ່ເກັ່ງກ້າຄົນອື່ນໆອີກ. ຄັນໄດ້ທຳລາຍການປ້ອງກັນຂອງຟາຊິດລົງແລ້ວ, ກອງທະຫານໂຊວຽດກໍໄດ້ບຸກຄືບໜ້າເຂົ້າສູ່ນະຄອນແບັກແລັງ.ພໍເຖິງຕອນເຊົ້າມາ, ທະຫານລົດຖັງໂຊວຽດ ໄດ້ເຫັນປ້າຍບອກ ການເດີນທາງວ່າ "ອີກ ໓໕ ກິໂລແມດ ເຖິງແບັກແລັງ.ໃນຕອນທ່ຽງກໍໄດ້ເຫັນວ່າ "ຍັງເຫລືອອີກ ໔໐".ຄັນແລ້ວຕໍ່ໄປກໍຍັງເຫລືອ ໒໕,໒໐, ໑໕ ກິໂລແມດເທົ່ານັ້ນ.ໃນທັນໃດນັ້ນກອງລົດຖັງກໍໄດ້ລ້ຽວໄປສູ່ທິດໃຕ້. ພວກທະຫານໄດ້ພາກັນສົງໄສວ່າ "ມັນເປັນໄປໄດ້ບໍ່ທີ່ພວກເຮົາຈະຜ່ານນະຄອນແບັກແລັງໄປ ?". ແຕ່ອັນນີ້ມັນເປັນພຽງຍຸດທະສາດເທົ່ານັ້ນ. ມັນມີຄວາມຈຳເປັນທີ່ຈະຕ້ອງໂຈມຕີເມືອງ ເຊິ່ງສັດຕູໄດ້ຄາດຫວັງໄວ້ນ້ອຍ ທີ່ທະຫານ ໂຊວຽດຈະໄປປາກົດຕົວຂຶ້ນທີ່ນັ້ນ.

ມັນເປັນຄ່ຳຄືນທີ່ມີຄວາມມືດທີ່ສຸດ, ກອງລົດຖັງ ໄດ້ເລື່ອນເຄື່ອນອອກໄປ ທັງຍິງປືນໄປພ້ອມ.ຍຸດທະສາດທີ່ໄດ້ຄິດໄວ້ນັ້ນ

ໄດ້ກົງກັບເປົ້າໝາຍແທ້. ຄັນໄດ້ທຳລາຍຖານທີ່ໝັ້ນຂອງສັດຕູແລ້ວ ກອງລົດຖັງພ້ອມດ້ວຍທະຫານລາບ ກໍໄດ້ບຸກເວົ້າສູ່ນະຄອນແບັກແລັງ. ໃນເວລາດຽວກັນນັ້ນ ພາກສ່ວນຂອງ ທະຫານໂຊວຽດອື່ນໆ ກໍໄດ້ບຸກໂຈມຕີເມືອງຕ່າງໆ. ໃນທັນໃດນັ້ນ ໄຟສາຍທີ່ມີກຳລັງແຮງຫລາຍຮ້ອຍໜ່ວຍ ກໍໄດ້ຮຸ່ງຂຶ້ນ ໄປທົ່ວແນວຮົບອັນກວ້າງໃຫຍ່ ແລະແສງໄຟກໍໄດ້ແຫຍ່ ເຂົ້າໃສ່ຕາຂອງພວກຟາຊິດ. ຜູ້ບັນຊາການໃນກອງພົນໜຶ່ງຂອງພວກທະຫານຮິດແລ ໄດ້ລາຍງານທາງໂທລະສັບ ໄປຍັງນະຄອນແບັກແລັງວ່າ: "ພວກລັດເຊຍໄດ້ຍິງຄືບໜ້າເຂົ້າມາ ຢ່າງ ເອົາເປັນເອົາຕາຍ. ການຕິດຕໍ່ກັນກັບກອງທະຫານອື່ນໆຂອງພວກເຮົາໄດ້ຖືກຕັດຂາດໄປແລ້ວ. ຢູ່ໃນຫລາຍໆພາກສ່ວນໄດ້ມີແສງໄຟອັນຮຸ່ງແຈ້ງປາກົດຂຶ້ນ. ແສງໄຟຕັ້ງໝື່ນຕັ້ງແສນໜ່ວຍໄດ້ແຫຍ່ເຂົ້າໄປ ເຂົ້າໄປໃນບ່ອນມືດທຸກຫົນທຸກແຫ່ງ. ພວກເຮົາບໍ່ຮູ້ວ່າ ມັນແມ່ນຫຍັງ ບາງທີມັນແມ່ນອາວຸດຊະນິດໃໝ່ບໍ?".
ເມື່ອໄດ້ລີ້ຊ່ອນຢູ່ໃນຂຸມໃຕ້ດິນ ທີ່ແໜ້ນໜາແລ້ວ, ພວກ ຫົວໜ້າຄົນສຳຄັນຂອງຟາຊິດ ກໍໄດ້ສັ່ງໃຫ້ທະຫານຂອງຕົນ ປ້ອງກັນແບັກແລັງໄວ້ຈົນເຖິງທີ່ສຸດ. ການຕໍ່ສູ້ກັນທັງໃນພາກພື້ນດິນ ແລະເທິງອາກາດ ໄດ້ດຳເນີນໄປໝົດມື້ໝົດຄືນ. ການຕໍ່ສູ້ກັນກໍໄດ້ດຳເນີນໄປຮອດຢູ່ໃນໃຕ້ພື້ນດິນ ເພາະວ່າ ພວກທະຫານຮິດແລທີ່ພະຍາຍາມສ້າງຄວາມເຂັ້ມແຂງຂຶ້ນຢູ່ໃນສາຍທາງລົດໄຟໃຕ້ດິນນັ້ນ ຈຳຕ້ອງໄດ້ກວາດລ້າງອອກ. ພວກທະຫານໂຊວຽດໄດ້ຍຶດເອົາອຸ້ມນີ້ ແລ້ວກໍອຸ້ມຕໍ່ໄປມາໄວ້ໃນກຳມືໄປເລື້ອຍ

ແລ້ວ. ການຕໍ່ສູ້ກັນຢ່າງດູເດືອດຢູ່ໃນນະຄອນແບັກແລັງ ນັ້ນ ໄດ້ດຳເນີນໄປຮອດ ໑໐ ມື້. ກອງທະຫານຂອງນາຍພົນ ວ. ອີ.ຊຸຍກົບ ແລະນາຍພົນ ວ.ອີ.ກູຊະເນຊົບ ໄດ້ບຸກຄືບໜ້າ ເຂົ້າມາຫາກັນ ເພື່ອວ່າຈະໄດ້ມາຈອດກັນຢູ່ໃນບໍລິເວນເລສະ ຕາກອັນເປັນສຳນັກງານລັດຖະບານທີ່ສຳຄັນ ຂອງເຢຍລະມັນ ຟາຊິດ. ໃນຕອນຮຸ່ງແຈ້ງຂອງວັນທີ ໓໐ ເດືອນເມສາ ພວກ ທະຫານໂຊວຽດ ກໍໄດ້ເລີ່ມບຸກໂຈມຕີຕຶກເລສະຕາກ. ເວລາ ບ່າຍສອງໂມງມື້ເວນ ທຸງແດງແຫ່ງໄຊຊະນະ ກໍໄດ້ຖືກນຳໄປ ປັກໄວ້ເທິງຕຶກເລສະຕາກນັ້ນ. ພວກຜູ້ນຳຄົນສຳຄັນຂອງຟາຊິດ ໄດ້ຫລຸດພົ້ນຈາກຄວາມຕາຍໄປໄດ້ ດ້ວຍການຂີ່ເຮືອບິນໜີໄປ, ສ່ວນບາງຄົນກໍຂ້າຕົນເອງຕາຍ. ມາຮອດວັນທີ ໒ ພຶດສະພາ, ແບັກແລັງກໍໄດ້ຍອມຈຳນົນ, ສ່ວນກອງທັບຂອງພວກຮິດແລ ທີ່ ເຫລືອຢູ່ນັ້ນ ເຊິ່ງນາຍແລະພົນທະຫານຈຳນວນ ຫລາຍກ່ວາໜ ແສນຄົນທີ່ຢູ່ໃນເຂດແບັກແລັງນັ້ນ ກໍໄດ້ຖືກຈັບເປັນ ຊະເລີຍ ເສິກ. ຕໍ່ມາອີກໜຶ່ງອາທິດ ຄືວັນທີ ໙ ກອງບັນຊາການເຢຍ ລະມັນກໍໄດ້ເຊັນຂໍ້ຕົກລົງ ກ່ຽວກັບການຍອມຈຳນົນ ແບບ ບໍ່ມີ ເງື່ອນໄຂໃດໆທັງໝົດ.

ພາຍຫລັງທີ່ຍຶດນະຄອນແບັກແລັງໄດ້ແລ້ວ, ກອງບັນຊາການ ທະຫານໂຊວຽດ ກໍໄດ້ສັ່ງໃຫ້ກອງລົດຖັງ ຂອງນາຍພົນ ປ.ສ. ລືບານໂກ ແລະນາຍພົນ ດ.ດ.ເລລູເຊັນໂກ ໄປປົດປ່ອຍນະ ຄອນຫຼວງຂອງເຊັກໂກສະໂລວາກີຄືປະລາກ. ດັ່ງນັ້ນວັນທີ໙ພຶດ ສະພາກອງທະຫານໂຊວຽດກໍຈຶ່ງໄດ້ປົດປ່ອຍນະຄອນປະລາກ.

"ໄຊໂຍ! ຫໍລັດຖະສະພາເລສະຕາກຍຶດໄດ້ແລ້ວ!"

ສະຫະພາບໂຊວຽດໄດ້ມີໄຊຊະນະ ອັນຍິ່ງໃຫຍ່ ຕໍ່ເຢຍລະມັນຟາຊິດແລ້ວ. ການເດີນສວນສະໜາມ ແຫ່ງໄຊຊະນະໄດ້ຈັດໃຫ້ມີຂຶ້ນຢູ່ທີ່ຈະຕຸລັດແດງນະຄອນມົດສະກູ. ພວກທະຫານທີ່ມີໄຊຊະນະໄດ້ວາງຄັນທຸງ ແຫ່ງກອງທັບຟາຊິດ ທີ່ຖືກປາບປາມລົງນັ້ນ ໄວ້ທີ່ພື້ນຂອງຫໍບັນຈຸສົບເລນິນ.

ທຸກໆປີໃນວັນທີ ໙ ພຶດສະພາ ປະຊາຊົນໂຊວຽດ ແມ່ນພາກັນສະແດງຄວາມເຄົາລົບຕໍ່ພວກທີ່ເຂົ້າຮ່ວມໃນມະຫາສົງຄາມປ້ອງກັນປິຕຸພູມ. ພວກນັກຮົບເກົ່າ ຄື: ຊາວກຳມະກອນ , ຊາວນາ, ຄູສອນແລະນັກວິສະວະກອນ ໄດ້ເຂົ້າຮ່ວມໃນພິທີ ໂດຍໄດ້ຕິດຫລຽນການສູ້ຮົບໃນສົງຄາມ. ປະຊາຊົນຜູ້ທີ່ໄດ້ຮັບຫລຽນໄຊຕ່າງໆ ຄືຫລຽນ "ສຳລັບ ການປ້ອງກັນ ເລນິນກະລາດ", "ສຳລັບການປ້ອງກັນມົດສະກູ", "ສຳລັບການປົດປ່ອຍ

ປະລາກ", "ສຳລັບການຍຶດແບັກແລັງ" ແມ່ນດຳລົງຊີວິດຢູ່ທີ່ວ
ສະຫະພາບໂຊວຽດ ອັນກວ້າງໃຫຍ່ໄພສານ. ປະຊາຊົນ ໂຊ
ວຽດໄດ້ມີໄຊຊະນະຕໍ່ສັດຕູທີ່ເຂັ້ມແຂງນັ້ນ ໄດ້ກໍເພາະວ່າຊາວ
ລັດເຊຍແລະຊາວກະລູຊິນ, ຊາວອາລະເມເນຍ ແລະ ຊາວ
ອູຊະເບັກ, ຊາວອູກະລາອິນາ ແລະຊາວຕາດຊິກ, ຊາວເບ
ໂລລູດເຊຍແລະຊາວລິດວາ ແລະບັນດາຕົວແທນຊົນຊາດຕ່າງ
ຕ່າງແຫ່ງ ສ.ສ.ສ.ຊ. ໄດ້ຄຽງບ່າຄຽງໄຫລ່ກັນຕໍ່ສູ້ຕ້ານທະ
ຫານຮິດແລ. ໃນວັນສະຫລອງໄຊຊະນະນັ້ນກໍໄດ້ມີການສະແດງ
ຄວາມເຄົາລົບຕໍ່ກຳມະກອນອາວຸໂສເຊັ່ນດຽວກັນ. ຢູ່ໃນໂຮງ
ງານລົດຕະລັກເຕີອູລານຫລັງໃຫຍ່ນັ້ນ ມີລົດຖັງຄັນໜຶ່ງ ຕັ້ງຢູ່
ເທິງແທ່ນຫີນ. ອັນນັ້ນແມ່ນລົດຖັງຄັນໜຶ່ງໃນຈຳນວນຫລາຍ
ສິບພັນຄັນທີ່ໄດ້ສ້າງຂຶ້ນມາດ້ວຍນ້ຳມື ຂອງຊາວກຳມະກອນໃນ
ລະຫວ່າງສົງຄາມ. ເວລານັ້ນພວກຄົນເຖົ້າຄົນແກ່ ທີ່ຕິດຫລຽນ
ໄຊ "ສຳລັບການອອກແຮງງານທີ່ກ້າຫານ ໃນມະຫາສົງຄາມ
ປ້ອງກັນປິຕຸພູມປີ ໑໙໔໑-໑໙໔໕"ນັ້ນ ໄດ້ພາກັນໄປບ່ອນ ນັ້ນ
ເລື້ອຍໆ. ພວກເຂົາກໍຄືກັນກັບຊາວກຳມະກອນ ໃນໂຮງງານ
ອື່ນໆໄດ້ພາກັນຫລໍ່ຫລອມອາວຸດ ໃຫ້ແກ່ທະຫານແຫ່ງ ກອງທັບ
ໂຊວຽດ. ປະຊາຊົນໂຊວຽດໄດ້ຮັບໄຊຊະນະ ໃນສົງຄາມ ບໍ່
ແມ່ນຍ້ອນວ່າ ນາຍແລະພົນທະຫານ ຢ່າງດຽວເທົ່ານັ້ນ, ແຕ່
ຫາກຍ້ອນປະຊາຊົນໂຊວຽດທຸກໆຄົນ ໂດຍບໍ່ເລືອກ ວ່າ ພວກ
ເຂົາຈະເຮັດວຽກຢູ່ບ່ອນໃດກໍຕາມ ກໍແມ່ນໄດ້ຮັບໃຊ້ພາລະກິດ
ປ້ອງກັນປິຕຸພູມ. ປະຊາຊົນໂຊວຽດບໍ່ແມ່ນພຽງແຕ່ ເຮັດວຽກ

ຢ່າງບໍ່ເຫັນແກ່ຕົວຢູ່ໃນແນວຫລັງເທົ່ານັ້ນ, ແຕ່ຫາກຍັງໄດ້ສະລະການໃຊ້ຈ່າຍທາງສ່ວນຕົວ ຂອງພວກເຂົາ ເພື່ອສ້າງກອງທັບໃຫ້ມີຄວາມເຂັ້ມແຂງອີກດ້ວຍ. ຢູ່ໃນຫໍພິພິທະພັນ ທາງທະຫານນັ້ນ ໄດ້ມີການຮັກສາຮູບພາບຂອງເຮືອບິນ, ລົດຖັງແລະປືນໃຫຍ່ທີ່ໄດ້ມອບເປັນຂອງຂວັນ ໃຫ້ແກ່ທະຫານໃນລະຫວ່າງສົງຄາມໂດຍຊາວນາ, ຊາວກຳມະກອນ ແລະເດັກນັກຮຽນ. ພວກທະຫານຮຸ່ນກ່ອນ ໄດ້ພາກັນຮັກສາແອບຢາແລະຖົງມື, ຖົງຕີນອັນອົບອຸ່ນທີ່ພວກເຂົາໄດ້ຮັບໃນລະຫວ່າງສົງຄາມ ໃນຫີບຫໍ່ຕັ້ງຫລາຍສິບພັນຫໍ່ຈາກປະຊາຊົນໂຊວຽດ ຜູ້ທີ່ເຂົາບໍ່ຮູ້ນັ້ນ ໄວ້ເປັນຂອງທີ່ລະລຶກທີ່ມີຄຸນຄ່າ ທີ່ຫາອັນປຽບບໍ່ໄດ້.

ນາຍແລະພົນທະຫານຫລາຍກວ່າ ໗ ລ້ານຄົນ ໄດ້ຮັບຫຼຽນໄຊແລະກາຄວາມຊອບ ສຳລັບວິລະກຳ ໃນການສູ້ຮົບແຫ່ງສະຫະພາບໂຊວຽດ, ພວກນັກຮົບຊາດໂຊວຽດປະມານ ໑ ໝື່ນ ໑ ພັນຄົນ ກໍໄດ້ຮັບກຽດອັນສູງເປັນວິລະຊົນ ແຫ່ງສະຫະພາບໂຊວຽດ. ການປະຕິບັດການຂອງກອງທະຫານໂຊວຽດ ແມ່ນໄດ້ຖືກນຳພາໂດຍເສນາທິການ ແຫ່ງກອງບັນຊາການສູງສຸດທີ່ມີ ອີ.ວ. ສະຕາລິນ ເປັນຫົວໜ້າ ແລະບັນດານາຍພົນຜູ້ເກັ່ງກ້າ ເຊັ່ນ ນາຍພົນ ອາເລັກຊານດະລະ ວາຊິນເລັບສະກີ , ນີໂກລາຍ ວາຕູຕິນ, ເກໂອລະກີ ຊູກອບ, ອີວານ ໂກເນັບ, ເລໂອນິດ ໂກໂວລອບ, ໂລດີໂອນ ມາລີນົບສະກີ, ຟະໂຍໂດລະ ໂຕລະບູຄິນ, ກົນສະຕານຕິນ ໂລໂກໂຊອົບສະກີ, ກີລະອິນ ເມເລສະກົບ, ອີວານ ເຊລະເນຍຄົບສະກີ, ໂບລິດ ຊາ

ໄປສະນິກົບ ແລະອື່ນໆ. ໃນການປະຕິບັດການ ແຫ່ງກອງທັບນັ້ນ ຊາວກອມມູນິດ ໄດ້ຢູ່ໃນກອງໜ້າແຫ່ງກອງທັບ, ໄດ້ເຮັດວຽກໜັກຢູ່ໃນໂຮງງານ ແລະໃນສະຫະກອນກະເສດໃນແນວຫລັງ, ຄັນມາຮອດເວລາສົງຄາມສັຽງສຸດລົງແລ້ວ ຊາວກອມມູນິດຫລາຍກວ່າ ໓ ລ້ານຄົນ ກໍໄດ້ຢູ່ໃນຖັນແຖວ ໜ້າ. ພັກກອມມູນິດໄດ້ຈັດຕັ້ງ ແລະໄດ້ນຳພາປະຊາຊົນໂຊວຽດທັງໝົດຕໍ່ສູ້ຕ້ານພວກຮຸກຮານ. ໃນລະຫວ່າງສົງຄາມ ອັນໜັກໜ່ວງນັ້ນ ທົ່ວໂລກໄດ້ເຫັນວ່າ ບໍ່ມີກຳລັງແຮງອັນໃດ ທີ່ຈະມາ ສາມາດທັບມ້າງລະບອບສັງຄົມນິຍົມລົງໄດ້ ຫລືມາບັງຄັບ ປະຊາຊົນຜູ້ທີ່ໄດ້ເປັນເຈົ້າຂອງປະເທດຊາດຂອງຕົນ ກົ້ມຫົວຍອມຈຳນົນຕໍ່ພວກເຂົາໄດ້.

ໃນລະຫວ່າງເກີດການປະທະກັນກັບຟາຊິດເຢຍລະມັນ ໃນເວລາເມື່ອລົດຖັງທຸກໆຄັນ, ເຮືອບິນທຸກໆລຳມີຄວາມຈຳເປັນຕ້ອງຢູ່ໃນແນວໜ້ານັ້ນ ສະຫະພາບໂຊວຽດ ໄດ້ຮັກສາ ກອງທັບສ່ວນໃຫຍ່ຂອງຕົນໄວ້ໃນຕາເວັນອອກໄກ. ມັນມີຄວາມຈຳເປັນຕ້ອງປ້ອງກັນຊາຍແດນ ຈາກການຮຸກຮານຂອງພວກ ຈັກກະພັດຍີ່ປຸ່ນ ເຊິ່ງໄດ້ຄອຍຖ້າເວລາອັນເໝາະສົມ ເພື່ອທຳການບຸກໂຈມຕີເຂົ້າສູ່ ສ.ສ.ສ.ຊ. ໃນເດືອນສິງຫາປີ໑໙໔໕, ກອງທະຫານໂຊວຽດ ໄດ້ທັບມ້າງກອງທັບຍີ່ປຸ່ນ ໄດ້ຢ່າງວ່ອງໄວແລະຢ່າງມີຄວາມຊຳນິຊຳນານ. ໃນວັນທີ ໒ ກັນຍາ ປີ ໑໙໔໕ ຍີ່ປຸ່ນໄດ້ເຊັນສັນຍາກ່ຽວກັບການຍອມຈຳນົນ ຢ່າງບໍ່ມີເງື່ອນໄຂໃດໆທັງໝົດ. ໄຊຊະນະຕໍ່ຍີ່ປຸ່ນນັ້ນໄດ້ຊ່ອຍໃຫ້ເກົາ

ຫລືແລະວຽດນາມຟື້ນຟູຄວາມເປັນເອກະລາດ ຂອງຕົນຂຶ້ນມາ ແລະເລັ່ງໃຫ້ການປະຕິວັດ ໃນປະເທດຈີນມີໄຊຊະນະໄວຂຶ້ນ.

ໃນເວລາເກີດສົງຄາມຕ້ານກັບ ເຢຍລະມັນຟາຊິດນັ້ນ ປະຊາຊົນໂຊວຽດໄດ້ແບກຫາບອັນຫນັກຫນ່ວງ ຢູ່ເທິງບ່າຂອງຕົນ ແລະໄຊຊະນະຕໍ່ລະບອບຟາຊິດນັ້ນ ແມ່ນມີຄວາມ ສຳຄັນ ອັນໃຫຍ່ຫລວງຕໍ່ປະຊາຊາດຕ່າງໆໃນໂລກ. ນັ້ນກໍຄືໃນໄລຍະສອງສາມປີທຳອິດ ຫລັງສົງຄາມນັ້ນ ອຳນາດການປົກຄອງ ແບບມີປະຊາທິປະໄຕທີ່ແທ້ຈິງ ກໍໄດ້ເກີດຂຶ້ນຢູ່ໃນລູມານີ, ບູນກາລີ, ໂປໂລຍ, ເຊກໂກສະໂລວາກີ, ຮຸ່ງກາລີ, ອັນບານີ ແລະ ຢູໂກສະລາວີ ແລະອຳນາດປົກຄອງ ຊັບສິນບັດຕ່າງໆ ກໍໄດ້ຕົກໄປ ຢູ່ໃນ ກຳມືຂອງຊາວຜູ້ອອກແຮງງານ ທັງຢູ່ໃນຕົວເມືອງແລະຊົນນະບົດ. ປະຊາຊາດເຫລົ່ານີ້ ຄົນໄດ້ຮັບການປົດປ່ອຍ ອອກຈາກ ແອກຄອບຄອງຂອງຟາຊິດເຢຍລະມັນ, ເຈົ້າທີ່ດິນແລະນາຍທຶນຂອງຕົນແລ້ວ ກໍໄດ້ກ້າວເຂົ້າສູ່ເສັ້ນທາງ ການສ້າງສາສັງຄົມນິຍົມ. ນັ້ນເປັນຄັ້ງທຳອິດ ໃນປະຫວັດສາດຂອງເຢຍລະມັນທີ່ລັດຂອງຊາວກຳມະກອນແລະຊາວນາເຢຍລະມັນ ຄື ສາທາລະນະລັດປະຊາທິປະໄຕເຢຍລະມັນ ໄດ້ເກີດຂຶ້ນຢູ່ໃນພາກຕາເວັນອອກຂອງປະເທດແລະກໍໄດ້ເຂົ້າຮ່ວມຢູ່ໃນຄ້າຍຂອງປະເທດທີ່ສ້າງສາລະບອບສັງຄົມນິຍົມ. ຢູ່ໃນອາຊີກໍໄດ້ເກີດມີການປ່ຽນແປງອັນຍິ່ງໃຫຍ່ຂຶ້ນ ນັ້ນຄືຢູ່ໃນປະເທດຈີນ ປີ ໑໙໔໙ ປະຊາຊົນກໍໄດ້ຍຶດອຳນາດໄດ້ ຍ້ອນຜົນການຕໍ່ສູ້ມາເປັນໄລຍະ ຍາວນານ ແລະສ້າງຕັ້ງປະເທດຂຶ້ນ ເປັນສາທາລະນະລັດປະຊາຊົນຈີນ.

ຊາວກຳມະກອນແລະຊາວນາ ໃນປະເທດທີ່ກວ້າງໃຫຍ່ ໄພສານນັ້ນ ກໍໄດ້ເລີ່ມເຮັດວຽກຢ່າງຫ້າວຫັນ ເພື່ອທັບມ້າງ ປະເທດຈີນທີ່ຫລ້າຫລັງ ມາເປັນເວລາຫລາຍສະຕະວັດ ນັ້ນ ລົງ ແລະສ້າງສາສັງຄົມແບບສັງຄົມນິຍົມຂຶ້ນ ຢູ່ໃນປະເທດ. ຢູ່ໃນເກົາຫລີພາກເຫນືອກໍໄດ້ມີການສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນຂຶ້ນ. ເມື່ອໄດ້ຮັບ ຄວາມເປັນ ເອກະລາດແຫ່ງຊາດແລ້ວ, ຊາວຜູ້ອອກແຮງງານໃນຫວຽດນາມເຫນືອກໍໄດ້ຍຶດອຳນາດມາໄວ້ໃນກຳມືຂອງຕົນ ແລະ ສ້າງຕັ້ງລັດຂອງຊາວກຳມະກອນແລະຊາວນາຂຶ້ນ ຄື ສາທາລະນະລັດປະຊາທິປະໄຕຫວຽດນາມ.

ຕົວຢ່າງຂອງບັນດາປະຊາຊາດ ທີ່ຮັກຫອມເສລີພາບໃນເອີລົບແລະອາຊີ ໄດ້ເປັນຂະບວນກໍໃຫ້ເກີດມີການຕໍ່ສູ້ ແກ່ຊາວຜູ້ອອກແຮງງານໃນທະວີບອື່ນໆ. ໃນປີ ໑໙໕໙ ອຳນາດ ການປົກຄອງຂອງປະຊາຊົນທີ່ສືບເນື່ອງມາຈາກ ຜົນສຳເລັດ ຂອງການປະຕິວັດຢູ່ໃນປະເທດກູບາ ອັນເປັນປະເທດຫນຶ່ງ ໃນທະວີບອາເມລິກາກໍໄດ້ຮັບການຈັດຕັ້ງຂຶ້ນ ແລະ ປະຊາຊົນກູບາກໍໄດ້ຢືນຢູ່ໃນເສັ້ນທາງ ຂອງການປ່ຽນແປງ ແບບສັງຄົມນິຍົມ. ສະຫະພາບໂຊວຽດແລະປະເທດອື່ນໆ ເຊິ່ງຢືນຢູ່ໃນເສັ້ນທາງແຫ່ງການສ້າງສາສັງຄົມນິຍົມ ກໍໄດ້ຈັດຕັ້ງຄ້າຍສັງຄົມນິຍົມ ທີ່ມີກຳລັງແຮງຂຶ້ນ ແລະກໍໃຫ້ການຊ່ອຍເຫລືອເຊິ່ງກັນແລະກັນ.

ກ່ອນສົງຄາມນັ້ນ ບັນດາປະຊາຊາດໃນອາຊີ ແລະອາຟະລິກາເກືອບທັງຫມົດ ໄດ້ຕົກຢູ່ໃນສະພາບ ຄວາມບໍ່ມີເອກະລາດ

ແບບຫົວເມືອງຂຶ້ນຂອງອັງກິດ, ຝະລັ່ງ, ເບນຊິກ, ອິຕາລີ ແລະປະເທດທຶນນິຍົມອື່ນໆອີກ. ການພັງທະລາຍລົງ ຂອງ ລະບອບຟາຊິດນັ້ນ ໄດ້ຊ່ອຍໃຫ້ເກີດມີການຂະຫຍາຍຕົວ ຂອງຂະບວນການເພື່ອຄວາມເປັນເອກະລາດແຫ່ງຊາດຂຶ້ນ ໃນບັນດາປະເທດທີ່ເປັນເມືອງຂຶ້ນ ແລະບໍ່ມີເອກະລາດ. ຍ້ອນຜົນຂອງການຕໍ່ສູ້ແລະການຂັບໄລ່ພວກນັກລ່າຫົວເມືອງຂຶ້ນ ອອກໄປນັ້ນ ລັດແຫ່ງຊາດທີ່ມີເອກະລາດກໍ່ໄດ້ເກີດຂຶ້ນໃນອິນເດຍ, ອິນໂດເນຊີ, ອານເຊລີ, ອີລັກ, ອີຢິບ, ຊີລີ ແລະ ຫົວເມືອງຂຶ້ນເກົ່າແກ່ອື່ນໆອີກ ຢູ່ໃນອາຊີແລະຢູ່ໃນເຂດຕາເວັນອອກກາງ. ດັ່ງນັ້ນຂະບວນການປົດປ່ອຍຊາດ ຈຶ່ງໄດ້ ຂະຫຍາຍຕົວ ອອກຢ່າງກວ້າງຂວາງຢູ່ໃນອາຟະລິກາ. ຫລັງຈາກການາແລະກີເນໄດ້ລຸກຂຶ້ນຕໍ່ສູ້ເອົາເອກະລາດແລ້ວ ປະເທດ ມາລີ, ໄນຈີເລຍ, ອູການດາ ແລະຫົວເມືອງຂຶ້ນເກົ່າແກ່ ຫລາຍແຫ່ງອື່ນອີກກໍ່ໄດ້ຮັບເອກະລາດຕິດຕາມກັນມາ. ໃນປະຈຸບັນນີ້ຢູ່ໃນອາຟະລິກາໄດ້ມີລັດແຫ່ງຊາດທີ່ມີເອກະລາດຫລາຍກວ່າ ໔໐ ປະເທດ.

ສະຫະພາບໂຊວຽດແລະປະເທດສັງຄົມນິຍົມອື່ນໆແມ່ນພວມຊ່ອຍເຫລືອຢ່າງຂະຫຍັນຂັນແຂງ ແກ່ປະເທດໜຸ່ມນ້ອຍທີ່ພວມພັດທະນາຢູ່ໃຫ້ກໍາຈັດຜົນຮ້າຍຂອງອິດທິພົນຫົວເມືອງຂຶ້ນ ນັ້ນອອກໄປ.

ໃນລະຫວ່າງສົງຄາມ ເມື່ອພວກທະຫານໂຊວຽດ ໄດ້ມີເວລາພັກໃຈໜ້ອຍໜຶ່ງນັ້ນ ພວກເຂົາໄດ້ໄຝ່ຝັນວ່າເມື່ອສົງຄາມສີ້ນສຸດລົງແລ້ວ ພວກເຂົາຄົງຈະໄດ້ພັກຜ່ອນກັນຢ່າງສະບາຍ.

ແຕ່ວ່າເມື່ອພວກເຂົາກັບມາຫາຢ້າວເຮືອນ ແລະກໍຍັງບໍ່ທັນໄດ້ແກ້ເຄື່ອງແບບທະຫານອອກຊ້ຳ, ພວກເຂົາກໍໄດ້ກັບໄປສູ່ຫ້ອງເຄື່ອງຈັກ, ສູ່ສະຖານທີ່ກໍ່ສ້າງແລະໄປສູ່ສະຫະກອນ ກະເສດອີກແລະກໍບໍ່ມີເວລາໄດ້ພັກຜ່ອນເລີຍ.

ສົງຄາມໄດ້ນຳເອົາຄວາມຫາຍະນະອັນໃຫຍ່ຫລວງມາສູ່ປະຊາຊົນໂຊວຽດ ເຊິ່ງນັບວ່າມີຫລາຍກວ່າ ໒໐ ລ້ານຄົນ ໄດ້ເສຍຊີວິດໄປໃນສະໜາມຮົບ, ໄດ້ຖືກຝັງຢູ່ກ້ອງຄວາມສະລັກຫັກພັງຂອງຕົວເມືອງແລະບ້ານຕ່າງໆ, ຖືກຍິງຖິ້ມ ໂດຍພວກກອງປຸ້ນຟາຊິດ ແລະຖືກທໍລະມານຈົນຕາຍ ຢູ່ໃນຄ້າຍ ກັກຂັງພົນເຮືອນຂອງພວກຮິດແລ. ມັນເປັນການຍາກທີ່ຈະພົບພໍ້ຄອບຄົວທີ່ບໍ່ມີຄວາມເສົ້າໂສກ ເນື່ອງມາຈາກການຕາຍ ຂອງຍາດພີ່ນ້ອງແລະຜູ້ຢູ່ໃກ້ຊິດໃນສົງຄາມ. ພວກຟາຊິດ ໄດ້ທຳ ລາຍເມືອງແລະບ້ານຕ່າງໆ ໄດ້ຮັບຄວາມເສຍຫາຍຫລາຍກວ່າ ໗ ຫມື່ນແຫ່ງ ແລະໄດ້ປຸ້ນເອົາຊັບສົມບັດຂອງຊາດໄປເກືອບເຖິງໜຶ່ງສ່ວນສາມ. ປະຫວັດສາດໂລກ ຍັງບໍ່ເຄີຍຮູ້ເຫັນກ່ຽວກັບຄວາມປ່າເຖື່ອນແລະຄວາມໄຮ້ມະນຸດສະທຳ ຂະໜາດ ໃຫຍ່ເຖິງປານນັ້ນຈັກເທື່ອ.

ເພື່ອຮຳບາດແຜສົງຄາມ ຢູ່ໃນປະເທດໃຫ້ໄດ້ໄວຍິ່ງຂຶ້ນນັ້ນ ສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ. ໄດ້ລົງມະຕິຮັບເອົາແຜນການຫ້າປີ ກ່ຽວກັບການຟື້ນຟູແລະການຂະຫຍາຍເສດຖະກິດແຫ່ງຊາດໃນປີ ໑໙໔໖-໑໙໕໐. ປະຊາຊົນໄດ້ເຮັດວຽກໄປດ້ວຍຄວາມຫຍຸ້ງຍາກຫລາຍຢ່າງ ໃນໄລຍະສອງສາມປີທຳອິດ

ຫລັງສົງຄາມນີ້ ແລະແຮງງານກໍມີບໍ່ພຽງພໍ.ໃນປີ ໑໙໔໖ ທົ່ວ
ດິນແດນອັນກວ້າງໃຫຍ່ໄພສານຂອງຕົນນັ້ນ ກໍໄດ້ ເກີດມີໄພ
ແຫ້ງແລ້ງຂື້ນ. ບັນດາຫນັງສືພິມ ຂອງປະເທດທຶນນິຍົມຕ່າງໆ
ໄດ້ຂຽນກ່ຽວກັບເລື່ອງນີ້ໄວ້ວ່າ ປະຊາຊົນໂຊວຽດ ບໍ່ອາດສາ
ມາດຈະທຳການຟື້ນຟູເສດຖະກິດແຫ່ງຊາດຂອງຕົນຂື້ນ ໃນໄລ
ຍະເວລາຫ້າປີ. ແຕ່ວ່າດ້ວຍການອອກແຮງງານ ຂອງຕົນນັ້ນ
ປະຊາຊົນໂຊວຽດກໍໄດ້ກຳຈັດປັດເປົ່າ ການພະຍາກອນອັນມືດ
ມົນຂອງນັກຊ່ຽວຊານ ແລະນັກຫນັງສືພິມນາຍທຶນນັ້ນອອກໄປ.
ຊາວກຳມະກອນທຸກໆຄົນ ໄດ້ພະຍາຍາມເຮັດວຽກ ແລະປະຕິ
ບັດແຜນການຫ້າປີ ພາຍຫລັງສົງຄາມນັ້ນໄປໃຫ້ໄວແລະດີເທົ່າ
ທີ່ຈະເຮັດໄດ້ ຢູ່ໃນສະຖານທີ່ເຮັດວຽກງານຂອງຕົນ.ປະເວນ
ນີກອບ, ຊ່າງຊ່ຽນ, ໄດ້ເຮັດໃຫ້ການຕັດຫລັກ ວ່ອງໄວຂື້ນ
ໄດ້ຢ່າງຫລວງຫລາຍ. ຕົວຢ່າງຂອງເຂົານັ້ນໄດ້ເຮັດໃຫ້ພວກ
ຊ່າງຊ່ຽນຢູ່ໃນໂຮງຈັກໂຮງງານຕ່າງໆໃນປະເທດປະຢັດເງິນ
ໄວ້ໄດ້ປີຫນຶ່ງເຖິງ ໗໐໐ ລ້ານຫລຸບ.ຢູ່ໃນຫມູ່ຊາວກຳມະກອນ
ໂຮງງານ "ກາລິບະລະ" ແຫ່ງມົດສະກູນັ້ນ ໄດ້ມີການດຳເນີນ
ຂະບວນການນີ້ໄປ ເພື່ອໃຫ້ຊາວກຳມະກອນທຸກໆຄົນ ໄດ້ມີອາ
ຊີບຕັດຫລັກເພີ່ມອີກ ແລະຂະບວນການນີ້ ກໍໄດ້ມີຊາວກຳມະ
ກອນໃນໂຮງງານອື່ນໆນຳໄປປະຕິບັດເຊັ່ນດຽວກັນ. ຊາວກຳ
ມະກອນໄດ້ຮ່ຳຮຽນເອົາອາຊີບຕ່າງໆຫລາຍຢ່າງແລະຖ້າຫາກ
ມີຄວາມຈຳເປັນກໍໃຫ້ສາມາດທຳຫນ້າທີ່ແທນກັນໄດ້.ໂລສະເບ
ວາ ແລະ ໂກໂນເນນາໂກ ກຳມະກອນຕ່ຳຫູກຍິງ,ໂກລາເບ

ລະນິໂກວາ ແລະ ນູສະຕູລະໂກວາ ກຳມະກອນຍິງໂຮງງານ ເຮັດເກີບ ໄດ້ສະແດງໃຫ້ເຫັນເຖິງຕົວຢ່າງ ການໃຊ້ວັດຖຸດິບ ແລະອຸປະກອນອື່ນໆຢ່າງມີການປະຢັດ.ລົບໄດ້ຕິດຕາມເບິ່ງຕົວ ຢ່າງຂອງກຳມະກອນຜູ້ກ້າວໜ້າແລ້ວ, ຊາວກຳມະກອນໂຮງ ງານເຮັບເກີບເມືອງມິດສະກູ ກໍໄດ້ຜະລິດເກີບ ຈາກວັດຖຸດິບ ທີ່ມີການປະຢັດນັ້ນ ໄດ້ເຖິງ ໔໐,໐໐໐ ຄູ່ ຕໍ່ໜຶ່ງເດືອນ.ຂະ ບວນການຜະລິດສິນຄ້າທີ່ມີຄຸນນະພາບຍອດຢ້ຽມ ເຊິ່ງໄດ້ເລີ່ມ ຂຶ້ນໂດຍກຳມະກອນ ຊື່ ອາເລັກຊານດະລະ ຊູຕະກິນນັ້ນ ໄດ້ ຮັບການເຜີຍແຜ່ອອກໄປຢ່າງກວ້າງຂວາງ.ວິທີການນີ້ອາດຈະ ໄດ້ຮັບຜົນສຳເລັດໂດຍເງື່ອນໄຂທີ່ວ່າ ຖ້າຫາກກຳມະກອນທຸກ ຄົນໄດ້ດຳເນີນການປະຕິບັດການຜະລິດຂອງຕົນໃຫ້ດີເດັ່ນເທົ່າ ນັ້ນ. ການແຂ່ງຂັນກັນເຮັດວຽກ ໂດຍບໍ່ໃຫ້ມີຂໍ້ບົກພ່ອງນັ້ນ ກໍ ໄດ້ດຳເນີນໄປຢູ່ໃນໂຮງຈັກໂຮງງານທຸກແຫ່ງ. ເນື່ອງ ຈາກ ການອອກແຮງງານຢ່າງບໍ່ເຫັນແກ່ຕົວ ຂອງປະຊາຊົນໂຊວຽດ ນັ້ນ ການຟື້ນຟູແລະການກໍ່ສ້າງ ວິສາຫະກິດອຸດສາຫະກຳຕ່າງ ຕ່າງ ໔໘໐໐ ແຫ່ງນັ້ນ ກໍໄດ້ປະຕິບັດໃຫ້ສຳເລັດແລ້ວ ໃນ ປີ ໑໙໔໘, ແລະໃນຕົ້ນປີ ໑໙໕໐ ນັ້ນ ອຸດສາຫະກຳ ແຫ່ງ ສ. ສ.ສ.ຊ. ທີ່ໄດ້ປະຕິບັດໄປຕາມແຜນການຫ້າປີນັ້ນ ກໍໄດ້ສຳ ເລັດໄປກ່ອນກຳນົດ ຄືໃຊ້ເວລາພຽງແຕ່ ໔ ປີກັບ ໓ ເດືອນ ເທົ່ານັ້ນ. ໃນປີ ໑໙໕໐ ອຸດສາຫະກຳໂຊວຽດ ກໍໄດ້ ຜະລິດ ຜະລິດຕະພັນ ລື່ນກາຍປີ ໑໙໔໐ ກ່ອນເວລາສົງຄາມນັ້ນເຖິງ ໗,໓% .

ໃນລະຫວ່າງແຜນການຫ້າປີ ພາຍຫລັງສົງຄາມນີ້ ສະຫະກອນກະເສດຫລາຍພັນແຫ່ງ ທີ່ໄດ້ຖືກທຳລາຍຈາກສົງຄາມນັ້ນ ກໍໄດ້ກັບຟື້ນຊີວິດຄືນມາໃໝ່.ຢູ່ໃນໂຮງງານ ເຊິ່ງເປັນ ບ່ອນທີ່ຜະລິດລົດຖັງ ໃນເວລາສົງຄາມນັ້ນ ກໍໄດ້ເລີ່ມຜະລິດ ລົດຕະລັກເຕີອອກມາແທນ. ເຖິງປານນັ້ນ ລົດດັ່ງກ່າວນີ້ ກໍຍັງບໍ່ທັນພຽງພໍເທື່ອຢູ່ໃນຊົນນະບົດ. ແຕ່ວ່າຄວາມຕ້ອງການລົດທີ່ວ່ານີ້ແມ່ນມີຫລາຍແທ້ໆ ໂດຍສະເພາະໃນບ່ອນທີ່ພວກຟາຊິດ ຄອບຄອງໃນເວລາສົງຄາມ ເພາະວ່າພວກເຂົາໄດ້ທຳລາຍກົນຈັກສຳລັບກະສິກຳຫລາຍສິບພັນຄັ້ງແລະນອກນັ້ນມ້າແລະງົວເກືອບຮອດ ໘໔ ລ້ານໂຕກໍໄດ້ຖືກທຳລາຍໄປເຊັ່ນດຽວກັນ.ເຖິງວ່າທຸກສິ່ງທຸກຢ່າງຈະໄດ້ຕົກຢູ່ໃນສະພາບການທີ່ຫຍຸ້ງຍາກດັ່ງກ່າວມານັ້ນກໍຕາມ ຜົນເກັບກ່ຽວຢູ່ໃນທົ່ງນາ ກໍໄດ້ເພີ່ມຂຶ້ນແລະຈຳນວນພື້ນທີ່ປູກຝັງ ກໍໄດ້ຂະຫຍາຍອອກ.ນອກນັ້ນ ອັດຕາ ການແບ່ງປັນສະບຽງອາຫານໃຫ້ແກ່ປະຊາຊົນ ໃນຕົວເມືອງຕ່າງໆທີ່ໄດ້ນຳມາໃຊ້ໃນເວລາສົງຄາມນັ້ນ ກໍສາມາດຍົກເລີກໄປໄດ້ແລ້ວໃນປີ ໑໙໔໗.

ດ້ວຍມາດຕາການຂອງການຟື້ນຟູ ແລະການຂະຫຍາຍເສດຖະກິດແຫ່ງຊາດນັ້ນ ຊີວິດການເປັນຢູ່ຂອງປະຊາຊົນ ກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ. ໃນລະຫວ່າງແຜນການຫ້າປີນີ້ລາຄາສິນຄ້າທີ່ປະຊາຊົນຮຽກຮ້ອງຕ້ອງການນັ້ນ ໄດ້ລົດລົງໄປ ເຖິງ ໒ ເທື່ອ. ໃນປີ ໑໙໔໐ ພົນລະເມືອງແຫ່ງສະຫະພາບ ໂຊວຽດໄດ້ຮັບການແຈກຢາຍຜະລິດຕະພັນສະບຽງອາຫານຫລາຍກ່ວາ

ປີ ໑໙໔໐ ກ່ອນເວລາສົງຄາມເຖິງ ໔໐ ເປີເຊັນ.

ດັ່ງນັ້ນໃນໄລຍະເວລາອັນສັ້ນໆນີ້ ປະຊາຊົນໂຊວຽດບໍ່ພຽງແຕ່ຮໍາບາດແຜສົງຄາມເທົ່ານັ້ນ ແຕ່ຍັງໄດ້ສ້າງເງື່ອນໄຂ ໃຫ້ແກ່ການພັດທະນາປະເທດຊາດຕໍ່ໄປອີກດ້ວຍ.

ປະຊາຊົນໂຊວຽດ ສ້າງສາລະບອບກອມມູນິດ

ຄັນໄດ້ປະຕິບັດແຜນການຫ້າປີ ພາຍຫລັງສົງຄາມ ສຳເລັດລົງຢ່າງໄດ້ຮັບຜົນດີແລ້ວ, ປະຊາຊົນໂຊວຽດ ກໍໄດ້ກ້າວເຂົ້າສູ່ການປະຕິບັດແຜນການຫ້າປີ ຊຸດທີ ໔ (ປີ ໑໙໔໑-໑໙໔໕) ດ້ວຍຄວາມຫ້າວຫັນ.

ກ່ອນອື່ນຫມົດວຽກງານອຸດສາຫະກຳ ໄດ້ຂະຫຍາຍຕົວ ໄປດ້ວຍຈັງຫວະທີ່ວ່ອງໄວ. ໃນປີ ໑໙໕໐ ສະຖານີໄຟຟ້າ ແຫ່ງ ສ.ສ.ສ.ຊ. ໄດ້ຜະລິດໄຟຟ້າໄດ້ຫລາຍກວ່າປີ ໑໙໔໕ ເຖິງ ໗ ເທົ່າ ແລະກັ່ນນ້ຳມັນ ໄດ້ເກືອບຮອດ ໘ ເທົ່າ ໃນເວລາດຽວກັນ. ການສຳຫລອດໂລຫະທາດແລະການໃຊ້ກ໊າດທຳມະຊາດເຂົ້າໃນອຸດສາຫະກຳນັ້ນ ແມ່ນມີຄວາມຫມາຍສຳຄັນ ອັນຍິ່ງໃຫຍ່ ໃຫ້ແກ່ການພັດທະນາວິສະວະກຳໄຟຟ້າ ແລະອຸດສາຫະກຳເຄມີ. ໃນປີ ໑໙໕໐ ເສດຖະກິດແຫ່ງຊາດ ໄດ້ມີກ໊າດໃຊ້ຫລາຍກວ່າປີ ໑໙໔໕ ເກືອບຮອດ ໑໖ ເທົ່າ.ຄຽງຄູ່ ໄປກັບການເຕີບໃຫຍ່ຂະຫຍາຍຕົວ ຂອງການຮຽນຮູ້ ການຜະລິດ

ອຸດສາຫະກຳປະເພດຕ່າງໆນັ້ນ ອຸດສາຫະກຳເຄມີ ກໍໄດ້ ຂະຫຍາຍຕົວອອກດ້ວຍບາດກ້າວ ອັນໃຫຍ່ຫລວງ. ການຜະ ລິດຢາງປະລາສະຕິກ ໄດ້ເພີ່ມຂຶ້ນ ເກືອບຮອດ໗໓ເທົ່າແລະການຜະລິດແຜ່ນທຽມດ້ວຍເຄມີ ກໍໄດ້ເພີ່ມຂຶ້ນຫລາຍກວ່າ໘໐໐ເທົ່າ ຄັນສົມທຽບໃສ່ປີ ໑໙໓໓.

ປະຊາຊົນໂຊວຽດໄດ້ພະຍາຍາມ ທີ່ຈະທົດແທນ ເວລາທີ່ເສຍໄປໃນເວລາສົງຄາມ. ໃນປີ ໑໙໓໕ ອາເລັກຊານດະ ລະ ປາຕະລາວູກ ຜູ້ບັນຊາເຄື່ອງຈັກຕັດຖ່ານຫີນໃນໂດນບາດ ພ້ອມດ້ວຍພັກພວກຂອງເຂົາຢູ່ໃນຄະນະ ກໍໄດ້ຜະລິດ ຖ່ານຫີນໄດ້ສອງໝື່ນໂຕນຕໍ່ໜຶ່ງເດືອນ. ການຜະລິດທີ່ມີຜົນໄດ້ຫລາຍເຊັ່ນນັ້ນ ຍັງບໍ່ມີຜູ້ໃດ ເຮັດໄດ້ມາກ່ອນຢູ່ໃນໂດນບາດ. ໃນປີ ໑໙໓໗ ພວກນັກກໍ່ສ້າງໜຸ່ມ ໄດ້ສ້າງເຕົາຫລອມເຫລັກຂຶ້ນອັນເປັນເຕົາທີ່ໃຫຍ່ທີ່ສຸດໃນ ສ.ສ.ສ.ຊ.ນັ້ນໂດຍໃຊ້ເວລາພຽງແຕ່ ໘໐ກ ມື້ເທົ່ານັ້ນ. ໃນພາກປະຕິບັດຢູ່ໃນໂລກນັ້ນໂດຍທົ່ວໄປແລ້ວ ມັນໄດ້ໃຊ້ເວລາບໍ່ໜ້ອຍກວ່າ ໘ ປີ ໃນການກໍ່ສ້າງແບບນັ້ນ. ຢູ່ໃນໂຮງຈັກໂຮງງານຕ່າງໆ ວຽກງານ ກ່ຽວກັບການປັບປຸງແລະການຄິດປະດິດສ້າງ ກໍໄດ້ຂະຫຍາຍຕົວ ອອກຢ່າງກວ້າງຂວາງ. ຊາວກຳມະກອນ, ນັກເຕັກນິກແລະນັກວິສະວະກອນຫລາຍສິບພັນຄົນ ກໍໄດ້ພາກັນສ້າງເຄື່ອງຈັກ,ອຸປະກອນແລະເຄື່ອງມືໃໝ່ ເຊິ່ງເຮັດໃຫ້ມີຄວາມສາມາດໃນການຜະລິດສິ່ງຂອງຕ່າງໆ ໄດ້ຫລາຍຍິ່ງຂຶ້ນ.

ເພື່ອຕອບສະໜອງ ຕໍ່ຄຳຮຽກຮ້ອງຂອງພັກ ກອມມູນິດນັ້ນ

ພວກຊາວໜຸ່ມແຫ່ງ ສ.ສ.ສ.ຊ ກໍໄດ້ພາກັນໄປບຸກເບີກພື້ນທີ່ຂອງທົ່ງຫຍ້າອັນກວ້າງໃຫຍ່ໄພສານ ແລະ ທຳການປູກຝັງໃນກາຊັກສະຕານ. ທີ່ດິນເຊິ່ງຍັງບໍ່ໄດ້ທຳການຂຸດຄົ້ນມາກ່ອນນັ້ນໄດ້ໃຫ້ການເກັບກ່ຽວຢ່າງອຸດົມສົມບູນດີ. ກະສິກຳ ຂະໜາດໃຫຍ່ ເຊິ່ງຕິດຕັ້ງກົນຈັກກະສິກຳຕ່າງໆຢ່າງພຽງພໍນັ້ນໄດ້ເຕີບໃຫຍ່ຂຶ້ນຢູ່ໃນທົ່ງຫຍ້ານັ້ນ. ການບຸກເບີກດິນໃໝ່ນີ້ ໄດ້ສ້າງບໍ່ແຮງໃໝ່ໃຫ້ແກ່ການຜະລິດເຂົ້າບະເລໄດ້ເພີ່ມຂຶ້ນ.ການເຕີບໃຫຍ່ຂະຫຍາຍຕົວໃນການຜະລິດ ແລະ ການໃຊ້ຝຸ່ນ ຂອງແຮ່ທາດນັ້ນ ໄດ້ຊ່ວຍໃຫ້ຊາວສະຫະກອນກະເສດ ຍົກລະດັບການເກັບກ່ຽວຢູ່ໃນທີ່ດິນອັນເກົ່າແກ່ ແລະບຸກເບີກມາດົນນານແລ້ວນັ້ນ ໄດ້ຜົນດີຂຶ້ນ.

ຜົນສຳເລັດໃນທາງອຸດສາຫະກຳ ແລະ ກະສິກຳນີ້ ໄດ້ອຳນວຍໃຫ້ສະວັດດີພາບຂອງປະຊາຊົນເຕີບໃຫຍ່ ຂະຫຍາຍຕົວຕໍ່ໄປ. ເງິນເດືອນຂອງຊາວກຳມະກອນແລະພະນັກງານໄດ້ຮັບການຍົກໃຫ້ສູງຂຶ້ນ, ອັດຕາເງິນເບັ້ຍບຳນານ ສຳລັບຄົນເຖົ້າຄົນແກ່ແລະຜູ້ທີ່ເສຍອົງຄະ ກໍໄດ້ເພີ່ມຂຶ້ນຫລາຍ ແລະ ອາທິດເຮັດວຽກກໍໄດ້ຕັດລົງ ໂດຍບໍ່ຕ້ອງມີການຫັກ ເງິນເດືອນ ແຕ່ຢ່າງໃດ. ການກໍ່ສ້າງເຮືອນຢູ່ຂອງປະຊາຊົນ ກໍໄດ້ ດຳເນີນໄປຢ່າງກວ້າງຂວາງຢູ່ໃນປະເທດ. ພາຍໃຕ້ການນຳພາຂອງພັກກອມມູນິດ ປະຊາຊົນໂຊວຽດ ໄດ້ພັນຂະຫຍາຍຄວາມຮັ່ງມີທາງຊັບສົມບັດຂອງຕົນຂຶ້ນ ດ້ວຍການອອກແຮງງານ ແລະໃຊ້ຜົນສຳເລັດຂອງວິທະຍາສາດແລະເຕັກນິກ ເຂົ້າໃນ ເສດຖະ

ກິດ.ພື້ນຖານເສດຖະກິດຂອງລະບອບສັງຄົມນິຍົມ ໄດ້ມີຄວາມແໜ້ນໜາຂຶ້ນ. ການຕຳນິຕິຕຽນຂັ້ນຮຸນແຮງ ຂອງພັກກອມມູນິດໃນປີ ໑໙໕໖ ກ່ຽວກັບການຖືຕົນເປັນໃຫຍ່ຂອງ ອີ.ວ.ສະຕາລິນ ຜູ້ຊຶ່ງໄດ້ເປັນເລຂາທິການໃຫຍ່ ຂອງຄະນະ ກຳມະການສູນກາງພັກກອມມູນິດແຫ່ງສະຫະພາບໂຊວຽດ ເປັນ ເວລາຫລາຍປີ ພາຍຫລັງການມໍລະນະກຳຂອງ ວ.ອີ.ເລນິນນັ້ນ ໄດ້ເຮັດໃຫ້ການຂະຫຍາຍປະຊາທິປະໄຕ ສັງຄົມນິຍົມຢູ່ໃນປະເທດໄດ້ດຳເນີນຕໍ່ໄປ ແລະຊັກດຶງເອົາ ພາກສ່ວນຕ່າງໆຂອງພົນລະເມືອງເຂົ້າມາສູ່ຊີວິດການເມືອງຢ່າງກວ້າງຂວາງຫລາຍຍິ່ງຂຶ້ນ.

ກິດຈະກຳຂອງສະຕາລິນທັງໝົດ ໄດ້ພົວພັນຢູ່ກັບ ການດຳເນີນການປ່ຽນແປງສັງຄົມນິຍົມ ອັນຍິ່ງໃຫຍ່ຢູ່ໃນ ສ.ສ.ສ.ຊ. ເຂົາໄດ້ໃຊ້ກຳລັງທຸກຢ່າງ ແລະກໍໄດ້ຕໍ່ສູ້ ເພື່ອນຳເອົາ ໂຄງການສ້າງສາສັງຄົມນິຍົມຂອງເລນິນ ມາປະຕິບັດຢູ່ໃນປະເທດໂຊວຽດ. ສະຕາລິນໄດ້ນຳພາການຕໍ່ສູ້ຂອງພັກ ຕ້ານພວກຕະລົດສະກີແລະພວກສວຍໂອກາດນິຍົມຂວາ ຜູ້ຊຶ່ງ ໄດ້ ພະຍາຍາມແຍກພັກແບ່ງພວກ ແລະເຮັດໃຫ້ພັກຫັນເຫອອກໄປ ຈາກແນວທາງທີ່ເລນິນໄດ້ວາງໄວ້.

ໃນລະຫວ່າງປີມະຫາສົງຄາມ ປ້ອງກັນປິຕຸພູມ ອັນຍິ່ງໃຫຍ່ທີ່ຮ້າຍແຮງນັ້ນ ເມື່ອໄດ້ເປັນຫົວໜ້າຄະນະກຳມະການ ປ້ອງກັນຊາດແລ້ວ, ສະຕາລິນກໍໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອ ຈັດຕັ້ງການຕີໂຕ້ພວກຟາຊິດເຢຍລະມັນ ແລະ ກໍໄດ້ເຮັດໃຫ້ສັດຕູ

ພັງທະລາຍລົງໃນຂັ້ນສຸດທ້າຍ.

ຄຽງຄູ່ໄປກັບກິດຈະກຳເຫລົ່ານັ້ນ ຂອງສະຕາລິນຮ່ອງຮອຍທີ່ແຕກຕ່າງກັບແນວຄິດສັງຄົມນິຍົມ ແລະກອມມູນິດກໍໄດ້ປາກົດຂຶ້ນ ຄື ເຂົາໄດ້ອວດອົ່ງທະນົງຕົວຕໍ່ຄວາມສຳຄັນ ໃນບົດບາດຂອງເຂົາທີ່ມີຕໍ່ຊີວິດຂອງປະເທດ, ໄດ້ລະເມີດຫລັກການເລນິນກ່ຽວກັບການນຳພາລວມຫມູ່ ແລະນິຕິບັນຍັດສັງຄົມນິຍົມ.ເຖິງວ່າການລະເມີດເຫລົ່ານີ້ ໄດ້ເປັນອັນຕະລາຍຕໍ່ປະເທດກໍຕາມແຕ່ມັນກໍບໍ່ໄດ້ເຮັດໃຫ້ພື້ນຖານສັງຄົມນິຍົມສັ່ນສະເທືອນແຕ່ຢ່າງໃດ. ພັກແລະປະຊາຊົນກໍໄດ້ເຮັດວຽກ ດ້ວຍຄວາມຊື່ນຊົມຍິນດີໂດຍໄດ້ນຳເອົາແນວຄິດຕ່າງໆຂອງເລນິນ ມາປະຕິບັດ ໃຫ້ເປັນຈິງຂຶ້ນ ແລະເອົາຊະນະຄວາມຫຍຸ້ງຍາກ, ການຫຼົມແຫຼວແລະຄວາມຜິດພາດຊົ່ວຄາວເຫລົ່ານັ້ນໄດ້.ຄັນໄດ້ຕຳນິ ຕິຕຽນການຖືຕົນເປັນໃຫຍ່ຂອງສະຕາລິນແລ້ວ,ພັກກອມມູນິດກໍໄດ້ອຳນວຍໃຫ້ການນຳເອົາຫລັກການເລນິນ ມາໃຊ້ຢູ່ໃນ ວຽກງານຂອງພັກແລະລັດ. ຕັ້ງແຕ່ນັ້ນມາກິດຈະການຂອງພົນລະເມືອງແຫ່ງ ສ.ສ.ສ.ຊ.ໃນທາງການເມືອງແລະທາງລັດ ກໍໄດ້ຍົກຂຶ້ນສູ່ລະດັບສູງແລະພວກເຂົາ ກໍໄດ້ເຕົ້າໂຮມກັນຢູ່ ອ້ອມຂ້າງພັກກອມມູນິດຢ່າງໃກ້ຊິດຍິ່ງຂຶ້ນ. ເມື່ອໄດ້ສ້າງ,ປ້ອງກັນແລະປັບປຸງໃຫ້ລະບອບສັງຄົມນິຍົມເຂັ້ມແຂງຂຶ້ນແລ້ວ,ປະຊາຊົນໂຊວຽດກໍໄດ້ກ້າວເຂົ້າສູ່ການສ້າງສາ ລະບອບກອມມູນິດ.

ກອງປະຊຸມໃຫຍ່ພັກກອມມູນິດແຫ່ງສະຫະພາບໂຊວຽດຄັ້ງທີ XXII ໃນປີ ໑໙໖໑ ໄດ້ຮັບຮອງເອົາໂຄງການໃຫມ່ (ທີ່ມີ)

ຂອງພັກກອມມູນິດ. ຢູ່ໃນໂຄງການນີ້ ໄດ້ບົ່ງລັກສະນະສັງຄົມກອມມູນິດວິທະຍາສາດໄວ້ຢ່າງເລິກເຊິ່ງວ່າ:

"ລະບອບກອມມູນິດ ຄືລະບອບສັງຄົມທີ່ບໍ່ມີຊົນຊັ້ນພ້ອມທັງມີກຳມະສິດພາຫະນະການຜະລິດ ເປັນຂອງປວງຊົນ ແຕ່ຢ່າງດຽວແລະສະມາຊິກຂອງສັງຄົມທັງໝົດ ກໍມີຄວາມ ສະ ເໝີພາບທາງສັງຄົມຢ່າງຄົບຖ້ວນ, ເຊິ່ງເປັນບ່ອນ ທີ່ມີການ ຂະຫຍາຍຕົວຂອງມະນຸດໃນທຸກດ້ານ ໄປພ້ອມກັນນັ້ນກຳລັງແຮງການຜະລິດບົນພື້ນຖານວິທະຍາສາດແລະເຕັກນິກ ກໍຈະເຕີບໃຫຍ່ຂະຫຍາຍຕົວຂຶ້ນ; ທ່າແຮງທັງໝົດ ໃນຄວາມຮັ່ງມີຂອງປວງຊົນ ກໍຈະຊູດົມສົມບູນຂຶ້ນ ແລະຫລັກການອັນຍິ່ງໃຫຍ່ທີ່ວ່າ "ທຸກຄົນເຮັດວຽກຕາມຄວາມສາມາດ ແລະຊົມໃຊ້ ຕາມແຮງງານຂອງຕົນ" ນັ້ນ ກໍຈະໄດ້ຖືກນຳມາໃຊ້. ລະບອບກອມມູນິດແມ່ນສັງຄົມທີ່ມີການຈັດຕັ້ງຂັ້ນສູງ ຂອງຊາວຜູ້ອອກແຮງງານຜູ້ມີສະຕິແລະເສລີພາບ ເຊິ່ງຢູ່ໃນນັ້ນການປົກຄອງຕົນເອງຂອງປວງຊົນ ກໍຈະໄດ້ຖືກຈັດຕັ້ງຂຶ້ນ, ການເຮັດວຽກເພື່ອສະວັດດີພາບຂອງສັງຄົມ ກໍຈະກາຍເປັນຄຳຮຽກຮ້ອງຕ້ອງການຂັ້ນຕົ້ນສຳລັບທຸກຄົນ, ຄວາມຈຳເປັນທີ່ທຸກຄົນ ຈຳຕ້ອງຮັບຮູ້ ແລະຄວາມສາມາດຂອງແຕ່ລະບຸກຄົນນັ້ນ ກໍຈະໄດ້ນຳມາໃຊ້ກັບຜົນປະໂຫຍດອັນຍິ່ງໃຫຍ່ຂອງປະຊາຊົນ."

ບາດກ້າວຕໍ່ໄປ ໃນການພັດທະນາ ສ.ສ.ສ.ຊ. ໄປສູ່ລະບອບກອມມູນິດນັ້ນ ແມ່ນໄດ້ວາງອອກແລ້ວ ໂດຍກອງ ປະຊຸມໃຫຍ່ພັກກອມມູນິດແຫ່ງສະຫະພາບໂຊວຽດຄັ້ງທີ XXIII ເຊິ່ງ

ເປີດຂຶ້ນໃນປີ ໑໙໖໖.

ກອງປະຊຸມໃຫຍ່ຄັ້ງທີ XXIII ນີ້ ໄດ້ກຳນົດໄວ້ວ່າ ໜ້າທີ່ສຳຄັນໃຫຍ່ອັນໜຶ່ງ ກໍໄດ້ແກ່ການພັດທະນາແລະການສ້າງເສດຖະກິດໃຫ້ເຂັ້ມແຂງຕໍ່ໄປ; ສ້າງການພົວພັນທາງດ້ານແນວຄິດແລະການເມືອງກັບບັນດາພັກກອມມູນິດຂອງບັນດາປະເທດສັງຄົມນິຍົມທຸກປະເທດຂຶ້ນ, ສົ່ງເສີມຄວາມສາມັກຄີລະຫວ່າງວົງສາຄະນາຍາດສັງຄົມນິຍົມທຸກຢ່າງ, ສ້າງກຳລັງແລະອິດທິພົນຂອງຕົນຢູ່ໃນເວທີສາກົນ ໃຫ້ເຂັ້ມແຂງຂຶ້ນ.

ພົນສຳຄັນອີກອັນໜຶ່ງຂອງກອງປະຊຸມໃຫຍ່ຄັ້ງທີ XXIII ນີ້ ໄດ້ແກ່ເປົ້າໝາຍກ່ຽວກັບແຜນການຫ້າປີຊຸດທີ ໘ ເພື່ອການພັດທະນາເສດຖະກິດແຫ່ງຊາດ ສ.ສ.ສ.ຊ. ໃນປີ ໑໙໖໖-໑໙໗໐.

ລັກສະນະສຳຄັນສະເພາະ ຂອງແຜນການຫ້າປີໄດ້ແກ່ການຕິດຕັ້ງເຕັກນິກໃໝ່ ໃຫ້ແກ່ເສດຖະກິດແຫ່ງຊາດ ໄດ້ດຳເນີນໄປຢ່າງວ່ອງໄວ ແລະການຍົກປະສິດທິພາບ ຂອງການຜະລິດໃຫ້ສູງຂຶ້ນ. ການຂະຫຍາຍຕົວ ກ່ຽວກັບການຄົ້ນຄວ້າ ທາງດ້ານວິທະຍາສາດອອກຢ່າງກວ້າງຂວາງ ແລະການນຳເອົາວິທີການຜະລິດສິ່ງຂອງໃໝ່ໆມາໃຊ້ນັ້ນ ໄດ້ເປັນພື້ນຖານ ໃນການເລັ່ງຄວາມກ້າວໜ້າ ທາງດ້ານວິທະຍາສາດເຕັກນິກໃຫ້ໄປໄວ.

ເປົ້າໝາຍອີກອັນໜຶ່ງ ກໍໄດ້ແກ່ການເອົາໃຈໃສ່ຕໍ່ການພັດທະນາຂະແໜງການຕ່າງໆ ທີ່ຜະລິດສິນຄ້າ ທີ່ປະຊາຊົນຮຽກ

ຣັອງຕ້ອງການ.

ໜ້າທີ່ສຳຄັນທີ່ສຸດອີກອັນໜຶ່ງ ຂອງແຜນການຫ້າປີໄດ້ແກ່ການຮັບປະກັນໃຫ້ແກ່ການພັດທະນາທາງດ້ານກະສິກຳດຳເນີນໄປດ້ວຍຈັງຫວະທີ່ໝັ້ນຄົງ ໂດຍການຈັດຫາກົນຈັກ ສຳລັບກະສິກຳ, ຢາເຄມີແລະພະລັງງານໄຟຟ້າໃຫ້ມີຈຳນວນເພີ່ມຂຶ້ນ. ສະຫະກອນກະເສດ ກໍໄດ້ຮັບບົດຮຽນໃນການວາງແຜນ ການຜະລິດດ້ວຍຕົນເອງ, ແລະດັ່ງນັ້ນ ມັນຈຶ່ງ ໄດ້ເລີ່ມຕົ້ນ ຂະຫຍາຍຂະແໜງການຕ່າງໆອອກ ແລະ ປູກພືດພັນທີ່ພວກເຂົາເຫັນວ່າມີຜົນດີທີ່ສຸດ.

ໜ້າທີ່ທາງສັງຄົມອັນໃຫຍ່ໆ ຂອງແຜນການຫ້າປີ ຊຸດທີ ໘ ໄດ້ແກ່ການຍົກສະວັດດີພາບຂອງປະຊາຊົນໃຫ້ສູງຂຶ້ນ ຄື ເພີ່ມເງິນເດືອນ, ເງິນເບັ້ຍບຳນານໃຫ້ແກ່ຊາວກຳມະກອນ, ພະນັກງານແລະຊາວສະຫະກອນກະເສດ ແລະພ້ອມດຽວກັນນັ້ນກໍຂະຫຍາຍການສ້າງສາເຮືອນຊານ ໃຫ້ແກ່ປະຊາຊົນໄດ້ອາໄສຢູ່ຕໍ່ໄປ.

ໜ້າທີ່ອັນສຳຄັນຂອງແຜນການດັ່ງນີ້ ໄດ້ປະຕິບັດ ໄປແລ້ວຕາມລະດັບຄາດໝາຍ. ໄລຍະຂັ້ນກ້າວໄປສູ່ ລະບອບກອມມູນິດຂອງປະເທດໂຊວຽດນັ້ນ ແມ່ນໄດ້ວາງອອກແລ້ວຢູ່ໃນກອງປະຊຸມໃຫຍ່ພັກກອມມູນິດ. ກອງປະຊຸມໃຫຍ່ທຸກໆຄັ້ງ ຂອງ ພັກກອມມູນິດ ແມ່ນສະຫລຸບຜົນງານສ້າງສາ ຂອງປະຊາຊົນ ໂຊວຽດ ໃນໄລຍະທີ່ຜ່ານມາແລະວາງແຜນການ ສຳລັບຫ້າປີອີກຕໍ່ໄປ. ແຜນການຂອງພັກ ກໍຄືແຜນການຂອງປະຊາຊົນ ນັ້ນກໍ

ຄືປະຊາຊົນໂຊວຽດທຸກໆຄົນ ຜູ້ເຊິ່ງເຂົ້າຮ່ວມຢ່າງຫ້າວຫັນໃນການວາງແຜນການຫ້າປີນັ້ນ ໄດ້ອະພິປາຍໂຄງການນີ້ ຢ່າງກວ້າງຂວາງ. ພວກເຮົາຕ້ອງການຢາກຈະສະແດງ ໃຫ້ແກ່ຜູ້ອ່ານໄດ້ເຫັນຕົວຢ່າງ ຕ່າງວ່າຊີວິດຂອງປະຊາຊົນໂຊວຽດ ຢູ່ໃນທຸກເຂດ ໄດ້ມີການປ່ຽນແປງກັນໄປແນວໃດ ຍ້ອນຜົນຂອງການປະຕິບັດແຜນການ ພາຍຫລັງສົງຄາມໃນການ ພັດທະນາເສດຖະກິດແຫ່ງຊາດນັ້ນ.

ເພື່ອຈະໃຫ້ໄດ້ຮັບຄວາມອຸດົມສົມບູນແລະເພື່ອເຮັດໃຫ້ການອອກແຮງງານຂອງປະຊາຊົນ ຜ່ອນເບົາລົງໄດ້ໃນເວລາດຽວກັນນັ້ນ ມັນອາດເປັນໄປໄດ້ມີແຕ່ໂດຍການຂະຫຍາຍ ການໃຊ້ເຄື່ອງຈັກແລະກົນຈັກໃຫ້ຫລາຍຂຶ້ນເທົ່ານັ້ນ. ເຄື່ອງຈັກແລະກົນຈັກທີ່ວ່ານີ້ ກໍໄດ້ມີຫລາຍຍິ່ງຂຶ້ນເທົ່ານັ້ນ. ເຄື່ອງຈັກແລະກົນຈັກທີ່ວ່ານີ້ ກໍໄດ້ມີຫລາຍຍິ່ງຂຶ້ນຢູ່ໃນປະເທດ. ເຄື່ອງຈັກຕັດຖ່ານຫີນຢູ່ໃນບໍ່ແຮ່ ກໍໄດ້ນຳມາໃຊ້ແທນເຄື່ອງຕັດ ແລະຄ້ອນຕີທີ່ໃຊ້ດ້ວຍລົມນັ້ນ ເຊິ່ງກໍນັບວ່າເປັນການປົດປ່ອຍ ພວກນັກຂຸດບໍ່ແຮ່ໃຫ້ອອກຈາກການອອກແຮງງານ ທາງກາຍຢ່າງຫນັກຫນ່ວງ. ລົດຂຸດດິນແລະລົດຍົກທີ່ມີກຳລັງແຮງ ກໍໄດ້ຖືກນຳມາໃຊ້ ເພື່ອຜະລິດຖ່ານຫີນອອກມາໄດ້ໂດຍວິທີການຢ່າງເປີດເຜີຍ.

ຂໍຍົກຕົວຢ່າງໃຫ້ເຫັນອີກອັນຫນຶ່ງ, ມີຫ້ອງເຄື່ອງຈັກອັນຫນຶ່ງໃນໂຮງງານຕ່ຳແຜ່ນໃຫມ່ ມີຄວາມຍາວຮອດ ໖໐໐ແມດແລະມີແຖວກື້ອັດຕະໂນມັດຕັ້ງຢູ່ຢ່າງຍາວຢຽດ, ແຕ່ວ່າ ມີຄົນເຮັດວຽກຫນ້ອຍທີ່ສຸດ ຢູ່ໃນຫ້ອງຈັກອັນກວ້າງໃຫຍ່ນີ້. ຜູ້ຄົນເຫລົ່ານີ້

ພຽງແຕ່ສັງເກດເບິ່ງວ່າ ເຄື່ອງຈັກໄດ້ເຮັດວຽກ ໄປຕາມປົກກະຕິແລະຈັດຕັ້ງກົນຈັກຕ່າງໆ ໃຫ້ສະໝ່ຳສະເໝີກັນເປັນບາງຄັ້ງບາງຄາວເທົ່ານັ້ນ. ວຽກງານຂອງຊ່າງຫລອມເຫລັກ ໄດ້ປ່ຽນແປງໄປຄືກັນ. ຢູ່ໃນໂຮງງານຫລອມເຫລັກໃໝ່ ຊ່າງຫລອມເຫລັກແມ່ນຄວບຄຸມການຫລອມເຫລັກ ດ້ວຍການ ຊ່ວຍເຫລືອຂອງເຄື່ອງອຸປະກອນພິເສດ ແລະເຂົາກໍບໍ່ຈຳເປັນຕ້ອງໄປຢືນຢູ່ໃກ້ເຕົາໄຟທີ່ຮ້ອນນັ້ນ ຕະຫລອດເວລາ. ວຽກ ງານຂອງຜູ້ໃຫ້ສັນຍານໃນສາຍທາງລົດໄຟແມ່ນມີຄວາມ ຫຍຸ້ງຍາກຫລາຍ ຄືໃນທຸກລະດູການ, ກາງເວັນ ແລະກາງຄືນ ເຂົາຕ້ອງກົດເຄື່ອງສັນຍານໄຟທີ່ໜັກນັ້ນດ້ວຍມື. ບັດນີ້ການສັນຈອນໄປມາຂອງລົດໄຟໃນລາງເຫລັກນັ້ນ ແມ່ນໄດ້ຈັດວາງຂຶ້ນດ້ວຍການຊ່ວຍເຫລືອໂດຍທາງວິທະຍຸແລະໄຟຟ້າແທນ. ນາຍຊ່າງເວນຍາມທີ່ນັ່ງຢູ່ໃນຫ້ອງທີ່ອົບອຸ່ນແລະມີແສງໄຟແຈ້ງນັ້ນກໍເປີດທາງໃຫ້ລົດໄຟໄປໄດ້ພຽງແຕ່ດ້ວຍການກົດປຸ່ມສັນຍານເທົ່ານັ້ນ.



ຫ້ອງປັ່ນຫລອດຂອງໂຮງງານຕ່ຳແຜ່ນອີວາໂນໂວ.

ດຽວນີ້ຢູ່ໃນວຽກງານສ້າງສາຕ່າງໆ ເພິ່ນໄດ້ໃຊ້ ກົນຈັກ

ຢ່າງກວ້າງຂວາງແລ້ວ. ການປະສົມປຸນຊີມັງ ກໍໃຊ້ເຄື່ອງຈັກ ແລະການນຳເອົາປຸນຊີມັງແລະຂົວດິນຈີ່ ໄປສູ່ບ່ອນ ກໍ່ສ້າງທີ່ສູງ ບ່ອນໃດບ່ອນໜຶ່ງນັ້ນ ກໍໃຊ້ລົດຍົກໄປ. ເຄື່ອງຈັກທີ່ສ້າງຢູ່ໃນ ໂຮງງານພິເສດ ກໍໄດ້ນຳມາໃຊ້ຢູ່ໃນການກໍ່ສ້າງ ຫລາຍຂຶ້ນ. ເວລານີ້ກຸ່ມພວກນັກສ້າງສາເຮືອນທີ່ມີຈຳນວນໜ້ອຍຄົນ ກໍສາມາດສ້າງເຮືອນທີ່ມີຫ້ອງອາໄສຢູ່ຫລາຍຫ້ອງ ຈາກເຄື່ອງອຸປະກອນທີ່ກະກຽມໄວ້ນັ້ນແລ້ວຢ່າງວ່ອງໄວ ດ້ວຍການຊ່ອຍເຫລືອ ຈາກເຄື່ອງຈັກ.

ຢູ່ໃນຊົນນະບົດເຄື່ອງຈັກປະເພດຕ່າງໆ ກໍມີໃຊ້ກັນ ຢ່າງຫລວງຫລາຍ, ຢູ່ໃນທົ່ງນາຂອງປະເທດກໍຍັງມີລົດສຳລັບເກັບກ່ຽວມັນຝະລັ່ງ, ຕົວຜັກກາດເຮັດນ້ຳຕານ,ຝ້າຍແລະເຂົ້າບະເລືອກຫລາຍສິບພັນຄັນເຮັດວຽກຢູ່. ເຖິງປານນັ້ນກໍຕາມ ລົດເຫລົ່ານີ້ ກໍຍັງມີຄວາມຈຳເປັນຫລາຍຂຶ້ນ ເພື່ອວ່າ ຈະໄດ້ລົບລ້າງການເຮັດວຽກດ້ວຍມື ຢູ່ໃນສະຫະກອນກະເສດນັ້ນ ໃຫ້ໝົດໄປ.

ອຸດສາຫະກຳໂຊວຽດ ໄດ້ເພີ່ມການຜະລິດລົດ ແລະກົນຈັກຫລາຍຂຶ້ນແຕ່ລະປີ ເຊິ່ງເປັນການເຮັດໃຫ້ການເຮັດວຽກຂອງຊາວກຳມະກອນແລະຊາວສະຫະກອນກະເສດນັ້ນຜ່ອນເບົາລົງ. ປະຈຸບັນນີ້ ມື້ໜຶ່ງຢູ່ໃນ ສ.ສ.ສ.ຣ. ໄດ້ມີການຜະລິດເຄື່ອງຈັກຕ່າງໆ ໄດ້ຫລາຍກວ່າລັດເຊຍໃນສະໄໝພະເຈົ້າຊາທີ່ຜະລິດໄດ້ໝົດປີ ໃນປີ ໑໙໑໓.

ປະເທດຊາດມີຄວາມຕ້ອງການພະລັງງານໄຟຟ້າຫລາຍຂຶ້ນ



ການເກັບຝ້າຍຢູ່ໃນສະຫະກອນກະເສດ "ກູນບາກ"
ແຂວງອັນດິຊານສະກິອູຊະເບັກກິສະຕານອາຊີກາງ.

ເພື່ອເຮັດໃຫ້ເຄື່ອງຈັກແລະກົນຈັກ ຕ່າງດຳເນີນ ການເຄື່ອນໄຫວແລະເຮັດໃຫ້ຢ້າວເຮືອນ ມີຄວາມອົບອຸນ ແລະມີແສງສະຫວ່າງ. ພາຍຫລັງສະຖານີໄຟຟ້າຂະໜາດໃຫ່ຍ ໃນແມ່ ນ້ຳໂວນກາໄດ້ສ້າງຂຶ້ນແລ້ວ ສະຖານີພະລັງງານໄຟຟ້ານ້ຳຕົກບະລາດສະກາຢາ ແລະ ກະລາສະໂນຢາລະສະກາຢາ ຢູ່ໃນຊີບີລີກໍໄດ້ສ້າງຂຶ້ນແລະຜະລິດໄຟຟ້າໄດ້ຫລາຍ.

ເພື່ອຈະໄດ້ມີພະລັງງານໄຟຟ້າໃຊ້ນັ້ນ ນັກວິສະວະກອນໂຊວຽດ ບໍ່ໃຊ້ພຽງແຕ່ກຳລັງແຮງຂອງນ້ຳຕົກເທົ່ານັ້ນ. ສະຖານີໄຟຟ້າທີ່ໃຊ້ກຳລັງແຮງຂອງບໍ່ນ້ຳຮ້ອນ ກໍໄດ້ຖືກສ້າງຂຶ້ນ ຢູ່ໃນແຫລມການຊາດກາທີ່ຫ່າງໄກເຊັ່ນດຽວກັນ, ວຽກງານ ການ

ສ້າງສາສະຖານີໄຟຟ້າ ທີ່ໃຊ້ພະລັງງານແສງແດດ ກໍພວມດຳເນີນການສ້າງຢູ່ໃນອາຊີກາງ. ສະຖານີໄຟຟ້າແຫ່ງ ສ.ສ.ສ.ຊ.ແມ່ນອຳນວຍພະລັງງານໄຟຟ້າ ໃຫ້ແກ່ເສດຖະກິດ ແຫ່ງຊາດໄດ້ຫລາຍກວ່າທີ່ກຳນົດໄວ້ໃນແຜນການຕິດຕັ້ງໄຟຟ້າ ໃຫ້ແກ່ລັດເຊຍລັ້ງທຳອິດ ເຖິງ ໑໐໐ ເທົ່າປາຍ.



ການກໍ່ສ້າງສະຖານີພະລັງງານໄຟຟ້ານ້ຳຕົກຂະໜາດໃຫຍ່ທີ່ຊຸບລີ.

ເວລານັ້ນຊາວກຳມະກອນໂຊວຽດ ມີການຊ່ວຍເຫລືອ ທາງດ້ານກິນຈັກຫລາຍ ເຖິງວ່າເຂົາຈະເຮັດວຽກນັ້ນຫນຶ່ງ ຫລຸດລົງ

ນີ ຊົ່ວໂມງ ເຂົາກໍຍັງສາມາດຜະລິດໄດ້ຫລາຍກວ່າ ກຳມະກອນຜະລິດໃນປີ ໑໙໑໓ ເຖິງ ໑໔ ເທົ່າ. ການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງຂອງກົນຈັກແລະການຕິດຕັ້ງໄຟຟ້າເຂົ້າໃນອຸດສາຫະກຳ ແລະກະສິກຳບວກເຂົ້າກັບ ການ ເຮັດວຽກຢ່າງບໍ່ເຫັນແກ່ຕົວ ຂອງຜູ້ຄົນທັງຫລາຍນັ້ນ ແມ່ນເຮັດໃຫ້ ສະຫະພາບໂຊວຽດກາຍເປັນຜູ້ຜະລິດນ້ຳມັນ, ຖ່ານຫີນ ເຫຼັກກ້າ ແລະຝຸ່ນທາມະຊາດ, ຊີມັງ ແລະຝ້າຍ ຢູ່ໃນອັນດັບຫນຶ່ງຂອງໂລກ.

ເພິ່ນໄດ້ເອົາໃຈໃສ່ຫລາຍທີ່ສຸດ ໃນການຂະຫຍາຍ ອຸດສາຫະກຳເຄມີ. ວັດຖຸຕ່າງໆທີ່ສ້າງຂຶ້ນມາ ຢູ່ໃນໂຮງງານອຸດສາຫະກຳເຄມີນັ້ນ ແມ່ນໄດ້ຖືກໃຊ້ໄປໃນການຜະລິດແລະໃນແບບແຜນດຳລົງຊີວິດຢ່າງກວ້າງຂວາງ. ການຂະຫຍາຍອຸດສາຫະກຳນີ້ ແມ່ນເຮັດໃຫ້ມີຄວາມສາມາດໃຊ້ຊັບພະຍາກອນ ທຳມະຊາດແລະວັດຖຸດິບທາງກະສິກຳ ຢ່າງມີການປະຢັດ.

ເມື່ອໄດ້ວາງແຜນການໃຊ້ເຄື່ອງຈັກແລະກົນຈັກ ໃຫ້ຫລາຍຂຶ້ນແລ້ວ, ປະເທດໂຊວຽດກໍໄດ້ເອົາໃຈໃສ່ ຢ່າງບໍ່ຢຸດບໍ່ຢັ້ງຕໍ່ການທົດແທນແລະຮັບປະກັນໃຫ້ຜູ້ຄົນ ຜູ້ທີ່ເຄື່ອງຈັກ ເຮັດວຽກແທນເຫລົ່ານີ້ ໃຫ້ມີວຽກເຮັດງານທຳ. ແຜນການຂອງໂຊວຽດແມ່ນຮັບປະກັນການຈັດຫາວຽກງານ ທີ່ຈຳເປັນ ໃຫ້ແກ່ຜູ້ທີ່ໄດ້ອອກຈາກວຽກງານໄປຍ້ອນການນຳເອົາເຕັກນິກໃຫມ່ ມາໃຊ້ແທນກຳມະກອນ. ການເພີ່ມຂຶ້ນຂອງຈຳນວນ ເຄື່ອງຈັກຢູ່ໃນສະຫະພາບໂຊວຽດນັ້ນ ບໍ່ແມ່ນເຮັດໃຫ້ມີການຫວ່າງງານ ແຕ່

ເຮັດໃຫ້ສະພາບການດຳລົງຊີວິດ ຂອງປະຊາຊົນໂຊວຽດດີຂຶ້ນຢ່າງແໜ້ນໜາຖາວອນ. ດັ່ງນັ້ນການເຕີບໃຫຍ່ຂະຫຍາຍຕົວໃນດ້ານການນຳເອົາກົນຈັກໄປໃຊ້ໃນການຜະລິດນັ້ນ ໄດ້ເຮັດໃຫ້ມີຄວາມສາມາດນຳເຂົ້າໄປໃຊ້ ໃນການເຮັດວຽກ ອາທິດໜຶ່ງຫ້າມື້. ດ້ວຍການມີເວລາຫວ່າງສອງມື້ໃນອາທິດໜຶ່ງນັ້ນ, ຊາວຜູ້ອອກແຮງງານໃນສະຫະພາບໂຊວຽດ ຈຶ່ງໄດ້ມີໂອກາດໃໝ່ສຳລັບພັກຜ່ອນ, ສຶກສາຄົ້ນຄວ້າແລະຫລິ້ນກິລາ.

ຢູ່ໃນຄອບຄົວທີ່ມີຫລາຍຊົນຊາດ ແບບມິດຕະພາບ ຂອງປະຊາຊາດໂຊວຽດນັ້ນ ແມ່ນມີເສດຖະກິດ ແລະວັດທະນະທຳຈະເລີນຮຸ່ງເຮືອງຂຶ້ນ ໃນທຸກໆສາທາລະນະລັດໂຊວຽດ.

ເມື່ອປະມານບໍ່ຫລາຍທົດສະວັດລ່ວງມາແລ້ວນັ້ນ ອຸຊະເບັກກິສະຕານ ອັນເປັນດິນແດນທີ່ຊາວນາກົກໜັງສື ອາໄສຢູ່ ນັ້ນໄດ້ຖືກປົກຄອງໂດຍລະບອບສັກດີນາ. ປະຈຸບັນນີ້ສາທາລະນະລັດໂຊວຽດແຫ່ງນີ້ ແມ່ນສົ່ງສິນຄ້າອຸດສາຫະກຳ ແລະກະສິກຳຂອງຕົນອອກໄປຍັງປະເທດຕ່າງໆຫລາຍກວ່າ ໗໐ ປະເທດໃນໂລກ, ໃຫ້ການຊ່ອຍເຫລືອທາງດ້ານເຕັກນິກ - ວິທະຍາສາດແກ່ບັນດາປະເທດທີ່ພວມພັດທະນາ ຢູ່ໃນອາຊີ-ອາຟະລິກແລະອາເມລິກາລາຕິນ, ຝຶກຝົນອົບຮົມຊາວໜຸ່ມທີ່ມາຈາກປະເທດເຫລົ່ານີ້ ຢູ່ທີ່ສະຖາບັນການສຶກສາຊັ້ນສູງຂອງຕົນ ແລະມີການພົວພັນທາງດ້ານວັດທະນະທຳກັບປະເທດຕ່າງໆ ໃນໂລກຫລາຍກວ່າ ໖໐ ປະເທດ.

ກ່ອນການປະຕິວັດເດືອນຕຸລານັ້ນ ນັກປາດຄົນໜຶ່ງໄດ້ຄາດ

ຄິດວ່າ ມັນຈະຕ້ອງໃຊ້ເວລາບໍ່ໜ້ອຍກວ່າ ໔໖໐໐ ປີທີ່ຈະລົບລ້າງການກົກໜັງສືຢູ່ໃນອາຊີກາງໃຫ້ໝົດໄດ້. ພາຍຫຼັງການສ້າງຕັ້ງອຳນາດການປົກຄອງໂຊວຽດຂຶ້ນ ໖໐ ປີ, ສາທາລະນະລັດສັງຄົມນິຍົມໂຊວຽດ ກີລະກີເຊຍ ກໍໄດ້ກາຍເປັນລັດທີ່ມີຄົນທຸກໆ ໒໔ ຄົນ ໃນຈຳນວນ ໑໐໐ ເປັນນັກຊ່ຽວຊານທີ່ໄດ້ຮັບການສຶກສາຊັ້ນສູງ ຫຼືຊັ້ນກາງ, ໄດ້ກາຍເປັນບ່ອນທີ່ມີພົນລະເມືອງ ໑ ສ່ວນສີ່ ພວມຮັບການສຶກສາໃນໂຮງຮຽນສາມັນ, ໂຮງຮຽນການຊ່າງແລະສະຖາບັນການສຶກສາຊັ້ນສູງ.

ລັດເວຍ ພາຍຫຼັງທີ່ໄດ້ແຍກຕົວອອກໄປຈາກລັດເຊຍ ໂຊວຽດໃນປີ ໑໙໑໘ ແລ້ວ ກໍໄດ້ກາຍເປັນແຫຼ່ງວັດຖຸດິບໃຫ້ແກ່ປະເທດຈັກກະພັດຕາເວັນຕົກ, ເພາະວ່າອຸດສາຫະກຳຂອງລັດນີ້ໄດ້ຕົກຕ່ຳ ພາຍຫຼັງແຍກຕົວອອກໄປ ຈາກແຫຼ່ງ ວັດຖຸດິບແລະຕະຫຼາດການຄ້າຂອງລັດເຊຍແລ້ວ. ພາຍໃຕ້ອຳນາດໂຊວຽດ, ລັດເວຍກໍໄດ້ກາຍເປັນສາທາລະນະລັດທີ່ມີ ອຸດສາຫະກຳສູງແລະຍົກລະດັບການຜະລິດອຸດສາຫະກຳຂອງຕົນຂຶ້ນຫຼາຍກວ່າ ໑໗ ເທົ່າ, ເຖິງວ່າຈະໄດ້ຖືກທຳລາຍໃນໄລຍະເວລາສົງຄາມ ປີ ໑໙໔໑-໑໙໔໔ ຫຼາຍປານໃດກໍຕາມ.

ໃນລະຫວ່າງແຜນການຫ້າປີ ຊຸດທຳອິດນັ້ນ ປະຊາຊົນ ໂຊວຽດທັງໝົດ ໄດ້ພາກພູມໃຈວ່າ ສະຖານີພະລັງງານໄຟຟ້າທີ່ຜະລິດໄຟຟ້າໄດ້ ໒໐໐ ລ້ານກິໂລວັດຕໍ່ໜຶ່ງປີນັ້ນ ໄດ້ຖືກສ້າງຂຶ້ນມາຢູ່ໃນກະລູເຊຍ. ອັນນັ້ນບໍ່ວ່າເປັນໄຊຊະນະອັນຍິ່ງໃຫຍ່. ໃນໄລຍະປີ ໑໙໗໑-໑໙໘໐ ເທົ່ານັ້ນ ໄຟຟ້າ ໔໐໐ລ້ານກວ່າ

ກໍໂລວັດຕໍ່ຊົ່ວໂມງ ໄດ້ນຳເຂົ້າໄປຮັບໃຊ້ໂຫລະທັດ ຢູ່ໃນ ສ. ສ.ຊ. ກະລູເຊຍ, ນັ້ນກໍຄືສະຖານີໄຟຟ້າທີ່ກ່າວນັ້ນ ມີກຳລັງແຮງຂອງມັນສູງຂຶ້ນເຖິງສອງເທົ່າ.

ປະຊາຊົນໂຊວຽດ ໄດ້ພະຍາຍາມບໍ່ພຽງແຕ່ຈະ ປະຕິບັດແຜນການຂອງຕົນໃຫ້ສຳເລັດເທົ່ານັ້ນ ແຕ່ຫາກຍັງຈະໃຫ້ ລື່ນກາຍລະດັບຄາດໝາຍອີກດ້ວຍ. ພວກເຂົາ ໄດ້ມີບົດຮຽນໃນທາງສ່ວນຕົວວ່າ ທຸກໆບາດກ້າວໄປຕາມເສັ້ນທາງ ສູ່ລະບອບກອມມູນິດນັ້ນ ແມ່ນເຮັດໃຫ້ຊີວິດແລະຜົນປະໂຫຍດ ຂອງພວກເຂົາດີຂຶ້ນ.

ການສ້າງເຄື່ອງຈັກທຸກໆຊະນິດໃໝ່ ແລະ ການປູກຕົ້ນໄມ້ປະເພດໃໝ່ນັ້ນ ແມ່ນໄດ້ດຳເນີນໄປໂດຍແຮງງານ ຂອງນັກວິທະຍາສາດ.ປະຊາຊົນໂຊວຽດເຂົ້າໃຈວ່າ ການ ກ້າວເຂົ້າໄປສູ່ລະບອບກອມມູນິດນັ້ນ ມັນສາມາດເປັນໄປໄດ້ ພາຍ ໃຕ້ເງື່ອນໄຂການຂະຫຍາຍຕົວ ດ້ວຍການຊ່ວຍເຫລືອ ຂອງວິທະຍາສາດເທົ່ານັ້ນ. ພວກນັກວິທະຍາສາດສະຫະພາບ ໂຊວຽດໄດ້ຮັບຄວາມເຄົາລົບນັບຖື ແລະພວກເຂົາກໍໄດ້ຮັບເງື່ອນ ໄຂທີ່ສະດວກສະບາຍທີ່ສຸດໃນການເຮັດວຽກງານຂອງພວກເຂົາ.

ໃນເດືອນ ມິຖຸນາ ປີ ໑໙໕໔ ສະຖານີໄຟຟ້າ ປະລະມານູແຫ່ງທຳອິດໃນໂລກ ກໍໄດ້ເລີ່ມຕົ້ນປະຕິບັດງານ ຢູ່ໃນ ເມືອງນ້ອຍໆຊື່ ໂອບິນສະກະ ແຂວງມົດສະກູ.ການຄົ້ນຄວ້າຂອງນັກວິທະຍາສາດທີ່ມີຈຸດປະສົງ ຢາກຈະເຮັດໃຫ້ພະລັງງານມະຫາສານອັນນີ້ ເຂົ້າໄປຮັບໃຊ້ໃນເປົ້າໝາຍສັນຕິນັ້ນ ແມ່ນ ບໍ່ຢຸດ



ໃນສະຖາບັນຄົ້ນຄ້ວາວິທະຍາສາດ.

ຍັງແມ່ນແຕ່ນັ້ດຽວ. ໃນໄລຍະ ໔໐ ປີ (໑໙໖໐-໑໙໘໐) ສະຖານີໄຟຟ້າປະລະມານູຊະນິດຕ່າງໆ ຫລາຍສະຖານີ ກໍໄດ້ຖືກສ້າງຂຶ້ນຢູ່ໃນ ສ.ສ.ສ.ຊ. ຕາມໂຄງຮ່າງ ຂອງນັກວິທະຍາສາດໂຊວຽດ. ຢູ່ໃນບັນດາປະເທດອ້າຍນ້ອງອື່ນໆ ສະຖານີແນວນີ້ ກໍໄດ້ຮັບການສ້າງຂຶ້ນເຊັ່ນດຽວກັນດ້ວຍການຊ່ວຍເຫຼືອຂອງນັກຊ່ຽວຊານໂຊວຽດ.

ຢູ່ໃນຊີບີລີນັນ ມີຊັບພະຍາກອນທຳມະຊາດ ຫລາຍຊະນິດແລະມີຄຸນຄ່າຢ່າງນັບບໍ່ໄດ້. ເພື່ອຈຸດປະສົງການສຶກສາຄົ້ນຄວ້າຊັບພະຍາກອນເຫລົ່ານີ້ ແລະເພື່ອການວາງແຜນການໃຊ້ ຊັບພະຍາກອນດັ່ງກ່າວນັ້ນ ຂະແໜງການຂອງສະພາບັນດິດວິທະຍາສາດແຫ່ງ ສ.ສ.ສ.ຊ. ເຊິ່ງໃນໄລຍະເວລາສັ້ນໆ ໄດ້ກາຍເປັນສູນກາງວິທະຍາສາດທີ່ສຳຄັນແຫ່ງໂຊວຽດແລະໂລກນັ້ນ ກໍໄດ້ຮັບການຈັດຕັ້ງຂຶ້ນຢູ່ໃກ້ໆກັບເມືອງ ໃນໂວຊີບີລະສະກະ.

ພວກນັກວິທະຍາສາດແລະນັກວິສະວະກອນໂຊວຽດໄດ້ສ້າງເຕົາຫລອມເຫລັກແລະເຕົາຫລອມເຫລັກກ້າ ທີ່ດີທີ່ສຸດໃນໂລກຂຶ້ນ ເຊິ່ງບັງຄັບບັນຊາດ້ວຍເຄື່ອງອັດຕະໂນມັດ ຂອງມັນເອງຢ່າງຄົບຖ້ວນ.

ຊາວກຳມະກອນ-ໄດ້ແກ່ພວກນັກລິເລີ່ມແລະນັກປະດິດສ້າງການຜະລິດກໍໄດ້ເຮັດວຽກຄຽງຄູ່ໄປກັບພວກນັກວິທະຍາສາດ. ທຸກໆປີພວກເຂົາໄດ້ສ້າງສິ່ງປະດິດຄິດແຕ່ງຂຶ້ນ ຫລາຍພັນຢ່າງຢູ່ໃນ ສ.ສ.ສ.ຊ. ການເຂົ້າຮ່ວມໃນການແກ້ບັນຫາວິທະຍາສາດຂອງຊາວກຳມະກອນ ໄດ້ກາຍເປັນແບບແຜນປະເພນີ ຢູ່ໃນປະເທດຂອງລະບອບສັງຄົມນິຍົມ ທີ່ມີໄຊຊະນະແລ້ວ. ຊາວຜູ້ອອກແຮງງານໃນຕົວເມືອງ ແລະຊົນນະບົດ ບໍ່ແມ່ນ ເປັນຜູ້ປະຕິບັດທີ່ຂະຫຍັນຢ່າງງ່າຍໆເທົ່ານັ້ນ ແຕ່ຍັງເປັນຜູ້ສ້າງສາທີ່ມີຄວາມສົນໃຈໃນການໃຊ້ຜົນສຳເລັດໃໝ່ໆ ທາງດ້ານ ວິທະຍາສາດແລະເຕັກນິກ ເຂົ້າໃນການຜະລິດອີກດ້ວຍ.

ເມື່ອຮູ້ຕົວວ່າ ໄດ້ຮັບການສະຫນັບສະຫນູນຢ່າງຫມັ້ນຄົງຖາວອນແລ້ວ, ພວກນັກວິທະຍາສາດໂຊວຽດ ກໍໄດ້ອຸທິດສະຕິປັນຍາແລະຄວາມຮູ້ຂອງຕົນທັງຫມົດ ໃຫ້ແກ່ປະຊາຊົນ. ພວກນັກການແພດກໍໄດ້ກຳຈັດພະຍາດທີ່ຮ້າຍແຮງ ເຊັ່ນໂລກຫມາກໄຂ່ຫລັງອັກເສບ ແລະໂລກຫມາກສຸກຫມາກໃສໄດ້ຢ່າງສິ້ນເຊີງ; ພວກນັກຄະນິດສາດ ໄດ້ມີລະບົບຈັກຄິດໄລ່ໄດ້ຢ່າງດີເລີດເຊິ່ງມັກເອີ້ນກັນວ່າ "ຈັກຄິດໄລ່"; ພວກນັກເຄມີກໍໄດ້ປະດິດສ້າງບໍ່ພຽງແຕ່ວັດຖຸປະກອບໃຫມ່ໆຫລາຍຢ່າງເທົ່ານັ້ນ ແຕ່ຍັງ ໄດ້ຮຽນຮູ້ປະດິດ ເພັດທຽມອີກດ້ວຍ ເຊິ່ງສາມາດນຳເອົາໄປໃຊ້ສຳລັບຂຸດບໍ່ນ້ຳເລິກໆໄດ້,ສຳລັບຕັດເຫລັກແລະສຳລັບວັດຖຸປະສົງອື່ນໆອີກ. ປາກົດວ່າເມື່ອບໍ່ດົນມານີ້ ເຮືອບິນອາຍພົ່ນ ລຳທຳອິດກໍໄດ້ປາກົດຂຶ້ນຢູ່ໃນ ສ.ສ.ສ.ຊ. ປະຈຸບັນນີ້ສາຍການບິນອາຍພົ່ນທີ່ວ່ອງໄວ ກໍແມ່ນເປີດຂຶ້ນຮັບໃຊ້ສາຍການບິນ ທຸກແຫ່ງ ເຊື່ງຕິດຕໍ່ລະຫວ່າງ ສ.ສ.ສ.ຊ.ກັບປະເທດອື່ນໆແລະເມືອງໃຫຍ່ໆຕ່າງໆຂອງໂຊວຽດ ພາຍໃນປະເທດ.

ທົ່ວໂລກໄດ້ຮັບຮູ້ຜົນສຳເລັດ ອັນມີຊື່ສຽງດົງດັງ ຂອງນັກວິທະຍາສາດໂຊວຽດ ໃນການເອົາຊະນະ ແລະໃນການສຶກສາຄົ້ນຄວ້າອາວະກາດຈັກກະວານ. ໃນປີ ໑໙໕໗ ສະຫະພາບໂຊວຽດໄດ້ສົ່ງດາວທຽມຂຶ້ນຈາກໂລກ ໄປສູ່ອາວະກາດ ເປັນເທື່ອທຳອິດໃນໂລກ. ໃນປີ ໑໙໖໑ ຄົນ ສະຫະພາບໂຊວຽດຊື່ ຢູລີ ກາກາລິນ ບຸກຄົນທຳອິດຈາກໂລກ ທີ່ນັ່ງຢູ່ໃນຍານອາວະກາດໂຊວຽດ ຊື່ "ໂວສະຕົກ" ກໍໄດ້ທຳການບິນ ອ້ອມຈັກ

ກະວານ. ຍານອາວະກາດທີ່ຕິດຕັ້ງເຄື່ອງມືວິທະຍາສາດ ໂຊວຽດໄດ້ສົ່ງຂຶ້ນໄປຮອດດວງຈັນແລະດາວພະສຸກ (ວີນັດ) ເປັນເທື່ອທຳອິດ. ນັກອາວະກາດຍິງໂຊວຽດ ຜູ້ທີ່ບິນຂຶ້ນສູ່ ອາວະກາດເປັນຄົນທຳອິດນັ້ນ ໄດ້ແກ່ ວາເລນຕີນາ ເຕເລສະໂກ-ວາ ແລະນັກອາວະກາດໂຊວຽດຜູ້ທີ່ຍ່າງອອກຈາກຍານອາວະກາດເປັນຄົນທຳອິດໄດ້ແກ່ອາເລັກເຊເລໂອນອບ. ຄະນະນັກອາວະກາດໂຊວຽດ ໄດ້ຈັດຕັ້ງຫ້ອງທົດລອງວິທະຍາສາດຂຶ້ນຢູ່ໃນອາວະກາດເປັນເທື່ອທຳອິດ. ໃນປີ ໑໙໗໐ ພວກນັກວິທະຍາສາດໂຊວຽດ ໄດ້ສາມາດທຳການຄົ້ນຄວ້າຜິວຫນ້າດວງຈັນໄດ້ດ້ວຍການຊ່ອຍເຫລືອຈາກເຄື່ອງຈັກວິທະຍາສາດທີ່ຄວບຄຸມຢູ່ເທິງພື້ນໂລກ ເຊິ່ງກໍນັບວ່າເປັນຄັ້ງທຳອິດ ໃນປະຫວັດສາດຂອງການສຳຫລວດອາວະກາດ. ຍານອາວະກາດລູໂນຄົດຂອງໂຊວຽດ ເຊິ່ງຄວບຄຸມຈາກເຄື່ອງມື ຢູ່ເທິງພື້ນໂລກ ໄດ້ເຄື່ອນໄຫວໄປຕາມຫນ້າດວງຈັນ ເປັນໄລຍະຫລາຍກິໂລແມດໂດຍໄດ້ປະຕິບັດໂຄງການຄົ້ນຄວ້າສຳເລັດຫລາຍສົມຄວນແລະໄດ້ເຮັດໃຫ້ວິທະຍາສາດໂລກຮັ່ງມີຂຶ້ນ ດ້ວຍສະຖິຕິ ອັນສຳຄັນໃຫມ່ໆ. ການຄົ້ນຄວ້າອາວະກາດ ແມ່ນພວມດຳເນີນໄປຢູ່ໃນ ສ.ສ.ສ.ຊ. ຕາມແຜນການໄລຍະຍາວນານທີ່ໄດ້ວາງອອກ. ພວກນັກວິທະຍາສາດ ຈາກປະເທດຕ່າງໆຮູ້ສຶກເປັນຫນບຸນຄຸນຕໍ່ຄະນະນັກວິທະຍາສາດໂຊວຽດ ຜູ້ເຊິ່ງເບີກທາງ ສາຍໃຫມ່ໄປສູ່ການຄົ້ນຄວ້າອາວະກາດ ໄວ້ໃຫ້ແກ່ມະນຸດຊາດ. ການດຳເນີນໂຄງການຄົ້ນຄວ້າກ່ຽວກັບອາວະກາດ ແມ່ນຜົນຂອງການ

ຢູລີກາກະລິນຄົນຜູ້ທຳອິດທີ່ບິນອ້ອມໄປໃນອະວະກາດ

ວາເລນຕີນານີໂກລາເຢວາ-ເຕເລສະໂກວາ
ນັກອະວະກາດຍິງຄົນທຳອິດ

ສະແຫວງຫາຄວາມຮູ້ວິທະຍາສາດ ຢ່າງກະຕືລືລົ້ນ ຂອງພວກ ນັກຄະນິດສາດ, ນັກຟີຊິກ, ນັກເຄມີ,ນັກການແພດ, ນັກຈິດຕະວິທະຍາ, ນັກກໍ່ສ້າງໂຊວຽດ ແລະແມ່ນພົນການເຮັດວຽກແບບໝີທົວຄິດປະດິດສ້າງຂອງຊາວກຳມະກອນ ຜູ້ມີອາຊີບແຕກຕ່າງກັນຫລາຍທີ່ສຸດ.

ໃນລະຫວ່າງອຳນາດການປົກຄອງໂຊວຽດນັ້ນ ສະຖາບັນການສຶກສາຊັ້ນສູງຕ່າງໆ ໃນປະເທດໄດ້ຝຶກຝົນອົບຮົມກອງທັບຂອງນັກວິທະຍາສາດເປັນສ່ວນໃຫຍ່. ໃນປະຈຸບັນ ພວກເຂົາເຫລົ່ານີ້ ໄດ້ປະກອບໄປດ້ວຍພວກນັກວິທະຍາສາດ ຈາກໂລກທັງໝົດເຖິງໜຶ່ງສ່ວນສີ່. ຈະບໍ່ມີກອງປະຊຸມວິທະຍາສາດລະຫວ່າງຊາດໃດທີ່ດຳເນີນໄປໂດຍບໍ່ມີພວກນັກວິທະຍາສາດ ໂຊວຽດເຂົ້າຮ່ວມຢ່າງຂະຫຍັນຂັນແຂງ ຜູ້ທີ່ເຮັດທຸກສິ່ງ ໃນ ອຳນາດຂອງຕົນ ເພື່ອເຮັດໃຫ້ທຳມະຊາດຮັບໃຊ້ມະນຸດຢ່າງມີປະສິດທິພາບຂຶ້ນ, ເພື່ອລຶດຜ່ອນແລະປັບປຸງການເຮັດວຽກຂອງຜູ້ຄົນທັງຫລາຍ,ເພື່ອກຳຈັດຄວາມເຈັບໄຂ້ໄດ້ປ່ວຍ ຈາກ ພວກເຂົາແລະເພື່ອເຮັດໃຫ້ຊີວິດຂອງມະນຸດຍືນຍາວຕໍ່ໄປ.ປະເທດໂຊວຽດທີ່ເປັນປະເທດສັງຄົມນິຍົມທີ່ຂະຫຍາຍຕົວແລ້ວແມ່ນອຳນວຍທຸກໆໂອກາດໃຫ້ແກ່ນັກວິທະຍາສາດ ເພື່ອດຳເນີນ ການຄົ້ນຄວ້າວິທະຍາສາດຢ່າງກ້າຫານທີ່ສຸດ ແລະນຳເອົາສິ່ງທີ່ຄົ້ນພົບນັ້ນມາໃຊ້. ການຂະຫຍາຍຕົວທາງວິທະຍາສາດຢູ່ໃນ ສ.ສ.ສ.ຊ. ແມ່ນໄດ້ຮັບການປະກັນໃຫ້ດຳເນີນໄປຢູ່ໃນປະເທດດ້ວຍການປະຕິວັດວັດທະນະທຳຢ່າງແທ້ຈິງ. ສະຫະພາບ ໂຊ

ວຽດແມ່ນຖືວ່າ ເປັນປະເທດທີ່ມີຄົນອ່ານໜັງສືຫລາຍທີ່ສຸດໃນໂລກ ແລະເປັນປະເທດທີ່ມີປຶ້ມພິມອອກຈຳນວນ ຫລາຍທີ່ສຸດເຊັ່ນດຽວກັນ, ພົນລະເມືອງໂຊວຽດຫລາຍກວ່າ ໗໐ລ້ານຄົນພວມກຳລັງຮຽນໜັງສືຢູ່.ຕົວເລກນີ້ ບໍ່ແມ່ນໂຮມເອົາພຽງແຕ່ເດັກນ້ອຍແລະຊາວໜຸ່ມຜູ້ທີ່ກົດໝາຍແຫ່ງສະຫະພາບໂຊວຽດບັງຄັບໃຫ້ພວກເຂົາໄປຮຽນໜັງສືຢູ່ໂຮງຮຽນຊັ້ນກາງເທົ່ານັ້ນ. ນອກນັ້ນພົນລະເມືອງຜູ້ໃຫຍ່ທຸກໆຄົນ ກໍຍັງມີໂອກາດສືບຕໍ່ການສຶກສາຮ່ຳຮຽນຢູ່ໃນສະຖາບັນຂັ້ນສູງຫລືວ່າ ໂຮງຮຽນ ພິເສດຊັ້ນກາງ. ນັກຮຽນ, ນັກສຶກສາຮ່ຳຮຽນກັນ ໂດຍບໍ່ຕ້ອງເສຍຄ່າ. ນັກສຶກສາໄດ້ຮັບທຶນຮຽນຈາກລັດ ໃນລະຫວ່າງ ສົກ ປີຮຽນນັ້ນ. ສຳລັບບຸກຄົນຜູ້ທີ່ເຮັດວຽກ ແລະຮ່ຳຮຽນຢູ່ໃນໂຮງຮຽນຕອນແລງ ຫລືຢູ່ໃນໂຮງຮຽນທາງໄປສະນີນັ້ນ ລັດແມ່ນໄດ້ອະນຸຍາດໃຫ້ພວກເຂົາລາພັກການໄດ້ຕັ້ງແຕ່ ໓໐ ມື້ ເຖິງ ໔໕ ມື້ ຕໍ່ປີໜຶ່ງຕື່ມອີກ. ປະເທດໂຊວຽດຖືວ່າ ຢູ່ໃນອັນດັບທີໜຶ່ງຂອງໂລກ ໃນການມີນັກວິສະວະກອນທີ່ໄດ້ຮັບປະລິນຍາ. ໜຶ່ງສ່ວນສີ່ຂອງນັກສຶກສາທຸກຄົນໃນໂລກ ກໍຄືໂຊວຽດ ແລະໜຶ່ງສ່ວນສີ່ຂອງນາຍແພດໃນໂລກ ກໍແມ່ນໂຊວຽດ ເຊັ່ນດຽວກັນ. ທຸກໆປີໄດ້ມີຊາວໜຸ່ມ, ນັກປາດໜຸ່ມທີ່ມີນັບສະໝອງດີເຂົ້າມາຮ່ວມໃນວຽກງານວິທະຍາສາດໂຊວຽດ.

ເງື່ອນໄຂອັນຈຳເປັນໃນການສ້າງລະບອບກອມມູນິດບໍ່ແມ່ນມີແຕ່ລະດັບວິທະຍາສາດແລະເຕັກນິກສູງເທົ່ານັ້ນ ແຕ່ຫາກຍັງຕ້ອງມີທ່າທີໃໝ່ຕໍ່ການອອກແຮງງານອີກດ້ວຍ.ປະຫວັດ ສາດ

ທັງຫມົດຂອງປະເທດໂຊວຽດ ແມ່ນສະແດງໃຫ້ເຫັນວ່າ ທ່າທີຂອງຜູ້ຄົນຕໍ່ການອອກແຮງງານ ໄດ້ປ່ຽນແປງໄປ ແນວໃດ.ຜູ້ອ່ານຄົງຈື່ຈຳໄດ້ ກ່ຽວກັບພວກອອກແຮງງານວັນເສົາ ກອມມູນິດໃນໄລຍະສອງສາມປີທຳອິດ ຂອງອຳນາດການປົກຄອງໂຊວຽດ ແລະກ່ຽວກັບຂະບວນການກຳມະກອນແນວຫນ້າແລະສະຕາຄາໂນບໃນລະຫວ່າງແຜນການຫ້າປີຊຸດທຳອິດ.ການປະຕິບັດແຜນການນຳປະເທດໄປສູ່ລະບອບກອມມູນິດຕໍ່ໄປນັ້ນ ແມ່ນ ກໍ່ໃຫ້ເກີດຂະບວນການ ການອອກແຮງງານແບບກອມມູນິດຢ່າງກວ້າງຂວາງ. ຢູ່ໃນໂຮງຈັກໂຮງງານໄດ້ມີຜູ້ຄົນຈຳນວນຫຼາຍຍິ່ງຂຶ້ນ ເຊິ່ງບໍ່ພຽງແຕ່ເຮັດໃຫ້ຕົນເອງ ເຮັດວຽກດີ ເທົ່ານັ້ນແຕ່ຫາກຍັງພະຍາຍາມ ເພື່ອເຮັດໃຫ້ເພື່ອນມິດຂອງພວກເຂົາເຮັດວຽກດີດີກັນ. ຄວາມພະຍາຍາມຊ່ອຍເຫລືອໃຫ້ເພື່ອນມິດຂອງຕົນເຮັດວຽກດີ, ຄວາມຮັບຜິດຊອບສູງ ເພື່ອການຜະລິດແບບເປັນຄະນະ-ທັງຫມົດແມ່ນສະແດງໃຫ້ເຫັນຄວາມ ດີເດັ່ນຂອງກຳມະກອນໂຊວຽດຜູ້ກ້າວຫນ້າ. ຢູ່ໃນໂຮງຈັກໂຮງງານແຫ່ງໃດຫນຶ່ງອາດຈະພົບພໍ້ຫນ່ວຍຫລືກຸ່ມຜູ້ທີ່ໄດ້ຮັບຊື່ເປັນຫນ່ວຍອອກແຮງງານແບບກອມມູນິດ.ໂຮງຈັກໂຮງງານທີ່ໄດ້ຮັບຊື່ອັນດີເດັ່ນນີ້ ແມ່ນມີຢູ່ທົ່ວປະເທດ.ຂະບວນການອັນນີ້ໄດ້ຮັບຊື່ແນວນັ້ນ ເພື່ອວັດຖຸປະສົງອັນໃດ? ກ່ອນອື່ນຫມົດ ແມ່ນເພື່ອສະມາຊິກທັງຫມົດ ຂອງຫນ່ວຍຫລືວ່າຂອງກຸ່ມການຜະລິດ ທັງຫມົດທີ່ບໍ່ພຽງແຕ່ຈັດຕັ້ງການປະຕິບັດແຜນການໃຫ້ສຳເລັດເທົ່ານັ້ນແຕ່ຫາກຍັງພະຍາຍາມທີ່ຈະເຮັດໃຫ້ກຳລັງແຮງ ຂະຫຍາຍຕົວຂຶ້ນ

ແລະນຳເອົາການປັບປຸງບາງຢ່າງມາໃຊ້ ເພື່ອເຮັດ ໃຫ້ຜຽນ ຂອງການຜະລິດແຕ່ລະຄັ້ງ ໄດ້ຜະລິດວັດຖຸສິ່ງຂອງ ທີ່ມີຄຸນນະພາບດີເລີດຫລາຍຂຶ້ນ. ແຕ່ວ່າເພື່ອຈະປັບປຸງການຜະລິດ ໄດ້ນັ້ນ ມັນຈຳເປັນຕ້ອງມີຄວາມຮູ້ໃນດ້ານເຕັກນິກ ເປັນຢ່າງດີ. ດັ່ງນັ້ນສະມາຊິກທັງໝົດຂອງໜ່ວຍຫລືວ່າ ຂອງກຸ່ມ ການຜະລິດທັງໝົດ ຈຶ່ງຈຳຕ້ອງຍົກລະດັບຄວາມຮູ້ຂອງຕົນໃຫ້ສູງຂຶ້ນ. "ຢ່າປ່ອຍເວລາໃຫ້ລ່ວງກາຍໄປ ພາຍຫລັງເລີກການແລ້ວ , ໂຮງຮຽນ, ໂຮງຮຽນເຕັກນິກແລະສະຖາບັນຕ່າງໆພວມຄອຍຖ້າພວກທ່ານຢູ່. ຖ້າຫາກທ່ານມີເວລາຫວ່າງນາທີໜຶ່ງ ຂໍຈົ່ງຈັບປຶ້ມຂຶ້ນມາອ່ານ. ຈົ່ງຮ່ຳຮຽນເພື່ອເອົາໄປໃຊ້ໃຫ້ ເປັນປະໂຫຍດແກ່ປະຊາຊົນ." ຄຳຂວັນນີ້ ແມ່ນໄດ້ຮັບ ການສະໜີຂຶ້ນມາຈາກໜ່ວຍອອກແຮງງານແບບກອມມູນິດໜ່ວຍໜຶ່ງ.

ສະມາຊິກຂອງໜ່ວຍອອກແຮງງານ ແບບກອມມູນິດບໍ່ພຽງແຕ່ເຮັດວຽກແລະຮ່ຳຮຽນໄດ້ຢ່າງດີເລີດເທົ່ານັ້ນ. ສະມາຊິກທຸກຄົນໄປຫລິ້ນກິລາ ຫລືວ່າ ໃຫ້ຄວາມສົນໃຈໃນດ້ານສິລະປະ, ແຕ່ວ່າພວກເຂົາທັງໝົດ ກໍໄດ້ພະຍາຍາມ ທີ່ຈະເຮັດໃຫ້ພວກເພື່ອນຂອງພວກເຂົາ ເກີດມີຄວາມສົນໃຈ ໃນວຽກງານ ສະໜັກຫລິ້ນນັ້ນເປັນຢ່າງດີ. ພວກເຂົາດຳເນີນຊີວິດໄປ ຢ່າງຂະຫຍັນຂັນແຂງແລະຄວາມສົນໃຈ ທາງສ່ວນຕົວ ຂອງພວກເຂົານັ້ນກໍພົວພັນສະໜິດແໜ້ນກັບຜົນປະໂຫຍດຂອງສັງຄົມ.

ບາງເທື່ອກໍປາກົດຂຶ້ນມາວ່າ ຄົນຕ້ອງການຫຍັງອີກ? ເພາະວ່າເຂົາແລະໜ່ວຍຂອງເຂົາເຮັດວຽກຢ່າງດີເລີດ. ແຕ່ ວ່າ

ເຂົາກໍຍັງເຫັນວ່າ ການຈັດຕັ້ງການອອກແຮງງານຢູ່ໃນໜ່ວຍອື່ນບໍ່ເປັນທີ່ພໍໃຈ, ເຂົາກໍສົນທະນາເລື່ອງນັ້ນ ກັບພັກພວກຂອງເຂົາກ່ອນ ແລະແລ້ວກໍຂໍຮ້ອງຕໍ່ຜູ້ອໍານວຍການໂຮງຈັກ ໃຫ້ສົ່ງເຂົາໄປສັງກັດຢູ່ກັບໜ່ວຍນັ້ນ. ຢູ່ໃນໜ່ວຍໃໝ່ນີ້ ເຂົາກໍແລກປ່ຽນບົດຮຽນຂອງເຂົາກັບໜ່ວຍເຮັດວຽກນັ້ນ, ຊັກຊວນ ໃຫ້ພວກເຂົາມີຄວາມຫ້າວຫັນເຮັດວຽກໃຫ້ດີຂຶ້ນ ແລະ ເຊື່ອໝັ້ນໃນສະມັດຖະພາບຂອງເຂົາທີ່ຈະເຮັດເຊັ່ນນັ້ນໄດ້. ໜ່ວຍເຮັດວຽກຂອງໂຮງຈັກທັງໝົດ ເມື່ອເຫັນວ່າວຽກງານຢູ່ໃນໜ່ວຍນັ້ນ ເຮັດວຽກໄດ້ດີຂຶ້ນ ກໍມີຄວາມຮູ້ສຶກພໍອົກພໍໃຈ. ຄວາມຈິງທີ່ວ່ານີ້ ຖືເປັນຂອງທໍາມະດາຢູ່ໃນປະເທດ ເຊິ່ງເປັນ ບ່ອນທີ່ຊາວຜູ້ອອກແຮງງານເປັນເຈົ້າຂອງຊີວິດ ທີ່ແທ້ຈິງຂອງຕົນ. ວິລະຊົນການອອກແຮງງານສັງຄົມນິຍົມ ອາ. ຊູເລຊີບ, ຄົນຂັບລົດຊຸດດິນ ໄດ້ເລົ່າໄວ້ຢູ່ໃນປຶ້ມຂອງເຂົາຊື່ "ເສັ້ນທາງ ທີ່ຂ້າພະເຈົ້າທ່ອງທ່ຽວໄປ" ວ່າ: "ລົມເວົ້າ ຢ່າງເປີດເຜີຍແລະຢ່າງກົງໄປກົງມາແລ້ວ ຄວາມໄຝ່ຝັນໃນທາງທີ່ດີ ຂອງຂ້າພະເຈົ້າທັງໝົດນັ້ນ ແມ່ນພົວພັນຢູ່ກັບວຽກງານ, ຢູ່ກັບຄວາມປາຖະໜາທີ່ຢາກຈະເຮັດບາງສິ່ງບາງຢ່າງໃຫຍ່ໆ, ບາງສິ່ງບາງຢ່າງທີ່ສໍາຄັນໃຫ້ແກ່ປະເທດຊາດ ແລະ ໃຫ້ແກ່ປະຊາຊົນຂອງຂ້າພະເຈົ້າ ... ຂ້າພະເຈົ້າຮູ້ດີວ່າ ສະວັດດີພາບແລະລາຍໄດ້ຂອງຂ້າພະເຈົ້າເອງ ແລະຂອງຄອບຄົວ ແມ່ນຂຶ້ນຢູ່ກັບລັດທັງໝົດ, ຂຶ້ນຢູ່ກັບອຸດົມສົມບູນ, ຂຶ້ນຢູ່ກັບອໍານາດແລະຊື່ສຽງຂອງປະເທດ."

ຄຳເວົ້າທີ່ຊາວກຳມະກອນໂຊວຽດເວົ້າໄປນັ້ນ ຊາວກຳມະກອນຢູ່ໃນປະເທດທຶນນິຍົມ ບໍ່ອາດເວົ້າໄດ້ ເພາະ ແຮງງານຂອງເຂົາມີແຕ່ສ້າງຄວາມຮັ່ງມີໃຫ້ແກ່ເຈົ້າຂອງໂຮງງານແລະເຮັດວຽກເພື່ອໃຫ້ກອງທຶນຂອງເຂົາດຳລົງຄົງຕົວຢູ່ໄດ້ເທົ່ານັ້ນ.

ພວກກຳມະກອນຜູ້ກ້າວໜ້າ ໃນການຜະລິດ, ແລະກຳມະກອນແນວໜ້າຂອງໜ່ວຍອອກແຮງງານແບບກອມມູນິດເຫລົ່ານີ້ ແມ່ນມີກຽດແລະໄດ້ຮັບຄວາມເຄົາລົບນັບຖືຢູ່ໃນສະຫະພາບໂຊວຽດ.

ຊາວກອມມູນິດແລະຊາວໜຸ່ມ ກົມໂຊໂມນ ຜູ້ທີ່ປະພຶດ ຕົນເປັນຕົວຢ່າງໃຫ້ແກ່ຄົນອື່ນໆນັ້ນ ແມ່ນຢູ່ໃນແຖວໜ້າຂອງພວກນັກກໍ່ສ້າງຊີວິດໃໝ່. ຢູ່ໃນເລນິນກະລາດ ມີໂຮງງານ ສ້າງເຄື່ອງຈັກຂະໜາດໃຫຍ່ຢູ່ແຫ່ງໜຶ່ງ, ໂຮງງານນີ້ ໃສ່ຊື່ຊາວໂບນເຊວິກຜູ້ກ້າວໜ້າຄົນໜຶ່ງ ຊື່ ເຊລະເກ ມິໂລນົບ ກິລົບ. ໃນໝູ່ຊາວກຳມະກອນຫລາຍພັນຄົນ ໃນໂຮງງານແຫ່ງນີ້ ກ. ວ.ໂກໂວລູຊິນ, ຊ່າງສ້ອມແປງຈັກ, ເຮັດວຽກຢູ່ນຳຄົນໜຶ່ງ. ເຂົາເຮັດວຽກໄດ້ເປັນຢ່າງດີ, ດັ່ງນັ້ນລັດຈຶ່ງໄດ້ມອບຕຳແໜ່ງທີ່ມີກຽດຢູ່ໃນ ສ.ສ.ສ.ຊ. ໃຫ້ແກ່ເຂົາ ຄືຕຳແໜ່ງວິລະຊົນການອອກແຮງງານສັງຄົມນິຍົມ.ໂກໂວລູຊິນຊາວກອມມູນິດຄົນນີ້ເປັນຄົນສຸຂຸມ. ເຂົາມີຄວາມສົນໃຈໃນການທີ່ຈະເຮັດໃຫ້ວຽກງານໃນໂຮງງານຂອງເຂົາດຳເນີນໄປໄດ້ຢ່າງດີເລີດ ດັ່ງນັ້ນເຂົາຈຶ່ງບໍ່ເຮັດວຽກຢູ່ແຕ່ໃນບ່ອນທີ່ເຂົາເຮັດວຽກ ຢ່າງ ດຽວເທົ່ານັ້ນ, ເຂົາຍັງໄດ້ພະຍາຍາມເຮັດໃຫ້ກົມຈັກໂຮງງານ ທີ່

ສະລັບສັບຊ້ອນນັ້ນ ແລ່ນໄປຢ່າງຄ່ອງແຄວ ແລະກົມກຽວກັນ. ພວກຄະນະຊີ້ນຳໂຮງງານ ໄດ້ພິຈາລະນາຄຳສະເໜີຂອງໂກໂວລູຊິນຢ່າງເອົາໃຈໃສ່ ແລະ ພວກກຳມະກອນ ແລະ ນັກວິສະວະກອນໜຸ່ມ ກໍໄດ້ມາຂໍຄຳປຶກສາ ແນະນຳ ຈາກເຂົາສະເໝີ. ໂກໂວລູຊິນແລະພັກພວກຮ່ວມວຽກງານຂອງເຂົາຮູ້ສຶກຕົວຢູ່ສະເໝີວ່າ ພວກເຂົາເປັນເຈົ້າຂອງໂຮງງານ ຢ່າງແທ້ຈິງ. ພວກເຂົາເຂົ້າໃຈຕໍ່ຄວາມຮັບຜິດຊອບ ທາງສ່ວນຕົວອັນສູງຂອງຕົນ ເພື່ອປະຕິບັດແຜນການໃຫ້ສຳເລັດ ເຊິ່ງຈະນຳພາປະຊາຊົນໂຊວຽດ ກ້າວເຂົ້າໄປສູ່ລະບອບກອມມູນິດ.ຊາວຜູ້ອອກແຮງງານເລນິນກະລາດ ໄດ້ເລືອກເອົາຊ່າງສ້ອມແປງຈັກ ຄື ໂກໂວລູຊິນ ເປັນຜູ້ແທນຂອງສະພາໂຊວຽດ ສູງສຸດແຫ່ງສາທາລະນະລັດສັງຄົມນິຍົມສະຫະພັນທະລັດ ໂຊວຽດລັດເຊຍ.

ແຕ່ວ່າມັນກໍບໍ່ມີພຽງແຕ່ບັນດາຜູ້ແທນ ຂອງສະພາ ໂຊວຽດເທົ່ານັ້ນ ທີ່ໂຮມເອົາວຽກງານຂອງພວກເຂົາ ເຂົ້າກັບກິດຈະການຂອງສັງຄົມຕ່າງໆ. ຊາວກຳມະກອນໂຮງງານກີລົບ ປະມານ ໝ໘໔ ກໍເຂົ້າຮ່ວມຢູ່ໃນກິດຈະການຂອງພັກ, ຂອງ ອົງການຊາວໜຸ່ມກົມໂຊໂມນ, ຂອງອົງການສະຫະພັນ ກຳມະບານ, ໃນກິດຈະການຂອງກອງປະຊຸມ ວ່າດ້ວຍການຜະລິດ, ໃນວຽກງານການປະດິດຄິດສ້າງ ແລະ ໃນວຽກງານຂອງສັງຄົມຕ່າງໆ. ໂດຍທາງພາກປະຕິບັດແລ້ວ ຊາວກຳມະກອນ ວິສາຫະກິດແຫ່ງນັ້ນ ເກືອບໝົດທຸກຄົນ ກໍແມ່ນເຂົ້າຮ່ວມ ຢູ່ ໃນ

ການແກ້ບັນຫາຕ່າງໆຂອງການເຄື່ອນໄຫວ ທາງດ້ານ ສິ່ງຄົມ ແລະລັດ. ພວກເຂົາດຳລົງຊີວິດ ແລະເຮັດວຽກຢູ່ໃນໂຮງຈັກ ໂຮງງານຕ່າງໆ ແລະໃນສະຫະກອນກະເສດທຸກແຫ່ງ ໃນປະເທດໂຊວຽດແນວນັ້ນ.

ບົດບາດສຳຄັນຂອງຊົນຊັ້ນກຳມະກອນ ໃນຖານະ ເປັນຜູ້ສ້າງສາລະບອບກອມມູນິດ ແມ່ນມີຄວາມເຂັ້ມແຂງຂຶ້ນໄປພ້ອມພ້ອມກັບການເຕີບໃຫ່ຍຂະຫຍາຍຕົວລະດັບວັດທະນະທຳ,ການສຶກສາແລະກິດຈະການທາງການເມືອງ.

ຊາວຜູ້ອອກແຮງງານທາງດ້ານກະສິກຳ ກໍສະແດງຄວາມຮູ້ສຶກຮັບຜິດຊອບຕໍ່ວຽກງານຂອງລັດຢ່າງສູງເຊັ່ນດຽວກັນ.

ໃນແຂວງກາລີນິນນັ້ນ ມີບ້ານນ້ອຍແຫ່ງໜຶ່ງຊື່ເຊນໂກເຢ. ຢູ່ທີ່ເຮືອນແຄມຖະໜົນຫລັງໜຶ່ງ ໄດ້ປະດັບປະດາ ໄປດ້ວຍດາວແດງ ເຊິ່ງເມື່ອກ່ອນຊາວສະຫະກອນກະເສດຮຸ່ນກ່ອນ ຊື່ອາ.ກ.ຊີກາລິບ ໃນສະຫະກອນກາລີນິນອາໄສຢູ່ແລະເຂົາໄດ້ເຮັດວຽກຢູ່ໃນສະຫະກອນດັ່ງກ່າວ ໔໐ ປີ ລ່ວງມາແລ້ວ.ປະຈຸບັນນີ້ ເຂົາກິນເບັ້ຍບຳນານ,ໄດ້ຮັບຕຳແໜ່ງເປັນ"ຊາວສະຫະກອນກະເສດທີ່ມີກຽດ", ແຕ່ທຸກໆເຊົ້າໃດ ນາງກໍຟ້າວໄປເບິ່ງຄອກລ້ຽງສັດຄືກັນກັບແຕ່ກ່ອນ.

ນາງເວົ້າວ່າ "ຂ້ອຍເຮັດວຽກ ບໍ່ແມ່ນ ຢາກໄດ້ ເຂົ້າຈີ່, ຂ້ອຍມີທຸກສິ່ງທຸກຢ່າງທີ່ຂ້ອຍຕ້ອງການ. ແຕ່ຂ້ອຍກໍບໍ່ສາມາດທີ່ຈະຢູ່ຫ່າງໄກຈາກວຽກງານສະຫະກອນກະເສດໄດ້."

ໃນລະຫວ່າງປີຫລັງສົງຄາມນັ້ນ ຊາວຜູ້ອອກແຮງງານດ້ານ

ກະສິກຳກໍໄດ້ຍົກລະດັບການສຶກສາຂັ້ນສູງ ຢ່າງຫລວງຫລາຍ. ໃນປີ ໑໙໔໑ ປະຊາຊົນໃນຊົນນະບົດໄດ້ຮັບການສຶກສາຊັ້ນສູງ ແລະຊັ້ນກາງພຽງແຕ່ ໓% ເທົ່ານັ້ນ, ແຕ່ຄັນມາຮອດທ້າຍທົດສະວັດທີ ໖ ຊາວຊົນນະບົດກໍໄດ້ສຳເລັດຈາກ ໂຮງຮຽນຊັ້ນກາງແລະຊັ້ນສູງເຖິງ ໗໙% ແລະໃນລະຫວ່າງທົດສະວັດທີ ໘ ລະດັບການສຶກສານີ້ ກໍໄດ້ຂະຫຍາຍອອກເຖິງ ໓໐%. ການນຳເອົາເຄື່ອງຈັກເຂົ້າມາໃຊ້ໃນການຜະລິດກະສິກຳນັ້ນ ເຮັດໃຫ້ລັກສະນະການອອກແຮງງານຂອງຊາວນານັ້ນ ປ່ຽນແປງ ໄປ ແລະເຮັດໃຫ້ວຽກງານຄ້າຍຄືກັນກັບວຽກງານຂອງຊາວກຳມະກອນຫລາຍຂຶ້ນ.

ຄວາມເປັນຫ່ວງເປັນໄຍ ທາງດ້ານເສດຖະກິດ ຂອງຜູ້ຄົນທັງຫລາຍກ່ຽວກັບການເຮັດໃຫ້ເສດຖະກິດ ຂອງປະເທດ ມີຄວາມເຂັ້ມແຂງຂຶ້ນແລະມີການ ຂະຫຍາຍຕົວນັ້ນ ແມ່ນປາກົດຂຶ້ນຢູ່ໃນວຽກງານຕົວຈິງແລ້ວ. ທົ່ວປະເທດໄດ້ເກີດມີການແຂ່ງຂັນກັນເພື່ອເຮັດໃຫ້ການຜະລິດ ກ້າວເຂົ້າສູ່ລະດັບ ມາດຕາຖານທີ່ດີທີ່ສຸດໃນໂລກ. ແຕ່ລະມື້ແຕ່ລະວັນ ໂຮງຈັກໂຮງງານໃຫມ່ກໍໄດ້ຮັບສິດໃຫ້ຕິກາເຄື່ອງໝາຍ ທີ່ມີຄຸນນະພາບດີໃສ່ສິນຄ້າຂອງຕົນໄດ້.

ຂະບວນການເພື່ອອອກແຮງງານກອມມູນິດໄດ້ສະແດງອອກຢ່າງແຈ່ມແຈ້ງແລ້ວວ່າ ຊາວກຳມະກອນ ຜູ້ທີ່ກ້າວໜ້າ ແມ່ນເຂົ້າໃຈແລະປະຕິບັດແຜນການຫ້າປີສ່ວນຕົວ ຂອງຕົນ ໄປໄດ້ຢ່າງສຳເລັດຜົນ. ແຜນການເຫລົ່ານີ້ໄດ້ວາງອອກດ້ວຍຄວາມ

ອາດສາມາດເປັນໄປແລະເປັນຄວາມປາຖະໜາ ອັນດີ ເລີດ ຂອງຊາວກຳມະກອນນັ້ນ ແມ່ນບໍ່ພຽງແຕ່ອຳນວຍໃຫ້ວຽກງານ ການຜະລິດດຳເນີນໄປໄດ້ສຳເລັດກ່ອນລະດັບຄາດໝາຍເທົ່ານັ້ນ ແຕ່ຫາກຍັງເປັນການຍົກລະດັບວັດທະນະທຳ ແລະເຕັກນິກຂອງຊາວກຳມະກອນຂຶ້ນອີກດ້ວຍ. ຢູ່ໃນທຸກໂຮງຈັກ ໂຮງງານມີຊາວຜູ້ອອກແຮງງານ ຜູ້ເຊິ່ງເຮັດວຽກເພື່ອແຜນການປີຕໍ່ໄປນັ້ນ ພວມຮຽນຢູ່ໃນໂຮງຮຽນທາງໄປສະນີແລະຫຍຸ້ງຢູ່ກັບການຄິດປະດິດສ້າງທາງດ້ານເຕັກນິກ.

ເມື່ອໄດ້ສຶກສາຄົ້ນຄວ້າຂໍ້ສະເໜີ ຂອງຊາວ ກຳມະກອນແລ້ວ, ລັດຖະບານໂຊວຽດກໍໄດ້ດຳເນີນວຽກງານ ກ່ຽວ ກັບການປັບປຸງແຜນການແລະການຈັດຕັ້ງການອອກແຮງງານເພື່ອຍົກຄວາມຮັບຜິດຊອບທາງສ່ວນຕົວຂອງຊາວກຳມະກອນທຸກຄົນຂຶ້ນ, ເພື່ອເຮັດໃຫ້ການຜະລິດຂອງໂຮງຈັກໂຮງງານໄດ້ຮັບຜົນສຳເລັດ.

ການປະຕິບັດແຜນການຫ້າປີຊຸດທີ ໘ ໃນປີ ໑໙໗໐ ໄດ້ສຳເລັດລົງນັ້ນ ພໍດີຍັງເອີນມາບັນຈົບຄົບກັນກັບວັນອັນສຳຄັນທີ່ສຸດຄື ວັນເກີດຄົບຮອບຮ້ອຍປີ ຂອງທ່ານເລນິນ ຜູ້ຈັດຕັ້ງລັດ ໂຊວຽດເຊິ່ງແນວຄິດແລະຄວາມຄິດຂອງທ່ານ ໄດ້ເຮັດໃຫ້,ພວມເຮັດໃຫ້ແລະກໍຈະເຮັດໃຫ້ປະຊາຊົນໂຊວຽດ ແລະຊາວຜູ້ອອກແຮງງານທົ່ວໂລກຖືເອົາເປັນຕົວຢ່າງ ໃນການຕໍ່ສູ້ເພື່ອຄວາມກ້າວໜ້າທາງສັງຄົມແລະເພື່ອສັນຕິພາບທົ່ວໂລກ.ບຸນສະຫຼອງວັນເກີດຂອງເລນິນ ໄດ້ດຳເນີນໄປຄືກັບພໍ່ບຸນຂອງປວງປະຊາ

ຊົນ.

ກອງປະຊຸມໃຫຍ່ພັກກອມມູນິດແຫ່ງສະຫະພາບໂຊວຽດຄັ້ງທີ ໒໕ ເຊິ່ງເປີດຂຶ້ນໃນປີ ໑໙໗໖ ນັ້ນ ໄດ້ກຳນົດທິດທາງຂັ້ນພື້ນຖານໃນການພັດທະນາເສດຖະກິດແຫ່ງຊາດ ຂອງ ສ.ສ.ສ.ຊ.ໃນປີ ໑໙໗໖-໑໙໘໐.ຫລັງຈາກນັ້ນ ເປົ້າຫມາຍຂອງ ພັກກ່ຽວກັບແຜນການຫ້າປີ ໃນການພັດທະນາ ເສດຖະກິດ ແຫ່ງຊາດກໍໄດ້ຖືກນຳຂຶ້ນມາພິຈາລະນາກັນ ຢ່າງກວ້າງຂວາງຢູ່ໃນປະເທດ ແລະອົງການຂັ້ນສູງປະຈຳປະເທດ-ຄືສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ. ກໍໄດ້ລົງມະຕິຮັບເອົາແຜນການຫ້າປີຊຸດທີ ໙ ເຊິ່ງຮັບປະກັນການປະຕິບັດການຂະຫຍາຍຕົວເສດຖະກິດຂອງປະເທດ ແລະສະວັດດີພາບຂອງປະຊາຊົນໂຊວຽດຕໍ່ໄປ. ຍົກຕົວຢ່າງການຂະຫຍາຍການຜະລິດຊຸດສາຫະກຳສຳລັບແຜນການຫ້າປີ ກໍໄດ້ເພີ່ມຂຶ້ນໄປເຖິງ ໔໓%, ກອງທຶນຂັ້ນພື້ນຖານກໍໄດ້ເຕີບໃຫຍ່ຂຶ້ນ ໑ ເທົ່າເຄິ່ງ ແລະການພັດທະນາກະສິກຳກໍໄດ້ຮັບການລົງທຶນໃຫ້ເຖິງ ໑໓໑ ຕື້ຫລຽນນັ້ນ ຫມາຍຄວາມວ່າຫລາຍກວ່າແຜກການຫ້າປີຊຸດທີ ໘ ເຖິງ໔໙ຕື້ຫລຽນ.

ໃນລະຫວ່າງແຜນການຫ້າປີຊຸດທີ ໙ ນີ້,ເງິນເດືອນລະດັບຂັ້ນກາງຂອງຊາວກຳມະກອນແລະພະນັກງານ ໄດ້ຍົກສູງ ຂຶ້ນຈາກ ໑໒໒ ຫລຽນ ເຖິງ ໑໔໖ ຫລຽນ, ຮ່ວມກັນກັບ ຜົນ ປະໂຫຍດຈາກກອງທຶນທາງສັງຄົມອີກ ກໍໄດ້ປະກອບ ເຂົ້າ ເປັນເງິນເຖິງ ໑໙໘ ຫລຽນ.

ລັດສັງຄົມນິຍົມ ບໍ່ພຽງແຕ່ຍົກລະດັບ ເງິນເດືອນ ຂັ້ນກາງ

ຂອງຊາວກຳມະກອນແລະພະນັກງານ ໃຫ້ສູງຂຶ້ນຢ່າງຫມັ້ນຄົງຖາວອນເທົ່ານັ້ນ ແຕ່ຫາກຍັງໃຊ້ຈ່າຍເງິນໄປ ສຳລັບການສຶກສາແລະການຮັກສາສຸຂະພາບຂອງປະຊາຊົນໂຊວຽດ ອີກດ້ວຍແລະແຕ່ລະປີ ການໃຊ້ຈ່າຍກ່ຽວກັບເລື່ອງນີ້ ກໍໄດ້ເພີ່ມຂຶ້ນໄປອີກເຊັ່ນດຽວກັນ. ພ້ອມດຽວກັນນັ້ນ ສະຖາບັນ, ໂຮງຮຽນ, ໂຮງຮຽນອະນຸບານ, ໂຮງຫມໍໃຫມ່ທີ່ມີການຕິດຕັ້ງ ອຸປະກອນທັນສະໄຫມກໍໄດ້ຮັບການສ້າງຂຶ້ນ. ການສ້າງສາບ່ອນຢູ່ອາໄສກໍໄດ້ຂະຫຍາຍຕົວອອກແລະພື້ນທີ່ຈຸ້ມຢູ່ອາໄສຫລາຍກວ່າ ໑໐໐ ລ້ານແມັດກ້ອນ ກໍໄດ້ຮັບການສ້າງສາຂຶ້ນທຸກໆປີ, ອັນນີ້ຫມາຍຄວາມວ່າ ທຸກໆນີ້ປະຊາຊົນໂຊວຽດ ໄດ້ມີບ່ອນຢູ່ອາໄສ ທີ່ປະກອບດ້ວຍເຄື່ອງທັນສະໄຫມຫລາຍກວ່າ ໖ ພັນແຫ່ງ.

ໃນໄລຍະປີທີ່ແລ້ວມານັ້ນ ອັດຕາເງິນທຶນຮຽນສຳລັບນັກສຶກສາແຫ່ງສະຖາບັນແລະໂຮງຮຽນເຕັກນິກ ກໍໄດ້ເພີ່ມຂຶ້ນ. ແຕ່ລະປີການສ້າງສາຫໍພັກນັກສຶກສາທີ່ສະດວກສະບາຍສິບພັນແຫ່ງກໍໄດ້ຮັບການສ້າງຂຶ້ນ. ນັກສຶກສາໂຊວຽດ ບໍ່ມີຄວາມຈຳເປັນທີ່ຈະເພີ່ມເງິນທຶນຮຽນຂອງຕົນຂຶ້ນ ໂດຍໄປເຮັດວຽກ ຢູ່ ໃນບ່ອນຕ່າງໆ ເຊິ່ງເລື່ອງນີ້ໄດ້ມີການແຜ່ຂະຫຍາຍກັນຫຼາຍຢ່າງກວ້າງຂວາງຢູ່ໃນບັນດາປະເທດທຶນນິຍົມ ໃນຫມູ່ພວກນັກ ສຶກສາທີ່ມາຈາກວົງການຊາວຜູ້ອອກແຮງງານ.

... ຕາມສາຍທາງຈາກມົດສະກູ ໄປຫາເລນິນ ກະລາດ ໄດ້ມີລົດນັກທ່ອງທ່ຽວ ສອງຜົວເມຍຈາກສະຫະລັດອາເມລິກາ ໄດ້ເກີດອຸປັດຕິເຫດຂຶ້ນ.ເມຍໄດ້ຮັບຄວາມປອດໄພ ຈາກການ

ຫໍພັກຜ່ອນ "ນັກຂັບລົດໄຟ ທີ່ລະວົບ"
ຣິມຝັ່ງຕາເວັນອອກແຫລມກະລີມ.



ການຟ້ອນບາເລໃນບົດຟ້ອນ "ທະເລສາບຂອງນົກຫົງ"
ໃນເວທີສະແດງຂອງໂຮງລະຄອນໂບນໂຊຍທີມົດສະກູ

ບາດເຈັບ ສ່ວນຜົວຜູ້ທີ່ເປັນພະນັກງານ ຈາກບໍລິສັດ ການລ້າ ແຫ່ງໜຶ່ງໄດ້ຖືກສົ່ງໄປຍັງໂຮງໝໍ ທີ່ຢູ່ໃກ້ຄຽງ. ນາຍໝໍໄດ້ໃຊ້ຄວາມຈຳເປັນທຸກຢ່າງ ເພື່ອເຮັດໃຫ້ສຸຂະພາບ ຂອງເຂົາເປັນປົກກະຕິ. ແຕ່ຄົນເຈັບພຽງແຕ່ເລີ່ມຕົ້ນຍ່າງໄປມາໄດ້ເທົ່ານັ້ນ ກໍໄດ້ສະແດງຄວາມປະສົງ ຢາກຈະອອກຈາກໂຮງໝໍໄປຢ່າງບໍ່ຊັກຊ້າ. ເບິ່ງຄືຈັ່ງວ່າ ນັກທ່ອງທ່ຽວຊາວຕ່າງປະເທດຜູ້ທີ່ໄດ້ຮັບບາດເຈັບນັ້ນຄິດວ່າ ຖ້າຫາກຕົນຈະຢູ່ໃນໂຮງໝໍຕໍ່ໄປຈັກອາທິດໜຶ່ງອີກ ຕົນກໍຈະຕ້ອງຈ່າຍເງິນຄ່າປິ່ນປົວ ຂອງຕົນທັງໝົດ ແລະໃນທ້າຍທີ່ສຸດ ເຂົາກໍໝົດຄວາມສົງໃສວ່າຢູ່ໃນປະເທດໂຊວຽດນັ້ນ ບໍ່ມີການເສຍເງິນຄ່າສຳລັບ ການປິ່ນປົວແຕ່ຢ່າງໃດເລີຍ.

ທຸກໆປີໃນລະດູຮ້ອນ ລົດຍົນ, ລົດໄຟ ແລະ ກຳປັ່ນຕ່າງໆ ກໍພັນທຸກເອົາເດັກນ້ອຍໂຊວຽດສົ່ງໄປຍັງສະຖານທີ່ພັກຜ່ອນ ທີ່ມີທິວທັດອັນສວຍງາມ ເຊິ່ງເປັນບ່ອນທີ່ພວກເຂົາ ໄດ້ມີຄວາມເບີກບານມ່ວນຊື່ນໃນເວລາພັກຮຽນ ພາຍໃຕ້ການ ຊຸ້ມ ຄອງຂອງຄູສອນ.

ຈຳນວນເຮືອນພັກຜ່ອນ ແລະບ່ອນປິ່ນປົວ ສຳລັບ ພົນລະເມືອງຜູ້ໃຫຍ່ໃນປະເທດກໍເພີ່ມຂຶ້ນທຸກໆປີ. ຢູ່ໃນລາຊະວັງອັນເກົ່າແກ່ຂອງວັງສານູວັງພະເຈົ້າຊາ ແລະ ຢູ່ໃນສະຖານທີ່ພັກຜ່ອນຢ່ອນໃຈໃຫມ່ຫລາຍຮ້ອຍແຫ່ງໃນແຄມທະເລດຳ, ໃນບໍລິເວນທະເລບັນຕິກ ກໍໄດ້ມີຜູ້ຄົນຫລາຍລ້ານຄົນມາພັກຜ່ອນ.ສະຖານທີ່ພັກຜ່ອນໃນທຸກໆແຂວງ ແມ່ນມີຄວາມສະດວກ ສະບາຍ

ແລະໃຫ້ຄວາມຜາສຸກ ແລະພ້ອມດຽວກັນນັ້ນ ກໍເປັນບ່ອນທ່ອງທ່ຽວຢ່າງກວ້າງຂວາງພິເສດ. ລັດແມ່ນໃຊ້ຈ່າຍເງິນເຂົ້າໃນການຈັດຕັ້ງສະຖານທີ່ພັກຜ່ອນຂອງຊາວຜູ້ອອກແຮງງານ ແລະເດັກນ້ອຍແຫ່ງສະຫະພາບໂຊວຽດນີ້ ໄປເຖິງສອງສ່ວນສາມ.

ຄ່າເຊົ່າເຮືອນຢູ່ໃນສະຫະພາບໂຊວຽດ ຖືກທີ່ສຸດ ໃນໂລກ ແລະການສ້າງສາສະຖານທີ່ອາໄສ ກໍພວມດຳເນີນໄປ ຢ່າງກວ້າງທີ່ສຸດ. ເຖິງປານນັ້ນ ກໍຍັງເປັນທີ່ຍອມຮັບວ່າການສ້າງສາສະຖານທີ່ຢູ່ອາໄສ ກໍຍັງບໍ່ພຽງພໍຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນໂຊວຽດ ທີ່ຂະຫຍາຍຕົວອອກຢ່າງບໍ່ຢຸດຢັ້ງ. ເພາະສະນັ້ນ ລັດຖະບານໂຊວຽດ ຈຶ່ງວາງກ້ອນທຶນໃຫຍ່ກ້ອນໜຶ່ງໃສ່ການສ້າງສາສະຖານທີ່ຢູ່ອາໄສ ເປັນປະຈຳປີໄວ້ແລະກໍບໍ່ມີເມືອງໃດຢູ່ໃນສະຫະພາບໂຊວຽດ ທີ່ລົດຍົກນ້ຳໜັກ ຈຳນວນຫລວງຫລາຍສຳລັບການກໍ່ສ້າງ ຈະບໍ່ໄດ້ສ້າງທົວທັດ ອັນຈົບງາມທີ່ຈຳເປັນອັນ.

ຊາວຜູ້ອອກແຮງງານໃນປະເທດໂຊວຽດ ບໍ່ມີຄວາມ ເປັນຫ່ວງເປັນໄຍຕໍ່ຄວາມເຖົ້າແກ່ຊະລາການຂອງຕົນ ເພາະ ວ່າລັດຈ່າຍເງິນບ້ຽຍບຳນານໃຫ້ແກ່ຜູ້ຄົນ ທີ່ຮອດລະດັບ ກິນບ້ຽຍບຳນານຄືຜູ້ຊາຍອາຍຸ ໖໐ ປີ ແລະແມ່ຍິງ ໕໕ປີ.ສຳລັບຊາວກຳມະກອນໃນໂຮງງານຕ່ຳແຜ່ນ ແລະອຸດສາຫະກຳເຄມີ,ໃນຫ້ອງເຄື່ອງຈັກອັນຮ້ອນຂອງໂຮງງານຫລອມເຫລັກ ແມ່ນຮັບເງິນບ້ຽຍບຳນານກ່ອນຈະຄົບອາຍຸເສຍອີກ. ອັດຕາເງິນບ້ຽຍບຳນານອັນຕ່ຳ ກໍໄດ້ເພີ່ມຂຶ້ນໄປເລື້ອຍໆ ຢູ່ໃນສະຫະພາບໂຊ

ວຽດ ອັດຕານີ້ຈະຍົກສູງຂຶ້ນ ໃນລະຫວ່າງຫ້າປີຊຸດທີ ໑໑ ອີກ ດ້ວຍ. ການເຕີບໃຫຍ່ຂະຫຍາຍຕົວ ທາງດ້ານ ສະວັດດີພາບ ຂອງປະຊາຊົນໂຊວຽດ ທີ່ສະແດງໃຫ້ເຫັນ ຢ່າງຈະແຈ້ງ ນັ້ນ ແມ່ນໄດ້ເຮັດໃຫ້ຊີວິດໝັ້ນຍືນຍິ່ງຂຶ້ນ ເມື່ອຄິດສະເຫລ່ຍແລ້ວຢູ່ ໃນສະຫະພາບໂຊວຽດດຽວນີ້ ແມ່ນມີອາຍຸຮອດ ໗໔ ປີ.

ສະວັດດີພາບຂອງປະຊາຊົນໂຊວຽດ ແມ່ນເຕີບໃຫຍ່ຂຶ້ນໄປ ທຸກໆປີແລະພ້ອມດຽວກັນນັ້ນ ສິນຄ້າຕ່າງໆທີ່ດີ ເຊັ່ນເສື້ອຜ້າ, ເກີບ, ຕູ້ເຢັນ, ລົດຈັກ, ລົດຍົນແລະໂທລະທັດ ກໍເຕີບໃຫຍ່ ຂະຫຍາຍຕົວອອກຫລາຍຂຶ້ນ ເຊັ່ນດຽວກັນ. ນອກນັ້ນຍັງບໍ່ມີແຕ່ ສະວັດດີພາບທາງດ້ານວັດຖຸຢ່າງດຽວກັນເທົ່ານັ້ນ ຄວາມເປັນ ຫ່ວງເປັນໄຍຂອງພັກກອມມູນິດແລະລັດຖະບານໂຊວຽດ ຕໍ່ພົນ ລະເມືອງໃນດ້ານອື່ນກໍເປັນວຽກງານພື້ນຖານ ແລະຖາວອນຄື ກັນ.

ຢູ່ໃນປະເທດໂຊວຽດພົນລະເມືອງທຸກຄົນ ມີໂອກາດບໍ່ພຽງ ແຕ່ປັບປຸງຄວາມຮູ້ຂອງຕົນເທົ່ານັ້ນ ແຕ່ຍັງສາມາດ ຂະຫຍາຍ ຄວາມສາມາດແລະຄວາມຊຳນິຊຳນານຂອງຕົນຄືກັນ. ພວກນັກ ຮ້ອງເພັງແລະນັກດົນຕີໂຊວຽດ ຜູ້ທີ່ດຳເນີນກິດຈະການ ຂອງ ຕົນໄປດ້ວຍຜົນສຳເລັດນັ້ນ ບໍ່ພຽງແຕ່ຢູ່ໃນປະເທດ ແຕ່ຫາກ ຍັງຢູ່ໃນຕ່າງປະເທດອີກນັ້ນ ໄດ້ເລີ່ມເລືອກເອົາອາຊີບ ຂອງ ຕົນຢູ່ເລື້ອຍໆ ຕັ້ງແຕ່ຢູ່ໃນໂຮງຮຽນດົນຕີ ສຳລັບເດັກນ້ອຍຫລື ວ່າຢູ່ໃນວົງການດົນຕີສະໝັກຫລິ້ນ ເຊິ່ງມີຢູ່ໃນສະໂມສອນຫລື ໃນຫໍວັດທະນະທຳທຸກແຫ່ງ.

ຢ່າງໃດກໍຕາມ ມັນກໍບໍ່ມີແຕ່ພວກສະມາຊິກໃນວົງການເຫຼົ່ານັ້ນທີ່ກາຍເປັນນັກສິລະປະ, ນັກແຕ້ມແລະນັກຄວັດອາຊີບ, ແຕ່ທຸກໆຄົນກໍມີໂອກາດທີ່ຈະຮ່ຳຮຽນສິລະປະປະເພດຕ່າງໆເຫຼົ່ານັ້ນ ເຊິ່ງເຂົາມັກ. ທຸກໆປີທົ່ວສະຫະພາບໂຊວຽດ ໄດ້ດຳເນີນການແຂ່ງຂັນສິລະປະພິເສດຂຶ້ນ ເຊິ່ງສະແດງໃຫ້ເຫັນເຖິງ ບໍ່ພຽງແຕ່ນັກສິລະປະອາຊີບ,ແຕ່ຍັງສະແດງໃຫ້ເຫັນເຖິງຄວາມສາມາດພິເສດຂອງຊາວກຳມະກອນ, ຊາວນາ ແລະ ພະນັກງານອີກດ້ວຍ. ບັນດານັກຂຽນ, ນັກສິລະປະແລະນັກວິທະຍາສາດໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອຊ່ວຍເຫຼືອ ແກ່ບັນດາ ຜູ້ທີ່ຕ້ອງການຢາກຈະທຳຄວາມລັ້ງເຄີຍຕົນເອງ ກັບຄວາມ ຮັ່ງມີທາງດ້ານສິລະປະຂອງໂລກ. ເພື່ອວັດຖຸປະສົງອັນນັ້ນມະຫາວິທະຍາໄລວັດທະນະທຳຂອງປະຊາຊົນ ສິບພັນແຫ່ງ ກໍໄດ້ຮັບການສ້າງຂຶ້ນໃນປະເທດ ເຊິ່ງເປັນບ່ອນທີ່ປະຊາຊົນຫລາຍກວ່າ ໔ ລ້ານຄົນ ຮ່ຳຮຽນກັນຢູ່ທຸກໆປີ ແລະຜູ້ບັນຍາຍທາງດ້ານວັດທະນະທຳແລະວິທະຍາສາດປະມານ ໑໔໐ ພັນຄົນໄປບັນຍາຍໃຫ້ພວກເຂົາ.

ວັດທະນະທຳແລະສິລະປະ ທີ່ຂະຫຍາຍຕົວຢູ່ໃນ ສ.ສ.ສ.ຊ.ແມ່ນເຮັດໃຫ້ຊີວິດຂອງຜູ້ຄົນໂຊວຽດ ມີຄວາມສົນໃຈຫລາຍຂຶ້ນ, ສິ່ງເສີມໃຫ້ມີການຝຶກຝົນອົບຮົມ ກ່ຽວກັບຄຸນນະພາບສິນທຳລະດັບສູງແກ່ພວກເຂົາ ແລະຊ່ວຍໃຫ້ມິດຕະພາບລະຫວ່າງປະຊາຊົນຕ່າງໆເຂັ້ມແຂງຂຶ້ນ.

... ເຮືອໄວ ຈາກເມືອງກາລີນິນ ແລ່ນໄປຕາມ ແມ່ນ້ຳ

ໂວນກາໂດຍຜ່ານຄອງມົດສະກູ ເຂົ້າມາສູ່ນະຄອນ ມົດສະກູ. ມັນແລ່ນມາເຖິງສະຖານີ ດູບະນາ. ຢູ່ເບື້ອງຫລັງປ່າໄມ້ ອັນບໍ່ໃຫຍ່ນັ້ນ ໄດ້ມີເມືອງທີ່ມີຕຶກປະກອບດ້ວຍເຄື່ອງທັນສະໄຫມຕັ້ງຢູ່. ຢູ່ທີ່ນີ້ໄດ້ມີສູນກາງວິທະຍາສາດ ເພື່ອຄົ້ນຄວ້າບັນຫາການໃຊ້ພະລັງງານປະລະມານູໄປໃນທາງສັນຕິ, ຄຽງຄູ່ໄປກັບພວກນັກວິທະຍາສາດໂຊວຽດນັ້ນ ກໍໄດ້ມີ ຄະນະ ນັກວິທະຍາສາດຈາກປະເທດບຸນກາລີ, ຮົ່ງກາລີ, ເຊັກໂກສະໂລວາກີ, ໂປ-ໂລຍ, ສາທາລະນະລັດປະຊາທິປະໄຕ ເຢຍລະມັນ, ລູມານີ ແລະປະເທດສັງຄົມນິຍົມອື່ນໆ ມາເຮັດຢູ່ໃນເມືອງ ດູບະນານີ້ຄືກັນ.

ມິດຕະພາບອັນສະຫນິດແຫນ້ນ ແມ່ນຜູກພັນກັນເຂົ້າ ຍິ່ງຂຶ້ນລະຫວ່າງສະຫະພາບໂຊວຽດກັບບັນດາປະເທດ ສັງຄົມນິຍົມອ້າຍນ້ອງ. ມິດຕະພາບອັນນີ້ ເກີດຂຶ້ນຕັ້ງແຕ່ໃນລະຫວ່າງສົງຄາມໂລກຄັ້ງທີສອງ ໃນເວລາເມື່ອກອງທັບໂຊວຽດ ໄດ້ປອຍບັນດາຊົນຊາດແຫ່ງປະເທດເຫລົ່ານີ້ ຂັບໄລ່ພວກຟາຊິດ ອອກໄປແລະໄດ້ໃຫ້ໂອກາດແກ່ພວກເຂົາ ເລີ່ມສ້າງຊີວິດໃຫມ່ຂຶ້ນ. ບັນດາປະເທດສັງຄົມນິຍົມຫນຸ່ມນ້ອຍເຫລົ່ານີ້ ໄດ້ເຕີບໃຫຍ່ຂຶ້ນມາ ໓໐ ກວ່າປີແລ້ວ ໂດຍອີງໃສ່ການຊ່ວຍເຫລືອ ແບບອ້າຍນ້ອງທີ່ບໍ່ເຫັນແກ່ຕົວຂອງສະຫະພາບໂຊວຽດ. ເມື່ອກຳລັງປະຕິການພາຍໃນຢູ່ໃນຮົ່ງກາລີ ແລະເຊັກໂກສະໂລວາກີທີ່ໄດ້ຮັບການສະຫນັບສະຫນູນຈາກພວກຈັກກະພັດຕ່າງດ້າວ ໄດ້ພະຍາຍາມທີ່ຈະຟື້ນຟູລະບອບເກົ່າຄືນມານັ້ນ ບັນດາຊາວຜູ້ອອກແຮງ

ງານແຫ່ງລັດສັງຄົມນິຍົມທີ່ຍຶດໝັ້ນຢູ່ໃນຫລັກການສາກົນກຳມາ ຊີບນັ້ນ ກໍໄດ້ເຂົ້າໄປຊ່ອຍເຫລືອເພື່ອນມິດຂອງຕົນ.

ບັນດາປະເທດສັງຄົມນິຍົມ ໃນຖານະທີ່ເປັນມິດ ທີ່ ໃກ້ຊິດ ແລະເພື່ອນບ້ານກັນຢ່າງດີ ກໍແມ່ນໃຫ້ການຊ່ອຍເຫລືອເຊິ່ງກັນ ແລະກັນ. ໃນບັນດາການຊ່ອຍເຫລືອເຫລົ່ານັ້ນ ກໍໄດ້ແກ່ການ ການຮ່ວມມືກັນທາງດ້ານເສດຖະກິດ, ເຕັກນິກແລະວັດທະນະ ທຳ. ບັນດາປະເທດສັງຄົມນິຍົມ ທີ່ບໍ່ມີນ້ຳມັນຂອງຕົນເອງ ກໍ ໄດ້ຮັບການຈັດຫາໃຫ້ຈາກສະຫະພາບໂຊວຽດ ໄປຕາມ ທໍ່ນ້ຳ ມັນ "ມິດຕະພາບ". ລັດສັງຄົມນິຍົມທີ່ເຕົ້າໂຮມກັນແມ່ນພົວພັນ ກັນດ້ວຍສາຍໄຟຟ້າອັນໜຶ່ງອັນດຽວກັນ ເຊິ່ງຕາມສາຍນັ້ນສະ ຖານີໄຟຟ້າໂຊວຽດໄດ້ສົ່ງໄຟຟ້າໄປໃຫ້ ບັນດາປະເທດສັງຄົມ ນິຍົມໃນເອີລົບ.

ດ້ວຍການຊ່ອຍເຫລືອ ທາງດ້ານເຕັກນິກຂອງພວກນັກຊ່ຽວ ຊານໂຊວຽດຢູ່ໃນບັນດາປະເທດສັງຄົມນິຍົມອ້າຍນ້ອງນັ້ນໂຄງ ການອຸດສາຫະກຳແລະກະສິກຳ ຈຳນວນຫລວງຫລາຍກໍໄດ້ຮັບ ການສ້າງຂຶ້ນ ຫລືວ່າ ຟື້ນຟູຂຶ້ນ,ຝ່າຍສະຫະພາບໂຊວຽດກໍໄດ້ ຮັບການຕອບສະໜອງຄືນ ໃນດ້ານນ້ຳມັນດິບ ແລະ ວັດຖຸດິບ ຕ່າງໆຈາກປະເທດສັງຄົມນິຍົມ ເປັນຈຳນວນ ເຖິງ ໗໐%.

ໃນຝ່າຍຜົນປະໂຫຍດຂອງຕົນນັ້ນ,ສະຫະພາບໂຊວຽດແມ່ນ ໄດ້ຮັບອຸປະກອນຕ່າງໆສຳລັບໂຮງຈັກໂຮງງານຈາກບັນດາປະ ເທດສັງຄົມນິຍົມ. ພວກນັກວິສະວະກອນ, ກຳມະກອນ, ນັກ ວິທະຍາສາດແລະຊາວນາໃນປະເທດສັງຄົມນິຍົມ ແມ່ນ ແລກ



ຕຶກສະພາຊ່ວຍເຫຼືອເຊິ່ງກັນແລະກັນທາງ
ດ້ານເສດຖະກິດ ທີ່ ນະຄອນມົດສະກູ.

ປ່ຽນບົດຮຽນ, ຮຽນຮູ້ນຳກັນແລະແບ່ງປັນ ສິ່ງທີ່ປະດິດຄິດໄດ້ ແລະສິ່ງທີ່ຄົ້ນພົບໃຫ້ແກ່ກັນແລະກັນ. ທຸກໆປີໄດ້ມີລົດໄຟຫລາຍສິບຄັນບັນທຸກເອົາເພື່ອນມິດຈາກປະເທດສັງຄົມນິຍົມ ໄປຢ້ຽມຢາມກັນແລະກັນ. ຢູ່ທີ່ຫ້ອງເຄື່ອງຈັກ, ໃນທົ່ງນາໃນລະຫວ່າງການສົນທະນາກັນນັ້ນ ພວກຊາວຜູ້ອອກແຮງງານ ກໍແມ່ນແລກປ່ຽນຄວາມຊຳນິຊຳນານນຳກັນ ແລະ ເຮັດໃຫ້ມິດຕະພາບລະຫວ່າງພວກເຂົາເຂັ້ມແຂງຂຶ້ນ. ອັນນັ້ນແມ່ນຄວາມຈິງ ທີ່ ວ່າດ້ວຍເຫດໃດ ສາຍທາງລົດໄຟ ແລະລົດໄຟທີ່ແລ່ນເຊື່ອມຕິດຕໍ່ກັນລະຫວ່າງບັນດາປະເທດນີ້ ຈຶ່ງໄດ້ເອີ້ນຊື່ວ່າ "ລົດໄຟມິດຕະພາບ."

ບັນດາປະເທດສັງຄົມນິຍົມທັງໝົດ ແມ່ນດຳເນີນ ເສດຖະກິດໄປຕາມແຜນການ ເພື່ອຊ່ວຍໃຫ້ການວາງແຜນວຽກງານນີ້ແລ້ວກ່ອນກຳນົດ ເຊິ່ງພວກເຂົາຈະດຳເນີນໄປ ພ້ອມໆ ກັນ. ເພື່ອໃຫ້ບັນດາຜູ້ແທນປະເທດສັງຄົມນິຍົມ ໄດ້ສາມາດ ແກ້ໄຂບັນຫາສຳຄັນຮ່ວມກັນເປັນປະຈຳນັ້ນ, ຜູ້ແທນເຫລົ່ານີ້ກໍໄດ້ສ້າງສະພາຊ່ວຍເຫລືອເສດຖະກິດເຊິ່ງກັນແລະກັນຂຶ້ນ(ສ.ຊ.ສ.). ບັນດາສະມາຊິກ ສ.ຊ.ສ. ແມ່ນແກ້ໄຂບັນຫາທຸກຢ່າງ ໂດຍຄຳນຶງເຖິງຜົນປະໂຫຍດຂອງແຕ່ລະປະເທດແລະຜົນປະໂຫຍດທົ່ວໄປຂອງວົງສາຄະນາຍາດສັງຄົມນິຍົມທັງໝົດ. ການຮ່ວມມືກັນການຜະລິດ ໃນລະຫວ່າງສະມາຊິກຂອງ ສ.ຊ.ສ.ແມ່ນໄດ້ຮັບການປະຕິບັດໄປຢ່າງກວ້າງຂວາງ. ອັນນີ້ແມ່ນອຳນວຍໃຫ້ມີການໃຊ້ກຳລັງແຮງການຜະລິດ ໃນແຕ່ລະ ປະເທດ ໄດ້

ເຕັມສ່ວນຂຶ້ນ, ອຳນວຍໃຫ້ມີການລຶດການລົງທຶນໃນການສ້າງສາໃຫມ່ລົງໄດ້.

ເມື່ອໄດ້ໂຮງກຳລັງຂອງຕົນເຂົ້າກັນແລ້ວ, ຊາວຜູ້ອອກແຮງງານລັດສັງຄົມນິຍົມ ກໍໄດ້ຮັບຜົນສຳເລັດໃຫມ່ທຸກຢ່າງໃນດ້ານການພັດທະນາເສດຖະກິດ, ດ້ານການຂະຫຍາຍຕົວ ສະວັດດີພາບຂອງປະຊາຊົນທີ່ຫມັ້ນຄົງຂຶ້ນທຸກໆປີ.

ບັນດາປະເທດອ້າຍນ້ອງ ໃຫ້ການຮ່ວມມືກັນຢ່າງໄດ້ຮັບຜົນສຳເລັດບໍ່ພຽງແຕ່ໃນດ້ານການຂະຫຍາຍເສດຖະກິດ ແລະກະສິກຳເທົ່ານັ້ນ. ຂອບເຂດການພົວພັນ ທາງດ້ານວິທະຍາສາດແລະວັດທະນະທຳແບບບໍ່ເຄີຍມີມາກ່ອນນີ້ ແມ່ນຊ່ອຍໃຫ້ປະຊາຊົນໄດ້ຮູ້ຈັກກັນດີຂຶ້ນ. ງານມະໂຫລານ ສະແດງຮູບເງົາຂອງບັນດາປະເທດສັງຄົມນິຍົມ, ການແລກປ່ຽນກັນ ທາງດ້ານຄະນະສິລະປະ ແບບຫມັ້ນຄົງຖາວອນນີ້ ແມ່ນຊ່ອຍໃຫ້ສິລະປະສັງຄົມນິຍົມມີການຂະຫຍາຍຕົວ, ຊ່ອຍໃຫ້ຊາບຊຶ້ມ ໃນນ້ຳໃຈມະນຸດສະທຳອັນແທ້ຈິງ, ຊ່ອຍໃຫ້ແນວຄິດ ດ້ານມິດຕະ ພາບແລະຄວາມເປັນອ້າຍນ້ອງ ລະຫວ່າງບັນດາປະຊາຊາດ ເຂັ້ມແຂງຂຶ້ນ.

ທຸກໆປະເທດທີ່ພວມສ້າງສາລະບອບສັງຄົມນິຍົມ ກໍມີລັກສະນະສະເພາະໃນການພັດທະນາຂອງໃຜມັນ. ແຕ່ວ່າບໍ່ວ່າຈະຢູ່ໃນບ່ອນໃດກໍຕາມ ບັນດາປະຊາຊາດທີ່ຢືນຢູ່ໃນເສັ້ນທາງສ້າງສາສັງຄົມນິຍົມ ເຊັ່ນຢູ່ໃນເອີລົບ, ອາຊີແລະອາເມລິກາພວກເຂົາກໍເຕົ້າໂຮມກັນເຂົ້າ ເພື່ອເປົ້າຫມາຍສຸດທ້າຍ ຮ່ວມກັນ,

ຄວາມສາມັກຄີຖານມິດສະຫາຍ ແລະຊ່ອຍເຫລືອເຊິ່ງກັນແລະກັນເພື່ອບັນລຸວັດຖຸປະສົງອັນນີ້.

ພົນລະເມືອງຫນຶ່ງສ່ວນສາມ ອາໄສຢູ່ໃນບັນດາປະເທດສັງຄົມນິຍົມ. ຄອບຄົວນີ້ ແມ່ນໃຫຍ່ມີນິດາະພາບແລະເຂັ້ມແຂງ. ບໍ່ມີບັນຫາສຳຄັນໃດ ບັນຫາຫນຶ່ງໃນໂລກ ທີ່ຈະແກ້ໄຂໄດ້ປະຈຸບັນນີ້ ຖ້າຫາກປາສະຈາກຄວາມເຫັນຂອງປະເທດສັງຄົມນິຍົມ.

ສະຫະພາບໂຊວຽດ ໄດ້ໃຫ້ແລະກຳພວມໃຫ້ການຊ່ອຍເຫລືອອັນໃຫຍ່ຫລວງແກ່ບັນດາປະເທດຫນຸ່ມນ້ອຍ ທີ່ໄດ້ປົດປ່ອຍ ຕົນເອງໃນການສ້າງຊຸດສາຫະກຳແຫ່ງຊາດ ແລະໃນການຝຶກຝົນອົບຮົມພະນັກງານຂອງຊາດຕົນ.

ດ້ວຍການຊ່ອຍເຫລືອ ຂອງຊາວກຳມະກອນ ແລະນັກວິສະວະກອນໂຊວຽດ ໂຮງງານຫລອມເຫລັກ ຂະຫນາດໃຫຍ່ກໍໄດ້ຖືກສ້າງຂຶ້ນຢູ່ໃນເມືອງ ບະຄີລາຍ ແລະ ໂບກາໂລ ປະເທດອິນເດຍ.

ບັນດາພວກນັກຊ່ຽວຊານ ແລະຊາວກຳມະກອນໂຊວຽດ ບໍ່ພຽງແຕ່ສ້າງສາໂຮງງານຫລອມເຫລັກຂະຫນາດໃຫຍ່ເຫລົ່ານີ້ເທົ່ານັ້ນ, ແຕ່ຍັງໄດ້ຝຶກຝົນນັກໂລຫະກິດອິນເດຍຫລາຍພັນຄົນອີກດ້ວຍ.

ຢູ່ໃນສາທາລະນະອາລັບ ອີຢິບ ຄົນມາຮອດຕົ້ນທົດສະວັດທີ ໘ ສະຖານີພະລັງງານໄຟຟ້ານ້ຳຕົກໃນເມືອງ ອາສະວານ ກໍໄດ້ຮັບການສ້າງຂຶ້ນ. ນອກນັ້ນ ເຂື່ອນທີ່ມີຄວາມສູງຫລາຍ ກໍບໍ່ພຽງແຕ່ຫມູນເຄື່ອງກົງຫັນໄຟຟ້າ ຂະຫນາດໃຫຍ່ ເທົ່ານັ້ນ,

ແຕ່ຍັງອຳນວຍເອົານ້ຳເຂົ້າໃສ່ພື້ນທີ່ແຫ້ງແລ້ງອັນກວ້າງຂວາງ ດີກັນ. ໃນຕອນທ້າຍທົດສະວັດທີ ໘ ໃນປະເທດ ຊີລີ ສະຖານີພະລັງງານໄຟຟ້ານ້ຳຕົກໃນເຂດ ອັດສາຊູລາ ຊຶ່ງຜະລິດພະລັງງານໄຟຟ້າໄດ້ຫລາຍກວ່າ ໗໐% ໃນຈຳນວນ ພະລັງງານໄຟຟ້າທັງໝົດທີ່ຜະລິດຢູ່ໃນທົ່ວປະເທດນັ້ນ ກໍໄດ້ຮັບສ້າງຂຶ້ນ. ຊາວກຳມະກອນແລະນັກວິສະວະກອນໂຊວຽດ ຫລາຍຮ້ອຍຄົນ ໄດ້ເຮັດວຽກການສ້າງສາຢູ່ໃນບ່ອນສ້າງສາເຫລົ່ານັ້ນ ຄຽງບ່າຄຽງໄຫລ່ກັບຊາວກຳມະກອນອາຫລັບ ຫລາຍພັນຄົນຜູ້ທີ່ ຮຽນເອົາອາຊີບອັນສັບສົນ ພາຍໃຕ້ການຊີ້ນຳຂອງຄະນະໂຊວຽດ, ມີຄຳເວົ້າອັນສະຫລາດ ຢູ່ໃນໝູ່ຊາວອາຫລັບວ່າ "ຈົ່ງໃຫ້ປາແກ່ຂ້ອຍແລະຂ້ອຍຈະບໍ່ອຶດຫິວໃນມື້ນັ້ນ, ແຕ່ຖ້າຫາກເຈົ້າສອນວິທີການຫາປາໃຫ້ແກ່ຂ້ອຍ, ຂ້ອຍຈະບໍ່ອຶດຫິວໄປຕະຫລອດຊີວິດ". ຄຳເວົ້ານີ້ສະແດງໃຫ້ເຫັນເຖິງວ່າ ປະຊາຊົນ ໃນປະເທດທີ່ຫາກໍໄດ້ຮັບເອກະລາດໃໝ່ໆນັ້ນ ມີຄວາມຕ້ອງການການຊ່ອຍເຫລືອຫລາຍພຽງໃດ. ພວກເຂົາບໍ່ຕ້ອງການ ອໍຄວາມ ຊ່ອຍເຫລືອຈາກບັນດາປະເທດທີ່ຮັ່ງມີ ທີ່ຂູດຮີດ ແກ່ ພວກເຂົາແລະບັນດາປະເທດທົ່ວເມືອງຂຶ້ນເກົ່າແກ່ນັ້ນ ແມ່ນມີຄວາມ ຈຳເປັນທີ່ຈະຕ້ອງພັດທະນາເສດຖະກິດແຫ່ງຊາດ. ເພາະວ່າ ມີແຕ່ອີງໃສ່ການພັດທະນາອຸດສາຫະກຳ ແລະ ກະສິກຳເທົ່ານັ້ນ ມັນຈຶ່ງຈະຮັບປະກັນຄວາມເປັນເອກະລາດແຫ່ງຊາດ ທີ່ແທ້ຈິງໄດ້. ບັນດາລັດສັງຄົມນິຍົມອື່ນໆ ກໍໃຫ້ການຊ່ອຍເຫລືອແກ່ປະເທດໜຸ່ມນ້ອຍເຫລົ່ານີ້ ສ້າງແລະພັດທະນາເສດຖະກິດດີກັນ.

ໂຄງການສຳຄັນຕ່າງໆ ກ່ຽວກັບເສດຖະກິດແຫ່ງຊາດຈຳນວນຫລວງຫລາຍ ແມ່ນໄດ້ຖືກສ້າງຂຶ້ນ ຫລືຖືກສ້າງຂຶ້ນ ດ້ວຍການຊ່ວຍເຫລືອທາງດ້ານເຕັກນິກ ຂອງບັນດາປະເທດ ທີ່ຢູ່ໃນສະພາຊ່ວຍເຫລືອເຊິ່ງກັນແລະກັນ ທາງດ້ານເສຖະກິດໃຫ້ແກ່ລັດທີ່ຫນຸ່ມນ້ອຍ ໔໐ ກວ່າລັດ ໃນຈຳນວນການຊ່ວຍເຫລືອເຫລົ່ານັ້ນ ກໍໄດ້ແກ່ໂຮງງານຫລອມເຫລັກ, ອຸດສາຫະກຳກັ່ນນ້ຳມັນແລະຂຸດຖ່ານຫີນ, ໂຮງງານສ້າງເຄື່ອງຈັກຕ່າງໆ, ວິສາຫະກິດອຸດສາຫະກຳເຄມີ ແລະສະຖານີໄຟຟ້າ.ການຮ່ວມກັນຂອງບັນດາປະເທດສະພາຊ່ວຍເຫລືອ ເຊິ່ງກັນແລະກັນ ທາງດ້ານເສດຖະກິດ ສ.ຊ.ສ. ໃນການສ້າງວິສາຫະກິດອຸດສາຫະກຳໃຫ້ແກ່ລັດຕ່າງໆ ທີ່ພວມພັດທະນາຢູ່ນັ້ນ ກໍໄດ້ແຜ່ ຂະ ຫຍາຍກວ້າງອອກໄປ. ຕົວຢ່າງ, ຢູ່ໃນອິນເດຍວິສາຫະກິດ ຕ່າງໆທາງດ້ານອຸດສາຫະກຳ ວິສະວະກຳໄຟຟ້າ ກໍໄດ້ຮັບການສ້າງຂຶ້ນດ້ວຍການຊ່ວຍເຫລືອຂອງປະເທດບຸນກາລີ, ຮູ່ງກາລີ,ສາທາລະນະລັດປະຊາທິປະໄຕເຢຍລະມັນ ແລະ ໂປໂລຍ,ສ່ວນໂຮງງານກັ່ນນ້ຳມັນນັ້ນ ໄດ້ຮັບການຊ່ວຍເຫລືອ ຈາກ ສະຫະພາບໂຊວຽດແລະລູມານີ. ຢູ່ໃນອີລັກແລະຊີລີ ພວກນັກຊ່ຽວຊານໂຊວຽດແລະຮູ່ງກາລີກໍໄດ້ໃຫ້ການຊ່ວຍເຫລືອເພື່ອກໍ່ສ້າງໂຮງງານສ້າງໄມ້ຫມູນລາງລົດໄຟ ດ້ວຍເປຕົງອາກເມ.ໂຮງງານຜະລິດນ້ຳຕານ ກໍໄດ້ສ້າງຂຶ້ນຢູ່ໃນສີລັງກາດ້ວຍການຊ່ວຍເຫລືອຂອງໂປໂລຍແລະເຊັກໂກສະໂລວາກີ. ບັນດາປະເທດສັງຄົມນິຍົມຕ່າງໆ ກໍໄດ້ໃຫ້ການຊ່ວຍເຫລືອຫລາຍຢ່າງສຳລັບ

ການຝຶກຝົນອົບຮົມພະນັກງານແຫ່ງຊາດ ທີ່ມີຄວາມຊໍານິ ຊໍານານ. ດ້ວຍການຊ່ອຍເຫລືອຂອງສະຫະພາບໂຊວຽດ ໃນໄລຍະປີທີ່ຜ່ານມານັ້ນ ກໍໄດ້ມີຊາວກໍາມະກອນແລະນັກເຕັກນິກ ທີ່ມີຄວາມຊໍານິຊໍານານຫລາຍກວ່າຫ້າຫມື່ນຄົນໃນຂະແຫນງການອຸດສາຫະກໍາຕ່າງໆ ແຫ່ງປະເທດ ອັບຟະການິສະຕານ, ອິນເດຍແລະປະເທດອື່ນໆ ກໍໄດ້ຮັບການຝຶກຝົນອົບຮົມ. ນອກນັ້ນຜູ້ຄົນຫລາຍຫມື່ນຄົນ ກໍໄດ້ຮັບແລະພວມໄດ້ຮັບ ການສຶກສາຊັ້ນສູງຢູ່ໃນສະຫະພາບໂຊວຽດ ຫລືວ່າໃນປະເທດຂອງຕົນ ເອງດ້ວຍການຊ່ອຍເຫລືອຂອງໂຊວຽດ ເຊັ່ນດຽວກັນ. ຈົດຫມາຍຕ່າງໆຈາກປະເທດໃນອາຟະລິກາແລະອາຊີ ແມ່ນຫລັ່ງໄຫລເຂົ້າມາສູ່ສະຫະພາບໂຊວຽດ ແລະ ປະເທດສັງຄົມນິຍົມອື່ນໆ ໂດຍໄດ້ສະແດງຄວາມຮູ້ບຸນຄຸນ ຈາກບັນດາຜູ້ທີ່ ໄດ້ເຮັດວຽກຫລືພວມເຮັດກັບປະຊາຊົນແຫ່ງປະເທດສັງຄົມນິຍົມ, ຈາກບັນດາຜູ້ທີ່ໄດ້ຮັບຄວາມຊໍານິຊໍານານແລະຮັບການສຶກສາດ້ວຍການຊ່ອຍເຫລືອຖານມິດຕະພາບ ຂອງປະເທດສັງຄົມນິຍົມ.ມະຫາວິທະຍາໄລມິດຕະພາບຂອງປະຊາຊາດຕ່າງໆ ທີ່ໄດ້ໃສ່ຊື່ຕາມຊື່ຂອງປາຕະລິດລູມູມບາ ວິລະຊົນການແຫ່ງການຕໍ່ສູ້ ປົດປ່ອຍໃນອາຟະລິກາເປັນທີ່ຮູ້ຈັກກັນດີຢາງກວ້າງຂວາງໃນບັນດາປະເທດທີ່ພວມພັດທະນາ. ມະຫາວິທະຍາໄລນີ້ ໄດ້ຕັ້ງຂື້ນຢູ່ທີ່ນະຄອນມົດສະກູ. ທຸກໆປີມີນັກສຶກສາທີ່ຮຽນຈົບຫ້າຮ້ອຍ ກ່ວາຄົນໄດ້ຮັບປະລິນຍາເປັນນັກວິສະວະກອນ, ນາຍແພດແລະນັກກະເສດ. ເມື່ອກັບຄືນສູ່ບ້ານເກີດເມືອງນອນແລ້ວ, ບັນດາ ນັກ

ຊົນຊາວໜຸ່ມຈາກປະເທດໃນອາຊີ ແລະອາຟະລິກາ ບໍ່ໄດ້ຖື ເອົາແຕ່ຄວາມຮູ້ກ່ຽວກັບຄວາມຊຳນິຊຳນານໃນວິຊາການຕ່າງ ຕ່າງຕິດຕົວໄປນຳເທົ່ານັ້ນ ແຕ່ວ່າຍັງໄດ້ມີຄວາມຮູ້ສຶກ ເລິກ ເຊິ່ງຕໍ່ປະຊາຊົນໂຊວຽດອີກ ນັ້ນຄືວ່າ ມິດຕະພາບ ອັນແທ້ຈິງ ແລະບໍ່ເຫັນແກ່ຕົວຂອງປະຊາຊາດຕ່າງໆ ທີ່ຢືນຢູ່ໃນເສັ້ນທາງ ແຫ່ງການຂະຫຍາຍຕົວຂອງຊາດເອກະລາດ.

ສົງຄາມໂລກຄັ້ງທີສອງໄດ້ສິ້ນສຸດລົງ ເປັນເວລາ ຫລາຍ ກວ່າໜຶ່ງສ່ວນສາມ ຂອງສະຕະວັດແລ້ວ. ແຕ່ວ່າເວລານີ້ກໍຍັງ ບໍ່ທັນສະຫງົບແລະມີບັນຍາກາດແຈ່ມໃສເທື່ອ. ຢູ່ບ່ອນນີ້ ແລະ ບ່ອນນັ້ນຍັງມີຂໍ້ຂັດແຍ້ງທາງທະຫານລະເບີດຂຶ້ນຢູ່ເລື້ອຍໆເຊິ່ງ ກໍ່ຂຶ້ນໂດຍພວກຈັກກະພັດ ແລະກ່ອນອື່ນໝົດ ກໍແມ່ນຈັກກະພັດ ອາເມລິກາ. ພວກເຂົາຍັງບໍ່ສາມາດຍອມຮັບກັບ ຄວາມຈິງທີ່ ວ່າ ບັນດາປະຊາຊາດໃໝ່ແລະປະເທດຕ່າງໆ ພວມປົດປ່ອຍ ຕົນເອງອອກຈາກການກົດຂີ່ຂູດຮີດຂອງນາຍທຶນແລະຂອງ ຈັກ ຊາດ.

ເພາະສະນັ້ນ ບັນຫາກ່ຽວກັບສັນຕິພາບ ຈຶ່ງກາຍເປັນ ບັນ ຫາທີ່ສຳຄັນທີ່ສຸດ.

ປະຊາຊົນໂຊວຽດ, ປະຊາຊາດຂອງປະເທດ ສັງຄົມນິຍົມ ທັງໝົດ ຜູ້ທີ່ພົວພັນຢູ່ກັບການເຮັດວຽກແບບສັນຕິພາບນັ້ນແມ່ນ ເຂົ້າໃຈເປັນຢ່າງດີ ເຖິງຄວາມທຸກຍາກ ຢ່າງນັບບໍ່ຖ້ວນທີ່ສົງ ຄາມນຳມາໃຫ້ແກ່ມວນມະນຸດ. ບັນດາປະຊາຊາດຕ່າງໆຂອງ ປະເທດທີ່ປົດປ່ອຍຕົນເອງ ອອກຈາກຄວາມເປັນທາດແບບທົວ

ເມືອງຂຶ້ນ ຜູ້ເຊິ່ງມີວຽກງານອັນໃຫຍ່ຫລວງ ທີ່ຈະກຳຈັດ ລະບອບທົວເມືອງຂຶ້ນຄັ້ງສຸດທ້າຍ, ທີ່ຈະສ້າງເສລີພາບແລະຄວາມເປັນເອກະລາດແຫ່ງຊາດຂອງຕົນໃຫ້ເຂັ້ມແຂງນັ້ນ ແມ່ນ ຮູ້ດີກ່ຽວກັບເລື່ອງນີ້. ປະຊາຊົນຜູ້ອອກແຮງງານ ໃນປະເທດທຶນນິຍົມແມ່ນບໍ່ຕ້ອງການສົງຄາມ. ພວກເຂົາບໍ່ຕ້ອງການທີ່ຈະສະລະຊີວິດເລືອດເນື້ອຂອງຕົນ ເພື່ອເຮັດໃຫ້ຜູ້ຮັ່ງມີແລະນາຍທຶນຮັ່ງມີຂຶ້ນໄປອີກ. ຄວາມພະຍາຍາມ ແລະ ຄວາມປາຖະຫນາຂອງຊາວຜູ້ອອກແຮງງານ ເຊິ່ງເປັນພາກສ່ວນ ພົນລະເມືອງຫລວງຫລາຍຢູ່ໃນແຕ່ລະປະເທດນັ້ນ ແມ່ນໄດ້ ສະແດງ ອອກຢ່າງສຸດອົກສຸດໃຈ ແລະຕິດຕາມກັນມາບໍ່ຂາດສາຍແລະໄດ້ຮັບການປົກປັກຮັກສາຈາກພັກກອມມູນິດ ແລະກຳມະກອນ.

ໃນລະດູຮ້ອນ ປີ ໑໙໖໙ ກອງປະຊຸມລະຫວ່າງຊາດ ຂອງພັກກອມມູນິດແລະພັກກຳມະກອນ ກໍໄດ້ເປີດຂຶ້ນຢູ່ທີ່ນະຄອນມົດສະກູ ເຊິ່ງຢູ່ໃນກອງປະຊຸມນັ້ນ ໄດ້ມີຕົວແທນຂອງ໗໕ປະເທດໃນທຸກໆທະວີບຂອງໂລກເຂົ້າຮ່ວມນຳ. ບັນດາຜູ້ແທນພັກກອມມູນິດແລະພັກກຳມະກອນ ໄດ້ມາປະຊຸມກັນ ເພື່ອພິຈາ ລະນາການດຳເນີນງານຮ່ວມກັນ ຕ້ານລັດທິຈັກກະພັດ ເຊິ່ງກະກຽມເຮັດສົງຄາມໃຫມ່ຂຶ້ນ, ແລະພະຍາຍາມທຸກວິທີທາງ ເພື່ອຍັບຢັ້ງຂະບວນການຂອງປະຊາຊົນ ທີ່ຈະກ້າວໄປສູ່ຊີວິດ ທີ່ມີເສລີພາບແລະມີຄວາມສຸກ. ໃນບັນຍາກາດທີ່ມີຄວາມສະເຫມີພາບເທົ່າທຽມກັນຢ່າງສົມບູນນັ້ນ ບັນດາຜູ້ແທນພັກກອມມູນິດ ແລະພັກກຳມະກອນ ກໍໄດ້ແລກປ່ຽນຄວາມຄິດເຫັນກັນແລະຮັບເອົາ

ມະຕິກ່ຽວກັບການຕໍ່ສູ້ຮ່ວມກັນຕ້ານລັດທິຈັກກະພັດ, ຈິນເຊີຍບົດ ບາດອັນດີເດັ່ນຂອງພັກກອມມູນິດ ແຫ່ງ ສະຫະພາບ ໂຊວຽດ ເຊິ່ງກະທຳການປ້ອງກັນສັນຕິພາບ ແລະ ຄວາມສຸກຂອງມວນ ມະນຸດຊາດຢ່າງຫນຽວແຫນ້ນ.

ປະຫວັດສາດທັງຫມົດຂອງໂຊວຽດ ແມ່ນສະແດງ ໃຫ້ເຫັນ ເຖິງຄວາມພະຍາຍາມ ອັນບໍ່ລົດລະຂອງຕົນ ໃນການເຮັດໃຫ້ ສັນຕິພາບແບບມີຄວາມຍຸຕິທຳເກີດຂຶ້ນ ຢ່າງມີຄວາມຫມັ້ນໃຈ. ອັນທີ່ເຫັນໄດ້ຢ່າງຈະແຈ້ງ ກໍຄືຂໍ້ດຳລັດທຳອິດ ຂອງລັດທີ່ຫາກໍ ເກີດຂຶ້ນຂອງຊາວກຳມະກອນ ແລະຊາວນາວ່າດ້ວຍສັນຕິພາບ. ຕັ້ງແຕ່ນັ້ນມາ, ພາຍຫລັງທີ່ໄດ້ສະແດງຄວາມປາຖະຫນາຂອງ ປະຊາຊົນອອກແລ້ວ, ລັດຖະບານໂຊວຽດ ກໍໄດ້ດຳເນີນ ນະ ໂຍບາຍສັນຕິພາບຂອງເລນິນຕະຫລອດມາ. ບັນດາຜູ້ແທນແຫ່ງ ສະຫະພາບໂຊວຽດ ແມ່ນຮຽກຮ້ອງຈາກເວທີປະຊຸມສູງ ຂອງ ອົງການສະຫະປະຊາຊາດ ໃຫ້ຍຸຕິການແຂ່ງຂັນກັນສ້າງອາວຸດ, ໃຫ້ແກ້ບັນຫາທີ່ຖົກຖຽງກັນດ້ວຍວິທີນັ່ງໂຕະເຈລະຈາກັນແຕ່ ບໍ່ ແມ່ນດ້ວຍວິທີຕໍ່ສູ້ກັນຢູ່ໃນສະຫນາມຮົບ.

ກອງປະຊຸມໃຫຍ່ພັກກອມມູນິດແຫ່ງສະຫະພາບໂຊວຽດຄັ້ງທີ ໒໔ ໄດ້ຮັບຮອງເອົາໂຄງການສັນຕິພາບ, ທິດທາງຂັ້ນພື້ນຖານ ຕໍ່ສູ້ຕ້ານນະໂຍບາຍຮຸກຮານ ຂອງລັດທິຈັກກະພັດ, ເພື່ອສັນຕິ ພາບ, ຄວາມປອດໄພຂອງບັນດາປະຊາຊາດແລະສັງຄົມນິຍົມ ທີ່ວາງອອກໂດຍຄະນະກຳມະການສູນກາງພັກ.

ໂຄງການນີ້ ໄດ້ຮັບການສະຫນັບສະຫນູນ ຈາກຊາວຜູ້ອອກ

ແຮງງານ, ຈາກກຳລັງທີ່ກ້າວໜ້າ ໃນທົ່ວໂລກ ຢ່າງກວ້າງຂວາງ. ເພື່ອໃຫ້ເປັນເປົ້າໝາຍຕົວຈິງນັ້ນ ໂຄງການນີ້ ໄດ້ສະເໜີໃຫ້ມີການຕໍ່ສູ້ ເພື່ອລົບລ້າງແປວໄຟທາງດ້ານທະຫານຢູ່ໃນອາຊີຕາເວັນອອກສຽງໃຕ້ ແລະ ໃນຕາເວັນອອກກາງ, ເພື່ອແກ້ໄຂຂໍ້ຂັດແຍ້ງທາງການເມືອງລະຫວ່າງຊາດ, ເພື່ອຮັບຮູ້ການປ່ຽນແປງດິນແດນ ທີ່ເກີດຂຶ້ນຢູ່ໃນເອີລົບເນື່ອງມາຈາກສົງຄາມໂລກຄັ້ງທີສອງນັ້ນ ໃຫ້ຈະແຈ້ງ, ເພື່ອຫັນປ່ຽນ ໄປສູ່ການຫລຸດຜ່ອນຄວາມເຄັ່ງຕຶງ ແລະສັນຕິພາບ ໃນທະວີບນີ້ໃນຂັ້ນພື້ນຖານ; ເພື່ອລົບລ້າງສົນທິສັນຍາວາກໂຊວີ ແລະກຸ່ມນາໂຕໄປພ້ອມໆກັນ ແລະຍົກເລີກອົງການຈັດຕັ້ງທະຫານຂອງສົນທິສັນຍາທັງສອງນັ້ນ; ເພື່ອຫ້າມການຜະລິດອາວຸດນິວຄະເລຍເຄມີແລະບັກເຕລີ, ເພື່ອທຳລາຍອາວຸດນິວຄະເລຍ ແລະຢຸດການແຂ່ງຂັນກັນສ້າງອາວຸດຊະນິດຕ່າງໆ.

ໃນເວລາດຽວກັນນັ້ນ ໂຄງການສັນຕິພາບ ກໍໄດ້ຮຽກຮ້ອງໃຫ້ນຳເອົາມະຕິຂອງອົງການສະຫະປະຊາຊາດ ກ່ຽວກັບການລົບລ້າງເສດເຫລືອອານານິຄົມ ທີ່ຍັງເຫລືອຢູ່ນັ້ນ ນຳມາປະຕິບັດ, ຮຽກຮ້ອງໃຫ້ປະນາມ ແລະຫ້າມການຕິດຕໍ່ທຸກຢ່າງ ກັບລະບອບຈຳແນກເຊື້ອຊາດ ແລະຖືຜິວທີ່ພວມຂະຫຍາຍຢູ່, ຮຽກຮ້ອງໃຫ້ຂະຫຍາຍການຮ່ວມມືກັນລະຫວ່າງລັດຕ່າງໆຈາກທຸກຝ່າຍທົວໂລກ.

ກອງປະຊຸມກ່ຽວກັບຄວາມໝັ້ນຄົງ ແລະ ການຮ່ວມມືກັນຢູ່ໃນເອີລົບ ເຊິ່ງດຳເນີນໄປ ຢູ່ໃນນະຄອນ ເຮນຊິງກິ ໃນປີ

໑໙໗໔ ຕາມຄຳລິເລີ່ມຂອງຝ່າຍປະເທດ ສັງຄົມນິຍົມນັ້ນ ໄດ້ມີບຸກຄົນສຳຄັນຈາກ ໓໕ ປະເທດເຂົ້າຮ່ວມ. ການເລີ່ມຕົ້ນນີ້ໄດ້ວາງໄລຍະອັ້ນໃໝ່ກ່ຽວກັບການຫລຸດຜ່ອນ ຄວາມເຄັ່ງຕຶງບໍ່ແມ່ນແຕ່ໃນທະວີບເອີລົບເທົ່ານັ້ນ ແຕ່ຍັງໃນທົ່ວໂລກ ແລະກໍຖືວ່າເປັນບາດກ້າວທີ່ສຳຄັນໃນແນວທາງ ເພື່ອເຮັດ ໃຫ້ຫລັກການກ່ຽວກັບການປົກປັກຮັກສາສັນຕິພາບ ມີຄວາມ ເຂັ້ມແຂງຂຶ້ນ.

ກອງປະຊຸມໃຫຍ່ພັກກອມມູນິດ ແຫ່ງສະຫະພາບໂຊວຽດຄັ້ງທີ ໒໔ ທີ່ເປີດຂຶ້ນໃນປີ ໑໙໗໑ ນັ້ນ ໄດ້ໃຫ້ຂໍ້ສັງເກດ ໄວ້ວ່າການປະຕິບັດໂຄງການສັນຕິພາບ ທີ່ກອງປະຊຸມພັກ ຄັ້ງທີ ໒໔ ໄດ້ສະເໜີຂຶ້ນນັ້ນ ໄດ້ເຮັດໃຫ້ສະພາບການສາກົນດີຂຶ້ນ ຢ່າງຫລວງຫລາຍ ເຊິ່ງຢືນຢັນເຖິງຫລັກການ ການຢູ່ຮ່ວມກັນໂດຍສັນຕິ ໃນຖານະເປັນຫລັກການ ການພົວພັນກັນ ລະຫວ່າງລັດຕ່າງໆກັບລະບອບສັງຄົມທີ່ແຕກຕ່າງກັນ ເຮັດໃຫ້ ການຮ່ວມມືກັນທາງດ້ານເສດຖະກິດ, ວິທະຍາສາດເຕັກນິກ ແລະວັດທະນະທຳຂອງບັນດາປະຊາຊາດ ຕ່າງມີຄວາມເຂັ້ມແຂງຂຶ້ນ.

ເມື່ອໄດ້ກຳນົດທິດທາງໃຫຍ່ ກ່ຽວກັບການພັດທະນາ ເສດຖະກິດຂອງປະເທດໄວ້ໃນແຜນການຫ້າປີ ຊຸດທີ ໑໐(໑໙໗໖-໑໙໘໐) ແລ້ວ, ກອງປະຊຸມໃຫຍ່ ກໍໄດ້ກຳນົດໜ້າທີ່ສຳຄັນໄວ້ກ່ຽວກັບການປະຕິບັດແນວທາງຂອງພັກກອມມູນິດ ເພື່ອຂະຫຍາຍລະດັບຊີວິດການເປັນຢູ່ ຂອງປະຊາຊົນຂຶ້ນໃນດ້ານວັດຖຸແລະດ້ານວັດທະນະທຳບົນພື້ນຖານ ການຂະຫຍາຍຕົວ ທາງ

ດ້ານການເຄື່ອນທີ່ແຈກຢາຍ ແລະການຜະລິດ ຂອງຜະລິດຕະພັນຂອງສັງຄົມ ແລະຍົກປະສິດທິພາບຂອງຜະລິດຕະພັນນັ້ນ ໃຫ້ສູງຂຶ້ນ, ເຮັດໃຫ້ຄວາມກ້າວໜ້າ ທາງດ້ານເຕັກນິກແລະວິທະຍາສາດ ກ້າວໄປຢ່າງໄວວາ, ເພີ່ມປະສິດທິພາບໃນການຜະລິດໃຫ້ສູງ ແລະ ເຮັດໃຫ້ຈຸນນະພາບ ຂອງ ວຽກງານຢູ່ໃນທຸກໆຂະແໜງການເສດຖະກິດແຫ່ງຊາດ ໃຫ້ດີຂຶ້ນ.

ປະຊາຊົນໂຊວຽດ ມີຄວາມຊາບຊຶ້ງ ດ້ວຍຄວາມເຊື່ອໝັ້ນຢ່າງເລິກເຊິ່ງ ຕໍ່ແນວທາງຂອງພັກກອມມູນິດ ໃນການ ຫລຸດຜ່ອນຄວາມເຄັ່ງຕຶງທາງສາກົນລົງ, ໃນການຕໍ່ສູ້ເພື່ອສັນຕິພາບ ແລະການຮ່ວມມືກັນທາງສາກົນ, ເພື່ອເສລີພາບ ແລະຄວາມເປັນເອກະລາດຂອງບັນດາປະຊາຊາດຕ່າງໆ.

ໃນປີ ໑໙໗໗ ປະຊາຊົນໂຊວຽດ ແລະມວນມະນຸດຊາດ ທີ່ກ້າວໜ້າ ໄດ້ພາກັນສະຫລອງຄົບຮອບ ໖໐ ປີແຫ່ງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ.

ວັນທີ ໗ ເດືອນຕຸລາ ປີ ໑໙໗໗ ກອງປະຊຸມສະໄໝວິສາມັນຄັ້ງທີ ໗ ຂອງສະພາໂຊວຽດສູງສຸດ ທີ່ຮຽກໂຮມກັນ ເປັນເທື່ອທີ ໑໐ ນັ້ນ ໄດ້ຮັບຮອງເອົາລັດຖະທຳມະນູນໃໝ່ ຂອງປະເທດ ເຊິ່ງໄດ້ມີການປ່ຽນແປງຢ່າງເລິກເຊິ່ງ ເກີດຂຶ້ນໃນປະເທດ, ໃນທົ່ວສັງຄົມສັງຄົມນິຍົມ ສຳລັບໄລຍະເວລາ ໔໐ ປີ ຕັ້ງແຕ່ໄລຍະເວລາເມື່ອລັດຖະທຳມະນູນ ແຫ່ງສະຫະພາບໂຊວຽດສະບັບປີ ໑໙໓໖ ໄດ້ຖືກຮັບຮອງເອົາ.

ດັ່ງລັດຖະທຳມະນູນສະບັບປີ ໑໙໓໖ ໄດ້ສ່ອງແສງໃຫ້ເຫັນ

ກິດຈະການສັງຄົມໂຊວຽດທີ່ສ້າງຂຶ້ນ ເປັນພື້ນຖານຂອງລະບອບສັງຄົມນິຍົມແລ້ວ, ລັດຖະທຳມະນູນສະບັບປີ ໑໙໓໗ ກໍໄດ້ ກຳນົດການສ້າງສັງຄົມ ສັງຄົມນິຍົມແບບທີ່ຂະຫຍາຍຕົວແລ້ວ ຢູ່ໃນສະຫະພາບໂຊວຽດ. ສັງຄົມນີ້ ປາກົດຕົວຂຶ້ນມາ ດ້ວຍທິດທາງພື້ນຖານທາງດ້ານກຳລັງການຜະລິດອັນເຂັ້ມແຂງທີ່ມີຢູ່ທາງດ້ານວິທະຍາສາດແລະວັດທະນະທຳກ້າວໜ້າ, ການເຕີບໃຫຍ່ ຂະຫຍາຍຕົວສະວັດດີພາບຂອງປະຊາຊົນ ຢ່າງໝັ້ນຄົງ ຖາວອນ ແລະເງື່ອນໄຂສຳລັບການພັດທະນາບຸກຄົນຢ່າງຮອບດ້ານກໍເປັນທີ່ພໍໃຈຫລາຍຂຶ້ນ. ສັງຄົມນິຍົມທີ່ຂະຫຍາຍຕົວແລ້ວ ໄດ້ແກ່ ສັງຄົມທີ່ມີການພົວພັນກັນ ໃນແບບສັງຄົມລວມໝູ່ ທີ່ມີການສຸກງອມເຊິ່ງຢູ່ໃນສັງຄົມນີ້ ພື້ນຖານຂອງຊົນຈັ້ນ ແລະຊັ້ນຄົນຂອງສັງຄົມຕ່າງໆກໍຫຍັບເຂົ້າໃກ້ກັນ, ພ້ອມດຽວກັນນັ້ນ ສິດສະເໝີ ພາບທາງດ້ານກົດໝາຍແລະພາກປະຕິບັດຕົວຈິງ ຂອງທຸກໆ ປະຊາຊາດແລະພົນລະເມືອງທ້ອງຖິ່ນ ກໍໄດ້ຮັບການປະຕິບັດການຮ່ວມມືແບບອ້າຍນ້ອງຂອງພວກເຂົາ. ແລະການເຕົ້າໂຮມໃໝ່ແບບສັງຄົມແລະສະຕິສາກົນຂອງຜູ້ຄົນທັງຫລາຍ–ຄືປະຊາຊົນໂຊວຽດທີ່ເປັນເອກະພາບກໍໄດ້ຮັບການສ້າງຂຶ້ນມາ ຢ່າງເປັນປະຫວັດການໃໝ່. ສັງຄົມນີ້ເປັນສັງຄົມທີ່ມີການຈັດຕັ້ງສູງ, ມີແນວຄິດແລະມີສະຕິສູງຂອງພວກຊາວຜູ້ອອກແຮງງານ ແລະ ນັກສາກົນນິຍົມ. ສັງຄົມນີ້ ເປັນສັງຄົມທີ່ມີປະຊາທິປະໄຕ ຢ່າງແທ້ຈິງ , ເປັນລະບອບການເມືອງ ທີ່ມີການຮັບປະກັນ ການຈຸ້ມຄອງວຽກງານຂອງສັງຄົມທັງໝົດ ຢ່າງມີຜົນສຳເລັດ, ການ ເຂົ້າຮ່ວມ

ຂອງຊາວຜູ້ອອກແຮງງານ ໃນວຽກງານຂອງລັດ ກໍມີ ຄວາມຫ້າວຫັນຫລາຍຍິ່ງຂຶ້ນ, ສິດແລະເສລີພາບ ຂອງພົນລະເມືອງພ້ອມທັງໜ້າທີ່ແລະຄວາມຮັບຜິດຊອບ ຂອງພວກເຂົາຕໍ່ສັງຄົມກໍແມ່ນໂຮມກັນ.

ສັງຄົມສັງຄົມນິຍົມທີ່ຂະຫຍາຍຕົວ ໄດ້ແກ່ໄລຍະຂັ້ນ ທີ່ກ້າວໄປສູ່ເສັ້ນທາງລະບອບກອມມູນິດ; ສັງຄົມນີ້ ວ່າໂດຍທາງກົດໝາຍແລ້ວ ແມ່ນເປັນສັງຄົມທີ່ມີຄວາມຫ່ວງໄຍກ່ຽວກັບສະວັດດີພາບແລະການຢູ່ດີກິນດີ ຂອງແຕ່ລະຄົນແລະແຕ່ລະຄົນກໍຕ້ອງການຄວາມຫ່ວງໄຍກ່ຽວກັບສະວັດດີພາບ ຂອງຜູ້ຄົນທັງໝົດ.

ການຮັບຮອງເອົາລັດຖະທຳມະນູນ ໄດ້ດຳເນີນໄປຫຼັງຈາກທີ່ປວງຊົນໄດ້ອະພິປາຍໂຄງຮ່າງຂອງມັນແລ້ວ ເຊິ່ງມີ ພົນລະເມືອງໂຊວຽດ ທີ່ບັນລຸນິຕິພາວະເຂົ້າຮ່ວມຫລາຍກວ່າ ໔ສ່ວນ ໕. ຄະນະກຳມາທິການຮ່າງລັດຖະທຳມະນູນ ໄດ້ຮັບຂໍ້ສະເໜີກ່ຽວກັບການດັດແປງ ຂໍ້ຄວາມຕ່າງໆ ປະມານ ສີ່ແສນຂໍ້ ທີ່ມີເປົ້າໝາຍໃຫ້ກະທັດລັດ, ເຮັດໃຫ້ຖ້ອຍຄຳ ຂອງໂຄງຮ່າງດີຂຶ້ນຢ່າງຈະແຈ້ງ.

ເມື່ອໄດ້ພິຈາລະນາເບິ່ງການປ່ຽນແປງ ທີ່ເກີດຂຶ້ນຢູ່ໃນປະເທດ ແລະ ໃນຊີວິດຂອງສັງຄົມ ມາເປັນເວລາ ໔໐ ປີແລ້ວນັ້ນ, ລັດຖະທຳມະນູນສະບັບປີ ໑໙໗໗ ກໍຍັງຮັກສາຫລັກການຂອງລັດຖະທຳມະນູນ ສະບັບປີ ໑໙໓໖ ນັ້ນ ໄວ້ຫລາຍ ຢ່າງເພາະວ່າ ຫລັກການດັ່ງກ່າວນັ້ນ ຍັງສືບຕໍ່ ຊ່ອຍເຫລືອໃຫ້ລະບອບສັງຄົມໂຊວຽດ ດຳລົງຄົງຕົວຢູ່ ແລະ ເຮັດໃຫ້ລັກສະນະ

ການຂະຫຍາຍຕົວຂອງລັດສັງຄົມນິຍົມ ດຳເນີນຕໍ່ໄປ.

ໃນປີ ໑໙໓໖ ລະດັບເຕັກນິກ ທາງດ້ານເສດຖະກິດ ແຫ່ງຊາດຍັງຢູ່ຫ່າງໄກຈາກລະດັບຂອງບັນດາປະເທດ ທີ່ຂະຫຍາຍຕົວທາງດ້ານອຸດສາຫະກຳ, ແຕ່ດຽວນີ້ ການຈັດຕັ້ງທາງດ້ານເສດຖະກິດແຫ່ງຊາດແບບມີກຳລັງ ເຂັ້ມແຂງ ແລະ ເປັນອັນໜຶ່ງອັນດຽວກັນ, ທີ່ພວມຂະຫຍາຍຕົວອອກຢູ່ບົນພື້ນຖານການປະຕິວັດທາງດ້ານເຕັກນິກ ແລະວັດທະນະທຳໄປພ້ອມໆກັນກັບຜົນປະໂຫຍດຂອງລະບອບສັງຄົມນິຍົມນັ້ນ ແມ່ນພວມ ດຳເນີນໄປແລະພວມປະຕິບັດກັນຢູ່ຢ່າງມີຜົນສຳເລັດ.ຜົນປະໂຫຍດອັນສຳຄັນທີ່ສຸດອັນນັ້ນ ແມ່ນອຸບສົມບັດຂອງສັງຄົມ ທີ່ໄດ້ຮັບການຈຸ້ມຄອງຢ່າງບໍ່ມີການແບ່ງແຍກ. ສ່ວນຮູບຮ່າງ ໜ້າຕາຂອງສັງຄົມອື່ນ ກໍໄດ້ແຕກຕ່າງຈາກນີ້ໄປ, ແຮງງານຂອງຊາວກຳມະກອນ ເຊິ່ງມີຈຳນວນສອງສ່ວນສາມຂອງພົນລະເມືອງ ໃນປະເທດກໍໄດ້ກ້າວໄປສູ່ແຮງງານ ຂອງ ນັກວິສະວະກອນແລະນັກເຕັກນິກໄປຕາມລັກສະນະຂອງຕົນເອງຫລາຍຍິ່ງຂຶ້ນ.ຊາວໄຮ່ຊາວນາກໍໄດ້ປ່ຽນແປງໄປ.ຊາວນາປະຈຸບັນນີ້ໄດ້ເກີດໃໝ່ແລະເຕີບໃຫຍ່ຂຶ້ນຢູ່ໃນສະຫະກອນກະເສດ, ແລະຈິດໃຈຂອງພວກເຂົາກໍໄດ້ຮັບການດັດສ້າງໄປແລ້ວ ບົນພື້ນຖານການລວມໝູ່. ພວກເຂົາໄດ້ມີເຕັກນິກທັນສະໄໝ, ລະດັບການສຶກສາແລະວິທີທາງດຳລົງຊີວິດ ຂອງພວກເຂົາກໍບໍ່ໄດ້ແຕກຕ່າງຈາກຜູ້ຄົນໃນເມືອງໄປຫລາຍປານໃດ.

ປັນຍາຊົນໂຊວຽດ ໄດ້ກາຍເປັນປັນຍາຊົນທີ່ມີລັກສະນະປະ

ຊາຈີນສັງຄົມນິຍົມທີ່ແທ້ຈິງ ແລະຈຸດຖ່ວງໜັກ ໃນຊີວິດສັງຄົມຂອງພວກເຂົາ ຂຶ້ນຢູ່ກັບການຂະຫຍາຍຕົວທາງລະດັບວັດທະນະທຳຂອງປະຊາຈີນ ແລະການເພີ່ມທະວີບົດບາດ ຂອງວິທະຍາສາດເຂົ້າໃນການສ້າງສາລະບົບກອມມູນິດ ແບບບໍ່ເຄີຍມີມາກ່ອນກໍເຕີບໃຫຍ່ຂະຫຍາຍຕົວຂຶ້ນ. ກິດຈະການທາງດ້ານສັງຄົມຂອງຊາວກຳມະກອນ, ຊາວນາແລະປັນຍາຊົນ ພ້ອມ ທັງການເຂົ້າຮ່ວມຢູ່ໃນອົງການບໍລິຫານລັດ ກໍໄດ້ເພີ່ມທະວີ ຂຶ້ນຢ່າງຫລວງຫລາຍ.

ບໍ່ແມ່ນມີແຕ່ທາງດ້ານກົດໝາຍຢ່າງດຽວເທົ່ານັ້ນ ແຕ່ຫາກທາງດ້ານພາກຕົວຈິງອີກ ທີ່ສະຫະພາບໂຊວຽດ ໄດ້ກາຍເປັນຊາດທີ່ມີສິດສະເໝີພາບກັນ ທັງນັ້ນກໍເພາະວ່າ ບັນດາ ສາທາລະນະລັດໂຊວຽດ ທັງໝົດທີ່ເຂົ້າຮ່ວມຢູ່ໃນສ່ວນປະກອບຂອງຊາດນັ້ນ ໄດ້ບັນລຸລະດັບການຂະຫຍາຍຕົວທາງດ້ານເສດຖະກິດແລະວັດທະນະທຳສູງແລ້ວ.

ການລົບລ້າງຄວາມແຕກຕ່າງກັນ ໃນລະຫວ່າງ ກຸ່ມສັງຄົມຂັ້ນພື້ນຖານເທື່ອລະກ້າວໆ, ການຫຍັບເຂົ້າໃກ້ກັນ ຂອງຊາດແລະປະຊາຊາດທີ່ມີສິດສະເໝີພາບກັນນັ້ນ ມັນໄດ້ເປັນເຫດໃຫ້ເກີດມີສັງຄົມປະຫວັດສາດໃໝ່ ຂອງຜູ້ຄົນທັງຫລາຍຂຶ້ນ-ຄືປະຊາຊົນໂຊວຽດ.

ບົນເງື່ອນໄຂຂອງສັງຄົມນິຍົມ ທີ່ຂະຫຍາຍຕົວ, ໄປພ້ອມກັບການຂ້າມຜ່ານໄປສູ່ຖານະທາງດ້ານການເມືອງ ແລະແນວຄິດຂອງຊົນຊັ້ນກຳມະກອນ ໃນທຸກພາກສ່ວນຂອງພົນລະເມືອງນັ້ນ

ລັດສັງຄົມນິຍົມໂຊວຽດທີ່ເກີດຂຶ້ນມາ ໃນຖານະເປັນລັດ ຜະເດັດການກຳມາຊີບ ກໍຈຶ່ງໄດ້ຂະຫຍາຍຕົວໄປສູ່ລັດ ປວງຊົນ. ຖານະທີ່ມີຄວາມໝາຍສຳຄັນຫລາຍຂໍ້ນີ້ ໄດ້ບົ່ງໄວ້ ໃນມາດຕາທີ ໑ ຂອງລັດຖະທຳມະນູນແຫ່ງສະຫະພາບໂຊວຽດສະບັບປີ ໑໙໗໗.

ປະຊາຊົນປະຕິບັດອຳນາດລັດໄປ ໂດຍຜ່ານສະພາໂຊວຽດຂອງຜູ້ແທນປະຊາຊົນ ເຊິ່ງຈັດຕັ້ງຂຶ້ນເປັນພື້ນຖານການເມືອງຂອງສະຫະພາບໂຊວຽດ.

ລັດຖະທຳມະນູນຂອງສະຫະພາບໂຊວຽດ ສະບັບປີ ໑໙໗໗ ແມ່ນເນັ້ນເຖິງຄວາມຈຳເປັນ ໃນການຄວບຄຸມ ຈາກຝ່າຍສະພາໂຊວຽດຂອງຜູ້ແທນປະຊາຊົນ ເພື່ອການ ຈັດຕັ້ງການບໍລິຫານແລະການປະຕິບັດງານຢ່າງມີຄວາມຫ້າວຫັນ. ລັດຖະທຳມະນູນ ແມ່ນບົ່ງການໃຫ້ສະພາໂຊວຽດ ແລະ ຜູ້ແທນຂອງສະພານີ້ ລາຍງານຕໍ່ປະຊາຊົນ ກ່ຽວກັບກິດຈະການຂອງພວກເຂົາໃຫ້ດຳເນີນໄປຢ່າງສະໝ່ຳສະເໝີ, ຊີ້ແຈງ ຕໍ່ບັນດາຜູ້ສະໝັກຮັບເລືອກຕັ້ງ ແລະ ສຶກສາຄົ້ນຄວ້າ ຂໍ້ສະເໜີທຸກຢ່າງຂອງຊາວຜູ້ອອກແຮງງານ ຢ່າງລະອຽດຖີ່ຖ້ວນ.

ການຂະຫຍາຍຕົວ ທາງດ້ານການສຶກສາ ແລະການບັນລຸນິຕິພາວະພົນລະເມືອງຂອງຊາວໜຸ່ມໂຊວຽດນັ້ນ ໄດ້ຮຽກຮ້ອງໃຫ້ມີການລຶດອາຍຸຂອງບຸກຄົນ ຜູ້ທີ່ມີສິດເລືອກຕັ້ງເຂົ້າສູ່ສະພາໂຊວຽດສູງສຸດແຫ່ງສະຫະພາບໂຊວຽດ ແລະ ສະພາໂຊວຽດສູງສຸດແຫ່ງສາທາລະນະລັດສະຫະພັນ. ຕາມລັດຖະທຳມະນູນ

ສະບັບປີ ໑໙໓໖ ຜູ້ຄົນທີ່ມີອາຍຸບໍ່ຕ່ຳກວ່າ ໒໓ ປີ ສາມາດເລືອກຕັ້ງໄດ້ແລ້ວ, ລັດຖະທຳມະນູນສະບັບປີ ໑໙໗໗ ກໍກຳນົດອາຍຸໄວ້ ບໍ່ໃຫ້ຕ່ຳກວ່າ ໒໑ ປີ ແລະ ຢູ່ໃນສະພາໂຊວຽດສູງສຸດແຫ່ງສາທາລະນະລັດສະຫະພັນ ບໍ່ໃຫ້ຕ່ຳກວ່າອາຍຸ໑໘ປີ ແທນທີ່ຈະເປັນ ໒໑ ປີ ຕາມທີ່ໄດ້ກຳນົດໄວ້ ໃນລັດຖະທຳມະນູນສະບັບປີ ໑໙໓໖.

ລັດຖະທຳມະນູນແຫ່ງສະຫະພາບໂຊວຽດ ສະບັບປີ ໑໙໗໗ ໄດ້ຂະຫຍາຍແລະເຮັດໃຫ້ສິດ ທາງດ້ານສັງຄົມ - ເສດຖະກິດທີ່ມີຢູ່ໃນລັດຖະທຳມະນູນສະບັບປີ ໑໙໓໖ ນັ້ນ ຄົບຖ້ວນຂຶ້ນ. ດັ່ງນັ້ນສິດໃນການເຮັດວຽກງານ ກໍໄດ້ຮັບການປະຕິບັດ ດ້ວຍການມີສິດເລືອກເອົາອາຊີບ, ປະເພດວຽກງານຕ່າງໆຕາມວິຊາຊີບ, ຕາມຄວາມສາມາດ, ຕາມການສຶກສາທີ່ໄດ້ຮັບການຝຶກຝົນອົບຮົມມາ ແລະ ຕາມການຮຽກຮ້ອງຕ້ອງການຂອງສັງຄົມ. ສິດໃນການຮັບປະກັນດ້ານວັດຖຸ ໃນເວລາເຖົ້າແກ່ ຊະລາການ, ໃນກໍລະນີມີການເຈັບປ່ວຍ,ໝົດຄວາມສາມາດໃນການເຮັດວຽກ ຫລືພຽງບາງສ່ວນນັ້ນ ກໍໄດ້ຮັບການ ປະຕິບັດດ້ວຍການມີສິດປິ່ນປົວສຸຂະພາບ. ສິດໃນການສຶກສາຮ່ຳຮຽນກໍໄດ້ສະແດງອອກດ້ວຍການມີຂໍ້ບັງຄັບໃຫ້ຊາວໜຸ່ມ ໄດ້ຮັບການສຶກສາຊັ້ນກາງ ແລະນອກນັ້ນ ການສຶກສາທຸກປະເພດ ກໍໄດ້ດຳເນີນໄປໂດຍບໍ່ໃຫ້ນັກຮຽນເສຍຄ່າຮຽນແຕ່ຢ່າງໃດເລີຍ. ສິດໃນການພັກຜ່ອນ ບໍ່ແມ່ນພຽງແຕ່ສະແດງອອກດ້ວຍການກຳນົດໄວ້ໃນອາທິດໜຶ່ງເຮັດວຽກບໍ່ໃຫ້ເກີດ ໔໑ ຊົ່ວໂມງ,ດ້ວຍ

ການອະນຸຍາດໃຫ້ຜູ້ລາພັກ ໄດ້ຮັບການຈ່າຍເງິນປະຈຳປີ,ປະຈຳມື້ໃນການພັກຜ່ອນເປັນອາທິດເທົ່ານັ້ນ ແຕ່ຍັງໄດ້ ປະຕິບັດໄປດ້ວຍການໃຫ້ມີສິດໃນການຊົມໃຊ້ຜົນສຳເລັດ ທາງດ້ານວັດທະນະທຳອີກດ້ວຍ.

ລັດຖະທຳມະນູນສະບັບປີ ໑໙໗໗ ແມ່ນໂຮມເອົາສິດ ທີ່ ມີຄວາມສຳຄັນແກ່ຊີວິດຂອງຜູ້ຄົນອີກ ເຊັ່ນສິດໃນເຄຫະສະຖານເຊິ່ງບໍ່ໄດ້ກຳນົດໄວ້ໃນລັດຖະທຳມະນູນສະບັບປີ ໑໙໓໖ ເລີຍ.

ເສລີພາບໃນການປາກເວົ້າ, ໃນການພິມ,ໃນການປະຊຸມ, ໃນການໂຮມຊຸມນຸມ, ໃນການເດີນຂະບວນ ຕາມຖະໜົນຫົນທາງ ແລະໃນການນຶກຄິດທີ່ຮັບປະກັນໄວ້ ໃນລັດຖະທຳມະນູນສະບັບປີ ໑໙໓໖ ນັ້ນ ກໍໄດ້ຮັບການຢືນຢັນ ຢ່າງກວ້າງຂວາງໃນລັດຖະທຳມະນູນສະບັບປີ ໑໙໗໗. ສິດຂອງພົນລະເມືອງທີ່ກຳນົດໄວ້ໃນລັດຖະທຳມະນູນໃໝ່ ເພື່ອສະເໜີ ຂໍ້ສະເໜີຕໍ່ອົງການຂອງລັດແລະຂອງມວນຊົນ, ເພື່ອຕຳນິຕິຊົມຂໍ້ບົກພ່ອງໃນວຽກງານ, ເພື່ອຮຽກຮ້ອງເອົາໜ້າທີ່ການງານ ຕໍ່ ສານແລະພ້ອມດຽວກັນນັ້ນ ສິດໃນການປ້ອງກັນທາງສານຈາກການບຸກລຸກຕໍ່ຊີວິດແລະສຸຂະພາບ, ຕໍ່ຊັບສິນບັດແລະເສລີພາບຂອງບຸກຄົນ, ຕໍ່ກຽດແລະຄວາມເຄົາລົບນັບຖືຂອງຕົນນັ້ນກໍໄດ້ກາຍເປັນຂໍ້ເພີ່ມເຕີມຕໍ່ການຮັບປະກັນສິດ ຂອງບຸກຄົນ ຈາກລັດຖະທຳມະນູນ.

ຄວາມສະເໝີພາບຂອງພົນລະເມືອງ ແຫ່ງສະຫະພາບໂຊວຽດ ຕໍ່ໜ້າກົດໝາຍ ໃນຄວາມເປັນເອກະລາດ ທາງດ້ານ

ພູມລຳເນົາ, ຖານະທາງສັງຄົມ ແລະຜົນປະໂຫຍດ, ສັງກັດເຊື້ອຊາດແລະຊົນຊາດ, ເພດ, ການສຶກສາ, ພາສາ, ການນັບຖືສາສະໜາ, ປະເພດແລະລັກສະນະວຽກງານ, ສະຖານທີ່ຢູ່ອາໄສແລະສະພາບແວດລ້ອມອື່ນໆ, ສິດສະເໝີພາບຂອງພົນລະເມືອງແຫ່ງ ສ.ສ.ສ.ຊ ໃນທຸກໆຂະແໜງການແຫ່ງຊີວິດທາງດ້ານເສດຖະກິດການເມືອງ, ສັງຄົມແລະວັດທະນະທຳນັ້ນ ແມ່ນໄດ້ຖືກຢັ້ງຢືນຄືນອີກເທື່ອໜຶ່ງ ໂດຍລັດຖະທຳມະນູນສະບັບປີ ໑໙໗໗.

ລັດຖະທຳມະນູນບົ່ງໄວ້ວ່າ ການປະຕິບັດສິດແລະເສລີພາບບໍ່ສາມາດຈະແຍກອອກຈາກໜ້າທີ່ ອັນເປັນຂໍ້ຜູກພັນຂອງຕົນທີ່ເປັນພົນລະເມືອງໄດ້. ການປະຕິບັດລັດຖະທຳມະນູນ ແລະກົດໝາຍຕ່າງໆແຫ່ງສະຫະພາບໂຊວຽດ, ການເຄົາລົບນັບຖືການປົກຄອງອັນເປັນພຶດຕິກຳຂອງສັງຄົມ ພ້ອມທັງຜົນສຳເລັດຕ່າງໆນັ້ນ ໄດ້ນຳເອົາຊື່ສຽງດີງດັງມາໃຫ້ແກ່ພົນລະເມືອງສະຫະພາບໂຊວຽດ, ເຮັດໃຫ້ພວກເຂົາເລືອກເອົາ ຂະແໜງການວຽກງານທີ່ສັງຄົມຊົມໃຊ້ຢ່າງມີສະຕິ, ປ້ອງກັນແລະສ້າງຊັບສິນບັດສັງຄົມນິຍົມໃຫ້ເຂັ້ມແຂງ, ຮັກສາຜົນປະໂຫຍດຂອງລັດໂຊວຽດໄວ້, ປ້ອງກັນປິຕຸພູມສັງຄົມນິຍົມ, ສ້າງມິດຕະພາບຂອງບັນດາຊົນຊາດແຫ່ງ ສ.ສ.ສ.ຊ. ໃຫ້ເຂັ້ມແຂງ, ຊ່ອຍເຫລືອມິດຕະພາບທີ່ພວມຂະຫຍາຍຕົວ ແລະການຮ່ວມມືກັບບັນດາປະຊາຊາດແຫ່ງປະເທດຕ່າງໆ, ໃຫ້ການສະໜັບສະໜູນແລະສ້າງສັນຕິພາບທົ່ວໂລກໃຫ້ເຂັ້ມແຂງຂຶ້ນ-ທັງໝົດເຫລົ່ານີ້

ເປັນຂໍ້ຜູກພັນຂັ້ນພື້ນຖານ ຂອງພົນລະເມືອງໂຊວຽດທຸກໆຄົນທີ່ບົ່ງໄວ້ໃນລັດຖະທຳມະນູນສະບັບປີ ໑໙໓໖ ແລະ ຂະຫຍາຍອອກໂດຍລັດຖະທຳມະນູນສະບັບປີ ໑໙໗໗. ມາດຕາ ໖໖ແຫ່ງລັດຖະທຳມະນູນສະບັບປີ ໑໙໗໗ ໄດ້ລະບຸຂໍ້ຄວາມ ກ່ຽວກັບຄວາມຫ່ວງໃຍໃນການຝຶກຝົນອົບຮົມ ໃຫ້ແກ່ອະນຸຊົນວ່າ: "ພົນລະເມືອງແຫ່ງສະຫະພາບໂຊວຽດ ຈຳເປັນຕ້ອງຫ່ວງໃຍກ່ຽວກັບການຝຶກຝົນອົບຮົມເດັກນ້ອຍ, ຝຶກສອນພວກເຂົາ ເພື່ອໃຫ້ຮູ້ເຮັດວຽກທີ່ເປັນປະໂຫຍດແກ່ສັງຄົມ ແລະລ້ຽງເຂົາໃຫ້ເປັນສະມາຊິກທີ່ມີຄຸນຄ່າແກ່ສັງຄົມສັງຄົມນິຍົມ. ພວກເດັກຈຳຕ້ອງເບິ່ງແຍງພໍ່ແມ່ແລະຊ່ອຍເຫຼືອພວກເຂົາ."

ເພື່ອໃຫ້ແຕກຕ່າງໄປຈາກ ລັດຖະທຳມະນູນສະບັບປີ໑໙໓໖ ນັ້ນ ເພິ່ນໃຫ້ມີບົດພິເສດບົດໜຶ່ງຊື່ວ່າ "ນະໂຍບາຍພາຍນອກ" ໃນລັດຖະທຳມະນູນໃໝ່. ຄວາມແຕກຕ່າງຂັ້ນພື້ນຖານໃນສະພາບການສາກົນແຫ່ງສະຫະພາບໂຊວຽດ, ການຂະຫຍາຍອິດທິພົນອັນສຳຄັນຂອງຕົນ ໃນນະໂຍບາຍສັນຕິພາບ, ການຮ່ວມມືກັນທີ່ແໜ້ນແຟ້ນ ໃນພາກຕົວຈິງແຫ່ງການຂະຫຍາຍຕົວຂອງພວກເຮົາທາງດ້ານນະໂຍບາຍພາຍນອກ ແລະພາຍໃນເຫຼົ່ານີ້ ໄດ້ມີຄວາມຈຳເປັນທີ່ຕ້ອງລະບຸໄວ້ໃນບົດພິເສດນີ້ ເຊິ່ງໃນນັ້ນຍັງເວົ້າອີກວ່າ ສະຫະພາບໂຊວຽດ ຕ້ອງດຳເນີນ ນະໂຍບາຍສັນຕິພາບຂອງເລນິນ,ປະກອບສ່ວນເຂົ້າເພື່ອຄວາມປອດໄພຂອງບັນດາປະຊາຊາດແລະໃຫ້ການຮ່ວມມືທາງສາກົນຢ່າງແໜ້ນແຟ້ນແລະກວ້າງຂວາງ, ນະໂຍບາຍພາຍນອກແຫ່ງສະ

ທະພາບໂຊວຽດ ໄດ້ມີທິດທາງໄປ ໃນການເຮັດໃຫ້ ສະພາບການສາກົນເປັນທີ່ພໍອົກພໍໃຈ ເພື່ອການສ້າງສາລະບອບກອມມູນິດຂຶ້ນຢູ່ໃນ ສ.ສ.ສ.ຊ., ໃນການເສີມສ້າງຖານະຂອງລະບອບສັງຄົມນິຍົມສັນຕິພາບໃຫ້ເຂັ້ມແຂງ, ຊ່ອຍເຫລືອການຕໍ່ສູ້ຂອງບັນດາປະຊາຊາດ ເພື່ອການປົດປ່ອຍຊາດ ແລະ ຄວາມກ້າວໜ້າທາງສັງຄົມ, ໃນການປ້ອງກັນສົງຄາມຮຸກຮານ,ບັນລຸການປົດອາວຸດທົ່ວໄປແລະສິ້ນເຊີງ ແລະ ປະຕິບັດຫລັກການຢູ່ຮ່ວມກັນໂດຍສັນຕິທີ່ສຸດກົກສຸດປາຍ ກັບລັດທີ່ມີລະບອບສັງຄົມແຕກຕ່າງກັນ. ໃນລັດຖະທຳມະນູນແຫ່ງສະຫະພາບ ໂຊວຽດກັບລັດທີ່ມີລະບອບສັງຄົມແຕກຕ່າງກັນ. ໃນລັດ ຖະທຳມະນູນແຫ່ງສະຫະພາບໂຊວຽດ ໄດ້ມີການຫ້າມບໍ່ໃຫ້ມີການໂຄສະນາສົງຄາມ. ສະຫະພາບໂຊວຽດໃນຖານະ ເປັນພາກສ່ວນ ປະກອບຂອງລະບົບສັງຄົມນິຍົມໃນໂລກ ແມ່ນພວມຂະຫຍາຍແລະພວມສ້າງມິດຕະພາບ, ການຮ່ວມມື ແລະການຊ່ອຍເຫລືອກັນຖານມິດສະຫາຍກັບບັນດາປະເທດສັງຄົມນິຍົມໃຫ້ເຂັ້ມແຂງບົນພື້ນຖານສາກົນສັງຄົມນິຍົມ.

ລັດຖະທຳມະນູນສະບັບປີ ໑໙໗໗ ຢັ້ງຢືນວ່າ ພັກກອມມູນິດແຫ່ງສະຫະພາບໂຊວຽດ ແມ່ນກຳລັງນຳພາແລະຊີ້ນຳຂອງສັງຄົມໂຊວຽດ, ແມ່ນໃຈກາງລະບົບການເມືອງ ຂອງສັງຄົມນີ້, ແມ່ນອົງການລັດແລະສັງຄົມ ແລະວ່າພັກເກີດຂຶ້ນມາ ເພື່ອປະຊາຊົນ ແລະຮັບໃຊ້ປະຊາຊົນ,ອົງການຈັດຕັ້ງພັກທັງໝົດແມ່ນປະຕິບັດໜ້າທີ່ຢູ່ໃນຂອບເຂດ ຂອງລັດຖະທຳມະນູນ.ຫຼັກການ

ເລໂອນິດ ອິລິດ ບະເລັດຊະເນັບ, ເລຂາທິການໃຫຍ່ແຫ່ງ
ຄະນະກຳມະການສູນກາງ ພ.ກ.ສ.ຊ., ປະທານຄະນະ
ປະທານ ສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ.

ຂອງລັດຖະທຳມະນູນນີ້ ສ່ອງແສງເຖິງຄວາມເປັນເອກະພາບຂອງພັກກອມມູນິດ ແລະຂອງປະຊາຊົນທີ່ມີເສລີພາບ.

ທ່ານບະເລັດຊະເນັບ, ເລຂາທິການໃຫ່ຍ ຂອງຄະນະກຳມະການສູນກາງພັກກອມມູນິດ ແຫ່ງສະຫະພາບໂຊວຽດ, ປະທານຂອງຄະນະປະທານສະພາໂຊວຽດສູງສຸດແຫ່ງສະຫະພາບໂຊວຽດ ໄດ້ປະກອບສ່ວນເຂົ້າໃນການຮ່າງ ລັດຖະທຳມະນູນສະບັບປີ ໑໙໗໗ ນີ້ ຢ່າງໃຫ່ຍຫລວງ. ກິດຈະການອັນບໍ່ຮູ້ຈັກອິດເມື່ອຍຂອງທ່ານເພື່ອການຢູ່ດີກິນດີ ຂອງປະຊາຊົນໂຊວຽດ ແລະການຕໍ່ສູ້ເພື່ອສັນຕິພາບທົ່ວໂລກ ຢ່າງບໍ່ຢຸດບໍ່ຢັ້ງນັ້ນ ແມ່ນເຮັດໃຫ້ທ່ານບະເລັດຊະເນັບ ໄດ້ຮັບຄວາມເຄົາລົບນັບຖືຈາກປະຊາຊົນໂຊວຽດ, ຈາກບັນດາຜູ້ຄົນທີ່ມີຈິດຕະນາດີໃນໂລກນີ້ຢ່າງຫລວງຫລາຍ.

ກອງປະຊຸມໃຫ່ຍພັກກອມມູນິດ ແຫ່ງສະຫະພາບໂຊວຽດຄັ້ງທີ ໒໖ ໄດ້ເປີດຂຶ້ນໃນທ້າຍເດືອນກຸມພາ- ຕົ້ນເດືອນ ມີນາ ໑໙໘໑. ໃນກອງປະຊຸມນີ້ ໄດ້ມີການສະຫລຸບ ການພັດທະນາເສດຖະກິດແລະສັງຄົມໃນໄລຍະແຜນການຫ້າປີຊຸດທີ ໑໐ແລະທັງໃນໄລຍະ ໑໙໗໐ ທັງໝົດອີກດ້ວຍ.

ຈາກການສະຫລຸບເຫລົ່ານີ້ ມັນເປັນທີ່ຈະແຈ້ງວ່າ ບັນຫາຕ່າງໆທີ່ຜະເຊີນຫນ້າປະເທດໃນແຜນການຫ້າປີທີ່ແລ້ວນັ້ນແມ່ນໄດ້ຮັບການແກ້ໄຂໄປຢ່າງມີຜົນສຳເລັດ. ລາຍໄດ້ ແຫ່ງຊາດຄົນສົມທຽບໃສ່ແຜນການຫ້າປີຊຸດທີ ໙ ແລ້ວແມ່ນເພີ່ມຂຶ້ນຮອດ ໔໐໐ ຕື້ຫລູບ, ຜະລິດຕະພັນອຸດສາຫະກຳ ຄິດເປັນເງິນແລ້ວ

ມີຮອດ ໗໑໗ ຕື້ຫລຸບ, ນອກນັ້ນ ວິສາຫະກິດ ອຸດສາຫະກຳ ໃຫຍ່ ໑໔໐໐ ກ່ວາແຫ່ງ ກໍໄດ້ຮັບການສ້າງຂຶ້ນ. ໃນໄລຍະ໑໐ ປີ (໑໙໗໑-໑໙໘໐) ນີ້ ຄົນສົມທຽບໃສ່ກັບໄລຍະ ໑໐ປີກ່ອນ ນັ້ນແລ້ວ ການຜະລິດພະລັງງານໄຟຟ້າອອກກໍໄດ້ເພີ່ມຂຶ້ນຮອດ ສອງເທົ່າ. ການສ້າງສາສະຖານີພະລັງງານໄຟຟ້າ ນ້ຳຕົກ ໃຫຍ່ຫລາຍແຫ່ງ ເຊິ່ງຕັ້ງຢູ່ໃນແມ່ນ້ຳຕ່າງໆ ຂອງຊີບີລີ ແລະ ອາຊີກາງນັ້ນ ກໍໄດ້ສຳເລັດໄປແລະສະຖານີໄຟຟ້າ ໃຊ້ຄວາມ ຮ້ອນແລະປາລະມານູທີ່ມີກຳລັງແຮງໃຫມ່ ກໍໄດ້ເປີດໃຊ້ຂຶ້ນໃນ ປະເທດ.

ວິສະວະກຳພະລັງງານປາລະມານູ ໄດ້ຮັບເຕັກນິກ ທັນສະ ໄຫມ ຄື ໂຮງງານສ້າງກົນຈັກປາລະມານູ ເຊິ່ງສ້າງຂຶ້ນເປັນ ໂຮງງານໃຈກາງ ເພື່ອການຜະລິດອາຍນ້ຳກໍໄດ້ເລີ່ມຕົ້ນເຮັດ ວຽກ. ພຽງແຕ່ແຜນການຫ້າປີຊຸດທີ ໑໐ ເທົ່ານັ້ນ ການກັ່ນ ນ້ຳມັນກໍໄດ້ເພີ່ມຂຶ້ນຫລາຍກວ່າສອງເທົ່າ, ການກັ່ນກ໊າດ(ອາຍ ໄຕ້) ກໍໄດ້ຮອດ ໔,໓ ເທົ່າ. ສາຍທາງລົດໄຟໄບການ-ອາ ມູລະ ທີ່ມີຄວາມຍາວເຖິງ ໓໔໐໐ ກິໂລແມດເຊິ່ງຈະສຳເລັດ ການສ້າງລົງໃນແຜນການຫ້າປີຊຸດທີ ໑໑ ນັ້ນ ແມ່ນມີບົດບາດ ສຳຄັນໃນການພັດທະນາເສດຖະກິດຊີບີລີ ແລະ ຕາເວັນອອກ ໄກຕໍ່ໄປ.

ໃນປີ ໑໙໗໖-໑໙໘໐ ມີຫລາຍສິ່ງຫລາຍຢ່າງໄດ້ກະທຳໄປ ເພື່ອການຂະຫຍາຍກະສິກຳ. ເຖິງວ່າໃນສາມປີ ຂອງ ແຜນ ການຫ້າປີນີ້ ຈະບໍ່ໄດ້ຮັບການເກັບກ່ຽວດີປານໃດກໍຕາມ ຍ້ອນ

ດິນຟ້າອາກາດບໍ່ອຳນວຍ, ເຖິງປານນັ້ນກໍຕາມ ການເກັບກ່ຽວກະສິກຳແຕ່ລະປີ ກໍຍັງຢູ່ໃນລະດັບກາງ ຄືໄດ້ຫລາຍກວ່າແຜນການຫ້າປີຊຸດທີ ໙ ເຖິງ ໙% ເປີເຊັນ. ການທ້ອນໂຮມເມັດພືດ ເມື່ອຄິດສະເຫລ່ຍແຕ່ລະປີແລ້ວ ແມ່ນໄດ້ເຖິງ ໒໐໕ລ້ານໂຕນ, ໄດ້ຫລາຍກວ່າແຜນການຫ້າປີ ປີ ໑໙໗໑-໑໙໗໕ເຖິງ ໒໔ ລ້ານໂຕນ.

ການເຕີບໃຫ່ຍຂະຫຍາຍຕົວທາງດ້ານກຳລັງ ເສດຖະກິດຂອງສະຫະພາບໂຊວຽດ ແມ່ນໄດ້ໄຂໂອກາດໃຫມ່ໃຫ້ແກ່ການຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳຂອງປະຊາຊົນຂຶ້ນ. ມາຮອດທ້າຍແຜນການຫ້າປີພົນລະເມືອງຂອງປະເທດປະມານເຄິ່ງຫນຶ່ງ ກໍໄດ້ມີລາຍໄດ້ເພີ່ມຂຶ້ນ ເຖິງ ໑໐໐ ຫລູບຕໍ່ເດືອນ ໃນແຕ່ລະຄົນ ຂອງສະມາຊິກ ຄອບຄົວ, ສ່ວນໃນປີ ໑໙໗໐ ນັ້ນ ພົນລະເມືອງທີ່ມີລາຍໄດ້ ແບບນີ້ ກໍມີພຽງແຕ່ ໑໘ ເປີເຊັນເທົ່ານັ້ນ. ອັດຕາເງິນເດືອນ ຂັ້ນກາງຂອງຊາວກຳມະກອນ ແລະ ພະນັກງານກໍໄດ້ເພີ່ມຂຶ້ນໄປເຖິງ ໑໖ ເປີເຊັນ, ສ່ວນລາຍໄດ້ຂອງຊາວສະຫະກອນກະເສດມາຈາກເສດຖະກິດສັງຄົມນັ້ນ ກໍໄດ້ມີຮອດ ໒໖ ເປີເຊັນ.

ໃນໄລຍະ ໑໐ ປີຂອງປີ ໑໙໗໐ (໑໙໗໐-໑໙໘໐) ນັ້ນອັດຕາເງິນເບັ້ຍບຳນານຂັ້ນຕ່ຳ ຂອງຊາວກຳມະກອນ, ພະນັກງານແລະຊາວສະຫະກອນກະເສດ ກໍໄດ້ຮັບການຍົກສູງຂຶ້ນ . ເງື່ອນໄຂຊີວິດການເປັນຢູ່ຂອງບັນດາ ຜູ້ທີ່ເຂົ້າຮ່ວມໃນມະຫາສົງຄາມປ້ອງກັນປິຕຸພູມ ກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ.ເງິນບຳ

ຈຸງສຳລັບເດັກນ້ອຍ ທີ່ມາຈາກຄອບຄົວ ທີ່ມີລາຍໄດ້ຫນ້ອຍ ກໍ ຖືກນຳມາໃຊ້. ເງິນທຶນໃຫ້ແກ່ນັກສຶກສາສະຖາບັນການສຶກສາ ຊັ້ນສູງ, ແກ່ນັກຮຽນໂຮງຮຽນພິເສດຊັ້ນກາງແລະແກ່ນັກຮຽນ ເຕັກນິກ ກໍໄດ້ເພີ່ມຂຶ້ນ. ນອກນັ້ນນັກຮຽນຊັ້ນປະຖົມປີທີ່ ໑ ເຖິງ ປີທີ ໔ ກໍໄດ້ຮັບຕຳລາຮຽນຢ່າງບໍ່ຕ້ອງເສຍຄ່າ.

ໃນໄລຍະປີເຫລົ່ານີ້ ການຜະລິດສິນຄ້າທີ່ປະຊາຊົນ ຮຽກ ຮ້ອງຕ້ອງການ ກໍໄດ້ເພີ່ມຂຶ້ນ ເກືອບເຖິງ ໒ ເທົ່າ. ປ້າວ ເຮືອນ, ຊຸມເຮືອນທົ່ວໄປ ເຊິ່ງມີພົນທີ່ຫລາຍກວ່າ ຕົວເມືອງ ຕ່າງໆ ທີ່ມີມາແຕ່ໃນຕອນເລີ່ມຕົ້ນຂອງໄລຍະປີ ໑໙໒໐ ນັ້ນກໍ ໄດ້ຮັບການສ້າງຂຶ້ນ. ພຽງແຕ່ໃນແຜນການຫ້າປີຊຸດທີ ໑໐ ເທົ່າ ນັ້ນ ຜູ້ຄົນ ໔໐ ລ້ານປາຍ ກໍໄດ້ຮັບ ການປັບປຸງ ເງື່ອນໄຂ ເຮືອນຢູ່ຂອງພວກເຂົາໃຫ້ດີຂຶ້ນ.

ຜົນສຳເລັດໃນຂະແຫນງການອາວະກາດ ແມ່ນສາມາດຮັບ ໃຊ້ເປັນຕົວຢ່າງອັນດີເລີດ ໃຫ້ແກ່ການພັດທະນາວິທະຍາສາດ ໂຊວຽດ ໃນແຜນການຫ້າປີຊຸດທີ ໑໐. ລົມມາຮອດທ້າຍແຜນ ການຫ້າປີ ສະຖານີອາວະກາດໂຊວຽດ ຊື່ "ຊາລຸດ-໖" ກໍໄດ້ ໂຄຈອນຢູ່ໃນອາວະກາດຮອດສາມປີປາຍ. ໃນໄລຍະເວລານີ້ ໄດ້ມີຄະນະນັກບິນອາວະກາດຮອດ ໑໖ ຄະນະບິນຂຶ້ນໄປຢ້ຽມ ຢາມ ໃນນັ້ນມີຄະນະນັກບິນອາວະກາດ ລະຫວ່າງຊາດ ຮອດ ໖ ຄະນະ. ຄະນະນັກບິນອາວະກາດໂຊວຽດ ຄະນະສຸດທ້າຍ ທີ່ຂຶ້ນໄປຢູ່ໃນສະຖານີນີ້ ໄດ້ກິນເວລາຮອດເຄິ່ງປີ. ວຽກງານ ຂອງພວກນັກອາວະກາດ ແລະນັກອາວະກາດອ້າຍນ້ອງ ທີ່ມາ

ຈາກປະເທດສັງຄົມນິຍົມນັ້ນ ບໍ່ແມ່ນມີຄວາມໝາຍສຳຄັນ ແຕ່ໃນດ້ານວິທະຍາສາດ ແລະເສດຖະກິດແຫ່ງຊາດເທົ່ານັ້ນ ແຕ່ຍັງມີບົດບາດສຳຄັນໃນທາງການເມືອງອີກດ້ວຍ.

ກອງປະຊຸມໃຫຍ່ພັກກອມມູນິດແຫ່ງສະຫະພາບໂຊວຽດຄັ້ງທີ ໒໕ ໄດ້ຮັບຮອງເອົາເປົ້າໝາຍໃນປີ ໑໙໘໑-໑໙໘໕ວ່າດ້ວຍການຮັບປະກັນໃຫ້ມີການເຕີບໃຫຍ່ຂະຫຍາຍຕົວ ດ້ານສະວັດດີພາບຂອງປະຊາຊົນໂຊວຽດ ບົນພື້ນຖານການພັດທະນາ ເສດຖະກິດແຫ່ງຊາດໃຫ້ມີຄວາມໝັ້ນຄົງແລະກ້າວໜ້າ, ເລັ່ງລັດໃຫ້ມີຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກແລະຫັນປ່ຽນເສດຖະກິດໄປຕາມເສັ້ນທາງ ການຂະຫຍາຍຕົວ ຢ່າງໜັກແໜ້ນ, ໃຊ້ກຳລັງຄວາມສາມາດການຜະລິດ ຂອງ ປະເທດໄປໃນທາງທີ່ມີເຫດຜົນຫລາຍຂຶ້ນ ທັງໃຊ້ແຫລ່ງຊັບພະຍາກອນທັງໝົດຢ່າງແບບມີການປະຢັດ ແລະ ປັບປຸງຄຸນນະພາບຂອງວຽກງານໃຫ້ດີຂຶ້ນ ເປັນສິ່ງສຳຄັນ.

ໃນໄລຍະແຜນການຫ້າປີຊຸດທີ ໑໐ ນີ້ ສະຫະພາບໂຊວຽດກໍໄດ້ຂະຫຍາຍສາຍພົວພັນແບບອ້າຍນ້ອງ ກັບບັນດາ ປະເທດວົງສາຄະນາຍາດສັງຄົມນິຍົມ, ປັບປຸງສາຍພົວພັນກັບ ບັນດາປະເທດສັງຄົມນິຍົມອື່ນໆ ໃຫ້ແໜ້ນແຟ້ນ, ບໍ່ແມ່ນແຕ່ໃນ ກຸ່ມສົນທິສັນຍາວາກໂຊວີ ແລະສະພາຊ່ອຍເຫລືອເສດຖະກິດ ເຊິ່ງກັນແລະກັນ (ສ.ຊ.ສ.)ເທົ່ານັ້ນ. ມັນບໍ່ແມ່ນຄວາມຜິດຂອງ ສ.ສ.ສ.ຊ.ເລີຍທີ່ບໍ່ໄດ້ສ້າງສາຍພົວພັນລະຫວ່າງໂຊວຽດກັບຈີນໃຫ້ເປັນປົກກະຕິ. ສະຫະພາບໂຊວຽດ ກໍຄືກັນກັບບັນດາ ປະ

ເຫດອື່ນຂອງສະພາຊ່ອຍເຫລືອເສດຖະກິດ ເຊິ່ງກັນ ແລະກັນ ຖືເອົາການເຕົ້າໂຮມປະເທດ ສັງຄົມນິຍົມ ເຂົ້າຫາກັນ ຢ່າງ ແໜ້ນແຟ້ນ ເປັນພື້ນຖານໂຄງການໄລຍະຍາວນານເປັນບັນຫາ ຮີບດ່ວນ. ດ້ວຍວັດຖຸປະສົງອັນນີ້ ຄົນມາຮອດທ້າຍປີແຜນການ ຫ້າປີຊຸດທີ ໑໐ ຂໍ້ຕົກລົງຢ່າງຮອບດ້ານ ປະມານ ໑໔໐ສະບັບ ແລະຂໍ້ຕົກລົງລະຫວ່າງສອງຝ່າຍ ພັນປາຍສະບັບກໍໄດ້ຮັບການ ລົງນາມກັນ.

ການຮ່ວມມືຂອງສະຫະພາບໂຊວຽດ ກັບປະເທດຕ່າງໆ ທີ່ ໄດ້ຮັບການປົດປ່ອຍ ອອກຈາກແອກຄອບຄອງຂອງລັດທິລ່າຫົວ ເມືອງຂຶ້ນນັ້ນ ກໍໄດ້ແຜ່ຂະຫຍາຍກວ້າງອອກ. ໃນໄລຍະ ລະ ຫວ່າງກອງປະຊຸມໃຫຍ່ພັກກອມມູນິດສະຫະພາບໂຊວຽດ ຄັ້ງທີ ໒໔ ກັບຄັ້ງທີ ໒໕ ນີ້ ກໍໄດ້ມີການເຊັນຂໍ້ຕົກລົງກ່ຽວກັບມິດຕະ ພາບແລະການຮ່ວມມືກັນກັບປະເທດ ອັງໂກລາ, ເອທີໂອເປຍ, ໂມຊຳບິກ, ອັບຟະການິສະຖານ, ສາທາລະນະລັດ ປະຊາທິ ປະໄຕປະຊາຊົນ ເຢເມນ ແລະ ຊີລີ.

ເມື່ອຈັກກະພັດນິຍົມ ໄດ້ດຳເນີນສົງຄາມຕ້ານການປະຕິວັດ ອັບຟະການິສະຕານ ຢ່າງບໍ່ໄດ້ປະກາດນັ້ນ ໂດຍໄດ້ ຮັບການ ຊຸກຍູ້ແລະການຊ່ອຍເຫລືອ ຈາກພວກປະຕິການພາຍໃນ, ພວກ ກອງປຸ້ນຕ້ານປະຕິວັດ ກໍໄດ້ຖືກສົ່ງເຂົ້າສູ່ ອັບຟະການິສະຕານ ເຊິ່ງນັບວ່າ ເປັນການນາບຂູ່ໂດຍກົງຕໍ່ຊາຍແດນດ້ານໃຕ້ຂອງ ສ.ສ.ສ.ຊ. ດັ່ງນັ້ນສະຫະພາບໂຊວຽດ ຈຶ່ງຈຳຕ້ອງໄດ້ ໃຫ້ ການຊ່ອຍເຫລືອທາງດ້ານທະຫານແກ່ອັບຟະການິສະຖານໂດຍ

• ກອງປະຊຸມໃຫຍ່ແຫ່ງພັກກອມມູນິດສະຫະພາບໂຊວຽດ
• ຄັ້ງທີ XXVI. ເດືອນກຸມພາ ປີ ໑໙໘໑.

ໄດ້ຮັບການຂໍຮ້ອງຈາກລັດຖະບານຂອງປະເທດນີ້.

ສ່ວນມິດຕະພາບລະຫວ່າງໂຊວຽດກັບອິນເດຍນັ້ນ ໄດ້ກາຍເປັນປະເພນີທີ່ໜັ້ນຄົງຖາວອນ ລະຫວ່າງສອງຊາດຕະຫລອດມາ.

ໃນບົດລາຍງານສະຫລຸບຕໍ່ກອງປະຊຸມໃຫຍ່ ພັກກອມມູນິດແຫ່ງສະຫະພາບໂຊວຽດນັ້ນ ທ່ານບະເລັດຊະເນັບໄດ້ກ່າວວ່າ "ໃນອ້າງໜ້ານີ້ ພ.ກ.ສ.ຊ. ຈະດຳເນີນ ນະໂຍບາຍ ຂະຫຍາຍການຮ່ວມມືລະຫວ່າງ ສ.ສ.ສ.ຊ. ກັບບັນດາປະເທດທີ່ໄດ້ຮັບການປົດປ່ອຍ, ສາມັກຄີກັບພັນ ທະມິດ ສັງຄົມນິຍົມ ແລະຂະບວນການປົດປ່ອຍຊາດ ຢ່າງສຸດກຶກສຸດປາຍ."

ຢູ່ໃນໂລກທຶນນິຍົມ ໄລຍະສິບປີ (໑໙໗໑–໑໙໘໐) ທີ່ແລ້ວມາແມ່ນໄດ້ສະແດງໃຫ້ເຫັນເຖິງການເກີດວິກິດການ ອັນຮ້າຍແຮງຕໍ່ໄປ. ມາຮອດທ້າຍແຜນການສິບປີ ໂລກທຶນນິຍົມ,ກໍໄດ້ປະສົບກັບຄວາມຫລົ້ມຈົມ ເສດຖະກິດເຖິງ ໓ ເທື່ອ. ໃນໄລຍະ ໙ ປີ ແລ້ວມາ ລາຄາສິນຄ້າຢູ່ໃນລະດັບກາງ ໃນບັນດາປະເທດທຶນນິຍົມ ໄດ້ຖີບສູງຂຶ້ນເຖິງ ໔–໓ ເທົ່າ, ຄົນຫວ່າງງານໄດ້ເພີ່ມຂຶ້ນຮອດ ໔ ເທົ່າ ໂດຍມີຮອດ ໑໙ ລ້ານ ຄົນ. ການເກີດວິກິດການອັນໜັກໜ່ວງ ແບບຫລໍ່ແຫລມໂດຍພິເສດນີ້ໄດ້ມີຂຶ້ນໃນຫ້າປີຫລັງ ຂອງແຜນການຊຸດທີ ໑໐. ນອກ ນັ້ນການຕໍ່ສູ້ກັນ ເພື່ອສະແຫວງຫາຕະຫລາດ ຂາຍສິນຄ້າ ເພື່ອແຫລ່ງວັດຖຸດິບແລະພະລັງງານ ກໍໄດ້ມີຄວາມຮຸນແຮງຂຶ້ນ.

ໃນສະພາບການນີ້ ກຸ່ມຈັກກະພັດນິຍົມຜູ້ຮູກຮານ ທີ່ໄດ້ ພະ

ຍາຍາມເຮັດໃຫ້ປະເທດຂອງຕົນມີລັກສະນະເປັນທະຫານແລະ
ມີການແຂ່ງຂັນກັນສ້າງອາວຸດນັ້ນ ກໍໄດ້ດຳເນີນວຽກງານຂອງ
ຕົນໄປຫລາຍຍິ່ງຂຶ້ນ. ໂດຍສະເພາະແລ້ວເລື່ອງນີ້ໄດ້ເກີດຂຶ້ນ
ຢູ່ໃນ ສ.ລ.ອ. ໃນໄລຍະເວລາທີ່ກາເຕີກຳອຳນາດການປົກ
ຄອງຢູ່ໃນປະເທດນີ້ ລາຍຈ່າຍດ້ານທະຫານກໍໄດ້ເພີ່ມທະວີຂຶ້ນ
ຢ່າງບໍ່ມີການສົມດູນກັນເລີຍ ຄືໄດ້ມີຮອດ ໑໕໐ ຕື້ດອນລາຕໍ່ປີ.
ລັດຖະບານກາເຕີ ໄດ້ດຳເນີນນະໂຍບາຍ ໃນການ ເຮັດໃຫ້
ຄວາມເຄັ່ງຕຶງທາງສາກົນເກີດຂຶ້ນ,ໃນການເຮັດໃຫ້ສະຫະລັດ
ອາເມລິກາມີອິດທິພົນກວມໂລກ. ລັດຖະບານນີ້ໄດ້ທຳລາຍທ່າ
ທີອັນດີໃນຄວາມສຳພັນລະຫວ່າງໂຊວຽດ ກັບອາເມລິກາຢ່າງ
ຕັ້ງໜ້າ ເຊິ່ງໄດ້ກໍ່ຄວາມຫຍຸ້ງຍາກອັນໃຫຍ່ຫລວງຂຶ້ນ ໃນໄລ
ຍະທ້າຍ ໑໐ ປີແລ້ວນີ້. ການປະຕິບັດສັນຍາຈຳກັດການແຂ່ງ
ຂັນອາວຸດ-ຊອນ ໒ ໄດ້ຖືກແຊ່ເຢັນໄວ້ ແລະ ການເຈລະຈາ
ກັນກ່ຽວກັບບັນຫາການຈຳກັດອາວຸດບາງຢ່າງ ກໍໄດ້ຖືກຢຸດຊະ
ງັກລົງ.

ກຸ່ມຜູກຂາດປະເທດທຶນນິຍົມ ຢາກມີນ້ຳມັນ, ຊູລານຽມ ,
ເຫລັກສີດຂອງບັນດາປະເທດ ຕາເວັນອອກໃກ້, ອາຟະລິກາ
ແລະມະຫາສະໝຸດອິນເດຍ. ໂດຍພະຍາຍາມທີ່ຈະສ້າງອິດທິ
ພົນຂອງຕົນຂຶ້ນ ໃນປະເທດເຫລົ່ານີ້, ສະຫະລັດ ອາເມລິກາ
ກໍໄດ້ເຕົ້າໂຮມກອງທະຫານເຮືອ ແລະກອງທັບອາກາດ ຂະ
ໜາດໃຫຍ່ຢູ່ໃນຂົງເຂດຂອງອ່າວເປີເຊຍ,ພາຍຫລັງທີ່ໄດ້ສູນ
ເສຍຖານທີ່ໝັ້ນຂອງຕົນຢູ່ໃນອີລັງ ຍ້ອນການປະຕິວັດຕ້ານພະ

ເຈົ້າຊາແລະຕ້ານຈັກກະພັດນິຍົມແລ້ວ ພວກເຂົາກໍ່ສ້າງ ຖານ ທັບທະຫານໃຫມ່ຂອງຕົນຂຶ້ນຢູ່ໃນຕະເວັນອອກໃກ້ ແລະໃນມະຫາສະຫມຸດອິນເດຍ, ໂດຍໄດ້ພະຍາຍາມ ແກ່ດຶງເອົາບັນດາປະເທດນາໂຕແລະປະເທດອື່ນໆອີກ ໑໐ ກວ່າປະເທດ ທີ່ ມີການກະກຽມທະຫານໄວ້ແລ້ວ ເຂົ້າມາຮ່ວມກັບຕົນ, ແລະໄດ້ເຄື່ອນໄຫວຫລັກການໃຫ່ຍທີ່ວ່າ "ການຈຳກັດ"ສົງຄາມນິວຄະເລຍນັ້ນ ແມ່ນເປັນສິ່ງທີ່ຍອມຮັບໄດ້.

ເພື່ອໂຕ້ຕອບຕໍ່ນະໂຍບາຍຈັກກະພັດ ທີ່ເປັນອັນຕະລາຍນີ້, ກອງປະຊຸມໃຫ່ຍ ພ.ກ.ສ.ຊ. ຄັ້ງທີ ໒໗, ຄົນໄດ້ຍຶດຫມັ້ນຢູ່ໃນໂຄງການສັນຕິພາບທີ່ໄດ້ປະກາດອອກໂດຍກອງປະຊຸມໃຫ່ຍຄັ້ງກ່ອນທັງສອງຄັ້ງນັ້ນແລ້ວ, ກໍໄດ້ສະເຫນີຂໍ້ສະເຫນີໃຫມ່ທີ່ມີລັກສະນະຕົວຈິງຂຶ້ນ ເຊິ່ງແນໃສ່ການປົກປັກຮັກສາສັນຕິພາບ, ການຂະຫຍາຍການຫລຸດຜ່ອນຄວາມເຄັ່ງຕຶງລົງຢ່າງເລິກເຊິ່ງ ແລະຄວບຄຸມການແຂ່ງຂັນກັນສ້າງອາວຸດ. ທ່ານ ບະເລັດຊະເນັບໄດ້ກ່າວຢູ່ໃນກອງປະຊຸມວ່າ "ຈົ່ງຮັກສາສັນຕິພາບ - ບໍ່ພຽງແຕ່ເປັນບັນຫາສຳຄັນທີ່ສຸດ ໃນທາງດ້ານສາກົນ ເພື່ອພັກຂອງພວກເຮົາ, ເພື່ອປະຊາຊົນຂອງພວກເຮົາ ໃນເວລາ ນີ້ເທົ່ານັ້ນ, ແຕ່ຫາກເພື່ອມວນມະນຸດທົ່ວໂລກດ້ວຍ."

× × ×

ທ່ານຜູ້ອ່ານທີ່ເຄົາລົບທັງຫລາຍ, ພວກທ່ານໄດ້ທຳຄວາມຮູ້ຈັກກັບປະຫວັດສາດຂອງບັນດາປະຊາຊາດ ແຫ່ງ ສະຫະພາບໂຊວຽດທີ່ມີມາຫລາຍສະຕະວັດນັ້ນແລ້ວແລະກໍໄດ້ສັງເກດເຫັນ

ການຕໍ່ສູ້ເພື່ອຊີວິດທີ່ດີຂອງພວກເຂົາຂຶ້ນພື້ນຖານເຊັ່ນດຽວກັນ. ຕັ້ງແຕ່ຕົ້ນສະຕະວັດທີ XX ມາ ພັກກອມມູນິດທີ່ສ້າງຂຶ້ນໂດຍທ່ານເລນິນຜູ້ຍິ່ງໃຫຍ່ນັ້ນ ກໍໄດ້ກາຍເປັນຫົວໜ້າ ການ ຕໍ່ສູ້ຂອງປະຊາຊົນ.

ພາຍໃຕ້ການຊີ້ນຳ ຂອງພັກກອມມູນິດ, ຊາວກຳມະກອນ ແລະ ຊາວນາແຫ່ງລັດເຊຍກໍໄດ້ໂຄ່ນລົ້ມອຳນາດການປົກຄອງເຈົ້າທີ່ດິນ ແລະ ນາຍທຶນລົງໃນເດືອນຕຸລາປີ໑໙໑໗ແລະສ້າງຕັ້ງອຳນາດໂຊວຽດຂຶ້ນ. ເມື່ອໄດ້ໄຊຊະນະ ສົງຄາມ ກາງເມືອງແລະໄດ້ຕອບໂຕ້ການແຊກແຊງ ຂອງຈັກກະພັດໃຫ້ປະລາໄຊໄປແລ້ວ, ອຳນາດການປົກຄອງໂຊວຽດກໍໄດ້ດຳເນີນການປ່ຽນແປງເສດຖະກິດ ແລະ ສັງຄົມໄປຢ່າງເລິກເຊິ່ງ , ໄດ້ກຳຈັດການກົດຂີ່ຂູດຮີດຄົນດ້ວຍຄົນ ອອກໄປ ຕະ ຫລອດການພ້ອມທັງການເປັນປໍລະປັກທາງຊົນຊັ້ນ ແລະ ສັດຕູຂອງປະຊາຊົນ, ແລະ ໄດ້ຫັນປ່ຽນຈັກກະພັບລັດເຊຍ ທີ່ຫລ້າຫລັງໄປສູ່ລັດມະຫາຊົນສັງຄົມນິຍົມ ເຊິ່ງດຳເນີນໄປຢູ່ ໃນ ກອງໜ້າຂອງມວນມະນຸດທີ່ກ້າວໜ້າ. ຜົນສຳເລັດຂອງສະຫະພາບໂຊວຽດທີ່ໄດ້ສ້າງສາສັງຄົມສັງຄົມນິຍົມທີ່ຂະຫຍາຍຕົວ ແລ້ວເຊິ່ງເປັນຂັ້ນທີ່ກ້າວເຂົ້າໄປສູ່ລະບອບກອມມູນິດນັ້ນ ແມ່ນເປັນການພິສູດໃຫ້ເຫັນເຖິງຄວາມອາດສາມາດຂອງການສ້າງ ສາແບບທີ່ບໍ່ຮູ້ຈັກອິດເມື່ອຍຂອງປະຊາຊົນເຊິ່ງຍຶດເອົາການ ຊີ້ນຳທາງການເມືອງໂດຍສັງຄົມມາໄວ້ໃນກຳມືແລະກາຍເປັນເຈົ້າຂອງປະເທດຊາດຂອງຕົນໄປ.

Mr. Bounsong Keobounsy

ສາລະບານ

ໜ້າ

ຄຳນຳ 3

ອະດີດຕະການອັນສູດທີ່ຍາວນານຂອງປະຊາຊົນລັດເຊຍ 5

ການສ້າງຕັ້ງແລະການຂະຫຍາຍລັດລັດເຊຍ 26

ລັດເຊຍໃນສະຕະວັດທີ XVIII ແລະ ໕໐ ປີຕົ້ນຂອງ
ສະຕະວັດທີ XIX 48

ລະບອບທຶນນິຍົມໃນລັດເຊຍ 81

ມະຫາປະຕິວັດສັງຄົມນິຍົມເດືອນຕຸລາ 157

ການແຊກແຊງທາງທະຫານຂອງຕ່າງດ້າວ 182

ການຟື້ນຟູເສດຖະກິດແຫ່ງຊາດພາຍຫລັງສົງຄາມ ກາງ
ເມືອງ 209

ການສ້າງສາສັງຄົມນິຍົມຢູ່ໃນສະຫະພາບໂຊວຽດ ... 227

ມະຫາສົງຄາມປ້ອງກັນປິຕຸພູມຂອງປະຊາຊົນ ໂຊວຽດ
ຕ້ານພວກຣຸກຮານຟາຊິດ.............. 270

ປະຊາຊົນໂຊວຽດສ້າງສາລະບອບກອມມູນິດ 320

ບັນດາທ່ານຜູ້ອ່ານທີ່ນັບຖື!

ສຳນັກພິມ "ກ້າວໜ້າ" ມີຄວາມຍິນດີຢາກຈະຮັບຟັງຄວາມຄິດເຫັນຂອງທ່ານ ກ່ຽວກັບການແປແລະການຮຽບຮຽງປຶ້ມຫົວນີ້. ດັ່ງນັ້ນຖ້າຫາກທ່ານມີຂໍ້ສະເໜີແນະອັນໃດ ອັນຈະເປັນການຊ່ວຍໃຫ້ມີການປັບປຸງການພິມໃນຂ້າງໜ້າ ແລ້ວ ຂໍເຊີນທ່ານສົ່ງຄວາມຄິດເຫັນໄປຍັງ:

17,Zoubovski boulevard,Moscou,U.R.S.S.